# ປື້ມຄູ່ມືການດຳເນີນຄະດີແພ່ງ ຂັ້ນຕົ້ນ ແລະ ການຮື້ຟື້ນຄະດີ

ໂດຍ ຄະນະຄົ້ນຄວ້າກົດໝາຍດຳເນີນຄະດີແພ່ງ
ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ

ໂດຍການຮ່ວມມືລະຫວ່າງ ອົງການໄອຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທຳ, ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ກັບອົງການໄຈກາ ( JICA ) ປະເທດຍີ່ປຸ່ນ ປີ 2014

# ປຶ້ມຄູ່ມືການດຳເນີນຄະດີແພ່ງ ຂັ້ນຕົ້ນ ແລະ ການຮື້ຟື້ນຄະດີ



**ໂດຍ ຄະນະຄົ້ນຄວ້າກົດໝາຍດຳເນີນຄະດີແພ່ງ**

**ໂຄງການພັດທະນາຊັບພະຍາກອນມະນຸດ ໃນໂຂງເຂດຍຸຕິທຳ ແຫ່ງ ສປປ ລາວ**

JICA Project for Human Resource Development in the Legal Sector

ໂດຍການຮ່ວມມືລະຫວ່າງ ອົງການໄອຍະການປະຊາຊົນ, ສານປະຊາຊົນ,
ກະຊວງຍຸຕິທຳ, ຄະນະນິຕິສາດ ແລະລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ກັບອົງການໄຈກາ (JICA) ປະເທດຍີ່ປຸ່ນ

ປີ 2014

## ຄະນະຊີ້ນຳໂຄງການ

| | |
|---|---|
| ທ່ານ ສຈ. ເກດ ກຽດຕິສັກ | ລັດຖະມົນຕີຊ່ວຍວ່າການ ກະຊວງຍຸຕິທຳ |
| ທ່ານ ຄຳພາ ແສງດາຣາ | ຮອງປະທານ ສານປະຊາຊົນສູງສຸດ |
| ທ່ານ ລັງສີ ສີບຸນເຮືອງ | ຮອງຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ຮສ ດຣ ສາຍຂອງ ສາຍນາສິນ | ຮອງອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ |

## ຄະນະບໍລິຫານໂຄງການ

| | |
|---|---|
| ທ່ານ ດຣ ຈອມຄຳ ບຸບຜາລີວັນ | ຫົວໜ້າສະຖາບັນຝຶກອົບຮົມກົດໝາຍ ແລະ ວຽກງານຍຸຕິທຳ ກະຊວງຍຸຕິທຳ |
| ທ່ານ ບຸນຂວາງ ທະວິສັກ | ຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ, ສານປະຊາຊົນສູງສຸດ |
| ທ່ານ ສຸພາສິດ ລໍວັນໄຊ | ຮອງກົມກວດກາຄະດີອາຍາ ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ຮສ. ວຽງວິໄລ ທ່ຽງຈັນໄຊ | ຄະນະບໍດີ ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ |

## ຄົ້ນຄວ້າ ແລະ ຮຽບຮຽງໂດຍ

| | |
|---|---|
| **1.** ທ່ານ ສົມສັກ ໄຕບຸນລັກ | ສານປະຊາຊົນສູງສຸດ |
| **2.** ທ່ານ ນາງ ພອນເພັດ ອຸ່ນແກ້ວ | ອົງການໄອຍະການປະຊາຊົນສູງສຸດ |
| **3.** ທ່ານ ບຸນຂວາງ ທະວິສັກ | ສານປະຊາຊົນສູງສຸດ |
| **4.** ທ່ານ ບຸນເມກ ບັນນະວົງ | ກະຊວງຍຸຕິທຳ |
| **5.** ທ່ານ ສົມໝາຍ ສີອຸດົມພັນ | ກະຊວງຍຸຕິທຳ |
| **6.** ຮສ. ໄພມະນີ ໄຊວົງສາ | ມະຫາວິທະຍາໄລແຫ່ງຊາດ ຄະນະນິຕິສາດແລະລັດຖະສາດ |
| **7.** ທ່ານ ອຸດອນ ສິງດາລາ | ກະຊວງຍຸຕິທຳ |
| **8.** ທ່ານ ສົມສະໜິດ ດອນປະເສີດ | ກະຊວງຍຸຕິທຳ |
| **9.** ທ່ານ ນາງ ສາຍຄິດ ວິສີສົມບັດ | ກະຊວງຍຸຕິທຳ |
| **10.** ທ່ານ ຄຳມ່ວນ ສີວິໄລ | ອົງການໄອຍະການປະຊາຊົນສູງສຸດ |
| **11.** ທ່ານ ບຸນເຖິງ ສີທອນແກ້ວຈຳປາ | ມະຫາວິທະຍາໄລແຫ່ງຊາດ, ຄະນະນິຕິສາດແລະລັດຖະສາດ |
| **12.** ທ່ານ ອັກສອນສິນ ວິໄຊຍະໄລ | ສານປະຊາຊົນສູງສຸດ |
| **13.** ທ່ານ ແສງສຸລິຍາ ພວງເພັດ | ສານປະຊາຊົນສູງສຸດ |
| **14.** ທ່ານ ແນວພະຈັນ ຄຳມະນີວົງ | ກະຊວງຍຸຕິທຳ |
| **15.** ທ່ານ ພູມີ ສິນລັດຕະນະທຳມະເທວາ | ກະຊວງຍຸຕິທຳ |
| **16.** ທ່ານ ຈັນສຸກ ຄຳພູ | ສານປະຊາຊົນສູງສຸດ |

# ຄຳນຳ

ໃນທ່າມກາງບັນຍາກາດທີ່ທົ່ວພັກທົ່ວປວງຊົນບັນດາເຜົ່າ ພວມຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກໂດຍສະເພາະແມ່ນການບູລະນະລະບອບປະຊາທິປະໄຕປະຊາຊົນຂອງພວກເຮົາ ໃຫ້ເປັນລັດແຫ່ງກົດໝາຍເທື່ອລະກ້າວ. ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງກໍແມ່ນໜຶ່ງໃນບັນດາກົດໝາຍ ທີ່ຖືກປະກາດໃຊ້ແຕ່ປີ 1991 ເປັນຕົ້ນມາແລະ ໄດ້ເປັນບ່ອນອີງ ໃນການພິຈາລະນາແກ້ໄຂຄະດີຂອງສານໄດ້ດີພໍສົມຄວນ. ເມື່ອສະພາບເສດຖະກິດ ສັງຄົມມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ເຮັດໃຫ້ມີບາງຂໍ້ກຳນົດຂອງກົດໝາຍດັ່ງກ່າວນີ້ ບໍ່ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດເຮົາ ກົດໝາຍ ສະບັບນີ້ຈຶ່ງໄດ້ຖືກປັບປຸງ ໃນປີ 2004 ແລະ ປີ 2012. ເຖິງຢ່າງໃດກໍຕາມ, ໃນພາກຕົວຈິງ ພວກເຮົາຍັງບໍ່ທັນມີປຶ້ມຄູ່ມື ເປັນບ່ອນອີງໃນການຄົ້ນຄວ້າ ການຮຽນການສອນ ລວມທັງການຈັດຕັ້ງປະຕິບັດກົດໝາຍ ຈຶ່ງເຮັດໃຫ້ຂະບວນການພິຈາລະນາຄະດີຂອງສານໃນແຕ່ລະບ່ອນ ບໍ່ມີຄວາມເປັນເອກະພາບກັນ, ຕ່າງບ່ອນຕ່າງກໍເຮັດໄປຕາມທີ່ຕົນເຄີຍເຮັດຜ່ານມາ ເນື່ອງຈາກວ່າ ກົດໝາຍໄດ້ກຳນົດຫຼັກການ ແລະ ຂັ້ນຕອນການດຳເນີນຄະດີແບບລວມໆ ຊຶ່ງສ້າງຄວາມຫຍຸ້ງຍາກແກ່ ຜູ້ພິພາກສາ, ໄອຍະການ, ຄູ່ຄວາມ, ນັກຄົ້ນຄວ້າ, ນັກຮຽນຮູ້-ປັນຍາຊົນ ທົ່ວໄປໃນສັງຄົມຫຼາຍພໍສົມຄວນ.

ເມື່ອເຫັນສະພາບຫຍຸ້ງຍາກຄືແນວນັ້ນພ້ອມທັງເລັງເຫັນຄວາມສຳຄັນໃນການດຳເນີນຄະດີແພ່ງໃຫ້ມີຄວາມຮອບດ້ານ ຄົບຖ້ວນ ແລະ ພາວະວິໄສ ແນໃສ່ຮັບປະກັນຄວາມເປັນເອກະພາບໃນການດຳເນີນຄະດີ, ທັງສ້າງເງື່ອນໄຂສະດວກ ແກ່ຜູ້ຈັດຕັ້ງປະຕິບັດກົດໝາຍ ແລະ ທັງຮັບປະກັນຄວາມເປັນທຳແກ່ສັງຄົມ ກະຊວງຍຸຕິທຳ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ມະຫາວິທະຍາໄລແຫ່ງຊາດ (ຄະນະນິຕິສາດ ແລະ ລັດຖະສາດ) ໂດຍການສະນັບສະໜູນຈາກອົງການໄຈກ້າ (ປະເທດຍີ່ປຸ່ນ) Japan International Cooperation Agency (JICA) ພາຍໃຕ້ໂຄງການຮ່ວມມືພັດທະນາທາງດ້ານຊັບພະຍາກອນມະນຸດໃນຂົງເຂດຍຸຕິທຳ (The Human Resource Development project in the Legal Sector) ຈຶ່ງໄດ້ຕົກລົງຮ່ວມມືກັນ ຂຽນປຶ້ມຄູ່ມືການດຳເນີນຄະດີແພ່ງຂຶ້ນ ໂດຍມີເປົ້າໝາຍໃນການພັດທະນາບຸກຄະລາກອນໃນຂົງເຂດຍຸຕິທຳ, ສ້າງຄວາມເຂັ້ມແຂງແກ່ຜູ້ພິພາກສາ ແລະ ທັງສ້າງເງື່ອນໄຂເອື້ອອຳນວຍຄວາມສະດວກ ແກ່ສັງຄົມໃຫ້ເຂົ້າເຖິງຂະບວນການຍຸຕິທຳງ່າຍຂຶ້ນ. ໃນການຂຽນປຶ້ມຄູ່ມືນີ້ ຄະນະຄົ້ນຄວ້າໄດ້ປະສານສົມທົບ ແລະ ແລກປ່ຽນຄຳຄິດຄຳເຫັນ ກັບນັກກົດໝາຍອາວຸໂສຂອງລາວ ແລະ ສາດສະດາຈານ ຍີ່ປຸ່ນ, ໄດ້ໄປທາບທາມ ແລະ ເກັບກຳຂໍ້ມູນຕົວຈິງຢູ່ສານຂັ້ນທ້ອງຖິ່ນ ແລ້ວຈຶ່ງສັງລວມເອົາບັນດາຫຼັກການ ແລະ ວິທີການດຳເນີນຄະດີຂັ້ນຕົ້ນກ່ຽວກັບຮ້ອງຟ້ອງ, ຮ້ອງຂໍທາງແພ່ງ ແລະ ການຮື້ຟື້ນຄະດີ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ 2012 ຂອງ ສປປລາວ ໂດຍສົມທຽບກັບຫຼັກການກົດໝາຍສາກົນເປັນຕົ້ນ ແມ່ນກົດໝາຍຫວຽດນາມ, ຍີ່ປຸ່ນ ແລະ ປະເທດອື່ນ ແລ້ວນຳມາໝູນໃຊ້, ຜັນຂະຫຍາຍອະທິບາຍເນື້ອໃນໃຫ້ມີລັກສະນະກວ້າງຂວາງ, ຊັດເຈນ, ລະອຽດ ແລະ ທັນສະໄໝ ຊຶ່ງສາມາດນຳໄປຄົ້ນຄວ້າຈັດຕັ້ງປະຕິບັດໄດ້ງ່າຍ.

ເຖິງວ່າການຂຽນປຶ້ມຄູ່ມືຫົວນີ້ ຄະນະຮັບຜິດຊອບໄດ້ສົມທົບກັບນັກກົດໝາຍອາວຸໂສຂອງລາວ, ສາດສະດາຈານຍີ່ປຸ່ນ ແລະ ຊ່ຽວຊານປະຈຳໂຄງການ ຊຶ່ງໄດ້ພ້ອມກັນສຸມສະຕິປັນຍາ ຄົ້ນຄວ້າຫາແຫຼ່ງຂໍ້ມູນຜ່ານການໄປທັດສະນະສຶກສາທັງພາຍໃນ ແລະ ຕ່າງປະເທດ ແລ້ວນຳມາຜັນຂະຫຍາຍບັນຈຸເຂົ້າເປັນເນື້ອໃນຂອງປຶ້ມຄູ່ມືຫົວນີ້ ແລະໄດ້ໃຊ້ເວລາຂຽນແລະຮຽບຮຽງເຖິງສາມປີກວ່າກໍຕາມ, ແຕ່ກໍປາສະຈາກບໍ່ໄດ້ຂໍ້ຂາດຕົກບົກພ່ອງ ຊຶ່ງເນື້ອໃນອາດຈະບໍ່ຄົບຖ້ວນ, ຮັດກຸມ ຫຼື ບໍ່ສອດຄ່ອງກັບສະພາບຕົວຈິງ, ດັ່ງນັ້ນ

ຫວັງຢ່າງຍິ່ງວ່າ ບັນດາທ່ານ ຜູ່ອ່ານ, ນັກຄົ້ນຄວ້າ ຫຼື ນັກຮຽນຮູ້ປັນຍາຊົນທັງຫຼາຍ ຈະໃຫ້ຄຳຕຳນິຕິຊົມ, ແນະນຳ ຫຼື ໃຫ້ຄຳຄິດຄຳເຫັນ ເພື່ອປັບປຸງປຶ້ມຄູ່ມື ການດຳເນີນຄະດີແພ່ງຫົວນີ້ ໃຫ້ເຕັມໄປດ້ວຍເນື້ອໃນ ອັນຄົບຖ້ວນ ແລະ ສົມບູນຂຶ້ນເລື້ອຍໆ.

ໃນໂອກາດນີ້ ຂໍສະແດງຄວາມຂອບໃຈ ມາຍັງຄະນະຊີ້ນຳໂຄງການ, ຄະນະບໍລິຫານໂຄງການ ແລະ ພິເສດຂໍສະແດງຄວາມຮູ້ບຸນຄຸນມາຍັງ ທ່ານ ສຈ. ດາວອນ ຫວ່າງວິຈິດ ປະທານ ກຳມາທິການກົດໝາຍສະພາແຫ່ງຊາດ ທີ່ໄດ້ສະລະເວລາຊ່ວຍກວດແກ້ປຶ້ມຄູ່ມືຫົວນີ້ ໄດ້ໂດຍພື້ນຖານ.

**ຄະນະຊີ້ນຳໂຄງການ**

**ຮສ. ດຣ. ສາຍຂອງ ສາຍນາສິນ**

# ຄຳເຫັນ

## **“ຄຳອວຍພອນ”**

Assistant Vice-Minister of Justiceກະຊວງຍຸດຕິທຳ ຍີ່ປຸ່ນ

ທ່ານ ຣາກິໂມໂຕະ ໂອສາມຸ

ຂໍສະແດງຄວາມຍິນດີ ຕໍ່ຜົນສຳເລັດໃນການຈັດພິມປຶ້ມຄູ່ມືກ່ຽວກັບ ກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ ຫົວທຳອິດຂອງລາວ.

ຂໍສະແດງຄວາມນັບຖືຢ່າງສຸດໃຈ ຕໍ່ກຸ່ມຄົ້ນຄ້ວາ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຊຶ່ງເປັນຜູ້ຂຽນປຶ້ມນີ້ ພ້ອມທັງ ຄະນະຜູ່ກ່ຽວຂ້ອງທຸກທ່ານຂອງໂຄງການ.

ເນື່ອງໃນວາລະການຈັດພິມປຶ້ມຄູ່ມືນີ້, ຂ້າພະເຈົ້າ ຂໍມອບຄຳທີ່ມີຄວາມໝາຍ ຄຳນຶ່ງໃຫ້ແກ່ສະມາຊິກຝ່າຍລາວທຸກໆທ່ານ ຊຶ່ງຄຳນີ້ກໍເປັນຄຳທີ່ຂ້າພະເຈົ້າມັກທີ່ສຸດ.

[ ຕອນທີ່ເຮົາຈະໄດ້ຮັບບົດຮຽນຫຼາຍທີ່ສຸດຈາກຜູ່ອື່ນ ແມ່ນ, ຕອນທີ່ເຮົາສອນບົດຮຽນໃຫ້ຜູ່ອື່ນ ]

ການສົ່ງຄວາມຮູ້ໃຫ້ຜູ່ອື່ນນັ້ນ ແມ່ນສິ່ງທີ່ຍາກທີ່ສຸດ. ເພາະວ່າ ເຖິງວ່າເຮົາຮູ້ບັນຫາແລ້ວກໍຕາມ, ມັນບໍ່ໝາຍຄວາມວ່າເຮົາຈະສາມາດສອນໃຫ້ຜູ່ອື່ນເຂົ້າໃຈໄດ້. ການທີ່ຈະສອນໃຫ້ຜູ່ອື່ນເຂົ້າໃຈນັ້ນ ພຽງແຕ່ຮູ້ຢ່າງດຽວແມ່ນບໍ່ພຽງພໍ, ເວົ້າແຈ້ງກໍແມ່ນ, ເຮົາຕ້ອງມີຄວາມເຂົ້າໃຈຕໍ່ບັນຫານັ້ນຢ່າງເລິກເຊິ່ງ. ໃນເວລາສົ່ງຄວາມຮູ້ໃຫ້ຜູ່ອື່ນນັ້ນ, ຈະເປັນເວລາທີ່ເຮັດໃຫ້ເຮົາຄົ້ນພົບບັນຫາທີ່ຄວາມຮູ້ແລະຄວາມເຂົ້າໃຈຂອງເຮົາຍັງເຂົ້າໃຈບໍ່ຈະແຈ້ງ, ຍັງບໍ່ຖືກຕ້ອງ ຫຼື ບໍ່ພຽງພໍ. ໝາຍວ່າ ເພື່ອສົ່ງຄວາມຮູ້ໃຫ້ຜູ່ອື່ນໄດ້ນັ້ນ ເຮົາເອງຕ້ອງຄົ້ນຄ້ວາສຶກສາຫຼາຍກ່ວາທີ່ຜ່ານມາຫຼາຍເທົ່າ.

ໃນການຂຽນປຶ້ມຄູ່ມືຫົວນີ້, ຄະນະຜູ່ຂຽນປຶ້ມທຸກໆທ່ານ, ໄດ້ສຶກສາ ແລະ ໄດ້ທຳຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ຖືກຕ້ອງ ກ່ຽວກັບ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງຂອງລາວ ແລະ ການປະຕິບັດວຽກງານຕົວຈິງຂອງສານ ແລະສາມາດຍົກລະດັບຄວາມຮູ້ທາງດ້ານວິຊາການຂອງຕົນ ຈົນກ້າວເຖິງລະດັບທີ່ສາມາດສົ່ງຄວາມຮູ້ໃຫ້ຜູ່ອື່ນໄດ້. ມັນສະແດງອອກ ໃນຕອນທີ່ ພວກເຮົາໄດ້ແລກປ່ຽນຄຳຄິດຄຳເຫັນນຳກັນໃນລະຫວ່າງການເຄື່ອນໄຫວຂອງໂຄງການ.

ພາຍຫຼັງຈາກນີ້, ແມ່ນພວກເຮົາຈະກ້າວເຂົ້າສູ່ໄລຍະການນຳໃຊ້ປຶ້ມຄູ່ມືນີ້. ສາມາດເວົ້າໄດ້ວ່າ, ຜ່ານການນຳໃຊ້ປຶ້ມຄູ່ມືນີ້, ບໍ່ວ່າຈະແມ່ນ ຝ່າຍຜູ່ສົ່ງຄວາມຮູ້ ຫຼື ຝ່າຍຜູ່ຮັບເອົາຄວາມຮູ້ ຈະສາມາດ ຍົກລະດັບ ຄວາມຮູ້-ຄວາມເຂົ້າໃຈຂອງຕົນ ກ່ຽວກັບກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ພາກປະຕິບັດຕົວຈິງຂອງສານ ໃຫ້ສູງຂຶ້ນເທື່ອລະກ້າວ. ຢູ່ໃນຂັ້ນຕອນການນຳໃຊ້ນັ້ນ ເມື່ອພວກເຮົາພົບພໍ້ຈຸດທີ່ຍັງບໍ່ສົມບູນຂອງປຶ້ມ ເຮົາກໍອາດຈະປັບປຸງຈຸດນັ້ນໃຫ້ດີຂຶ້ນ, ເຮັດໃຫ້ເນື້ອໃນຂອງປຶ້ມ ດີຂຶ້ນກ່ວາເກົ່າ, ເມື່ອນຳໃຊ້ປຶ້ມທີ່ດີຂຶ້ນກ່ວາເກົ່າແລ້ວ ກໍຈະເຮັດໃຫ້ ຝ່າຍຜູ່ສົ່ງຄວາມຮູ້ ແລະ ຝ່າຍຜູ່ຮັບຄວາມຮູ້ ໄດ້ມີຄວາມຮູ້ ແລະ ເຂົ້າໃຈແຈ້ງຂຶ້ນຕື່ມ ແລະ ໄດ້ຮັບຜົນປະໂຫຍດຕື່ມກາຍເປັນວົງຈອນແຫ່ງຄວາມກ້າວໜ້າ. ສະນັ້ນ ສິ່ງສຳຄັນສຸດ ເຮົາຕ້ອງບໍ່ເສັຍດາຍ ເຫື່ອແຮງທີ່ນຳໃຊ້ເພື່ອປະກອບສ່ວນ ເຂົ້າໃນການປັບປຸງໃນແຕ່ລະບາດກ້າວ.

ສຸດທ້າຍນີ້, ຂ້າພະເຈົ້າ ຂໍອວຍໄຊໃຫ້ພອນ ແກ່ ຄະນະຜູ່ຂຽນປຶ້ມ ແລະ ປະຊາຊົນລາວທຸກໆທ່ານ ຈົ່ງປະສົບແຕ່ຜົນສຳເລັດ ແລະ ມີແຕ່ຄວາມສຸກ ຄວາມຈະເລີນຂຶ້ນ ເລື້ອຍໆໄປ.

## “ອວຍພອນແດ່ຜົນສໍາເລັດການພິມປຶ້ມຄູ່ມື ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ”

ມະຫາວິທະຍາໄລ ໂອຊາກ້າ

ທ່ານ ສາດສະດາຈານ ນັດຊຸຍ ໂຢຊິຣິໂຣະ

ຖືວ່າວັນເວລາໄດ້ຜ່ານໄປໄວຫຼາຍ, ໂຄງການພັດທະນາຊັບພະຍາກອນມະນຸດໃນຂົງເຂດຍຸດຕິທໍານີ້ ເມື່ອນັບລວມຕັ້ງແຕ່ຂັ້ນຕອນການກະກຽມ ຈົນຮອດມື້ນີ້ ກໍຕົກເປັນເວລາເກືອບຮອດ 5 ປີແລ້ວ. ສໍາລັບພວກເຮົາອາຈານຝ່າຍຍີ່ປຸ່ນນັ້ນ, ກໍໄດ້ປະກອບສ່ວນ ເຄື່ອນໄຫວ ໃຫ້ຄວາມຊ່ວຍເຫຼືອ ແກ່ບັນດານັກບຸກຄະລາກອນທີ່ປະຕິບັດວຽກງານຕົວຈິງໃນຂົງເຂດການດໍາເນີນຄະດີ ແພ່ງ ຝ່າຍລາວ ໃນວຽກງານການກໍ່ສ້າງ ແລະ ພັດທະນາລະບົບການດໍາເນີນຄະດີ ແພ່ງ ໃຫ້ແທດເໝາະກັບລະບົບກົດໝາຍ ແລະ ວັດທະນະທໍາຂອງປະເທດລາວ. ສໍາລັບໝາກຜົນຂອງໂຄງການໃນໄລຍະເຄິ່ງທໍາອິດ ກໍຄືແຜນວາດຄູ່ມືການດໍາເນີນຄະດີ ແພ່ງນັ້ນ, ຖືວ່າແມ່ນເອກະສານມີຄວາມພິເສດ ເພາະໄດ້ອະທິບາຍຂັ້ນຕອນຕ່າງໆຢູ່ໃນການດໍາເນີນຄະດີແພ່ງໃນຮູບແບບທີ່ເປັນແຜນວາດທີ່ເບິ່ງງ່າຍ. ຜ່ານການນໍາໃຊ້ ເຂົ້າໃນການເຄື່ອນໄຫວເຜີຍແຜ່ຢູ່ໃນຂົງເຂດຂອງສານໃນທີ່ຕ່າງໆຢູ່ໃນລາວນັ້ນ ກໍໄດ້ຮັບການຕີລາຄາສູງ. ບໍ່ພຽງແຕ່ເທົ່ານັ້ນ, ການແລກປ່ຽນຄໍາຄິດຄໍາເຫັນ ລະຫວ່າງ ສະມາຊິກກຸ່ມດ້ວຍກັນ ຢູ່ໃນຂັ້ນຕອນການສ້າງແຜນວາດ ແລະ ຜ່ານການແລກປ່ຽນຄໍາຄິດຄໍາເຫັນ ກັບບັນດາພາກສ່ວນທີ່ກ່ຽວຂ້ອງອື່ນໆໃນເວລາທີ່ລົງໄປເຜີຍແຜ່ແຜນວາດນັ້ນໄດ້ເຮັດໃຫ້ ຄວາມຮູ້ ຄວາມສາມາດ ຂອງສະມາຊິກກຸ່ມເພີ່ມສູງຂຶ້ນຈົນສາມາດເຫັນໄດ້ຢ່າງຊັດເຈນ. ສະນັ້ນ ມັນຈຶ່ງເປັນຫຼັກຖານທີ່ສາມາດອ້າງອີງໄດ້ຢ່າງຈະແຈ້ງວ່າ ແນວທາງນະໂຍບາຍການຈັດຕັ້ງປະຕິບັດຂອງໂຄງການນີ້ ມີຄວາມຖືກຕ້ອງ ແລະ ສອດຄ່ອງ.

ແລະໃນຕອນນີ້, ຄະນະຜູ້ຂຽນປຶ້ມ ໄດ້ສາມາດສໍາເລັດການຂຽນປຶ້ມຄູ່ມືການດໍາເນີນຄະດີ ແພ່ງ, ແລະກະກຽມເຂົ້າສູ່ຂັ້ນຕອນການຈັດພິມເປັນທີ່ຮຽບຮ້ອຍແລ້ວ. ຖ້ານັບຕັ້ງແຕ່ເວລາທີ່ເລີ່ມຕົ້ນ, ຊຶ່ງກໍຄື 2 ປີກ່ອນ, ໂດຍໃຊ້ເວລາສັ້ນຄືແນວນີ້ ເພື່ອຂຽນປຶ້ມຫົວໜຶ່ງຂຶ້ນມາ, ສໍາລັບຄະນະຜູ້ຂຽນປຶ້ມທີ່ຮັບຜິດຊອບວຽກງານນີ້ແລ້ວ ຖືວ່າບໍ່ແມ່ນວຽກທີ່ງ່າຍ. ແຕ່ແນວໃດກໍຕາມ, ຍ້ອນຄວາມເຂົ້າໃຈຕໍ່ຄວາມສໍາຄັນຂອງແຜນງານໂຄງການ ແລະ ຜົນຈາກຄວາມຕັ້ງໜ້າຂອງສະມາຊິກແຕ່ລະທ່ານ ຈຶ່ງເຮັດໃຫ້ສາມາດບັນລຸຕາມຈຸດປະສົງ ເປົ້າໝາຍຂອງໂຄງການ. ຂ້າພະເຈົ້າເອງ ແລະ ລວມທັງຄະນະຝ່າຍຍີ່ປຸ່ນທຸກທ່ານ, ມີຄວາມປິຕິຍິນດີ ເປັນຢ່າງຍິ່ງ ຕໍ່ກັບຜົນສໍາເລັດໃນການຂຽນປຶ້ມໃນຄັ້ງນີ້.

ເມື່ອຄິດຄືນຫຼັງກ່ຽວກັບໂຄງການນີ້, ຂ້າພະເຈົ້າກໍຖືວ່າເປັນຜູ້ໜຶ່ງທີ່ໄດ້ມີໂອກາດເຂົ້າຮ່ວມຕັ້ງແຕ່ໄລຍະເລີ່ມຕົ້ນ, ແລະກໍຖືວ່າຂ້າພະເຈົ້າໂຊກດີທີ່ໄດ້ມີໂອກາດແລກປ່ຽນຄໍາຄິດຄໍາເຫັນກັບຫົວໜ້າກຸ່ມ ກໍຄືທ່ານ ສົມສັກ ແລະສະມາຊິກທຸກໆທ່ານ ຫຼາຍຕໍ່ຫຼາຍຄັ້ງ. ຜ່ານການ ແລກປ່ຽນຄໍາຄິດຄໍາເຫັນນັ້ນ, ຂ້າພະເຈົ້າກໍໄດ້ຮຽນຮູ້ກົດໝາຍວ່າດ້ວຍການດໍາເນີນຄະດີ ແພ່ງ ຂອງລາວ, ພ້ອມທັງໄດ້ມີໂອກາດປະກອບຄໍາເຫັນກ່ຽວກັບລະບົບການດໍາເນີນຂອງກົດໝາຍຍີ່ປຸ່ນເມື່ອສະມາຊິກກຸ່ມມີບັນຫາແລກປ່ຽນ. ຂ້າພະເຈົ້າຄິດວ່າເນື້ອໃນຂອງປຶ້ມຫົວນີ້ຈະສະທ້ອນບັນດາໝາກຜົນຂອງການແລກປ່ຽນຄໍາຄິດຄໍາເຫັນເຊິ່ງກັນແລະກັນຂອງພວກເຮົາ, ຊຶ່ງສະເພາະໂຕຂ້າພະເຈົ້າເອງ ກໍມີຄວາມປິຕິຍິນດີ ຢ່າງເລິກເຊິ່ງ.

ອີກອັນໜຶ່ງ, ສຳລັບພະນັກງານຜູ່ທີ່ຢູ່ໃນຂົງເຂດຍຸດຕິທຳຂອງລາວແລ້ວ, ການທີ່ມີປຶ້ມຄູ່ມືກ່ຽວກັບການດຳເນີນຄະດີແພ່ງນັ້ນ, ແມ່ນມີຄວາມໝາຍຕໍ່ກັບການປະຕິບັດວຽກງານຕົວຈິງ, ແລະ ທາງດ້ານການສຶກສານຳ. ໂດຍດັ້ງເດີມແລ້ວ ການທີ່ພວກຂ້າພະເຈົ້າຊຶ່ງກໍຄືຊ່ຽວຊານຝ່າຍຍີ່ປຸ່ນນັ້ນໄດ້ມີໂອກາດເຂົ້າຮ່ວມຊ່ວຍເຫຼືອໃນວຽກງານການຂຽນປຶ້ມ ແລະ ການຈັດພິມປຶ້ມຄູ່ມືດັ່ງກ່າວນັ້ນ ກໍຍ້ອນມີກຳລັງແຮງຈາກ ທັງ 4 ອົງການຈັດຕັ້ງ ກໍຄື ກະຊວງຍຸດຕິທຳ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ມະຫາວິທະຍາໄລແຫ່ງຊາດ ທີ່ເຂົ້າຮ່ວມ ແລະ ເຄື່ອນໄຫວຢ່າງຕັ້ງໜ້າ. ຂ້າພະເຈົ້າ ຂໍຖືໂອກາດນີ້ ຂໍສະແດງຄວາມຮູ້ບຸນຄຸນມາອີກຄັ້ງໜຶ່ງ.

ສຸດທ້າຍນີ້, ຂ້າພະເຈົ້າຂໍອວຍພອນໄຊ ໃຫ້ລະບົບຍຸດຕິທຳຂອງລາວ ຈົ່ງກ້າວໜ້າ ແລະ ກ້າວໄປ ຢ່າງບໍ່ຢຸດຢັ້ງ.

## “ສະແດງຄວາມຍິນດີຕໍ່ຜົນສຳເລັດໃນການພິມປຶ້ມຄູ່ມືກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ”

ພະແນກຮ່ວມມືສາກົນ ສະຖາບັນຄົ້ນຄ້ວາກົດໝາຍ ຂອງກະຊວງຍຸດຕິທຳ ຍີ່ປຸ່ນ

ທ່ານ ອາຈານ ມິອູຣະ ຢາສຸໂກະ

ນັບຕັ້ງແຕ່ມື້ກໍ່ຕັ້ງກຸ່ມຄົ້ນຄ້ວາ ຄັ້ງທຳອິດ ກໍຄືໃນ ເດືອນ 9 ປີ 2010 ນັ້ນ, ມາຮອດມື້ນີ້ກໍເປັນເວລາ 3 ປີເຄິ່ງແລ້ວ. ເມື່ອເບິ່ງເອກະສານລາຍງານໃນໄລຍະນັ້ນຄືນ, ເຫັນວ່າ ໃນຕອນນັ້ນ ທຸກທ່ານ ໄດ້ເລີ່ມຕົ້ນ ວຽກງານນີ້ໂດຍທັງທີ່ຍັງມີຄວາມກັງວົນຢູ່ວ່າຈະສາມາດ ກຳໄດ້ພາບລວມ ກ່ຽວກັບປຶ້ມຫົວນີ້ໄດ້ຫຼືບໍ່. ແຕ່ວ່າໃນທີ່ສຸດໃນມື້ນີ້ເປົ້າໝາຍທີ່ພວກເຮົາວາງໄວ້ນັ້ນ ໄດ້ກາຍມາເປັນຮູບເປັນຮ່າງແລ້ວ ຂ້າພະເຈົ້າຄິດວ່າບັນດາທ່ານ ຄົງຈະມີຄວາມປິຕິຍິນດີເປັນທີ່ສຸດ. ແລະ ຂ້າພະເຈົ້າ, ກໍຂໍສະແດງຄວາມດີໃຈນຳຢ່າງສຸດໃຈ.

ສະເພາະຂ້າພະເຈົ້າເອງ, ເຖິງວ່າໃນເວລາທີ່ ສ້າງແຜນອາດໃກ້ຈະສຳເລັດນັ້ນບໍ່ໄດ້ເຂົ້າຮ່ວມນຳກໍຕາມ, ແຕ່ພາຍຫຼັງ ຜ່ານການເຂົ້າຮ່ວມ ແລະ ແລກປ່ຽນຄຳຄິດຄຳເຫັນ ໃນການຝຶກອົບຮົມຫຼາຍແຫ່ງ ບໍ່ວ່າຈະເປັນຢູ່ຍີ່ປຸ່ນ ຫຼືຢູ່ລາວ ກັບບັນດາທ່ານນັ້ນ, ໄດ້ເຮັດໃຫ້ຂ້າພະເຈົ້າໄດ້ຮຽນຮູ້ ລະບົບຂອງລາວ, ແລະ ກໍໄດ້ເຮັດໃຫ້ຂ້າພະເຈົ້າມີໂອກາດໄດ້ເບິ່ງຄືນ ລະບົບຂອງປະເທດຍີ່ປຸ່ນນຳ ຊຶ່ງມັນກໍເຮັດໃຫ້ຂ້າພະເຈົ້າໄດ້ຮຽນຮູ້ຫຼາຍບັນຫາ ແລະ ກໍສາມາດພັດທະນາຕົວເອງໄປພ້ອມ.

ອີກອັນໜຶ່ງ, ສຳລັບ ຢູ່ຍີ່ປຸ່ນ ບໍ່ວ່າຈະເປັນ ໃນເວລາທີ່ເຮົາຂຽນປຶ້ມຕຳລາ ຫຼື ບົດວິທະຍານິພົນກໍຕາມ, ກໍຈະມີເອກະສານອ້າງອີງໃຫ້ເຮົາສາມາດນຳໃຊ້ເພື່ອຄົ້ນຄ້ວາເປັນຈຳນວນຫຼວງຫຼາຍ. ການທີ່ຈະເປັນແບບນັ້ນໄດ້ ກໍບໍ່ແມ່ນວ່າ ຈະເປັນໄປໄດ້ເອງຕາມທຳມະຊາດ. ຫາກແຕ່ ມັນແມ່ນຍ້ອນມີບຸກຄົນຍຸກກ່ອນ ທີ່ໄດ້ອອກເຫື່ອເທແຮງບຸກເບີກ ແລະ ສ້າງສິ່ງເຫຼົ່ານີ້ໄວ້, ແລະກໍຖືວ່າເປັນໂອກາດດີທີ່ ເພາະຜ່ານການເຄື່ອນໄຫວກັບບັນດາທ່ານ ມັນໄດ້ເຮັດໃຫ້ຂ້າພະເຈົ້າໄດ້ຄິດພົ້ນຄືນເຖິງບຸນຄຸນຂອງບັນດາຄູອາຈານຍຸກກ່ອນ ຊຶ່ງລ້ວນແລ້ວແຕ່ເປັນສິ່ງທີ່ມີຄ່າ ສຳລັບຂ້າພະເຈົ້າ.

ພ້ອມກັນນັ້ນ ຂ້າພະເຈົ້າກໍເຫັນວ່າ ການຂຽນປຶ້ມໂດຍທີ່ບໍ່ມີເອກະສານທີ່ເປັນບົດອ້າງອີງ ຫຼື ບົດຕົວແບບຢູ່ກ່ອນແລ້ວນັ້ນ ເຮົາຕ້ອງໄດ້ຄິດສ້າງໂຄງຮ່າງໂດຍນັບແຕ່ໜຶ່ງໃໝ່ທັງໝົດ ຄືໃນກໍລະນີຂອງບັນດາທ່ານນັ້ນ, ບັນດາທ່ານຄົງຈະພົບກັບຄວາມຫຍຸ້ງຍາກຫຼາຍປະການ. ນອກຈາກນັ້ນແລ້ວ, ເນື້ອໃນທີ່ແຕ່ລະທ່ານໄດ້ຂຽນແລ້ວໃນຂັ້ນຕົ້ນນັ້ນ, ຍັງໄດ້ຮັບການດັດແກ້, ການຊີ້ນໍາ ທີ່ເຂັ້ມງວດ ແລ້ວ ແຕ່ລະທ່ານ ກໍໄດ້ນໍາເອົາເນື້ອໃນຈິດໃຈຈາກຄໍາຊີ້ນໍາດັ່ງກ່າວມາຂຽນ ແລະ ປັບປຸງຄືນຫຼາຍເທື່ອ ສະນັ້ນຂ້າພະເຈົ້າກໍເຂົ້າໃຈວ່າ ໃນດ້ານຈິດໃຈແລ້ວ ກ່ອນທີ່ຈະໄດ້ມາເປັນເນື້ອໃນທີ່ສົມບູນນັ້ນ ບັນດາທ່ານ ຄົງຈະອິດເໝື່ອຍບໍ່ແມ່ນໜ້ອຍ, ເມື່ອຄິດຄືນເຖິງຄວາມອຸສາຫະພະຍາຍາມ ຂອງບັນດາທ່ານແລ້ວ ຍາມໃດ ຂ້າພະເຈົ້າກໍຮູ້ສຶກ ນັບຖື ແລະ ຊື່ນຊົມເປັນຢ່າງສູງ.

ຜົນຂອງຄວາມພະຍາຍາມນີ້, ຈະເປັນພື້ນຖານ ໃຫ້ແກ່ຜູ່ທີ່ຈະສ້າງປຶ້ມຕໍາລາກ່ຽວກັບກົດໝາຍ ຫົວຕໍ່ໆໄປ, ໃນພາຍໜ້າ. ໝາຍວ່າ ພວກເຂົາເຈົ້າອາດຈະນໍາໃຊ້ປຶ້ມທີ່ບັນດາທ່ານໄດ້ຂຽນຂຶ້ນນີ້ ເປັນບ່ອນອີງ, ຊຶ່ງຈະເຮັດໃຫ້ເຂົາເຈົ້າສາມາດເລີ່ມຕົ້ນດ້ວຍບາດກ້າວທີ່ເປັນບາດກ້າວຖັດໄປ ຈາກບາດກ້າວຂອງບັນດາທ່ານ. ຄວາມສໍາເລັດໃນການຂຽນປຶ້ມທີ່ຖືວ່າເປັນປຶ້ມແມ່ແບບອີກຫົວໜຶ່ງຂອງປຶ້ມຕໍາລາຮຽນຂອງລາວຫົວນີ້, ຖືວ່າເປັນຄວາມສໍາເລັດທີ່ຍິ່ງໃຫ່ຍອີກອັນໜຶ່ງ ທີ່ ພວກເຮົາທຸກຄົນມີຄວາມພາກພູມໃຈເປັນທີ່ສຸດ.

ສຸດທ້າຍນີ້, ຂ້າພະເຈົ້າກໍຂໍອວຍພອນຈາກໃຈຂອງຂ້າພະເຈົ້າ, ໃຫ້ບັນດາທ່ານ ຈົ່ງປະສົບແຕ່ຜົນສໍາເລັດ ໃນໜ້າທີ່ວຽກງານ, ແລະ ກໍຂໍໃຫ້ ລະບົບຍຸດຕິທໍາ ຂອງລາວ ຈົ່ງກ້າວໜ້າຢ່າງບໍ່ຢຸດຢັ້ງ ຕະຫຼອດໄປ.

# ສາລະບານ


**ພາກທີ I ຄວາມຮັບຮູ້ທົ່ວໄປກ່ຽວກັບການດຳເນີນຄະດີແພ່ງ**.........................................................1
**ບົດທີ 1 ຂະບວນວິວັດຂອງການດຳເນີນຄະດີແພ່ງ ຢູ່ ສປປ ລາວ**.................................................1
1. ຄວາມໝາຍຂອງການດຳເນີນຄະດີແພ່ງ...........................................................................1
2. ການພັດທະນາການດຳເນີນຄະດີແພ່ງ ພາຍຫຼັງປະເທດຊາດ ໄດ້ຮັບການປົດປ່ອຍ ໃນປີ 1975........2
2.1. ການແກ້ໄຂຄະດີແພ່ງ ບໍ່ທັນມີກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ............................2
2.2. ດ້ານການຈັດຕັ້ງການດຳເນີນຄະດີ.....................................................................2
2.3. ຂັ້ນການດຳເນີນຄະດີ.....................................................................................2
3. ການດຳເນີນຄະດີແພ່ງ ຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງປີ 1990..........................3
3.1. ລະບົບການຈັດຕັ້ງ ແລະ ສິດອຳນາດຂອງສານໃນການພິຈາລະນາຄະດີແພ່ງ......................3
3.2. ຫຼັກການດຳເນີນຄະດີແພ່ງ...............................................................................4
3.3. ຂັ້ນການດຳເນີນຄະດີ.....................................................................................4
3.3.1. ຂັ້ນການພິຈາລະນາຄະດີແບບປົກກະຕິ.......................................................4
3.3.2. ຂັ້ນການພິຈາລະນາໃນສະຖານພິເສດ.........................................................4
4. ການດຳເນີນຄະດີແພ່ງ ຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ໃນປີ 2004.....................4
4.1. ເຫດຜົນໃນການປັບປຸງກົດໝາຍວ່າດ່ວຍການດຳເນີນຄະດີແພ່ງ...................................5
4.2. ລະບົບການຈັດຕັ້ງ ແລະ ສິດອຳນາດຂອງສານໃນການດຳເນີນຄະດີແພ່ງ.........................5
4.3. ຫຼັກການໃນການດຳເນີນຄະດີ...........................................................................6
4.4. ຂັ້ນການພິຈາລະນາຕັດສິນຄະດີ........................................................................7
5. ການດຳເນີນຄະດີແພ່ງ ຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ໃນປີ 2012.....................7
5.1. ເຫດຜົນໃນການປັບປຸງ..................................................................................7
5.2. ລະບົບການຈັດຕັ້ງ ແລະ ສິດອຳນາດຂອງສານໃນການພິຈາລະນາຄະດີແພ່ງ.....................8
5.3. ຫຼັກການດຳເນີນຄະດີແພ່ງ...............................................................................9
5.4. ຂັ້ນການພິຈາລະນາຕັດສິນຄະດີ........................................................................9
6. ການດຳເນີນຄະດີແພ່ງທີ່ພົວພັນກັບກົດໝາຍອື່ນ................................................................9
**ບົດທີ 2 ຫຼັກການພື້ນຖານໃນການດຳເນີນຄະດີແພ່ງ**.............................................................12
1. ຄວາມໝາຍ ຂອງຫຼັກການພື້ນຖານ ການດຳເນີນຄະດີແພ່ງ............................................ 12
2. ຄວາມສຳຄັນ ຂອງຫຼັກການພື້ນຖານ ການດຳເນີນຄະດີແພ່ງ.......................................... 12
3. ຫຼັກການພື້ນຖານໃນການດຳເນີນຄະດີແພ່ງ.............................................................. 12
3.1. ສິດ ແລະ ພັນທະຂອງສານໃນການພິຈາລະນາຕັດສິນຄະດີ........................................ 13
3.1.1. ຄວາມໝາຍ........................................................................................ 13
3.1.2. ເຫດຜົນ............................................................................................. 13
3.1.3. ການນຳໃຊ້.......................................................................................... 13
3.2. ຄວາມສະເໝີພາບຂອງຄູ່ຄວາມ ຕໍ່ໜ້າກົດໝາຍ ແລະ ສານ.......................................13
3.2.1. ຄວາມໝາຍ........................................................................................ 13
3.2.2. ເຫດຜົນ............................................................................................. 14

3.2.3. ການນຳໃຊ້.................................................................................................14
3.3. ການໂຕ້ແຍ່ງ ແລະ ການໂຕ້ຖຽງ..........................................................................15
3.3.1. ຄວາມໝາຍ..............................................................................................15
3.3.2. ເຫດຜົນ...................................................................................................15
3.3.3. ການນຳໃຊ້...............................................................................................16
3.4. ການພິຈາລະນາຄະດີເປັນໝູ່ຄະນະ.......................................................................16
3.4.1. ຄວາມໝາຍ..............................................................................................16
3.4.2. ເຫດຜົນ...................................................................................................16
3.4.3. ການນຳໃຊ້...............................................................................................16
3.5. ຄວາມເປັນເອກະລາດຂອງຜູ້ພິພາກສາ................................................................17
3.5.1. ຄວາມໝາຍ..............................................................................................17
3.5.2. ເຫດຜົນ...................................................................................................17
3.5.3. ການນຳໃຊ້...............................................................................................18
3.6. ພາສາທີ່ໃຊ້ໃນການດຳເນີນຄະດີ..........................................................................18
3.6.1. ຄວາມໝາຍ..............................................................................................18
3.6.2. ເຫດຜົນ...................................................................................................18
3.6.3. ການນຳໃຊ້...............................................................................................19
3.7. ການໄຕ່ສວນຄະດີໃນທີ່ປະຊຸມສານ...................................................................19
3.7.1. ຄວາມໝາຍ..............................................................................................19
3.7.2. ເຫດຜົນ...................................................................................................19
3.7.3. ການນຳໃຊ້...............................................................................................20
3.8. ການບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນການພິຈາລະນາຄະດີດຽວກັນ....................................20
3.8.1. ຄວາມໝາຍ..............................................................................................20
3.8.2. ເຫດຜົນ...................................................................................................20
3.8.3. ການນຳໃຊ້...............................................................................................21
3.9. ການດຳເນີນຄະດີຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ...........................................21
3.9.1. ຄວາມໝາຍ..............................................................................................21
3.9.2. ເຫດຜົນ...................................................................................................21
3.9.3. ການນຳໃຊ້...............................................................................................22
3.10. ການໄກ່ເກ່ຍ.................................................................................................22
3.10.1. ຄວາມໝາຍ............................................................................................22
3.10.2. ເຫດຜົນ.................................................................................................23
3.10.3. ການນຳໃຊ້.............................................................................................23
3.11. ການຂໍຖອນຕົວ ແລະການຄ້ານຕົວ.....................................................................24
3.11.1. ຄວາມໝາຍ............................................................................................24
3.11.2. ເຫດຜົນ.................................................................................................24
3.11.3. ການນຳໃຊ້.............................................................................................24

3.12. ຂອບເຂດການພິຈາລະນາ ຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍ..........25
3.12.1. ຄວາມໝາຍ..........25
3.12.2. ເຫດຜົນ..........25
3.12.3. ການນຳໃຊ້..........25
**ບົດທີ 3 ຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ..........26**
1. ຄວາມໝາຍຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ..........26
2. ຄວາມສຳຄັນຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ..........26
3. ຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ..........26
3.1. ຄູ່ຄວາມໃນຄະດີແພ່ງ..........27
3.1.1. ຄວາມໝາຍ..........27
3.1.2. ເງື່ອນໄຂການເປັນຄູ່ຄວາມໃນຄະດີແພ່ງ.......... 27
3.1.3. ສິດ ແລະ ພັນທະຂອງຄູ່ຄວາມໃນຄະດີແພ່ງ.......... 27
3.2. ບຸກຄົນທີ່ສາມໃນຄະດີແພ່ງ..........28
3.2.1. ຄວາມໝາຍ..........28
3.2.2. ເງື່ອນໄຂ..........29
3.2.3. ສິດ ແລະ ພັນທະຂອງບຸກຄົນທີສາມ..........29
3.3. ຜູ້ຕາງໜ້າຢູ່ສານ..........30
3.3.1. ຄວາມໝາຍ.......... 30
3.3.2. ເງື່ອນໄຂ..........30
3.3.3. ສິດ ແລະ ພັນທະຂອງຜູ້ຕາງໜ້າ..........32
3.4. ການສືບຕໍ່ແທນຕົວໃນການດຳເນີນຄະດີ..........35
3.4.1. ຄວາມໝາຍ..........35
3.4.2. ເງື່ອນໄຂ..........35
3.4.3. ສິດ ແລະ ພັນທະຂອງຜູ້ສືບຕໍ່ແທນຕົວໃນການດຳເນີນຄະດີ..........35
3.5. ພະຍານ..........35
3.5.1. ຄວາມໝາຍ..........35
3.5.2. ເງື່ອນໄຂ..........36
3.5.3. ສິດ ແລະ ພັນທະຂອງພະຍານ..........36
3.6. ຜູ້ຊ່ຽວຊານ..........37
3.6.1. ຄວາມໝາຍ..........37
3.6.2. ເງື່ອນໄຂ..........37
3.6.3. ສິດ ແລະ ພັນທະຂອງຜູ້ຊ່ຽວຊານ..........37
3.7. ຜູ້ແປພາສາ..........38
3.7.1. ຄວາມໝາຍ..........38
3.7.2. ເງື່ອນໄຂ..........38
3.7.3. ສິດ ແລະ ພັນທະຂອງຜູ້ແປພາສາ..........38
4. ການເຂົ້າຮ່ວມຂອງໄອຍະການປະຊາຊົນໃນການດຳເນີນຄະດີແພ່ງ..........39

**ບົດທີ 4 ເງິນອາງສານ ແລະ ຄ່າທຳນຽມສານ**........................................................................40
1. ເງິນອາງສານ...........................................................................................................40
1.1. ຄວາມໝາຍຂອງເງິນອາງສານ................................................................................40
1.2. ລະບຽບການເກັບເງິນອາງສານຂອງສານແຕ່ລະຂັ້ນ..........................................................40
1.3. ວິທີນຳໃຊ້ເງິນອາງສານ.......................................................................................40
1.4. ການຄຸ້ມຄອງ, ການນຳໃຊ້ ແລະ ການກວດກາເງິນອາງສານ...........................................41
1.4.1. ການຄຸ້ມຄອງເງິນອາງສານ.................................................................................41
1.4.2. ການກວດກາເງິນອາງສານ.................................................................................41
2. ຄ່າທຳນຽມສານ........................................................................................................41
2.1. ຄວາມໝາຍຂອງຄ່າທຳນຽມສານ............................................................................41
2.2. ຄວາມສຳຄັນຂອງຄ່າທຳນຽມສານ.........................................................................41
2.3. ຫຼັກການຂອງຄ່າທຳນຽມສານ...............................................................................42
2.4. ອົງປະກອບຂອງຄ່າທຳນຽມສານ...........................................................................42
2.4.1. ອາກອນຂອງລັດ...............................................................................................43
2.4.2. ຄ່າໃຊ້ຈ່າຍໃນການດຳເນີນຄະດີ.........................................................................44
2.4.3. ຄ່າໃຊ້ຈ່າຍໃຫ້ແກ່ຜູ່ທີ່ຖືກເຊີນເຂົ້າມາຮ່ວມໃນການດຳເນີນຄະດີ...........................44
2.4.4. ຄ່າເອກະສານ ຫຼື ສຳເນົາເອກະສານຕ່າງໆ.........................................................45
2.5. ວິທີເກັບຄ່າທຳນຽມສານຂອງສານແຕ່ລະຂັ້ນ............................................................45
2.6. ການຄຸ້ມຄອງ, ການນຳໃຊ້ ແລະ ການກວດກາຄ່າທຳນຽມສານ.......................................45
2.6.1. ການຄຸ້ມຄອງເງິນຄ່າທຳນຽມສານ......................................................................45
2.6.2. ການນຳໃຊ້ເງິນຄ່າທຳນຽມສານ.........................................................................46
2.6.3. ກວດກາເງິນຄ່າທຳນຽມສານ.............................................................................46
2.7. ຄຳຕັດສິນຂອງສານກ່ຽວກັບການຈ່າຍເງິນອາງສານ ແລະ ຄ່າທຳນຽມສານ.......................47
2.7.1. ການຈ່າຍອາກອນຂອງລັດ................................................................................47
2.7.2. ຜູ່ຮັບຜິດຊອບຄ່າໃຊ້ຈ່າຍໃນການດຳເນີນຄະດີ......................................................48
2.7.3. ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ...........................................48
***Coffee break ...1*** ການປຽບທຽບລະບົບການຈັດຕັ້ງສານ ຂອງ ສປປ ລາວ ແລະ ຍີ່ປຸ່ນ......51
***Coffee break ...2*** ລະບົບການສຶກສາເພື່ອເປັນນັກກົດໝາຍ ( ຜູ່ພິພາກສາ, ໄອຍະການ, ທະນາຍຄວາມ) ຂອງຍີ່ປຸ່ນ..........................................................................53
***Coffee break ...3*** ເຮົາຈະເຮັດແນວໃດ ເພື່ອຮັກສາຄຸນນະພາບຂອງການບໍລິການທາງດ້ານກົດໝາຍໃນເຂດຊົນນະບົດ?..........................................................................54
**ພາກທີ II ການດຳເນີນຄະດີແພ່ງຢູ່ສານຂັ້ນຕົ້ນແບບທົ່ວໄປ**..................................................56
**ບົດທີ 1 ການຮ້ອງຟ້ອງ, ການແກ້ຟ້ອງ, ໝາຍຮຽກ ແລະ ສິດອຳນາດຂອງສານ**.............................56
1. ຄວາມໝາຍຂອງການຮ້ອງຟ້ອງ...................................................................................56
2. ຄວາມສຳຄັນຂອງການຮ້ອງຟ້ອງ ແລະ ສິດໃນການຮ້ອງຟ້ອງຕໍ່ສານ....................................56
2.1. ຄວາມສຳຄັນຂອງການຮ້ອງຟ້ອງ...........................................................................56
2.2. ສິດໃນການຮ້ອງຟ້ອງຕໍ່ສານ..................................................................................56

3. ອົງປະກອບຂອງຄຳຮ້ອງຟ້ອງ....................................................................................57
3.1. ເນື້ອໃນຂອງຄຳຮ້ອງຟ້ອງ....................................................................................57
3.2. ເປົ້າໝາຍຂອງຄຳຮ້ອງຟ້ອງ....................................................................................58
3.3. ເອກະສານຄັດຕິດໃນຄຳຮ້ອງຟ້ອງ....................................................................................58
4. ການຍື່ນຄຳຮ້ອງຟ້ອງ....................................................................................59
4.1. ການຍື່ນຄຳຮ້ອງຟ້ອງດ້ວຍຕົນເອງ....................................................................................59
4.2. ການຍື່ນຄຳຮ້ອງຟ້ອງໂດຍຜູ່ຕາງໜ້າ....................................................................................59
4.2.1. ການຍື່ນຄຳຮ້ອງຟ້ອງໂດຍຜູ່ຕາງໜ້າຕາມກົດໝາຍ....................................................................................59
4.2.2. ການຍື່ນຄຳຮ້ອງຟ້ອງໂດຍຜູ່ຕາງໜ້າຕາມການມອບໝາຍ....................................................................................60
4.3. ການຍື່ນຄຳຮ້ອງຟ້ອງຮ່ວມກັນ....................................................................................60
5. ການຮັບເອົາຄຳຮ້ອງຟ້ອງມາພິຈາລະນາ....................................................................................60
5.1. ການກວດກາຄຳຮ້ອງຟ້ອງ....................................................................................61
5.1.1. ກວດກາສິດອຳນາດຂອງສານໃນການພິຈາລະນາຄະດີ....................................................................................61
5.1.2. ກວດກາຄວາມຖືກຕ້ອງຂອງຄຳຮ້ອງຟ້ອງ....................................................................................61
5.1.3. ກວດກາຄະດີໄດ້ຜ່ານການໄກ່ເກັ່ຍ ຫຼື ບໍ່....................................................................................62
5.2. ການບໍ່ຮັບ ແລະ ການຮັບຄຳຮ້ອງຟ້ອງມາພິຈາລະນາ....................................................................................62
5.2.1. ການບໍ່ຮັບຄຳຮ້ອງຟ້ອງມາພິຈາລະນາ....................................................................................62
5.2.2. ການຮັບເອົາຄຳຮ້ອງຟ້ອງມາພິຈາລະນາ....................................................................................63
5.3. ການແຈ້ງຄຳຮ້ອງຟ້ອງໃຫ້ຜູ່ຖືກຮ້ອງຟ້ອງຊາບ....................................................................................63
5.3.1. ການແຈ້ງດ້ວຍການອອກໝາຍຮຽກ....................................................................................63
6. ການແກ້ຟ້ອງ ແລະການຟ້ອງແຍ່ງ....................................................................................64
6.1. ຄວາມໝາຍ, ຄວາມຈຳເປັນຂອງຄຳແກ້ຟ້ອງ ແລະ ກຳນົດເວລາໃນການແກ້ຟ້ອງ................64
6.1.1. ຄວາມໝາຍຂອງຄຳແກ້ຟ້ອງ....................................................................................64
6.1.2. ຄວາມຈຳເປັນຂອງຄຳແກ້ຟ້ອງ....................................................................................64
6.1.3. ກຳນົດເວລາໃນການແກ້ຟ້ອງ....................................................................................64
6.2. ຄວາມໝາຍ ແລະ ຄວາມຈຳເປັນຄຳຟ້ອງແຍ່ງ....................................................................................65
6.2.1. ຄວາມໝາຍຂອງຄຳຟ້ອງແຍ່ງ....................................................................................65
6.2.2. ຄວາມຈຳເປັນຂອງຄຳຟ້ອງແຍ່ງ....................................................................................65
6.3. ການຮັບຮູ້ ແລະ ການຖອນຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ....................................................................................65
6.3.1. ການຮັບຮູ້ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ....................................................................................65
6.3.2. ການຖອນຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ....................................................................................66
7. ໝາຍຮຽກ....................................................................................67
7.1. ຄວາມໝາຍ ແລະ ຄວາມສຳຄັນຂອງໝາຍຮຽກ....................................................................................67
7.2. ການຕົກລົງອອກໝາຍຮຽກ....................................................................................67
7.3. ເນື້ອໃນຂອງໝາຍຮຽກ....................................................................................67
7.4. ການສົ່ງໝາຍຮຽກ....................................................................................68
7.5. ຜົນສະທ້ອນຂອງການອອກໝາຍຮຽກ....................................................................................69

7.5.1. ຜົນສະທ້ອນທີ່ເກີດຂຶ້ນກ່ອນການປະກອບສຳນວນຄະດີ....................................69
7.5.2. ຜົນສະທ້ອນທີ່ເກີດຂຶ້ນພາຍຫຼັງການປະກອບສຳນວນຄະດີ.................................69
7.6. ກໍລະນີຄູ່ຄວາມເຂົ້າມາສານຕາມໝາຍຮຽກ..........................................................70
8. ລະບົບສານ ແລະ ສິດອຳນາດຂອງສານໃນການພິຈາລະນາຄະດີແພ່ງ..................................70
8.1. ລະບົບສານປະຊາຊົນຂອງ ສປປ ລາວ.................................................................70
8.2. ສິດອຳນາດຂອງສານປະຊາຊົນແຕ່ລະຂັ້ນ...........................................................70
8.2.1. ສານປະຊາຊົນສູງສຸດ....................................................................................70
8.2.2. ສານປະຊາຊົນພາກ........................................................................................71
8.2.3. ສານປະຊາຊົນແຂວງ, ນະຄອນ........................................................................71
8.2.4. ສານປະຊາຊົນເຂດ........................................................................................72
8.2.5. ສານທະຫານ..................................................................................................72
8.3. ສິດອຳນາດຂອງບັນດາຄະນະສານ......................................................................73
8.3.1. ສິດອຳນາດຂອງຄະນະສານແພ່ງ.....................................................................73
8.3.2. ສິດອຳນາດຂອງຄະນະສານແຮງງານ.................................................................73
8.3.3. ສິດອຳນາດຂອງຄະນະສານການຄ້າ..................................................................74
8.3.4. ສິດອຳນາດຂອງຄະນະສານຄອບຄົວ.................................................................75
8.3.5. ສິດອຳນາດຂອງຄະນະສານເດັກ......................................................................76
8.4. ສິດອຳນາດທາງດ້ານພື້ນທີ່……………………………………………….….............76
**ບົດທີ 2 ມາດຕະການຂອງສານ**......................................................................................77
1. ຄວາມໝາຍມາດຕະການຂອງສານ.........................................................................77
2. ຄວາມສຳຄັນຂອງມາດຕະການຂອງສານ.................................................................77
3. ປະເພດມາດຕະການຂອງສານ...............................................................................77
3.1. ມາດຕະການຮັບປະກັນການຮ້ອງຟ້ອງ...............................................................77
3.1.1. ການຍຶດຊັບ..................................................................................................78
3.1.2. ການອາຍັດຊັບ...............................................................................................79
3.1.3. ບໍ່ອະນຸຍາດໃຫ້ຄູ່ຄວາມເຄື່ອນໄຫວ ຫຼື ກະທຳສິ່ງໃດໜຶ່ງທີ່ກ່ຽວຂອງກັບຄະດີ............80
3.1.4. ການບໍ່ອະນຸຍາດໃຫ້ຄູ່ຄວາມປະຕິບັດຂໍ້ຜູກພັນໃດໜຶ່ງ.......................................80
3.1.5. ການຈຳກັດບໍລິເວນຕໍ່ຄູ່ຄວາມ.........................................................................81
3.1.6. ໝາຍພາຕົວ...................................................................................................81
3.1.7. ການອອກມາດຕະການຮັບປະກັນການຮ້ອງຟ້ອງອື່ນ..........................................82
3.2. ມາດຕະການຮີບດ່ວນຊົ່ວຄາວ...........................................................................82
3.2.1. ມາດຕະການຮີບດ່ວນຊົ່ວຄາວ.........................................................................83
3.2.2. ມາດຕະການຂອງສານຕໍ່ຄົນເສຍຈິດ.................................................................83
3.2.3. ມາດຕະການຂອງສານຕໍ່ນິຕິບຸກຄົນທີ່ຖືກຍຸບເລີກ...............................................84
3.2.4. ການນຳໃຊ້ມາດຕະການຂອງສານຕໍ່ຜົວ ຫຼື ເມັຍ................................................85
3.2.5. ມາດຕະການຂອງສານຕໍ່ເດັກ...........................................................................86
4. ການຂໍອຸທອນ, ປ່ຽນແປງ, ຂໍລົບລ້າງ ຫຼື ສະເໜີຄັດຄ້ານມາດຕະການຮັບປະກັນການຮ້ອງຟ້ອງ.....87

5. ຜົນບັງຄັບຂອງຄຳສັ່ງໃຫ້ປະຕິບັດມາດຕະການ.........................................................88
6. ການຈັດຕັ້ງປະຕິບັດມາດຕະການຮັບປະກັນການຮ້ອງຟ້ອງ..............................................88
**ບົດທີ 3 ການຄົ້ນຄວ້າຄະດີ**……………………………......………………..........93
1. ຄວາມໝາຍຂອງການຄົ້ນຄວ້າຄະດີ.......................................................................93
2. ຄວາມສຳຄັນຂອງການຄົ້ນຄວ້າຄະດີ.....................................................................93
3. ວິທີການຄົ້ນຄວ້າຄະດີ.......................................................................................94
3.1. ຜູ້ຄົ້ນຄວ້າ ແລະ ການຄ້ານຕໍ່ຜູ້ຄົ້ນຄວ້າຄະດີ..............................................................94
3.2. ການຄົ້ນຄວ້າຄະດີ.......................................................................................95
3.2.1. ການກຳນົດເຫດການຂອງຄະດີ.....................................................................95
3.2.2. ການກຳນົດປະເດັນຂໍ້ຂັດແຍ່ງ.....................................................................95
3.2.3. ການກຳນົດຫຼັກຖານ.................................................................................97
3.2.4. ການກວດກາຫຼັກຖານ...............................................................................99
3.3. ການມີສ່ວນຮ່ວມຂອງຄູ່ຄວາມໃນການຄົ້ນຄວ້າຄະດີ..............................................99
3.4. ສະຫຼຸບຫຍໍ້ຜົນຂອງການຄົ້ນຄວ້າຄະດີ.................................................................100
3.5. ຄະນະສານກວດກາຜົນຂອງການຄົ້ນຄວ້າໃນເບື້ອງຕົ້ນ...........................................103
3.5.1. ກໍລະນີຫຼັກຖານຄົບຖ້ວນ.........................................................................103
3.5.2. ກໍລະນີຫຼັກຖານບໍ່ຄົບຖ້ວນ......................................................................104
3.5.3. ການຊຸດມ້ຽນຄະດີ...............................................................................104
4. ການໄກ່ເກ່ຍຄູ່ຄວາມ......................................................................................105
4.1. ບົດບັນທຶກຂອງການໄກ່ເກ່ຍ..........................................................................106
4.2. ຄຳສັ່ງປະຕິບັດຜົນຂອງການໄກ່ເກ່ຍ..................................................................106
**ບົດທີ 4 ຫຼັກຖານ**.............................................................................................112
1. ຄວາມໝາຍຂອງຫຼັກຖານ...................................................................................112
2. ຄວາມສຳຄັນຂອງຫຼັກຖານ.................................................................................113
3. ທີ່ມາຂອງຫຼັກຖານ..........................................................................................114
4. ປະເພດຫຼັກຖານ.............................................................................................115
4.1. ຫຼັກຖານທາງດ້ານວັດຖຸ...............................................................................115
4.2. ຫຼັກຖານທາງດ້ານເອກະສານ..........................................................................116
4.3. ຫຼັກຖານທາງດ້ານບຸກຄົນ.............................................................................117
5. ການປະກອບ ແລະ ເກັບກຳຂໍ້ມູນຫຼັກຖານ...............................................................118
5.1. ວິທີການປະກອບ ແລະ ເກັບກຳຂໍ້ມູນຫຼັກຖານ.......................................................118
5.1.1. ການປະກອບຫຼັກຖານໂດຍຄູ່ຄວາມ............................................................119
ກ. ການຍື່ນ ແລະ ການມອບຮັບຫຼັກຖານ........................................................ 119
ຂ. ການຮ້ອງຂໍໃຫ້ສານກະທຳອັນໃດອັນໜຶ່ງ.......................................................120
ຄ. ໂຕ້ແຍ່ງກ່ຽວກັບຫຼັກຖານ.......................................................................120
5.2. ການເກັບກຳຫຼັກຖານໂດຍສານ.......................................................................121
ກ. ຮຽກບຸກຄົນທີ່ກ່ຽວຂ້ອງມາໃຫ້ການ.............................................................. 122

ຂ. ລົງກວດກາບັນຫາຂັດແຍ່ງ....................................................................123
ຄ. ແຕ່ງຕັ້ງຜູ່ຊ່ຽວຊານທໍາການພິສູດ...............................................................123
ງ. ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊີ້ແຈງ, ຢັ້ງຢືນ ຫຼື ສະໜອງຫຼັກຖານທີ່ກ່ຽວຂ້ອງ........124
ຈ. ມອບໃຫ້ສານອື່ນເກັບກໍາຂໍ້ມູນຫຼັກຖານ ແລະ ສອບສວນແທນ..............................124
6. ລະບຽບການພິຈາລະນາຂໍ້ມູນຫຼັກຖານ.................................................................125
7. ການກວດກາ ແລະ ຄັດຈ້ອນຫຼັກຖານ...................................................................125
8. ການຄຸ້ມຄອງຫຼັກຖານ......................................................................................126
9. ການຊັ່ງຊາ ຕີລາຄາຫຼັກຖານ.............................................................................127
10. ການນໍາໃຊ້ຫຼັກຖານ........................................................................................128
**ບົດທີ 5 ການປະຊຸມສານ**..........................................................................................130
1. ຄວາມໝາຍຂອງການປະຊຸມສານ.......................................................................130
2. ຄວາມສໍາຄັນຂອງການປະຊຸມສານ.....................................................................130
3. ຂັ້ນຕອນຂອງການປະຊຸມສານ..........................................................................131
3.1. ການເປີດປະຊຸມສານ...................................................................................131
3.1.1. ການກະກຽມກ່ອນການເປີດປະຊຸມສານ.....................................................131
3.1.2. ການເລີ່ມເປີດປະຊຸມສານ.........................................................................132
3.1.3. ການຄ້ານຕົວຄະນະສານ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ່ຊ່ຽວຊານ ແລະ ຜູ່ແປພາ...........................................................................................................132
3.1.4. ການແຈ້ງສິດ ແລະ ພັນທະຂອງຜູ່ເຂົ້າຮ່ວມໃນທີ່ປະຊຸມສານ............................133
3.2. ການໄຕ່ສວນຄະດີໃນທີ່ປະຊຸມສານ...................................................................134
3.2.1. ຄະນະສານຕັດສິນລາຍງານເນື້ອຄະດີໂດຍຫຍໍ້................................................135
3.2.2. ການໄກ່ເກັ່ຍຄະດີໃນທີ່ປະຊຸມສານ............................................................137
3.2.3. ການເລີ່ມການໄຕ່ສວນຄະດີໃນທີ່ປະຊຸມສານ................................................138
3.3. ການໂຕ້ຖຽງໃນທີ່ປະຊຸມສານ.........................................................................142
3.3.1. ລໍາດັບຂອງການໂຕ້ຖຽງ..........................................................................143
3.3.2. ຂອບເຂດຂອງການໂຕ້ຖຽງ........................................................................143
3.3.3. ການມີຄໍາເຫັນສຸດທ້າຍຂອງຄູ່ຄວາມ...........................................................144
3.4. ພະນັກງານໄອຍະການປະຊາຊົນຖະແຫຼງ..........................................................144
3.5. ການພິຈາລະນາຄະດີໃນຫ້ອງປະຊຸມລັບ............................................................145
4. ການປະກາດຄໍາຕັດສິນ...................................................................................145
5. ການບໍ່ສາມາດສືບຕໍ່ການໄຕ່ສວນຄະດີ...............................................................146
5.1. ການເລື່ອນການໄຕ່ສວນຄະດີ..........................................................................146
5.2. ການໂຈະການໄຕ່ສວນຄະດີ...........................................................................146
6. ການບັນທຶກການປະຊຸມສານ............................................................................148
**ບົດທີ 6 ຄໍາຕັດສິນຂອງສານ**.....................................................................................149
1. ຄວາມໝາຍຂອງຄໍາຕັດສິນ...............................................................................149
2. ຄວາມສໍາຄັນຂອງຄໍາຕັດສິນ.............................................................................149

3. ຜົນສັກສິດຂອງຄຳຕັດສິນຂອງສານ....................................................................150
4. ເນື້ອໃນຄຳຕັດສິນຂອງສານ.............................................................................150
4.1. ພາກສະເໜີ...................................................................................................150
4.2. ພາກເນື້ອຄະດີ...............................................................................................151
4.3. ພາກວິນິດໄສ................................................................................................151
4.4. ພາກຕັດສິນ...................................................................................................152
5. ປະເພດຂອງຄຳຕັດສິນ.....................................................................................153
5.1. ການບໍ່ຮັບຮູ້ຄຳຮ້ອງຟ້ອງຫຼືຄຳຟ້ອງແຍ່ງ.....................................................153
5.2. ການຮັບຮູ້ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ.....................................................153
6. ການດຳເນີນການພາຍຫຼັງປະກາດຄຳຕັດສິນ.......................................................154
6.1. ການຮຽບຮຽງ ແລະ ພິມຄຳຕັດສິນ...............................................................154
6.2. ການແຈ້ງຄຳຕັດສິນໃຫ້ຄູ່ຄວາມຮັບຊາບ........................................................154
6.3. ກໍລະນີຄຳຕັດສິນທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດ.............................................155
6.4. ກໍລະນີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ.........................................................155
***Coffee break ...4*** ການປຽບທຽບລັກສະນະການດຳເນີນຄະດີແພ່ງຂອງ ຍີ່ປຸ່ນ ແລະ ສປປ ລາວ........157
**ພາກທີ III ການດຳເນີນຄະດີແພ່ງຢູ່ສານຂັ້ນຕົ້ນແບບພິເສດ**.............................................159
**ບົດທີ 1 ຄວາມຮູ້ທົ່ວໄປກ່ຽວກັບການພິຈາລະນາການຮ້ອງຂໍທາງແພ່ງ**...................................159
1. ຄວາມໝາຍການຮ້ອງຂໍທາງແພ່ງ.......................................................................159
2. ຄວາມສຳຄັນຂອງການຮ້ອງຂໍທາງແພ່ງ...............................................................159
3. ປະເພດການຮ້ອງຂໍທາງແພ່ງ............................................................................159
4. ຫຼັກການ (ລະບຽບ) ທົ່ວໄປຂອງການຮ້ອງຂໍທາງແພ່ງ..............................................159
4.1. ຂອບເຂດການພິຈາລະນາການຮ້ອງຂໍທາງແພ່ງ.................................................160
4.2. ຄຳຮ້ອງຂໍທາງແພ່ງ........................................................................................160
4.3. ຜູ້ເຂົ້າຮ່ວມໃນການດຳເນີນຄະດີການຮ້ອງຂໍທາງແພ່ງ.........................................160
4.4. ການພິຈາລະນາການຮ້ອງຂໍໃນທີ່ປະຊຸມສານ....................................................161
5. ການຕົກລົງກ່ຽວກັບການຮ້ອງຂໍທາງແພ່ງ..........................................................161
5.1. ການຂໍອຸທອນ ຫຼື ສະເໜີຄັດຄ້ານຄຳຕັດສິນ....................................................162
6. ຄວາມແຕກຕ່າງ ລະຫວ່າງການຮ້ອງຂໍທາງແພ່ງ ແລະ ການຮ້ອງຟ້ອງ.........................162
**ບົດທີ 2 ການພິຈາລະນາການຮ້ອງຂໍທາງແພ່ງ**...............................................................163
1. ເງື່ອນໄຂການຮັບເອົາຄຳຮ້ອງຂໍທາງແພ່ງມາພິຈາລະນາ..........................................163
2. ການພິຈາລະນາຄຳຮ້ອງຂໍທາງແພ່ງ...................................................................163
2.1. ການຮັບຄຳຮ້ອງຂໍມາພິຈາລະນາ.....................................................................163
2.2. ການປະກອບສຳນວນຄະດີ........................................................................... 164
2.3. ການຄົ້ນຄວ້າຄະດີ........................................................................................164
2.4. ການປະຊຸມສານ..........................................................................................164
2.4.1. ການໄຕ່ສວນຄະດີ...................................................................................164
2.4.2. ການລົງຄຳຕັດສິນ...................................................................................165

3. ການຂໍອຸທອນ ຫຼື ຄັດຄ້ານ........................................................................................165
4. ຜົນສະທ້ອນຂອງການພິຈາລະນາການຮ້ອງຂໍທາງແພ່ງ...................................................165
**ບົດທີ 3 ການຮັບຮູ້ເປັນຜູ່ບໍ່ມີຄວາມສາມາດທາງກດ້ານການປະພຶດ**............................................166
1. ຄວາມຫມາຍການຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດ..........166
2. ຄວາມສໍາຄັນໃນການຮັບຮູ້ວ່າບຸກຄົນໃດໜຶ່ງເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດ..........167
3. ເງື່ອນໄຂທີ່ພາໃຫ້ສານຮັບເອົາ ຄໍາຮ້ອງຂໍຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ່ບໍ່ມີຄວາມສາມາດທາງດ້ານ....
.......................................................................................................................168
4. ການພິຈາລະນາວ່າບຸກຄົນໃດໜຶ່ງເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດ....................168
4.1. ຄໍາຮ້ອງຂໍ.........................................................................................................168
4.2. ການກວດກາ ຄໍາຮ້ອງຂໍ..........................................................................................169
4.3. ການຄົ້ນຄວ້າຄະດີ.................................................................................................169
4.4. ການພິຈາລະນາຄະດີໃນທີ່ປະຊຸມສານ.............................................................169
4.5. ການລົງຄໍາຕັດສິນ....................................................................................................169
5. ຜົນສະທ້ອນຂອງຄໍາຕັດສິນຮັບຮູ້ວ່າບຸກຄົນໃດໜຶ່ງເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດ …
………………………………………………………………………………................170
6. ການດໍາເນີນຕໍ່ຜູ່ທີ່ຖືກສານຕັດສິນວ່າເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດໄດ້ກັບຄືນ.... ...
.......................................................................................................................170
**ບົດທີ 4 ການປະກາດເປັນຜູ່ຫາຍສາບສູນ ຫຼື ເສັຍຊີວິດ**.......................................................171
1. ຄວາມໝາຍ ການປະກາດເປັນຜູ່ຫາຍສາບສູນ ຫຼື ເສັຍຊີວິດ..........................................171
2. ຄວາມສໍາຄັນ.......................................................................................................171
3. ເງື່ອນໄຂ.............................................................................................................172
3.1. ຄໍາຮ້ອງຂໍ.........................................................................................................172
3.2. ສໍາລັບຄໍາຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ່ຫາຍສາບສູນນັ້ນ..........................172
3.3.ສໍາລັບຄໍາຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ່ເສັຍຊີວິດນັ້ນ.............................172
4. ການພິຈາລະນາຄະດີ ຮ້ອງຂໍໃຫ້ປະກາດເປັນຜູ່ຫາຍສາບສູນຫຼືເສັຍຊີວິດ............................173
4.1. ກວດກາຄໍາຮ້ອງຂໍ.................................................................................................173
4.2. ການຄົ້ນຄວ້າຄະດີ.................................................................................................173
4.3. ການເກັບກໍາຂໍ້ມູນຫຼັກຖານ......................................................................................173
4.4. ການພິຈາລະນາຄະດີໃນທີ່ປະຊຸມສານ.............................................................174
4.5. ການລົງຄໍາຕັດສິນ....................................................................................................174
5. ຜົນສະທ້ອນຂອງການປະກາດວ່າເປັນຜູ່ຫາຍສາບສູນ ຫຼື ເສັຍຊີວິດ.................................174
6. ການດໍາເນີນພາຍຫຼັງຜູ່ຖືກສານຕັດສິນປະກາດເປັນຜູ່ຫາຍສາບສູນ ຫຼື ເສັຍຊີວິດແລ້ວ, ແຕ່ຜູ່ກ່ຽວຍັງ
ມີຊີວິດ………………………………..……………………………..…….........175
**ບົດທີ 5 ການພິຈາລະນາຢັ້ງຢືນໃບຕາດິນເສັຍຫາຍ**.............................................................176
1. ຄວາມໝາຍຂອງການພິຈາລະນາຢັ້ງຢືນໃບຕາດິນເສັຍຫາຍ...........................................176
2. ຄວາມສໍາຄັນຂອງການພິຈາລະນາຢັ້ງຢືນໃບຕາດິນເສັຍຫາຍ..........................................176
3. ເງື່ອນໄຂການຮ້ອງຂໍຕໍ່ສານໃຫ້ຢັ້ງຢືນໃບຕາດິນເສັຍຫາຍ................................................176

4. ຂັ້ນຕອນການຍື່ນຄໍາຮ້ອງຕໍ່ສານໃຫ້ຍັ້ງຢືນໃບຕາດິນເສຍຫາຍ........................................177
4.1. ການສະເໜີຕໍ່ອົງການຄຸ້ມຄອງທີ່ດິນ................................................................177
4.2. ການກວດກາຂອງອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນ........................................177
4.3. ການສະເໜີຕໍ່ສານເພື່ອໃຫ້ພິຈາລະນາຕັດສິນຍັ້ງຢືນໃບຕາດິນເສຍຫາຍ........................178
5. ການພິຈາລະນາຂອງສານກ່ຽວກັບການຍັ້ງຢືນໃບຕາດິນເສຍຫາຍ....................................178
5.1. ການກວດກາຄໍາສະເໜີ ຫຼື ຄໍາຮ້ອງຂໍ................................................................178
5.2. ຂັ້ນຕອນການຄົ້ນຄວ້າພິຈາລະນາຕັດສິນຍັ້ງຢືນໃບຕາດິນເສຍຫາຍ...........................178
5.2.1. ການຮັບປະກັນຂອງເຈົ້າຂອງສິດນໍາໃຊ້ທີ່ດິນ...............................................178
5.2.2. ການກວດກາການເສຍຫາຍຂອງໃບຕາດິນ..................................................179
5.2.3. ການແຈ້ງການກ່ຽວໃບຕາດິນເສຍຫາຍ......................................................179
5.3. ການພິຈາລະນາຕັດສິນກ່ຽວກັບໃບຕາດິນເສຍຫາຍ ............................................179
5.4. ຜົນບັງຄັບຂອງຄໍາຕັດສິນຍັ້ງຢືນໃບຕາດິນເສຍຫາຍ...............................................180
6. ການອອກສໍາເນົາໃບຕາດິນໃໝ່..........................................................................180
7. ຜົນສະທ້ອນ.................................................................................................181
**ບົດທີ 6 ການດໍາເນີນຄະດີໃນກໍລະນີຈໍາເລີຍເອົາຕົວຫຼົບໜີ**...................................................182
1. ຄວາມໝາຍຂອງການດໍາເນີນຄະດີກໍລະນີຈໍາເລີຍເອົາຕົວຫຼົບໜີ.......................................182
2. ຄວາມສໍາຄັນ.................................................................................................182
3. ເງື່ອນໄຂການຮັບເອົາຄໍາຮ້ອງຂໍມາພິຈາລະນາໃນກໍລະນີຈໍາເລີຍເອົາຕົວຫຼົບໜີ......................182
3.1. ຕ້ອງແມ່ນຄະດີທີ່ ຈໍາເລີຍໄດ້ເອົາຕົວຫຼົບໜີໂດຍບໍ່ຮູ້ສາເຫດ...................................183
3.2. ມີຄໍາຮ້ອງຂອງໂຈດທີ່ຍື່ນຕໍ່ສານເພື່ອໃຫ້ສານພິຈາລະນາຄະດີໂດຍບໍ່ມີຈໍາເລີຍເຂົ້າຮ່ວມ.....183
4. ປະເພດຄະດີຮ້ອງຂໍໃຫ້ສານຕັດສິນໃນກໍລະນີລູກໜີ້ເອົາຕົວຫຼົບໜີ...................................183
5. ຂັ້ນຕອນການພິຈາລະນາເນີນຄະດີ.......................................................................184
5.1. ການກວດກາຄໍາຮ້ອງຂໍ.................................................................................184
5.2. ການອອກໝາຍຮຽກ.....................................................................................184
5.3. ພິຈາລະນາຕັດສິນຄະດີ.................................................................................185
6. ການດໍາເນີນພາຍຫຼັງປະກາດຄໍາຕັດສິນ.................................................................184
6.1. ການແຈ້ງຄໍາຕັດສິນ.....................................................................................185
6.2. ການຂໍອຸທອນ ຫຼື ຄັດຄ້ານຄໍາຕັດສິນ.................................................................185
6.3. ການພິຈາລະນາຄືນໃໝ່ຂອງສານ.......................................................................186
7. ຜົນສະທ້ອນການຮ້ອງຂໍ ໃນກໍລະນີຈໍາເລີຍເອົາຕົວຫຼົບໜີ..........................................186
**ພາກທີ IV ການຮື້ຟື້ນຄະດີ**.............................................................................................188
**ບົດທີ 1 ຄວາມຮູ້ທົ່ວໄປກ່ຽວກັບການຂໍຮື້ຟື້ນຄະດີ**.............................................................188
1. ຄວາມໝາຍຂອງການຮື້ຟື້ນຄະດີ.........................................................................188
2. ຄວາມສໍາຄັນ ແລະ ຄວາມຈໍາເປັນຂອງການຮື້ຟື້ນຄະດີ..................................................188
2.1. ຄວາມສໍາຄັນຂອງການຮື້ຟື້ນຄະດີ...................................................................188
2.2. ຄວາມຈໍາເປັນຂອງການຮື້ຟື້ນຄະດີ.................................................................188
3. ເງື່ອນໄຂໃນການຂໍຮື້ຟື້ນຄະດີ.............................................................................189

3.1. ເງື່ອນໄຂດ້ານກຳນົດເວລາ........................................................................189
3.1.1. ເງື່ອນໄຂທົ່ວໄປ.........................................................................189
3.1.2. ເງື່ອນໄຂພິເສດ.........................................................................189
3.2. ເງື່ອນໄຂດ້ານຂໍ້ມູນຫຼັກຖານ........................................................................189
4. ບັນຫາທີ່ບໍ່ຮື້ຟື້ນ........................................................................189
5. ຜູ້ມີສິດສະເໜີຂໍຮື້ຟື້ນຄະດີ........................................................................190
5.1. ຄູ່ຄວາມ........................................................................190
5.2. ບຸກຄົນທີສາມ........................................................................190
5.3. ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີ........................................................................190
**ບົດທີ 2 ການພິຈາລະນາການຂໍຮື້ຟື້ນ ຂອງອົງການທີ່ມີສິດອຳນາດ**........................................................................191
1. ການພິຈາລະນາຂອງອົງການໄອຍະການປະຊາຊົນສູງສຸດ........................................................................191
1.1. ຂັ້ນຕອນຮັບຄຳຮ້ອງຂໍຮື້ຟື້ນ........................................................................191
1.2. ຂັ້ນຕອນຄົ້ນຄວ້າຄຳຮ້ອງຂໍຮື້ຟື້ນ........................................................................191
1.2.1. ກອງປະຊຸມວິຊາການ........................................................................192
1.2.2. ການສະເໜີໂຈະປະຕິບັດຄຳຕັດສິນຂອງສານ........................................................................192
1.3. ການຕົກລົງຂອງຄະນະກຳມະການໄອຍະການປະຊາຊົນ........................................................................192
1.3.1. ຕົກລົງບໍ່ຮື້ຟື້ນຄະດີ........................................................................193
1.3.2. ສະເໜີຮື້ຟື້ນຄະດີຄືນໃໝ່........................................................................193
2. ການພິຈາລະນາຂອງສານປະຊາຊົນສູງສຸດ........................................................................194
2.1. ຂັ້ນຕອນການຄົ້ນຄ້ວາຄຳສະເໜີຮື້ຟື້ນຄະດີ........................................................................194
2.2. ການເປີດປະຊຸມສານ........................................................................194
2.3. ການຕົກລົງຂອງສານປະຊາຊົນສູງສຸດ........................................................................195
2.3.1. ຄຳຕົກລົງບໍ່ຮື້ຟື້ນຄະດີ........................................................................195
2.3.2. ຄຳຕົກລົງຮື້ຟື້ນຄະດີຄືນໃໝ່........................................................................195
3. ຜົນສະທ້ອນຂອງການຮື້ຟື້ນຄະດີ........................................................................195
***Coffee break ...5*** ພາລະບົດບາດຂອງການຮື້ຟື້ນຄະດີ........................................................................196

# ພາກທີ I
# ຄວາມຮູ້ທົ່ວໄປກ່ຽວກັບການດຳເນີນຄະດີແພ່ງ
## ບົດທີ 1
## ຂະບວນວິວັດຂອງການດຳເນີນຄະດີແພ່ງ ຢູ່ ສປປ ລາວ

### 1. ຄວາມໝາຍຂອງການດຳເນີນຄະດີແພ່ງ

ການດຳເນີນຄະດີແພ່ງ ແມ່ນການເຄື່ອນໄຫວດຳເນີນຄະດີຂອງຜູ້ຮັບຜິດຊອບ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ເພື່ອເກັບກຳຂໍ້ມູນຫລັກຖານທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງໃຫ້ມີຄວາມຄົບຖ້ວນ ຮອບດ້ານ ເຮັດໃຫ້ເຫດການຂອງຄະດີມີຄວາມແຈ້ງຂາວ ເພື່ອນຳມາພິຈາລະນາແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນໃຫ້ ມີຄວາມຖືກຕ້ອງ ແລະ ເປັນທຳ.

ເມື່ອສັງລວມແລ້ວການດຳເນີນຄະດີແພ່ງ ປະກອບດ້ວຍການເຄື່ອນໄຫວຂອງສອງພາກສ່ວນເປັນຕົ້ນຕໍຄື ຜູ້ຮັບຜິດຊອບໃນການດຳເນີນຄະດີ ທີ່ຖືເປັນພາກສ່ວນລັດ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ທີ່ຖືເປັນພາກສ່ວນເອກະຊົນ ຊຶ່ງພາກສ່ວນລັດຕົ້ນຕໍແມ່ນຜູ້ພິພາກສາ ທີ່ໃຊ້ອຳນາດລັດໃນການນຳໃຊ້ກົດໝາຍ ເພື່ອຕັດສິນຄະດີທີ່ກ່ຽວຂ້ອງ, ສ່ວນພາກສ່ວນເອກະຊົນປະກອບມີ ໂຈດ, ຈຳເລີຍ, ພະຍານ ແລະ ຜູ້ກ່ຽວຂ້ອງອື່ນ ມີໜ້າທີ່ໃນການປະກອບ ແລະ ສະໜອງຂໍ້ມູນຫລັກຖານໃຫ້ ແກ່ຜູ້ພິພາກສາ ຊຶ່ງໝາຍຄວາມວ່າ ໂຈດ ແລະ ຈຳເລີຍມີຄວາມຮັບຜິດຊອບໂດຍກົງໃນການເກັບກຳຂໍ້ມູນຫລັກຖານ ສ່ວນຜູ້ພິພາກສາ ແລະ ຜູ້ອື່ນໆ ນັ້ນ ແມ່ນມີຄວາມຮັບຜິດຊອບໃນການປະສານງານ, ເປັນສື່ກາງໃນການດຳເນີນຄະດີ. ແຕ່ເຖິງຢ່າງໃດກໍຕາມ ເມື່ອເບິ່ງໂດຍທົ່ວໄປແລ້ວ ຈະແມ່ນຜູ້ພິພາກສາ ແລະ ຄູ່ຄວາມທີ່ເຄື່ອນໄຫວຮ່ວມກັນ ແຕ່ເນື່ອງຈາກວ່າບັນຫາທາງແພ່ງ ເປັນບັນຫາທີ່ພົວພັນກັບສິດສ່ວນຕົວຂອງໂຈດ ແລະ ຈຳເລີຍ ທີ່ມີກຳມະສິດຄົບຖ້ວນ ຕໍ່ຊັບສິ່ງຂອງທີ່ພົວພັນໃນຄະດີ ຊຶ່ງອຳນາດລັດບໍ່ສາມາດແຊກແຊງ ຫຼື ກ້າວກ່າຍໄດ້ ດັ່ງນັ້ນ ຄູ່ຄວາມຈຶ່ງມີໜ້າທີ່ຕົ້ນຕໍໃນການເຄື່ອນໄຫວປະກອບ, ສະໜອງຂໍ້ມູນຫລັກຖານ ແລະ ສະເໜີຄວາມເປັນຈິງໃຫ້ແກ່ຜູ້ພິພາກສາ ແລະ ສ່ວນຜູ້ພິພາກສາ ບໍ່ມີໜ້າທີ່ຕົ້ນຕໍໃນການປະກອບຂໍ້ມູນຫລັກຖານ ແຕ່ຈະເຮັດໜ້າທີ່ຕົ້ນຕໍໃນການຄົ້ນຄວ້າ, ຊັ່ງຊາຕີລາຄາຂໍ້ມູນຫລັກຖານທີ່ຄູ່ຄວາມ ແຕ່ລະຝ່າຍສະເໜີຕໍ່ສານ ເພື່ອຊອກຫາຄວາມເປັນຈິງໃນຄະດີ. ບົນພື້ນຖານເນື້ອໃນການເຄື່ອນໄຫວດຳເນີນຄະດີແພ່ງດັ່ງກ່າວ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຈຶ່ງໄດ້ກຳນົດຂັ້ນຕອນ ແລະ ວິທີການຕ່າງໆ ເພື່ອໃຫ້ຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ ຕ້ອງໄດ້ປະຕິບັດຕາມຢ່າງເຂັ້ມງວດ, ບັນຫາໃດທີ່ບໍ່ກຳນົດໄວ້ ຈະນຳມາປະຕິບັດບໍ່ໄດ້ ຫຼື ກົດໝາຍກຳນົດໄວ້ ແຕ່ປະຕິບັດບໍ່ຖືກຕ້ອງຈະຖືເປັນການລະເມີດກົດໝາຍ ເຊັ່ນ ໃນມາດຕາ 361 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແຫ່ງ ສປປ ລາວ ກຳນົດວ່າ ບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດຢູ່ ສປປ ລາວ ທີ່ມີຈຸດປະ ສົງຮ້ອງຟ້ອງບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດຢູ່ຕ່າງປະເທດ ຫຼື ບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດ ຢູ່ຕ່າງປະເທດທີ່ມີຈຸດປະສົງຢາກຮ້ອງຟ້ອງບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດ ຢູ່ ສປປ ລາວ ແມ່ນໃຫ້ປະຕິບັດຕາມສົນທິສັນຍາຮ່ວມມືທາງດ້ານຍຸຕິທຳ. ໃນກໍລະນີ ທີ່ບໍ່ມີສົນທິສັນຍານັ້ນ ກໍໃຫ້ຍື່ນຄຳຮ້ອງຟ້ອງ ຜ່ານກະຊວງການຕ່າງປະເທດ ເພື່ອນຳສົ່ງໃຫ້ເຈົ້າໜ້າທີ່ກ່ຽວຂ້ອງຂອງປະເທດທີ່ຈຳເລີຍອາໄສຢູ່ພິຈາລະນາຄະດີ ໝາຍຄວາມວ່າ ຕ້ອງນຳຄຳຮ້ອງຟ້ອງນັ້ນ ຍື່ນຜ່ານກະຊວງການຕ່າງປະເທດ ເພື່ອສົ່ງມາຕາມຂັ້ນຕອນກ່ອນສົ່ງມາໃຫ້ສານພິຈາລະນາຕັດສິນ ແຕ່ຖ້າຫາກບຸກຄົນນັ້ນນຳມາຍື່ນຕໍ່ສານໂດຍກົງ ສານກໍຈະບໍ່ຮັບພ້ອມທັງແນະນຳໃຫ້ປະຕິບັດຕາມມາດຕາ 361 ກົງກັນຂ້າມ ຖ້າສານຂັ້ນຕົ້ນຮັບເອົາມາພິຈາລະນາ ກໍຖືວ່າເປັນການລະເມີດກົດໝາຍ ຊຶ່ງສານຂັ້ນເທິງຕ້ອງໄດ້ພິພາກສາລົບລ້າງການຕັດສິນຂອງສານຂັ້ນຕົ້ນນັ້ນ ແລ້ວໃຫ້ປະຕິບັດຕາມຂັ້ນຕອນຂອງມາດຕາ 361 ຈຶ່ງຮັບເອົາມາພິຈາລະນາ.

## 2. ການດຳເນີນຄະດີແພ່ງ ພາຍຫຼັງປີ 1975

ບັນຫາທາງແພ່ງ ໄດ້ເກີດຂຶ້ນພ້ອມກັບການກຳເນີດເກີດຂຶ້ນຂອງສັງຄົມມີຊົນຊັ້ນ ຂໍ້ຂັດແຍ່ງທາງແພ່ງດັ່ງກ່າວ ແມ່ນອີງໃສ່ຮີດຄອງປະເພນີ ໃນການແກ້ໄຂ ແລະ ພັດທະນາຕາມສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມຂອງປະເທດ ເພື່ອທັນການຄຸ້ມຄອງລັດ ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ພາຍຫລັງປະເທດຊາດ ໄດ້ຮັບການປົດປ່ອຍໃນປີ 1975 ເຮັດໃຫ້ການພິຈາລະນາແກ້ໄຂບັນຫາທາງແພ່ງໄດ້ມີການພັດທະນາເປັນກ້າວໆມາ.

### 2.1. ການແກ້ໄຂຂໍ້ຂັດແຍ່ງທາງແພ່ງກ່ອນມີກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ

ພາຍຫລັງປະເທດຊາດໄດ້ຮັບການປົດປ່ອຍ, ພັກ ແລະ ລັດແຫ່ງສປປ ລາວ ໄດ້ຖືເອົາການຄຸ້ມຄອງລັດ ແລະ ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ແຕ່ໃນໄລຍະນັ້ນ ຍັງບໍ່ທັນມີກົດໝາຍ ຈຶ່ງຖືເອົາມະຕິ, ຄຳສັ່ງ ເປັນບ່ອນອີງໃນການແກ້ໄຂບັນຫາ, ຂໍ້ຂັດແຍ່ງຕ່າງໆ ທີ່ເກີດຂຶ້ນຢູ່ໃນສັງຄົມ ຊຶ່ງໃນເບື້ອງຕົ້ນ ແມ່ນຖືເອົາຄຳສັ່ງສະບັບເລກທີ 53/ນຍ ລົງວັນທີ 15 ຕຸລາ 1976 ຂອງນາຍົກ ລັດຖະມົນຕີ ກ່ຽວກັບການຈັບຕົວ, ການສືບສວນ ແລະ ການຕັດສິນຜູ້ກະທຳຜິດ ເປັນບ່ອນອີງໃນການເຄື່ອນໄຫວ ແລະ ຕັດສິນຄະດີ. ການດຳເນີນຄະດີໃນເວລານັ້ນ ແມ່ນເລັງໃສ່ຄະດີອາຍາ ເປັນຕົ້ນຕໍ, ສ່ວນຄະດີແພ່ງ ແມ່ນຍັງບໍ່ມີຂໍ້ຂັດແຍ່ງເກີດຂຶ້ນຫຼາຍ ຈຶ່ງເຮັດໃຫ້ລະບົບການດຳເນີນຄະດີແພ່ງໃນເວລານັ້ນ ມີການຈັດຕັ້ງ ແລະ ເຄື່ອນໄຫວ ດັ່ງນີ້:

### 2.2. ການຈັດຕັ້ງການດຳເນີນຄະດີ

ຢູ່ຂັ້ນຕາແສງ ບໍ່ມີການຈັດຕັ້ງຂອງສານ ແຕ່ມີກຳມະການຮັບຜິດຊອບວຽກງານປ້ອງກັນຄວາມສະຫງົບເປັນຜູ້ກຳກັບວຽກງານຍຸຕິທຳຖ້າມີຂໍ້ຂັດແຍ່ງເກີດຂຶ້ນ ແມ່ນໃຫ້ສົມທົບກັບອົງການຈັດຕັ້ງມະຫາຊົນພາຍໃນບ້ານສຶກສາອົບຮົມໄກ່ເກ່ຍ ແລະແກ້ໄຂຄະດີດັ່ງກ່າວ ຊຶ່ງຖ້າທຽບໃສ່ປັດຈຸບັນກໍອາດ ແມ່ນໜ່ວຍໄກ່ເກ່ຍຂັ້ນບ້ານ.

ຢູ່ຂັ້ນເມືອງ ມີຂະແໜງຍຸຕິທຳເມືອງ ໂດຍມີຜູ້ໜຶ່ງເປັນຫົວໜ້າ ແລະ ມີສະໝຽນຜູ້ໜຶ່ງ ເປັນຜູ້ຊ່ວຍວຽກ, ເມື່ອມີຂໍ້ຂັດ ແຍ່ງເກີດຂຶ້ນ ແມ່ນຄະນະປົກຄອງເມືອງເປັນຜູ້ສະເໜີໃຫ້ຄະນະປົກຄອງ ແຂວງ ຫຼືກຳແພງນະຄອນ ເປັນຜູ້ອອກມະຕິແຕ່ງ ຕັ້ງເອົາຫົວໜ້າຂະແໜງຍຸຕິທຳ ເມືອງນັ້ນ ເປັນຫົວໜ້າສານຕັດສິນ ພ້ອມດ້ວຍແຕ່ງຕັ້ງເອົາພະນັກງານຈາກພາກສ່ວນອື່ນ ມາເປັນຕຸລາການປະຊາຊົນ[1] ສອງຄົນ ເຂົ້າຮ່ວມເປັນຄະນະສານ ແລະ ແຕ່ງຕັ້ງເອົາສະໝຽນຂອງຂະແໜງຍຸຕິທຳເມືອງນັ້ນ ເປັນຈ່າສານ.

ຢູ່ແຂວງ ຫຼື ກຳແພງນະຄອນ ມີພະແນກຍຸຕິທຳແຂວງ, ກຳແພງນະຄອນ ເຮັດໜ້າທີ່ເປັນສານຕັດສິນ ເມື່ອມີຄະດີເກີດຂຶ້ນ ຊຶ່ງການຈັດຕັ້ງຂອງສານ ມີລັກສະນະສະເພາະກິດ ໝາຍຄວາມວ່າ ເມື່ອມີຄະດີ ຫຼື ຕ້ອງການຕັດສິນຄະດີ ຈຶ່ງອອກມະຕິຕົກລົງສ້າງຕັ້ງສານ ເພື່ອພິຈາລະນາຕັດສິນຕາມແຕ່ລະກໍລະນີ.

ສັງລວມແລ້ວການຈັດຕັ້ງຂອງສານໃນເວລານັ້ນແມ່ນບໍ່ມີການຈັດຕັ້ງທີ່ຖາວອນ ໝາຍຄວາມວ່າ ເມື່ອມີຄະດີເກີດຂຶ້ນ ຫຼື ຕ້ອງການເປີດສານຕັດສິນຄະດີ ແມ່ນຄະນະປົກຄອງເມືອງ, ຄະນະປົກຄອງ ແຂວງ ຫຼື ກຳແພງນະຄອນ ເປັນຜູ້ສະເໜີສ້າງຕັ້ງສານຂຶ້ນ ເມື່ອຕັດສິນຄະດີສຳເລັດແລ້ວ ກໍໝົດໜ້າທີ່ໄປ, ຖ້າມີຄະດີໃໝ່ເກີດຂຶ້ນ ກໍສະເໜີສ້າງຕັ້ງສານຕັດສິນຂຶ້ນໃໝ່.

### 2.3. ຂັ້ນການດຳເນີນຄະດີ

ລະບົບການດຳເນີນຄະດີໃນເວລານັ້ນ ມີສອງຂັ້ນຄື: ຂັ້ນຕົ້ນ ແລະ ຂັ້ນອຸທອນ.

– ການພິຈາລະນາຕັດສິນເປັນຂັ້ນຕົ້ນ ມີສິດພິຈາລະນາຕັດສິນຂໍ້ຂັດແຍ່ງທາງແພ່ງທີ່ເກີດຂຶ້ນໃນສັງຄົມທີ່ບໍ່ສາມາດໄກ່ເກ່ຍກັນໄດ້ ກໍສາມາດຮ້ອງຟ້ອງຕໍ່ສານຂັ້ນຕົ້ນຢູ່ເມືອງ ພິຈາລະນາຕັດສິນເມື່ອມີການຕັດສິນແລ້ວຄູ່ຄວາມມີສິດຂໍອຸທອນໄດ້ພາຍໃນກຳນົດ ສິບຫ້າ ວັນ;

[1]ຕຸລາການປະຊາຊົນທີ່ປະກອບເປັນຄະນະສານຕັດສິນຢູ່ຂັ້ນໃດແມ່ນ ແມ່ນສະພາປະຊາຊົນຂັ້ນນັ້ນ ເປັນຜູ້ເລືອກຕັ້ງເອົາໃນບັນດາສະມະຊິກຂອງຕົນ, ບັນດາສະມະຊິກຂອງສະມະຄົມຕ່າງໆ ຫລື ພະນັກງານຊົນຊາດຊົນເຜົ່າ ທັງ ຍິງ ແລະ ຊາຍ.

– ການພິຈາລະນາຕັດສິນເປັນຂັ້ນອຸທອນ ມີສິດພິຈາລະນາເປັນຂັ້ນອຸທອນ ຄະດີທີ່ສານຂັ້ນເມືອງໄດ້ຕັດສິນເປັນຂັ້ນຕົ້ນ; ສານຂັ້ນອຸທອນຂອງສານສູນກາງ ພິຈາລະນາເປັນຂັ້ນອຸທອນ ຄະດີທີ່ສານແຂວງ, ກຳແພງນະຄອນ ໄດ້ຕັດສິນເປັນຂັ້ນຕົ້ນ.

ເຖິງຢ່າງໃດກໍຕາມ ຂໍ້ຂັດແຍ່ງທາງແພ່ງ ແມ່ນບໍ່ເກີດຂຶ້ນຫຼາຍ ຫຼື ບໍ່ມີຂໍ້ຂັດແຍ່ງທາງແພ່ງເກີດຂຶ້ນໃນໄລຍະເວລາດັ່ງກ່າວ.

## 3. ການດຳເນີນຄະດີແພ່ງ ຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງປີ 1990

ໂດຍປະຕິບັດຕາມນະໂຍບາຍເປີດກວ້າງການພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມກົນໄກເສດຖະກິດຕະຫຼາດ ຫຼື ຈິນຕະນາການໃໝ່ ເຮັດໃຫ້ເສດຖະກິດ-ສັງຄົມຂອງປະເທດມີການພັດທະນາຢ່າງວ່ອງໄວ ຄຽງຄູ່ກັນນັ້ນ ຂໍ້ຂັດແຍ່ງໃນສັງຄົມ ກໍເກີດຂຶ້ນຢ່າງຫຼວງຫຼາຍ ແລະ ມີທ່າອ່ຽງເພີ່ມຂຶ້ນເລື້ອຍໆ, ດັ່ງນັ້ນ ສະພາປະຊາຊົນສູງສຸດຊຸດທີ 2 ຈຶ່ງໄດ້ຮັບຮອງເອົາກົດໝາຍວ່າດ້ວຍສານປະຊາຊົນ ໃນປີ 1989 ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງໃນປີ 1990 ຊຶ່ງເປັນຂົດໝາຍສຳຄັນຕໍ່ການດຳເນີນຄະດີແພ່ງໃຫ້ເປັນຮູບປະທຳ ແລະ ເປັນລະບົບທີ່ຊັດເຈນ ຊຶ່ງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບເລກທີ 09/90/ສປສ ລົງວັນທີ 29 ພະຈິກ 1990 ບົນພື້ນຖານກົດໝາຍດັ່ງກ່າວ ຈຶ່ງເຮັດໃຫ້ການຈັດຕັ້ງ ແລະ ລະບົບການດຳເນີນຄະດີປາກົດຕົວຂຶ້ນຢ່າງເປັນຮູບປະທຳ, ສານປະຊາຊົນ ໄດ້ຖືກສ້າງຕັ້ງຂຶ້ນຢ່າງເປັນລະບົບ ແຕ່ສູນກາງລົງຮອດທ້ອງຖິ່ນ ແລະ ການດຳເນີນຄະດີໄດ້ມີການເຄື່ອນໄຫວບົນພື້ນຖານກົດໝາຍທີ່ກຳນົດໄວ້ ຊຶ່ງສາມາດສັງລວມການຈັດຕັ້ງ ແລະ ການດຳເນີນຄະດີໃນໄລຍະນັ້ນ ໄດ້ດັ່ງນີ້:

### 3.1. ລະບົບການຈັດຕັ້ງ ແລະ ສິດອຳນາດຂອງສານໃນການພິຈາລະນາຄະດີແພ່ງ

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປີ 1990 ໄດ້ກຳນົດການຈັດຕັ້ງທີ່ຮັບຜິດຊອບໃນການດຳເນີນຄະດີ ລວມທັງສິດອຳນາດຂອງການຈັດຕັ້ງດັ່ງກ່າວໃນການດຳເນີນຄະດີ ຄື :

- ສານປະຊາຊົນເມືອງ ມີສິດອຳນາດໃນການພິຈາລະນາຕັດສິນຄະດີເປັນຂັ້ນຕົ້ນ ຄະດີແພ່ງທີ່ ມີມູນຄ່າບໍ່ເກີນ 500,000 ກີບ;
- ສານປະຊາຊົນແຂວງ, ກຳແພງນະຄອນ ມີສິດອຳນາດໃນການພິຈາລະນາຕັດສິນຄະດີ ເປັນຂັ້ນຕົ້ນຄະດີແພ່ງທີ່ມີມູນຄ່າເກີນ 500,000 ກີບ, ເປັນຂັ້ນລົບລ້າງຄະດີທີ່ສານປະຊາຊົນເມືອງ ໄດ້ຕັດສິນ ເປັນຂັ້ນຕົ້ນແລ້ວ ແລະເປັນຂັ້ນຕິດຕາມກວດກາຄຳຕັດສິນຂອງສານປະຊາຊົນເມືອງ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;
- ສານປະຊາຊົນສູງສຸດ ມີສິດອຳນາດໃນການພິຈາລະນາຄະດີເປັນຂັ້ນຕົ້ນ ແລະເດັດຂາດ ຄະດີທີ່ມີຄວາມສຳຄັນ ຫຼື ຫຍຸ້ງຍາກເປັນພິເສດ, ເປັນຂັ້ນລົບລ້າງ ຄະດີທີ່ສານປະຊາຊົນແຂວງ, ກຳແພງນະຄອນ ໄດ້ຕັດສິນເປັນຂັ້ນຕົ້ນແລ້ວ ແລະ ເປັນຂັ້ນຕິດຕາມກວດກາຄຳຕັດສິນ ແລະ ຄຳພິພາກສາ ຂອງສານປະຊາຊົນແຂວງ, ກຳແພງນະຄອນ ແລະ ສານປະຊາຊົນສູງສຸດ ທີ່ໃຊ້ໄດ້ຢ່າງເດັດຂາດ.

ນອກຈາກນັ້ນຢູ່ໃນແຕ່ລະສານປະຊາຊົນເມືອງ, ແຂວງ, ກຳແພງນະຄອນ ແລະ ສານປະຊາຊົນສູງສຸດ ມີການຈັດຕັ້ງທີ່ຮັບຜິດຊອບພິຈາລະນາຄະດີແພ່ງ ມີຄື:

1) ຄະນະສານແພ່ງ ມີສິດອຳນາດພິຈາລະນາຄະດີທາງແພ່ງເປັນຂັ້ນຕົ້ນ ແລະ ຂັ້ນລົບລ້າງ ຄື:

- ຄະດີທີ່ມີການຮ້ອງຟ້ອງ ເນື່ອງຈາກຂໍ້ຂັດແຍ່ງກ່ຽວກັບກຳມະສິດ ຫຼື ການປະຕິບັດສັນຍາ;
- ຄະດີທີ່ເນື່ອງຈາກສາຍພົວພັນທາງແພ່ງອື່ນ, ຄອບຄົວ, ແຮງງານ ຫຼື ບໍລິຫານ.

ນອກຈາກນັ້ນຂໍ້ຂັດແຍ່ງທາງແພ່ງ ຍັງຕ້ອງນຳມາພິຈາລະນາໃນສະຖານພິເສດ ຕື່ມອີກຕາມປະເພດຄະດີດັ່ງນີ້:

- ຄະດີ ກ່ຽວກັບການຮັບຮູ້ເຫດການ ທີ່ມີຄວາມໝາຍທາງດ້ານກົດໝາຍເຊັ່ນ ການຮັບຮູ້ສາຍຍາດ, ບຸກຄົນທີ່ຢູ່ໃຕ້ການເບິ່ງແຍງລ້ຽງດູຂອງຜູ້ໃດຜູ້ໜຶ່ງ, ກຳມະສິດກ່ຽວກັບວັດຖຸສິ່ງຂອງໃດໜຶ່ງ, ເຫດບັງເອີນ ຫຼື ເຫດສຸດວິໄສ ແລະ ອື່ນໆ;

- ຄະດີ ກ່ຽວກັບການຮັບຮູ້ ເປັນຜູ້ຫາຍສາບສູນ ແລະ ການປະກາດເປັນຜູ້ເສຍຊີວິດ;
- ຄະດີ ກ່ຽວກັບການຮັບຮູ້ ເປັນຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;
- ຄະດີ ກ່ຽວກັບຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ;
- ຄະດີ ກ່ຽວກັບການກະທຳທີ່ບໍ່ຖືກຕ້ອງ ຂອງພະນັກງານທະບຽນສານແຫ່ງລັດ ຫຼື ນາຍບ້ານ;
- ຄະດີ ກ່ຽວກັບການຟື້ນຟູສິດໃນເອກະສານທີ່ຕົກເຮ່ຍ ຫຼື ເສັຍຫາຍ[2].

2) ຄະນະປະທານ ມີອຳນາດໜ້າທີ່ໃນການພິຈາລະນາຕັດສິນຄະດີ ເປັນຂັ້ນຕິດຕາມກວດກາ.

### 3.2. ຫຼັກການການດຳເນີນຄະດີແພ່ງ

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບທຳອິດຂອງສ ປປລາວ ທີ່ຮັບຮອງ ແລະປະກາດໃຊ້ໃນປີ 1990 ກຳນົດຫຼັກການພື້ນຖານຂອງດຳເນີນຄະດີແພ່ງໄວ້ 7 ຫຼັກການຄື:

- ສິດຂອງສານ ໃນການພິພາກສາຄະດີ ແລະຄວາມສະເໝີພາບຂອງພົນລະເມືອງ ຕໍ່ໜ້າກົດໝາຍ ແລະ ສານ;
- ການພິຈາລະນາຄະດີເປັນໝູ່ຄະນະ;
- ຄວາມເປັນເອກະລາດ ຂອງຜູ້ພິພາກສາ;
- ພາສາທີ່ໃຊ້ໃນການດຳເນີນຄະດີ;
- ການໄຕ່ສວນຄະດີ ໃນທີ່ປະຊຸມສານຢ່າງເປີດເຜີຍ;
- ຜົນບັງຄັບຂອງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ;
- ການເຮັດໃຫ້ເຫດການຂອງຄະດີແຈ້ງຂາວ, ການແຈ້ງສິດ ແລະ ພັນທະຂອງຄູ່ຄວາມ.

### 3.3. ຂັ້ນການດຳເນີນຄະດີ

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບທຳອິດຂອງສປປ ລາວ ໄດ້ຈັດແບ່ງຂັ້ນການດຳເນີນຄະດີອອກເປັນ ຂັ້ນການພິຈາລະນາຄະດີແບບທົ່ວໄປ ແລະ ການພິຈາລະນາແບບພິເສດຄື:

#### 3.3.1. ຂັ້ນການພິຈາລະນາຄະດີແບບທົ່ວໄປ

ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບທຳອິດໄດ້ກຳນົດຂັ້ນການດຳເນີນຄະດີແບບປົກກະຕິເປັນສາມຂັ້ນຄື: ຂັ້ນຕົ້ນ, ຂັ້ນລົບລ້າງ ແລະ ຂັ້ນຕິດຕາມກວດກາ ໝາຍຄວາມວ່າ ການດຳເນີນຄະດີທີ່ຄູ່ຄວາມປະຕິບັດສິດໃນການດຳເນີນຄະດີໄດ້ແບບທົ່ວໄປ ມີພຽງແຕ່ຂັ້ນຕົ້ນຄື ຄູ່ຄວາມນຳໃຊ້ສິດ ໃນການຍື່ນຄຳຮ້ອງຟ້ອງຕໍ່ສານ, ຂັ້ນລົບລ້າງ ຄູ່ຄວາມກໍນຳໃຊ້ສິດໃນການຂໍລົບລ້າງຕໍ່ສານ ແລະ ຂັ້ນຕິດຕາມກວດກາຄູ່ຄວາມຕ້ອງນຳໃຊ້ສິດໃນການຂໍຕິດຕາມກວດກາໂດຍກົງ ຊຶ່ງສານກໍຕ້ອງຮັບເອົາມາພິຈາລະນາໄດ້ຕາມສິດອຳນາດທີ່ກົດໝາຍກຳນົດໄວ້.

#### 3.3.2. ຂັ້ນການພິຈາລະນາຄະດີແບບພິເສດ

ນອກຈາກຂັ້ນການພິຈາລະນາແບບທົ່ວໄປແລ້ວ ເພື່ອຮັບປະກັນຄວາມຖືກຕ້ອງໃນການຕັດສິນ ຫຼື ການເອົາຄວາມຍຸຕິທຳໃຫ້ແກ່ຄູ່ຄວາມ ກົດໝາຍຈຶ່ງກຳນົດໃຫ້ມີການພິຈາລະນາຄະດີແບບພິເສດ ຄື ການພິຈາລະນາການຮ້ອງຂໍຮື້ຟື້ນຄະດີ ຊຶ່ງໃນເວລານັ້ນ ການຮື້ຟື້ນຄະດີ ຍັງບໍ່ທັນສາມາດ ເວົ້າໄດ້ວ່າແມ່ນຂັ້ນຮື້ຟື້ນ ດັ່ງນັ້ນ ການຮື້ຟື້ນຄະດີ ຈຶ່ງແມ່ນໜ້າທີ່ຄວາມຮັບຜິດຊອບຂອງສານຂັ້ນຕິດຕາມກວດກາ ໃນການພິຈາລະນາການຮື້ຟື້ນຄະດີ.

## 4. ການດຳເນີນຄະດີແພ່ງ ຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2004

ເປັນເວລາທົດສະວັດກວ່າ ທີ່ໄດ້ນຳໃຊ້ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງເຂົ້າໃນການແກ້ໄຂຄະດີ ແລະ ດັດປັບສາຍພົວພັນສັງຄົມ ເຮັດໃຫ້ການພິຈາລະນາແກ້ໄຂຄະດີມີຄວາມຖືກຕ້ອງ ແລະ ເປັນທຳ ເຮັດໃຫ້ສັງຄົມມີ

[2] ລັດຖະທຳມະນູນແຫ່ງ ສປປ ລາວ ປີ 1991, ມາດ 65

ຄວາມສະຫງົບ ແຕ່ເນື່ອງຈາກວ່າສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ແລະ ຄວາມຮຽກຮ້ອງຕ້ອງການໃນການພັດທະນາກົດໝາຍ ແລະ ລະບົບຍຸຕິທຳໃຫ້ມີຄວາມກ້າວໜ້າ ທັງສອດຄ່ອງກັບຫຼັກກົດໝາຍ ໃນການດຳເນີນຄະດີຂອງພາກພື້ນ ແລະ ສາກົນ ຈຶ່ງມີຄວາມຈຳເປັນໃນການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

### 4.1. ເຫດຜົນໃນການປັບປຸງກົດໝາຍວ່າດ່ວຍການດຳເນີນຄະດີແພ່ງ

ການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປີ 2004 ມີເຫດຜົນຕົ້ນຕໍຄື:

1) ເພື່ອໃຫ້ສອດຄ່ອງກັບການປັບປຸງລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍສານປະຊາຊົນສະບັບປີ 2003;
2) ສານປະຊາຊົນທ້ອງຖິ່ນ ໄດ້ຖືກໂອນມາໃຫ້ສານປະຊາຊົນສູງສຸດຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ບໍລິຫານຕໍ່ສານປະຊາຊົນທຸກຂັ້ນ (ມາດຕາ 80 ຂອງລັດຖະທຳມະນູນ) ຈຶ່ງຕ້ອງຮັບປະກັນໃຫ້ສານປະຊາຊົນສູງສຸດ ເຮັດໜ້າທີ່ມະຫາພາກໃນການຄຸ້ມຄອງສານປະຊາຊົນທ້ອງຖິ່ນ ຈຶ່ງຕ້ອງກຳນົດສິດອຳນາດຂອງສານປະຊາຊົນສູງສຸດ ໃນການພິຈາລະນາຄະດີໜ້ອຍລົງ ຄືໃຫ້ພິຈາລະນາ ແຕ່ເປັນຂັ້ນລົບລ້າງແຕ່ທາງດ້ານກົດໝາຍ ຊຶ່ງຕ້ອງໄດ້ປັບປຸງກົດໝາຍ ເພາະກົດໝາຍປີ 1990 ໃຫ້ສານປະຊາຊົນສູງສຸດ ມີສິດອຳນາດໃນການພິຈາລະນາເຖິງ ສາມຂັ້ນ( ຂັ້ນຕົ້ນ, ຂັ້ນລົບລ້າງ ແລະ ຂັ້ນຕິດຕາມກວດກາ );
3) ຄະດີ ທີ່ເກີດຂຶ້ນໃນສັງຄົມມີຫຼາຍປະເພດ ຊຶ່ງການດຳເນີນຜ່ານມາໄດ້ນຳມາພິຈາລະນາ ລວມກັນໃນຄະນະສານດຽວກັນ ຄືຄະນະສານແພ່ງ ຊຶ່ງເຮັດໃຫ້ມີຄວາມຊັກຊ້າແກ່ຍາວ ມີການກົດໜ່ວງກັນ ຈຶ່ງຕ້ອງໄດ້ມີການແຍກປະເພດຄະດີ ໃຫ້ມີແຕ່ລະປະເພດສ້າງໃຫ້ບາງ ຄະດີຕ້ອງດຳເນີນແບບພິເສດ ວ່ອງໄວ ເຊັ່ນ ຄະດີການຄ້າ, ຄະດີເດັກ ຊຶ່ງຮຽກຮ້ອງໃຫ້ມີການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ;
4) ເພື່ອບໍ່ໃຫ້ການດຳເນີນຄະດີຂຶ້ນມາສານປະຊາຊົນສູງສຸດຫຼວງຫຼາຍ ຈຶ່ງຕ້ອງກຳນົດລະບົບການດຳເນີນຄະດີ ເພື່ອຈຳກັດບໍ່ໃຫ້ຄະດີຂຶ້ນມາຫາສານປະຊາຊົນສູງສຸດ ຈຶ່ງໄດ້ກຳນົດໃຫ້ມີສານຂັ້ນອຸທອນ ພ້ອມນັ້ນກໍໄດ້ສ້າງຕັ້ງສານອຸທອນຂຶ້ນ ເພື່ອເປັນການຈຳກັດການດຳເນີນຄະດີ ບໍ່ໃຫ້ຄະດີຂຶ້ນມາຫາສານປະຊາຊົນສູງສຸດ ຢາກໃຫ້ຄະດີສິ້ນສຸດຢູ່ສານອຸທອນ ເພາະຈະຂຶ້ນມາຫາສານປະຊາຊົນສູງສຸດ ມີແຕ່ບັນຫາທາງດ້ານກົດໝາຍເທົ່ານັ້ນ;
5) ການພັດທະນາເສດຖະກິດ-ສັງຄົມ ມີການພັດທະນາ ແລະ ຂະຫຍາຍຕົວເຮັດໃຫ້ຂໍ້ຂັດແຍ່ງເກີດຂຶ້ນນັບມື້ຫຼາຍຂຶ້ນ ຊຶ່ງບາງເຫດການບໍ່ໄດ້ກຳນົດໄວ້ໃນກົດໝາຍ, ບາງເຫດການ, ຂໍ້ຂັດແຍ່ງບໍ່ທັນມີລະບຽບກົດໝາຍກຳນົດໄວ້, ຫຼື ກຳນົດໄວ້ແລ້ວ ແຕ່ບໍ່ລະອຽດ ຊຶ່ງໃຫ້ການປະຕິບັດກົດໝາຍກໍຄືການນຳໃຊ້ກົດໝາຍໃນການແກ້ໄຂຄະດີພົບຄວາມຫຍຸ້ງຍາກ, ມີຊ່ອງວ່າງ ແລະ ບໍ່ສອດຄ່ອງກັບຕົວຈິງ ດັ່ງນັ້ນ ຈຶ່ງໄດ້ປັບປຸງກົດໝາຍໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.

### 4.2. ລະບົບການຈັດຕັ້ງ ແລະ ສິດອຳນາດຂອງສານໃນການດຳເນີນຄະດີແພ່ງ

ເພື່ອຮັບປະກັນໃຫ້ການດຳເນີນຄະດີ ໄດ້ຮັບການແກ້ໄຂໃນຂັ້ນພື້ນຖານ ແລະ ບໍ່ໃຫ້ຄະດີຂຶ້ນໄປອັ່ງອໍຢູ່ສານປະຊາຊົນສູງສຸດ ເນື່ອງຈາກວ່າສານປະຊາຊົນສູງສຸດ ເຮັດໜ້າທີ່ໃນການຄຸ້ມຄອງບໍລິຫານ ສານປະຊາຊົນທ້ອງຖິ່ນທາງດ້ານມະຫາພາກເປັນຕົ້ນຕໍ ດັ່ງນັ້ນ ຈຶ່ງໄດ້ສ້າງສານອຸທອນພາກຂຶ້ນຢູ່ 3 ພາກຄື ພາກກາງ, ພາກເໜືອ ແລະ ພາກໃຕ້ ເພື່ອເຮັດໜ້າທີ່ໃນການພິຈາລະນາຄະດີເປັນຂັ້ນອຸທອນ ແລະ ເປັນ ຂັ້ນສຸດທ້າຍ ທາງດ້ານຂໍ້ມູນຫຼັກຖານ ເພື່ອຈຳກັດບໍ່ໃຫ້ຄະດີຂຶ້ນໄປຫາສານປະຊາຊົນສູງສຸດ. ນອກນັ້ນກໍກຳນົດສິດອຳນາດຂອງສານປະຊາຊົນສູງສຸດ ພິຈາລະນາຕັດສິນ ສະເພາະແຕ່ເປັນຂັ້ນລົບລ້າງທາງດ້ານກົດໝາຍເທົ່ານັ້ນ; ນອກນັ້ນ, ເພື່ອເຮັດໃຫ້ການດຳເນີນຄະດີມີຄວາມວ່ອງໄວ ຈຶ່ງໄດ້ປັບປຸງກົນໄກການບໍລິຫານຄະດີໂດຍແຍກ ແຕ່ລະປະເພດຄະດີໃຫ້ພິຈາລະນາລະນາຕ່າງຫາກຄື ແຍກຄະດີການຄ້າອອກ ຈາກຄະດີແພ່ງ ແລ້ວສ້າງຕັ້ງຄະນະສານການຄ້າຂຶ້ນ, ແຍກຄະດີຄອບຄົວອອກຈາກຄະດີແພ່ງແລ້ວ

ສ້າງຕັ້ງຄະນະສານຄອບຄົວຂຶ້ນ, ແຍກຄະດີເດັກອອກຄະດີແພ່ງ ແລ້ວສ້າງຕັ້ງຄະນະສານເດັກຂຶ້ນ ເພື່ອພິຈາລະນາຄະດີແຕ່ລະປະເພດ.

ນອກຈາກການຈັດຕັ້ງການດຳເນີນຄະດີທີ່ມີໜ້າທີ່ໃນການດຳເນີນຄະດີຢູ່ສານປະຊາຊົນເມືອງ, ເທດສະບານ, ສານປະຊາຊົນແຂວງ, ນະຄອນ, ສານອຸທອນ ແລະ ສານປະຊາຊົນສູງສຸດ ການຈັດຕັ້ງທີ່ຮັບຜິດຊອບພິຈາລະນາຄະດີແພ່ງ ມີຄື:

- ສານປະຊາຊົນເມືອງ, ເທດສະບານ ປະກອບມີ ຄະນະສານແພ່ງ ແລະ ຄະນະສານຄອບຄົວ;

- ຢູ່ສານປະຊາຊົນແຂວງ, ນະຄອນ, ສານອຸທອນ ແລະ ສານປະຊາຊົນສູງສຸດ ປະກອບມີ: ຄະນະສານແພ່ງ, ຄະນະສານການຄ້າ, ຄະນະສານຄອບຄົວ ແລະ ຄະນະສານເດັກ.

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2004 ໄດ້ກຳນົດສິດ ແລະ ໜ້າທີ່ໃນການພິຈາລະນາຕັດສິນຄະດີແພ່ງຄື:

- ສານປະຊາຊົນເມືອງ, ເທດສະບານ ມີສິດອຳນາດໃນການພິຈາລະນາຕັດສິນຄະດີເປັນຂັ້ນຕົ້ນ ຄະດີແພ່ງທີ່ມີມູນຄ່າບໍ່ເກີນ 20,000,000 ກີບ, ຄະດີສາຍຜົວເມັຍທີ່ບໍ່ມີຂໍ້ຂັດແຍ່ງກ່ຽວກັບສິນສົມສ້າງ, ໜີ້ສິນ ຫຼື ບັນຫາລູກ, ຄະດີກ່ຽວກັບການຮ້ອງຂໍເອົາຄ່າລ້ຽງດູ, ຄະດີກ່ຽວກັບການຮັບຮູ້ການເປັນສາຍຍາດ, ການເປັນຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ, ການຫາຍສາບສູນ ແລະການປະກາດການເສັຍຊີວິດຂອງບຸກຄົນໃດໜຶ່ງ;

- ສານປະຊາຊົນແຂວງ, ນະຄອນ ມີສິດອຳນາດໃນການພິຈາລະນາຕັດສິນຄະດີ ເປັນຂັ້ນຕົ້ນ ຄະດີທີ່ບໍ່ຂຶ້ນກັບສິດອຳນາດຂອງສານປະຊາຊົນເມືອງ, ເທດສະບານ; ພິຈາລະນາ ພິພາກສາເປັນຂັ້ນອຸທອນ ຄະດີທີ່ສານປະຊາຊົນເມືອງ, ເທດສະບານ ໄດ້ຕັດສິນແລ້ວ ຊຶ່ງຖືກຂໍອຸທອນ ໂດຍຄູ່ຄວາມ ຫຼື ຖືກຄັດຄ້ານ ໂດຍໄອຍະການປະຊາຊົນ;

- ສານອຸທອນ ມີສິດອຳນາດໃນການພິຈາລະນາຄະດີເປັນຂັ້ນອຸທອນຄະດີ ທີ່ສານປະຊາຊົນແຂວງ, ນະຄອນ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນ ໂດຍຄູ່ຄວາມ ຫຼື ຖືກຄັດຄ້ານ ໂດຍໄອຍະການປະຊາຊົນ; ພິຈາລະນາເປັນຂັ້ນອຸທອນ ຄຳສັ່ງ, ຄຳຊີ້ຂາດ ແລະຄຳຕົກລົງອື່ນໆ ຂອງສານປະຊາຊົນແຂວງ, ນະຄອນ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ຖືກຄັດຄ້ານໂດຍໄອຍະການປະຊາຊົນ;

- ສານປະຊາຊົນສູງສຸດ ມີສິດອຳນາດໃນການພິຈາລະນາເປັນຂັ້ນລົບລ້າງ ທາງດ້ານກົດໝາຍຄະດີທີ່ສານອຸທອນ, ສານປະຊາຊົນແຂວງ, ນະຄອນ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ຖືກຄັດຄ້ານໂດຍໄອຍະການປະຊາຊົນ; ພິຈາລະນາເປັນຂັ້ນຮື້ຟື້ນ ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ; ຄົ້ນຄວ້າກ່ຽວກັບອຳນາດສານ ໃນທົ່ວປະເທດ.

### 4.3. ຫຼັກການໃນການດຳເນີນຄະດີ

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2004 ໄດ້ປັບປຸງຫຼັກການດຳເນີນຄະດີແພ່ງ ໂດຍໄດ້ຕັດອອກ ແລະ ກຳນົດຫຼັກການເຂົ້າໃໝ່ຈຳນວນໜຶ່ງ ຊຶ່ງລວມມີ 10 ຫຼັກການຄື:

- ສິດ ແລະພັນທະຂອງສານໃນການຕັດສິນຄະດີ;
- ຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະ ສານ;
- ການພິຈາລະນາຄະດີເປັນໝູ່;
- ຄວາມເປັນເອກະລາດຂອງຜູ້ພິພາກສາ;
- ພາສາທີ່ໃຊ້ໃນການດຳເນີນຄະດີ;
- ການໄຕ່ສວນຄະດີໃນທີ່ປະຊຸມສານຢ່າງເປີດເຜີຍ;
- ຜົນສັກສິດຂອງຄຳຕົກລົງຂອງສານ;
- ການບໍ່ອະນຸຍາດໃຫ້ເຂົ້າຮ່ວມ ໃນການພິຈາລະນາຄະດີດຽວກັນເປັນຄັ້ງທີສອງ;
- ການດຳເນີນຄະດີຮອບດ້ານ, ຄົບຖ້ວນ ແລະພາວະວິໄສ;

– ການຂໍຖອນຕົວ ແລະການຄ້ານຕົວ

### 4.4. ຂັ້ນການພິຈາລະນາຕັດສິນຄະດີ

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2004 ໄດ້ຈັດແບ່ງຂັ້ນການດຳເນີນຄະດີອອກເປັນ ຂັ້ນການພິຈາລະນາຄະດີແບບທົ່ວໄປ ແລະ ຂັ້ນການພິຈາລະນາແບບພິເສດຄື:

1). **ຂັ້ນການພິຈາລະນາຄະດີແບບທົ່ວໄປ:** ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2004 ໄດ້ກຳນົດຂັ້ນການດຳເນີນຄະດີແບບທົ່ວໄປເປັນ ສາມຂັ້ນ ຄື: ຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລຶບລ້າງ ໝາຍຄວາມວ່າ ການດຳເນີນຄະດີທີ່ຄູ່ຄວາມນຳໃຊ້ ສິດໃນການຂໍອຸທອນ ແລະ ຂໍລຶບລ້າງຕໍ່ສານໄດ້ໂດຍກົງ ຊຶ່ງສານກໍຕ້ອງຮັບເອົາມາພິຈາລະນາ ໄດ້ຕາມອຳນາດທີ່ກົດໝາຍກຳນົດໄວ້.

2). **ຂັ້ນການພິຈາລະນາແບບພິເສດ:** ເພື່ອຮັບປະກັນຄວາມຖືກຕ້ອງ ໃນການຕັດສິນ ຫຼື ການເອົາຄວາມຍຸຕິທຳໃຫ້ແກ່ຄູ່ຄວາມ ກົດໝາຍຈຶ່ງກຳນົດໃຫ້ມີຂັ້ນການພິຈາລະນາຄະດີ ແບບພິເສດຄື: ຂັ້ນຮື້ຟື້ນ ຊຶ່ງໄດ້ກຳນົດໃຫ້ມີສານຂັ້ນຮື້ຟື້ນ ເກີດຂຶ້ນຢ່າງເປັນຮູບປະທຳ (ຊຶ່ງຕ່າງກັບກົດໝາຍ ສະບັບທຳອິດທີ່ກຳນົດການຮື້ຟື້ນບໍ່ແມ່ນສານຂັ້ນຮື້ຟື້ນ ແຕ່ແມ່ນສານຂັ້ນຕິດຕາມກວດກາເຮັດໜ້າທີ່ພິຈາລະນາຕັດສິນໃນການຂໍຮື້ຟື້ນ).

## 5. ການດຳເນີນຄະດີແພ່ງ ຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012

ກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງໄດ້ປັບປຸງຄືນໃໝ່ ແລະ ປະກາດໃຊ້ໃນວັນທີ 17 ພຶດສະພາ 2004 ຊຶ່ງມີ 11 ພາກ, 17 ໝວດ ແລະ 129 ມາດຕາ ໂດຍໄດ້ປັບປຸງລະບົບການດຳເນີນຄະດີຄືນໃໝ່ໃຫ້ມີສາມຂັ້ນຄື: ຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລຶບລ້າງ ໂດຍໃຫ້ສິດອຳນາດແກ່ສານປະຊາຊົນສູງສຸດ ພິຈາລະນາຕັດສິນຄະດີເປັນຂັ້ນລຶບລ້າງທາງດ້ານກົດໝາຍເທົ່ານັ້ນ. ນອກນັ້ນ ຍັງໄດ້ເພີ່ມ ສິດອຳນາດໃຫ້ສານປະຊາຊົນເມືອງ, ເທດສະບານ ຈາກໃນເມື່ອກ່ອນມີສິດອຳນາດ ພິຈາລະນາຕັດສິນຄະດີທີ່ມີມູນຄ່າພຽງແຕ່ 500,000 ກີບ ມາເປັນ 20,000,000 ກີບ; ຜ່ານການຈັດຕັ້ງປະຕິບັດຕົວຈິງ ມາແຕ່ປີ 2004 ເຫັນວ່າ ເປັນເຄື່ອງມືທີ່ດີໃຫ້ແກ່ຜູ້ພິພາກສາ ແລະ ຄູ່ຄວາມໃນຄະດີ, ຊຶ່ງເຮັດໃຫ້ການເກັບກຳຂໍ້ມູນຫຼັກຖານມີຄວາມຄົບຖ້ວນ, ພຽງພໍ, ການພິຈາລະນາຕັດສິນ ມີຄວາມວ່ອງໄວ, ຖືກຕ້ອງ ແລະ ຊັດເຈນຂຶ້ນກວ່າເກົ່າ ແຕ່ເມື່ອທຽບໃສ່ສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາໃນໄລຍະໃໝ່ແລ້ວ ເຫັນວ່າຍັງມີບາງບັນຫາທີ່ຄວນໄດ້ປັບປຸງ ເພື່ອໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມຂອງປະເທດເຮົາ.

### 5.1. ເຫດຜົນໃນການປັບປຸງ

ການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປີ 2012 ມີເຫດຜົນຕົ້ນຕໍຄື:

1) ຜ່ານການນຳໃຊ້ກົດໝາຍວ່າດ້ວຍການການດຳເນີນຄະດີແພ່ງ ໃນໄລຍະໜຶ່ງ ມີຫຼາຍບັນຫາຍັງບໍ່ທັນກຳນົດລະອຽດ, ຮັດກຸມ ແລະ ຍັງມີຊ່ອງວ່າງຫຼາຍ ເປັນຕົ້ນຫຼັກການຂອງການດຳເນີນຄະດີ, ຂັ້ນຕອນການຮັບເອົາຄະດີ, ການຄົ້ນຄວ້າຄະດີຂອງຜູ້ພິພາກສາ, ການມີສ່ວນຮ່ວມຂອງຄູ່ຄວາມໃນການດຳເນີນຄະດີ, ການຮັບ ແລະ ພິຈາລະນາຫຼັກຖານ, ລະບຽບການພິຈາລະນາການຮ້ອງຂໍ, ລວມໄປເຖິງມາດຕະການໃນການສິ່ງໝາຍຮຽກ, ໝາຍເຊີນ ແລະ ອື່ນໆ ຍັງກຳນົດບໍ່ລະອຽດ ເຮັດໃຫ້ການປະຕິບັດບໍ່ເປັນເອກະພາບ ແລະ ຂາດບ່ອນອີງໃນເວລາປະຕິບັດຕົວຈິງ;
2) ບາງເນື້ອໃນ, ມາດຕາຂອງກົດໝາຍ ຍັງບໍ່ທັນຮັດກຸມ, ບໍ່ລະອຽດ, ຈະແຈ້ງ ແລະ ມີບາງມາດຕາບໍ່ສາມາດປະຕິບັດໄດ້. ພ້ອມນັ້ນກໍມີບາງເຫດການທີ່ເກີດຂຶ້ນໃນສັງຄົມ ແຕ່ຍັງບໍ່ທັນມີເນື້ອໃນ, ມາດຕາຂອງກົດໝາຍທີ່ກຳນົດໄວ້ ແລະ ບັນຫາສຳຄັນອື່ນ ເປັນຕົ້ນຫຼັກການໂຕ້ແຍ່ງ, ລະບຽບການພິຈາລະນາການຮ້ອງຂໍ, ລະບຽບການພິຈາລະນາຫຼັກຖານ ແລະ ອື່ນໆ ຈຶ່ງເຮັດໃຫ້ຜູ້ພິພາກສາ ຂາດບ່ອນອີງທີ່ໜັກແໜ້ນ ໃນເວລາປະຕິບັດຕົວຈິງ;

3) ການມີສ່ວນຮ່ວມຂອງຄູ່ຄວາມໃນການດຳເນີນຄະດີ ເປັນຕົ້ນ ການປະກອບ ແລະ ສະໜອງຂໍ້ມູນຫຼັກຖານ ກ່ຽວກັບຄະດີ ຍັງບໍ່ທັນດີ ເຮັດໃຫ້ການເກັບກຳຂໍ້ມູນຫຼັກຖານຂອງສານຍັງ ບໍ່ທັນຄົບຖ້ວນ, ພຽງພໍ ແລະ ຮັດກຸມ ເມື່ອຕັດສິນໄປແລ້ວຄະດີຖືກຂໍອຸທອນ ຫຼື ລົບລ້າງ ຂຶ້ນຫາສານຂັ້ນເທິງ ຢ່າງຫຼວງຫຼາຍ ດັ່ງນັ້ນ ເພື່ອຮັບປະກັນໃຫ້ການດຳເນີນຄະດີ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ ຈຶ່ງຕ້ອງປັບປຸງ ແລະ ກຳນົດລະບຽບການກ່ຽວກັບບັນຫາ ດັ່ງກ່າວໃຫ້ລະອຽດ, ຮັດກຸມຍິ່ງຂຶ້ນ;
4) ເພື່ອໃຫ້ສອດຄ່ອງກັບການປັບປຸງລະບົບການຈັດຕັ້ງຂອງສານຜ່ານມາ ຕາມທີ່ກຳນົດໃນມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດສະບັບເລກທີ 113/ຄປຈ ລົງວັນທີ 28 ພຶດສະພາ 2009 ແລະ ເລກທີ 179 / ຄປຈ ລົງວັນທີ 5 ຕຸລາ 2009 ແລະ ກົດໝາຍວ່າດ້ວຍສານປະຊາຊົນ ທີ່ໄດ້ປັບປຸງ ແລະ ຮັບຮອງເອົາໃນທ້າຍປີ 2009;
5) ເພື່ອໃຫ້ສອດຄ່ອງກັບລະບົບການດຳເນີນຄະດີຂອງພາກພື້ນ ແລະ ສາກົນ ຮັບປະກັນການຮ່ວມມື ແລະ ຊ່ວຍເຫຼືອທາງດ້ານຍຸຕິທຳທາງແພ່ງໃຫ້ມີປະສິດທິພາບຍິ່ງຂຶ້ນ ເພື່ອເຊື່ອມໂຍງການດຳເນີນຄະດີ ໂດຍສະເພາະການກະກຽມເຂົ້າເປັນສະມາຊິກອົງການການຄ້າໂລກ ຂອງ ສປປ ລາວ, ດັ່ງນັ້ນ ການດຳເນີນຄະດີຕ້ອງຮັບປະກັນ ແລະ ສອດຄ່ອງກັບຫຼັກສາກົນ.

### 5.2. ລະບົບການຈັດຕັ້ງ ແລະ ສິດອຳນາດຂອງສານໃນການພິຈາລະນາຄະດີແພ່ງ

ລະບົບການຈັດຕັ້ງການດຳເນີນຄະດີ ຍັງຮັກສາໄວ້ຄືເກົ່າ ແຕ່ອັນທີ່ປັບປຸງນັ້ນ ແມ່ນການແບ່ງສິດອຳນາດ ແລະ ຄວາມຮັດກຸມໃນການດຳເນີນຄະດີ ເພື່ອເນັ້ນໃຫ້ການດຳເນີນຄະດີຖືກແກ້ໄຂ ໃນສານຂັ້ນຕົ້ນ ຊຶ່ງຈະເຫັນໄດ້ລະອຽດຄື:

1) ສານປະຊາຊົນເມືອງ, ເທດສະບານ ໄດ້ໂຮມກັນເຂົ້າ ເພື່ອສ້າງຕັ້ງເປັນສານປະຊາຊົນເຂດ ຊຶ່ງໃນທົ່ວປະເທດເວລານັ້ນ ມີສານປະຊາຊົນເຂດ 39 ແຫ່ງ, ພ້ອມທັງເພີ່ມສິດອຳນາດ ໃຫ້ສານປະຊາຊົນເຂດ ໃນການພິຈາລະນາຄະດີຄື ສຶກສາອົບຮົມ, ໄກ່ເກັ່ຍຄູ່ຄວາມໃນຄະດີ ເປັນຕົ້ນຕໍ, ພິຈາລະນາຕັດສິນຄະດີ ເປັນຂັ້ນຕົ້ນ ຄະດີແພ່ງ, ຄະດີແຮງງານ ທີ່ມີມູນຄ່າການຮ້ອງຟ້ອງ ແລະ ຄະດີກ່ຽວກັບສາຍຜົວເມຍ ທີ່ມີຂໍ້ຂັດແຍ່ງເລື່ອງສິນສົມສ້າງ, ໜີ້ສິນບໍ່ເກີນ 300.000.000 ກີບ, ຄະດີທີ່ບໍ່ມີມູນຄ່າ ຍົກເວັ້ນຄະດີການຄ້າ ແລະ ຄະດີເດັກ;
2) ສານປະຊາຊົນແຂວງ, ນະຄອນ ແລະ ສານເດັກ ມີສິດອຳນາດໃນການພິຈາລະນາຕັດສິນຄະດີ ເປັນຂັ້ນຕົ້ນ ຄະດີທີ່ບໍ່ຂຶ້ນກັບສິດອຳນາດຂອງສານປະຊາຊົນເຂດ ເມື່ອຕັດສິນແລ້ວ ຄູ່ຄວາມບໍ່ພໍໃຈມີສິດຂໍອຸທອນຂຶ້ນຫາສານຂັ້ນອຸທອນຂອງສານປະຊາຊົນພາກ. ນອກນັ້ນ ສານປະຊາຊົນແຂວງ, ນະຄອນ ຍັງມີສິດອຳນາດໃນການພິຈາລະນາເປັນຂັ້ນອຸທອນ ຄະດີທີ່ສານປະຊາຊົນເຂດ ໄດ້ຕັດສິນເປັນ ຂັ້ນຕົ້ນແລ້ວ ເມື່ອສານປະຊາຊົນຊົນແຂວງ, ນະຄອນ ພິພາກສາເປັນຂັ້ນອຸທອນແລ້ວ ຄູ່ຄວາມບໍ່ພໍໃຈ ມີສິດຂໍລົບລ້າງບັນຫາທາງດ້ານກົດໝາຍ ຫຼື ຖືກສະເໜີຄັດຄ້ານ ໂດຍອົງການໄອຍະການປະຊາຊົນ ໄປຍັງສານປະຊາຊົນພາກ;
3) ສານປະຊາຊົນພາກ ໄດ້ປ່ຽນຊື່ ຈາກສານອຸທອນ ຊຶ່ງມີສິດອຳນາດໃນການພິຈາລະນາເປັນຂັ້ນອຸທອນ ຄະດີທີ່ສານປະຊາຊົນແຂວງ, ນະຄອນ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນ ໂດຍຄູ່ຄວາມ ຫຼືຖືກສະເໜີຄັດຄ້ານ ໂດຍອົງການໄອຍະການປະຊາຊົນ; ນອກນັ້ນຍັງມີສິດອຳນາດພິຈາລະນາເປັນຂັ້ນລົບລ້າງ ຄະດີທີ່ສານປະຊາຊົນແຂວງ, ນະຄອນ ໄດ້ພິພາກສາເປັນຂັ້ນອຸທອນແລ້ວ ຊຶ່ງຄູ່ຄວາມບໍ່ພໍໃຈ ຂໍລົບລ້າງບັນຫາກົດໝາຍ ຫຼື ຖືກສະເໜີຄັດຄ້ານໂດຍອົງການໄອຍະການປະຊາຊົນ;
4) ສານປະຊາຊົນສູງສຸດ ມີສິດອຳນາດໃນການພິຈາລະນາເປັນຂັ້ນລົບລ້າງ ທາງດ້ານກົດໝາຍຄະດີທີ່ສານປະຊາຊົນພາກ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ຖືກຄັດຄ້ານ ໂດຍໄອຍະການປະຊາຊົນ; ພິຈາລະນາເປັນຂັ້ນຮື້ຟື້ນ ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ.

ເມື່ອເບິ່ງລວມແລ້ວ ການຈັດຕັ້ງການດຳເນີນຄະດີ ໄດ້ເພີ່ມຄະນະສານແຮງງານຢູ່ໃນ ສານປະຊາຊົນ ຈຶ່ງພາໃຫ້ລະບົບການຈັດຕັ້ງການດຳເນີນຄະດີ ມີຄື:

- ບັນຫາທາງແພ່ງທີ່ພິຈາລະນາຢູ່ສານປະຊາຊົນເຂດ ມີ ຄະດີແພ່ງ, ຄະດີຄອບຄົວ ແລະ ຄະດີ ແຮງງານ;
- ບັນຫາທາງແພ່ງ ທີ່ພິຈາລະນາຢູ່ສານປະຊາຊົນແຂວງ, ນະຄອນ, ສານປະຊາຊົນພາກ ແລະ ສານປະຊາຊົນສູງສຸດ ມີ ຄະດີແພ່ງ, ຄະດີການຄ້າ, ຄະດີຄອບຄົວ, ຄະດີເດັກ ແລະ ຄະດີແຮງງານ.

### 5.3. ຫຼັກການດຳເນີນຄະດີແພ່ງ

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ໄດ້ມີການກຳນົດຫຼັກການຄືນໃໝ່ ມີ 12 ຫຼັກການພື້ນຖານຄື:

- ສິດ ແລະ ພັນທະຂອງສານ ໃນການພິຈາລະນາຕັດສິນຄະດີ;
- ຄວາມສະເໝີພາບ ຂອງຄູ່ຄວາມຕໍ່ໜ້າກົດໝາຍ ແລະ ສານ;
- ການໂຕ້ແຍ່ງ ແລະ ການໂຕ້ຖຽງ;
- ການພິຈາລະນາຄະດີເປັນໝູ່ຄະນະ;
- ຄວາມເປັນເອກະລາດ ຂອງຜູ້ພິພາກສາ;
- ພາສາທີ່ໃຊ້ໃນການດຳເນີນຄະດີ;
- ການໄຕ່ສວນຄະດີ ໃນທີ່ປະຊຸມສານ;
- ການບໍ່ອະນຸຍາດໃຫ້ເຂົ້າຮ່ວມ ໃນການພິຈາລະນາຄະດີດຽວກັນ;
- ການດຳເນີນຄະດີ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ;
- ການໄກ່ເກ່ຍ;
- ການຂໍຖອນຕົວ ຫຼື ການຄ້ານຕົວ;
- ຂອບເຂດການພິຈາລະນາ ຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍ.

### 5.4. ຂັ້ນການພິຈາລະນາຕັດສິນຄະດີ

ຂັ້ນການພິຈາລະນາຕັດສິນຄະດີ ຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບ ປຸງປີ 2012 ຍັງຮັກສາການດຳເນີນຄະດີໃນສະຖານທົ່ວໄປ ສາມຂັ້ນ ແລະ ຂັ້ນພິເສດ ໜຶ່ງຂັ້ນຄືເກົ່າ ແຕ່ທີ່ ໄດ້ປັບປຸງຄື ປະເພດການດຳເນີນຄະດີທາງແພ່ງຢູ່ສານຂັ້ນຕົ້ນແບ່ງອອກເປັນສອງປະເພດຄື: ການຮ້ອງຟ້ອງ ແລະ ການຮ້ອງຂໍ ທັງນີ້ ກໍເພື່ອເຮັດໃຫ້ການພິຈາລະນາຄະດີມີການແຍກອອກຈາກກັນຢ່າງຈະແຈ້ງ ຮັບປະກັນຄະດີທີ່ງ່າຍດາຍໃຫ້ໄດ້ຮັບການພິຈະລະນາຢ່າງວ່ອງໄວ, ຄະດີບາງປະເພດບໍ່ໃຫ້ມີການຊັກຊ້າ ຍ້ອນຂັ້ນຕອນທີ່ບໍ່ຈຳເປັນ ແລະ ອື່ນໆ.

## 6. ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະກົດໝາຍອື່ນ

ຄະດີທາງແພ່ງ ມີຫຼາກຫຼາຍປະເພດຂໍ້ຂັດແຍ່ງ ຊຶ່ງແຕ່ລະປະເພດຂໍ້ຂັດແຍ່ງມີລັກສະນະ, ຈຸດພິເສດທີ່ແຕກຕ່າງກັນ ຊຶ່ງການພິຈາລະນາແກ້ໄຂແຕ່ລະປະເພດຂໍ້ຂັດແຍ່ງ ກໍແຕກຕ່າງກັນ ດັ່ງນັ້ນ, ກົດໝາຍທີ່ນຳໃຊ້ເພື່ອພິຈາລະນາແກ້ໄຂຄະດີທາງແພ່ງ ນອກຈາກກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ ແລ້ວ ຍັງພົວພັນກັບກົດໝາຍອື່ນອີກ ທີ່ນຳໃຊ້ແກ້ໄຂຂໍ້ຂັດແຍ່ງທາງແພ່ງຄື:

- ການດຳເນີນຄະດີແພ່ງທີ່ພົວພັນກັບການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ຕາມທີ່ກຳນົດໄວ້ໃນ ມາດຕາ 80 ແລະ 81 ຂອງກົດໝາຍທີ່ດິນ;
- ການດຳເນີນຄະດີແພ່ງທີ່ພົວພັນກັບ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ກຳນົດໄວ້ໃນມາດຕາ 34, 51 ແລະ 52 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ການດຳເນີນຄະດີແພ່ງ ທີ່ພົວພັນກັບການແກ້ໄຂຂໍ້ຂັດແຍ່ງກ່ຽວກັບແຮງງານ ຕາມທີ່ກຳນົດໄວ້ ໃນມາດຕາ 62, 63 ແລະ 64 ຂອງກົດໝາຍວ່າດ້ວຍແຮງງານ.

ຕາຕະລາງປຽບທຽບການພັດທະນາລະບົບການດຳເນີນຄະດີແພ່ງ

| ເນື້ອໃນການປ່ຽນແປງ | 1990 | 2004 | 2012 |
|---|---|---|---|
| - ການຈັດຕັ້ງ<br>- ສິດອຳນາດ | ສານປະຊາຊົນເມືອງ:<br>500.000 ກີບ | ສານປະຊາຊົນເມືອງ:<br>20.000.000 ກີບ | ສານປະຊາຊົນເຂດ<br>300.000.000 ກີບ |
| **ຫຼັກການ** | ມີ 7 ຫຼັກການ:<br>1. ສິດຂອງສານໃນການພິພາກສາຄະດີ ແລະ ຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະ ສານ;<br>2. ການພິຈາລະນາຄະດີເປັນໝູ່ຄະນະ;<br>3. ຄວາມເປັນເອກະລາດຂອງຜູ່ພິພາກສາ;<br>4. ພາສາທີ່ໃຊ້ໃນການດຳເນີນຄະດີ;<br>5. ການໄຕ່ສວນຄະດີໃນທີ່ປະຊຸມສານຢ່າງເປີດເຜີຍ;<br>6. ຜົນບັງຄັບຂອງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ;<br>7. ການເຮັດໃຫ້ເຫດການຂອງຄະດີແຈ້ງຂາວ, ການແຈ້ງສິດ ແລະ ພັນທະຂອງຄູ່ຄວາມ. | ມີ 10 ຫຼັກການ:<br>1. ສິດແລະ ພັນທະຂອງສານໃນການຕັດສິຄະດີ;<br>2. ຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະ ສານ;<br>3. ການພິຈາລະນາຄະດີເປັນໝູ່;<br>4. ຄວາມເປັນເອກະລາດຂອງຜູ່ພິພາກ ສາ;<br>5. ພາສາທີ່ໃຊ້ໃນການດຳເນີນຄະດີ;<br>6. ການໄຕ່ສວນຄະດີໃນທີ່ປະຊຸມສານຢ່າງເປີດເຜີຍ;<br>7. ຜົນສັກສິດຂອງຄຳຕົກລົງຂອງສານ;<br>8.ການບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນການພິຈາລະນາຄະດີດຽວກັນເປັນຄັ້ງທີສອງ;<br>9.ດຳເນີນຄະດີຮອບດ້ານ, ຄົບຖ້ວນ ແລະພາວະວິໄສ;<br>10.ການຂໍຖອນຕົວ ແລະການຄ້ານຕົວ; | ມີ 12 ຫຼັກການ:<br>1. ສິດ ແລະ ພັນທະຂອງສານໃນການພິຈາລະນາຕັດສິນຄະດີ;<br>2. ຄວາມສະເໝີພາບ ຂອງຄູ່ຄວາມຕໍ່ໜ້າກົດໝາຍແລະສານ;<br>3. ການໂຕ້ແຍ່ງ ແລະ ການໂຕ້ຖຽງ;<br>4. ການພິຈາລະນາຄະດີເປັນໝູ່ຄະນະ;<br>5.ຄວາມເປັນເອກະລາດຂອງຜູ່ພິພາກສາ;<br>6. ພາສາທີ່ໃຊ້ໃນການດຳເນີນຄະດີ;<br>7. ການໄຕ່ສວນຄະດີໃນທີ່ປະຊຸມສານ;<br>8. ການບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນການພິຈາລະນາຄະດີດຽວກັນ;<br>9.ການດຳເນີນຄະດີຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ;<br>10. ການໄກ່ເກ່ຍ;<br>11. ການຂໍຖອນຕົວ ຫຼື ການຄ້ານຕົວ;<br>12.ຂອບເຂດການພິຈາລະນາຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍ. |
| **ຂັ້ນການພິຈາລະນາ** | - ຂັ້ນປົກກະຕິ 2 ຂັ້ນ: ຂັ້ນຕົ້ນ ແລະ ຂັ້ນລົບລ້າງ<br>- ຂັ້ນພິເສດ ມີ 2 ຂັ້ນ: ຂັ້ນຕິດຕາມກວດກາ ແລະ ຂັ້ນຮື້ຟື້ນ | - ຂັ້ນປົກກະຕິ 3 ຂັ້ນ: ຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ<br>- ຂັ້ນພິເສດ ມີ 1 ຂັ້ນ: ຂັ້ນຮື້ຟື້ນ | - ຂັ້ນປົກກະຕິ 3 ຂັ້ນ: ຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ<br>- ຂັ້ນພິເສດ ມີ 1 ຂັ້ນ: ຂັ້ນຮື້ຟື້ນ |

# ບົດທີ 2
# ຫຼັກການພື້ນຖານຂອງການດຳເນີນຄະດີແພ່ງ

## 1. ຄວາມໝາຍ

ຫຼັກການພື້ນຖານຂອງການດຳເນີນຄະດີແພ່ງແມ່ນແນວຄິດພື້ນຖານໃຫ້ແກ່ການດຳເນີນຄະດີເພື່ອເປັນທິດທາງ, ແນວທາງ ແລະ ຂອບເຂດໃນການເຄື່ອນໄຫວຂອງພາກສ່ວນຕ່າງໆ ທີ່ເຂົ້າຮ່ວມໃນການດຳເນີນຄະດີແພ່ງໃຫ້ດຳເນີນໄປຕາມກົນໄກ, ຂັ້ນຕອນ ແລະ ວິທີການທີ່ກຳນົດໄວ້ ແນໃສ່ຮັບປະກັນໃຫ້ການເຄື່ອນໄຫວດັ່ງກ່າວບັນລຸຈຸດປະສົງ ແລະ ຄາດໝາຍຂອງການເຄື່ອນໄຫວດຳເນີນຄະດີຄືການໄດ້ຂໍ້ມູນຫຼັກຖານຢ່າງຄົບຖ້ວນ ແລະ ພຽງພໍ ເພື່ອປະກອບໃນການພິຈາລະນາຕັດສີນຢ່າງຖືກຕ້ອງ ແລະ ເປັນທຳຈຶ່ງກຳນົດຫຼັກການ ເພື່ອເປັນບ່ອນອີງໃຫ້ແກ່ຜູ້ພິພາກສາ ແລະ ຄູ່ຄວາມ ໄດ້ປະຕິບັດຕາມ.

ການດຳເນີນຄະດີແພ່ງ ປະກອບດ້ວຍການເຄື່ອນໄຫວຮ່ວມກັນຂອງສອງພາກສ່ວນ ຄື ຜູ້ຮັບຜິດຊອບ ຊຶ່ງມີປະທານ, ຮອງປະທານ, ຫົວໜ້າ, ຮອງຫົວໜ້າຄະນະສານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ພະນັກງານວິຊາການ; ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ຊຶ່ງມີໂຈດ (ລວມທັງອົງການໄອຍະການປະຊາຊົນ), ຈຳເລີຍ, ບຸກຄົນທີສາມ, ພະຍານ, ຜູ້ແປພາສາ, ຜູ້ຊ່ຽວຊານ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ.

ຫຼັກການຂອງການດຳເນີນຄະດີແພ່ງ ໄດ້ກຳນົດພາບລວມຂອງລະບົບການດຳເນີນຄະດີ, ກຳນົດສິດ, ພັນທະ ແລະ ຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງໃນການດຳເນີນຄະດີ ແລະ ແນວທາງລວມໃນການເຄື່ອນໄຫວຢູ່ໃນແຕ່ລະຂັ້ນຕອນຂອງການດຳເນີນຄະດີ ຊຶ່ງແຕ່ລະຫຼັກການ ໄດ້ຖືກນຳໄປ ຜັນຂະຫຍາຍຢູ່ໃນແຕ່ລະພາກ, ແຕ່ລະໝວດ ແລະ ແຕ່ລະມາດຕາກໍຄືແຕ່ລະຂັ້ນຕອນຂອງການດຳເນີນຄະດີ ເພື່ອເປັນແນວທາງລະອຽດໃນການຈັດຕັ້ງປະຕິບັດ.

## 2. ຄວາມສຳຄັນ

ການເຄື່ອນໄຫວຂອງສານ, ບັນດາຄູ່ຄວາມ ແລະ ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີແພ່ງ ແນໃສ່ແກ້ໄຂຂໍ້ຂັດແຍ່ງທາງແພ່ງທີ່ເກີດຂຶ້ນໃຫ້ຖືກຕ້ອງ ແລະ ເປັນທຳ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງ ທີ່ຖືກບຸກຄົນອື່ນລະເມີດ ຫຼື ໂຕ້ແຍ່ງ ຊຶ່ງການເຄື່ອນໄຫວດັ່ງກ່າວ ຕ້ອງຢູ່ບົນຫຼັກການ, ລະບຽບການ ແລະ ຂັ້ນຕອນ ທີ່ກຳນົດໄວ້ນັ້ນຄືການຄົ້ນຄວ້າດຳເນີນຄະດີ ເພື່ອຈຸດປະສົງດຽວກັນ ຊອກຫາຂໍ້ມູນຫຼັກຖານມາຢັ້ງຢືນເຫດການຄວາມເປັນຈິງຂອງຄະດີ, ຮັບປະກັນການພິຈາລະນາຕັດສີນຄະດີໃຫ້ມີຄວາມຖືກຕ້ອງ ແລະ ເປັນທຳ.

ຖ້າຫາກບໍ່ມີຫຼັກການ ຈະເຮັດໃຫ້ແຕ່ລະພາກສ່ວນເຄື່ອນໄຫວຕາມແນວຄິດ, ຈຸດພິເສດ ຫຼື ຄວາມຕ້ອງການຂອງຕົນເອງ ອັນຈະພາໃຫ້ການເຄື່ອນໄຫວດຳເນີນຄະດີບໍ່ໄປເຖິງຈຸດປະສົງ ແລະ ຄາດໝາຍ ທີ່ຕັ້ງໄວ້ຄື ການຊອກເຫັນໄດ້ຄວາມເປັນຈິງຂອງຄະດີ ເພື່ອນຳມາພິຈາລະນາຕັດສີນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ.

## 3. ຫຼັກການພື້ນຖານຂອງການດຳເນີນຄະດີແພ່ງ

ກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ ມີບົດບັນຍັດໄວ້ຢ່າງຫຼວງຫຼາຍ ຊຶ່ງລ້ວນແຕ່ແມ່ນຫຼັກການ ແລະ ລະບຽບການດຳເນີນຄະດີ ແຕ່ເມື່ອສັງລວມແລ້ວບົດບັນຍັດທີ່ເປັນຫຼັກການພື້ນຖານ ແລະ ຕົ້ນຕໍທີ່ກຳນົດຂອບເຂດ ແລະ ທິດທາງໃນການດຳເນີນຄະດີແພ່ງ ໂດຍມີ 12 ຫຼັກການພື້ນຖານດັ່ງນີ້:

## 3.1. ສິດ ແລະ ພັນທະຂອງສານໃນການພິຈາລະນາຕັດສິນຄະດີ

### 3.1.1. ຄວາມໝາຍ

ມີແຕ່ສານປະຊາຊົນເທົ່ານັ້ນ ຈຶ່ງມີສິດໃນການນໍາເອົາຄະດີມາພິຈາລະນາຕັດສິນ ສານປະຊາຊົນແມ່ນອົງການຕຸລາການມີພາລະບົດບາດ, ສິດ ແລະ ໜ້າທີ່ໃນການພິຈາລະນາຕັດສິນຄະດີ ໃນນາມອໍານາດລັດ ຂອງ ສປປ ລາວ ເພື່ອແກ້ໄຂບັນຫາໃດໜຶ່ງ ທີ່ມີການຮ້ອງຟ້ອງ ຫຼື ຮ້ອງຂໍຂຶ້ນມາສານ.

ໃນສະພາບຄວາມເປັນຈິງຢູ່ໃນສັງຄົມ ມີຂໍ້ຂັດແຍ່ງຫຼາຍຢ່າງເກີດຂຶ້ນ ຊຶ່ງການແກ້ໄຂຂໍ້ຂັດແຍ່ງເຫຼົ່ານັ້ນ ກໍມີຫຼາຍວິທີ, ມີຫຼາຍອົງການທີ່ຮັບຜິດຊອບ ຊຶ່ງຖືເປັນຄວາມຮັບຜິດຊອບທັງໝົດຂອງທົ່ວສັງຄົມ ກໍຄືຂອງອົງການຈັດຕັ້ງຕ່າງໆ ແຕ່ການແກ້ໄຂເຫຼົ່ານັ້ນ ຖືເປັນການແກ້ໄຂທາງບໍລິຫານບໍ່ສາມາດປະຕິບັດໄດ້ ໝາຍຄວາມວ່າ ການແກ້ໄຂທາງບໍລິຫານບໍ່ສາມາດນໍາມາບັງຄັບປະຕິບັດ ຄືກັບຄໍາຕັດສິນຂອງສານໄດ້ ເນື່ອງຈາກວ່າ ການແກ້ໄຂທາງບໍລິຫານນັ້ນແມ່ນການແກ້ໄຂດ້ວຍ ການໄກ່ເກ່ຍ, ປະນີປະນອມ ຫຼື ການຜ່ອນຜັນໃຫ້ແກ່ກັນ. ແຕ່ການພິຈາລະນາແກ້ໄຂຄະດີຢູ່ສານ ແມ່ນການນໍາໃຊ້ ກົດໝາຍມາຕັດສິນໃນບັນຫາທີ່ຄູ່ຄວາມຂັດແຍ່ງ ຫຼື ບໍ່ຕົກລົງກັນໄດ້.

### 3.1.2. ເຫດຜົນ

ອົງການນິຕິບັນຍັດ, ອົງການບໍລິຫານ ແລະ ອົງການຕຸລາການ ໄດ້ແບ່ງໜ້າທີ່ ແລະ ພາລະບົດບາດກັນຢ່າງລະອຽດ, ຈະແຈ້ງໃນອໍານາດລັດຂອງ ສປປ ລາວ ກໍເພື່ອໃຫ້ແຕ່ລະອົງການເຄື່ອນໄຫວຢູ່ໃນຂອບເຂດຂອງ ພາລະບົດບາດ, ໜ້າທີ່ ແລະ ສິດອໍານາດຂອງຕົນ ບໍ່ກ້າວກ່າຍ ແລະ ຊໍ້າຊ້ອນໜ້າວຽກຂອງກັນ ແລະ ກັນ ເພື່ອສ້າງຄວາມສັກສິດຂອງອໍານາດລັດ ໃນນີ້ ສານປະຊາຊົນຖືກມອບໝາຍໃຫ້ເຮັດໜ້າທີ່ໃນການພິຈາລະນາຕັດສິນຄະດີ. ດັ່ງນັ້ນ ເມື່ອມີການຮ້ອງຟ້ອງ ຫຼື ຮ້ອງຂໍຕໍ່ສານ, ສານຕ້ອງໄດ້ນໍາເອົາຄະດີດັ່ງກ່າວມາຄົ້ນຄວ້າ, ພິຈາລະນາຕັດສິນຢ່າງວ່ອງໄວ, ໂປ່ງໃສ, ຖືກຕ້ອງ ແລະ ເປັນທໍາ ບົນພື້ນຖານຂໍ້ມູນຫຼັກຖານ ແລະ ກົດໝາຍ ເຖິງວ່າການຮ້ອງຟ້ອງ ຫຼື ຮ້ອງຂໍນັ້ນຈະມີເຫດຜົນ ຫຼື ບໍ່ມີເຫດຜົນກໍຕາມ ສານກໍຕ້ອງໄດ້ພິຈາລະນາຕັດສິນ ຊຶ່ງສານປະຊາຊົນບໍ່ສາມາດປະຕິເສດ ທີ່ຈະບໍ່ພິຈາລະນາຕັດສິນຄະດີ ທີ່ຄູ່ຄວາມສະເໜີຂຶ້ນມາສານ.

ເຖິງຢ່າງໃດກໍຕາມຂໍ້ຂັດແຍ່ງທີ່ເກີດຂຶ້ນຢູ່ໃນສັງຄົມບາງປະເພດ ກ່ອນຈະຮ້ອງຟ້ອງຕໍ່ສານ ຕ້ອງໄດ້ຜ່ານການໄກ່ເກ່ຍ ຫຼື ແກ້ໄຂທາງບໍລິຫານເສັຍກ່ອນ ສານຈຶ່ງຮັບເອົາມາພິຈາລະນາຕັດສິນໃຫ້ຄວາມເປັນທໍາແກ່ຄູ່ຄວາມ. ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ຍຸຕິທໍາ ການພິຈາລະນາຕັດສິນຂອງສານມີ 3 ຂັ້ນປົກກະຕິຄືຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລຶບລ້າງ ນອກນັ້ນ ເພື່ອຮັບປະກັນຄວາມຍຸຕິທໍາສູງສຸດ ກົດໝາຍຍັງກໍານົດຂັ້ນພິເສດ ຄື ຂັ້ນຮື້ຟື້ນ ເພື່ອພິຈາລະນາຕັດສິນຮື້ຟື້ນຄະດີຄືນ ຖ້າເຫັນວ່າການຕັດສິນຜ່ານມາບໍ່ຖືກຕ້ອງ ແລະ ຍຸຕິທໍາ.

### 3.1.3. ການນໍາໃຊ້

ສານ ຊຶ່ງແມ່ນອົງການຕຸລາການ ເປັນຜູ້ມີສິດອໍານາດ ພິຈາລະນາຄະດີທາງແພ່ງ ບົນພື້ນຖານການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ. ສ່ວນອົງການອື່ນໆ ເຊັ່ນ ອົງການນິຕິບັນຍັດ, ອົງການບໍລິຫານ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງອື່ນໆ ມີໜ້າທີ່ ແລະ ຄວາມຮັບຜິດຊອບໃນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນໃນສັງຄົມ ແຕ່ການແກ້ໄຂດັ່ງກ່າວບໍ່ມີຜົນບັງຄັບໃຊ້ ຄືກັນກັບຄໍາຕັດສິນຂອງສານ.

## 3.2. ຄວາມສະເໝີພາບຂອງຄູ່ຄວາມ ຕໍ່ໜ້າກົດໝາຍ ແລະ ສານ

### 3.2.1. ຄວາມໝາຍ

ພົນລະເມືອງທຸກຄົນມີຄວາມສະເໝີພາບໃນການເຄື່ອນໄຫວຢູ່ໃນສັງຄົມ ບົນພື້ນຖານກົດໝາຍທີ່ກໍານົດໄວ້ ເປັນຕົ້ນການສ້າງຂໍ້ຜູກພັນ, ການເຮັດສັນຍາ ຫຼື ການເຄື່ອນໄຫວທາງດ້ານກົດໝາຍອື່ນຂອງຄູ່ຄວາມຕາມສະພາບ ແລະ ເງື່ອນໄຂຕົວຈິງຂອງແຕ່ລະຄົນ ພ້ອມກັນນັ້ນ ໃນເວລາດໍາເນີນຄະດີ ຢູ່ສານ ໂຈດ ແລະ ຈໍາເລີຍ ກໍມີຄວາມສະເໝີພາບກັນໂດຍບໍ່ຈໍາແນກ ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດຕໍ່ໜ້າກົດໝາຍ ແລະ ສານ

ໂດຍບໍ່ໄດ້ຈຳແນກເຊື້ອຊາດ, ເຜົ່າ, ເພດ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ວັດທະນາທຳ, ສາສະໜາ, ຄວາມເຊື່ອຖື, ພູມລຳເນົາ ແລະ ບັນຫາອື່ນໆ ຄວາມສະເໝີພາບຂອງຄູ່ຄວາມຍັງມີຄວາມໝາຍແຄບທີ່ວ່າບໍ່ແມ່ນໂຈດ ແລະ ຈຳເລີຍ ຈະມີຄວາມເທົ່າທຽມກັນໃນທຸກບັນຫາ ຫຼື ທຸກດ້ານແຕ່ຫາກຂຶ້ນກັບສະພາບເງື່ອນໄຂຄວາມເປັນຈິງ ຂອງແຕ່ລະຄົນໃນການປະຕິບັດສິດ ແລະ ພັນທະຂອງຕົນໃນເວລາດຳເນີນຄະດີ.

### 3.2.2. ເຫດຜົນ

ການດຳເນີນຄະດີແພ່ງມີຈຸດປະສົງ ເພື່ອໃຫ້ສານພິຈາລະນາຕັດສິນມີຄວາມຖືກຕ້ອງ ແລະ ເປັນທຳ. ຂະບວນການຕໍ່ສູ້ຄະດີນັ້ນ ເປັນການຕໍ່ສູ້ກັນລະຫວ່າງສອງຝ່າຍ ຄື ຝ່າຍໂຈດ ແລະ ຈຳເລີຍ ຊຶ່ງແຕ່ລະຝ່າຍຕ່າງກໍຊອກຫາ, ກະກຽມ ຫຼື ສະເໜີຂໍ້ມູນຫຼັກຖານ ແລະ ອ້າງເຫດຜົນ ທີ່ເປັນປະໂຫຍດໃຫ້ແກ່ຕົນ ໂດຍບໍ່ມີຂອບເຂດຈຳກັດ ແລະສະເໜີໄດ້ທຸກເວລາກ່ອນການພິຈາລະນາຕັດສິນຂອງສານ. ຜູ້ພິພາກສາ ຈະເປັນຄົນກາງໃນການປະສານງານເຮັດໃຫ້ຂໍ້ຂັດ ແຍ່ງຂອງຄູ່ຄວາມຖືກແກ້ໄຂໂດຍໄວ ແລະ ຖືກຕ້ອງເປັນທຳ. ອັນນີ້ມີຄວາມໝາຍວ່າ ສິດ, ພັນທະ ແລະ ຄວາມຮັບຜິດຊອບຕົ້ນຕໍໃນການຕໍ່ສູ້ຄະດີແມ່ນໂຈດ ແລະ ຈຳເລີຍ, ດັ່ງນັ້ນ ຈຶ່ງຕ້ອງມີຄວາມສະເໝີພາບກັນ, ຖ້າຫາກບໍ່ມີຄວາມສະເໝີພາບແລ້ວຈະພາໃຫ້ເກີດຄວາມເອົາລັດເອົາປຽບໃນເວລາດຳເນີນຄະດີ, ເປັນຊ່ອງວ່າງໃຫ້ຜູ້ຈັດຕັ້ງປະຕິບັດມີການສວຍໃຊ້ເພື່ອຫາຜົນປະໂຫຍດ, ເຂົ້າຂ້າງອອກຂາ ແລະ ການລຳອຽງຕ່າງໆ ເປັນຕົ້ນ ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ຜູ້ມີສ່ວນກ່ຽວຂ້ອງອື່ນໆໃນການດຳເນີນຄະດີໃຫ້ສິດແກ່ຝ່າຍໃດຝ່າຍໜຶ່ງຫຼາຍ ເກີນໄປພ້ອມທັງຈຳກັດສິດອີກຝ່າຍໜຶ່ງ ຊຶ່ງຈະພາໃຫ້ການພິຈາລະນາຕັດສິນຄະດີບໍ່ມີຄວາມຖືກຕ້ອງ ແລະ ເປັນທຳ.

### 3.2.3. ການນຳໃຊ້

ຄວາມສະເໝີພາບຂອງໂຈດ ແລະ ຈຳເລີຍ ໃນການຕໍ່ສູ້ຄະດີຢູ່ສານ ສະແດງອອກໃນບາງດ້ານຕົ້ນຕໍດັ່ງນີ້:

1) ການໂຕ້ແຍ່ງ, ໂຕ້ຖຽງຂໍ້ເທັດຈິງໃນການດຳເນີນຄະດີຢູ່ສານ ກໍສາມາດຍື່ນຄຳສະເໜີ, ຄຳຮ້ອງຟ້ອງ, ຄຳຮ້ອງຂໍ, ຄຳແກ້ຟ້ອງ ຫຼື ຄຳອະທິບາຍຊີ້ແຈງຕໍ່ຜູ້ຮັບຜິດຊອບຄົ້ນຄວ້າຄະດີ;
2) ການປະກອບ ແລະ ສະເໜີຫຼັກຖານ ຫຼື ຮ້ອງຂໍໃຫ້ສານເກັບກຳຂໍ້ມູນຫຼັກຖານ ເປັນຕົ້ນການສອບຖາມພະຍານ, ການລົງກວດກາບັນຫາທີ່ຂັດແຍ່ງ, ການແຕ່ງຕັ້ງ ຜູ້ຊ່ຽວຊານທຳການພິສູດ ແລະ ອື່ນໆ ທີ່ກ່ຽວຂ້ອງກັບການໂຕ້ແຍ່ງຂອງຕົນ ຫຼື ກ່ຽວກັບຂໍ້ເທັດຈິງໃນຄະດີ;
3) ການສະເໜີຕໍ່ສານເພື່ອຂໍໄກ່ເກັ່ຍ, ຊ້ອງໜ້າໃນເວລາດຳເນີນຄະດີຢູ່ສານ;
4) ການສະເໜີຄ້ານຕົວຜູ້ພິພາກສາ, ພະນັກງານໄອຍະການປະຊາຊົນ, ຈ່າສານ, ຜູ້ຊ່ຽວຊານ ແລະ ຜູ້ແປພາສາ ຖ້າຫາກເຫັນວ່າມີຜົນປະໂຫຍດໃນຄະດີ ຫຼື ມີພຶດຕິກຳທີ່ບໍ່ເໝາະສົມ ໃນຊ່ວງເວລາການຄົ້ນຄວ້າຄະດີ ແລະ ການໄຕ່ສວນໃນທີ່ປະຊຸມສານ ລວມທັງການຮ້ອງທຸກຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຜູ້ພິພາກສາ;
5) ການຮ້ອງຂໍໃຫ້ສານ ພິຈາລະນາອອກມາດຕະການຮັບປະກັນການຮ້ອງຟ້ອງ ຫຼື ມາດຕະການຊົ່ວຄາວເພື່ອຮັບປະກັນໃຫ້ການດຳເນີນຄະດີດຳເນີນຢ່າງວ່ອງໄວ, ບໍລິສຸດ ແລະ ຍຸຕິທຳ;
6) ການຊັກຖາມບຸກຄົນອື່ນທີ່ເຂົ້າຮ່ວມໃນຄະດີ, ຂໍເບິ່ງເອກະສານ ຢູ່ໃນສຳນວນຄະດີ, ອັດສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ ທີ່ຈຳເປັນອອກຈາກສຳນວນຄະດີ ເພື່ອຊີ້ແຈງ, ອະທິບາຍ ຫຼືໂຕ້ແຍ່ງ ຖ້າເຫັນວ່າການສະເໜີຂອງຄູ່ກໍລະນີຝ່າຍກົງກັນຂ້າມ ຫາກສະເໜີບໍ່ຖືກ ຕ້ອງ;
7) ການແຕ່ງຕັ້ງທະນາຍຄວາມ ຫຼື ມອບສິດໃຫ້ຜູ້ປົກປ້ອງອື່ນ ມາເປັນຜູ້ຕາງໜ້າໃນການຕໍ່ສູ້ຄະດີຢູ່ສານ;
8) ການຂໍອຸທອນ, ຂໍລົບລ້າງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ແລະ ທວງໃຫ້ປະຕິບັດຄຳຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ;
9) ຄວາມສະເໝີພາບດ້ານອື່ນໆ ໃນເວລາດຳເນີນຄະດີຢູ່ສານ.

ນອກນັ້ນການພິຈາລະນາຂອງສານປະຊາຊົນ ຕ້ອງປະຕິບັດຢູ່ບົນພື້ນຖານຄວາມສະເໝີພາບຂອງພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຕໍ່ໜ້າກົດໝາຍ ແລະ ສານ ໂດຍບໍ່ໄດ້ຈຳແນກເຊື້ອຊາດ, ເຜົ່າ, ເພດ, ຖານະທາງດ້ານເສດຖະກິດ ແລະສັງຄົມ, ພາສາ, ລະດັບການສຶກສາ, ວັດທະນາທຳ, ສາສະໜາ, ຄວາມເຊື່ອຖື, ພູມລຳເນົາ ແລະ ບັນຫາອື່ນໆ ໝາຍຄວາມວ່າ ເມື່ອສານຮັບເອົາຄະ ດີມາພິຈາລະນາຢ່າງຖືກຕ້ອງແລ້ວ ໂຈດ ຫຼື ຈຳເລີຍ ຈະແມ່ນຄົນສັນຊາດລາວ ຫຼື ບໍ່ແມ່ນຄົນສັນຊາດລາວ ແມ່ນມີຄວາມສະເໝີພາບໃນການເກັບກຳ, ປະກອບຫຼັກຖານ ແລະ ສະເໜີຄຳຄິດ ຄຳເຫັນຕ່າງໆ ຕໍ່ ຜູ້ພິພາກສາ ຫຼື ຄະນະສານ ເທົ່າທຽມກັນ ຊຶ່ງຜູ້ພິພາກສາ ຫຼື ຄະນະສານຕ້ອງໃຫ້ໂອກາດແກ່ໂຈດ ແລະ ຈຳເລີຍໃນການໂຕ້ແຍ່ງຂໍ້ມູນຫຼັກຖານເຊິ່ງກັນ ແລະ ກັນ, ນຳເອົາຫຼັກຖານມາຢັ້ງຢືນ ແລະ ປົກປ້ອງຄຳຄິດຄຳເຫັນ ແລະ ສິດຜົນປະໂຫຍດຂອງຕົນ ໂດຍບໍ່ຂຶ້ນກັບວ່າ ໂຈດ ແລະ ຈຳເລີຍນັ້ນ ຈະແມ່ນເຊື້ອຊາດ, ສັນຊາດ, ສາສະໜາໃດ, ເປັນຜູ້ຍິງ ຫຼື ຜູ້ຊາຍ, ເປັນຜູ້ທຸກ ຫຼື ຜູ້ຮັ່ງມີ ຫຼື ອາໃສຢູ່ໃນເມືອງ ຫຼື ຊົນນະບົດ, ຜູ້ມີຖານະຕຳແໜ່ງ ຫຼື ປະຊາຊົນ ຄົນທຳມະດາ, ບຸກຄົນ ຫຼືອົງການຈັດຕັ້ງ.

### 3.3. ການໂຕ້ແຍ່ງ ແລະ ການໂຕ້ຖຽງ

#### 3.3.1. ຄວາມໝາຍ

ຂໍ້ຂັດແຍ່ງທີ່ນຳມາພິຈາລະນາຢູ່ສານ ລ້ວນແຕ່ເປັນຂໍ້ຂັດແຍ່ງທີ່ໂຈດ ແລະ ຈຳເລີຍ ລວມທັງບຸກຄົນທີສາມ ບໍ່ມີຄວາມເປັນເອກະພາບ ຫຼື ບໍ່ລົງລອຍກັນໄດ້ ຍ້ອນຕ່າງຝ່າຍກໍອ້າງວ່າຕົນເອງເປັນຝ່າຍຖືກ. ການດຳເນີນຄະດີຢູ່ສານແມ່ນການຊອກຫາຄວາມເປັນຈິງຂອງຄະດີ ທີ່ໂຈດ ຫຼື ຈຳເລີຍ ມີຂໍ້ຂັດແຍ່ງກັນ, ຖ້າເຫັນວ່າຝ່າຍໃດຝ່າຍໜຶ່ງ ສະເໜີ ຫຼື ກ່າວອ້າງທີ່ບໍ່ມີຄວາມຈິງ ກໍຕ້ອງໄດ້ຊີ້ແຈງ, ອະທິບາຍ, ຕອບໂຕ້ຄືນ ຢູ່ໃນໄລຍະຂອງການຄົ້ນຄວ້າຄະດີ ເພື່ອໃຫ້ຜູ້ພິພາກສາໄດ້ຮັບຂໍ້ມູນກ່ຽວກັບຄວາມເປັນຈິງ ແລະ ເຫດຜົນທາງດ້ານກົດໝາຍ ເພື່ອເປັນພື້ນຖານໃຫ້ແກ່ການພິຈາລະນາຕັດສິນຄະດີໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ກົດໝາຍ. ເຖິງຢ່າງໃດກໍຕາມການຊີ້ແຈງ, ອະທິບາຍບັນຫາໃດໜຶ່ງໃຫ້ມີຄວາມກະຈ່າງແຈ້ງຕໍ່ຄະນະສານຢູ່ໃນທີ່ປະຊຸມສານ ຈະຖືເປັນການໂຕ້ຖຽງ.

#### 3.3.2. ເຫດຜົນ

ການໂຕ້ແຍ່ງ ຫຼື ການໂຕ້ຖຽງ ມີຄວາມສຳຄັນທີ່ສຸດ ໃຫ້ແກ່ຜູ້ພິພາກສາ ຫຼື ຄະນະສານ ທີ່ຈະກຳນົດເຫດການຂອງຄະດີໃຫ້ມີຄວາມຈະແຈ້ງ ທັງເປັນພື້ນຖານໃນການຈຳແນກໄດ້ຢ່າງຈະແຈ້ງວ່າ ຫຼັກຖານໃດທີ່ເຊື່ອຖືໄດ້, ຫຼັກຖານໃດບໍ່ເຊື່ອຖືບົນພື້ນຖານຂໍ້ມູນຊີ້ແຈງ, ອະທິບາຍຂອງໂຈດ ແລະ ຈຳເລີຍ ລວມທັງບຸກຄົນທີສາມ.

ການດຳເນີນຄະດີຢູ່ສານ ໂຈດ ແລະຈຳເລີຍ ລວມທັງບຸກຄົນທີສາມ ຍາມໃດກໍສະເໜີເນື້ອໃນ, ຂໍ້ມູນຫຼັກຖານທີ່ເປັນປະໂຫຍດ ແລະ ສະໜັບສະໜູນຂໍ້ສະເໜີຂອງຕົນ. ການກ່າວອ້າງຂອງແຕ່ລະຝ່າຍນັ້ນ ອາດແມ່ນຄວາມຈິງ ຫຼື ບໍ່ແມ່ນຄວາມຈິງ, ມີການປົກປິດ ຫຼື ບິດເບືອນຄວາມຈິງ ຊຶ່ງໂຈດ ແລະ ຈຳເລີຍ ລວມທັງບຸກຄົນທີສາມຕ້ອງໄດ້ຕອບໂຕ້, ຊີ້ແຈງຕໍ່ສານ.

ການໂຕ້ແຍ່ງ ແລະ ໂຕ້ຖຽງ ຕ້ອງເຂົ້າໃຈອີກວ່າ ບໍ່ແມ່ນການທີ່ຈະປະຕິເສດ ຫຼື ຕອບໂຕ້ຄືນຄຳກ່າວອ້າງ ຫຼື ຫຼັກຖານຂອງຝ່າຍກົງກັນຂ້າມທີ່ບໍ່ຖືກຕ້ອງເທົ່ານັ້ນ ແຕ່ຍັງມີຄວາມໝາຍວ່າ ຖ້າຄຳກ່າວອ້າງ ຫຼື ຂໍ້ມູນຫຼັກຖານທີ່ຝ່າຍໜຶ່ງຍົກຂຶ້ນມາຫາກຖືກຕ້ອງ ແລະ ມີຄວາມຈິງກໍສາມາດຮັບຮູ້ ແລະ ຍອມຮັບຕໍ່ບັນຫາທີ່ຍົກຂຶ້ນນັ້ນ ເພື່ອເປັນການຢັ້ງຢືນ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ສານໃນການພິຈາລະນາຕັດສິນຢ່າງຖືກຕ້ອງ.

ຕົວຢ່າງ: ທ້າວ ກ ( ໂຈດ ) ອ້າງວ່າ ທ້າວ ຂ (ຈຳເລີຍ) ໄດ້ກູ້ຢືມເງິນນຳຕົນ ຈຳນວນ 10.000.000 ກີບ, ສານຕ້ອງໃຫ້ທ້າວ ຂ ມາໃຫ້ການວ່າ ຮັບຮູ້ ຫຼື ປະຕິເສດຄຳກ່າວອ້າງຂອງທ້າວ ກ, ຖ້າ ທ້າວ ຂ ຫາກປະຕິເສດ, ທ້າວ ກ ຕ້ອງນຳເອົາຫຼັກຖານມາຢັ້ງຢືນວ່າ ທ້າວ ຂ ໄດ້ກູ້ຢືມເງິນນຳຕົນແທ້, ໃນນີ້ ສານຕ້ອງໃຫ້ທ້າວ ຂ ມາໂຕ້ແຍ່ງກ່ຽວກັບຫຼັກຖານດັ່ງກ່າວ.

### 3.3.3. ການນຳໃຊ້

ການໂຕ້ແຍ່ງແມ່ນການນຳເອົາຂໍ້ມູນຫຼັກຖານຂອງຄູ່ຄວາມ ເພື່ອໃຫ້ຄູ່ຄວາມມີຄຳເຫັນ ຫຼື ຊີ້ແຈ້ງຂໍ້ກ່າວອ້າງຂອງຕົນ ຫຼື ໂຕ້ແຍ່ງ ຕໍ່ຫຼັກຖານຂອງຝ່າຍກົງກັນຂ້າມກ່ອນບໍ່ທັນເປີດປະຊຸມສານ.

ການໂຕ້ຖຽງຂອງຄູ່ຄວາມ ແມ່ນການອອກຄຳຄິດເຫັນທີ່ມີລັກສະນະໂຕ້ຕອບ ລະຫວ່າງໂຈດກັບຈຳເລີຍລວມທັງບຸກຄົນທີສາມ ໃນຄະດີມາສະເໜີຕໍ່ທີ່ປະຊຸມສານ ແລ້ວເປີດການໂຕ້ຖຽງລະຫວ່າງໂຈດກັບຈຳເລີຍ ລວມທັງບຸກຄົນທີສາມ ພ້ອມທັງ ຜູ້ປົກປ້ອງຂອງພວກກ່ຽວ (ຖ້າມີ), ໂຈດ ແລະ ຈຳເລີຍ ລວມທັງບຸກຄົນທີສາມ ຈະນຳເອົາເອກະສານ ຫຼື ຫຼັກຖານອື່ນທີ່ຕົນມີທັງນີ້ ກໍເພື່ອປົກປ້ອງສິດຜົນປະໂຫຍດໃຫ້ແກ່ຕົນເອງ ອອກມາສະເໜີຕໍ່ຄະນະສານໃນການໂຕ້ຖຽງນັ້ນ ຕ້ອງໃຫ້ແຕ່ລະຝ່າຍມີຄຳເຫັນໂຕ້ຕອບກັນ ເພື່ອຊອກຫາຄວາມຖືກຕ້ອງ ແລະ ຄວາມເປັນຈິງໃນຄະດີ.

ການໂຕ້ຖຽງ ຕ້ອງໄດ້ປະຕິບັດຕາມລຳດັບ ຄື ຝ່າຍໂຈດ, ຝ່າຍຈຳເລີຍ ຫຼື ບຸກຄົນທີສາມ ຊຶ່ງຕ້ອງນຳເອົາຫຼັກຖານມາຢັ້ງຢືນ ຫຼື ຊີ້ແຈ້ງກ່ຽວກັບປະເດັນທີ່ມີຂໍ້ສົງໃສ ຫຼື ຂັດແຍ່ງນັ້ນ.

ການໂຕ້ຖຽງ ແລະ ການຊີ້ແຈ້ງຂອງຄູ່ຄວາມຈະບໍ່ຈຳກັດເວລາ ແຕ່ປະທານຄະນະສານຕັດສິນຕ້ອງຄວບຄຸມການໂຕ້ຖຽງນັ້ນໃຫ້ຢູ່ໃນຂອບເຂດປະເດັນທີ່ຂັດແຍ່ງກັນ, ຖ້າຫາກຄູ່ຄວາມມີຄຳເຫັນ ຫຼື ຍົກຫຼັກຖານທີ່ບໍ່ກ່ຽວຂ້ອງກັບຄະດີແລ້ວ ປະທານຄະນະສານຕັດສິນ ຕ້ອງຄວບຄຸມໃຫ້ເຂົ້າສູ່ປະເດັນຂອງຄະດີ.

## 3.4. ການພິຈາລະນາຄະດີເປັນໝູ່ຄະນະ

### 3.4.1. ຄວາມໝາຍ

ການພິຈາລະນາຕັດສິນຄະດີຂອງສານທຸກຂັ້ນຕ້ອງດຳເນີນເປັນໝູ່ຄະນະ ຊຶ່ງປະກອບດ້ວຍຜູ້ພິພາກສາສາມຄົນ ຜູ້ໜຶ່ງເປັນປະທານ ແລະ ອີກສອງຄົນເປັນຄະນະ ໂດຍປະຕິບັດຕາມລະບອບການລົງຄະແນນສຽງຄື ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ,ໃຫ້ຜູ້ທີ່ມີຄຸນວຸດທີຕ່ຳກວ່າ ເປັນຜູ້ອອກຄຳເຫັນກ່ອນ, ປະທານຄະນະສານຕັດສິນອອກຄຳເຫັນເປັນຜູ້ສຸດທ້າຍ.

ການພິຈາລະນາເປັນໝູ່ຄະນະມີຄວາມສຳຄັນທີ່ສຸດ ເພາະເປັນການພິຈາລະນາຕັດສິນໃນນາມອຳນາດລັດແຫ່ງ ສປປ ລາວ ແຕ່ການພິຈາລະນາຕັດສິນນັ້ນລ້ວນແຕ່ພົວພັນ ແລະ ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດສ່ວນຕົວຂອງບຸກຄົນ. ສະນັ້ນ ຈຶ່ງຕ້ອງຮັບປະກັນໃຫ້ການຕົກລົງ ຫຼື ຕັດສິນບັນຫາໃດໜຶ່ງມີຄວາມຖືກຕ້ອງ ແລະພາວະວິໄສ.

### 3.4.2. ເຫດຜົນ

ການເຮັດວຽກເປັນໝູ່ຄະນະ ຖືເປັນກົນໄກເຮັດວຽກທີ່ມີປະຊາທິປະໄຕ, ມີການເປີດກວ້າງແນວ ຄວາມຄິດ ແລະ ຮັບຟັງຄວາມຄິດເຫັນຂອງບຸກຄົນອື່ນ ເຮັດໃຫ້ການຕົກລົງບັນຫາໃດໜຶ່ງ ພາວະວິໄສ, ຮອບດ້ານ, ຖືກຕ້ອງ ຕາມຄວາມຈິງ ແລະ ກົດໝາຍຫຼາຍທີ່ສຸດ.

ການກຳນົດໃຫ້ມີຫຼັກການການພິຈາລະນາຕັດສິນຂອງສານຕ້ອງເຮັດເປັນໝູ່ຄະນະກໍເພື່ອກຳນົດກົນໄກແບບແຜນ, ວິທີເຮັດວຽກຂອງຜູ້ພິພາກສາ ໃນການພິຈາລະນາຕັດສິນຄະດີ ແລະ ຍົກສູງຄວາມຮັບຜິດຊອບຂອງຜູ້ພິພາກສາ ໃນການຄົ້ນຄວ້າ, ຊັ່ງຊາຕີລາຄາຫຼັກຖານ ແລະ ການລົງຄຳຕັດສິນໃດໜຶ່ງຕ້ອງມີເຫດມີຜົນຕາມຂໍ້ມູນຫຼັກຖານ ແລະຕາມກົດໝາຍ ເພື່ອຮັບປະກັນໃຫ້ການພິຈາລະນາຕັດສິນຂອງສານ ຖືກຕ້ອງຕາມຄວາມເປັນຈິງ ແລະ ກົດໝາຍ ເຮັດໃຫ້ຜູ້ທີ່ລະເມີດກົດໝາຍຕ້ອງໄດ້ຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ກໍ່ຂຶ້ນ ແລະ ຜູ້ທີ່ປະຕິບັດຖືກຕ້ອງຕາມກົດໝາຍຕ້ອງໄດ້ຮັບການປົກປ້ອງຈາກກົດໝາຍຕາມຄຳຕັດສິນຂອງສານ.

### 3.4.3. ການນຳໃຊ້

ຜູ້ພິພາກສາ ທີ່ໄດ້ຮັບການແຕ່ງຕັ້ງຕາມລະບຽບການ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ເປັນຜູ້ພິຈາລະນາຄະດີແພ່ງຢູ່ສານ, ການພິຈາລະນາຄະດີແພ່ງ ກໍຄືຄະດີອື່ນໆ ຢູ່ສານປະຊາຊົນສູງສຸດ, ສານປະຊາຊົນພາກ, ສານປະຊາຊົນ

ແຂວງ, ນະຄອນ, ສານປະຊາຊົນເຂດ ຕ້ອງດຳເນີນເປັນໝູ່ຄະນະ ໂດຍປະກອບດ້ວຍຜູ້ພິພາກສາສາມຄົນ, ໃນນັ້ນຜູ້ໜຶ່ງເປັນປະທານ ແລະ ອີກສອງຄົນເປັນຄະນະ ເພື່ອຮັບປະກັນໃຫ້ການແກ້ໄຂຄະດີມີຄວາມຖືກຕ້ອງຕາມກົດໝາຍ ແລະ ຍຸຕິທຳ.

## 3.5. ຄວາມເປັນເອກະລາດຂອງຜູ້ພິພາກສາ

### 3.5.1. ຄວາມໝາຍ

ຄວາມເປັນເອກະລາດຂອງຜູ້ພິພາກສາ ແມ່ນການຮັບປະກັບການລົງຄຳຕັດສິນຂອງຜູ້ພິພາກສາຢ່າງພາວະວິໄສ ຕາມຂໍ້ມູນຫຼັກຖານຕົວຈິງ ແລະ ຕາມກົດໝາຍ ຊຶ່ງສະແດງອອກທີ່ຊັດເຈນ ແລະ ເດັດຂາດ ໃນເວລາໄຕ່ສວນຄະດີ ແລະ ລົງຄຳເຫັນໃນຫ້ອງປະຊຸມລັບ ໝາຍຄວາມວ່າໃນເວລາດຳເນີນຄະດີໃນຫຼັກການ ແລ້ວຜູ້ພິພາກສາກໍມີຄວາມເປັນເອກະລາດແຕ່ຄວາມເປັນເອກະລາດໃນເວລາດຳເນີນຄະດີນີ້ ບໍ່ແມ່ນປະຕິເສດບໍ່ຮັບຟັງຄຳຄິດຄຳເຫັນຂອງຜູ້ອື່ນ, ອົງການຈັດຕັ້ງ, ຫາງສຽງຂອງສັງຄົມ ແລະ ອື່ນໆ ແຕ່ຜູ້ພິພາກສາຕ້ອງຮັບເອົາຄຳຄິດຄຳເຫັນ, ຄຳຊີ້ແນະ ຫຼື ການແນະນຳຂອງທຸກຄົນ, ທຸກຝ່າຍມາເປັນຂໍ້ມູນປະກອບໃນການພິຈາລະນາຕັດສິນ ເພາະທຸກຄຳຄິດຄຳເຫັນ, ການຊີ້ແນະ, ການແນະນຳ ອາດພົວພັນ, ກ່ຽວຂ້ອງ ແລະ ມີຜົນປະໂຫຍດຕໍ່ການພິຈາລະນາຕັດສິນຄະດີ ຊຶ່ງຜູ້ພິພາກສາ ຕ້ອງຮັບເອົາມາຄັດຈ້ອນ, ກັ່ນຕອງ ແລະ ຊັ່ງຊາຕີລາຄາວ່າມີເຫດຜົນທີ່ເຊື່ອຖື ຫຼື ບໍ່ເຊື່ອຖື ຖ້າເຫັນວ່າຄຳຄິດຄຳເຫັນ, ການຊີ້ແນະ, ການແນະນຳຫາກມີເຫດມີຜົນ ກໍຕ້ອງຍອມຮັບເອົາ.

ໃນເວລາເກັບກຳຂໍ້ມູນຫຼັກຖານ ຜູ້ພິພາກສາຕ້ອງຮັບເອົາໝົດທຸກເອກະສານ, ທຸກຄຳເຫັນທີ່ສົ່ງມາຈາກພາກສ່ວນຕ່າງໆ ເພື່ອມາປະກອບເປັນຂໍ້ມູນຫຼັກຖານໃນການພິຈາລະນາ ຖ້າຄຳເຫັນນັ້ນຫາກມີເຫດຜົນກໍນຳມາພິຈາລະນາ ຖ້າຫາກບໍ່ມີເຫດ ຜົນ ຫຼື ບໍ່ສອດຄ່ອງກັບລະບຽບຫຼັກການ ຕ້ອງໄດ້ຊີ້ແຈງ, ບໍ່ໝາຍຄວາມວ່າ ຄຳເຫັນຂອງໃຜສະເໜີມາ ກໍປະຕິເສດບໍ່ຮັບເອົາ ໂດຍອ້າງວ່າຕົນເອງມີຄວາມເປັນເອກະລາດນັ້ນ ຖືເປັນການປະພຶດທີ່ບໍ່ສອດຄ່ອງກັບຫຼັກການ.

### 3.5.2. ເຫດຜົນ

ການກຳນົດຫຼັກການຄວາມເປັນເອກະລາດຂອງຜູ້ພິພາກສາ ກໍເພື່ອຮັບປະກັນສິດໃນການຕັດສິນຄະດີຂອງຜູ້ພິພາກສາຕາມຂໍ້ມູນຫຼັກຖານ ແລະ ຕາມກົດໝາຍ ເມື່ອຜູ້ພິພາກສາ ຫາກຕັດສິນຕາມຂໍ້ມູນຫຼັກຖານ ແລະ ກົດໝາຍແລ້ວ ກໍຕ້ອງຮັບປະກັນສະຖານະພາບຂອງຜູ້ພິພາກສາຕາມກົດໝາຍ.

ສານປະຊາຊົນ ໃນຖານະເປັນອົງການຕຸລາການ ເຮັດໜ້າທີ່ຕົ້ນຕໍໃນການພິຈາລະນາຕັດສິນຄະດີ ເພື່ອຮັບປະກັນຄວາມເປັນທຳຢູ່ໃນສັງຄົມ ຊຶ່ງການເຄື່ອນໄຫວພິຈາລະນາຕັດສິນຄະດີຂອງສານນັ້ນ ແມ່ນໜ້າທີ່ຄວາມຮັບຜິດຊອບໂດຍກົງຂອງຜູ້ພິພາກສາ, ດັ່ງນັ້ນ, ຖ້າຫາກມີການແຊກແຊງ, ຊີ້ນຳ ຫຼື ກົດດັນຈາກບຸກຄົນ, ອົງການຈັດຕັ້ງ ຈະພາໃຫ້ຜູ້ພິພາກສາ ບໍ່ຢຶດຖືຈັນຍາບັນ, ຈັນຍາທຳ, ມີການປະພຶດກະທຳທີ່ເຂົ້າຂ້າງອອກຂາ ຫຼື ມີອະຄະຕິ ຈະເຮັດໃຫ້ການພິຈາລະນາຕັດສິນຄະດີ ບໍ່ຖືກຕ້ອງ ແລະ ເປັນທຳ ສະນັ້ນ, ຈຶ່ງຖືວ່າຄວາມເປັນເອກະລາດຂອງຜູ້ພິພາກສາໃນການດຳເນີນຄະດີມີສ່ວນສຳຄັນທີ່ເຮັດໃຫ້ການພິຈາລະນາຄະດີມີຄວາມຖືກຕ້ອງ ແລະ ເປັນທຳ ເນື່ອງຈາກວ່າຖ້າຫາກມີການກົດດັນ, ແຊກແຊງ ຫຼື ຊີ້ນຳແລ້ວ ຜູ້ພິພາກສາ ຈະເກີດມີອະຄະຕິໃນເວລາພິຈາລະນາຕັດສິນຄະດີ ເຮັດໃຫ້ການລົງຄຳຕັດສິນ ບໍ່ໄປຕາມຂໍ້ມູນຫຼັກຖານ ແລະ ກົດໝາຍ ຊຶ່ງຈະເຮັດໃຫ້ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ ບໍ່ໄດ້ຮັບການປົກປ້ອງຈາກຄຳຕັດສິນຂອງສານ ຫຼື ກົດໝາຍ.

ການກຳນົດຫຼັກການຄວາມເປັນເອກະລາດຂອງຜູ້ພິພາກສາມີຄວາມສຳຄັນ ແລະ ຈຳເປັນ ສຳລັບການດຳເນີນຄະດີ ເນື່ອງຈາກວ່າ ຈະເປັນບ່ອນອີງ, ເປັນການຮັບປະກັນການປະຕິບັດໜ້າທີ່ຂອງຜູ້ພິພາກສາ ແລະ ເປັນຂໍ້ຫ້າມ, ແນະນຳໃຫ້ບຸກຄົນ ແລະ ການຈັດຕັ້ງອື່ນ ບໍ່ໄດ້ແຊກແຊງ ການປະຕິບັດ ໜ້າທີ່ຂອງຜູ້ພິພາກສາ ເພື່ອສ້າງຄວາມເຊື່ອໝັ້ນຂອງຄູ່ຄວາມ ແລະ ປະຊາຊົນ ຕໍ່ການປະຕິບັດໜ້າທີ່ວຽກງານຂອງຜູ້ພິພາກສາວ່າ ໄດ້ປະຕິບັດຕາມຂໍ້ມູນຫຼັກຖານ ແລະ ກົດໝາຍໃນການລົງຄຳຕັດສິນຢ່າງພາວະວິໄສ.

**3.5.3. ການນຳໃຊ້**

ຜູ້ພິພາກສາ ຕ້ອງມີຄວາມເປັນເອກະລາດໃນເວລາຕັດສິນຄະດີ ບົນພື້ນຖານຄວາມໝັ້ນໃຈຂອງຕົນຕາມຂໍ້ມູນ ຫຼັກຖານ ແລະ ກົດໝາຍ ໂດຍບໍ່ມີການແຊກແຊງ ຈາກພາຍນອກຄືບໍ່ຂຶ້ນກັບອຳນາດ ແລະອິດທິພົນ, ບໍ່ຖືພັກພວກ, ຈຸ້ມເຈື່ອເຊື້ອສາຍ ແລະ ອື່ນໆ ຈຶ່ງຈະສ້າງມາດຖານໃນການຕັດສິນຢູ່ໃນສັງຄົມໃຫ້ມີຄວາມສະເໝີພາບ, ເຮັດໃຫ້ສັງຄົມມີຄວາມຍຸຕິທຳ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ.

ໃນການພິຈາລະນາຕັດສິນຄະດີຂອງສານ, ຜູ້ພິພາກສາ ຈະບໍ່ພິກປີ້ນຄວາມເປັນຈິງຕາມຄຳສັ່ງ ຫຼື ຄຳແນະນຳຂອງບຸກຄົນໃດ, ແຕ່ຫາກຕັດສິນຕາມຄວາມເປັນຈິງທີ່ຮູ້ເຫັນ ແລະ ເຂົ້າໃຈຂອງຕົນ, ຜູ້ພິພາກສາ ຊຶ່ງນັ່ງເປັນຄະນະສານທີ່ບໍ່ເຫັນດີຕາມການຕົກລົງຂອງໝູ່ຄະນະນັ້ນ ກໍມີສິດສະເໜີຄຳຄິດ ຄຳເຫັນຂອງຕົນ ເປັນລາຍລັກອັກສອນ ກ່ຽວກັບຄະດີດັ່ງກ່າວ ເພື່ອລາຍງານໃຫ້ສານຂັ້ນເທິງຊາບ, ຄຳສະເໜີດັ່ງກ່າວ ຕ້ອງໃຫ້ເຫດຜົນຢ່າງໜັກແໜ້ນ ກ່ຽວກັບບັນຫາໃດໜຶ່ງທີ່ຕົນບໍ່ ເຫັນດີເປັນເອກະພາບນຳ ເຊັ່ນ ການຕີລາຄາຫຼັກຖານ, ການວາງມາດຕາກົດໝາຍບໍ່ຖືກຕ້ອງ ຫຼື ເຫດຜົນອື່ນໆ.

ຄວາມເປັນເອກະລາດຂອງຜູ້ພິພາກສາ ແມ່ນໃນເວລາພິຈາລະນາຄະດີເທົ່ານັ້ນ ແຕ່ໃນນາມອົງການໜຶ່ງຂອງລັດ ບໍ່ສາມາດຕັດແຍກອອກຈາກອົງການຕ່າງໆໄດ້ ໝາຍຄວາມວ່າ ໃນການເຄື່ອນໄຫວແກ້ໄຂຄະດີ ຕ້ອງມີການປະສານສົມທົບກັບບັນດາຂະແໜງການຕ່າງໆ ທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການດຳເນີນຄະດີ ຮັບປະກັນຄວາມຍຸຕິທຳ.

**ຕົວຢ່າງ:** ຂໍ້ຂັດແຍ່ງກ່ຽວກັບທີ່ດິນ ເມື່ອເຫັນວ່າຂໍ້ມູນໃດໜຶ່ງບໍ່ຈະແຈ້ງ ຫຼື ຜູ້ພິພາກສາບໍ່ສາມາດເຂົ້າໃຈຢ່າງຈະແຈ້ງກ່ຽວກັບຂໍ້ມູນທີ່ດິນ, ແຜນວາດກ່ຽວກັບທີ່ດິນ ແລະ ອື່ນໆ ຕ້ອງໄດ້ປະສານສົມທົບກັບອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນ ເພື່ອມີກອງປະຊຸມປຶກສາຫາລື, ຟັງຄຳຊີ້ແຈງຈາກພະນັກງານວິຊາການທີ່ກ່ຽວຂ້ອງ ຫຼື ລົງສົມທົບກັບອົງການປົກຄອງບ້ານ ເພື່ອກວດກາທີ່ດິນບ່ອນຂັດແຍ່ງນັ້ນ.

**3.6. ພາສາທີ່ໃຊ້ໃນການດຳເນີນຄະດີ**

**3.6.1. ຄວາມໝາຍ**

ການດຳເນີນຄະດີ ຕ້ອງນຳໃຊ້ພາສາລາວ ເພື່ອໃຫ້ຜູ້ເຂົ້າຮ່ວມໃນການດຳເນີນຄະດີໄດ້ສື່ສານ, ພົວພັນ ຊຶ່ງກັນ ແລະ ກັນ ໃຫ້ເຂົ້າໃຈກ່ຽວກັບບັນຫາທີ່ກ່ຽວຂ້ອງກັບການດຳເນີນຄະດີ.

**3.6.2. ເຫດຜົນ**

ການກຳນົດໃຫ້ພາສາລາວ ຊຶ່ງເປັນພາສາທາງການເປັນພາສາທີ່ນຳໃຊ້ເຂົ້າໃນການດຳເນີນຄະດີ ກໍເນື່ອງຈາກເອກະລັກໜຶ່ງຂອງ ສປປ ລາວ ແມ່ນພາສາລາວ ຊຶ່ງເປັນພາສາທາງການທີ່ຖືກກຳນົດໂດຍລັດຖະທຳມະນູນ ຊຶ່ງໃນການດຳເນີນຄະດີມີຫຼາຍຄົນ, ຫຼາຍຝ່າຍ ທີ່ມາຈາກຫຼາຍທ້ອງຖິ່ນ, ຫຼາຍ ເຊື້ອຊາດ, ສາສະໜາທີ່ນຳໃຊ້ພາສາໃນການປາກເວົ້າ, ຂຽນທີ່ແຕກຕ່າງກັນ ເມື່ອມາເຂົ້າຮ່ວມໃນການດຳເນີນຄະດີ ຕ່າງຝ່າຍຕ່າງກໍຕ້ອງການນຳໃຊ້ພາສາທີ່ຕົນເອງເວົ້າ, ຂຽນເປັນປະຈຳນັ້ນ ເຂົ້າໃນການດຳເນີນຄະດີ ຊຶ່ງພາໃຫ້ມີຄວາມຫຍຸ້ງຍາກໃນການສື່ສານ, ພົວພັນກັນ ຫຼື ຝ່າຍໃດຝ່າຍໜຶ່ງບໍ່ພໍໃຈ, ບໍ່ຍອມຮັບການນຳໃຊ້ພາສາດັ່ງກ່າວ ຊຶ່ງອາດພາໃຫ້ເກີດມີການໂຕ້ແຍ່ງທີ່ແຕ່ລະຝ່າຍກໍຕ້ອງການນຳໃຊ້ພາສາຂອງຕົນ ເຂົ້າໃນ ການດຳເນີນຄະດີ ສະນັ້ນ, ເພື່ອຄວາມເປັນເອກະພາບ ຕ້ອງມີພາສາທາງການທີ່ນຳໃຊ້ເປັນພາສາກາງໃນການສື່ສານ, ພົວພັນກັນກໍຄື ພາສາລາວ ເປັນພາສາທີ່ນຳໃຊ້ໃນການດຳເນີນຄະດີ ຊຶ່ງຖ້າໂຈດ, ຈຳເລີຍ ຫຼື ຜູ້ເຂົ້າຮ່ວມອື່ນ ບໍ່ສາມາດເວົ້າ, ຂຽນພາສາລາວໄດ້ ກໍໃຫ້ເວົ້າ, ຂຽນພາສາຂອງຕົນເອງນັ້ນ ແຕ່ຕ້ອງຜ່ານການແປເປັນພາສາລາວ ເພື່ອໃຫ້ຜູ້ພິພາກສາ ໄດ້ນຳມາຄົ້ນຄວ້າໃຫ້ເຂົ້າໃຈເຖິງເຫດການ, ຂໍ້ມູນຫຼັກຖານທີ່ສະເໜີຕໍ່ສານນັ້ນ, ນອກນັ້ນ ການນຳໃຊ້ພາສາລາວນີ້ ກໍເພື່ອເປັນບ່ອນອີງໃນການຮັບຮູ້ຫຼັກຖານທາງດ້ານເອກະສານທີ່ຄູ່ຄວາມຍື່ນຕໍ່ສານ ຕ້ອງແປເປັນພາສາລາວ, ຖ້າເປັນພາສາຂອງຕ່າງປະເທດທີ່ບໍ່ແປ ເປັນພາສາລາວນັ້ນ ຈະບໍ່ຖືວ່າເປັນຫຼັກຖານມານຳໃຊ້ເຂົ້າໃນການແກ້ໄຂຄະດີໄດ້.

**ຕົວຢ່າງ**: ໂຈດ ແລະ ຈຳເລີຍ ເປັນຄົນຕ່າງປະເທດ ມາດຳເນີນທຸລະກິດຢູ່ ສປປ ລາວ ເມື່ອເກີດຂໍ້ຂັດແຍ່ງກັນຂຶ້ນຈຶ່ງຮ້ອງຟ້ອງຕໍ່ສານ ໂຈດສາມາດຂຽນຄຳຮ້ອງຟ້ອງເປັນພາສາຂອງຕົນ ແຕ່ຄຳຮ້ອງຟ້ອງນັ້ນ ຕ້ອງເອົາໄປແປເປັນພາສາລາວກ່ອນ ຈຶ່ງນຳມາຍື່ນຕໍ່ສານ ແລະ ໃນເວລາໂຈດ ເຂົ້າມາໃຫ້ການຕໍ່ສານ ຫຼື ຢູ່ທີ່ປະຊຸມສານ ໂຈດກໍສາມາດເວົ້າພາສາຕົນ ແຕ່ຕ້ອງມີຜູ້ແປພາສາ ເພື່ອແປເປັນພາສາລາວ ໃຫ້ຜູ້ພິພາກສາໄດ້ເຂົ້າໃຈ.

### 3.6.3. ການນຳໃຊ້

ຢູ່ໃນທຸກຂັ້ນຕອນຂອງການດຳເນີນຄະດີ ຜູ້ເຂົ້າຮ່ວມໃນການດຳເນີນຄະດີຢູ່ສານ ເຊັ່ນ ການຂຽນຄຳຮ້ອງຟ້ອງ, ຄຳແກ້ຟ້ອງ, ການໃຫ້ການ, ການໄກ່ເກ່ຍ, ການປະຊຸມສານ, ການຂຽນຄຳຕັດສິນ ແລະ ອື່ນໆ ຕ້ອງໃຊ້ພາສາລາວ ສື່ສານພົວພັນນຳກັນລະຫວ່າງໂຈດ, ຈຳເລີຍ, ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີກັບຜູ້ພິພາກສາ ເພື່ອໃຫ້ມີຄວາມເຂົ້າໃຈຢ່າງຈະແຈ້ງກ່ຽວກັບເນື້ອໃນ, ເຫດການຂອງຄະດີ. ໃນກໍລະນີທີ່ໂຈດ, ຈຳເລີຍ ຫຼື ຜູ້ເຂົ້າຮ່ວມໃນການດຳເນີນຄະດີອື່ນ ຫາກບໍ່ຮູ້ພາສາລາວ ກໍມີສິດຂຽນ, ເວົ້າ ຫຼື ນຳໃຊ້ເອກະສານທີ່ເປັນພາສາຂອງຕົນເອງ ຫຼື ພາສາຕ່າງປະເທດອື່ນ ແຕ່ການເວົ້າ, ການຂຽນເປັນພາສາຂອງຕົນເອງ ຫຼື ພາສາຕ່າງປະເທດນັ້ນ ຕ້ອງໄດ້ຜ່ານການແປມາເປັນພາສາລາວ. ຊຶ່ງຄວາມຮັບຜິດຊອບໃນການແປພາສານັ້ນ ແມ່ນຄວາມຮັບຜິດຊອບຂອງໂຈດ ຫຼືຈຳເລີຍເອງ.

ຕົວຢ່າງ: ນັກທຸລະກິດຕ່າງປະເທດ ໄດ້ມາເຮັດທຸລະກິດຢູ່ສປປ ລາວ ເກີດມີຂໍ້ຂັດແຍ່ງເກີດຂຶ້ນເຖິງຂັ້ນມີການຮ້ອງຟ້ອງຂຶ້ນສານ, ສາມາດຂຽນຄຳຮ້ອງຟ້ອງເປັນພາສາຕົນ ແຕ່ຄຳຮ້ອງຟ້ອງທີ່ຂຽນເປັນພາສາຕົນນັ້ນ ຕ້ອງເອົາໄປແປເປັນພາສາລາວ ໂດຍມີການຢັ້ງຢືນການແປພາສາຈາກຫ້ອງການທະບຽນສານ ຫຼື ນັກທຸລະກິດຊາວຕ່າງປະເທດນັ້ນ ອາດແຕ່ງຕັ້ງທະນາຍຄວາມເພື່ອ ຕໍ່ສູ້ຄະດີຢູ່ສານ ແຕ່ເຖິງຢ່າງໃດກໍຕາມການເຂົ້າມາໃຫ້ການຕໍ່ສານ, ເຂົ້າຮ່ວມປະຊຸມສານ ກໍຕ້ອງໃຫ້ມີຜູ້ແປພາສາເປັນຜູ້ແປຈາກພາສາຕ່າງປະເທດມາເປັນພາສາລາວ ເພື່ອໃຫ້ຜູ້ພິພາກສາ, ຄະນະສານ ຫຼື ຜູ້ເຂົ້າຮ່ວມອື່ນ ໄດ້ເຂົ້າໃຈເປັນເອກະພາບກັນ.

ບັນດາເຜົ່າຕ່າງໆ ທີ່ຢູ່ພາຍໃນປະເທດ ທີ່ບໍ່ສາມາດສື່ສານ, ເຂົ້າໃຈ ພາສາທາງການຂອງສປປ ລາວ ໄດ້ຢ່າງເລິກເຊິ່ງກໍສາມາດເວົ້າພາສາເຜົ່າຂອງຕົນເອງໄດ້ ໂດຍໃຫ້ມີຜູ້ແປພາສາຈາກພາສາເຜົ່າມາເປັນພາສາທາງການ.

ການແຕ່ງຕັ້ງຜູ້ແປພາສາໃນຫຼັກການຕ້ອງແມ່ນສານເປັນຜູ້ແຕ່ງຕັ້ງຕາມການສະເໜີຂອງຄູ່ຄວາມສະເໜີມາ ຫຼືຕາມຄຳເຫັນຂອງສານ ຖ້າຫາກຜູ້ແປພາສານັ້ນຫາກມີພຶດຕິກຳທີ່ບໍ່ເໝາະສົມດ້ວຍປະການໃດກໍຕາມ ໂຈດ ຫຼືຈຳເລີຍ ຝ່າຍກົງກັນຂ້າມມີສິດສະເໜີຄ້ານຕົວໄດ້ຕາມລະບຽບການຄ້ານຕົວ.

## 3.7. ການໄຕ່ສວນຄະດີໃນທີ່ປະຊຸມສານ

### 3.7.1. ຄວາມໝາຍ

ການໄຕ່ສວນຄະດີໃນທີ່ປະຊຸມສານ ແມ່ນການເກັບກຳ, ກວດກາຂໍ້ມູນຫຼັກຖານຂັ້ນສຸດທ້າຍຂອງຄະນະສານຕັດສິນໃນຫ້ອງປະຊຸມສານ ຊຶ່ງເຮັດດ້ວຍການຊັກຖາມ, ການຟັງ ຫຼື ສະເໜີຂອງຜູ້ເຂົ້າຮ່ວມໃນທີ່ປະຊຸມສານຢ່າງເປີດເຜີຍ ຫຼື ປິດລັບ ແລ້ວແຕ່ລະກໍລະນີຕາມທີ່ກຳນົດໄວ້ໃນກົດໝາຍ.

### 3.7.2. ເຫດຜົນ

ການໄຕ່ສວນຄະດີໃນທີ່ປະຊຸມສານກໍແມ່ນຂັ້ນໜຶ່ງທີ່ມີຄວາມສຳຄັນຕໍ່ຄູ່ຄວາມ ແລະ ບຸກຄົນ ອື່ນໆທີ່ກ່ຽວຂ້ອງໃນຄະດີ ແລະຄະນະສານຕັດສິນ. ການດຳເນີນຄະດີແຕ່ລະຄັ້ງຕ້ອງເຮັດຢ່າງເປີດເຜີຍ ເວັ້ນເສັຍແຕ່ກໍລະນີ ທີ່ຄະດີຫາກກ່ຽວຂ້ອງກັບຄວາມລັບຂອງລັດ ຫຼື ຂອງສັງຄົມເປັນຕົ້ນ ສາຍພົວພັນຄອບຄົວ ທີ່ແຕະຕ້ອງເຖິງຊີວິດສ່ວນຕົວຂອງຜົວ ຫຼື ເມັຍ, ຄະດີເດັກ ຊຶ່ງຕ້ອງດຳເນີນຢ່າງປິດລັບ.

ການດຳເນີນຄະດີຢ່າງເປີດເຜີຍ ກໍເພື່ອເປີດໂອກາດໃຫ້ຄູ່ຄວາມ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງໃນຄະດີນຳໃຊ້ສິດຂອງຕົນໃນການຕໍ່ສູ້ຄະດີ ໂດຍຕ່າງຝ່າຍຕ່າງກໍຍົກເອົາຂໍ້ມູນຫຼັກຖານທາງດ້ານວັດຖຸ, ເອກະສານ,ພະຍານບຸກຄົນ ເພື່ອສະເໜີຕໍ່ຄະນະສານຕັດສິນ ເປັນບ່ອນອີງໃນການພິຈາລະນາຕັດສິນ. ການດຳເນີນກໍຍັງມີບາງຄະດີທີ່ຈະຕ້ອງໄດ້ເຮັດຢ່າງ

ປິດລັບ ເຊັ່ນ ຄະດີທາກກ່ຽວຂ້ອງກັບຄວາມລັບຂອງລັດ ຫຼື ຂອງສັງ ຄົມເປັນຕົ້ນ ສາຍພົວພັນຄອບຄົວ ທີ່ແຕະຕ້ອງເຖິງຊີວິດ, ສຸຂະພາບຂອງຜົວ ຫຼື ເມຍ ເຊັ່ນ ຄະດີການຂໍຢ່າຮ້າງ ໂດຍສະເພາະ ຜູ້ເປັນຜົວຂໍຢ່າຮ້າງກັບເມຍ ຍ້ອນເມຍເປັນພະຍາດ ຊຶ່ງເປັນອັນຕະລາຍຮ້າຍແຮງ ທີ່ບໍ່ສາມາດຢູ່ຮ່ວມກັນໄດ້ ຫຼື ມີການຮ່ວມປະເວນີທາງເພດ ແລະ ຄະດີອື່ນ ນອກນີ້ຍັງມີຄະດີເດັກທີ່ບໍ່ສາມາດດໍາເນີນດ້ວຍຄວາມເປີດເຜີຍໄດ້, ຈໍາເປັນຕ້ອງໄດ້ດໍາເນີນຢ່າງປິດລັບ, ແຕ່ການອ່ານ ຫຼື ການປະກາດຄໍາຕັດສິນຂອງສານຕ້ອງເຮັດຢ່າງເປີດເຜີຍ.

**3.7.3. ການນໍາໃຊ້**

ການໄຕ່ສວນຄະດີໃນທີ່ປະຊຸມສານ ແມ່ນເພື່ອເປີດໂອກາດໃຫ້ຄູ່ຄວາມ ແລະ ບຸກຄົນອື່ນ ທີ່ມີສ່ວນກ່ຽວຂ້ອງໃນຄະດີ, ມີສິດໃນການອອກຄໍາຄິດຄໍາເຫັນເພື່ອໂຕ້ຖຽງກັນດ້ວຍເຫດຜົນ ພ້ອມທັງສະເໜີຂໍ້ມູນຫຼັກຖານຕ່າງໆ ເພື່ອໃຫ້ຄະນະສານຕັດສິນພິຈາລະນາ, ຊັ່ງຊາຕີລາຄາຫຼັກຖານພ້ອມທັງກໍານົດເຫດການຂອງຄະດີ ວ່າຫຼັກຖານໃດ ຖືກຕ້ອງກັບຄວາມເປັນຈິງ ແລະ ກົດໝາຍ, ການໄຕ່ສວນຄະດີຕ້ອງເຮັດຢ່າງເປີດເຜີຍ ຫຼື ປິດລັບບາງກໍລະນີ ແຕ່ຕ້ອງເຮັດຢ່າງຕໍ່ເນື່ອງກັນເປັນແຕ່ລະຄະດີ ໂດຍບໍ່ມີການສັບປ່ຽນຄະນະສານຕັດສິນ, ຖ້າຫາກມີການສັບປ່ຽນຄະນະສານຕັດສິນຜູ້ໃດໜຶ່ງ ຫຼື ທັງໝົດນັ້ນ ຈະຕ້ອງໄດ້ດໍາເນີນການໄຕ່ສວນຄືນໃໝ່, ປະທານຄະນະສານຕັດສິນ ມີໜ້າທີ່ນໍາພາການໄຕ່ສວນຄະດີຢ່າງເປັນກາງໃນທີ່ປະຊຸມສານ; ການໄຕ່ສວນຄະດີອາດຈະຖືກເລື່ອນ ຫຼື ໂຈະ ໃນກໍລະນີທີ່ໂຈດ, ຈໍາເລີຍ, ບຸກຄົນທີສາມ, ທະນາຍຄວາມ ຫຼື ຜູ້ປົກປ້ອງຂອງຄູ່ຄວາມ ແລະ ບຸກຄົນອື່ນໆ ທີ່ກ່ຽວຂ້ອງໃນຄະດີບໍ່ສາມາດເຂົ້າຮ່ວມປະຊຸມສານໂດຍມີເຫດຜົນ, ຖ້າບໍ່ມີເຫດຜົນສານສາມາດຕັດສິນລັບຫຼັງ ຫຼື ຊັດມ້ຽນຄະດີໄວ້ຕາມແຕ່ກໍລະນີ, ການໄຕ່ສວນຄະດີຍັງມີຂັ້ນຕອນປິດປະຊຸມສານຊົ່ວຄາວ ເພື່ອຮ່າງຄໍາຕັດສິນແລ້ວອອກມາອ່ານຄໍາຕັດສິນຈາກນັ້ນຈຶ່ງກ່າວປິດປະຊຸມສານ.

**3.8. ການບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນການພິຈາລະນາຄະດີດຽວກັນ**

**3.8.1. ຄວາມໝາຍ**

ການບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນການພິຈາລະນາຄະດີດຽວກັນອີກນັ້ນ ແມ່ນໝາຍເຖິງຜູ້ພິພາກສາໃດທີ່ເຄີຍເຂົ້າຮ່ວມເປັນຄະນະສານຕັດສິນຄະດີໃດໜຶ່ງມາແລ້ວ ແມ່ນຈະບໍ່ອະນຸຍາດໃຫ້ເຂົ້າຮ່ວມພິຈາລະນາຄະດີດຽວກັນເປັນຄັ້ງທີສອງອີກ ບໍ່ວ່າຈະຢູ່ສານຂັ້ນໃດກໍຕາມ, ເຖິງວ່າສານຂັ້ນອຸທອນ,ສານຂັ້ນລົບລ້າງ ຫຼືຂັ້ນຮື້ຟື້ນຄະດີ ຈະສະເໜີໃຫ້ສານຂັ້ນນັ້ນພິຈາລະນາຕັດສິນຄືນໃໝ່ກໍຕາມ, ຖ້າຍັງເຂົ້າຮ່ວມພິຈາລະນາຕັດສິນຄະດີດຽວຄືນອີກກໍຖືວ່າເປັນການພິຈາລະນາບັນຫາເກົ່າຈະບໍ່ຮັບປະກັນຄວາມຖືກຕ້ອງ, ເປັນທໍາ ເນື່ອງຈາກວ່າຜູ້ກ່ຽວເຄີຍພິຈາລະນາບັນຫາດັ່ງກ່າວນັ້ນແລ້ວ ມັກຈະປົກປ້ອງຄໍາເຫັນ ຫຼື ການຕັດສິນຂອງຕົນຜ່ານມາ.

**3.8.2. ເຫດຜົນ**

ການທີ່ບໍ່ໃຫ້ຜູ້ພິພາກສາມາພິຈາລະນາຄະດີດຽວເປັນຄັ້ງທີສອງກໍເພື່ອຮັບປະກັນການພິຈາລະນາຄະດີສາມຂັ້ນຄືໃຫ້ສານຂັ້ນອຸທອນໄດ້ກວດກາການດໍາເນີນຄະດີຂອງສານຂັ້ນຕົ້ນ ແລະ ສານຂັ້ນລົບລ້າງກວດກາການດໍາເນີນຄະດີຂອງສານຂັ້ນອຸທອນ ຕາມລະບຽບການໂດຍແມ່ນຜູ້ພິພາກສາສາມທ່ານທີ່ບໍ່ແມ່ນຜູ້ພິພາກສາຜູ້ດຽວກັນ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ຍຸຕິທໍາ ຖ້າຫາກໃຫ້ຜູ້ພິພາກສາ ທີ່ພິຈາລະນາຕັດສິນຄະດີນັ້ນເທື່ອໜຶ່ງແລ້ວ ຫາກມາໃຫ້ພິຈາລະນາບັນຫາດັ່ງ ກ່າວອີກ ອາດຈະບໍ່ຮັບປະກັນພິຈາລະນາສາມຂັ້ນ ຫຼື ອາດຈະບໍ່ມີຄວາມຍຸຕິທໍາ ເນື່ອງຈາກວ່າຜູ້ພິພາກສາຜູ້ເກົ່າໄດ້ຄົ້ນຄວ້າ ແລະ ພິຈາລະນາບັນຫາດັ່ງກ່າວໄປແລ້ວອາດຈະປົກປ້ອງຄໍາເຫັນຂອງຕົນທີ່ຜ່ານມາ ຊຶ່ງຈະພາໃຫ້ຍັ້ງຢືນເອົາຕາມຄໍາຕັດສິນທີ່ຜ່ານມາ ເນື່ອງຈາກວ່າຜູ້ພິພາກສາທີ່ເຄີຍ ເຂົ້າຮ່ວມໃນການພິຈາລະນາຄະດີໃດໜຶ່ງມາແລ້ວ ຈະມາຄົ້ນຄວ້າພິຈາລະນາບັນຫາເກົ່າ, ຂໍ້ມູນຫຼັກຖານເກົ່າ. ນອກນັ້ນໃນກໍລະນີສົ່ງສໍານວນຄະດີຄືນມາໃຫ້ສານຂັ້ນລຸ່ມພິຈາລະນາຄືນໃໝ່ນັ້ນ ບາງກໍລະນີອາດບໍ່ໃຫ້ຜູ້ພິພາກສາຜູ້ເກົ່າພິຈາລະນາອາດເນື່ອງຈາກວ່າຜູ້ພິພາກສານັ້ນເປັນຍາດຕິພີ່ນ້ອງ, ຮັກແພງ ຫຼື ມີຜົນປະໂຫຍດກັບຄູ່ຄວາມຝ່າຍໃດໜຶ່ງ ຈຶ່ງອາດບໍ່ໃຫ້ຄວາມເປັນທໍາແກ່ຄູ່

ຄວາມຝ່າຍໃດໜຶ່ງອີກ ມີແຕ່ຈະເຮັດໃຫ້ການຕັດສິນມີຄວາມຜິດພາດບໍ່ເປັນທຳ, ນອກນັ້ນຍັງຈະເຮັດໃຫ້ຄວາມເຊື່ອຖືຂອງຄົນໃນສັງຄົມຕໍ່ອົງ ການຕຸລາການຫຼຸດໜ້ອຍຖອຍລົງ.

**3.8.3. ການນຳໃຊ້**

ຜູ້ພິພາກສາ ທີ່ໄດ້ເຂົ້າຮ່ວມໃນການພິຈາລະນາຄະດີໃດໜຶ່ງແລ້ວ ຈະບໍ່ອະນຸຍາດໃຫ້ເຂົ້າຮ່ວມພິຈາລະນາຄະດີນັ້ນເປັນຄັ້ງທີສອງອີກ ບໍ່ວ່າຢູ່ສານຂັ້ນໃດກໍຕາມ, ທັງນີ້ ກໍເພື່ອຮັບປະກັນຄວາມຍຸຕິທຳ ໃຫ້ຄູ່ຄວາມແຕ່ລະຝ່າຍ, ຖ້າຍັງເຂົ້າຮ່ວມພິຈາລະນາຕື່ມອີກກໍເປັນການພິຈາລະນາແຕ່ບັນຫາເກົ່າຄືກັບສານຂັ້ນຕົ້ນອີກ, ເພາະວ່າແນວຄວາມຄິດຍັງຈະຢັ້ງຢືນເອົາຂໍ້ມູນຫຼັກຖານອັນເກົ່າເພາະເຄີຍໄດ້ພິຈາລະນາຕັດສິນມາຄັ້ງໜຶ່ງແລ້ວ ຍົກເວັ້ນແຕ່ມີຄຳພິພາກສາຂອງສານຂັ້ນເທິງ ຫຼື ກົດໝາຍໄດ້ກຳນົດໄວ້ໃຫ້ຄະນະເກົ່າພິຈາລະນາຕັດສິນເທົ່ານັ້ນ.

**3.9. ການດຳເນີນຄະດີຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ**

**3.9.1. ຄວາມໝາຍ**

1) ການດຳເນີນຄະດີຢ່າງຮອບດ້ານໝາຍເຖິງການດຳເນີນຄະດີຕ້ອງພິຈາລະນາທຸກຫຼັກຖານທີ່ໂຈດຮ້ອງຟ້ອງ, ຈຳເລີຍແກ້ຟ້ອງລວມທັງຫຼັກຖານຂອງບຸກຄົນທີສາມ ໝາຍຄວາມວ່າຜູ້ພິພາກສາຕ້ອງ ຈຳແນກວ່າຫຼັກຖານໃດທີ່ເປັນຜົນປະໂຫຍດແກ່ໂຈດ ຫຼື ແກ່ຈຳເລີຍ, ຫຼັກຖານໃດເປັນຫຼັກຖານຕົ້ນຕໍ ແລະຫຼັກຖານໃດເປັນຫຼັກຖານສຳຮອງ ເພື່ອປຽບທຽບ, ຊັ່ງຊາຕີລາຄາ ບົນພື້ນຖານເຫດ ແລະຜົນ, ຫຼີກລ່ຽງການນຳເອົາຫຼັກຖານດ້ານໃດດ້ານໜຶ່ງ ມາຄົ້ນຄວ້າພິຈາລະນາ ໂດຍບໍ່ເບິ່ງຫຼັກຖານ ດ້ານອື່ນ ຫຼື ຫຼັກຖານຂອງຝ່າຍອື່ນ; ເມື່ອຍົກເອົາຫຼັກຖານທັງສອງດ້ານມາເປັນບ່ອນອີງໃນການພິຈາລະນາແກ້ໄຂປະເດັນຂັດແຍ່ງແລ້ວພວກເຮົາຈະເຫັນວ່າຫຼັກຖານໃດມີຄວາມກ່ຽວຂ້ອງ, ຫຼັກຖານໃດບໍ່ກ່ຽວຂ້ອງກັບປະເດັນຂັດແຍ່ງໃນຄະດີ, ຫຼັກຖານດ້ານໃດເປັນທີ່ໜ້າເຊື່ອຖື ເພື່ອເປັນບ່ອນອີງໃນການຕັດສິນ;
2) ການດຳເນີນຄະດີຢ່າງຄົບຖ້ວນ ໝາຍເຖິງການເກັບຂໍ້ມູນຫຼັກຖານຂອງສານທັງໝົດທີ່ກ່ຽວຂ້ອງກັບເຫດການຂອງຄະດີ ໝາຍຄວາມວ່າ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມຕ້ອງນຳເອົາຫຼັກຖານມາສະເໜີ ຫຼື ປະກອບໃຫ້ສານ ຢ່າງຄົບຖ້ວນ ແລະພຽງພໍ ເພື່ອເປັນພື້ນຖານ ແລະ ສະໜັບສະໜູນໃຫ້ແກ່ການຮ້ອງຟ້ອງ, ແກ້ຟ້ອງ ຫຼື ຟ້ອງແຍ່ງຂອງຕົນ, ນອກນັ້ນ ໃນບັນຫາທີ່ຄູ່ຄວາມ ຫຼື ບຸກຄົນທີສາມນຳມາສະເໜີ ຫຼື ປະກອບໃຫ້ສານບໍ່ໄດ້ຜູ້ພິພາກສາຈະເກັບກຳຂໍ້ມູນ, ຫຼັກຖານ, ສອບຖາມພະຍານ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ; ຖ້າມີຄວາມຈຳເປັນກໍຕ້ອງໄດ້ຂໍຄຳເຫັນ ຈາກສາຍຕັ້ງສາຍຂວາງ ແລະ ພະແນກການຕ່າງໆ ເພື່ອໃຫ້ໄດ້ຂໍ້ມູນຫຼັກຖານມາຢ່າງຄົບຖ້ວນທີ່ສຸດ ແນໃສ່ເຮັດໃຫ້ເຫດການຂອງຄະດີແຈ້ງຂາວ;
3) ການດຳເນີນຄະດີ ຢ່າງພາວະວິໄສ ໝາຍເຖິງການດຳເນີນຄະດີຕ້ອງປະຕິບັດຕາມຂໍ້ມູນຫຼັກຖານ, ກົດໝາຍ ແລະ ຄວາມຍຸຕິທຳ ໝາຍຄວາມວ່າການຕັດສິນຂອງຄະນະສານ ຕ້ອງປະຕິບັດຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະກົດໝາຍ ບົນພື້ນຖານຂອງຂໍ້ມູນຫຼັກຖານ ແລະ ຂອບເຂດຂອງກົດໝາຍກຳນົດໄວ້ ຊຶ່ງການຕັດສິນວ່າຫຼັກຖານໃດເຊື່ອຖືຫຼືບໍ່ເຊື່ອຖືນັ້ນສານຕ້ອງໄດ້ວິນິໄສຢ່າງຈະແຈ້ງໃນຄຳຕັດສິນ ເພື່ອໃຫ້ຄູ່ຄວາມແລະສັງຄົມໄດ້ເຂົ້າໃຈເຖິງເຫດ ແລະ ຜົນໃນການຕັດສິນຂອງສານວ່າມີຄວາມຖືກຕ້ອງ ແລະ ຍຸຕິທຳບົນພື້ນຖານຂໍ້ມູນຫຼັກຖານ ແລະ ກົດໝາຍປາສະຈາກການແຊກແຊງຈາກພາຍນອກ ຫຼື ການລຳອຽງ ຫຼື ອັດຕະວິໄສຂອງຄະນະສານຕັດສິນ.

**3.9.2. ເຫດຜົນ**

1) ການດຳເນີນຄະດີຢ່າງຮອບດ້ານ ກໍເພື່ອຮັບປະກັນການພິຈາລະນາຕັດສິນຂອງຄະນະສານຕັດສິນ ໃຫ້ມີຄວາມຖືກຕ້ອງ, ເປັນທຳ ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ ເນື່ອງຈາກວ່າ ຖ້າຫາກຄະນະສານຕັດສິນ ພິຈາລະນາແຕ່ຫຼັກຖານດ້ານໃດດ້ານໜຶ່ງ ຫຼື ຂອງຝ່າຍໃດຝ່າຍໜຶ່ງກໍຈະ

ເຮັດໃຫ້ເຫັນບັນຫາແຕ່ດ້ານດຽວເທົ່ານັ້ນ ແລະກໍຈະຕັດສິນຕາມນັ້ນ ແຕ່ຖ້າຫາກຜູ້ພິພາກສາພິຈາລະນາຫຼັກຖານທັງສອງດ້ານຫຼື ຫຼັກຖານຂອງໂຈດ ແລະ ຈໍາເລີຍແລ້ວຈະເຫັນຄວາມເປັນຈິງ ແລະ ຕັດສິນຕາມຄວາມເປັນຈິງຂອງຄະດີ;

2) ການດໍາເນີນຄະດີຢ່າງຄົບຖ້ວນ ກໍເພື່ອເຮັດໃຫ້ທຸກຂໍ້ມູນຫຼັກຖານທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ ຫຼື ເຫດການຂອງຄະດີໄດ້ຖືກນໍາມາພິຈາລະນາກໍານົດເຫດການຂອງຄະດີໃຫ້ມີຄວາມຈະແຈ້ງ ໃຫ້ການຕັດສິນຄະດີມີຄວາມຖືກຕ້ອງ ແຕ່ເຖິງຢ່າງໃດກໍຕາມຍ້ອນສະຕິກົດໝາຍ ແລະ ຄວາມຮູ້ທາງດ້ານກົດໝາຍຂອງປະຊາຊົນຍັງບໍ່ທັນສູງ ຜູ້ພິພາກສາ ຈຶ່ງມີສ່ວນຮ່ວມໃນການສອບສວນ ແລະ ເກັບກໍາຂໍ້ມູນຫຼັກຖານໃນບາງກໍລະນີທີ່ຈໍາເປັນຕາມທີ່ກໍານົດໄວ້ໃນກົດໝາຍທີ່ວ່າ ຖ້າວ່າຫຼັກຖານທີ່ໂຈດ ຫຼື ຈໍາເລີຍສະເໜີນັ້ນ ຫາກບໍ່ພຽງພໍ ແລ້ວຜູ້ພິພາກສາ ກໍຈະແນະນໍາໃຫ້ຄູ່ຄວາມຊອກຫາຫຼັກຖານເພີ່ມເຕີມ ຫຼື ຜູ້ພິພາກສາ ຈະເກັບກໍາຫຼັກຖານຈາກຮາກຖານ ຫຼື ຕາມການສະເໜີຂອງໂຈດ ຫຼື ຈໍາເລີຍ ກໍໄດ້;

3) ການດໍາເນີນຄະດີຢ່າງພາວະວິໄສ ກໍເພື່ອຮັບປະກັນການດໍາເນີນຄະດີຕ້ອງບົນພື້ນຖານຂໍ້ມູນຫຼັກຖານທີ່ເກັບກໍາມາ ແລະ ບ່ອນອີງທາງດ້ານກົດໝາຍ ຮັບປະກັນໃຫ້ການຕັດສິນຄະດີມີຄວາມຖືກຕ້ອງ ແລະ ຍຸຕິທໍາແກ່ຄູ່ຄວາມແຕ່ລະຝ່າຍ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຫຼີກເວັ້ນການເຂົ້າຂ້າງອອກຂາ ເພື່ອຫາຜົນປະໂຫຍດ ຊຶ່ງຈະພາໃຫ້ການດໍາເນີນຄະດີບໍ່ຖືກຕ້ອງ ແລະ ເປັນທໍາ.

### 3.9.3. ການນໍາໃຊ້

ສານຕ້ອງນໍາໃຊ້ບັນດາມາດຕະການທີ່ໄດ້ກໍານົດໄວ້ໃນກົດໝາຍ ເພື່ອໃຫ້ການເກັບກໍາຂໍ້ມູນຫຼັກຖານທີ່ກ່ຽວຂ້ອງກັບຄະດີ ໃຫ້ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ແນໃສ່ເຮັດໃຫ້ການກໍານົດເຫດການ, ປະເດັນຂັດແຍ່ງໃນຄະດີມີຄວາມແຈ້ງຂາວ, ຊັດເຈນ ຮັບປະກັນໃຫ້ການຕັດສິນມີຄວາມຖືກຕ້ອງ ແລະ ຍຸຕິທໍາ. ສານຕ້ອງແຈ້ງສິດ ແລະ ພັນທະຂອງຄູ່ຄວາມໃນການຕໍ່ສູ້ຄະດີ ແລະ ປະກອບຫຼັກຖານຕໍ່ສານ, ແນະນໍາໃຫ້ຄູ່ຄວາມປະຕິບັດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ການປະກອບຫຼັກຖານໃນຄະດີ ໂດຍພື້ນຖານແລ້ວ ແມ່ນຄູ່ຄວາມເປັນຜູ້ມີພັນທະ ແລະ ຄວາມຮັບຜິດຊອບໃນການປະກອບຫຼັກຖານທີ່ກ່ຽວຂ້ອງກັບການຮ້ອງຟ້ອງ ຫຼື ແກ້ຟ້ອງຕໍ່ສານ ຊຶ່ງກົດໝາຍໄດ້ກໍານົດວ່າ " ຄູ່ຄວາມແຕ່ລະຝ່າຍມີພັນທະສະເໜີ ແລະ ປະກອບຫຼັກຖານໃນຄະດີ, ໂຈດມີພັນທະສະເໜີຫຼັກຖານທຸກຢ່າງ ເພື່ອຢັ້ງຢືນເຫດການ ຊຶ່ງເປັນພື້ນຖານໃຫ້ແກ່ຄໍາຮ້ອງຟ້ອງຂອງຕົນ, ຈໍາເລີຍມີພັນທະສະເໜີຫຼັກຖານທຸກຢ່າງເພື່ອຢັ້ງຢືນເຫດການຊຶ່ງເປັນພື້ນຖານໃຫ້ແກ່ຄໍາແກ້ຟ້ອງ ຫຼື ຄໍາຟ້ອງແຍ່ງຂອງຕົນ".

ສະຫຼຸບແລ້ວ ການດໍາເນີນຄະດີຢ່າງຄົບຖ້ວນ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ແມ່ນມີຂຶ້ນທຸກບາດກ້າວຂອງການດໍາເນີນຄະດີ ແຕ່ມີການແບ່ງຄວາມຮັບຜິດຊອບ ແລະ ຂັ້ນຕອນຢ່າງລະອຽດ ແລະ ຈະແຈ້ງ ສະນັ້ນ ຜູ້ພິພາກສາທີ່ດໍາເນີນຄະດີຕ້ອງນໍາໃຊ້ແຕ່ລະຫຼັກການຢ່າງຖືກຕ້ອງຕາມຂັ້ນຕອນ ແລະ ກະກຽມປະເດັນ ແລະ ກໍານົດແບບແຜນວິທີເຮັດວຽກຢ່າງລະອຽດ ເພື່ອໃຫ້ໄດ້ຂໍ້ມູນຫຼັກຖານຢ່າງຄົບຖ້ວນ ແລ້ວນໍາມາຄົ້ນຄວ້າຢ່າງຮອບດ້ານກ່ອນຕັດສິນຢ່າງພາວະວິໄສ.

## 3.10. ການໄກ່ເກ່ຍ

### 3.10.1. ຄວາມໝາຍ

ການໄກ່ເກ່ຍແມ່ນການລະດົມ, ຊຸກຍູ້ຄູ່ຄວາມໃຫ້ມີຄວາມເຂົ້າໃຈກັນ, ຫັນໜ້າເຂົ້າຕໍ່ລອງກັນ, ປະນີປະນອມ, ຜ່ອນຜັນ ແລະຕົກລົງກັນໂດຍດີ.

ການໄກ່ເກ່ຍ ເປັນຂັ້ນຕອນໜຶ່ງ ທີ່ສໍາຄັນຫຼາຍໃນຂະບວນການດໍາເນີນຄະດີແພ່ງ ລວມທັງການໄກ່ເກ່ຍຢູ່ນອກສານ, ການໄກ່ເກ່ຍແມ່ນຖືກນໍາໃຊ້ໃນທຸກຂັ້ນຕອນການດໍາເນີນຄະດີຂອງສານທຸກຂັ້ນ.

**3.10.2. ເຫດຜົນ**

ການໄກ່ເກ່ຍກໍແມ່ນເຫດຜົນໜຶ່ງທີ່ເຮັດໃຫ້ຄະດີ ຖືກແກ້ໄຂຢ່າງວ່ອງໄວ ແລະ ບໍ່ແກ່ຍາວເວລາພ້ອມທັງເຮັດໃຫ້ຄະດີຫຼຸດໜ້ອຍຖອຍລົງ, ເຮັດໃຫ້ສັງຄົມມີຄວາມສະຫງົບ ປາສະຈາກການຈົ່ມວ່າ ໃສ່ຮ້າຍປ້າຍສີຕໍ່ຂະບວນການຍຸຕິທຳເວົ້າລວມ, ເວົ້າສະເພາະກໍຄື ສານປະຊາຊົນທີ່ມີສິດອຳນາດແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນໃນສັງຄົມ ພ້ອມທັງເຮັດໃຫ້ຄູ່ຄວາມຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດຢ່າງຍຸຕິທຳ ແລະ ການໄກ່ເກ່ຍສາມາດເຮັດໃຫ້ຄູ່ຄວາມມີຜົນດີຫຼາຍດ້ານ ເຊັ່ນ:

1) ມີຜົນປະໂຫຍດໃຫ້ແກ່ຄູ່ຄວາມທັງສອງຝ່າຍ ເພາະແຕ່ລະຝ່າຍເປັນຜູ້ຊະນະຄະດີທັງໝົດບໍ່ມີຜູ້ໃດເສຍຄະດີ ຈຶ່ງເຮັດໃຫ້ຄູ່ຄວາມໃນຄະດີບໍ່ຄຽດຊັງກັນ;
2) ຫຼຸດຜ່ອນການເກັບກຳຂໍ້ມູນຫຼັກຖານ ແລະ ການພິສູດຂໍ້ຂັດແຍ່ງຂອງຜູ້ພິພາກສາ;
3) ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍດີ;
4) ຄູ່ຄວາມບໍ່ເສັຍເວລາໃນການດຳເນີນຄະດີໃນຫຼາຍຂັ້ນ ສາມາດຕົກລົງກັນໄດ້ ແລະ ນຳໃຊ້ຊັບສິ່ງຂອງທີ່ຂັດແຍ່ງກັນນັ້ນໄດ້ນຳໄປນຳໃຊ້ເຂົ້າໃນການພັດທະນາເສດຖະກິດຄອບຄົວ ທັງເປັນການປະຢັດຄ່າໃຊ້ຈ່າຍໃນການດຳເນີນຄະດີ.

ການໄກ່ເກ່ຍ ເປັນການປະນີປະນອມ ແລະ ການຕົກລົງດ້ວຍການຕັດສິນໃຈຂອງຄູ່ຄວາມເອງ ຊຶ່ງໃນການໄກ່ເກ່ຍນັ້ນ ແມ່ນການຕັດສິນໃຈຊີ້ຂາດຂອງໂຈດ ແລະ ຈຳເລີຍເອງ, ສະນັ້ນ ຕ້ອງເຄົາລົບການຕັດສິນໃຈຂອງຄູ່ຄວາມ ເພາະຄູ່ຄວາມສາມາດຕັດສິນໃຈເປັນສິດສ່ວນຕົວທີ່ຈະຊີ້ຂາດຕໍ່ກຳມະສິດສ່ວນຕົວຂອງຄູ່ຄວາມເອງ ຊຶ່ງແຕກຕ່າງຈາກການຕັດສິນຂອງສານ ທີ່ບໍ່ແມ່ນການຍິນຍອມຂອງຄູ່ຄວາມແຕ່ຄະນະສານຕັດສິນໃຊ້ອຳນາດລັດໃນການຕັດສິນບັງຄັບຄູ່ຄວາມປະຕິບັດ ຈຶ່ງຕ້ອງແຕະຕ້ອງເຖິງສິດຜົນປະໂຫຍດຂອງຄູ່ຄວາມ ໝາຍຄວາມວ່າມີຝ່າຍໃດຝ່າຍໜຶ່ງເສັຍຄະດີ ແລະ ຝ່າຍໜຶ່ງຊະນະຄະດີ ຊຶ່ງຕ່າງຈາກການໄກ່ເກ່ຍທີ່ຄູ່ຄວາມແຕ່ລະຝ່າຍລ້ວນແຕ່ເປັນຜູ້ຊະນະຄະດີ.

**3.10.3. ການນຳໃຊ້**

ການໄກ່ເກ່ຍຄູ່ຄວາມແມ່ນຂັ້ນຕອນພິເສດຂອງການດຳເນີນຄະດີແພ່ງເພາະຂັ້ນຕອນດັ່ງກ່າວຈະມີຂຶ້ນໃນທຸກບາດກ້າວຂອງການດຳເນີນຄະດີນັບແຕ່ມີຂໍ້ຂັດແຍ່ງເກີດຂຶ້ນຄູ່ຄວາມກໍສາມາດຕົກລົງໄກ່ເກ່ຍກັນລະຫວ່າງຄູ່ກໍລະນີ ຖ້າຕົກລົງບໍ່ໄດ້ກໍສາມາດນຳໄປຢູ່ອົງການທີ່ກ່ຽວຂ້ອງ ເຊັ່ນ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ, ສູນແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ, ອົງການຈັດຕັ້ງກຳມະບານ ແລະອື່ນໆ ຊຶ່ງເປັນການໄກ່ເກ່ຍນອກສານ. ເຖິງຢ່າງໃດກໍຕາມເມື່ອຂໍ້ຂັດແຍ່ງ ຫຼື ຄະດີນັ້ນ ຫາກຄູ່ຄວາມຍື່ນຄຳຮ້ອງຟ້ອງຕໍ່ສານ, ສານກໍສາມາດໄກ່ເກ່ຍໄດ້ໃນທຸກຂັ້ນຕອນການດຳເນີນຄະດີຢູ່ສານ ນັບແຕ່ມື້ຄູ່ຄວາມໄດ້ຍື່ນຄຳຮ້ອງຟ້ອງຕໍ່ສານ ຈົນເຖິງຂັ້ນຕອນການປິດການໂຕ້ຖຽງໃນທີ່ປະຊຸມສານ. ນອກນັ້ນ ພາຍຫຼັງສານໄດ້ລົງຄຳຕັດສິນແລ້ວ ຄູ່ຄວາມກໍສາມາດໄກ່ເກ່ຍປະນີປະນອມກັນໄດ້ໃນເວລາປະຕິບັດຄຳຕັດສິນຂອງສານ.

ແຕ່ການຕົກລົງກັນຂອງຄູ່ຄວາມໃນຄະດີຢູ່ສານ ຈະມີຜົນສັກສິດ ແລະ ຜົນສະທ້ອນຕໍ່ຄູ່ຄວາມ ໃນຄະດີ ແລະ ສານດັ່ງນີ້:

1) ສານອອກຄຳສັ່ງ ໃຫ້ຄູ່ຄວາມໃນຄະດີປະຕິບັດຕາມບົດບັນທຶກການໄກ່ເກ່ຍ ຄືກັນກັບຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;
2) ໂຈດ ບໍ່ມີສິດຍື່ນຄຳຮ້ອງຟ້ອງເທື່ອໃໝ່ ສຳລັບຄະດີ ທີ່ໄດ້ຖືກຕົກລົງເຫັນດີ ດ້ວຍການໄກ່ເກ່ຍ ແລະ ມີຄຳສັ່ງປະຕິບັດແລ້ວ;
3) ສານບໍ່ມີສິດ ຮັບເອົາມາພິຈາລະນາ ຄະດີທີ່ຄູ່ຄວາມໄດ້ຕົກລົງເຫັນດີດ້ວຍການໄກ່ເກ່ຍ ແລະ ມີຄຳສັ່ງປະຕິບັດແລ້ວ ໝາຍຄວາມວ່າການພິຈາລະນາຄະດີໄດ້ສິ້ນສຸດລົງນັບ ແຕ່ມື້ທີ່ສານອອກຄຳສັ່ງໃຫ້ຄູ່ຄວາມປະຕິບັດຕາມບົດບັນທຶກການໄກ່ເກ່ຍເປັນຕົ້ນໄປ.

ຖ້າຫາກຄູ່ຄວາມບໍ່ສາມາດຕົກລົງກັນໄດ້ ສານຕ້ອງພິຈາລະນາຄະດີແພ່ງຕາມຂໍ້ມູນຫຼັກຖານ ແລະ ລະບຽບກົດໝາຍ ຊຶ່ງໃນປັດຈຸບັນສັງຄົມຍັງເຂົ້າໃຈວ່າສານຕັດສິນຖືກກົດໝາຍ ແຕ່ບໍ່ຖືກຕ້ອງກັບຄວາມເປັນຈິງ ທັງນີ້ກໍເຍຍ້ອນວ່າ ພົນລະເມືອງລາວຈຳນວນໜຶ່ງ ຍັງປະຕິບັດຕາມຮີດຄອງປະເພນີ ເຊັ່ນ ການມອບຊັບ, ການກູ້ຢືມບໍ່ໄດ້ເຮັດເປັນລາຍລັກອັກສອນ ແລະ ບໍ່ນຳເອົາໄປຈົດທະບຽນຕາມລະບຽບກົດໝາຍ.

### 3.11. ການຂໍຖອນຕົວ ແລະ ການຄ້ານຕົວ

#### 3.11.1. ຄວາມໝາຍ

ການຂໍຖອນຕົວ ແມ່ນການບໍ່ເຂົ້າຮ່ວມໃນການດຳເນີນຄະດີຂອງຜູ້ພິພາກສາ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ຫຼື ຜູ້ແປພາສາ.

ການຄ້ານຕົວ ແມ່ນການສະເໜີຂອງຄູ່ຄວາມ ເພື່ອບໍ່ໃຫ້ຜູ້ພິພາສາ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ຫຼື ຜູ້ແປພາສາ ເຂົ້າຮ່ວມໃນການດຳເນີນຄະດີ ເນື່ອງຈາກວ່າພວກກ່ຽວ ເປັນຍາດພີ່ນ້ອງ, ໝູ່ເພື່ອນ, ມີຂໍ້ຂັດແຍ່ງໃດໜຶ່ງກັບຄູ່ຄວາມ ຫຼື ມີຜົນປະໂຫຍດໃດໜຶ່ງ ກ່ຽວກັບຄະດີທີ່ພວມພິຈາລະນາ ບໍ່ວ່າຈະແມ່ນທາງກົງ ຫຼື ທາງອ້ອມກໍຕາມ ທັງນີ້ກໍເພື່ອເຮັດໃຫ້ຄູ່ຄວາມມີຄວາມພໍໃຈຕໍ່ການພິຈາລະນາຕັດສິນຄະດີ.

#### 3.11.2. ເຫດຜົນ

ການກຳນົດຫຼັກການຂໍຖອນຕົວ ແລະ ການຄ້ານຕົວ ມີເຫດຜົນຕົ້ນຕໍດັ່ງນີ້:

1) ຮັບປະກັນຄວາມໂປ່ງໃສ, ຖືກຕ້ອງ ແລະ ຍຸຕິທຳຂອງການພິຈາລະນາຕັດສິນຄະດີ;
2) ເຮັດໃຫ້ຄູ່ຄວາມ, ຜູ້ເຂົ້າຮ່ວມໃນການດຳເນີນຄະດີ, ປະຊາຊົນມີຄວາມເຊື່ອໝັ້ນ, ເຊື່ອຖືຕໍ່ການພິຈາລະນາຕັດສິນຂອງຄະນະສານ.

ການທີ່ບໍ່ອະນຸຍາດໃຫ້ຜູ້ພິພາກສາ, ພະນັກງານອົງການໄອຍະການປະຊາຊົນ, ຜູ້ຊ່ຽວຊານ ຫຼື ຜູ້ແປພາສາຫາກເປັນຍາດພີ່ນ້ອງ, ໝູ່ເພື່ອນ, ມີຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງ ກັບຄູ່ຄວາມຝ່າຍໃດຝ່າຍໜຶ່ງຕ້ອງຖອນຕົວອອກຈາກດຳເນີນຄະດີ, ຖ້າບໍ່ຖອນຕົວແມ່ນເຮັດໃຫ້ການດຳເນີນຄະດີບໍ່ຖືກຕ້ອງກັບຄວາມເປັນຈິງ ແລະ ກົດໝາຍ ຍ້ອນການດຳເນີນດີບໍ່ຄົບຖ້ວນ, ຮອບດ້ານ, ພາວະວິໄສ, ມີການເຂົ້າຂ້າງອອກຂາ ຊຶ່ງເຮັດໃຫ້ການຕັດສິນມີຄວາມຜິດພາດບໍ່ມີຄວາມຍຸຕິທຳ, ຕໍ່ບັນຫາດັ່ງກ່າວ ຈະກ້າວໄປເຖິງຄວາມບໍ່ເຄົາລົບນັບຖືຂອງຄົນໃນສັງຄົມການພິຈາລະນາຕັດສິນຄະດີຂອງສານ.

#### 3.11.3. ການນຳໃຊ້

ການຖອນຕົວແມ່ນພັນທະຂອງຜູ້ຮັບຜິດຊອບໃນການດຳເນີນຄະດີ ເຊັ່ນ ຜູ້ພິພາກສາ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ຫຼື ຜູ້ແປພາສາ, ທີ່ເປັນຍາດພີ່ນ້ອງ, ໝູ່ເພື່ອນ, ມີຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດໜຶ່ງ ຊຶ່ງຕ້ອງໄດ້ຖອນຕົວເອງອອກຈາກການດຳເນີນຄະດີ ຫຼື ຖອນຕົວຕາມການສະເໜີຄັດຄ້ານຂອງຄູ່ຄວາມ ຫຼື ພະນັກງານໄອຍະການປະຊາຊົນ.

ການຄ້ານຕົວ ແມ່ນ ສິດຂອງຄູ່ຄວາມ ຫຼື ໜ້າທີ່ຂອງພະນັກງານໄອຍະການປະຊາຊົນ ຖ້າເຫັນວ່າຜູ້ຮັບຜິດຊອບໃນການດຳເນີນຄະດີ ຫາກມີສ່ວນພົວພັນກັບຄະດີ ເຊັ່ນ ເປັນຍາດຕິພີ່ນ້ອງ, ໝູ່ເພື່ອນ ມີຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດໜຶ່ງ

ຜູ້ພິພາກສາ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ຫຼື ຜູ້ແປພາສາ ທີ່ມີສ່ວນກ່ຽວຂ້ອງກັບຄະດີ ຕ້ອງຖອນຕົວອອກຈາກການດຳເນີນຄະດີ, ຖ້າຫາກບໍ່ຍອມຖອນຕົວແລ້ວ ຄູ່ຄວາມ ຫຼື ພະນັກງານໄອຍະກາປະ ຊາຊົນ ມີສິດສະເໜີຄ້ານຕົວເພື່ອບໍ່ໃຫ້ບຸກຄົນດັ່ງກ່າວເຂົ້າຮ່ວມໃນການດຳເນີນຄະດີນັ້ນ.

### 3.12. ຂອບເຂດການພິຈາລະນາ ຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍ

#### 3.12.1. ຄວາມໝາຍ

ຂອບເຂດການພິຈາລະນາຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍ ແມ່ນການພິຈາລະນາຂອງຄະນະສານຕັດສິນຕໍ່ຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍ ຂອງຄູ່ຄວາມ ລວມທັງຂອງບຸກຄົນທີສາມ, ບັນຫາໃດທີ່ບໍ່ໄດ້ຮ້ອງຟ້ອງ ຫຼື ຮ້ອງຂໍນັ້ນ ຄະນະສານຕັດສິນ ຈະບໍ່ນຳມາພິຈາລະນາຕັດສິນໄດ້ ຍົກເວັ້ນກໍລະນີຄຳຮ້ອງດັ່ງກ່າວ ຫາກພົວພັນເຖິງສິດຜົນປະໂຫຍດຂອງລັດ, ສັງຄົມ ແລະ ເດັກ, ນອກຈາກນີ້ ສານກໍບໍ່ມີສິດຈະຕັດສິນເກີນມູນຄ່າຂອງການຮ້ອງຟ້ອງ ຫຼື ການຮ້ອງຂໍນັ້ນ.

#### 3.12.2. ເຫດຜົນ

ຂອບເຂດການພິຈາລະນາຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍມີເຫດຜົນດັ່ງນີ້:

1) ການຮ້ອງຟ້ອງ ຫຼື ຮ້ອງຂໍແມ່ນຂຶ້ນຢູ່ກັບຄູ່ຄວາມເປັນຜູ້ກຳນົດວ່າມີຈຸດປະສົງອັນໃດ? ສ່ວນສານພຽງແຕ່ພິຈາລະນາຕາມການຮ້ອງຟ້ອງ ຫຼື ຮ້ອງຂໍເທົ່ານັ້ນ, ບັນຫາໃດທີ່ຄູ່ຄວາມບໍ່ໄດ້ຮ້ອງຟ້ອງ ຫຼື ຮ້ອງຂໍ ສານກໍບໍ່ມີສິດພິຈາລະນາໃຫ້;
2) ຖ້າການຮ້ອງຟ້ອງ ຫຼື ຮ້ອງຂໍຂອງຄູ່ຄວາມຫາກແຕະຕ້ອງເຖິງສິດຜົນປະໂຫຍດຂອງລັດ, ສັງຄົມ ແລະ ເດັກ ສານກໍຕ້ອງໄດ້ພິຈາລະນາແກ້ໄຂ ເຖິງວ່າຄູ່ຄວາມບໍ່ໄດ້ຮ້ອງຟ້ອງ ຫຼື ຮ້ອງຂໍກໍຕາມ.

#### 3.12.3. ການນຳໃຊ້

ການກຳນົດຂອບເຂດ ການພິຈາລະນາຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍຂອງຄູ່ຄວາມນັ້ນ ເປັນການຕັ້ງຄຳຖາມຕໍ່ສານ, ສະນັ້ນ ສານຈຶ່ງຕ້ອງໃຫ້ຄຳຕອບ ດ້ວຍເຫດຜົນ ຕໍ່ຄຳຖາມທີ່ຕັ້ງຂຶ້ນ, ກົງກັນຂ້າມ ຖ້າບໍ່ມີຄຳຖາມກໍບໍ່ຕ້ອງໃຫ້ຄຳຕອບ, ດັ່ງນັ້ນ ຫຼັກການນີ້ ຈຶ່ງກຳນົດຂອບເຂດ ການພິຈາລະນາດັ່ງນີ້:

1) ສານຕ້ອງໄດ້ສັງລວມຄຳຮ້ອງຟ້ອງ, ຄຳຮ້ອງຂໍ ຫຼື ຄຳຟ້ອງແຍ່ງຂອງຄູ່ຄວາມ ວ່າມີຈັກບັນຫາທີ່ສະເໜີຕໍ່ສານໃຫ້ພິຈາລະນາແກ້ໄຂ, ການໂຕ້ຕອບຂອງຝ່າຍກົງກັນຂ້າມມີການຂັດແຍ່ງ ຫຼື ມີຄວາມເປັນເອກະພາບກັນແນວໃດ ເພື່ອສັງລວມໃຫ້ເປັນປະເດັນ ທີ່ສານຕ້ອງໄດ້ພິຈາລະນາແກ້ໄຂ ມີຈັກບັນຫາ (ໝາຍຄວາມວ່າ ຕ້ອງສັງລວມໃຫ້ໄດ້ຈຸດປະສົງຂອງຄູ່ຄວາມວ່າຕ້ອງການໃຫ້ສານແກ້ໄຂບັນຫາໃດແດ່);
2) ສານຕ້ອງສັງລວມ ໄດ້ທຸກບັນຫາທີ່ມີໃນຄຳຮ້ອງຟ້ອງ, ຄຳຮ້ອງຂໍ ຫຼື ຄຳຟ້ອງແຍ່ງແລ້ວ ຕ້ອງໄດ້ນຳເອົາແຕ່ລະບັນຫາມາພິຈາລະນາເປັນແຕ່ລະອັນ ດ້ວຍການໃຫ້ຄຳເຫັນ ບົນຂໍ້ມູນຫຼັກຖານບອກກັບກົດໝາຍ ເພື່ອໃຫ້ຄູ່ຄວາມເຂົ້າໃຈວ່າຂໍ້ສະເໜີຂອງເຂົາເຈົ້າແຕ່ລະອັນ, ອັນໃດມີເຫດຜົນຍ້ອນຫຍັງ, ອັນໃດບໍ່ມີເຫດຜົນຍ້ອນຫຍັງ, ດັ່ງນັ້ນ ໃນຄຳຕັດສິນ ຫຼື ຄຳພິພາກສາຂອງສານ ຈຶ່ງຕ້ອງໄດ້ວິນິດໄສລະອຽດຕອບທຸກຂໍ້ສະເໜີຂອງຄູ່ຄວາມ.

# ບົດທີ 3
# ຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ

## 1. ຄວາມໝາຍຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ.

ຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ ແມ່ນຜູ້ທີ່ມີສາຍພົວພັນທາງແພ່ງ ແລະ ມີສ່ວນກ່ຽວຂ້ອງຮ່ວມກັນໃນຄະດີ. ໃນການດຳເນີນຄະດີແພ່ງນັ້ນ ອາດມີຜູ້ເຂົ້າຮ່ວມຫຼາຍຄົນ ເຊັ່ນ: ຄູ່ຄວາມ, ບຸກຄົນທີສາມ, ພະຍານ, ຜູ້ຊ່ຽວຊານ, ຜູ້ແປພາສາ ແລະ ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ[3].

ນອກຈາກຜູ້ເຂົ້າຮ່ວມທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ໃນການດຳເນີນຄະດີແພ່ງອາດມີອົງການຈັດຕັ້ງຂອງລັດ, ລວມໝູ່ ຫຼື ວິສາຫະກິດ ເຂົ້າຮ່ວມໃນການດຳເນີນຄະດີໃນທີ່ປະຊຸມສານ ເພື່ອມີຄຳເຫັນ, ຊີ້ແຈງລາຍລະອຽດກ່ຽວກັບຄະດີ ໃນກໍລະນີທີ່ຄູ່ຄວາມນັ້ນ ຫາກຢູ່ໃນອົງການຈັດຕັ້ງຂອງຕົນ.

## 2. ຄວາມສຳຄັນຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ

ຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ ເປັນປັດໃຈຕົ້ນຕໍ ແລະ ມີຄວາມສຳຄັນດັ່ງນີ້:

1) ຄູ່ຄວາມ, ບຸກຄົນທີສາມ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ມີໜ້າທີ່ ແລະ ຄວາມຮັບຜິດຊອບໃນການຍື່ນຟ້ອງ, ແກ້ຟ້ອງ ເພື່ອເປັນບ່ອນອີງໃຫ້ສານໄດ້ດຳເນີນຄະດີ ແລະ ເປັນຜູ້ສະເໜີ, ປະກອບຂໍ້ມູນຫຼັກຖານຕໍ່ສານ;
2) ພະຍານ, ຜູ້ຊ່ຽວຊານ ແລະ ຜູ້ແປພາສາ ມີໜ້າທີ່ ແລະຄວາມຮັບຜິດຊອບໃນການດຳເນີນຄະດີດ້ວຍການອະທິບາຍ, ຊີ້ແຈງຂໍ້ເທັດຈິງ ແລະ ຢັ້ງຢືນຕໍ່ເຫດການຂອງຄະດີໃຫ້ມີຄວາມຊັດເຈນ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ເພື່ອຮັບປະກັນການຕັດສິນມີຄວາມຖືກຕ້ອງ ແລະ ເປັນທຳ.

ກົງກັນຂ້າມ, ໃນການດຳເນີນຄະດີແພ່ງນັ້ນ ຖ້າຂາດບຸກຄົນດັ່ງກ່າວແລ້ວ ກໍຈະເຮັດໃຫ້ການດຳເນີນຄະດີຂອງສານພົບຄວາມຫຍຸ້ງຍາກ, ຂາດຂໍ້ມູນຫຼັກຖານ ຫຼື ຂາດການຢັ້ງຢືນທີ່ສານສາມາດເຊື່ອຖືໄດ້ ອັນເປັນສາເຫດ ຈະນຳໄປສູ່ການຕັດສິນທີ່ຜິດພາດ ຫຼື ບໍ່ສອດຄ່ອງກັບເຫດການຕົວຈິງ.

## 3. ຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ

ຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ ມີສອງປະເພດຄື: ຜູ້ເຂົ້າຮ່ວມທີ່ມີຜົນປະໂຫຍດ ແລະ ຜູ້ເຂົ້າຮ່ວມທີ່ບໍ່ມີຜົນປະໂຫຍດໃນຄະດີ.

1) ຜູ້ເຂົ້າຮ່ວມທີ່ມີຜົນປະໂຫຍດ ແມ່ນຜູ້ເຂົ້າຮ່ວມທີ່ໄດ້ຮັບຜົນປະໂຫຍດຈາກການພິຈາລະນາຕັດສິນຂອງສານ ຊຶ່ງມີ ໂຈດ, ຈຳເລີຍ ແລະບຸກຄົນທີສາມ. ສ່ວນຜູ້ຕາງໜ້າ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນນັ້ນ ກໍຖືວ່າເປັນຜູ້ເຂົ້າຮ່ວມທີ່ມີຜົນປະໂຫຍດເຊັ່ນດຽວກັນ ເນື່ອງຈາກວ່າ ການເຂົ້າຮ່ວມຂອງພວກກ່ຽວ ແມ່ນເຮັດໃນນາມຕາງໜ້າຂອງໂຈດ, ຈຳເລີຍ ແລະ ບຸກຄົນທີສາມ.
2) ຜູ້ເຂົ້າຮ່ວມທີ່ບໍ່ມີຜົນປະໂຫຍດ ແມ່ນຜູ້ເຂົ້າຮ່ວມ ທີ່ບໍ່ໄດ້ຮັບຜົນປະໂຫຍດຈາກການພິຈາລະນາຕັດສິນຂອງສານ ຊຶ່ງມີພະຍານ, ຜູ້ຊ່ຽວຊານ, ຜູ້ແປພາສາ. ການເຂົ້າຮ່ວມຂອງບຸກຄົນດັ່ງກ່າວ ພຽງແຕ່ມາຢັ້ງຢືນ, ຊີ້ແຈງອະທິບາຍເຫດການຂອງຄະດີ ຕໍ່ສານ ແລະ ມີສິດໄດ້ຮັບຄ່າຕອບແທນຕາມລະບຽບການ.

---

[3] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012, ມາດຕາ 69.

### 3.1. ຄູ່ຄວາມໃນຄະດີແພ່ງ

#### 3.1.1. ຄວາມໝາຍ

ຄູ່ຄວາມ ໃນຄະດີແພ່ງແມ່ນຜູ້ທີ່ມີຂໍ້ຂັດແຍ່ງກັນ ຊຶ່ງໄດ້ຍື່ນຄຳຮ້ອງຟ້ອງ ແລະ ແກ້ຟ້ອງ ຫຼືຟ້ອງແຍ່ງໃຫ້ສານພິຈາລະນາແກ້ໄຂ ເອີ້ນວ່າ: ໂຈດ ແລະຈຳເລີຍ.

ໂຈດ ແມ່ນບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດທີ່ຮ້ອງຟ້ອງຕໍ່ສານວ່າ ສິດ ແລະ ຜົນປະໂຫຍດ ຂອງຕົນໄດ້ຖືກຜູ້ອື່ນລະເມີດ ຫຼື ໂຕ້ແຍ່ງ ຫຼື ຮ້ອງຂໍໃຫ້ສານພິຈາລະນາບັນຫາໃດໜຶ່ງ.

ຈຳເລີຍ ແມ່ນບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດທີ່ຖືກຮ້ອງຟ້ອງວ່າໄດ້ລະເມີດ ຫຼື ໂຕ້ແຍ່ງສິດຂອງບຸກຄົນອື່ນ[4] .

#### 3.1.2. ເງື່ອນໄຂການເປັນຄູ່ຄວາມໃນຄະດີແພ່ງ

ຜູ້ທີ່ສາມາດເປັນຄູ່ຄວາມໃນຄະດີແພ່ງຕ້ອງປະກອບດ້ວຍເງື່ອນໄຂດັ່ງນີ້:

1) ສຳລັບບຸກຄົນຕ້ອງແມ່ນຜູ້ມີອາຍຸ 18 ປີຂຶ້ນໄປ ແລະ ບໍ່ເປັນບ້າເສັຍຈິດ;
2) ຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ ຫຼື ຜູ້ເປັນບ້າເສັຍຈິດຕ້ອງໃຫ້ພໍ່ແມ່ ຫຼື ຜູ້ປົກຄອງເຂົ້າຮ່ວມເປັນຄູ່ຄວາມໃນການດຳເນີນຄະດີ;
3) ບຸກຄົນທີ່ບໍ່ຕ້ອງການເຂົ້າຮ່ວມໃນການດຳເນີນຄະດີດ້ວຍຕົນເອງກໍສາມາດມອບສິດໃຫ້ບຸກຄົນອື່ນເປັນຜູ້ຕາງໜ້າກໍໄດ້ ແລະ ຜູ້ຕາງໜ້າດັ່ງກ່າວຖືວ່າເປັນຄູ່ຄວາມ;
4) ສຳລັບນິຕິບຸກຄົນທີ່ຈະເປັນຄູ່ຄວາມໄດ້ຕ້ອງມີການຈົດທະບຽນຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ຫຼື ກົດໝາຍຂອງປະເທດທີ່ກ່ຽວຂ້ອງ ແລະ ຕ້ອງປະຕິບັດຕາມການດຳເນີນຄະດີລະຫວ່າງປະເທດ[5].

#### 3.1.3. ສິດ ແລະ ພັນທະຂອງຄູ່ຄວາມໃນຄະດີແພ່ງ

ໃນການດຳເນີນຄະດີແພ່ງໂຈດ ແລະ ຈຳເລີຍມີສິດ ແລະໜ້າທີ່ດັ່ງນີ້:

- ຍື່ນຄຳຮ້ອງຟ້ອງ, ຮ້ອງຂໍຕໍ່ສານໃນເມື່ອສິດ ແລະ ຜົນປະໂຫຍດຂອງຕົນຖືກລະເມີດ ຫຼື ໂຕ້ແຍ່ງຈາກບຸກຄົນອື່ນ ລວມທັງມີສິດໃນການປ່ຽນແປງ, ເພີ່ມເຕີມ ຫຼື ຖອດຄຳຮ້ອງຟ້ອງທັງໝົດ ຫຼື ບາງສ່ວນ;
- ຍື່ນ ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ ຕໍ່ສານໃນເມື່ອຕົນເອງຖືກຮ້ອງຟ້ອງຈາກບຸກຄົນ ຫຼື ການຈັດຕັ້ງ ລວມທັງມີສິດຮັບຮູ້ ຫຼື ປະຕິເສດຄຳຮ້ອງຟ້ອງ ຫຼື ຖອນຄຳຮ້ອງຟ້ອງຂອງໂຈດທັງໝົດ ຫຼື ບາງສ່ວນ;
- ສະເໜີຄ້ານຕົວຜູ້ພິພາກສາ,ພະນັກງານໄອຍະການປະຊາຊົນ, ຈ່າສານ, ຜູ້ຊ່ຽວຊານ ແລະ ຜູ້ແປພາສາ ເມື່ອເຫັນວ່າບຸກຄົນດັ່ງກ່າວຫາກມີສ່ວນກ່ຽວຂ້ອງ ຫຼື ມີຜົນປະໂຫຍດໃນຄະດີ;
- ຊອກຫາ ແລະ ນຳເອົາຫຼັກຖານມາສະເໜີ ແລະ ປະກອບເພື່ອຢັ້ງຢືນການຮ້ອງຟ້ອງ, ແກ້ຟ້ອງ ຫຼື ຟ້ອງແຍ່ງ ເພື່ອໃຫ້ເຫດການຂອງຄະດີແຈ້ງຂາວລວມທັງ ຂໍເບິ່ງເອກະສານໃນສຳນວນຄະດີ ແລະ ຊັກຖາມບຸກຄົນທີ່ເຂົ້າຮ່ວມໃນການດຳເນີນຄະດີ ເມື່ອເຫັນວ່າບັນຫາໃດບັນຫາໜຶ່ງບໍ່ຈະແຈ້ງ ຫຼື ມີຂໍ້ສົງໃສ;
- ສະເໜີຂໍໄກ່ເກັ່ຍ, ຊ້ອງໜ້າໃນການດຳເນີນຄະດີຢູ່ສານ;
- ຮ້ອງຂໍຕໍ່ຄະນະສານເພື່ອພິຈາລະນາອອກຄຳສັ່ງຢຶດຊັບ, ອາຍັດຊັບ, ຈຳກັດບໍລິເວນ, ພາຕົວ, ນຳໃຊ້ມາດຕະການຕໍ່ຄົນເສັຍຈິດ ແລະມາດຕະການອື່ນເມື່ອມີຄວາມຈຳເປັນ;
- ສະເໜີຕໍ່ຄະນະສານໃຫ້ພິຈາລະນາຕັດສິນລັບຫຼັງຕົນ ເມື່ອເຫັນວ່າຕົນເອງຫາກບໍ່ສາມາດເຂົ້າຮ່ວມປະຊຸມສານໄດ້ ຫຼື ສະເໜີໃຫ້ຕັດສິນລັບຫຼັງຈຳເລີຍຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ ແລະ ສະເໜີໂຈະ ຫຼື ເລື່ອນການດຳເນີນຄະດີ;

---

[4] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 70

[5] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 71

– ເຂົ້າມາໃຫ້ການຕໍ່ສານ, ຮ້ອງຂໍໃຫ້ສານເກັບຂໍ້ມູນຫຼັກຖານ ໃນກໍລະນີທີ່ຄູ່ຄວາມບໍ່ສາມາດນຳມາສະເໜີຕໍ່ສານໄດ້ ດ້ວຍຕົວເອງ, ສະເໜີໃຫ້ສອບຖາມພະຍານ, ການແຕ່ງຕັ້ງຜູ່ຊ່ຽວຊານສານທຳການພິສູນຄືນໃໝ່, ການລົງກວດກາບັນຫາຂໍ້ຂັດແຍ່ງ ແລະ ອື່ນໆ;
– ສະເໜີໃຫ້ສານນຳເອົາບຸກຄົນທີສາມເຂົ້າຮ່ວມໃນການດຳເນີນຄະດີ ຫຼື ເອົາທະນາຍຄວາມ ຫຼື ຜູ່ປົກຄອງອື່ນໃນການຕໍ່ສູ້ຄະດີ;
– ຂໍອຸທອນ, ຂໍລົບລ້າງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານຍົກເວັ້ນຄຳຕົກລົງຂອງສານທີໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ທວງໃຫ້ປະຕິບັດຄຳຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ;
– ຮ້ອງທຸກຕໍ່ການກະທຳ ຫຼື ຄຳສັ່ງຂອງຜູ່ພິພາກສາທີ່ຕົນເຫັນວ່າຖືກຕ້ອງ;
– ນອກຈາກນີ້ ຄູ່ຄວາມຍັງມີສິດ ແລະໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ຫຼື ຕາມການແນະນຳຂອງຄະນະສານ;

ໂຈດ ແລະ ຈຳເລີຍໃນການດຳເນີນຄະດີແພ່ງແມ່ນ ມີສິດເທົ່າທຽມກັນ ຫຼື ເວົ້າອີກຢ່າງໜຶ່ງ ແມ່ນມີຄວາມສະ ເໜີພາບກັນ. ຍ້ອນແນວນີ້ຄູ່ຄວາມທັງສອງຝ່າຍຈຶ່ງມີສິດ ແລະ ໜ້າທີ່ໃນການດຳເນີນຄະດີແພ່ງຄ້າຍຄືກັນ ເຊັ່ນ ໂຈດ ແລະ ຈຳເລີຍຕ່າງກໍມີສິດສະເໜີຂໍ້ມູນຫຼັກຖານ, ມີສິດຊີ້ແຈງ, ອະທິບາຍ ແລະ ອື່ນໆ ເທົ່າທຽມກັນ.ໃນເມື່ອທີ່ກົດໝາຍໃຫ້ສິດແກ່ໂຈດ ແລະ ຈຳເລີຍ ເທົ່າທຽມກັນ ທັງນີ້ກໍເພື່ອເປັນການຮັບປະກັນສິດ, ເສລີພາບຂອງພົນລະເມືອງກໍຄືຄູ່ຄວາມໃນການເຄື່ອນໄຫວທີ່ຖືກຮັບປະກັນດ້ວຍກົດໝາຍ, ເພື່ອເປັນການປ້ອງກັນສິດ, ຜົນປະໂຫຍດ ແລະ ເສລີພາບຂອງບຸກຄົນ ແລະ ການຈັດຕັ້ງກໍຄືການຕໍ່ສູ້ຄະດີ. ນອກຈາກນີ້ແລ້ວ ຍັງເປັນການຮັບປະກັນດ້ານສິດທິມະນຸດນຳອີກ.

ນອກຈາກສິດ ແລະ ໜ້າທີ່ແລ້ວ ຄູ່ຄວາມຍັງມີພັນທະໃນການດຳເນີນຄະດີຄື:

- ເຂົ້າມາສະເໜີຕົວຕາມໝາຍຮຽກ, ໝາຍເຊີນຂອງສານດ້ວຍຕົນເອງ ຫຼື ມອບສິດໃຫ້ຜູ່ຕາງໜ້າຂອງຕົນເຂົ້າຮ່ວມ;

- ຊອກຫາ, ປະກອບຫຼັກຖານມາສະເໜີຕໍ່ສານ ເພື່ອຢັ້ງຢືນເຫດການ ແລະ ສະໜັບສະໜູນການຮ້ອງຟ້ອງ, ແກ້ຟ້ອງ, ຟ້ອງແຍ່ງ ຫຼື ການຮ້ອງຂໍ;

- ເຂົ້າຮ່ວມໃນການໄຕ່ສວນຄະດີເພື່ອສະເໜີຂໍ້ມູນຫຼັກຖານ ແລະໃຫ້ຄວາມກະຈ່າງແຈ້ງແກ່ຄະນະສານຕັດສິນ, ປະຕິບັດຕາມຄຳສັ່ງຂອງສານ ແລະລະບຽບການໃນເວລາເຂົ້າຮ່ວມປະຊຸມສານ;

- ນຳໃຊ້ສິດຂອງຕົນໃນການດຳເນີນຄະດີດ້ວຍຄວາມບໍລິສຸດໃຈ, ລາຍງານຂໍ້ມູນລັກຖານກ່ຽວກັບເຫດການຄະດີທີ່ເກີດຂຶ້ນຕົວຈິງດ້ວຍຄວາມຈິງໃຈ, ບໍ່ຕົວະ, ແອບອ້າງ ຫຼື ປອມແປງ;

- ນຳເງິນມາວາງສານ, ເສັຍຄ່າທຳນຽມສານທີ່ກ່ຽວຂ້ອງກັບການດຳເນີນຄະດີຕາມການຄິດໄລ່ຂອງສານ ແລະ ເສັຍອາກອນໃຫ້ລັດຕາມຄຳຕັດສິນຂອງສານ;

- ປະຕິບັດຄຳຕົກລົງຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;

- ນອກຈາກນີ້ ຍັງຕ້ອງມີພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## 3.2. ບຸກຄົນທີສາມໃນຄະດີແພ່ງ

### 3.2.1. ຄວາມໝາຍ

ບຸກຄົນທີສາມ ແມ່ນບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດທີ່ເຂົ້າຮ່ວມໃນຄະດີເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນທີ່ຕິດພັນກັບຄະດີ ຊຶ່ງກຳລັງຖືກພິຈາລະນາຢູ່ສານ.

ບຸກຄົນທີສາມ ເຂົ້າຮ່ວມໃນການດຳເນີນຄະດີແພ່ງ ຈະບໍ່ຖືວ່າເປັນໂຈດ ຫຼື ຈຳເລີຍໂດຍກົງແຕ່ເຂົ້າຮ່ວມໃນການດຳເນີນຄະດີໃນຖານະເປັນຝ່າຍໂຈດ ຫຼື ຝ່າຍຈຳເລີຍ.

**3.2.2. ເງື່ອນໄຂ**

ບຸກຄົນທີ່ເຂົ້າຮ່ວມໃນການດຳເນີນຄະດີໃນຖານະບຸກຄົນທີສາມ ຕ້ອງມີເງື່ອນໄຂດັ່ງນີ້ :

ບຸກຄົນທີສາມທີ່ຍື່ນຄຳຮ້ອງຟ້ອງດ້ວຍຕົນເອງ ຕ້ອງມີເງື່ອນໄຂດັ່ງນີ້:

- ບຸກຄົນ, ການຈັດຕັ້ງ ຫຼື ວິສາຫະກິດ ທີ່ມີຜົນປະໂຫຍດກ່ຽວຂ້ອງກັບຄະດີ ຫຼື ມີສ່ວນໄດ້ຮັບ, ເສຍຊັບສິ່ງຂອງຈາກຄະດີທີ່ກຳລັງພິຈາລະນາຢູ່ສານ ຫຼື ຈາກການຕັດສິນຂອງສານ ຫຼື ຂໍ້ຂັດແຍ່ງ, ຄະດີທີ່ກຳລັງດຳເນີນຢູ່ສານນັ້ນ ຫາກມີສ່ວນພົວພັນ, ກ່ຽວຂ້ອງ ຫຼື ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງບຸກຄົນດັ່ງກ່າວ;
- ບຸກຄົນດັ່ງກ່າວຕ້ອງຍື່ນຄຳຮ້ອງຟ້ອງຕໍ່ສານ ເພື່ອໃຫ້ສານພິຈາລະນານຳເອົາຄຳຮ້ອງຟ້ອງດັ່ງກ່າວປະກອບໃສ່ໃນສຳນວນຄະດີທີ່ກຳລັງພິຈາລະນາຢູ່.

**ຕົວຢ່າງ:** ທ້າວ ກ ຮ້ອງຟ້ອງຂໍຢ່າຮ້າງກັບນາງ ຂ ຊຶ່ງພົວພັນກັບການແບ່ງປັນສິນສົມສ້າງທີ່ເປັນທີ່ດິນ ແຕ່ທີ່ດິນດັ່ງກ່າວ ເປັນກຳມະສິດຂອງທ້າວ ຄ ທີ່ເປັນພໍ່ຂອງນາງ ຂ ທ້າວ ຄ ກໍສາມາດຍື່ນຄຳຮ້ອງຟ້ອງຕໍ່ສານໃນຄະດີດັ່ງກ່າວຕໍ່ສານ ເພື່ອເຂົ້າຮ່ວມໃນການດຳເນີນຄະດີໃນຖານະເປັນບຸກຄົນທີສາມ.

ບຸກຄົນທີສາມ ທີ່ບໍ່ຍື່ນຄຳຮ້ອງຟ້ອງດ້ວຍຕົນເອງມີເງື່ອນໄຂດັ່ງນີ້:

- ບຸກຄົນ, ການຈັດຕັ້ງ ຫຼື ວິສາຫະກິດ ທີ່ມີສິດໄດ້ຮັບຜົນປະໂຫຍດໃນຄະດີ ແຕ່ຫາກບໍ່ໄດ້ຍື່ນຄຳຮ້ອງຟ້ອງໄດ້ດ້ວຍຕົນເອງ.
- ຄູ່ຄວາມ, ໄອຍະການປະຊາຊົນ ຫຼື ສານ ເປັນຜູ້ສະເໜີໃຫ້ບຸກຄົນໃດໜຶ່ງເຂົ້າຮ່ວມໃນການດຳເນີນຄະດີເປັນບຸກຄົນທີສາມຝ່າຍໂຈດ ຫຼື ຝ່າຍຈຳເລີຍ.

**ຕົວຢ່າງ :** ທ້າວ ກ ຮ້ອງຟ້ອງທວງເອົາມູນມໍຣະດົກ ຈາກທ້າວ ຂ ຜ່ານການດຳເນີນຄະດີ ເຫັນວ່າທ້າວ ກ ແລະ ທ້າວ ຂ ຍັງມີ ນ້ອງຊື່ທ້າວ ຄ ສະນັ້ນ ຄູ່ຄວາມ ຫຼື ສານ ຈະໃຫ້ທ້າວ ຄ ເຂົ້າຮ່ວມໃນການດຳເນີນຄະດີເປັນບຸກຄົນທີສາມຝ່າຍທ້າວ ກ(ໂຈດ) ຫຼື ທ້າວ ຂ (ຈຳເລີຍ) ກໍໄດ້.

ນອກຈາກນີ້ ຍັງມີບຸກຄົນທີສາມກ່ຽວກັບການຟື້ນຟູວຽກງານຄືນ ຊຶ່ງຕ້ອງມີເງື່ອນໄຂດັ່ງນີ້:

- ມີການຮ້ອງຟ້ອງຂອງພະນັກງານ, ກຳມະກອນ ຫຼື ຜູ້ອອກແຮງງານ ຕໍ່ການຈັດຕັ້ງ, ວິສາຫະກິດ ເພື່ອຂໍເຂົ້າເຮັດວຽກຄືນ ;
- ແມ່ນບຸກຄົນທີ່ເປັນຜູ້ອອກຄຳສັ່ງໄລ່ ຫຼື ຍົກຍ້າຍພະນັກງານ, ກຳມະກອນ ຫຼື ຜູ້ອອກແຮງງານອອກຈາກໜ້າທີ່ວຽກງານ;
- ມີແຕ່ສານ ຈະເປັນຜູ້ຕົກລົງນຳເອົາບຸກຄົນທີ່ອອກຄຳສັ່ງໄລ່ ຫຼື ຍົກຍ້າຍພະນັກງານ, ກຳມະກອນ ຫຼື ຜູ້ອອກແຮງງານນັ້ນເຂົ້າຮ່ວມໃນຖານະບຸກຄົນທີສາມ.

ຕົວຢ່າງ : ກຳມະກອນ ໄດ້ຮ້ອງຟ້ອງບໍລິສັດໂຮງງານຕັດຫຍິບ A ເພື່ອຂໍເຂົ້າເຮັດວຽກຄືນ ເມື່ອເຫັນວ່າ ທ້າວ ກ ຜູ້ອຳນວຍການໄດ້ອອກຄຳສັ່ງໄລ່ ຫຼື ຍົກຍ້າຍກຳມະກອນຈຳນວນໜຶ່ງອອກຈາກວຽກ, ເມື່ອມີການດຳເນີນຄະດີຢູ່ສານ, ສານຈະໃຫ້ກຳມະກອນ ເປັນໂຈດ, ໂຮງງານຕັດຫຍິບ A ເປັນຈຳເລີຍ ແລະ ໃຫ້ທ້າວ ກ ເຂົ້າຮ່ວມໃນຖານະບຸກຄົນທີສາມຝ່າຍຈຳເລີຍ.

**3.2.3. ສິດ ແລະ ພັນທະຂອງບຸກຄົນທີສາມ**

ບຸກຄົນທີສາມທີ່ໄດ້ຍື່ນຄຳຮ້ອງຟ້ອງດ້ວຍຕົນເອງ ສາມາດເຂົ້າຮ່ວມໃນຄະດີຢູ່ໃນສານຂັ້ນຕົ້ນ ເຖິງຢ່າງໃດກໍຕາມຖ້າຫາກບໍ່ສາມາດເຂົ້າຮ່ວມ ຫຼື ບໍ່ຮູ້ກ່ຽວກັບການດຳເນີນຄະດີດັ່ງກ່າວ ຜູ້ກ່ຽວກໍມີສິດຄັດຄ້ານ ຫຼື ສະເໜີຮື້ຟື້ນຄະດີດັ່ງກ່າວ.

ບຸກຄົນທີສາມທີ່ຍື່ນຄຳຮ້ອງຟ້ອງດ້ວຍຕົນເອງ ມີສິດ ແລະ ພັນທະດັ່ງດຽວກັບ ໂຈດ ຕາມທີ່ອະທິບາຍໄວ້ໃນ ຂໍ້ 3.1 ຂ້າງເທິງນີ້.

ບຸກຄົນທີສາມທີ່ບໍ່ໄດ້ຍື່ນຄຳຮ້ອງຟ້ອງດ້ວຍຕົນເອງມີສິດ ແລະ ພັນທະດັ່ງນີ້:

- ເຂົ້າຮ່ວມໃນການດຳເນີນຄະດີ ເປັນຝ່າຍໂຈດ ຫຼື ຝ່າຍຈຳເລີຍ ເພື່ອໃຫ້ການ, ຊີ້ແຈງຕໍ່ເຫດການຂອງຄະດີ ຫຼື ຮັບຮູ້ຕໍ່ການພິຈາລະນາຕັດສິນຄະດີດັ່ງກ່າວ;
- ນຳໃຊ້ສິດ ແລະ ພັນທະຄືກັນກັບຄູ່ຄວາມ ເວັ້ນເສຍແຕ່ສິດໃນການປ່ຽນແປງເປົ້າໝາຍຂອງຄຳຮ້ອງຟ້ອງ, ສິດໃນການເພີ່ມ ຫຼື ຫຼຸດມູນຄ່າໃນຄຳຮ້ອງຟ້ອງ, ສິດໃນການຖອນຄຳຮ້ອງຟ້ອງ, ສິດໃນການຮັບຮູ້ຄຳຮ້ອງຟ້ອງ ຫຼື ຕົກລົງກັນໂດຍດີ ແລະ ສິດໃນການທວງໃຫ້ປະຕິບັດຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ.

ນອກຈາກນີ້ ບຸກຄົນທີສາມຍັງມີ ພັນທະ ດັ່ງນີ້:

- ເຂົ້າຮ່ວມໃນຄະດີຕາມຄຳຮ້ອງຂໍຂອງຄູ່ຄວາມ, ຂອງຫົວໜ້າອົງການໄອຍະການປະຊາຊົນ ຫຼື ຕາມຄຳສະເໜີຂອງສານ;
- ເຂົ້າມາໃຫ້ການ ຫຼື ມາສະເໜີຕົວຕໍ່ສານຕາມການຮຽກ, ການເຊີນຂອງສານ;
- ນຳໃຊ້ສິດຂອງຕົນໃນການດຳເນີນຄະດີດ້ວຍຄວາມບໍລິສຸດໃຈ.

## 3.3. ຜູ້ຕາງໜ້າຢູ່ສານ

### 3.3.1. ຄວາມໝາຍ

ຜູ້ຕາງໜ້າໃນການດຳເນີນຄະດີ ແມ່ນຜູ້ປະຕິບັດສິດ ແລະ ໜ້າທີ່ແທນຄູ່ຄວາມໃນເວລາດຳເນີນຄະດີ ໝາຍຄວາມວ່າ ເມື່ອໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຫາກບໍ່ສາມາດເຂົ້າຮ່ວມໃນການດຳເນີນຄະດີ ຈະແມ່ນດ້ວຍເຫດຜົນໃດກໍ ຕາມເປັນຕົ້ນບໍ່ມີຄວາມສາມາດຕໍ່ສູ້ຄະດີດ້ວຍຕົນເອງ, ຮູ້ກົດໝາຍບໍ່ເລິກເຊິ່ງ, ຕິດຂັດວຽກງານອື່ນໆ.

ຜູ້ຕາງໜ້າໃນການດຳເນີນຄະດີຢູ່ສານມີ ສອງປະເພດຄື ຜູ້ຕາງໜ້າຕາມກົດໝາຍ ແລະຜູ້ຕາງໜ້າຕາມການມອບໝາຍ.

### 3.3.2. ເງື່ອນໄຂ

ບຸກຄົນທີ່ຈະເປັນຜູ້ຕາງໜ້າຕາມກົດໝາຍໃນການດຳເນີນຄະດີຢູ່ສານຕ້ອງມີເງື່ອນໄຂດັ່ງນີ້:

- ພໍ່, ແມ່ ຫຼື ຜູ້ປົກຄອງ ເປັນຜູ້ຕາງໜ້າຕາມກົດໝາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກທີ່ບໍ່ທັນເຖິງ 18 ປີ, ຄົນບ້າ, ເສຍຈິດ;
- ຜູ້ປົກຄອງທີ່ຖືກແຕ່ງຕັ້ງໃຫ້ຮັກສາ ແລະ ຄຸ້ມຄອງຊັບສິ່ງຂອງຜູ້ຫາຍສາບສູນ ຕາມຄຳຕັດສິນຂອງສານ ເປັນຜູ້ຕາງໜ້າເພື່ອປົກປ້ອງສິດ, ຜົນປະໂຫຍດຂອງຜູ້ຫາຍສາບສູນ ເມື່ອມີການລະເມີດ ຫຼື ໂຕ້ແຍ່ງຈາກບຸກຄົນອື່ນ;
- ຜູ້ປົກຄອງທີ່ຖືກແຕ່ງຕັ້ງໃຫ້ຮັກສາ ແລະ ຄຸ້ມຄອງມູນມໍຣະດົກຂອງຜູ້ສືບທອດຂອງເຈົ້າມູນມໍຣະດົກ ທີ່ໄດ້ເສຍຊີວິດ ຫຼື ຖືກສານຕັດສິນວ່າ ເປັນຜູ້ເສຍຊີວິດ ເປັນຜູ້ຕາງໜ້າໃນການປົກປ້ອງສິດຜົນປະໂຫຍດຂອງຜູ້ສືບທອດມູນມໍຣະດົກທີ່ຍັງບໍ່ທັນມາຮັບເອົາ;
- ຜົວ ຫຼື ເມັຍ ເປັນຜູ້ຕາງໜ້າໃນການດຳເນີນຄະດີກ່ຽວກັບການຮ້ອງຟ້ອງທີ່ພົວພັນກັບສິນສົມສ້າງຂອງຄູ່ຜົວເມັຍ ແລະ ໜີ້ສິນຂອງຄູ່ຜົວເມັຍ ໃນເມື່ອຫາກມີການລະເມີດ ຫຼື ໂຕ້ແຍ່ງຈາກບຸກຄົນອື່ນ;
- ຜູ້ຄອບຄອງຊັບສິ່ງຂອງ ຂອງບຸກຄົນອື່ນຢ່າງຖືກຕ້ອງ ກໍຖືວ່າຜູ້ຕາງໜ້າຕາມກົດໝາຍເປັນຜູ້ຕາງໜ້າ ເພື່ອປົກປ້ອງສິດຜົນປະໂຫຍດຂອງເຈົ້າຂອງຊັບສິນ ໃນກໍລະນີທີ່ເຈົ້າຂອງຊັບສິນບໍ່ຢູ່ ຫຼື ບໍ່ສາມາດປົກປ້ອງໄດ້.

**ຜູ້ຕາງໜ້າຕາມການມອບໝາຍ ຕ້ອງມີເງື່ອນໄຂ ດັ່ງນີ້:**

- ທະນາຍຄວາມ ເປັນຜູ້ຕາງໜ້າຂອງຄູ່ຄວາມຕາມການແຕ່ງຕັ້ງໃຫ້ເປັນຜູ້ຕາງໜ້າໃນການດຳເນີນຄະດີຢູ່ສານ;

- ພະນັກງານ ຫຼື ກຳມະກອນ ເປັນຜູ້ຕາງໜ້າຂອງການຈັດຕັ້ງ ຫຼື ວິສາຫະກິດ ເພື່ອປົກປ້ອງສິດຜົນປະໂຫຍດຂອງການຈັດຕັ້ງ ຫຼື ວິສາຫະກິດທີ່ກຳລັງດຳເນີນຄະດີຢູ່ສານ ຕາມການມອບໝາຍຂອງການຈັດຕັ້ງ ຫຼື ວິສາຫະກິດນັ້ນ;
- ບຸກຄົນ ທີ່ເປັນຍາດພີ່ນ້ອງຂອງໂຈດ ຫຼື ຈຳເລີຍ ເປັນຜູ້ຕາງໜ້າເພື່ອປົກປ້ອງສິດ ຜົນປະ ໂຫຍດຂອງໂຈດ ຫຼື ຈຳເລີຍ ໃນການດຳເນີນຄະດີຢູ່ສານຕາມການມອບໝາຍ ຫຼື ມອບສິດ;
- ບຸກຄົນ ທີ່ເປັນໂຈດ ຫຼື ຈຳເລີຍຮ່ວມໃນຄະດີດຽວກັນ ອາດຈະມອບສິດໃຫ້ໂຈດຜູ້ໃດຜູ້ໜຶ່ງ ຫຼື ຈາເລີຍຜູ້ໃດຜູ້ໜຶ່ງ ເປັນຜູ້ປົກປ້ອງສິດຜົນປະໂຫຍດໃນການດຳເນີນຄະດີຢູ່ສານ;
- ບຸກຄົນ ທີ່ສານແຕ່ງຕັ້ງໃຫ້ເປັນຜູ້ຕາງໜ້າໃນຄະດີກ່ຽວຂ້ອງ ໃນກໍລະນີທີ່ໂຈດ ຫຼື ຈຳເລີຍຫາກບໍ່ສາມາດເຂົ້າຮ່ວມໃນການດຳເນີນຄະດີໄດ້ດ້ວຍເຫດຜົນໃດໜຶ່ງ ເຊັ່ນ ເປັນຄົນທີ່ສິງໃສເປັນຜູ້ເປັນໃບ້, ບ້າເສັຍຈິດ ແຕ່ບໍ່ທັນມີການຕັດສິນຂອງສານ.

ສຳລັບຜູ້ຕາງໜ້າທີ່ເປັນທະນາຍຄວາມຕ້ອງແມ່ນທະນາຍຄວາມທີ່ມີບັດອະນຸຍາດວ່າຄວາມຢ່າງຖືກຕ້ອງຕາມກົດໝາຍ ຊຶ່ງຜູ້ທີ່ຈະເປັນທະນາຍຄວາມຕ້ອງມີເງື່ອນໄຂດັ່ງນີ້:

1) ເປັນຄົນສັນຊາດລາວ ແລະ ມີອາຍຸແຕ່ 23 ປີ ຂຶ້ນໄປ;
2) ມີຄຸນສົມບັດ, ມີນ້ຳໃຈບໍລິສຸດ ແລະ ຊື່ສັດຕໍ່ຊາດ, ຕໍ່ລະບອບໃໝ່ ແລະ ສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ມີຄວາມທ່ຽງທຳ ແລະ ຈັນຍາບັນ;
3) ມີລະດັບການສຶກສາກົດໝາຍຊັ້ນປະລິນຍາຕີຂຶ້ນໄປ;
4) ໄດ້ຮັບການຝຶກອົບຮົມວິຊາຊີບທະນາຍຄວາມ;
5) ໄດ້ຜ່ານການຝຶກງານວິຊາທະນາຍຄວາມ ແລະ ມີປະສົບການໃນລະບົບໃດໜຶ່ງໃນວຽກງານກົດໝາຍ;
6) ສອບເສັງໄດ້ເປັນທະນາຍຄວາມ;
7) ບໍ່ຖືກວິໄນໃຫ້ອອກຈາກລັດຖະການ ຫຼື ບໍ່ເຄີຍຖືກສານຕັດສິນຕັດອິດສະລະພາບຍ້ອນການກະທຳຜິດໂດຍເຈດຕະນາ;
8) ບໍ່ແມ່ນລັດຖະກອນ, ທະຫານ ຫຼື ຕຳຫຼວດ ທີ່ຍັງປະຕິບັດໜ້າທີ່ຢູ່;
9) ມີສຸຂະພາບດີ.

ບຸກຄົນທີ່ບໍ່ອະນຸຍາດ ໃຫ້ເປັນຜູ້ຕາງໜ້າໃນການດຳເນີນຄະດີຢູ່ສານມີດັ່ງນີ້:

- ບຸກຄົນ ທີ່ເຂົ້າຮ່ວມໃນການດຳເນີນຄະດີໂດຍບໍ່ມີໃບມອບສິດຢ່າງຖືກຕ້ອງຈາກຄູ່ຄວາມ;
- ທະນາຍຄວາມ ທີ່ບໍ່ມີໃບແຕ່ງຕັ້ງຈາກຄູ່ຄວາມ ໃຫ້ເຂົ້າຮ່ວມໃນການດຳເນີນຄະດີ;
- ບຸກຄົນ ທີ່ມີອາຍຸກະສຽນບໍ່ເຖິງ 18 ປີ, ເປັນໃບ້, ບ້າ ເສັຍຈິດ;
- ຜູ້ຮັບຜິດຊອບໃນການດຳເນີນຄະດີ ເຊັ່ນ ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ພະນັກງານໄອຍະການ ແລະ ຜູ້ຮັບຜິດຊອບໃນການດຳເນີນຄະດີອື່ນ ຕາມທີ່ກຳນົດໄວ້ໃນມາດຕາ 54 ແລະ 61 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012.

ຜູ້ຕາງໜ້າຕາມການມອບໝາຍຈະສິ້ນສຸດລົງ ເມື່ອຜູ້ກ່ຽວປະຕິບັດສິດ ແລະ ໜ້າທີ່ໃນການດຳເນີນຄະດີຕາມທີ່ໄດ້ກຳນົດໄວ້ໃນສັນຍາມອບໝາຍ ຫຼື ຄູ່ຄວາມໄດ້ຍົກເລີກສັນຍາໃຫ້ຜູ້ກ່ຽວເປັນຜູ້ຕາງໜ້າ. ຄູ່ຄວາມຕ້ອງແຈ້ງໃຫ້ສານຢ່າງເປັນລາຍລັກອັກສອນກ່ຽວກັບການຍົກເລີກຜູ້ຕາງໜ້າໃນການຕໍ່ສູ້ຄະດີຢູ່ສານ.

**3.3.3. ສິດ ແລະ ພັນທະຂອງຜູ້ຕາງໜ້າ**

ຜູ້ຕາງໜ້າຕາມການມອບໝາຍປະຕິບັດສິດ ແລະ ພັນທະຄືກັນກັບຄູ່ຄວາມຕາມທີ່ອະທິບາຍໄວ້ໃນ ຂໍ້ 3.1 ຂອງບົດນີ້. ນອກຈາກນັ້ນ ຜູ້ຕາງໜ້າຕາມການມອບໝາຍທີ່ແມ່ນທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ມີສິດ ແລະ ພັນທະດັ່ງນີ້:

- ປຶກສາຫາລືກັບຄູ່ຄວາມ ເພື່ອເຂົ້າໃຈບັນຫາເຫດການຂອງຄະດີ, ຊອກຫາຂໍ້ມູນຫຼັກຖານທີ່ກ່ຽວຂ້ອງກັບຄະດີ;
- ຍື່ນຄຳຮ້ອງຟ້ອງ, ຄຳຮ້ອງຂໍ ຫຼື ຄຳແກ້ຟ້ອງ, ຄຳຟ້ອງແຍ່ງໃນຄະດີຕໍ່ສານ;
- ສະເໜີ ແລະ ປະກອບຫຼັກຖານທີ່ກ່ຽວຂ້ອງກັບຄະດີຕໍ່ຜູ້ພິພາກສາທີ່ຮັບຜິດຊອບຄະດີ, ຂໍເບິ່ງເອກະສານຢູ່ໃນສຳນວນຄະດີ, ອັດສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານທີ່ຈຳເປັນອອກຈາກສຳນວນຄະດີ ແຕ່ຕ້ອງຮັກສາຄວາມລັບທາງດ້ານການຄ້າ ຫຼື ຂໍ້ມູນອື່ນທີ່ເປັນຄວາມລັບ, ຮ້ອງທຸກຕໍ່ການກະທຳ ຫຼື ຄຳສັ່ງຂອງຜູ້ພິພາກສາທີ່ຕົນເຫັນວ່າບໍ່ຖືກຕ້ອງ;
- ເຂົ້າຮ່ວມໃນການໄຕ່ສວນຄະດີ ແລະ ໃຫ້ຄຳເຫັນໃນທີ່ປະຊຸມສານ, ສະເໜີຄ້ານຕົວຜູ້ພິພາກສາ, ພະນັກງານໄອຍະການປະຊາຊົນ, ຈ່າສານ, ຜູ້ຊ່ຽວຊານ ຫຼື ຜູ້ແປພາສາໃນເວລາດຳເນີນຄະດີ ແລະ ເປີດປະຊຸມສານ;
- ຂໍອຸທອນ, ຂໍລົບລ້າງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ຕົນເອງບໍ່ພໍໃຈຕໍ່ການຕັດສິນຫຼືການພິພາກສາຂອງສານ;
- ໄດ້ຮັບການປົກປ້ອງຕາມລະບຽບກົດໝາຍຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດສັກສີ, ຊື່ສຽງ ຫຼື ຊັບສິນຍ້ອນການຕໍ່ສູ້ຄະດີໃຫ້ຄູ່ຄວາມຂອງຕົນ;
- ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ມີສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍ.

ນອກຈາກນີ້ ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ຍັງມີພັນທະດັ່ງນີ້:

- ນຳໃຊ້ທຸກວິທີການປົກປ້ອງທີ່ໄດ້ກຳນົດໄວ້ໃນກົດໝາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມຜູ້ທີ່ຕົນປົກປ້ອງ;
- ໃຫ້ຄວາມຊ່ວຍເຫຼືອທາງດ້ານກົດໝາຍແກ່ຄູ່ຄວາມຜູ້ທີ່ຕົນປົກປ້ອງຢ່າງເຕັມທີ່;
- ປະກອບສ່ວນຊອກຫາຫຼັກຖານ ເພື່ອໃຫ້ການດຳເນີນຄະດີຖືກຕ້ອງ ແລະ ຍຸຕິທຳບົນພື້ນຖານການປະຕິບັດຈັນຍາທຳຂອງຕົນ.

ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນມີສິດ ແລະ ພັນທະຫຼາຍປະການໃນນີ້ຕາມກົດໝາຍວ່າດ້ວຍທະນາຍຄວາມ, ທະນາຍຄວາມ ມີສິດ ແລະ ໜ້າທີ່ ໃຫ້ຄຳປຶກສາກັບຄູ່ຄວາມ ຊຶ່ງແມ່ນການໃຫ້ຄຳເຫັນ, ຄຳແນະນຳ, ຄຳອະທິບາຍທາງດ້ານກົດໝາຍທາງປາກເປົ່າ ຫຼື ເປັນລາຍລັກອັກສອນໃຫ້ແກ່ຄູ່ຄວາມ ຫຼືຊ່ວຍເຫຼືອລູກຄວາມໃນການຮ່າງສັນຍາ, ພິໄນກຳ ຫຼື ເອກະສານອື່ນໆ. ທະນາຍຄວາມຜູ້ໜຶ່ງໆບໍ່ມີສິດວ່າຄວາມໃຫ້ຄູ່ຄວາມທີ່ເປັນທັງໂຈດ ແລະ ຈຳເລີຍໃນຄະດີດຽວກັນ. ທະນາຍຄວາມຈະມອບໂອນຄະດີໃຫ້ແກ່ທະນາຍຄວາມຜູ້ໃໝ່ສືບຕໍ່ວ່າ ຄວາມແທນຕົນກໍໄດ້. ແຕ່ຕ້ອງໄດ້ຮັບຄຳເຫັນດີເປັນລາຍລັກອັກສອນຈາກຄູ່ຄວາມທີ່ກ່ຽວຂ້ອງເສຍກ່ອນ. ຄູ່ຄວາມເອງກໍຕ້ອງມີສິດຖອນຄະດີຈາກທະນາຍຄວາມ ຜູ້ເກົ່າໄປມອບໃຫ້ທະນາຍຄວາມຜູ້ໃໝ່ສືບຕໍ່ວ່າຄວາມໃຫ້ກໍໄດ້. ແຕ່ຕ້ອງແຈ້ງໃຫ້ທະນາຍຄວາມ ຜູ້ເກົ່າຊາບເສຍກ່ອນ ແລະ ຕ້ອງຈ່າຍຄ່າແຮງງານທີ່ຜູ້ກ່ຽວໄດ້ດຳເນີນມາແລ້ວນັ້ນ.

ຖ້າທະນາຍຄວາມໄດ້ຕົກລົງຮັບວ່າຄວາມໃຫ້ຄູ່ຄວາມ ແລ້ວຜູ້ກ່ຽວຕ້ອງດຳເນີນການວ່າຄວາມຈົນສິ້ນສຸດ ແລະ ຊ່ວຍເຫຼືອທາງດ້ານກົດໝາຍ ເຊັ່ນ ການຍື່ນຄຳຮ້ອງຟ້ອງ, ຄຳຮ້ອງຂໍ ຫຼື ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ ແລະ ອື່ນໆ. ໃນການວ່າຄວາມນັ້ນທະນາຍຄວາມຕ້ອງປະຕິບັດຕາມສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍ ແລະ ຕາມການມອບ

ໝາຍຂອງຄູ່ຄວາມ, ຖ້າຫາກທະນາຍຄວາມຫາກໄດ້ລະເມີດກົດໝາຍ ຫຼື ລະເມີດເກີນສິ່ງທີ່ໄດ້ຮັບມອບໝາຍ, ຜູ່ກ່ຽວຕ້ອງໄດ້ຮັບຜິດຊອບຕໍ່ຜົນເສັຍຫາຍທັງໝົດທີ່ເກີດຂຶ້ນ. ໃນການວ່າຄວາມນັ້ນທະນາຍຄວາມມີສິດສະເໜີຄຳຄິດຄຳເຫັນ, ຄຳອະທິບາຍ, ຫຼັກຖານ, ຄຳຮ້ອງ ແລະ ອື່ນໆ ໂດຍທາງປາກເປົ່າ ຫຼື ລາຍລັກອັກສອນເພື່ອເຮັດໃຫ້ຄະດີນັ້ນຈະແຈ້ງ ແລະ ຄົບຖ້ວນ.

ທະນາຍຄວາມມີສິດເຂົ້າຮ່ວມໃນການໄຕ່ສວນຄະດີ. ຫຼັງຈາກ ການໄຕ່ສວນຄະດີສິ້ນສຸດລົງແລ້ວ ທະນາຍຄວາມຍັງມີສິດອອກຄຳຄິດເຫັນກ່ອນ ແລ້ວສານຈຶ່ງພິຈາລະນາຕັດສິນ. ຖ້າຫາກມີການຂໍອຸທອນຂໍລົບລ້າງຄຳສັ່ງ, ຄຳຊີ້ຂາດຄຳຕັດສິນ ຫຼື ຄຳພິພາກສາຂອງສານທະນາຍຄວາມຕ້ອງເຮັດເປັນລາຍລັກອັກສອນພ້ອມທັງບອກເຫດຜົນປະກອບໃສ່ຢ່າງຄັກແນ່ ແລະ ອື່ນໆ.

ໃນການວ່າຄວາມ ຫຼື ໃຫ້ການຊ່ວຍເຫຼືອຄູ່ຄວາມນັ້ນ ທະນາຍຄວາມ ຈະໄດ້ຮັບການປົກປ້ອງຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະຫຼະພາບ, ກຽດຊື່ສຽງ, ຊັບສິນສ່ວນຕົວ ຫຼື ຂອງຄອບຄົວຕາມລະບຽບ ແລະ ກົດ ໝາຍຂອງສປປ ລາວ.

ເວົ້າລວມແລ້ວ ໂຈດ ຫຼື ຈຳເລີຍ ຖ້າຕ້ອງການມອບໝາຍໃຫ້ບຸກຄົນໃດໜຶ່ງປະຕິບັດແທນຕົນນັ້ນ, ຜູ່ກ່ຽວຕ້ອງເຮັດໃບມອບສິດ ຫຼື ມອບສັນທະຢ່າງເປັນລາຍລັກອັກສອນ ໃຫ້ແກ່ບຸກຄົນທີ່ຖືກມອບສິດນັ້ນ ເປັນຜູ່ປະຕິບັດແທນຕົນ, ເພື່ອທວງເອົາຊັບສິ່ງຂອງໃດໜຶ່ງຈາກບຸກຄົນທີ່ເປັນລູກໜີ້. ດັ່ງນັ້ນ, ທຸກການກະທຳ ຫຼື ການເຄື່ອນໄຫວລວມທັງສິດ ແລະ ພັນທະຕ່າງໆ ແມ່ນຕົກມາເປັນຄວາມຮັບຜິດຊອບຂອງຜູ່ທີ່ໄດ້ຮັບມອບສັນທະນັ້ນ ເປັນຜູດຳເນີນການແທນຢ່າງເຕັມສ່ວນ.

**ຕົວຢ່າງ:** ຄະດີກ່ຽວກັບການ ທວງໃຫ້ໂຍກຍ້າຍອອກຈາກເຮືອນ

ທ້າວ ກໍລະກົດ ເປັນເຈົ້າຂອງເຮືອນ ໄດ້ຕົກລົງໃຫ້ທ້າວ ສິງຫາ ຜູ່ເຊົ່າເຮືອນ, ກຳນົດເວລາເຊົ່າ 6 ເດືອນ. ໄລຍະ 4 ເດືອນຕໍ່ມາ ທ້າວ ສິງຫາ ໄດ້ໂຍ້ກຍ້າຍອອກ,ເນື່ອງຈາກຜູ່ກ່ຽວ ໄດ້ຮັບທຶນການສຶກສາ ໄປຮຽນຕໍ່ຢູ່ຕ່າງປະເທດ. ຕໍ່ມາໄດ້ມີນ້ອງເມັຍຂອງທ້າວ ສິງຫາ ຊື່ທ້າວ ກັນຍາ ສອບເສັງໄດ້ທຶນເຂົ້າຮຽນກົດໝາຍ, ຈຶ່ງໄດ້ເຂົ້າມາຢູ່ເຮືອນດັ່ງກ່າວແທນ. ຕາມສັນຍາເຊົ່ານັ້ນ ຍັງເຫຼືອອີກ 2 ເດືອນ ຈຶ່ງໝົດສັນຍາ, ເມື່ອທ້າວ ກໍລະກົດ ເຈົ້າຂອງເຮືອນຕ້ອງການໃຫ້ທ້າວສິງຫາ ຜູ່ເຮັດສັນຍາເຊົ່າເຮືອນນັ້ນໂຍກຍ້າຍອອກ ດ້ວຍການຮ້ອງຟ້ອງຕໍ່ສານ ກໍແມ່ນ ທ້າວ ກັນຍາ ເປັນຜູ່ຕາງໜ້າ.

**ຕົວຢ່າງ:** ແບບພິມ ໃບມອບສັນທະ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

------------------------

## ໃບມອບສັນທະ

ຂ້າພະເຈົ້າທ້າວ/ນາງ ______ ນາມສະກຸນ __________, ອາຍຸ______ ປີ, ສັນຊາດ ________, ອາຊີບ____, ປັດຈຸບັນຢູ່ບ້ານ__________, ໜ່ວຍ _______, ເມືອງ ____, ແຂວງ/ນະຄອນ________, ຕົນໃນຖານະເປັນ ໂຈດ/ຈຳເລີຍ ໄດ້ມອບສັນທະ ໃຫ້ແກ່ ທ້າວ/ນາງ ________ ນາມສະກຸນ __________, ອາຍຸ______ ປີ, ສັນຊາດ ________, ອາຊີບ__________, ປັດຈຸບັນຢູ່ບ້ານ__________, ໜ່ວຍ _______, ເມືອງ ____________, ແຂວງ/ນະຄອນ ___________ ເປັນຜູ້ຕາງໜ້າ ຂ້າພະເຈົ້າໃນການເຄື່ອນໄຫວດຳເນີນຄະດີ______________________________________________________________________

______________________________________________________________________

______________________________________________________________________

ດັ່ງນັ້ນ, ຈິ່ງໄດ້ເຮັດໃບມອບສັນທະ ສະບັບນີ້ໄວ້ ເພື່ອໃຊ້ເປັນຫຼັກຖານ.

ທີ່ _________ວັນທີ______ /_____ / 2014

**ຜູ້ຮັບມອບສັນທະ** **ຜູ້ມອບສັນທະ**

**ຢັ້ງຢືນຈາກຫ້ອງການ/ໜ່ວຍງານທະບຽນສານ** **ອົງການປົກຄອງບ້ານ**

### 3.4. ການສືບຕໍ່ແທນຕົວໃນການດຳເນີນຄະດີ

#### 3.4.1. ຄວາມໝາຍ

ການສືບຕໍ່ແທນຕົວໃນການດຳເນີນຄະດີ ແມ່ນການສືບຕໍ່ດຳເນີນຄະດີແທນໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ໃນກໍລະນີທີ່ພວກກ່ຽວຫາກໄດ້ເສຍຊີວິດ ຫຼື ຍຸບເລີກ ຫຼື ລົ້ມລະລາຍ ແລະ ອື່ນໆໃນໄລຍະຂອງການດຳເນີນຄະດີຢູ່ສານ ເພື່ອເຮັດໃຫ້ການດຳເນີນຄະດີມີຄວາມຕໍ່ເນື່ອງ ຮັບປະກັນການປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງ.

#### 3.4.2. ເງື່ອນໄຂ

ການສືບຕໍ່ແທນຕົວໃນການດຳເນີນຄະດີ ຈະມີຂຶ້ນໄດ້ຕ້ອງມີເງື່ອນໄຂດັ່ງນີ້[6]:

- ໃນໄລຍະຂອງການດຳເນີນຄະດີ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ທີ່ເປັນບຸກຄົນ ຊຶ່ງໄດ້ເສຍຊີວິດ ເວັ້ນເສຍແຕ່ການຮ້ອງຟ້ອງ ຫຼື ການຮ້ອງຂໍກ່ຽວກັບສິດສ່ວນຕົວທີ່ບໍ່ສາມາດປະຕິບັດແທນໄດ້ ເປັນຕົ້ນການປົດສິດການເປັນພໍ່ແມ່ ແລະ ລູກ;
- ໃນກໍລະນີທີ່ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ທີ່ເປັນນິຕິບຸກຄົນ ຕ້ອງແມ່ນນິຕິບຸກຄົນນັ້ນໄດ້ຖືກຍຸບເລີກ ຫຼື ລົ້ມລະລາຍ;
- ໂຈດ ຫຼື ຈຳເລີຍໄດ້ມອບສິດ ຫຼື ພັນທະໃຫ້ບຸກຄົນອື່ນປະຕິບັດແທນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ[7] ;
- ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ມີຜູ້ສືບທອດ;
- ມີການສະເໜີຂອງຜູ້ສືບທອດ ຫຼື ຜູ້ທີ່ໄດ້ຮັບມອບສິດ ຢ່າງເປັນລາຍລັກອັກສອນຕໍ່ສານ ພ້ອມດ້ວຍຄັດຕິດເອກະສານກ່ຽວກັບການເສຍຊີວິດ, ການຍຸບເລີກ ຫຼື ລົ້ມລະລາຍຂອງຄູ່ຄວາມ, ບຸກຄົນທີສາມ ຫຼື ຕາມຄຳເຫັນຂອງສານໃຫ້ນຳເອົາຜູ້ສືບທອດມາເປັນຜູ້ສືບຕໍ່ແທນຕົວ;
- ມີຄຳສັ່ງຂອງຄະນະສານ ໃຫ້ຈ່າສານປ່ຽນຕົວຄູ່ຄວາມໃນສຳນວນຄະດີ.

ການສືບຕໍ່ແທນຕົວອາດຈະເກີດຂຶ້ນໃນທຸກຂັ້ນຕອນຂອງການດຳເນີນຄະດີ, ສິດ, ພັນທະ ແລະທຸກການກະທຳຜ່ານມາຂອງຄູ່ຄວາມໃນຄະດີນັ້ນ ມີຜົນບັງຄັບສຳລັບຜູ້ສືບຕໍ່ແທນຕົວ.

#### 3.4.3. ສິດ ແລະ ພັນທະຂອງຜູ້ສືບຕໍ່ແທນຕົວໃນການດຳເນີນຄະດີ

ຜູ້ສືບຕໍ່ແທນຕົວໃນການດຳເນີນຄະດີຈະຖືວ່າເປັນໂຈດ ຫຼື ຈຳເລີຍໃນຄະດີດັ່ງກ່າວ ສະນັ້ນ ຈຶ່ງມີສິດ ແລະ ພັນທະຄືກັນກັບຄູ່ຄວາມໃນຄະດີ.

ໃນກໍລະນີ ໂຈດ ຫຼື ຈຳເລີຍ ຝ່າຍໃດຝ່າຍໜຶ່ງ ຫາກໄດ້ເສຍຊີວິດ ຫຼື ນິຕິບຸກຄົນ ທີ່ເປັນຄູ່ຄວາມນັ້ນ ໄດ້ຖືກຍຸບເລີກ ຫຼື ລົ້ມລະລາຍ, ຊຶ່ງໄດ້ມອບໃຫ້ບຸກຄົນອື່ນ ປະຕິບັດແທນຕົນນັ້ນ ຜູ້ທີ່ໄດ້ຮັບມອບສິດ ຫຼື ມອບໝາຍຕ້ອງໄດ້ເຮັດໜັງສືເປັນລາຍລັກອັກສອນຍື່ນຕໍ່ສານ ບ່ອນທີ່ເຫດການເກີດຂຶ້ນນັ້ນເປັນບ່ອນພິຈາລະນາ.

### 3.5. ພະຍານ

#### 3.5.1. ຄວາມໝາຍ

ພະຍານແມ່ນບຸກຄົນທີ່ໄດ້ຮູ້ເຫັນເຫດການຕົວຈິງຂອງຂໍ້ຂັດແຍ່ງ ແລະ ສະພາບຂອງຄະດີ ຫຼື ເວົ້າອີກຢ່າງໜຶ່ງ ພະຍານແມ່ນບຸກຄົນທີ່ເຂົ້າຮ່ວມໃນຄະດີ ເພື່ອໃຫ້ຂໍ້ມູນ ຫຼື ບອກແຫຼ່ງຂ່າວ ກ່ຽວກັບສິ່ງທີ່ຜູ້ກ່ຽວໄດ້ເຫັນ ຫຼື ຮູ້ແຈ້ງເຫດການໃດໜຶ່ງ ກ່ຽວກັບຄະດີທີ່ເກີດຂຶ້ນ ໂດຍບໍ່ຫວັງຜົນປະໂຫຍດ.

---

[6] ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 78

[7] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ, ສະບັບປັບປຸງ ປີ 2008, ມາດຕາ 31, ວັກທີ 4 ໄດ້ກຳນົດໄວ້ວ່າ: ລູກໜີ້ມີສິດມອບພັນທະຂອງຕົນໃຫ້ລູກໜີ້ຄົນໃໝ່ ປະຕິບັດແທນຕົນ, ແຕ່ຕ້ອງໄດ້ຮັບການຕົກລົງເຫັນດີ ຈາກເຈົ້າໜີ້ ເສຍກ່ອນ.

**3.5.2. ເງື່ອນໄຂ**

ຜູ້ທີ່ຈະເປັນພະຍານໄດ້ ຕ້ອງມີເງື່ອນໄຂດັ່ງນີ້:

- ບຸກຄົນ ທີ່ມີອາຍຸ ເຖິງ 18 ປີ, ບໍ່ເປັນຄົນໃບ້ບ້າເສັຍຈິດ ແລະ ບໍ່ເປັນຍາດພີ່ນ້ອງໃກ້ຊິດຂອງຄູ່ຄວາມຝ່າຍໃດຝ່າຍໜຶ່ງ;
- ບຸກຄົນ ທີ່ເຂົ້າຮ່ວມເປັນພະຍານໃນນິຕິກຳຕ່າງໆ ເປັນຕົ້ນສັນຍາ, ພິໄນກຳ;
- ບຸກຄົນ ທີ່ເຫັນເຫດການທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ ຫຼື ຄະດີໂດຍກົງ;
- ບຸກຄົນທີ່ຮູ້ກ່ຽວກັບສະພາບເຫດການຂອງຄະດີຜ່ານການໄດ້ຮັບຟັງ, ໄດ້ຍິນບຸກຄົນອື່ນເລົ່າໃຫ້ຟັງ;
- ບຸກຄົນ ທີ່ບໍ່ມີຜົນປະໂຫຍດກ່ຽວຂ້ອງກັບຄະດີທີ່ກຳລັງດຳເນີນຢູ່.

ຄົນຫູໜວກ, ປາກກືກ, ຄົນປັນຍາອ່ອນ, ເສັຍຈິດ, ເດັກທີ່ບໍ່ເຖິງກະສຽນອາຍຸ 18 ປີ, ຍາດພີ່ນ້ອງໃກ້ຊິດຂອງຄູ່ຄວາມຝ່າຍໃດຝ່າຍໜຶ່ງ ສາມາດເຂົ້າມາໃຫ້ການຕໍ່ສານໄດ້ ຊຶ່ງຄຳໃຫ້ການນັ້ນຖືເປັນຂໍ້ມູນ ແຕ່ບໍ່ຖືເປັນຫຼັກຖານ ເພາະບຸກຄົນດັ່ງກ່າວບໍ່ຖືເປັນພະຍານ.

**3.5.3. ສິດ ແລະ ພັນທະຂອງພະຍານ**

ພະຍານທຸກຄົນທີ່ຖືກຮຽກຕົວເຂົ້າມາສານຕ້ອງໃຫ້ການຢ່າງຖືກຕ້ອງຕາມຄວາມເປັນຈິງ. ໃນກໍລະນີທີ່ບໍ່ມີຄວາມສາມາດເຂົ້າມາສານຕາມໝາຍຮຽກ ຍ້ອນເຫດຜົນທີ່ຈຳເປັນ ແລະ ເຊື່ອຖືໄດ້ເຊັ່ນ: ເຈັບເປັນໜັກ, ເຖົ້າແກ່ມີສຸຂະພາບອ່ອນເພຍ, ເສັຽອົງຄະບໍ່ສາມາດໄປມາໄດ້ ຫຼື ຍ້ອນເຫດຜົນທີ່ຈຳເປັນ ອື່ນໆ ສານຈະເອົາຄຳໃຫ້ການຂອງພະຍານບ່ອນທີ່ພະຍານອາໄສຢູ່, ຢູ່ສະຖານປິ່ນປົວກໍໄດ້. ໃນກໍລະນີທີ່ພະຍານຫາກຢູ່ຫ່າງໄກ ເຊັ່ນ ຢູ່ຕ່າງແຂວງ, ສານທີ່ມີສິດອຳນາດໃນການດຳເນີນຄະດີ ຈະອອກປະເດັນການສອບສວນໃຫ້ສານປະຊາຊົນບ່ອນພະຍານນັ້ນຢູ່ເອົາຄຳໃຫ້ການແທນກໍໄດ້. ຄຳໃຫ້ການເປັນລາຍລັກອັກສອນ ແລະ ຫຼັກຖານຕາມປະເດັນການສອບສວນ ຕ້ອງສົ່ງຄືນໃຫ້ສານທີ່ໄດ້ອອກປະເດັນການສອບສວນ.

ຖ້າພະຍານທີ່ຖືກຮຽກຕົວ ຫາກບໍ່ເຂົ້າສານເຖິງສາມຄັ້ງ ໂດຍບໍ່ມີເຫດຜົນຈະຖືກພາຕົວ ຫຼື ຖືກລົງໂທດທາງອາຍາຕາມຄຳສັ່ງຟ້ອງຂອງອົງການໄອຍະການ ໃນສະຖານບໍ່ປະຕິບັດຕາມຄຳສັ່ງຂອງສານ.

ພະຍານມີສິດ ດັ່ງນີ້:

- ເຂົ້າມາໃຫ້ການຕໍ່ສານ ເພື່ອຊີ້ແຈງບັນຫາທີ່ຕົນໄດ້ຮູ້, ໄດ້ເຫັນ;
- ຂໍເບິ່ງບົດບັນທຶກຄຳໃຫ້ການຂອງຕົນທີ່ໄດ້ໃຫ້ການໄປແລ້ວ, ສະເໜີດັດແປງ, ເພີ່ມເຕີມບົດບັນທຶກຄຳໃຫ້ການຂອງຕົນ ຫຼື ໃຫ້ການເພີ່ມເຕີມ ເພື່ອຄວາມຖືກຕ້ອງກ່ອນລົງລາຍເຊັນ;
- ໄດ້ຮັບຄ່າຕອບແທນໃນການເຂົ້າມາໃຫ້ການຕໍ່ສານ ຕາມລະບຽບການ;
- ໄດ້ຮັບການປົກປ້ອງຕາມລະບຽບກົດໝາຍຈາກການຂົ່ມຂູ່ຕໍ່ຊີວິດ ແລະ ສຸຂະພາບ, ກຽດ, ຊື່ສຽງ ແລະ ຊັບສິນ ຍ້ອນການໃຫ້ການຂອງຕົນ.

ພະຍານມີພັນທະດັ່ງນີ້:

- ເຂົ້າມາສະເໜີຕົວຕາມໝາຍຮຽກຂອງສານ;
- ໃຫ້ການຢ່າງຖືກຕ້ອງຕາມທີ່ຕົນໄດ້ຮູ້, ໄດ້ເຫັນ ຕາມຕົວຈິງ;
- ຮັບຜິດຊອບຕາມກົດໝາຍຕໍ່ການໃຫ້ການເທັດ ຫຼື ບໍ່ຍອມໃຫ້ການ, ສານຈະເອົາຄຳໃຫ້ການຂອງພະຍານໃນບ່ອນຢູ່ຂອງຜູ້ກ່ຽວເອງກໍໄດ້ໃນກໍລະນີທີ່ຜູ້ກ່ຽວຫາກເຈັບເປັນ, ເຖົ້າແກ່, ເສັຍອົງຄະ ຫຼື ບໍ່ສາມາດເຂົ້າມາຕາມໝາຍຮຽກຍ້ອນມີຄວາມຈຳເປັນ.

### 3.6. ຜູ້ຊ່ຽວຊານ

#### 3.6.1. ຄວາມໝາຍ

ຜູ້ຊ່ຽວຊານ ແມ່ນບຸກຄົນທີ່ມີຄວາມຮູ້ ແລະ ປະສົບການທາງດ້ານວິຊາສະເພາະໃດໜຶ່ງ ທີ່ຖືກຮັບຮູ້ຈາກສະຖາບັນທີ່ກ່ຽວຂ້ອງ ຊຶ່ງສາມາດໃຫ້ຄວາມກະຈ່າງແຈ້ງ ຕໍ່ບັນຫາທີ່ພົວພັນກ່ຽວກັບວິຊາສະເພາະຂອງຕົນ[8] ໝາຍຄວາມວ່າຜູ້ຊ່ຽວຊານ ແມ່ນບຸກຄົນໃດໜຶ່ງ ທີ່ມີຄວາມຮູ້ຄວາມສາມາດ ແລະ ມີປະສົບການທາງດ້ານວິທະຍາສາດ, ເຕັກນິກ ແລະ ວິຊາສະເພາະໃດໜຶ່ງ ຊຶ່ງຖືກແຕ່ງຕັ້ງຢ່າງເປັນທາງການຈາກສານ. ຜູ້ຊ່ຽວຊານ ບໍ່ແມ່ນພະຍານໃນຄະດີ.

ຜູ້ຊ່ຽວຊານ ເຂົ້າຮ່ວມໃນການດຳເນີນຄະດີແພ່ງມີສອງ ລັກສະນະຄື: ເຂົ້າຮ່ວມພິສູດຕາມການແຕ່ງຕັ້ງ ແລະ ເຂົ້າຮ່ວມໃນການພິສູດຕາມການສະເໜີຂອງສານ.

#### 3.6.2. ເງື່ອນໄຂ

ການດຳເນີນຄະດີທີ່ສານຕ້ອງແຕ່ງຕັ້ງຜູ້ຊ່ຽວຊານທຳການພິສູດ ມີເງື່ອນໄຂດັ່ງນີ້ :

- ບຸກຄົນ ທີ່ສານຈະແຕ່ງຕັ້ງເປັນຜູ້ຊ່ຽວຊານຕ້ອງແມ່ນບຸກຄົນທີ່ມີຄວາມຮູ້ ແລະ ມີປະສົບການທາງດ້ານວິຊາສະເພາະໃດໜຶ່ງທີ່ແນ່ນອນ ທີ່ສາມາດໃຫ້ຄວາມກະຈ່າງແຈ້ງ ຕໍ່ບັນຫາໃດໜຶ່ງ;
- ບັນຫາ ທີ່ບໍ່ຈະແຈ້ງນັ້ນ ຕ້ອງແມ່ນບັນຫາກ່ຽວກັບວິທະຍາສາດ, ເຕັກນິກ, ການຄ້າ, ບັນຊີ, ພັນທຸກຳ ແລະ ທາງດ້ານວິທະຍາສາດອື່ນ;
- ມີການຮ້ອງຂໍຂອງຄູ່ຄວາມ ຕໍ່ສານ;
- ມີຄຳສັ່ງແຕ່ງຕັ້ງຂອງຄະນະສານຢ່າງເປັນລາຍລັກອັກສອນ.

ການດຳເນີນຄະດີ ທີ່ສານສະເໜີໃຫ້ຜູ້ຊ່ຽວຊານທຳການພິສູດ ມີເງື່ອນໄຂ ຄື:

- ການຈັດຕັ້ງທາງດ້ານວິຊາສະເພາະທີ່ກ່ຽວຂ້ອງ ເຊັ່ນ ກົມຕຳຫຼວດເຕັກນິກ;
- ບັນຫາ ທີ່ບໍ່ຈະແຈ້ງ, ມີຂໍ້ສົງໄສ, ຊໍ້າກັນ, ຂັດກັນ ເຊັ່ນ ຕົວໜັງສື, ລາຍເຊັນ, ຕາປະທັບ, ສິ່ງຂອງ, ສະຖານທີ່ ຫຼື ບັນຫາອື່ນທາງດ້ານເຕັກນິກ;
- ມີການສະເໜີ, ຮ້ອງຂໍຂອງຄູ່ຄວາມ;
- ມີໃບສະເໜີຂອງສານຫາພາກສ່ວນທີ່ກ່ຽວຂ້ອງ.

#### 3.6.3. ສິດ ແລະ ພັນທະຂອງຜູ້ຊ່ຽວຊານ

ຜູ້ຊ່ຽວຊານ ຕ້ອງຮັບຜິດຊອບຕໍ່ຄຳເຫັນຂອງຕົນ ແລະ ການພິສູດດັ່ງກ່າວອາດຈະເຮັດໂດຍຜູ້ຊ່ຽວຊານຫຼາຍຄົນ ຫຼື ຫຼາຍຄັ້ງກໍໄດ້. ຖ້າຫາກວ່າການພິສູດນັ້ນ, ເມື່ອສານ ເຫັນວ່າ ຜົນຂອງການພິສູດ ຍັງບໍ່ທັນແຈ້ງຂ່າວ ຫຼື ມີການເພີ່ມເຕີມ, ດັດແປງຜົນຂອງການພິສູດ ສານ ມີສິດສັ່ງໃຫ້ຜູ້ຊ່ຽວຊານທຳການພິສູດຄືນໃໝ່ໄດ້ແຕ່ຕ້ອງໃຫ້ມີຈຳນວນຜູ້ຊ່ຽວຊານຫຼາຍກວ່າ ເທື່ອຜ່ານມາ, ເນື່ອງຈາກວ່າ: ເພື່ອຮັບປະກັນຄວາມຜົນຂອງການພິສູດ ແລະ ພ້ອມທັງຊັ່ງຊາຕີລາຄາ ລະຫວ່າງຜູ້ຊ່ຽວຊານ ດ້ວຍກັນ ເພື່ອເຮັດໃຫ້ຜົນຂອງການພິສູດນັ້ນ ອອກມາຢ່າງຖືກຕ້ອງ, ຄົບຖ້ວນ ແລະ ສາມາດນຳມາເປັນຫຼັກຖານ ເພື່ອຢັ້ງຢືນຕໍ່ສານ. ນອກຈາກນີ້, ທຸກໆຄັ້ງຜູ້ຊ່ຽວຊານທີ່ທຳການພິສູດນັ້ນ ຕ້ອງຮັກສາຄວາມລັບຕໍ່ຜົນຂອງການພິສູດຕາມຄຳສັ່ງຂອງສານ.

**ຕົວຢ່າງ:** ສານໄດ້ສົ່ງເອກະສານໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອທຳການພິສູດລາຍເຊັນ ຂອງບຸກຄົນໃດໜຶ່ງ ກ່ຽວກັບຄະດີ ທີ່ສົງໄສວ່າເປັນເອກະສານປອມ, ໃນກໍລະນີນີ້ ພະນັກງານວິຊາການຂອງພາກສ່ວນດັ່ງກ່າວ ຕ້ອງດຳເນີນການພິສູດ ຕາມຫຼັກວິຊາການ ໃນຖານະເປັນຜູ້ຊ່ຽວຊານ ຊຶ່ງຕ້ອງມີຈັນຍາບັນ ເຊັ່ນ ການຮັກສາຄວາມລັບ ກ່ຽວກັບຜົນຂອງການພິສູດນັ້ນ ພ້ອມທັງເຮັດບົດສະຫຼຸບ ແລ້ວ ສົ່ງໃຫ້ສານຕາມກຳນົດເວລາ ທີ່ໄດ້ກຳນົດໄວ້.

---

[8] ກົດໝາຍວ່າ ດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 82

**ຜູ້ຊ່ຽວຊານ ມີສິດດັ່ງນີ້ :**

- ທວງເອົາຂໍ້ມູນເພີ່ມເຕີມ ເພື່ອໃຫ້ການພິສູດມີຄວາມຖືກຕ້ອງ ແລະ ຊັດເຈນ;
- ໄດ້ຮັບຄ່າຕອບແທນແລະຄ່າໃຊ້ຈ່າຍເຂົ້າໃນການພິສູດຫຼັກຖານຕາມຄໍາສັ່ງ ຫຼື ຄໍາສະເໜີຂອງສານ;
- ໃຫ້ການຊີ້ແຈງຕໍ່ສານ ກ່ຽວກັບຜົນການພິສູດ;
- ເພີ່ມເຕີມ, ດັດແປງຜົນການພິສູດຫລັກຖານ ຖ້າເຫັນວ່າມີຂໍ້ມູນໃຫມ່ ກ່ຽວກັບການພິສູດ;
- ໄດ້ຮັບການປົກປ້ອງ ຕາມລະບຽບກົດໝາຍຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດ, ຊື່ສຽງ ແລະ ຊັບສິນທີ່ກ່ຽວຂ້ອງກັບການພິສູດຫລັກຖານ ແລະ ໃນເວລາພິສູດຫຼັກຖານ.

ຜູ້ຊ່ຽວຊານມີພັນທະດັ່ງນີ້:

- ພິສູດຫຼັກຖານ ແລະ ໃຫ້ຄໍາເຫັນຢ່າງຖືກຕ້ອງຕາມຫລັກວິຊາສະເພາະ;
- ສົ່ງບົດສະຫຼຸບຜົນການພິສູດຫລັກຖານ ຕາມກໍານົດເວລາທີ່ໄດ້ບົ່ງໄວ້ໃນຄໍາສັ່ງ ຫຼື ຄໍາສະເໜີຂອງສານ;
- ເຂົ້າມາໃຫ້ການຊີ້ແຈງຕໍ່ສານຕາມການເຊີນຂອງສານ;
- ຮັບຜິດຊອບຕໍ່ການພິສູດຂອງຕົນ;
- ຮັກສາຄວາມລັບຕໍ່ຜົນການພິສູດຕາມຄໍາສັ່ງ ຫຼື ຄໍາສະເໜີຂອງສານ.

ເຖິງແມ່ນວ່າກົດໝາຍ ຈະໄດ້ກໍານົດສິດ ແລະ ພັນທະ ຂອງຜູ້ຊ່ຽວຊານໄວ້ແລ້ວກໍຕາມ, ຖ້າຫາກການສະໜອງຂໍ້ມູນ ຫຼື ຫຼັກຖານ ທີ່ນໍາມາໂດຍຄູ່ຄວາມ ເພື່ອປະກອບຍື່ນຕໍ່ສານນັ້ນ ບໍ່ພຽງພໍ ຫຼື ບໍ່ຊັດເຈັນ ຫຼື ໄດ້ສູນເສັຍໄປແລ້ວຈຶ່ງເປັນການຍາກໃນການຊອກຫາ ແລະ ນໍາມາພິສູດ ເພື່ອຊອກຫາຄວາມເປັນຈິງ. ດັ່ງນັ້ນ ຜູ້ຊ່ຽວຊານ ຕ້ອງໄດ້ເອົາໃຈໃສ່ ເປັນພິເສດຕໍ່ກັບຂໍ້ມູນຫຼັກຖານ ຫຼື ເນື້ອໃນເອກະສານທີ່ຄູ່ຄວາມນໍາມາພິສູດນັ້ນ.

### 3.7. ຜູ້ແປພາສາ

#### 3.7.1. ຄວາມໝາຍ

ຜູ້ແປພາສາ ແມ່ນບຸກຄົນ ທີ່ມີຄວາມຮູ້, ຄວາມສາມາດ ແລະ ມີປະສົບການໃນການເວົ້າ, ຟັງ, ອ່ານ, ຂຽນ ຫຼື ແປພາສາໃດໜຶ່ງໄດ້ຢ່າງຄ່ອງແຄ້ວ, ເຂົ້າໃຈດີ, ເລິກເຊິ່ງ ໃນຄໍາສັບທາງດ້ານກົດໝາຍ ຫຼື ຄໍາສັບອື່ນ ເພື່ອແປເປັນພາສາລາວ ແລະ ຊ່ວຍໃຫ້ການສື່ສານ, ສົນທະນາ ໃຫ້ມີຄວາມເຂົ້າໃຈກັນກ່ຽວກັບເຫດການຂອງຄະດີ ລະຫວ່າງຜູ້ເຂົ້າຮ່ວມໃນການດໍາເນີນຄະດີດ້ວຍກັນ ແລະ ຜູ້ຮັບຜິດຊອບໃນການດໍາເນີນຄະດີ.

#### 3.7.2. ເງື່ອນໄຂ

ຜູ້ແປພາສາທີ່ເຂົ້າຮ່ວມໃນການດໍາເນີນຄະດີ ຕ້ອງມີເງື່ອນໄຂດັ່ງນີ້:

- ບຸກຄົນ ທີ່ສາມາດເວົ້າ, ຟັງ, ອ່ານ, ຂຽນ ແລະ ແປພາສາໃດໜຶ່ງ ເປັນພາສາລາວຢ່າງລະອຽດ, ຈະແຈ້ງ, ເລິກເຊິ່ງ ແລະ ຖືກຕ້ອງຕາມເນື້ອໃນຂອງການເວົ້າ ແລະ ເອກະສານ;
- ໂຈດ, ຈໍາເລີຍ ຫຼື ພະຍານ ບໍ່ສາມາດເວົ້າ, ອ່ານ, ຂຽນ ຫຼື ບໍ່ເຂົ້າໃຈພາສາລາວໄດ້ ຫຼື ເຂົ້າໃຈບໍ່ເລິກເຊິ່ງ;
- ມີການສະເໜີ ຫຼື ຮ້ອງຂໍ ຕໍ່ສານເພື່ອໃຫ້ມີຜູ້ແປພາສາ ຫຼື ຕາມຄໍາເຫັນຂອງສານເອງ;
- ມີການແຕ່ງຕັ້ງເປັນລາຍລັກອັກສອນຈາກສານໃຫ້ເປັນຜູ້ແປພາສາ.

#### 3.7.3. ສິດ ແລະ ພັນທະຂອງຜູ້ແປພາສາ

ຜູ້ແປພາສາທີ່ຖືກແຕ່ງຕັ້ງຢ່າງຖືກຕ້ອງຕາມກົດໝາຍໃຫ້ເປັນຜູ້ແປພາສາໃນການດໍາເນີນຄະດີຢູ່ສານມີສິດດັ່ງນີ້:

- ໄດ້ຮັບຂໍ້ມູນທີ່ກ່ຽວຂ້ອງກັບຄະດີ ເພື່ອນໍາໄປສຶກສາຄົ້ນຄ້ວາໃຫ້ເຂົ້າໃຈ ເພື່ອກະກຽມການແປພາສາໃຫ້ຖືກຕ້ອງ;
- ໄດ້ຮັບຄ່າຕອບແທນ ໃນການແປພາສາຕາມລະບຽບການ ຫຼື ຕາມການຕົກລົງ;

- ໄດ້ຮັບການປົກປ້ອງຕາມລະບຽບກົດຫມາຍຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດ, ຊື່ສຽງ ແລະ ຊັບສິນ ທີ່ກ່ຽວຂ້ອງກັບການແປພາສາ ໃນການດຳເນີນຄະດີ.

ຜູ້ແປພາສາ ມີພັນທະດັ່ງນີ້ :

- ແປພາສາ ໃຫ້ຖືກຕ້ອງ ຕາມເນື້ອໃນຂອງການເວົ້າ, ການໃຫ້ການຂອງຄູ່ຄວາມ ແລະ ຕາມເນື້ອໃນເອກະສານທີ່ປະກອບໃນສຳນວນຄະດີ;
- ເຂົ້າມາແປພາສາຕາມການແຕ່ງຕັ້ງຂອງສານຕາມວັນເວລາ, ສະຖານທີ່ກຳນົດໄວ້ໃນຄຳສັ່ງຂອງສານ ;
- ຮັບຜິດຊອບຕໍ່ການແປຂອງຕົນທີ່ບໍ່ຖືກຕ້ອງ;
- ຮັກສາຄວາມລັບກ່ຽວກັບຄະດີ ຕໍ່ບັນຫາທີ່ຕົນແປນັ້ນ ຕາມຄຳສັ່ງຂອງສານ.

ຕາມຄວາມຈິງແລ້ວ ຜູ້ແປພາສາ ແມ່ນບຸກຄົນໜຶ່ງ ທີ່ບໍ່ມີສາຍພົວພັນກ່ຽວຂ້ອງກັບຄະດີ ຫຼື ບໍ່ໄດ້ຜົນປະໂຫຍດຫຍັງ ຈາກຄູ່ຄວາມ ແຕ່ຍ້ອນຜູ້ກ່ຽວມີອາຊີບ, ຄວາມຊໍານິຊໍານານ ແລະ ມີປະສົບການໃນການແປພາສາ ຈຶ່ງຖືກແຕ່ງຕັ້ງເຂົ້າຮ່ວມໃນການດຳເນີນຄະດີ ແລະ ການແປພາສານັ້ນຕ້ອງຮັບປະກັນຄວາມຖືກຕ້ອງຕາມຄວາມຈິງ, ຖ້າຫາກມີເຈດຕະນາ ແປຜິດ ເພື່ອຈຸດປະສົງໃດໜຶ່ງ, ຜູ້ແປພາສານັ້ນ ກໍຈະມີຄວາມຮັບຜິດຊອບຕາມລະບຽບກົດໝາຍ.

## 4. ການເຂົ້າຮ່ວມຂອງພະນັກງານໄອຍະການປະຊາຊົນໃນການດຳເນີນຄະດີແພ່ງ

ຫົວໜ້າອົງການ, ພະນັກງານໄອຍະການປະຊາຊົນ ເຂົ້າຮ່ວມໃນການດຳເນີນຄະດີແພ່ງ ໃນຖານະເປັນຜູ້ຕິດຕາມກວດກາການປະຕິບັດກົດໝາຍຢູ່ສານ ແລະ ເປັນໂຈດໃນຄະດີແພ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍເພື່ອປົກປ້ອງຜົນປະໂຫຍດຂອງລັດ, ສັງຄົມ ຫຼື ຂອງບຸກຄົນ ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຄື ຄົນບ້າເສຍຈິດ, ເດັກ ທີ່ບໍ່ເຖິງກະສຽນ ອາຍຸ ສິບແປດ ປີ ທີ່ບໍ່ມີຜູ້ປົກຄອງ[9].

ພະນັກງານໄອຍະການປະຊາຊົນ ມີສິດເຂົ້າຮ່ວມໃນການດຳເນີນຄະດີແພ່ງ ເພື່ອຕິດຕາມກວດກາການປະຕິບັດກົດໝາຍຢູ່ສານ ແນໃສ່ເຮັດໃຫ້ຄະດີຖືກດຳເນີນຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ, ຖືກຕ້ອງ ແລະ ຍຸຕິທຳ.

ພະນັກງານໄອຍະການປະຊາຊົນ ເຂົ້າຮ່ວມໃນການດຳເນີນຄະດີ ຢູ່ສານມີ ດັ່ງນີ້:

1) ການເຂົ້າຮ່ວມໃນການດຳເນີນຄະດີແພ່ງໃນຖານະເປັນໂຈດ ເມື່ອມີການກະທຳໃດໜຶ່ງທີ່ແຕະຕ້ອງເຖິງຜົນປະໂຫຍດຂອງລັດ ຫຼື ສັງຄົມ ຊຶ່ງບໍ່ມີການຮ້ອງຟ້ອງ ຫຼື ການຮ້ອງຂໍຂອງພາກສ່ວນລັດ ຫຼື ອົງການຈັດຕັ້ງ ຫຼື ວິສາຫະກິດທີ່ກ່ຽວຂ້ອງ;

2) ການເຂົ້າຮ່ວມໃນການດຳເນີນຄະດີແພ່ງ ໃນຖານະເປັນຜູ້ຕິດຕາມກວດກາການດຳເນີນຄະດີຢູ່ສານ ເພື່ອເຮັດໃຫ້ຄະດີຖືກດຳເນີນຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ, ຖືກຕ້ອງ ແລະ ຍຸຕິທຳ.

**ສິ່ງທີ່ຄວນເອົາໃຈໃສ່:** ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 61 ຫາ ມາດຕາ 68 ການເຂົ້າຮ່ວມຂອງພະນັກງານໄອຍະການປະຊາຊົນໃນການດຳເນີນຄະດີແພ່ງນັ້ນ ແມ່ນເປັນໂຈດແຕ່ໃນທີ່ນີ້ ບໍ່ແມ່ນຜູ້ເຂົ້າຮ່ວມໃນການດຳເນີນຄະດີ, ແຕ່ຫາກເປັນຜູ້ປະຕິບັດກົດໝາຍ ແລະ ຕິດຕາມກວດກາການດຳເນີນຄະດີແພ່ງຢູ່ສານເທົ່ານັ້ນ ແລະ ມີສິດກວດກາຂໍ້ມູນຫຼັກຖານຢູ່ໃນສຳນວນຄະດີ, ສະເໜີໃຫ້ສານຄົ້ນຄວ້າຄືນ ກ່ຽວກັບບັນຫາໃດໜຶ່ງ ທີ່ຍັງບໍ່ທັນລະອຽດ ແລະ ຊັດເຈນເທື່ອ. ນອກຈາກນີ້, ພະນັກງານໄອຍະການປະຊາຊົນ ຍັງມີສິດສອບຖາມຜູ້ເຂົ້າຮ່ວມໃນທີ່ປະຊຸມສານ ເພື່ອຕິດຕາມກວດກາການປະຕິບັດກົດໝາຍ ແລະ ຖະແຫຼງຕໍ່ທີ່ປະຊຸມສານ. ນອກນັ້ນ ກໍຍັງມີສິດສະເໜີຄັດຄ້ານ ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ເມື່ອເຫັນວ່າ ສານປະຊາຊົນໄດ້ຕັດສິນທີ່ມີການລະເມີດກົດໝາຍ, ຕີຄວາມໝາຍ ຫຼື ນຳໃຊ້ມາດຕາກົດໝາຍບໍ່ຖືກຕ້ອງ.

[9] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 62

# ບົດທີ 4
# ເງິນວາງສານ ແລະ ຄ່າທຳນຽມສານ

## 1. ເງິນວາງສານ

### 1.1. ຄວາມໝາຍ

ເງິນວາງສານແມ່ນ ຈຳນວນເງິນທີ່ຄູ່ຄວາມ ຫຼື ບຸກຄົນທີສາມ ໄດ້ນຳເງິນມາວາງໄວ້ນຳສານ ໃນເວລາຍື່ນຄຳຮ້ອງຟ້ອງ ຫຼື ຍື່ນຄຳຮ້ອງຂໍອຸທອນ ເພື່ອສະດວກໃນການດຳເນີນຄະດີ[10]ໃຫ້ແກ່ສານ. ໃນການດຳເນີນຄະດີຢູ່ສານຂັ້ນຕົ້ນ ແລະໃນຂັ້ນອຸທອນນັ້ນ ກໍອາດຈະແມ່ນໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ທີ່ບໍ່ພໍໃຈຕໍ່ຄຳຕັດສິນຂອງສານຂັ້ນຕົ້ນ ເປັນຜູ້ນຳເງິນມາວາງໄວ້ນຳສານຂັ້ນອຸທອນ ເພື່ອເປັນຄ່າໃຊ້ຈ່າຍໃນການດຳເນີນຄະດີຢູ່ ສານຂັ້ນອຸທອນ. ຊຶ່ງເງິນວາງສານຢູ່ສານຂັ້ນຕົ້ນທີ່ໂຈດນຳມາວາງສານ ໃນເວລາທີ່ໂຈດໄດ້ຍື່ນຄຳຮ້ອງຟ້ອງນັ້ນ ແມ່ນຈະຖືກນຳໃຊ້ເຂົ້າໃນການດຳເນີນຄະດີຢູ່ສານຂັ້ນຕົ້ນເທົ່ານັ້ນ; ສ່ວນເງິນທີ່ຜູ້ຮ້ອງຂໍອຸທອນ ໄດ້ນຳມາວາງໄວ້ນຳສານຂັ້ນອຸທອນນັ້ນ ກໍຈະເປັນຄ່າໃຊ້ຈ່າຍໃນການດຳເນີນຄະດີຂອງສານຂັ້ນອຸທອນ. ນອກຈາກນັ້ນ ຝ່າຍທີ່ໄດ້ຮ້ອງຂໍອຸທອນຄຳຕັດສິນຍັງຕ້ອງໄດ້ເສັຍເງິນຄ່າຂໍອຸທອນຕື່ມອີກ ຊຶ່ງຕ້ອງໃຊ້ຈ່າຍໃນເວລາທີ່ຍື່ນຄຳຮ້ອງຂໍອຸທອນຢູ່ສານປະຊາຊົນ ທີ່ໄດ້ຕັດສິນຄະດີດັ່ງກ່າວນັ້ນ ແລະເງິນ ວາງສານ ແມ່ນສ່ວນໜຶ່ງ ຂອງຄ່າທຳນຽມສານ[11] ເມື່ອເກັບແລ້ວກໍມອບເຂົ້າງົບປະມານຂອງລັດ.

### 1.2. ລະບຽບການເກັບເງິນວາງສານຂອງສານແຕ່ລະຂັ້ນ

ການເກັບເງິນວາງສານ ເປັນໜ້າທີ່ຂອງຈ່າສານຂອງສານແຕ່ລະຂັ້ນ ເປັນຜູ້ເກັບ ດັ່ງນີ້:

1) ສານປະຊາຊົນຂັ້ນຕົ້ນຈະເກັບເງິນວາງສານ ທີ່ກ່ຽວຂ້ອງກັບການດຳເນີນຄະດີ ຢູ່ສານປະຊາຊົນຂັ້ນຕົ້ນ ແລະ ຄ່າຂໍອຸທອນ;
2) ສານປະຊາຊົນຂັ້ນອຸທອນກໍຈະເກັບເງິນວາງສານທີ່ກ່ຽວຂ້ອງກັບການດຳເນີນຄະດີຢູ່ສານປະຊາຊົນຂັ້ນອຸທອນ ແລະ ຄ່າຂໍລົບລ້າງ;
3) ສ່ວນສານປະຊາຊົນຂັ້ນລົບລ້າງກໍສາມາດເກັບເງິນວາງສານໄດ້ຖ້າມີຄວາມຈຳເປັນ.

ກ່ຽວກັບເງິນວາງສານນີ້ ສານຈະກຳນົດໃຫ້ຝ່າຍທີ່ມາຍື່ນຄຳຮ້ອງຟ້ອງນັ້ນນຳເງິນມາວາງໄວ້ນຳສານ ຊຶ່ງແຕ່ລະຄັ້ງ ແມ່ນບໍ່ໃຫ້ເກີນ ຈຳນວນ 200.000 ກີບ ໃນການເກັບເງິນວາງສານແຕ່ລະຄັ້ງຈ່າສານເປັນຜູ້ເກັບ ແລະ ເກັບໃນເວລາທີ່ມາຍື່ນຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍອຸທອນ ເພື່ອສະດວກໃນການດຳເນີນຄະດີ ແລະ ຈະຕ້ອງອອກໃບບິນຮັບເງິນໃຫ້ແກ່ຜູ້ທີ່ນຳເງິນມາວາງສານນັ້ນ.

### 1.3. ວິທີນຳໃຊ້ເງິນວາງສານ

ເງິນວາງສານທີ່ຜູ້ຮ້ອງຟ້ອງ ຫຼື ໂຈດ ໄດ້ນຳມາວາງໄວ້ນຳສານໃນເວລາທີ່ຜູ້ກ່ຽວຍື່ນຄຳຮ້ອງຟ້ອງ ເພື່ອນຳໃຊ້ເຂົ້າໃນການດຳເນີນຄະດີຢູ່ສານປະຊາຊົນຂັ້ນຕົ້ນ ຫຼື ເງິນວາງສານທີ່ຜູ້ຮ້ອງຂໍອຸທອນໄດ້ນຳມາວາງໄວ້ນຳສານປະຊາຊົນຂັ້ນອຸທອນ ເພື່ອນຳໃຊ້ເຂົ້າໃນການດຳເນີນຄະດີຢູ່ສານປະຊາຊົນຂັ້ນອຸທອນນັ້ນ, ເງິນຈຳນວນດັ່ງກ່າວຈະຖືກນຳໃຊ້ເຂົ້າໃນການສົ່ງໝາຍຮຽກຫາໂຈດ, ຈຳເລີຍ, ບຸກຄົນທີສາມ, ພະຍານ ຫຼື ບຸກຄົນທີ່ກ່ຽວຂ້ອງໃຫ້ເຂົ້າມາຍັງສານ ເພື່ອໃຫ້ຂໍ້ມູນແກ່ສານໃນການດຳເນີນຄະດີ; ໃຊ້ຈ່າຍເຂົ້າໃນການສົ່ງເອກະສານ ແລະ ສົ່ງສຳນວນຄະດີຫາອົງການຈັດຕັ້ງທີ່ກ່ຽວຂ້ອງ ເຊັ່ນ ສົ່ງໃຫ້ສານຂັ້ນເທິງໃນກໍລະນີທີ່ມີການຮ້ອງຂໍອຸທອນ ຫຼື ຮ້ອງຂໍລົບລ້າງ ແລະ ສົ່ງໃຫ້ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃນກໍລະນີທີ່ບໍ່ມີການຂໍອຸທອນ ຫຼື ບໍ່ມີການຂໍລົບລ້າງ ຊຶ່ງຄຳຕັດສິນນັ້ນຫາກໃຊ້ໄດ້ຢ່າງເດັດຂາດແລ້ວ. ນອກຈາກນັ້ນ, ເງິນວາງສານນີ້ກໍອາດຈະຖືກໃຊ້ຈ່າຍອື່ນອີກທີ່ສານເຫັນວ່າມີຄວາມຈຳເປັນທີ່ຈະ

---

[10] ກົດໝາຍວ່າດ້ວຍຄ່າທຳນຽມສານ, ສະບັບປັບປຸງປີ 2006, ມາດຕາ 22 ແລະ ມາດຕາ 155.

[11] ກົດໝາຍວ່າດ້ວຍຄ່າທຳນຽມສານ, ສະບັບປັບປຸງປີ 2006, ມາດຕາ 23 ແລະ ມາດຕາ 156.

ຕ້ອງໃຊ້ຈ່າຍເຂົ້າໃນການດຳເນີນຄະດີຢູ່ສານຂັ້ນຂອງຕົນ ແລະ ທຸກໆການໃຊ້ຈ່າຍເງິນວາງສານນັ້ນ ຈ່າສານຈະເປັນຜູ່ເຮັດບັນຊີລາຍຈ່າຍ ເພື່ອຕິດຕາມໃຫ້ຮູ້ວ່າໄດ້ນຳໃຊ້ເງິນວາງສານເຂົ້າໃນແຕ່ລະອັນນັ້ນໄດ້ໝົດເງິນຈຳນວນເທົ່າໃດ ເຊັ່ນ ໄດ້ສົ່ງໝາຍຮຽກຫາຄູ່ຄວາມຈັກຄັ້ງ, ແຕ່ລະຄັ້ງໝົດເງິນຈຳນວນເທົ່າໃດ, ໄດ້ສົ່ງເອກະສານຈັກສະບັບ ຫຼື ຈັກຄັ້ງ ແຕ່ລະຄັ້ງໝົດເງິນຈຳນວນເທົ່າໃດ ແລະອື່ນໆ. ຊຶ່ງເງິນວາງສານດັ່ງກ່າວນັ້ນກ່ອນທີ່ຄະນະສານຈະນຳເອົາຄະດີຂຶ້ນໄຕ່ສວນໃນທີ່ປະຊຸມສານນັ້ນ ຈ່າສານຈະເປັນຜູ່ສະຫຼຸບວ່າໄດ້ໃຊ້ຈ່າຍອັນໃດແດ່ ແລະ ໝົດເງິນທັງໝົດຈຳນວນເທົ່າໃດ, ໃນກໍລະນີທີ່ການໃຊ້ຈ່າຍເງິນວາງສານນັ້ນຫາກໄດ້ໝົດເງິນຕາມທີ່ຄູ່ຄວາມໄດ້ນຳມາວາງສານນັ້ນໝົດແລ້ວກໍໃຫ້ແລ້ວໄປ, ແຕ່ຖ້າຫາກການໃຊ້ຈ່າຍເງິນວາງສານນັ້ນຫາກຍັງເຫຼືອ ສານກໍຈະສົ່ງຄືນໃຫ້ແກ່ຝ່າຍທີ່ນຳເງິນມາວາງສານນັ້ນ ແລະ ກ່ຽວກັບການໃຊ້ຈ່າຍເງິນວາງສານຈະຍັງເຫຼືອເທົ່າໃດ ຫຼື ໃຊ້ຈ່າຍໝົດເທົ່າໃດ ຫຼື ໝົດແລ້ວນັ້ນ ຄະນະສານກໍຈະວິນິດໄສກ່ຽວກັບການໃຊ້ຈ່າຍເງິນວາງສານດັ່ງກ່າວນັ້ນ ໄວ້ໃນຄຳຕັດສິນພ້ອມທັງຈຳນວນທີ່ເຫຼືອກໍໃຫ້ສົ່ງຝ່າຍທີ່ນຳເງິນມາວາງສານນັ້ນຄືນ.

### 1.4. ການຄຸ້ມຄອງ ແລະ ການກວດກາເງິນວາງສານ

#### 1.4.1. ການຄຸ້ມຄອງເງິນວາງສານ

ການຄຸ້ມຄອງເງິນວາງສານທີ່ໂຈດໄດ້ນຳເງິນມາວາງສານໃນເວລາຜູ່ກ່ຽວໄດ້ຍື່ນຄຳຮ້ອງຟ້ອງນັ້ນ ພາຍຫຼັງທີ່ຈ່າສານໄດ້ຮັບເງິນແລ້ວຈະຕ້ອງເຮັດໃບຮັບເງິນໃຫ້ຜູ່ກ່ຽວ; ຈາກນັ້ນຈ່າສານກໍຈະເປັນຜູ່ຄຸ້ມຄອງຊຶ່ງແມ່ນສິດ ແລະ ໜ້າທີ່ຂອງຈ່າສານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍດຳເນີນຄະດີແພ່ງ ມາດຕາ 59 ໄວ້ ຫຼື ອາດຈະແຕ່ງຕັ້ງພະນັກງານຜູ່ໃດຜູ່ໜຶ່ງ ເປັນຜູ່ຄຸ້ມຄອງຮັກສາເງິນວາງສານນັ້ນໄວ້ ແລະ ຈະຕ້ອງໄດ້ມີບັນຊີລະອຽດໃນການຄຸ້ມຄອງຮັກສາ[12]

#### 1.4.2. ການກວດກາເງິນວາງສານ

ຈ່າສານຕ້ອງກວດກາຄືນການຈັດຕັ້ງປະຕິບັດກ່ຽວກັບເງິນວາງສານ ພ້ອມທັງ ສະຫຼຸບລາຍຮັບ-ລາຍຈ່າຍໃຫ້ຖືກຕ້ອງ, ຄົບຖ້ວນຕາມລະບຽບກົດໝາຍ, ຮັບປະກັນໃຫ້ມີຄວາມໂປ່ງໃສ ແລະ ຍຸຕິທຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## 2. ຄ່າທຳນຽມສານ

### 2.1.ຄວາມໝາຍ

ຄ່າທຳນຽມສານ ແມ່ນ ຄ່າທຳນຽມ ຫຼື ຈຳນວນເງິນ ທີ່ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ມີຄວາມຈຳເປັນຕ້ອງໄດ້ຈ່າຍເຂົ້າໃນການດຳເນີນຄະດີ ໂດຍສະເພາະແລ້ວ ແມ່ນຄ່າໃຊ້ຈ່າຍໃນການດຳເນີນຄະດີ, ເງິນຄ່າໃຊ້ຈ່າຍໃຫ້ແກ່ບຸກຄົນທີ່ຖືກເຊີນເຂົ້າມາຮ່ວມໃນການດຳເນີນຄະດີ, ເງິນຄ່າເອກະສານ ຫຼື ຄ່າອັດສຳເນົາເອກະສານຕ່າງໆ ແລະ ຄ່າອາກອນຂອງລັດ[13].

### 2.2.ຄວາມສຳຄັນ

ຄ່າທຳນຽມສານແມ່ນມີຄວາມສຳຄັນຫຼາຍຕໍ່ການດຳເນີນຄະດີຂອງສານ ຊຶ່ງການດຳເນີນຄະດີໃນແຕ່ລະເລື່ອງ ນັ້ນນອກຈາກສານຈະນຳໃຊ້ເງິນວາງສານທີ່ຄູ່ຄວາມໄດ້ນຳມາວາງໄວ້ນຳສານ ໃນເວລາທີ່ຜູ່ກ່ຽວໄດ້ຍື່ນຄຳຮ້ອງຟ້ອງແລ້ວນັ້ນ ກໍຍັງມີຄວາມຈຳເປັນຕ້ອງໄດ້ນຳໃຊ້ເງິນເຂົ້າໃນການດຳເນີນຄະດີເປັນຕົ້ນແມ່ນ ການນຳໃຊ້ເງິນເພື່ອລົງໄປກວດກາສະຖານທີ່ຂັດແຍ່ງ, ການນຳໃຊ້ເງິນເພື່ອລົງໄປເອົາຄຳໃຫ້ ການຂອງພະຍານຢູ່ໃນສະຖານທີ່ໃດໜຶ່ງ, ໃຊ້ຈ່າຍຄ່າສຳເນົາເອກະສານຕ່າງໆ, ໃຊ້ຈ່າຍໃຫ້ແກ່ຜູ່ຖືກເຊີນເຂົ້າມາຮ່ວມໃນການດຳເນີນຄະດີ, ໃຊ້ຈ່າຍເງິນເພື່ອເປັນຄ່າອາກອນຂອງລັດ ແລະ ອື່ນໆ ຊຶ່ງຄູ່ຄວາມຕ້ອງໄດ້ເສັຍໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ ເພື່ອອຳນວຍຄວາມສະດວກ

---

[12] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 59

[13] ກົດໝາຍວ່າດ້ວຍຄ່າທຳນຽມສານ, ສະບັບປັບປຸງປີ 2006, ມາດຕາ 2 ແລະ ມາດຕາ 155 ວັກທີ 2.

ໃຫ້ແກ່ການດຳເນີນຄະດີຂອງສານ. ຖ້າຫາກຄູ່ກໍລະນີ ຫຼື ຜູ້ທີ່ສະເໜີໃຫ້ລົງກວດກາສະຖານທີ່ ທີ່ມີຂໍ້ຂັດແຍ່ງຫາກບໍ່ມາເສັຍຄ່າທຳນຽມສານກໍຈະພາໃຫ້ການດຳເນີນຄະດີຊັກຊ້າມີການແກ່ຍາວບໍ່ທ່ອງທັນກັບເວລາຕົວຈິງ ແລະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມວ່ອງໄວ ແລະ ມີປະສິດທິຜົນ ພ້ອມກັນນັ້ນການເສັຍຄ່າທຳນຽມສານ ໂດຍສະເພາະແລ້ວແມ່ນຄ່າອາກອນຂອງລັດ, ຄ່າຂໍອຸທອນ ແລະ ຄ່າຂໍລົບລ້າງນັ້ນ ກໍຍັງເປັນການປະກອບສ່ວນສ້າງລາຍຮັບໃຫ້ແກ່ງົບປະມານແຫ່ງລັດອີກດ້ວຍ.

**2.3.ຫຼັກການຂອງຄ່າທຳນຽມສານ**

ຫຼັກການຂອງຄ່າທຳນຽມສານກຳນົດຂຶ້ນ ເພື່ອໃຫ້ຮັບຮູ້ເຖິງການປະກອບສ່ວນຂອງຄູ່ຄວາມ ໃນການດຳເນີນຄະດີແພ່ງ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງຄູ່ຄວາມ ແລະ ເພື່ອຮັບປະກັນໃຫ້ແກ່ການເກັບຄ່າທຳນຽມສານມີຄວາມເປັນເອກະພາບກັນໃນທົ່ວປະເທດ ແລະ ເປັນການສ້າງເງື່ອນໄຂສະດວກໃຫ້ແກ່ສານປະຊາຊົນ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນການເຄື່ອນໄຫວວຽກງານໃຫ້ໄປຕາມພາລະບົດບາດ ແລະ ມີຄວາມຍຸຕິທຳ ພ້ອມກັນນັ້ນ ກໍເປັນການຊຸກຍູ້ໃຫ້ຄູ່ຄວາມໃນຄະດີທີ່ກ່ຽວຂ້ອງຕ້ອງໄດ້ປະຕິບັດພັນທະ ຫຼື ຄວາມຮັບຜິດຊອບຂອງຕົນເອງ.

**2.4. ອົງປະກອບຂອງຄ່າທຳນຽມສານ**

ຄ່າທຳນຽມສານປະກອບດ້ວຍ:

1) ອາກອນຂອງລັດ ຊຶ່ງແມ່ນພາກສ່ວນໜຶ່ງຂອງຄ່າທຳນຽມສານ ທີ່ຄູ່ຄວາມຜູ້ເສັຍຄະດີຕ້ອງຈ່າຍຕາມຄຳຕັດສິນຂອງສານ;

- ອາກອນຂອງລັດຕາມມູນຄ່າຂອງຊັບທີ່ສານຕັດສິນໃຫ້;
- ຄ່າຂໍອຸທອນ, ຄ່າຂໍລົບລ້າງ ແລະ ຄ່າຂໍຮື້ຟື້ນຄະດີ;
- ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ກ່ອນຈະນຳໄປຈັດຕັ້ງປະຕິບັດ ຕ້ອງໃຫ້ເສັຍອາກອນຂອງລັດເສັຍກ່ອນ.

2) ຄ່າໃຊ້ຈ່າຍໃນການດຳເນີນຄະດີ ແມ່ນຄ່າໃຊ້ຈ່າຍເພື່ອທຳການການພິສູດຫຼັກຖານ, ຊັນນະສູດສະຖານທີ່, ຮັກສາຂອງກາງລວມທັງ ຄ່າເດີນທາງ, ຄ່າກິນຢູ່ ແລະ ອື່ນໆ.

3) ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີ ເປັນຕົ້ນຄ່າໃຊ້ຈ່າຍສຳລັບເຊີນພະຍານ, ຜູ້ຊ່ຽວຊານ, ຜູ້ແປພາສາ ທີ່ຖືກເຊີນເຂົ້າມາສານ ແລະ ພະນັກງານທີ່ລົງເຮັດວຽກນັ້ນຈະໄດ້ຮັບຄ່າທົດແທນຈຳນວນເງິນທີ່ພວກກ່ຽວໄດ້ໃຊ້ຈ່າຍເປັນຄ່າເດີນທາງ, ຄ່າພັກເຊົາ ແລະ ຄ່າກິນຢູ່ປະຈຳວັນ.

ຜູ້ຊ່ຽວຊານ, ຜູ້ແປພາສາ, ຜູ້ສົ່ງເອກະສານ ແລະ ຜູ້ຮັກສາຂອງກາງ ຈະໄດ້ຮັບຄ່າແຮງງານໃນເວລາປະຕິບັດວຽກງານ ຕາມການມອບໝາຍຂອງສານຕາມລະບຽບການສະເພາະບົນພື້ນຖານການຄິດໄລ່ຕົວຈິງ.

ນອກຈາກຈະໄດ້ຮັບຄ່າເດີນທາງ, ຄ່າພັກເຊົາ ແລະ ຄ່າຢູ່ກິນປະຈຳວັນແລ້ວ ກຳມະກອນ, ລັດຖະກອນ ທີ່ຖືກເຊີນເຂົ້າມາສານໃນຖານະເປັນພະຍານນັ້ນ ຍັງຕ້ອງໃຫ້ຮັກສາເງິນເດືອນເດີມຂອງຜູ້ກ່ຽວໄວ້, ສ່ວນພະຍານທີ່ບໍ່ແມ່ນກຳມະກອນ, ລັດຖະກອນ ຊຶ່ງຖືກເຊີນເຂົ້າມາສານໂດຍປະວຽກງານປະຈຳວັນນັ້ນ ຜູ້ກ່ຽວກໍຈະໄດ້ຮັບຄ່າຕອບແທນຄືນ.

4) ຄ່າເອກະສານ ແລະ ຄ່າສຳເນົາເອກະສານຕ່າງໆປະກອບດ້ວຍ:

- ຄ່າເສື້ອປົກສຳນວນຄະດີ;
- ຄ່າທຳນຽມເອກະສານ ເຊັ່ນ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ;
- ຄ່າສຳເນົາເອກະສານຕ່າງໆ.

ການເກັບເງິນແຕ່ລະຢ່າງນັ້ນກໍຈະເກັບໃນເວລາທີ່ແຕກຕ່າງກັນໄປ ເຊັ່ນ ຄ່າໃຊ້ຈ່າຍໃນການດຳເນີນຄະດີ, ເງິນຄ່າໃຊ້ຈ່າຍໃຫ້ແກ່ຜູ້ທີ່ຖືກເຊີນເຂົ້າມາຮ່ວມໃນການດຳເນີນຄະດີ ແລະ ເງິນຄ່າໃຊ້ຈ່າຍຄ່າເອກະສານ ຫຼື ຄ່າສຳເນົາ

ເອກະສານຕ່າງໆນັ້ນ ແມ່ນຈະເກັບໃນໄລຍະເວລາທີ່ກຳລັງດຳເນີນຄະດີຂອງສານ; ສ່ວນຄ່າອາກອນຂອງລັດນັ້ນ ແມ່ນຈະເກັບພາຍຫຼັງທີ່ຄຳຕັດສິນ ຫຼື ຄຳພິພາກສານັ້ນໃຊ້ໄດ້ຢ່າງເດັດຂາດ ແລະ ຄູ່ຄວາມຝ່າຍທີ່ເສຍຄະດີຕ້ອງໄດ້ເສຍກ່ອນເວລາທີ່ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຈະຈັດຕັ້ງປະຕິບັດຄຳຕັດສິນດັ່ງກ່າວ.

**2.4.1. ອາກອນຂອງລັດ**

1) ໂດຍລວມແລ້ວອາກອນຂອງລັດ ແມ່ນສ່ວນໜຶ່ງຂອງຄ່າທຳນຽມສານ ຊຶ່ງຄູ່ຄວາມຝ່າຍທີ່ເສຍຄະດີນັ້ນຕ້ອງໄດ້ຈ່າຍຕາມຄຳຕັດສິນຂອງສານ ແລະ ຕ້ອງໄດ້ຖອກເຂົ້າງົບປະມານຂອງລັດ; ສະນັ້ນອາກອນຂອງລັດ ຈຶ່ງແມ່ນຈຳນວນເງິນຄ່າອາກອນທີ່ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫຼື ທັງສອງຝ່າຍຈະຕ້ອງໄດ້ຮ່ວມກັນຮັບຜິດຊອບຈ່າຍເຂົ້າງົບປະມານຂອງລັດ. ອາກອນຂອງລັດຈະກຳນົດແຕກຕ່າງກັນໃນແຕ່ລະຄະດີ ຖ້າຫາກຄະດີໃດທີ່ເປັນຂໍ້ຂັດແຍ່ງ ຊຶ່ງສາມາດຕີມູນຄ່າຂອງຂໍ້ຂັດແຍ່ງນັ້ນໄດ້, ຝ່າຍທີ່ເສຍຄະດີກໍຈະໄດ້ຮັບຜິດຊອບເສຍຄ່າອາກອນຂອງລັດ 2% (ສອງສ່ວນຮ້ອຍ) ຂອງມູນຄ່າທີ່ສານໄດ້ພິຈາລະນາໃຫ້ແກ່ຜູ່ກ່ຽວຮັບຜິດຊອບຕໍ່ອີກຝ່າຍໜຶ່ງ ເຊັ່ນ ຖ້າຫາກສານໄດ້ລົງຄຳຕັດສິນໃຫ້ຝ່າຍຈຳເລີຍໃຊ້ແທນເງິນຈຳນວນ 50.000.000 ກີບ ຄືນໃຫ້ແກ່ຝ່າຍໂຈດ, ໃນກໍລະນີນີ້ ສານກໍລົງຄຳຕັດສິນໃຫ້ຝ່າຍຈຳເລີຍເປັນຜູ່ເສຍຄ່າອາກອນຂອງລັດ 2% ຂອງມູນຄ່າ 50.000.000 ກີບ ນັ້ນ.

ຖ້າຫາກຄະດີໃດທີ່ເປັນການທວງ, ການຂໍປ່ຽນແປງ ຫຼື ການຂໍຍົກເລີກສັນຍາ ຊຶ່ງບໍ່ສາມາດຕີມູນຄ່ານັ້ນໄດ້ ເຊັ່ນຝ່າຍໂຈດໄດ້ທວງໃຫ້ຝ່າຍຈຳເລີຍໂຍກຍ້າຍອອກຈາກທີ່ດິນ ແລະ ເຮືອນ ຊຶ່ງເຫັນວ່າບໍ່ສາມາດຕີມູນຄ່າໄດ້ ແລະ ຖ້າສານຫາກໄດ້ລົງຄຳຕັດສິນໃຫ້ແກ່ຝ່າຍຈຳເລີຍໂຍກຍ້າຍອອກຈາກທີ່ດິນ ແລະ ເຮືອນຂອງຝ່າຍໂຈດນັ້ນ, ສານກໍໃຫ້ຝ່າຍຈຳເລີຍເປັນຜູ່ເສຍເງິນຄ່າອາກອນຂອງລັດຈຳນວນ 50.000 ກີບ ຫຼື ໃນກໍລະນີສານເຫັນວ່າຄຳຮ້ອງຟ້ອງຂອງຝ່າຍໂຈດບໍ່ມີເຫດຜົນ ແລະ ສານຫາກໄດ້ລົງຄຳຕັດສິນຍົກເລີກຄຳຮ້ອງຟ້ອງຂອງຝ່າຍໂຈດຖິ້ມທັງໝົດນັ້ນ; ຕໍ່ກັບບັນຫາດັ່ງກ່າວສານກໍຈະກຳນົດລົງໃນຄຳຕັດສິນໃຫ້ຝ່າຍໂຈດເປັນຜູ່ທີ່ຮັບຜິດຊອບເສຍເງິນຄ່າອາກອນຂອງລັດ ຈຳນວນ 50.000 ກີບ ເຊັ່ນ ດຽວກັນ ແລະ ສານກໍຈະວິນິດໄສລົງຄຳຕັດສິນກ່ຽວກັບຄວາມຮັບຜິດຊອບຕໍ່ກັບຄ່າອາກອນຂອງລັດດັ່ງກ່າວນັ້ນໄວ້ໃນຄຳຕັດສິນ.

2). ອາກອນຂອງລັດກ່ຽວກັບຄະດີສາຍພົວເມັຍແມ່ນ 50.000 ກີບ; ການຮ້ອງຟ້ອງເພື່ອຂໍຢ່າຮ້າງກັບບຸກຄົນທີ່ຖືກຮັບຮູ້ວ່າເປັນຜູ່ຫາຍສາບສູນ ຫຼື ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ບຸກຄົນທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບແຕ່ ຫ້າ ປີ ຂຶ້ນໄປໃຫ້ເສຍ 40.000 ກີບ; ການຮ້ອງຟ້ອງເພື່ອຂໍປ່ຽນແປງ ຫຼື ຍົກເລີກສັນຍາເຊົ່າເຮືອນ, ການອາຍັດຊັບ ແລະ ການຮ້ອງຟ້ອງອື່ນໆ ທີ່ບໍ່ສາມາດຕີມູນຄ່າໄດ້ນັ້ນໃຫ້ເສຍ 50.000 ກີບ.

3). ອາກອນຂອງລັດ ໃນຂັ້ນຕອນຂໍອຸທອນໂດຍປົກກະຕິແມ່ນໃຫ້ເສຍ 30.000 ກີບ; ກ່ຽວກັບຄະດີສາຍພົວເມັຍ; ການຮ້ອງຟ້ອງເພື່ອຂໍຢ່າຮ້າງກັບບຸກຄົນທີ່ຖືກຮັບຮູ້ວ່າເປັນຜູ່ຫາຍສາບສູນ ຫຼື ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ບຸກຄົນທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບແຕ່ ຫ້າ ປີ ຂຶ້ນໄປໃຫ້ເສຍ 10.000 ກີບ;

4). ອາກອນຂອງລັດ ໃນຂັ້ນຕອນຂໍລົບລ້າງໂດຍປົກກະຕິແມ່ນໃຫ້ເສຍ 40.000 ກີບ; ກ່ຽວກັບຄະດີສາຍພົວເມັຍ; ການຮ້ອງຟ້ອງເພື່ອຂໍຢ່າຮ້າງກັບບຸກຄົນທີ່ຖືກຮັບຮູ້ວ່າເປັນຜູ່ຫາຍສາບສູນ ຫຼື ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ບຸກຄົນທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບແຕ່ ຫ້າ ປີ ຂຶ້ນໄປໃຫ້ເສຍ 20.000 ກີບ;

5). ອາກອນຂອງລັດ ໃນຂັ້ນຕອນຂໍຮື້ຟື້ນໂດຍປົກກະຕິແມ່ນໃຫ້ເສຍ 50.000 ກີບ; ກ່ຽວກັບຄະດີສາຍພົວເມັຍ; ການຮ້ອງຟ້ອງເພື່ອຂໍຢ່າຮ້າງກັບບຸກຄົນທີ່ຖືກຮັບຮູ້ວ່າເປັນຜູ່ຫາຍສາບສູນ ຫຼື ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ບຸກຄົນທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບແຕ່ ຫ້າ ປີ ຂຶ້ນໄປໃຫ້ເສຍ 30.000 ກີບ;

### 2.4.2. ຄ່າໃຊ້ຈ່າຍໃນການດຳເນີນຄະດີ

ຄ່າໃຊ້ຈ່າຍໃນການດຳເນີນຄະດີແພ່ງແມ່ນຄ່າໃຊ້ຈ່າຍເພື່ອລົງເກັບກຳຂໍ້ມູນ ຫຼື ຫຼັກຖານ, ພິສູດຫຼັກຖານ ແລະ ອື່ນໆ ໝາຍຄວາມວ່າ ນອກຈາກທີ່ຄູ່ຄວາມ ໂດຍສະເພາະກໍແມ່ນຝ່າຍໂຈດ ຈະເປັນຜູ້ນຳເງິນມາວາງໄວ້ນຳສານໃນເວລາທີ່ຜູ່ກ່ຽວໄດ້ຍື່ນຄຳຮ້ອງຟ້ອງແລ້ວ, ໃນໄລຍະເວລາດຳເນີນຄະດີນັ້ນ, ຖ້າຫາກສານເຫັນວ່າມີຄວາມຈຳເປັນໃນການນຳໃຊ້ເງິນເພື່ອໃຊ້ຈ່າຍເຂົ້າໃນການເກັບກຳຂໍ້ມູນໃນການດຳເນີນຄະດີ ອາດຈະແມ່ນຕາມການສະເໜີຂອງຄູ່ຄວາມເອງ ຫຼື ຕາມຄຳເຫັນຂອງສານເຊັ່ນ:

- ການລົງກວດກາສະຖານທີ່ຂັດແຍ່ງ;
- ການລົງເອົາຄຳໃຫ້ການ;
- ການແຕ່ງຕັ້ງຜູ້ຊ່ຽວຊານທຳການພິສູດ;
- ການສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງຊີ້ແຈງ ຫຼື ຢັ້ງຢືນ ຫຼື ສະໜອງຫຼັກຖານທີ່ກ່ຽວຂ້ອງ;
- ມອບໃຫ້ສານອື່ນເກັບກຳຂໍ້ມູນຫຼັກຖານ ແລະ ສອບສວນແທນ.

**ຕົວຢ່າງ:** ການລົງວັດແທກທີ່ດິນ, ການລົງເອົາຄຳໃຫ້ການຂອງພະຍານຢູ່ສະຖານທີ່ໃດໜຶ່ງທີ່ຜູ່ກ່ຽວບໍ່ສາມາດເຂົ້າມາໃຫ້ການຕໍ່ສານໄດ້ ດ້ວຍການເຈັບປ່ວຍ ຫຼື ເຖົ້າແກ່ຊາລາ ແລະ ອື່ນໆ ທີ່ຈຸດປະສົງດັ່ງກ່າວນັ້ນບໍ່ສາມາດນຳໃຊ້ເງິນວາງສານທີ່ໂຈດໄດ້ນຳມາວາງສານໃນເວລາທີ່ຜູ່ກ່ຽວໄດ້ຍື່ນຄຳຮ້ອງຟ້ອງນັ້ນແລ້ວ ສານກໍຈະໃຫ້ຄູ່ຄວາມ ຫຼື ຝ່າຍທີ່ສະເໜີນັ້ນນຳເງິນມາວາງໄວ້ນຳສານ ເພື່ອເປັນຄ່າສິ້ນເປືອງໃຫ້ແກ່ພະນັກງານຂອງສານ ແລະ ພະນັກງານທີ່ກ່ຽວຂ້ອງຕ້ອງໄດ້ໃຊ້ຈ່າຍໃນລົງໄປກວດກາສະຖານທີ່ຂັດແຍ່ງ ຫຼື ລົງວັດແທກທີ່ດິນດັ່ງກ່າວນັ້ນ; ໃນກໍລະນີທີ່ໂຈດ ຫຼື ຈຳເລີຍຫາກເປັນຜູ່ສະເໜີໃຫ້ສານລົງໄປກວດການັ້ນ ສານກໍຈະໃຫ້ໂຈດ ຫຼື ຈຳເລີຍນັ້ນນຳເງິນມາວາງໄວ້ນຳສານ ເພື່ອເປັນຄ່າໃຊ້ຈ່າຍໃນການລົງກວດກາ ແລະ ວັດແທກນັ້ນ, ແຕ່ໃນກໍລະນີທີ່ສານໄດ້ລົງໄປກວດກາສະຖານທີ່ຂັດແຍ່ງ ຫຼື ວັດແທກທີ່ດິນ ຕາມຄຳເຫັນຂອງສານເອງໂດຍບໍ່ມີຄູ່ຄວາມຝ່າຍໃດສະເໜີນັ້ນ ສານກໍໃຫ້ຝ່າຍໂຈດນຳເງິນມາໄວ້ນຳສານເພື່ອເປັນຄ່າໃຊ້ຈ່າຍກ່ອນ ຊຶ່ງຈຳນວນເງິນທີ່ຈະນຳໃຊ້ເຂົ້າໃນການລົງກວດກາ ຫຼື ລົງວັດແທກໃນແຕ່ລະຄັ້ງນັ້ນກໍຈະມີຄວາມແຕກຕ່າງກັນ ແລະ ຂຶ້ນກັບແຕ່ລະກໍລະນີ ໂດຍຈ່າສານຈະເປັນຜູ່ຄິດໄລ່ ຕາມກົດລະບຽບຂອງກະຊວງການເງິນວາງອອກເຊັ່ນ:

ຖ້າສະຖານທີ່ໆທີ່ຈະໄປກວດກາ ຫຼື ວັດແທກນັ້ນຫາກຢູ່ໃນນະຄອນຫຼວງວຽງຈັນ ຈ່າສານກໍຈະຄິດໄລ່ຕາມອັດຕາໜຶ່ງ ແລະ ຖ້າລົງກວດກາ ແລະ ວັດແທກຢູ່ຫ່າງໄກຈາກນະຄອນຫຼວງວຽງຈັນຈ່າສານກໍຈະຄິດໄລ່ໃນອັດຕາທີ່ແຕກຕ່າງກັນໄປ; ອັດຕາຄິດໄລ່ແມ່ນອີງຕາມຄວາມເປັນຈິງ.

### 2.4.3. ຄ່າໃຊ້ຈ່າຍໃຫ້ແກ່ຜູ່ທີ່ຖືກເຊີນເຂົ້າມາຮ່ວມໃນການດຳເນີນຄະດີ

ຄ່າໃຊ້ຈ່າຍໃຫ້ແກ່ບຸກຄົນທີ່ຖືກເຊີນເຂົ້າມາຮ່ວມໃນການດຳເນີນຄະດີເປັນຕົ້ນ ຄ່າໃຊ້ຈ່າຍສຳລັບພະຍານ, ຜູ່ຊ່ຽວຊານ ແລະ ຜູ່ແປພາສາ ຈະໄດ້ຮັບຄ່າຕອບແທນຈຳນວນເງິນທີ່ພວກກ່ຽວໄດ້ໃຊ້ຈ່າຍເປັນຄ່າເດີນທາງ, ຄ່າພັກເຊົາ ແລະ ຄ່າກິນຢູ່ປະຈຳວັນ.

ຜູ່ຊ່ຽວຊານ, ຜູ່ແປພາສາ, ຜູ່ສົ່ງເອກະສານ ແລະ ຜູ່ຮັກສາຂອງກາງ ຈະໄດ້ຮັບຄ່າແຮງງານໃນເວລາປະຕິບັດວຽກງານຕາມການມອບໝາຍຂອງສານ ຊຶ່ງເປັນຄ່າຕອບແທນຄືນ ໂດຍອີງໃສ່ລະບຽບການຂອງກະຊວງການເງິນໃນການຄິດໄລ່.

ນອກຈາກຈະໄດ້ຮັບຄ່າເດີນທາງ, ຄ່າພັກເຊົາ ແລະ ຄ່າຢູ່ກິນປະຈຳວັນແລ້ວ ກຳມະກອນ, ລັດຖະກອນທີ່ຖືກເຊີນເຂົ້າມາສານໃນຖານະເປັນພະຍານນັ້ນ ຍັງຕ້ອງໃຫ້ຮັກສາເງິນເດືອນເດີມຂອງຜູ່ກ່ຽວໄວ້, ສ່ວນພະຍານທີ່ບໍ່ແມ່ນກຳມະກອນ, ລັດຖະກອນ ຊຶ່ງຖືກເຊີນເຂົ້າມາສານໂດຍປະວຽກງານປະຈຳວັນນັ້ນຜູ່ກ່ຽວກໍຈະໄດ້ຄ່າຕອບແທນຄືນ[14].

---

[14] ກົດໝາຍວ່າດ້ວຍຄ່າທຳນຽມສານ, ສະບັບປັບປຸງປີ 2006, ມາດຕາ 11 ວັກສອງ.

ນອກຈາກທີ່ຈະນຳໃຊ້ເງິນວາງສານ ທີ່ໂຈດໄດ້ນຳມາວາງໄວ້ໃນເວລາທີ່ຜູ້ກ່ຽວໄດ້ຍື່ນຄຳຮ້ອງຟ້ອງ ເພື່ອສົ່ງໝາຍຮຽກຫາພອກກ່ຽວແລ້ວ, ຄູ່ຄວາມຝ່າຍໃດທີ່ໄດ້ສະເໜີໃຫ້ແກ່ບຸກຄົນໃດໜຶ່ງເຂົ້າມາໃຫ້ການຕໍ່ສານ ເພື່ອເປັນພະຍານນັ້ນຝ່າຍທີ່ສະເໜີຍັງຕ້ອງໄດ້ຈ່າຍເງິນຄ່າປ່ອຍການໃຫ້ແກ່ຜູ້ກ່ຽວທີ່ເສັຍເວລາເຂົ້າມາສານນຳອີກ ເຊັ່ນ ຈຳເລີຍໄດ້ສະເໜີໃຫ້ບຸກຄົນໃດໜຶ່ງ ເພື່ອເຂົ້າມາໃຫ້ການຕໍ່ສານເພື່ອເປັນພະຍານນັ້ນ ຈຳເລີຍກໍຕ້ອງໄດ້ຈ່າຍຄ່າຂາດລາຍໄດ້ໃນກໍລະນີທີ່ຜູ້ກ່ຽວມີລາຍໄດ້ທຸກມື້, ຄ່າເດີນທາງ, ຄ່າອາຫານການກິນ ຫຼື ຄ່າທີ່ຢູ່ພັກເຊົາ ໃນກໍລະນີທີ່ຜູ້ກ່ຽວຫາກຢູ່ຫ່າງໄກແລະຈຳເປັນຕ້ອງໄດ້ນອນຄ້າງຄືນ ແລະ ອື່ນໆ.

ໃນກໍລະນີທີ່ສານໄດ້ເຊີນ ຜູ້ຊ່ຽວຊານ ຫຼື ຜູ້ແປພາສາ ເຂົ້າມາຮ່ວມໃນການດຳເນີນຄະດີນັ້ນ ສານກໍຈະໃຫ້ຝ່າຍໂຈດນຳເງິນມາວາງໄວ້ນຳສານ ເພື່ອເປັນຄ່າໃຊ້ຈ່າຍໃຫ້ແກ່ບຸກຄົນດັ່ງກ່າວກ່ອນ, ຖ້າຫາກຝ່າຍໃດທີ່ເສັຍຄະດີ ສານຈຶ່ງໃຫ້ຝ່າຍນັ້ນຮັບຜິດຊອບທົດແທນຄືນ ຫຼື ຮັບຜິດຊອບເສັຍເອງເລີຍ ຖ້າຫາກຝ່າຍທີ່ຈ່າຍໄປແລ້ວນັ້ນເປັນຝ່າຍເສັຍຄະດີ.

### 2.4.4. ຄ່າເອກະສານ ຫຼື ສຳເນົາເອກະສານຕ່າງໆ

ຄ່າເອກະສານ ຫຼື ຄ່າສຳເນົາເອກະສານຕ່າງໆ ແມ່ນ ຈຳນວນເງິນ ຊຶ່ງເປັນ ຄ່າໃຊ້ຈ່າຍໃນການສຳເນົາຄ່າຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ລວມທັງ ຄ່າເສື້ອປົກສຳນວນຄະດີ ແລະ ຄ່າສຳເນົາເອກະສານອື່ນໆ ທີ່ສານເຫັນວ່າມີຄວາມຈຳເປັນ.

ໃນການເກັບຄ່າທຳນຽມເອກະສານ ແລະ ສຳເນົາເອກະສານຕ່າງໆນັ້ນໃນປັດຈຸບັນໄດ້ປະຕິບັດດັ່ງນີ້: ຄ່າເສື້ອປົກສຳນວນຄະດີຊຸດລະ 35.000 ກີບ; ຄ່າແບບພິມຄຳຮ້ອງຟ້ອງ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ, ຄຳຮ້ອງຂໍອຸທອນ, ຄຳຮ້ອງຂໍລຶບລ້າງ ແລະ ຄຳຮ້ອງຂໍຮື້ຟື້ນຄະດີ ຊຸດລະ 10.000 ກີບ; ຄ່າສຳເນົາເອກະສານຕ່າງໆໜ້າລະ 500 ກີບ; ແລະ ຄ່າທຳນຽມຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ໜ້າລະ 2.000 ກີບ.

ຄ່າທຳນຽມເອກະສານດັ່ງກ່າວ ສາມາດປ່ຽນແປງໄດ້ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ໂດຍການສະເໜີຂອງປະທານສານປະຊາຊົນສູງສຸດ[15].

## 2.5. ວິທີເກັບຄ່າທຳນຽມສານຂອງສານແຕ່ລະຂັ້ນ

ການເກັບຄ່າທຳນຽມສານ ຊຶ່ງສານແຕ່ລະຂັ້ນ ຈະເກັບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ເຊັ່ນ ສານປະຊາຊົນຂັ້ນຕົ້ນຈະເປັນຜູ້ເກັບເງິນຄ່າທຳນຽມສານ ທີ່ກ່ຽວຂ້ອງກັບການດຳເນີນຄະດີຢູ່ສານຂັ້ນຕົ້ນ ແລະ ຄ່າຂໍອຸທອນ ຈຳນວນ 30.000 ກີບ; ສານປະຊາຊົນຂັ້ນອຸທອນ ຈະເປັນຜູ້ເກັບເງິນຄ່າທຳນຽມສານທີ່ກ່ຽວຂ້ອງກັບການດຳເນີນຄະດີຢູ່ສານຂັ້ນອຸທອນ ແລະ ຄ່າຂໍລຶບລ້າງ ຈຳນວນ 40.000 ກີບ ແລະ ຄ່າຂໍຮື້ຟື້ນຄະດີຈຳນວນ 50.000 ກີບ. ສ່ວນສານຂັ້ນລຶບລ້າງນັ້ນ ຖ້າຫາກມີຄວາມຈຳເປັນກໍສາມາດເກັບຄ່າທຳນຽມສານ ທີ່ກ່ຽວຂ້ອງກັບການດຳເນີນຄະດີຢູ່ສານຂັ້ນລຶບລ້າງໄດ້ ແລະ ໃນການເກັບຄ່າທຳນຽມສານຂອງສານແຕ່ລະຂັ້ນນັ້ນ ຈ່າສານຈະເປັນຜູ້ເກັບ ແລະ ເປັນຜູ້ເຮັດໃບມອບ-ຮັບເງິນທີ່ບົ່ງບອກຈຳນວນເງິນມີເທົ່າໃດ, ຈະໃຊ້ຈ່າຍອັນໃດ ແລ້ວຜູ້ມອບ ແລະ ຜູ້ຮັບກໍລົງລາຍເຊັນ ເພື່ອຢັ້ງຢືນກ່ຽວກັບການເກັບເງິນຄ່າທຳນຽມສານນັ້ນ.

## 2.6. ການຄຸ້ມຄອງ, ການນຳໃຊ້ ແລະ ການກວດກາຄ່າທຳນຽມສານ

### 2.6.1. ການຄຸ້ມຄອງຄ່າທຳນຽມສານ

ການຄຸ້ມຄອງຄ່າທຳນຽມສານ ປະກອບດ້ວຍສອງອົງການຄື:

1) ອົງການຄຸ້ມຄອງຄ່າທຳນຽມສານກ່ຽວກັບອາກອນຂອງລັດປະກອບມີຄື:
   - ກະຊວງຍຸຕິທຳ;

[15] ກົດໝາຍວ່າດ້ວຍຄ່າທຳນຽມສານ, ສະບັບປັບປຸງປີ 2006, ມາດຕາ 21

– ພະແນກຍຸຕິທຳແຂວງ, ນະຄອນ;
– ຫ້ອງການຍຸຕິທຳເມືອງ, ເທດສະບານ.

ພະນັກງານປະຕິບັດຄຳຕັດສິນຂອງສານເປັນຜູ້ຮັບຜິດຊອບເກັບອາກອນຂອງລັດ ແລະ ຈັດຕັ້ງປະຕິບັດກ່ຽວກັບຄ່າໃຊ້ຈ່າຍອື່ນໆຕາມຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ.[16]

2) ອົງການຄຸ້ມຄອງຄ່າທຳນຽມສານກ່ຽວກັບຄ່າໃຊ້ຈ່າຍໃນການດຳເນີນຄະດີ ແລະ ອື່ນໆປະກອບດ້ວຍ:
– ສານປະຊາຊົນສູງສຸດ;
– ສານປະຊາຊົນພາກ;
– ສານປະຊາຊົນແຂວງ, ນະຄອນ;
– ສານປະຊາຊົນເຂດ.

ການຄຸ້ມຄອງຄ່າທຳນຽມສານນັ້ນ ແມ່ນມອບໃຫ້ຈ່າສານຂອງສານປະຊາຊົນແຕ່ລະຂັ້ນນັ້ນເປັນຜູ້ຄຸ້ມຄອງ, ສຳລັບຄ່າຂໍອຸທອນ ແລະ ຄ່າຂໍລົບລ້າງນັ້ນ ເມື່ອຈ່າສານຂອງສານແຕ່ລະຂັ້ນໄດ້ເກັບແລ້ວ ຈ່າສານຈະເປັນຜູ້ເຮັດໃບມອບ - ຮັບເງິນ ແລ້ວຄັດຕິດໃບມອບ-ຮັບເງິນດັ່ງກ່າວໄວ້ໃນສຳນວນຄະດີ ແລະ ນຳເອົາເງິນນັ້ນມອບເຂົ້າງົບປະມານຂອງລັດ.

**2.6.2. ການນຳໃຊ້ ຄ່າທຳນຽມສານ**

ຄ່າທຳນຽມສານຈະຖືກນຳໃຊ້ເຂົ້າໃນການດຳເນີນຄະດີ ຫຼື ມອບເຂົ້າງົບປະມານຂອງລັດ ຕາມແຕ່ລະກໍລະນີ ເຊັ່ນຄ່າໃຊ້ຈ່າຍໃນການດຳເນີນຄະດີ, ຄ່າໃຊ້ຈ່າຍໃຫ້ແກ່ບຸກຄົນທີ່ຖືກເຊີນເຂົ້າມາຮ່ວມໃນການດຳເນີນຄະດີ ແລະ ຄ່າເອກະສານ ຫຼື ສຳເນົາເອກະສານຕ່າງໆນັ້ນ ແມ່ນຈະຖືກໃຊ້ຈ່າຍເຂົ້າໃນໄລຍະເວລາການດຳເນີນຄະດີຂອງສານ, ສ່ວນຄ່າອາກອນຂອງລັດນັ້ນ ຖ້າຫາກຝ່າຍໃດເປັນຝ່າຍທີ່ເສັຍຄະດີຈະຕ້ອງໄດ້ຈ່າຍໃຫ້ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃນເວລາທີ່ຄຳຕັດສິນນັ້ນໃຊ້ໄດ້ຢ່າງເດັດຂາດແລ້ວ ແລະ ຕ້ອງໄດ້ຈ່າຍກ່ອນທີ່ຈະຈັດຕັ້ງປະຕິບັດຄຳຕັດສິນ ຫຼື ຄຳພິພາກສາ ດັ່ງກ່າວ ພາຍຫຼັງຝ່າຍທີ່ເສັຍຄະດີນັ້ນໄດ້ເສັຍຄ່າອາກອນຂອງລັດແລ້ວ ເງິນຈຳນວນດັ່ງກ່າວນັ້ນກໍຈະມອບເຂົ້າງົບປະມານແຫ່ງລັດໃນການນຳໃຊ້ຄ່າທຳນຽມສານເຂົ້າໃນການດຳເນີນຄະດີຂອງສານແຕ່ລະຂັ້ນນັ້ນສານແຕ່ລະຂັ້ນຕ້ອງໄດ້ເຮັດແຜນການໃນການໃຊ້ຈ່າຍ, ມີເປົ້າໝາຍໃນການໃຊ້ຈ່າຍ, ມີໃບມອບ-ຮັບເງິນນັ້ນຢ່າງຖືກຕ້ອງ ແລະ ຕ້ອງໄດ້ມີການຕົກລົງເຫັນດີຂອງຄະນະສານທີ່ກ່ຽວຂ້ອງນັ້ນເສັຍກ່ອນ. ນອກຈາກນັ້ນ, ກ່ອນທີ່ຄະ ນະສານຈະນຳເອົາຄະດີຂຶ້ນໄຕ່ສວນໃນທີ່ປະຊຸມສານນັ້ນ ຈ່າສານກໍຈະເປັນຜູ້ສະຫຼຸບຢ່າງເປັນລາຍຫຼັກອັກສອນ ພ້ອມກັນນັ້ນໃນເວລາທີ່ຄະນະສານລົງຄຳຕັດສິນ ຫຼື ຄຳພິພາກສານັ້ນ ກໍຈະວິນິດໄສກ່ຽວກັບການນຳໃຊ້ຄ່າທຳນຽມສານນັ້ນໄວ້ໃນຄຳຕັດສິນ ຫຼື ຄຳພິພາກສາດັ່ງກ່າວ.

**ຕົວຢ່າງ:** ການຈະນຳໃຊ້ເງິນລົງກວດກາວັດແທກທີ່ດິນທີ່ມີຄວາມຂັດແຍ່ງກັນນັ້ນ ກໍຕ້ອງໄດ້ມີການຕົກລົງ ຂອງຄະນະສານເສັຍກ່ອນ ວ່າຈະລົງແນວໃດ, ພະນັກງານຂອງສານຈັກຄົນ, ພະນັກງານທີ່ດິນຈັກຄົນ, ອຳນາດການປົກຄອງບ້ານບ່ອນທີ່ດິນຕັ້ງຢູ່, ຈາກນັ້ນກໍໃຫ້ຈ່າສານເປັນຜູ້ຄິດໄລ່ຄ່າໃຊ້ຈ່າຍໃນການລົງໄປນັ້ນ ແລ້ວຈຶ່ງໃຫ້ຄູ່ຄວາມນຳເງິນມາໄວ້ນຳສານເພື່ອເປັນຄ່າສິ້ນເປືອງ ຫຼື ຄ່າໃຊ້ຈ່າຍໃນການລົງໄປວັດແທກທີ່ດິນດັ່ງກ່າວ.

**2.6.3. ການກວດກາຄ່າທຳນຽມສານ**

ການກວດກາຄ່າທຳນຽມສານປະກອບດ້ວຍສອງອົງການຄື: ອົງການກວດການພາຍໃນ ແລະ ອົງການກວດພາຍນອກ

1) ອົງການກວດການພາຍໃນມີ: ກະຊວງຍຸຕິທຳ, ພະແນກຍຸຕິທຳແຂວງ, ນະຄອນ, ຫ້ອງການຍຸຕິທຳເມືອງ, ເທດສະບານ.

[16] ກົດໝາຍວ່າດ້ວຍຄ່າທຳນຽມສານ, ສະບັບປັບປຸງປີ 2006, ມາດຕາ 27 ວັກສອງ

ສິດ ແລະ ໜ້າທີ່ຂອງອົງການກວດກາພາຍໃນ ອົງການກວດກາພາຍໃນມີສິດ ແລະ ໜ້າທີ່ ກວດການການຈັດຕັ້ງປະຕິບັດວຽກງານຄ່າທຳນຽມສານ; ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານແຕ່ລະຂັ້ນທີ່ຂຶ້ນກັບຕົນ ເປັນຕົ້ນແມ່ນການຄິດໄລ່ ແລະ ການເກັບຄ່າທຳນຽມສານ ລວມທັງພັນທະອື່ນໆ ໃຫ້ຖືກຕ້ອງຄົວຖ້ວນຕາມຕົວຈິງ ແລະ ລະບຽບກົດໝາຍ.

2) ອົງການກວດກາພາຍນອກມີ: ກະຊວງການເງິນ, ພະແນກການເງິນແຂວງ, ນະຄອນ ແລະ ຫ້ອງການການເງິນເມືອງ, ເທດສະບານ.

ສິດ ແລະ ໜ້າທີ່ຂອງອົງການກວດກາພາຍນອກ ມີສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງພະນັກງານທີ່ກ່ຽວຂ້ອງກັບວຽກງານຄ່າທຳນຽມສານ ຢູ່ໃນຂັ້ນຂອງຕົນ ເພື່ອເຮັດໃຫ້ການເກັບຄ່າທຳນຽມສານມີປະສິດທິພາບ ມີຄວາມໂປ່ງໃສ ແລະ ຍຸຕິທຳ.

### 2.7. ຄຳຕັດສິນຂອງສານກ່ຽວກັບການຈ່າຍເງິນວາງສານ ແລະ ຄ່າທຳນຽມສານ

ໃນຄຳຕັດສິນຄະດີແພ່ງຂອງສານໃນແຕ່ລະເລື່ອງນັ້ນ ຄະນະສານກໍຈະວິນິດໄສ ແລະ ກຳນົດລົງຄຳຕັດສິນເລີຍວ່າຈະໃຫ້ຝ່າຍໃດເປັນຜູ່ຮັບຜິດຊອບຕໍ່ເງິນວາງສານ ແລະ ເງິນຄ່າທຳນຽມສານນັ້ນ; ຊຶ່ງຕາມກົດໝາຍແລ້ວ ຝ່າຍໃດທີ່ເປັນຝ່າຍເສັຍຄະດີນັ້ນຈະເປັນຜູ່ທີ່ຮັບຜິດຊອບຕໍ່ເງິນວາງສານ ແລະ ເງິນຄ່າທຳນຽມສານທັງໝົດ ທີ່ໄດ້ໃຊ້ຈ່າຍເຂົ້າໃນເວລາດຳເນີນຄະດີຜ່ານມາ ລວມໄປເຖິງຄ່າໃຊ້ຈ່າຍຕ່າງໆໃນເວລາຈັດຕັ້ງປະຕິບັດຄຳຕັດສິນ ຫຼື ຄຳພິພາກສາຂອງສານໃນຕໍ່ໜ້າ. ໂດຍສານຈະກຳນົດລົງໃນຄຳຕັດສິນ ຫຼື ຄຳພິພາກສານັ້ນຢ່າງລະອຽດວ່າ ໄດ້ຈ່າຍເງິນວາງສານ ແລະ ເງິນຄ່າທຳນຽມສານເຂົ້າໃນການສົ່ງໝາຍຮຽກ, ໝາຍເຊີນຈັກຄັ້ງ, ໝົດເງິນຈຳນວນເທົ່າໃດ, ຍັງເຫຼືອເທົ່າໃດ ແລະ ການລົງກວດກາສະຖານທີ່ຂັດແຍ່ງ ຫຼື ວັດແທກທີ່ດິນໝົດເງິນຈຳນວນເທົ່າໃດ, ໃຊ້ຈ່າຍໃຫ້ພະຍານ, ຜູ່ຊ່ຽວຊານ ຫຼື ຜູ່ແປພາສາໝົດເງິນຈຳນວນເທົ່າໃດ ແລະ ອື່ນໆ

**ຕົວຢ່າງ:** ທ້າວ ກ ໄດ້ຮ້ອງຟ້ອງທ້າວ ຂ ເພື່ອທວງເອົາເງິນຈາກການກູ້ຢືມຈຳນວນ 20.000.000 ກີບ, ແລະເມື່ອສານໄດ້ພິຈາລະນາແລ້ວເຫັນວ່າຄຳຮ້ອງຟ້ອງຂອງທ້າວ ກ ມີເຫດຜົນ ແລ້ວໄດ້ລົງຄຳຕັດສິນໃຫ້ທ້າວ ຂ ໃຊ້ແທນເງິນໃຫ້ແກ່ທ້າວ ກ ຈຳນວນ 20.000.000 ກີບ, ໃນຄຳຕັດສິນນັ້ນ ສານກໍຈະວິນິດໄສ ແລະ ລົງຄຳຕັດສິນວ່າເງິນຈຳນວນທັງໝົດທີ່ໂຈດໄດ້ນຳມາວາງສານ ຫຼື ມາວາງໄວ້ນຳສານເພື່ອເປັນຄ່າສິ້ນເປືອງເຂົ້າໃນການດຳເນີນຄະດີນັ້ນ ໄດ້ໃຊ້ຈ່າຍຫຍັງແດ່ ແລະ ໝົດເງິນເທົ່າໃດ ຫຼື ຍັງເຫຼືອເທົ່າໃດ; ຈາກນັ້ນສານກໍຈະໃຫ້ທ້າວ ຂ ເຊິ່ງເປັນຝ່າຍທີ່ເສັຍຄະດີນັ້ນທົດແທນເງິນວາງສານ ແລະ ເງິນຄ່າໃຊ້ຈ່າຍໃນການດຳເນີນຄະດີທັງໝົດຄືນໃຫ້ແກ່ທ້າວ ກ ຝ່າຍທີ່ຊະນະຄະດີພ້ອມທັງໃຫ້ທ້າວ ຂ ຮັບຜິດຊອບເສັຍເງິນຄ່າອາກອນຂອງລັດ 2% ຂອງເງິນມູນຄ່າຈຳນວນ 20.000.000 ກີບ ແລະຮັບ ຜິດຊອບ ເສັຍເງິນຄ່າໃຊ້ຈ່າຍຕ່າງໆ ໃນເວລາຈັດຕັ້ງປະຕິບັດຄຳຕັດສິນ ຂອງສານຕາມການໃຊ້ຈ່າຍຕົວຈິງໃນຕໍ່ໜ້າທັງໝົດ.

#### 2.7.1. ການຈ່າຍອາກອນຂອງລັດ

ການຈ່າຍຄ່າອາກອນຂອງລັດນັ້ນ ຝ່າຍທີ່ເສັຍຄະດີ ຈະຕ້ອງໄດ້ຈ່າຍກ່ອນທີ່ຈະນຳເອົາຄຳຕັດສິນນັ້ນໄປຈັດຕັ້ງປະຕິບັດ ແລະ ໃນການຈ່າຍຄ່າອາກອນຂອງລັດແມ່ນສານຈະກຳນົດໄວ້ໃນຄຳຕັດສິນ ຕາມແຕ່ລະກໍລະນີດັ່ງນີ້: ຄະດີໃດເຊິ່ງເປັນຂໍ້ຂັດແຍ່ງທີ່ສາມາດຕີມູນຄ່າໄດ້ນັ້ນ ແມ່ນຝ່າຍທີ່ເສັຍຄະດີຈະຕ້ອງໄດ້ຈ່າຍຄ່າອາກອນຂອງລັດຈຳນວນສອງສ່ວນຮ້ອຍ (2%) ຂອງມູນຄ່າການຮ້ອງຟ້ອງ, ສຳລັບຄະດີກ່ຽວກັບສາຍຜົວເມັຍ ແລະ ຂໍ້ຂັດແຍ່ງທີ່ບໍ່ສາມາດຕີມູນຄ່າໄດ້ ເຊັ່ນ ການຮ້ອງຟ້ອງເພື່ອທວງໃຫ້ໂຍກຍ້າຍອອກຈາກທີ່ດິນ ແລະ ເຮືອນ, ການຮ້ອງຟ້ອງເພື່ອຂໍປ່ຽນແປງ ຫຼື ຍົກເລີກສັນຍາເຊົ່າເຮືອນ ແລະ ອື່ນໆນັ້ນ ຝ່າຍທີ່ເສັຍຄະດີຕ້ອງເສັຍຄ່າອາກອນຂອງລັດຈຳນວນ 50.000 ກີບ; ສ່ວນການຮ້ອງຟ້ອງເພື່ອຂໍຢ່າຮ້າງຈາກບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ, ບຸກຄົນທີ່ປະກາດວ່າເປັນຜູ່ຫາຍສາບສູນ ແລະ ບຸກຄົນທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບແຕ່ ຫ້າ ປີຂຶ້ນໄປນັ້ນ ແມ່ນຈະເສັຍຄ່າອາກອນຂອງລັດຈຳນວນ 40.000 ກີບ.

### 2.7.2. ຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການດຳເນີນຄະດີ

ຝ່າຍທີ່ເສັຍຄະດີ ຈະເປັນຜູ້ທີ່ຈະຕ້ອງໄດ້ຮັບຜິດຊອບຄ່າໃຊ້ຈ່າຍໃນການດຳເນີນຄະດີທັງໝົດ, ຊຶ່ງສານກໍຈະກຳນົດໄວ້ໃນຄຳຕັດສິນວ່າຝ່າຍໃດຈະເປັນຜູ້ທີ່ຈະຕ້ອງຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃນການດຳເນີນຄະດີ;ໃນກໍລະນີທີ່ຝ່າຍໂຈດໄດ້ຈ່າຍເງິນເພື່ອນຳໃຊ້ເຂົ້າໃນການດຳເນີນຄະດີນັ້ນກ່ອນທັງໝົດ ແລະ ຖ້າຫາກໂຈດເປັນຝ່າຍເສັຍຄະດີ ສານກໍຈະລົງຄຳຕັດສິນ ໃຫ້ຝ່າຍໂຈດເປັນຜູ້ຮັບຜິດຊອບເສັຍເອງເລີຍ, ແຕ່ຖ້າຫາກຈຳເລີຍເປັນຝ່າຍທີ່ເສັຍຄະດີນັ້ນ ສານກໍຈະລົງຄຳຕັດສິນໃຫ້ຈຳເລີຍຕ້ອງໄດ້ທົດແທນເງິນຄ່າໃຊ້ຈ່າຍໃນການດຳເນີນຄະດີທັງໝົດທີ່ໂຈດໄດ້ຈ່າຍໄປກ່ອນນັ້ນຄືນໃຫ້ແກ່ຝ່າຍໂຈດ. ໃນກໍລະນີທີ່ສານໄດ້ພິຈາລະນາໃຫ້ຝ່າຍໂຈດບາງສ່ວນ ແລະ ໃຫ້ຝ່າຍຈຳເລີຍບາງສ່ວນນັ້ນ ສານກໍຈະລົງຄຳຕັດສິນໃຫ້ທັງສອງຝ່າຍຮ່ວມກັນຮັບຜິດຊອບເງິນຄ່າໃຊ້ຈ່າຍໃນການດຳເນີນຄະດີຝ່າຍລະເຄິ່ງ ແລະ ຖ້າຫາກຝ່າຍໂຈດໄດ້ຈ່າຍໄປກ່ອນທັງໝົດນັ້ນ ສານກໍຈະລົງຄຳຕັດສິນໃຫ້ຈຳເລີຍທົດແທນຄືນໃຫ້ແກ່ຝ່າຍໂຈດເຄິ່ງໜຶ່ງ ຫຼື ຕາມອັດຕາສ່ວນທີ່ຈະຕ້ອງຮັບຜິດຊອບໃນແຕ່ລະກໍລະນີ.

### 2.7.3. ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ຝ່າຍທີ່ເສັຍຄະດີ ນອກຈາກຈະເປັນຜູ້ທີ່ຮັບຜິດຊອບຈ່າຍຄ່າອາກອນຂອງລັດ, ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃນການດຳເນີນຄະດີແລ້ວ ຍັງຕ້ອງໄດ້ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕາມການໃຊ້ຈ່າຍຕົວຈິງໃນເວລາທີ່ຈັດຕັ້ງປະຕິບັດຄຳຕັດສິນນັ້ນ ຊຶ່ງໃນເວລາລົງຄຳຕັດສິນນັ້ນ ສານກໍຈະກຳນົດກ່ຽວກັບຜູ້ທີ່ຈະຕ້ອງໄດ້ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານໄວ້ໃນຄຳຕັດສິນ ສະບັບດັ່ງກ່າວນັ້ນ.

**ຕົວຢ່າງ:** ຖ້າຫາກຈຳເລີຍເປັນຝ່າຍເສັຍຄະດີສານກໍຈະລົງຄຳຕັດສິນວ່າ ໃຫ້ຈຳເລີຍເສັຍຄ່າອາກອນຂອງລັດ 2% ຂອງມູນຄ່າການຮ້ອງຟ້ອງ, ໃຫ້ຈຳເລີຍທົດແທນເງິນວາງສານ ແລະ ຄ່າໃຊ້ຈ່າຍໃນການດຳເນີນຄະດີ (ຄ່າສິ້ນເປືອງ) ຄືນໃຫ້ແກ່ໂຈດ ພ້ອມທັງໃຫ້ຈຳເລີຍຮັບຜິດຊອບເສັຍເງິນຄ່າໃຊ້ຈ່າຍຕ່າງໆ ໃນເວລາຈັດຕັ້ງປະຕິບັດຄຳຕັດສິນຂອງສານຕາມການໃຊ້ຈ່າຍຕົວຈິງໃນຕໍ່ໜ້າ.

ຄ່າທຳນຽມສານ

| | | | | | |
|---|---|---|---|---|---|
| ອາກອນ ຂອງລັດ | ສານຂັ້ນຕົ້ນ | ທຳມະດາ | ສອງສ່ວນຮ້ອຍ ຂອງມູນຄ່າການຮ້ອງຟ້ອງ | | ຜູ່ທີ່ເສັຍຄະດີ ເປັນຜູ່ຈ່າຍ |
| | | ຄະດີສາຍຜົວເມັຍ | 50.000 ກີບ | | |
| | | ການຮ້ອງຟ້ອງເພື່ອຂໍຢ່າຮ້າງກັບບຸກຄົນທີ່ຖືກຮັບຮູ້ວ່າເປັນຜູ່ຫາຍສາບສູນ ຫຼື ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼືບຸກຄົນທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບແຕ່ 5 ປີຂຶ້ນໄປ | 40.000 ກີບ | | |
| | | ຄະດີທີ່ບໍ່ສາມາດຕີມູນຄ່າໄດ້(*1 ) | 50.000 ກີບ | | |
| | ຄ່າຂໍອຸທອນ | ທຳມະດາ | 30.000 ກີບ | ຜູ່ຍື່ນຄຳຮ້ອງ ເປັນຜູ່ຈ່າຍ | |
| | | ຄະດີທີ່ບໍ່ສາມາດຕີມູນຄ່າໄດ້(*1 ) | 10.000 ກີບ | | |
| | ຄ່າຂໍລົບລ້າງ | ທຳມະດາ | 40.000 ກີບ | | |
| | | ຄະດີທີ່ບໍ່ສາມາດຕີມູນຄ່າໄດ້(*1 ) | 20.000 ກີບ | | |
| | ຄ່າຂໍຮື້ຟື້ນ | ທຳມະດາ | 50.000 ກີບ | | |
| | | ຄະດີທີ່ບໍ່ສາມາດຕີມູນຄ່າໄດ້(*1 ) | 30.000 ກີບ | | |
| ຄ່າໃຊ້ຈ່າຍໃນການດຳເນີນຄະດີ | | ພິສູດຫຼັກຖານ | ຕາມລະບຽບການບົນພື້ນຖານການຄິດໄລ່ຕົວຈິງ | ກໍລະນີຄູ່ຄວາມຝ່າຍໃດຝ່າຍໜຶ່ງຮ້ອງຂໍ ແມ່ນຝ່າຍນັ້ນຈ່າຍກ່ອນ. ກໍລະນີທີ່ສານເຫັນວ່າມີຄວາມຈຳເປັນແມ່ນໃຫ້ໂຈດ/ຜູ່ຂໍອຸທອນ/ຜູ່ຂໍລົບລ້າງຈ່າຍກ່ອນ. | ຜູ່ທີ່ເສັຍຄະດີ ເປັນຜູ່ຈ່າຍ |
| | | ຮັກສາຫຼັກຖານ | | | |
| | | ຄ່າເດີນທາງ | | | |
| | | ຊັນນະສູດສະຖານທີ່ | | | |
| | | ຄ່າກິນຢູ່,ຄ່າພັກເຊົາ | | | |
| | | ອື່ນໆ | | | |
| ຄ່າໄຊ້ຈ່າຍໃຫ້ແກ່ຜູ່ຖືກເຊີນໃນການດຳເນີນຄະດີ | | ຄ່າໃຊ້ຈ່າຍສຳລັບພະຍານ, ຜູ່ຊ່ຽວຊານ,ຜູ່ແປພາສາ | ຕາມລະບຽບການບົນພື້ນຖານການຄິດໄລ່ຕົວຈິງ | | |
| | | ຄ່າແຮງງານຂອງ ຜູ່ຊ່ຽວຊານ, ຜູ່ແປພາສາ,ຜູ່ສົ່ງເອກະສານແລະຜູ່ຮັກສາຫຼັກຖານ | | | |
| | | ຄ່າສຳລັບພະຍານທີ່ບໍ່ແມ່ນກຳມະກອນ, ລັດຖະກອນ ຈະໄດ້ຮັບຄ່າຕອບແທນຄືນ | | | |
| ຄ່າເອກະສານ ແລະ ຄ່າສຳເນົາເອກະສານຕ່າງໆ | | ຄ່າເສື້ອປົກສຳນວນຄະດີ | 35.000 ກີບ | ຜູ່ຍື່ນຄຳຮ້ອງຟ້ອງຈ່າຍກ່ອນ | |
| | | ຄ່າແບບພິມຄຳຮ້ອງຟ້ອງ,ຄຳແກ້ຟ້ອງ,ຄຳຟ້ອງແຍ່ງ, ຄຳຮ້ອງຂໍອຸທອນ | ຊຸດລະ 10.000 ກີບ | ຜູ່ທີ່ຕ້ອງການເປັນຜູ່ຈ່າຍ | |
| | | ຄ່າຄຳຮ້ອງຂໍລົບລ້າງ ແລະ ຄຳຮ້ອງຂໍຮື້ຟື້ນຄະດີ | | | |
| | | ຄ່າອັດສຳເນົາເອກະສານຕ່າງໆ | ໜ້າລະ 500 ກີບ | | |
| | | ຄ່າທຳນຽມ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ | ໜ້າລະ 2.000 ກີບ | | |
| ເງິນວາງສານ | | ສິ່ງໝາຍຮຽກ; ສົ່ງສຳນວນຄະດີ ແລະ ເອກະສານອື່ນໆ | ບໍ່ເກີນ 200.000 ກີບ/ຄັ້ງ | ຜູ່ຍື່ນຄຳຮ້ອງຟ້ອງຈ່າຍກ່ອນ | ຜູ່ທີ່ເສັຍຄະດີ ເປັນຜູ່ຈ່າຍ |

(*1 ) ຄະດີສາຍຜົວເມັຍ, ການຮ້ອງຟ້ອງເພື່ອຂໍຢ່າຮ້າງກັບບຸກຄົນທີ່ຖືກຮັບຮູ້ວ່າເປັນຜູ່ຫາຍສາບສູນ ຫຼື ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ບຸກຄົນທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບແຕ່ 5 ປີຂຶ້ນໄປ, ການຮ້ອງຟ້ອງ ເພື່ອຂໍປ່ຽນແປງ ຫຼື ຍົກເລີກສັນຍາເຊົ່າເຮືອນ,ການອາຍັດຊັບແລະການຄ່າຂໍອຸທອນ

ໝາຍເຫດ: ມາດຕາ 4 ວັກທີ່ສອງ ກົດໝາຍວ່າດ້ວຍຄ່າທຳນຽມສານ ໄດ້ກຳນົດ ການຮ້ອງຟ້ອງທາງແພ່ງທີ່ຍົກເວັ້ນຈາກຄ່າທຳນຽມ ສານທາງແພ່ງຄື: ອາກອນຂອງລັດ; ຄ່າຂໍອຸທອນ;ຄ່າຂໍລົບລ້າງ ແລະ ຄ່າຂໍຮື້ຟື້ນຄະດີປະກອບມີ 8 ເງື່ອນໄຂ

1. ການຮ້ອງຟ້ອງເອົາຄ່າແຮງງານ ຫຼື ການຮ້ອງຂໍອື່ນໆທີ່ເນື່ອງມາຈາກສາຍພົວພັນແຮງງານ.
2. ການຮ້ອງຟ້ອງເອົາຄ່າລ້ຽງດູ 3. 4. 5. 6. 7. 8.

## ການປຽບທຽບລະບົບການຈັດຕັ້ງສານ ຂອງ ສປປ ລາວ ແລະ ຍີ່ປຸ່ນ

ລະບົບການຈັດຕັ້ງສານ ຂອງ ສປປ ລາວ    Organization of Court in Lao PDR




*ນີ້ບໍ່ແມ່ນການແປທາງການ

Organization of Court in Japan ລະບົບການຈັດຕັ້ງສານ ຂອງ ຍີ່ປຸ່ນ




*2 "ຜູ່ພິພາກສາ" ໃນນີ້ມີສອງຄວາມໝາຍ

## Coffee break ...2

# ລະບົບການສຶກສາເພື່ອເປັນນັກກົດໝາຍ (ຜູ່ພິພາກສາ, ໄອຍະການ, ທະນາຍຄວາມ) ຂອງຍີ່ປຸ່ນ



## ເຮົາຈະເຮັດແນວໃດເພື່ອຮັກສາຄຸນນະພາບຂອງການບໍລິການທາງດ້ານກົດໝາຍໃນເຂດ ຊົນນະບົດ?

ໃນວັນທີ 10 ເຖິງ 11 ຕຸລາ 2013 ຄະນະຄົ້ນຄວ້າຂຽນປື້ມຄູ່ມືກົດໝາຍການດໍາເນີນຄະດີແພ່ງໄດ້ໄປ ຢ້ຽມຢາມ ເມືອງໂຕໂຍໂອກະ ຊຶ່ງຕັ້ງຢູ່ໃນແຂວງຮຽວໂກະ ຊຶ່ງຖືວ່າເປັນເຂດຊົນນະບົດ ຂອງປະເທດຍີ່ປຸ່ນ. ຈຸດປະສົງໃນການໄປ ຢ້ຽມຢາມຄັ້ງນີ້ ກໍເພື່ອຢາກເບິ່ງສະພາບ ລະບົບຍຸຕິທໍາໃນເຂດຊົນນະບົດ ຂອງປະເທດຍີ່ປຸ່ນ ເວົ້າລວມ ແລະເວົ້າສະເພາະ ກໍແມ່ນເພື່ອຢາກສຶກສາເບິ່ງວ່າ ຢູ່ປະເທດຍີ່ປຸ່ນ ແມ່ນເພິ່ນເຮັດແນວໃດເພື່ອຮັກສາ ລະດັບການບໍລິການທາງດ້ານກົດໝາຍໃນເຂດຊົນນະບົດ.

### 1. ຂໍ້ມູນທົ່ວໄປ

ເມືອງໂຕໂຍໂອກະ ແມ່ນເມືອງໜຶ່ງຂອງແຂວງຮຽວໂກະ ຊຶ່ງມີເມືອງໂກເບ ເປັນເມືອງຫຼວງຂອງແຂວງ ດັ່ງກ່າວ. ເມືອງໂຕໂຍໂອກະ ນີ້ແມ່ນຕັ້ງຢູ່ຫ່າງຈາກເມືອງ ໂກເບ ອອກໄປທາງເໜືອປະມານ 100 ກິໂລແມັດ ແລະ ຢູ່ເບື້ອງ “ທະ ເລຍີ່ປຸ່ນ”.

ໃນເມືອງໂຕໂຍໂອກະ ແມ່ນມີສານ 3 ແຫ່ງຄື: 1/ ສາຂາຂອງສານເມືອງໂກເບ Branch of Kobe District Court (ສານເມືອງ District Court ຂອງລະບົບຍີ່ປຸ່ນ ຖ້າທຽບໃສ່ລະບົບຂອງລາວແລ້ວ ແມ່ນເທົ່າກັບ ສານແຂວງ Provincial Court), 2/ ສາຂາສານຄອບຄົວຂອງສານເມືອງໂກເບ Branch of Kobe Family Court (ໃນລະບົບຂອງຍີ່ປຸ່ນແມ່ນຈະແຍກສານຄອບຄົວ Family Court ອອກຈາກສານທົ່ວໄປທີ່ພິຈາລະນາ ຄະດີແພ່ງ ແລະ ຄະດີອາຍາເປັນຂັ້ນຕົ້ນ) ແລະ 3/ ສານທີ່ພິຈາລະນາຄະດີທີ່ບໍ່ຫຍຸ້ງຍາກ ເມືອງໂຕໂຍໂອກະ Toyo-oka Summary Court (ສານທີ່ພິຈາລະນາຄະດີທີ່ບໍ່ຫຍຸ້ງຍາກ Summary Court ແມ່ນເທົ່າກັບສານເຂດຂອງ ລາວ).

ສານທັງສາມແຫ່ງທີ່ກ່າວມານີ້ແມ່ນຢູ່ໃນອາຄານຫຼັງດຽວກັນ. ໃນນີ້ແມ່ນຈະຂໍອະທິບາຍຂໍ້ມູນສະເພາະແຕ່ ສານ ທີ 1/ ສາຂາຂອງສານເມືອງໂກເບ Branch of Kobe District Court ແລະສານທີ 2/ ສາຂາສານຄອບຄົວ ຂອງ ສານເມືອງໂກເບ Branch of Kobe Family Court ຊຶ່ງຂໍ້ມູນໂດຍທົ່ວໄປມີດັ່ງລຸ່ມນີ້:

| | |
|---|---|
| ສິດອໍານາດທາງດ້ານພື້ນທີ່ | ສານສອງບ່ອນນີ້ແມ່ນກວມເອົາເມືອງ ໂຕໂຍໂອກະ ແລະ ສອງສາມເມືອງອ້ອມແອມ |
| ພົນລະເມືອງທີ່ສານດັ່ງກ່າວຄຸ້ມຄອງ | ມີປະມານ 174,000 ຄົນ |
| ຈໍານວນຜູ້ພິພາກສາ | - ມີຜູ້ພິພາກສາປະຈໍາການ 1 ທ່ານ ແລະ ຮັບຜິດຊອບທັງສານແຂວງ ແລະສານ ຄອບຄົວ<br>- ບາງເທື່ອຈະມີຜູ້ພິພາກສາອີກ 1 ທ່ານຈາກສານແຂວງ ໂກເບ ທຽວມາປະຈໍາ ການ 1.5 ມື້ຕໍ່ອາທິດ<br>- ຖ້າມີຄະດີທີ່ຕ້ອງພິຈາລະນາໂດຍຄະນະສານຕັດສິນ (ມີຜູ້ພິພາກສາ 3 ທ່ານ) ແລ້ວກໍ່ ຈະມີຜູ້ພິພາກສາຈາກສານແຂວງ ໂກເບ ມາຊ່ວຍ (1*) |
| ຈໍານວນທະນາຍຄວາມ | ມີ 8 ທ່ານ |
| ຈໍານວນຄະດີ ໃນປີ 2012 (2*) | - ຄະດີແພ່ງ 95 ເລື່ອງ<br>- ຄະດີອາຍາ 74 ເລື່ອງ<br>- ຄະດີຄອບຄົວປະມານ 1,000 ເລື່ອງ<br>- ຄະດີເດັກ 134 ເລື່ອງ |

(1*) ໃນລະບົບຍີ່ປຸ່ນບາງຄະດີຈະຕັດສິນດ້ວຍຜູ້ພິພາກສາ 1 ທ່ານ ສໍາລັບການພິຈາລະນາເປັນຂັ້ນຕົ້ນ ສະນັ້ນ ມັນຈຶ່ງ ໝາຍຄວາມວ່າ ມີແຕ່ບາງຄະດີເທົ່ານັ້ນທີ່ຈະຕັດສິນດ້ວຍຄະນະສານຕັດສິນ ທີ່ມີຜູ້ພິພາກສາ 3 ທ່ານ.

(2*) ໃນລະບົບຍີ່ປຸ່ນຈະບໍ່ໄດ້ແຍກການດໍາເນີນຄະດີແພ່ງອອກຈາກການດໍາເນີນຄະດີອາຍາ. “ຄະດີແພ່ງ” ແຕ່ ໃນນີ້ແມ່ນ ບໍ່ລວມ ເອົາຄະດີການລົ້ມລະລາຍ. “ຄະດີຄອບຄົວ” ແມ່ນລວມມີການໄກ່ເກ່ຍ ແລະຍັງມີຄະດີ “Hisho-jiken” (ຊຶ່ງຄ້າຍຄືກັບ ການຮ້ອງຂໍທາງແພ່ງໃນລະບົບຂອງລາວ).

### 2. ບົດຮຽນທີ່ຖອດຖອນໄດ້

ທາງຄະນະຄົ້ນຄ້ວາ ຂຽນປຶ້ມຕໍາລາກົດໝາຍການດໍາເນີນຄະດີແພ່ງ ໄດ້ໄປທັດສະນະສຶກສາ ທີ່ຫ້ອງການທະ ນາຍຄວາມ ແລະ ສານເມືອງ ໂຕໂຢໂອກະ ທີ່ເປັນສາຂາຂອງສານແຂວງໂກເບ. ໃນທີ່ນັ້ນ ຄະນະຄົ້ນຄວ້າຂຽນປຶ້ມຕໍາລາກົດໝາຍການດໍາເນີນຄະດີແພ່ງ ໄດ້ມີການຢ້ຽມຊົມບັນດາສິ່ງອໍານວຍຄວາມສະດວກຕ່າງໆ, ໄດ້ສໍາພາດຜູ່ພິພາກສາ, ພະ ນັກງານຂອງສານ ແລະບັນດາທະນາຍຄວາມ. ນອກຈາກນັ້ນຍັງໄດ້ເຂົ້າຮ່ວມສັງເກດການດໍາເນີນຄະດີຕົວຈິງທີ່ສານອີກ ດ້ວຍ. ຈາກການໄປທັດສະນະສຶກສາຄັ້ງນີ້ ຄະນະສາມາດຖອດຖອນບົດຮຽນຫຼັກໆໄດ້ຄືວ່າ: ມີ 2 ອົງປະກອບໃຫຍ່ໆ ທີ່ຊ່ວຍຮັກສາລະບົບການບໍລິການທາງດ້ານກົດໝາຍໃນເຂດຊົນນະບົດຂອງປະເທດຍີ່ປຸ່ນ.

**(1) ການພັດປ່ຽນບ່ອນປະຈໍາການຂອງຜູ່ພິພາກສາ**

ອົງປະກອບທີໜຶ່ງແມ່ນການພັດປ່ຽນບ່ອນປະຈໍາການຂອງບັນດາຜູ່ພິພາກສາ. ບັນດາຜູ່ພິພາກສາ ທຸກໆ 3 ປີ ໃດແມ່ນຈະຕ້ອງໄດ້ຍ້າຍໄປປະຈໍາການຢູ່ບັນດາສານຕ່າງໆໃນທົ່ວປະເທດຍີ່ປຸ່ນ.ນັ້ນໝາຍຄວາມວ່າຜູ່ພິພາກສາໜຶ່ງທ່ານ ຈະເຮັດວຽກໃນເມືອງໃຫຍ່ເປັນເວລາ3ປີແລ້ວຫຼັງຈາກນັ້ນອາດຈະໄດ້ໄປເຮັດວຽກຢູ່ເຂດຊົນນະບົດ ຫຼື ເມືອງນ້ອຍຂອງ ແຂວງໃດໜຶ່ງເປັນເວລາ3ປີພໍຄົບກໍານົດກໍຈະຍ້າຍໄປບ່ອນໃໝ່ອີກເຮັດແບບນີ້ແມ່ນຈະຊ່ວຍຮັກສາໃຫ້ຄຸນນະພາບຂອງ ສານແຕ່ລະຂັ້ນໃຫ້ຢູ່ໃນລະດັບດ່ຽວກັນ.

**(2) ການເຂົ້າເຖິງທະນາຍຄວາມ**

ອີກອົງປະກອບອີກອັນໜຶ່ງທີ່ສໍາຄັນແມ່ນການເຂົ້າເຖິງທະນາຍຄວາມ.

ຄະນະຄົ້ນຄວ້າຂຽນປຶ້ມຄູ່ມືກົດໝາຍການດໍາເນີນຄະດີແພ່ງແມ່ນໄດ້ໄປຢ້ຽມຢາມ "ສະຖາບັນຝຶກອົບຮົມ ແລະ ຄົ້ນຄ້ວາຕຸລາການຂອງປະເທດຍີ່ປຸ່ນ Legal Training and Research Institute of Japan" ທີ່ນະຄອນຫຼວງ ໂຕກ່ຽວ ໃນປີ 2012 ທີ່ຜ່ານມາ ແລະໄດ້ຮຽນຮູ້ວ່າໃນລະບົບຍີ່ປຸ່ນ ສໍາລັບຜູ່ທີ່ຢາກເປັນນັກກົດໝາຍແມ່ນຕ້ອງໄດ້ຜ່ານ "ການສອບເສັງຕຸລາ ການ Bar Examination" ແລະ ຜູ່ທີ່ເສັ່ງຜ່ານແມ່ນຈະໄດ້ເຂົ້າໄປໃນສະຖາບັນຕຸລາການນັ້ນ ເພື່ອຝຶກອົບຮົມຄວາມຮູ້ພື້ນຖານກ່ຽວກັບວຽກງານຂອງຜູ່ພິພາກສາ, ພະນັກງານໄອຍະການ ແລະທະນາຍຄວາມ. ໝາຍຄວາມວ່າທຸກຄົນຈະໄດ້ຮັບການຝຶກອົບຮົມໃນຫຼັກສູດດ່ຽວກັນໝົດ ແລະ ພາຍຫຼັງທີ່ຈົບຈາກສະຖານບັນແຫ່ງນີ້ແລ້ວ ພວກເຂົາເຫຼົ່ານັ້ນອາດຈະກາຍເປັນຜູ່ພິພາກສາ, ພະນັກງານໄອຍະການ ຫຼື ທະນາຍຄວາມ ຕາມແຕ່ຄວາມໄຝ່ຝັນຂອງ ແຕ່ລະຄົນ.

ພາຍໃຕ້ລະບົບດັ່ງກ່າວ ທະນາຍຄວາມແມ່ນມີຄວາມສາມາດທຽບເທົ່າກັບຜູ່ພິພາກສາ ເພາະວ່າພວກເຂົາແມ່ນໄດ້ຜ່ານການສອບເສັ່ງອັນດ່ຽວກັນ ແລະ ຍັງໄດ້ຮັບການຝຶກອົບຮົມນໍາກັນມາຕັ້ງແຕ່ຕົ້ນ. ບາດນີ້ລອງມາເບິ່ງວ່າລະບົບ ດັ່ງກ່າວແມ່ນມີບົດບາດຄືແນວໃດແດ່? ເວລາທີ່ຜູ່ໃດຜູ່ໜຶ່ງຫາກມີບັນຫາ ທໍາອິດແມ່ນຈະໄປປຶກສາກັບທະນາຍຄວາມ ກ່ອນ ແລະ ກໍມີບາງບັນຫາທີທະນາຍຄວາມສາມາດຊ່ວຍຫາທາງອອກໃຫ້ໄດ້ໂດຍບໍ່ຕ້ອງຂຶ້ນສານ ແຕ່ກໍມີບາງກໍລະນີທີ່ທະນາຍຄວາມຈະແນະນໍາໃຫ້ ມີການຮ້ອງຟ້ອງຂຶ້ນສານ ຖ້າເຫັນວ່ານັ້ນເປັນທາງອອກທີ່ດີກວ່າ. ການທີ່ມີທະນາຍ ຄວາມແມ່ນສາມາດຊ່ວຍລຸດຈໍານວນຄະດີທີ່ຈະໄປຫາສານ ແລະ ການທີທະນາຍຄວາມເປັນຜູ່ຕ່າງໜ້າໃຫ້ກັບຄູ່ຄວາມ ມັນຈະຊ່ວຍແບ່ງເບົາພາລະຂອງຜູ່ພິພາກສາໃນລະຍະການດໍາເນີນຄະດີ ເພາະວ່າຜູ່ພິພາກສາບໍ່ຈໍາເປັນຕ້ອງອະທິບາຍກ່ຽວກັບຂັ້ນຕອນການດໍາເນີນຄະດີໃຫ້ຄູ່ຄວາມ ແລະ ບໍ່ຕ້ອງມານັ່ງອະທະບາຍກ່ຽວກັບກົດໝາຍ ຫຼື ລະບຽບການຕ່າງໆ ໝາຍຄວາມວ່າຜູ່ພິ ພາກສາ ສາມາດໂອ້ລົມກັບທະນາຍຄວາມ (ຜູ່ທີ່ເປັນຜູ່ຕ່າງໜ້າ) ໄດ້ໂດຍກົງ. ໃນເວລາໄປຢ້ຽມເມືອງ ໂຕໂຢໂອກະ ຄະນະໄດ້ຮູ້ວ່າ ເຖິງແມ່ນວ່າເມືອງດັ່ງກ່າວຈະເປັນເຂດຊົນນະບົດ ແລະ ຕ້ອງນັ່ງລົດຈາກເມືອງໃຫຍ່ໄປຢ່າງໜ້ອຍ 2 ຊົ່ວໂມງ ແຕ່ກໍມີທະນາຍຄວາມຈໍານວນໜຶ່ງເຮັດວຽກທີ່ເມືອງ ນັ້ນ. ເມື່ອໄດ້ສໍາພັດທະນາຍຄວາມອາວຸໂສທ່ານໜຶ່ງ ຊຶ່ງເພິ່ນມີຊື່ວ່າ ທ່ານ ອີໂກມະ ແລະ ໄດ້ເຮັດວຽກເປັນທະນາຍ ຄວາມຢູ່ເມືອງນີ້ເປັນເວລາ 30 ກວ່າປີແລ້ວ. ເພິ່ນໄດ້ເວົ້າໃຫ້ຟັງວ່າ "ຖ້າບໍ່ມີທະນາຍຄວາມມາເຮັດວຽກໃນເມືອງນີ້ ເວລາປະຊາຊົນມີບັນຫາກໍຕ້ອງໄປຫາທະນາຍຄວາມຢູ່ເມືອງອື່ນເພື່ອຂໍຄໍາປຶກສາ ຫຼື ບໍ່ດັ່ງນັ້ນພວກເຂົາກໍອາດຈະ ຍອມແພ້ຕໍ່ກັບຂໍ້ຂັດແຍ່ງ ເພາະພວກເຂົາ ອາດຈະບໍ່ຮູ້ວ່າຕົນເອງມີສິດຄືແນວໃດ ຖ້າເປັນດັ່ງນັ້ນແລ້ວມັນກໍຈະເປັນສະພາບທີ່ບໍ່ດີເລີຍ". ສະນັ້ນແລ້ວ ການທີ່ມີທະນາຍຄວາມເຮັດວຽກຢູ່ບ່ອນຕ່າງໆໃນທົ່ວປະເທດແມ່ນເປັນອົງປະກອບອັນໜຶ່ງທີ່ຊ່ວຍຮັກສາຄຸນນະພາບຂອງການບໍລິການທາງດ້ານກົໝາຍໃນເຂດຊົນນະບົດຂອງຍີ່ປຸ່ນ.

# ພາກທີ II
# ການດຳເນຄະດີແພ່ງຢູ່ສານຂັ້ນຕົ້ນແບບທົ່ວໄປ
# ບົດທີ 1
# ການຮ້ອງຟ້ອງ

## 1. ຄວາມໝາຍຂອງການຮ້ອງຟ້ອງ

ການຮ້ອງຟ້ອງ ເປັນການກະທຳຂອງຜູ້ຖືກເສຍຫາຍຍ້ອນຖືກຜູ້ອື່ນລະເມີດ ຫຼື ໂຕ້ແຍ່ງສິດ ແລະ ຜົນປະໂຫຍດຂອງຕົນເອງ ແລະ ເປັນສ່ວນໜຶ່ງຂອງການຮ້ອງທຸກ ຊຶ່ງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກໄດ້ກຳນົດໄວ້ວ່າ "ຄຳຮ້ອງທຸກ ໄດ້ຈັດແບ່ງອອກເປັນ ສາມ ປະເພດ ຄື: ຄຳຮ້ອງທຸກ ທີ່ຍື່ນຕໍ່ອົງ ການບໍລິຫານລັດ ເອີ້ນວ່າຄຳສະເໜີ; ຄຳຮ້ອງທຸກ ທີ່ຍື່ນຕໍ່ອົງການສືບສວນ-ສອບສວນ, ອົງການໄອຍະການ ຫຼື ສານ ເອີ້ນວ່າຄຳຮ້ອງຟ້ອງ; ແລະ ຄຳຮ້ອງທຸກທີ່ຍື່ນຕໍ່ສະພາແຫ່ງຊາດ ແມ່ນເອີ້ນວ່າຄຳຮ້ອງຂໍຄວາມເປັນທຳ"[1].

ການຮ້ອງຟ້ອງເປັນການກະທຳທີ່ພາໃຫ້ເກີດການດຳເນີນຄະດີ ໂດຍການຂຽນເປັນຄຳຮ້ອງຟ້ອງເພື່ອຍື່ນຕໍ່ສານພິຈາລະນາຕັດສິນຫຼືໝາຍເຖິງ "ການສະເໜີໃຫ້ສານພິຈາລະນາແກ້ໄຂຂໍ້ຂັດແຍ່ງກ່ຽວກັບຄະດີແພ່ງ, ການຄ້າ, ຄອບຄົວ, ເດັກ ແລະ ແຮງງານ" [2]. ສ່ວນການພິຈາລະນາແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ໄດ້ກຳນົດໄວ້ໃນ ສິດອຳນາດຂອງບັນດາຄະນະສານ ຊຶ່ງໄດ້ອະທິບາຍໄວ້ໃນຂໍ້ 8.3 ຂອງບົດນີ້.

ຄຳຮ້ອງຟ້ອງ ແມ່ນເອກະສານຂອງບຸກຄົນ ຫຼື ການຈັດຕັ້ງທີ່ຍື່ນຕໍ່ສານໂດຍອ້າງວ່າຕົນເອງໄດ້ຮັບຄວາມເສັຍຫາຍຍ້ອນຖືກຜູ້ອື່ນລະເມີດ ຫຼື ໂຕ້ແຍ່ງສິດ ແລະ ຜົນປະໂຫຍດຂອງຕົນເອງ. ສະນັ້ນຄຳຮ້ອງຟ້ອງຕ້ອງລວບລວມເອົາບັນດາຂໍ້ມູນຫຍໍ້ຂອງຄູ່ຄວາມ, ເຫດການ ແລະ ປະເດັນທີ່ໂຈດ ຮ້ອງຂໍໃຫ້ສານພິຈາລະນາຕັດສິນ.

## 2. ຄວາມສຳຄັນຂອງການຮ້ອງຟ້ອງ ແລະ ສິດໃນການຮ້ອງຟ້ອງຕໍ່ສານ

### 2.1. ຄວາມສຳຄັນຂອງການຮ້ອງຟ້ອງ

ໃນການດຳເນີນຄະດີ, ການຮ້ອງຟ້ອງ ແມ່ນມີຄວາມສຳຄັນ ແລະ ມີຄວາມຈຳເປັນຫຼາຍໃນຂະບວນການດຳເນີນຄະດີຊຶ່ງໃນນີ້ກໍມີຄວາມສຳຄັນຕໍ່ຄູ່ຄວາມ ແລະ ເປັນພື້ນຖານຕໍ່ສານໃນການດຳເນີນຄະດີ.

ສຳລັບຄູ່ຄວາມ, ການຮ້ອງຟ້ອງ ເປັນການກະທຳເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືກເສັຍຫາຍ. ສະນັ້ນ ການຮ້ອງຟ້ອງ ຕ້ອງລວບລວມເຫດການ ແລະ ບັນຫາທີ່ຂັດແຍ່ງຢ່າງລະອຽດ, ຈະແຈ້ງ ເພື່ອເຮັດໃຫ້ການພິຈາລະນາຂອງສານມີຄວາມສະດວກ, ສາມາດກຳນົດປະເດັນຢ່າງຊັດເຈນ ແລະ ລົງຄຳຕັດສິນໄດ້ຢ່າງຖືກຕ້ອງ, ສອດຄ່ອງກັບເຫດການຕົວຈິງຂອງຄະດີ ແລະ ລະບຽບກົດໝາຍ.

ສຳລັບສານປະຊາຊົນ, ການຮ້ອງຟ້ອງເປັນສິ່ງທີ່ນຳໄປສູ່ການດຳເນີນຄະດີ. ໝາຍຄວາມວ່າຖ້າບໍ່ມີການຮ້ອງຟ້ອງຂອງຜູ້ຖືກເສັຍຫາຍ ສານກໍບໍ່ສາມາດຈະນຳເອົາຂໍ້ຂັດແຍ່ງມາພິຈາລະນາຕັດສິນໄດ້ ຫຼື ການພິຈາລະນາຄະດີຂອງສານກໍຈະບໍ່ສາມາດດຳເນຕາມຂະບວນການດຳເນີນຄະດີໄດ້ ຖ້າບໍ່ມີການຮ້ອງຟ້ອງ.

### 2.2. ສິດໃນການຮ້ອງຟ້ອງຕໍ່ສານ

ພົນລະເມືອງລາວໂດຍບໍ່ຈຳແນກຍິງຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖືແລະຊົນເຜົ່າລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ[3], ພ້ອມນີ້ກໍມີສິດຮ້ອງທຸກ, ຮ້ອງຟ້ອງ ແລະ ສະເໜີຄວາມເຫັນຕໍ່ອົງ

---

[1]ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, 2005, ມາດຕາ 2.

[2]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 3

[3]ລັດຖະທຳມະນູນ, 2003, ມາດຕາ 35.

ການທີ່ກ່ຽວຂ້ອງກ່ຽວກັບບັນຫາທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດລວມ ຫຼື ສິດ ແລະ ຜົນປະໂຫຍດສະເພາະຂອງຕົນແລະຄຳຮ້ອງທຸກ, ຄຳຮ້ອງຟ້ອງ ແລະ ຄວາມເຫັນຂອງພົນລະເມືອງຕ້ອງໄດ້ຮັບການພິຈາລະນາແລະແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ[4].

ສຳລັບ, ບຸກຄົນ ຫຼື ການຈັດຕັ້ງ ກໍມີສິດຮ້ອງຟ້ອງຕໍ່ສານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ເພື່ອໃຫ້ແກ້ໄຂຂໍ້ຂັດແຍ່ງ ຫຼື ປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນທີ່ຖືກລະເມີດ ຫຼື ຖືກໂຕ້ແຍ່ງຈາກບຸກຄົນອື່ນ[5].

ນອກນີ້, ບຸກຄົນ ຫຼື ການຈັດຕັ້ງກໍຍັງມີສິດໃນການຮ້ອງຟ້ອງຕໍ່ສານເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອື່ນໄດ້ແກ່:

- ອົງການໄອຍະການປະຊາຊົນ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ມີສິດຮ້ອງຟ້ອງເພື່ອປົກປ້ອງຜົນປະໂຫຍດຂອງລັດ ຫຼື ສັງຄົມ ທີ່ຖືກໂຕ້ແຍ່ງ ຫຼື ຖືກລະເມີດໂດຍບຸກຄົນ ຫຼື ການຈັດຕັ້ງອື່ນ.
- ຜູ້ຄອບຄອງຊັບສິ່ງຂອງ ຊຶ່ງບໍ່ແມ່ນກຳມະສິດຂອງຕົນ ເຊັ່ນ ຜູ້ເຊົ່າ, ຜູ້ຮັກສາ, ຜູ້ຢືມກໍມີສິດຮ້ອງຟ້ອງເຊັ່ນດຽວກັນກັບເຈົ້າກຳມະສິດ ເພື່ອທວງເອົາຊັບສິ່ງຂອງຄືນ, ທວງໃຫ້ຢຸດເຊົາການກີດຂວາງ ຫຼື ລົບລ້າງອຸປະສັກຫຼືການປົກປ້ອງອື່ນທີ່ມີການລະເມີດຫຼືໂຕ້ແຍ່ງຈາກບຸກຄົນ ຫຼື ການຈັດຕັ້ງອື່ນ ອັນສ້າງຄວາມເສັຍຫາຍ ແກ່ຜູ້ເປັນເຈົ້າກຳມະສິດ ຊຶ່ງຜູ້ກ່ຽວບໍ່ຮູ້ ຫຼື ບໍ່ສາມາດຮ້ອງຟ້ອງດ້ວຍຕົນເອງໄດ້.
- ອົງການໄອຍະການປະຊາຊົນ, ຄະນະຊາວໜຸ່ມ, ສະຫະພັນແມ່ຍິງ ຫຼື ຄອບຄົວ ກໍມີສິດຮ້ອງຟ້ອງເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍຖ້າເຫັນວ່າບຸກຄົນນັ້ນ ຢູ່ໃນສະພາບທີ່ບໍ່ສາມາດດຳເນີນການຮ້ອງຟ້ອງດ້ວຍຕົນເອງ[6].

## 3. ອົງປະກອບຂອງຄຳຮ້ອງຟ້ອງ

ຄືດັ່ງທີ່ກ່າວໃນເບື້ອງຕົ້ນ, ການຮ້ອງຟ້ອງ ແມ່ນມີຄວາມສຳຄັນ ແລະ ມີຄວາມຈຳເປັນຫຼາຍ ເນື່ອງຈາກວ່າຄຳຮ້ອງຟ້ອງ ເປັນຈຸດເລີ່ມຕົ້ນ ແລະ ທັງເປັນສິ່ງຕົ້ນຕໍທີ່ນຳໄປສູ່ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືກເສັຍຫາຍ, ກົງກັນຂ້າມ ຖ້າວ່າບໍ່ມີຄຳຮ້ອງຟ້ອງຂອງຜູ້ຖືກເສັຍຫາຍ ສານກໍບໍ່ສາມາດນຳເອົາຂໍ້ຂັດແຍ່ງ ຫຼື ຄະດີມາພິຈາລະນາຕັດສິນໄດ້ ຫຼື ຖ້າຄຳຮ້ອງຟ້ອງຫາກມີອົງປະກອບບໍ່ຄົບຖ້ວນ, ກຳນົດເຫດການ ຫຼື ບັນຫາຂອງຂໍ້ຂັດແຍ່ງບໍ່ຖືກຕ້ອງ, ບໍ່ຈະແຈ້ງ ແລະ ບໍ່ຊັດເຈນກໍຈະສ້າງຄວາມຫຍຸ້ງຍາກໃຫ້ແກ່ສານໃນການດຳເນີນຄະດີ ຫຼື ເຮັດໃຫ້ການຮ້ອງຟ້ອງບໍ່ໄດ້ຕາມເປົ້າໝາຍຂອງການຮ້ອງຟ້ອງ ຊຶ່ງເປັນສາເຫດພາໃຫ້ສານພິຈາລະນາຕັດສິນຂໍ້ຂັດແຍ່ງທີ່ເກີດຂຶ້ນບໍ່ຖືກຕ້ອງກັບເຫດການຕົວຈິງ ແລະ ບໍ່ມີຄວາມຍຸຕິທຳຕາມທີ່ກົດໝາຍກຳນົດ.

ສະນັ້ນ ການຂຽນຄຳຮ້ອງຟ້ອງຕ້ອງໃຫ້ມີເນື້ອໃນທີ່ຄົບຖ້ວນ, ມີເປົ້າໝາຍທີ່ຊັດເຈນ ຫຼື ຈຸດປະສົງໃນການຮຽກຮ້ອງທີ່ແນ່ນອນ, ລະອຽດຈະແຈ້ງຕາມທີ່ກຳນົດໄວ້ໃນກົດໝາຍ, ນອກຈາກນີ້ກໍຕ້ອງໃຫ້ມີເອກະສານທີ່ຈຳເປັນ ຊຶ່ງພົວພັນກັບຄະດີທີ່ກ່ຽວຂ້ອງຄັດຕິດມາພ້ອມ. ສ່ວນລາຍລະອຽດຂອງເອກະສານຄັດຕິດໃນຄຳຮ້ອງຟ້ອງ ແມ່ນໄດ້ອະທິບາຍໃນຂໍ້ 3.3 ຂອງບົດນີ້.

### 3.1. ເນື້ອໃນຂອງຄຳຮ້ອງຟ້ອງ

ໃນການຂຽນຄຳຮ້ອງຟ້ອງ ຕ້ອງປະຕິບັດຕາມແບບພິມທີ່ສານກຳນົດ ຫຼື ຕ້ອງມີເນື້ອໃນພື້ນຖານ ດັ່ງນີ້:

– ຊື່ຂອງສານທີ່ຄຳຮ້ອງຟ້ອງນັ້ນໄດ້ຍື່ນເຖິງ;

[4] ອ້າງແລ້ວ, ມາດຕາ 41.

[5] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012, ມາດຕາ 163

[6] ອ້າງແລ້ວ, ມາດຕາ 164.

– ຊື່ ແລະ ນາມສະກຸນ, ບ່ອນຢູ່ຂອງໂຈດ ແລະ ຈຳເລີຍ, ຖ້າວ່າໂຈດ ຫຼື ຈຳເລີຍ ຫາກແມ່ນນິຕິບຸກຄົນ ກໍໃຫ້ບອກບ່ອນທີ່ສຳນັກງານຂອງນິຕິບຸກຄົນນັ້ນຕັ້ງຢູ່ ພ້ອມທັງຊື່ ແລະ ນາມສະກຸນ ແລະ ບ່ອນຢູ່ຂອງຜູ່ທີ່ຕາງໜ້ານັ້ນດ້ວຍ;
– ເຫດການທີ່ເປັນສາເຫດທີ່ພາໃຫ້ມີການຮ້ອງຟ້ອງ ແລະ ຫຼັກຖານທີ່ກ່ຽວຂ້ອງມາຢັ້ງຢືນ ເພື່ອໃຫ້ສານຕັດສີນ;
– ມູນຄ່າຂອງຄະດີ;
– ການຮ້ອງຂໍ ຫຼື ການຮຽກຮ້ອງຂອງໂຈດ;
– ເອກະສານອື່ນໆທີ່ພົວພັນກັບຄະດີ ຄັດຕິດມາພ້ອມຄຳຮ້ອງຟ້ອງ.

ຄຳຮ້ອງຟ້ອງ ແມ່ນໃຫ້ໂຈດ ຫຼື ຜູ່ຕາງໜ້າຂອງໂຈດເຊັນຊື່ ຫຼື ແປະໂປ້ມືໃສ່, ຕິດສະແຕັມ ແລະ ໃຫ້ຈ່າຍເງິນວາງສານແລ້ວແຕ່ກໍລະນີ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍຄ່າທຳນຽມສານ [7].

ໃນກໍລະນີ ທີ່ມີຜູ່ຕາງໜ້າຂອງຜູ່ຮ້ອງຟ້ອງ ຫຼື ໂຈດ ໃນການດຳເນີນຄະດີຢູ່ສານນັ້ນ ຕ້ອງໃຫ້ມີການມອບສິດ ແລະ ພັນທະຈາກຄູ່ຄວາມ ໃຫ້ແກ່ບຸກຄົນທີ່ເປັນຜູ່ຕາງໜ້າຢ່າງຖືກຕ້ອງ ຊຶ່ງການມອບໝາຍດັ່ງກ່າວ ຕ້ອງເຮັດເປັນລາຍລັກອັກສອນ ໂດຍມີການຢັ້ງຢືນຈາກອົງການຈັດຕັ້ງ ບ່ອນທີ່ຜູ່ມອບໝາຍສັງກັດຢູ່ ເຊັ່ນ ອົງການຈັດຕັ້ງ ຫຼື ສຳນັກງານທະບຽນສານ ຫຼື ອຳນາດການປົກຄອງບ້ານ ແລະ ບ່ອນອື່ນໆ.

ໃນກໍລະນີການມອບໝາຍທີ່ເຮັດຂຶ້ນໃນນາມນິຕິບຸກຄົນຕ້ອງອອກໃຫ້ໂດຍຫົວໜ້າອົງການຈັດຕັ້ງ ຫຼື ວິສາຫະກິດທີ່ກ່ຽວຂ້ອງ.

### 3.2. ເປົ້າໝາຍຂອງຄຳຮ້ອງຟ້ອງ

ຄຳຮ້ອງຟ້ອງ ແມ່ນລວບລວມເອົາບັນດາເຫດການ ແລະ ບັນຫາຂອງຜູ່ຮ້ອງຟ້ອງ ຫຼື ໂຈດ ໂດຍອ້າງວ່າຕົນເອງໄດ້ຮັບຄວາມເສັຍຫາຍ ຍ້ອນຖືກຜູ່ອື່ນລະເມີດ ຫຼື ໂຕ້ແຍ່ງສິດ ແລະ ຜົນປະໂຫຍດ. ສະນັ້ນ ໃນການຂຽນຄຳຮ້ອງຟ້ອງຈຶ່ງຕ້ອງລະບຸເປົ້າໝາຍ ຫຼື ຈຸດປະສົງຂອງຄຳຮ້ອງຟ້ອງເພື່ອຍື່ນຕໍ່ສານພິຈາລະນາຕັດສີນ.

ເປົ້າໝາຍ ຫຼື ຈຸດປະສົງຂອງຄຳຮ້ອງຟ້ອງ ໝາຍເຖິງຄຳຮຽກຮ້ອງ ຫຼື ຄຳສະເໜີຂອງບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ໄດ້ຮັບຄວາມເສັຍຫາຍ ເພື່ອໃຫ້ສານພິຈາລະນາແກ້ໄຂບັນຫາ ໂດຍໃຫ້ຜູ່ທີ່ໄດ້ສ້າງຄວາມເສັຍຫາຍ ຫຼື ໄດ້ລະເມີດສິດ ແລະ ຜົນປະໂຫຍດຂອງບຸກຄົນອື່ນ ຫຼື ການຈັດຕັ້ງນັ້ນ ຕ້ອງຊົດໃຊ້ຄືນຄວາມເສັຍຫາຍທີ່ຕົນໄດ້ກໍ່ຂຶ້ນ ຫຼື ຟື້ນຟູຄືນສິດທີ່ຕົນໄດ້ລະເມີດ; ພ້ອມນີ້ກໍຍັງລວມທັງການຮ້ອງຂໍໃຫ້ສານພິຈາລະນາຢັ້ງຢືນບັນຫາທີ່ບໍ່ເປັນຂໍ້ຂັດແຍ່ງ.

ເປົ້າໝາຍ ຫຼື ຈຸດປະສົງຂອງຄຳຮ້ອງຟ້ອງ ປະກອບມີບັນດາປະເດັນຕ່າງໆກ່ຽວກັບຂໍ້ຂັດແຍ່ງທາງແພ່ງ, ການຄ້າ, ຄອບຄົວ, ເດັກ ແລະ ແຮງງານ ຊຶ່ງໄດ້ກຳນົດແຈ້ງໄວ້ໃນສິດອຳນາດຂອງບັນດາຄະນະສານຕ່າງໆ.

**ຕົວຢ່າງ:** ທ້າວ ກ ໄດ້ຍື່ນຄາຮ້ອງຟ້ອງ ທ້າວ ຂ ເພື່ອທວງເອົາກຳມະສິດທີ່ດິນ ໂດຍອ້າງວ່າທ້າວ ຂ ໄດ້ລ້ອມຮົ້ວກວມເອົາທີ່ຂອງຜູ່ກ່ຽວ; ກໍລະນີ ເປົ້າໝາຍການຮ້ອງຟ້ອງແມ່ນການທວງເອົາກຳມະສິດທີ່ດິນບ່ອນທ້າວ ຂ ລ້ອມຮົ້ວກວມເອົາ.

ກົງກັນຂ້າມ ຖ້າຄຳຮ້ອງຟ້ອງທີ່ຍື່ນຕໍ່ສານຫາກບໍ່ສາມາດກຳນົດເປົ້າໝາຍໄດ້ຢ່າງຊັດເຈນແລ້ວ ກໍຈະເຮັດໃຫ້ການພິຈາລະນາຂອງສານບໍ່ຖືກກັບເປົ້າໝາຍຂອງຄຳຮ້ອງຟ້ອງ.

### 3.3. ເອກະສານຄັດຕິດໃນຄຳຮ້ອງຟ້ອງ

ໃນເວລາຍື່ນຄຳຮ້ອງຟ້ອງຕໍ່ສານນັ້ນ ຜູ່ຮ້ອງຟ້ອງຕ້ອງໄດ້ກະກຽມເອກະສານ ຫຼື ຫຼັກຖານທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງທີ່ໄດ້ກ່າວອ້າງຢູ່ໃນເນື້ອໃນຂອງຄຳຮ້ອງຟ້ອງຂອງຕົນ ແລະ ຕ້ອງຄັດຕິດມາພ້ອມກັບຄຳຮ້ອງຟ້ອງ ເພື່ອປະກອບເຂົ້າໃນສຳນວນຄະດີ.

---

[7] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 166

ຕົວຢ່າງ:

- ຂໍ້ຂັດແຍ່ງທວງເອົາໜີ້ສິນຄືນ ກໍຕ້ອງມີສັນຍາກູ້ຢືມ ຫຼື ບົດບັນທຶກກ່ຽວກັບການກູ້ຢືມຄັດຕິດມາ;
- ຂໍ້ຂັດແຍ່ງກ່ຽວກັບກຳມະສິດທີ່ດິນ ກໍຕ້ອງມີໃບຕາດິນ ຫຼື ເອກະສານທີ່ກ່ຽວຂ້ອງກັບທີ່ດິນບ່ອນຂັດແຍ່ງນັ້ນຄັດຕິດມານຳ ແລະ ຂໍ້ຂັດແຍ່ງອື່ນໆກໍເຊັ່ນດຽວກັນ.

ຖ້າວ່າເອກະສານ ຫຼື ຫຼັກຖານທີ່ກ່າວອ້າງມານັ້ນ ຫາກຍັງບໍ່ສາມາດນຳມາຍື່ນຕໍ່ສານໃນເວລາຍື່ນຄຳຮ້ອງຟ້ອງ ກໍໃຫ້ສານຮັບເອົາຄຳຮ້ອງຟ້ອງນັ້ນໄວ້ກ່ອນ ແຕ່ສານຕ້ອງໄດ້ແນະນຳໃຫ້ຜູ້ຍື່ນຄຳຮ້ອງຟ້ອງນຳມາປະກອບເຂົ້າໃສ່ໃນສຳນວນຄະດີຕາມພາຍຫຼັງ.

## 4. ການຍື່ນຄຳຮ້ອງຟ້ອງ

ພາຍຫຼັງທີ່ຜູ້ຮ້ອງຟ້ອງໄດ້ຂຽນຄຳຮ້ອງຟ້ອງຖືກຕ້ອງຕາມແບບພິມຂອງສານກຳນົດ ແລະມີເນື້ອໃນຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍພ້ອມທັງປະກອບເອກະສານທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງຂອງຕົນຄັດຕິດມາພ້ອມ ແລ້ວໃຫ້ນຳເອົາຄຳຮ້ອງຟ້ອງດັ່ງກ່າວ ໄປຍື່ນຕໍ່ສານປະຊາຊົນບ່ອນທີ່ມີສິດອຳນາດໃນການພິຈາລະນາຕັດສິນຄະດີ.

ໃນການຍື່ນຄຳຮ້ອງຟ້ອງຕໍ່ສານນັ້ນສາມາດຍື່ນໄດ້ດ້ວຍສາມວິທີຄື: ການຍື່ນດ້ວຍຕົນເອງ, ຍື່ນດ້ວຍຜູ້ຕາງໜ້າ ແລະ ການຍື່ນຮ່ວມກັນ ຊຶ່ງລາຍລະອຽດຂອງແຕ່ລະວິທີມີດັ່ງນີ້:

### 4.1. ການຍື່ນຄຳຮ້ອງຟ້ອງດ້ວຍຕົນເອງ

ຕົນເອງໝາຍເຖິງຜູ້ທີ່ອ້າງວ່າຕົນໄດ້ຮັບຄວາມເສຍຫາຍ ຍ້ອນຖືກຜູ້ອື່ນລະເມີດ ຫຼື ໂຕ້ແຍ່ງສິດ ແລະ ຜົນປະໂຫຍດຂອງຕົນ. ສະນັ້ນ ການຍື່ນຄຳຮ້ອງຟ້ອງດ້ວຍຕົນເອງປະກອບມີ: ຄູ່ຄວາມ ແລະ ບຸກຄົນທີສາມ.

ໃນການຍື່ນຄຳຮ້ອງຟ້ອງດ້ວຍຕົນເອງນັ້ນ ເປັນການນຳເອົາຄຳຮ້ອງຟ້ອງໄປຍື່ນຕໍ່ສານໂດຍກົງດ້ວຍຜູ້ຮ້ອງຟ້ອງເອງ; ແຕ່ສິ່ງສຳຄັນ ຕ້ອງຄຳນຶງເຖິງເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດໝາຍວ່າ: " ບຸກຄົນທີ່ຈະເປັນຄູ່ຄວາມໃນຄະດີຕ້ອງແມ່ນບຸກຄົນທີ່ມີອາຍຸແຕ່ສິບແປດປີຂຶ້ນໄປ ແລະ ບໍ່ເປັນບ້າເສຍຈິດ"[8].

### 4.2. ການຍື່ນຄຳຮ້ອງຟ້ອງໂດຍຜູ້ຕາງໜ້າ

ນອກຈາກການຍື່ນຄຳຮ້ອງຟ້ອງຕໍ່ສານດ້ວຍຕົນເອງແລ້ວກໍຍັງສາມາດຍື່ນຄຳຮ້ອງຟ້ອງຕໍ່ສານໂດຍຜ່ານຜູ້ຕາງໜ້າກໍໄດ້ຊຶ່ງຜູ້ຕາງໜ້າປະກອບມີ 2 ປະເພດຄື: ຜູ້ຕາງໜ້າຕາມກົດໝາຍ ແລະ ຜູ້ຕາງໜ້າຕາມການມອບໝາຍ.

#### 4.2.1. ການຍື່ນຄຳຮ້ອງຟ້ອງໂດຍຜູ້ຕາງໜ້າຕາມກົດໝາຍ

ການຍື່ນຄຳຮ້ອງຟ້ອງດ້ວຍຜູ້ຕາງໜ້າຕາມກົດໝາຍນັ້ນຈະດຳເນີນໄດ້ກໍຕໍ່ເມື່ອຜູ້ທີ່ໄດ້ຮັບຄວາມເສຍຫາຍຫາກບໍ່ສາມາດຍື່ນຄຳຮ້ອງຟ້ອງດ້ວຍຕົນເອງເນື່ອງຈາກບຸກຄົນດັ່ງກ່າວ ບໍ່ມີເງື່ອນໄຂການເປັນຄູ່ຄວາມ ຫຼື ບຸກຄົນດັ່ງກ່າວພວມປະຕິບັດພັນທະໃດໜຶ່ງທີ່ສຳຄັນໂດຍສະເພາະຜົວ ຫຼື ເມັຍ ຊຶ່ງສາມາດເປັນຜູ້ຕາງໜ້າກັນ ແລະ ຊີ້ຂາດກ່ຽວກັບສິນສົມສ້າງແລະໜີ້ສິນ.

ຜູ້ຕາງໜ້າຕາມກົດໝາຍມີສິດ ແລະ ພັນທະດັ່ງດຽວກັນກັບຄູ່ຄວາມຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ພ້ອມນີ້ກໍປະຕິບັດສິດ ແລະ ພັນທະແທນຄູ່ຄວາມໃນຄະດີ ແລະ ເຮັດໃນນາມເປັນຕົວແທນຂອງຄູ່ຄວາມແຕ່ມີສິດຊີ້ຂາດ ແລະ ສິດໃນກຳມະສິດເພື່ອຜົນປະໂຫຍດຂອງຜູ້ທີ່ຕົນເອງປົກປ້ອງ.

---

[8]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 71

#### 4.2.2. ການຍື່ນຄຳຮ້ອງຟ້ອງໂດຍຜູ້ຕາງໜ້າຕາມການມອບໝາຍ

ການຍື່ນຄຳຮ້ອງຟ້ອງດ້ວຍຜູ້ຕາງໜ້າຕາມການມອບໝາຍນັ້ນຈະດຳເນີນໄດ້ກໍຕໍ່ເມື່ອຜູ້ທີ່ໄດ້ຮັບຄວາມເສຍຫາຍ ຫາກບໍ່ສາມາດມາຍື່ນຄຳຮ້ອງຟ້ອງດ້ວຍຕົນເອງໄດ້ເນື່ອງຈາກພວມປະຕິບັດພັນທະໃດໜຶ່ງທີ່ສຳຄັນ ຫຼື ມີຈຸດປະສົງໃຫ້ຜູ້ຕາງໜ້າເຂົ້າຮ່ວມໃນການດຳເນີນຄະດີແທນຕົນ ແລະ ການມອບໝາຍຕ້ອງເຮັດເປັນລາຍລັກອັກສອນ.

ຜູ້ຕາງໜ້າຕາມການມອບໝາຍມີສິດ ແລະ ພັນທະໃນຂອບເຂດຕາມທີ່ໄດ້ກຳນົດໄວ້ໃນສັນຍາມອບໝາຍ, ພ້ອມນີ້ກໍຕ້ອງຮັກສາຄວາມລັບຂອງຄູ່ຄວາມ ແລະ ຊອກຫາຂໍ້ມູນຫຼັກຖານເພື່ອປົກປ້ອງສິດແລະຜົນປະໂຫຍດອັນຊອບທຳຂອງຜູ້ມອບໝາຍໃຫ້ແກ່ຕົນເປັນຜູ້ຕາງໜ້າຢູ່ສານ.

ໃນການມອບສິດໃຫ້ຜູ້ອື່ນເປັນຜູ້ຕາງໜ້ານັ້ນ ກໍຕ້ອງໃຫ້ຖືກຕ້ອງຕາມເງື່ອນໄຂຢ່າງຄົບຖ້ວນທີ່ຈະເປັນຜູ້ຕາງໜ້າຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ມາດຕາ 93 ແລະ ມາດຕາ 94 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ[9] ເພາະວ່າໄດ້ກຳນົດກ່ຽວກັບການເປັນຜູ້ຕາງໜ້າຕາມການມອບໝາຍໄວ້ຢ່າງລະອຽດ ແລະ ຈະແຈ້ງ.

ຖ້າການເປັນຜູ້ຕາງໜ້າຫາກມີເງື່ອນໄຂບໍ່ຄົບຖ້ວນ ຫຼື ຜູ້ຕາງໜ້າຫາກບໍ່ມີສິດໃນການເປັນຜູ້ຕາງໜ້າ ສານກໍຈະບໍ່ຮັບເອົາຄຳຮ້ອງຟ້ອງຈາກບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວມາພິຈາລະນາ.

#### 4.3. ການຍື່ນຄຳຮ້ອງຟ້ອງຮ່ວມກັນ

ນອກຈາກການຍື່ນຄຳຮ້ອງຟ້ອງຕໍ່ສານດ້ວຍຕົນເອງ ແລະ ຍື່ນດ້ວຍຜູ້ຕາງໜ້າແລ້ວກໍຍັງສາມາດຍື່ນຄຳຮ້ອງຟ້ອງຮ່ວມກັນ.

ໃນກໍລະນີ ຫາກເຫັນວ່າມີການລະເມີດສິດແລະຜົນປະໂຫຍດຂອງລວມໝູ່, ຂອງໃນກໍລະນີຄົນ ຫຼື ຂອງສ່ວນລວມທີ່ເປັນເຫດການດຽວກັນ, ມາຈາກສາເຫດແລະການກະທຳອັນດຽວກັນນັ້ນບັນດາຜູ້ທີ່ອ້າງວ່າຕົນເອງໄດ້ຮັບຄວາມເສັຍຫາຍກໍສາມາດຍື່ນຄຳຮ້ອງຟ້ອງຮ່ວມກັນເພື່ອໃຫ້ສານພິຈາລະນາ.

ໃນການຍື່ນຄຳຮ້ອງຟ້ອງຮ່ວມກັນນັ້ນອາດຈະເຮັດຄຳຮ້ອງໂດຍບົ່ງບອກເຖິງຜົນເສັຍຫາຍເປັນ ແຕ່ລະບຸກຄົນ ຫຼື ລວມກັນກໍໄດ້, ຖ້າຫາກເຮັດລວມກັນກໍຕ້ອງໄຈ້ແຍກຄວາມເສັຍຫາຍຂອງແຕ່ລະບຸກຄົນ ໃຫ້ລະອຽດແລະຖືກຕ້ອງຕາມຄວາມເປັນຈິງທີ່ເກີດຂຶ້ນ.

ໃນເມື່ອມີຜູ້ຮ້ອງຟ້ອງໃນກໍລະນີຄົນກໍສາມາດມອບສິດເປັນລາຍລັກອັກສອນໃຫ້ຜູ້ໃດຜູ້ໜຶ່ງ ເປັນຜູ້ຕາງໜ້າຕໍ່ສູ້ຄະດີ. ໃນການຕໍ່ສູ້ຄະດີຂອງຜູ້ຕາງໜ້ານັ້ນຈະມີຜົນຄືກັນກັບຄູ່ຄວາມແຕ່ລະຄົນໄດ້ກະທຳເອງ, ຍົກເວັ້ນການກະທຳທີ່ຮຽກ ຮ້ອງໃຫ້ຜູ້ຮ້ອງຟ້ອງນັ້ນເປັນຜູ້ກະທຳດ້ວຍຕົນເອງ.

**ຕົວຢ່າງ:** ທ້າວ ກ, ທ້າວ ຂ ແລະ ທ້າວ ຄ ໄດ້ຍື່ນຄຳຮ້ອງຟ້ອງ ເພື່ອທວງໃຫ້ນາງ ຈ ໃຊ້ແທນເງິນກູ້ຢືມພວກກ່ຽວດັ່ງນີ້: ທ້າວ ກ ຈຳນວນ 50.000.000 ກີບ, ທ້າວ ຂ ຈຳນວນ 60.000.000 ກີບ ແລະ ທ້າວ ຄ ຈຳນວນ 100.000.000 ກີບ ຊຶ່ງໃນການດຳເນຄະດີນັ້ນ ທ້າວ ກ ແລະ ທ້າວ ຂ ສາມາດມອບສິດໃຫ້ທ້າວ ຄ ຕາງໜ້າໃຫ້ພວກກ່ຽວໃນການຕໍ່ສູ້ຄະດີແທນກໍໄດ້.

ແຕ່ບັນຫາທີ່ຕ້ອງປະຕິບັດດ້ວຍຕົນເອງ ແມ່ນບໍ່ສາມາດມອບສິດໃຫ້ ທ້າວ ຄ ປະຕິບັດແທນໄດ້ເຊັ່ນ: ທ້າວ ກ ເປັນຜົວຂອງນາງ ຈ, ໃນເວລາທີ່ທ້າວ ກ ຢາກຢ່າຮ້າງກັບນາງ ຈ ແມ່ນຕ້ອງໄປຮ້ອງຟ້ອງດ້ວຍຕົນເອງ.

## 5. ການຮັບເອົາຄຳຮ້ອງຟ້ອງມາພິຈາລະນາ

ເມື່ອຜູ້ຮ້ອງຟ້ອງ ຫາກໄດ້ຂຽນຄຳຮ້ອງຟ້ອງຖືກຕ້ອງຕາມແບບພິມຂອງສານກຳນົດ ແລະ ມີເນື້ອໃນຄົບຖ້ວນຕາມທີ່ລະບຸໄວ້ໃນມາດຕາ 166 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012 ພ້ອມດຽວກັນ

---

[9] ອ້າງແລ້ວ, ມາດຕາ 93 ແລະ 94.

ນີ້ກໍມີເອກະສານທີ່ກ່ຽວຂ້ອງກັບຄະດີໄດ້ຄັດຕິດມາຢ່າງຄົບຖ້ວນແລ້ວ ສານຕ້ອງຮັບເອົາຄຳຮ້ອງຟ້ອງດັ່ງກ່າວມາພິຈາລະນາຕາມລະບຽບການ ໂດຍປະຕິບັດຕາມຂັ້ນຕອນລະອຽດດັ່ງລຸ່ມນີ້:

**5.1. ການກວດກາຄຳຮ້ອງຟ້ອງ**

ໃນການຍື່ນຄຳຮ້ອງຟ້ອງຕໍ່ສານ, ກ່ອນທີ່ສານຈະຮັບເອົາຄຳຮ້ອງຟ້ອງດັ່ງກ່າວມາພິຈາລະນານັ້ນ ສານຕ້ອງດຳເນີນການກວດກາຄຳຮ້ອງຟ້ອງດັ່ງກ່າວໃຫ້ລະອຽດ ແລະມີຄວາມຖືກຕ້ອງ ຈຶ່ງຮັບຄຳຮ້ອງດັ່ງກ່າວມາພິຈາລະນາ.

ໃນການກວດກາຄຳຮ້ອງຟ້ອງ ແມ່ນສິດ ແລະໜ້າທີ່ຂອງຈ່າສານ ຊຶ່ງຈະເລັ່ງໃສ່ກວດກາສາມບັນຫາຄື ກວດກາສິດອຳນາດຂອງສານໃນການພິຈາລະນາຄະດີ, ກວດກາຄວາມຖືກຕ້ອງຂອງຄຳຮ້ອງຟ້ອງວ່າມີເນື້ອໃນຄົບຖ້ວນ ຫຼື ບໍ່ ແລະ ກວດກາຄະດີດັ່ງກ່າວໄດ້ຜ່ານຂັ້ນຕອນຂອງການໄກ່ເກ່ຍ ຫຼື ບໍ່.

**5.1.1. ກວດກາສິດອຳນາດຂອງສານໃນການພິຈາລະນາຄະດີ**

**ກ. ກວດກາສິດອຳນາດທາງດ້ານພື້ນທີ່**

ການກວດການສິດອຳນາດທາງດ້ານພື້ນທີ່ນັ້ນ ຈ່າສານ ທີ່ກ່ຽວຂ້ອງຕ້ອງໄດ້ເອົາໃຈໃສ່ ກວດກາບາງພື້ນຖານຄື:

- ສານທີ່ຈະນຳເອົາຄຳຮ້ອງຟ້ອງມາພິຈາລະນາຕັດສິນນັ້ນຕ້ອງແມ່ນສານບ່ອນທີ່ຈຳເລີຍຢູ່ ຫຼືອາໄສຢູ່ນັ້ນຈຶ່ງມີສິດອຳນາດໃນການຕັດສິນຄະດີດັ່ງກ່າວ;
- ສານທີ່ຈະນຳເອົາຄຳຮ້ອງຟ້ອງມາພິຈາລະນາຕັດສິນນັ້ນຕ້ອງແມ່ນສານບ່ອນທີ່ເຫດການ ຫຼື ຂໍ້ຂັດແຍ່ງໄດ້ນັ້ນເກີດຂຶ້ນ;
- ສານທີ່ຈະນຳເອົາຄຳຮ້ອງຟ້ອງມາພິຈາລະນາຕັດສິນນັ້ນຕ້ອງແມ່ນສານບ່ອນທີ່ຊັບພື້ນຖານຕັ້ງຢູ່.

ຖ້າການຍື່ນຄຳຮ້ອງຟ້ອງຕໍ່ສານ ຫາກບໍ່ຖືກຕາມພື້ນຖານໃດໜຶ່ງທີ່ກ່າວມາເທິງນັ້ນສານດັ່ງກ່າວກໍບໍ່ມີສິດໃນການພິຈາລະນາຄະດີໄດ້.

**ຂ. ກວດກາສິດອຳນາດທາງດ້ານໜ້າທີ່**

- ສານທີ່ຈະນຳເອົາຄຳຮ້ອງຟ້ອງມາພິຈາລະນາ ເຊັ່ນ ຄະດີແພ່ງ, ຄະດີແຮງງານ ທີ່ມີມູນຄ່າການຮ້ອງຟ້ອງ ແລະ ຄະດີກ່ຽວກັບສາຍຜົວເມັຍທີ່ມີຂໍ້ຂັດແຍ່ງເລື່ອງສິນສົມສ້າງ, ໜີ້ສິນ ບໍ່ເກີນ 300.000.000 ກີບ, ຄະດີທີ່ບໍ່ມີມູນຄ່າ ຍົກເວັ້ນຄະດີການຄ້າ ແລະ ຄະດີເດັກ [10] ແມ່ນເປັນໜ້າທີ່ຂອງສານປະຊາຊົນເຂດມີສິດໃນການພິຈາລະນາຕັດສິນ. ສ່ວນຄະດີທີ່ມີມູນຄ່າເກີນກວ່າ 300.000.000 ກີບ ແລະ ຄະດີບໍ່ຂຶ້ນກັບສິດອຳນາດຂອງສານ ປະຊາຊົນເຂດ [11] ແມ່ນເປັນໜ້າທີ່ຂອງສານປະຊາຊົນແຂວງ, ນະຄອນ;
- ສາລັບຄະດີການຄ້າ ແລະ ຄະດີເດັກ ແມ່ນເປັນໜ້າທີ່ຂອງສານປະຊາຊົນແຂວງ, ນະຄອນ ເປັນຜູ້ພິຈາລະນາໂດຍສະເພາະ ແມ່ນຄະນະສານການຄ້າ ແລະ ຄະນະສານເດັກ ເປັນຜູ້ພິຈາລະນາຕັດສິນ.

**5.1.2. ກວດກາຄວາມຖືກຕ້ອງຂອງຄຳຮ້ອງຟ້ອງ**

ການກວດກາຄວາມຖືກຕ້ອງຂອງຄຳຮ້ອງຟ້ອງ ເປັນການກວດກາເນື້ອໃນຂອງຄຳຮ້ອງຟ້ອງວ່າມີຄວາມຖືກຕ້ອງຕາມແບບພິມຂອງສານກຳນົດ ຫຼື ຕ້ອງມີເນື້ອໃນຄົບຖ້ວນ ດັ່ງນີ້:

- ຊື່ຂອງສານທີ່ຄຳຮ້ອງຟ້ອງນັ້ນໄດ້ຍື່ນເຖິງ;
- ຊື່ ແລະ ນາມສະກຸນ, ບ່ອນຢູ່ຂອງໂຈດ ແລະ ຈຳເລີຍ. ຖ້າວ່າໂຈດ ຫຼື ຈຳເລີຍ ຫາກແມ່ນນິຕິບຸກຄົນ ກໍໃຫ້ບອກບ່ອນທີ່ສຳນັກງານຂອງນິຕິບຸກຄົນນັ້ນຕັ້ງຢູ່ ພ້ອມທັງຊື່ ແລະ ນາມສະກຸນ ແລະ ບ່ອນຢູ່ຂອງຜູ້ຕາງໜ້າດ້ວຍ;

---

[10] ກົດໝາຍວ່າດ້ວຍການດຳເນີນແພ່ງ, ສະບັບປັບປຸງປີ 2012, ມາດຕາ 21

[11] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 22

- ເຫດການທີ່ເປັນສາເຫດພາໃຫ້ມີການຮ້ອງຟ້ອງ ແລະ ຫຼັກຖານຢັ້ງຢືນ ເພື່ອໃຫ້ສານຕັດສິນ;
- ມູນຄ່າຂອງຄະດີ;
- ການຮ້ອງຂໍຂອງໂຈດ;
- ເອກະສານອື່ນທີ່ພົວພັນກັບຄະດີ ຄັດຕິດມາພ້ອມຄຳຮ້ອງຟ້ອງ [12].

ພ້ອມນີ້, ຄຳຮ້ອງຟ້ອງ ຕ້ອງໃຫ້ໂຈດ ຫຼື ຜູ້ຕາງໜ້າເຊັນຊື່ ຫຼື ແປະໂປ້ມືໃສ່.

### 5.1.3. ກວດກາຄະດີໄດ້ຜ່ານການໄກ່ເກ່ຍ ຫຼື ບໍ

ກ່ອນການຍື່ນຄຳຮ້ອງຟ້ອງຕໍ່ສານ ຫຼື ກ່ອນທີ່ສານຈະຮັບເອົາຄະດີມາພິຈາລະນານັ້ນຄະດີດັ່ງກ່າວຕ້ອງໄດ້ຜ່ານການໄກ່ເກ່ຍຈາກໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຫຼື ພາກສ່ວນທີ່ກ່ຽວຂ້ອງໄດ້ທຳການໄກ່ເກ່ຍເສຍກ່ອນ ເຊັ່ນ ຂໍ້ຂັດແຍ່ງເລັກໜ້ອຍ ແລະ ມີມູນຄ່າບໍ່ສູງ ຕ້ອງໄດ້ຜ່ານຂັ້ນຕອນຂອງການໄກ່ເກ່ຍ, ຖ້າຍັງບໍ່ທັນຜ່ານການໄກ່ເກ່ຍ ສານກໍຕ້ອງແນະນຳໃຫ້ໄປດຳເນການໄກ່ເກ່ຍເສຍກ່ອນ ຈຶ່ງຈະຮັບເອົາມາພິຈາລະນາ.

ສຳລັບຂໍ້ຂັດແຍ່ງທີ່ມີມູນຄ່າສູງຄູ່ຄວາມກໍມີສິດສະເໜີໃຫ້ດຳເນີນການໄກ່ເກ່ຍ ຫຼື ຈະຮ້ອງຟ້ອງຕໍ່ສານໂດຍກົງເລີຍກໍໄດ້.

ຄະດີທີ່ຈຳເປັນໃຫ້ມີການໄກ່ເກ່ຍກ່ອນການຍື່ນຄຳຮ້ອງຟ້ອງຕໍ່ສານມີດັ່ງນີ້:

1) ຄະດີກ່ຽວກັບກຳມະສິດສັດ, ການຂໍທາງຜ່ານ, ສາຍຜົວເມັຍແລະຄະດີບໍ່ມີມູນຄ່າສູງ;
2) ຄະດີກ່ຽວກັບສິດນຳໃຊ້ທີ່ດິນ, ຄະດີການຄ້າແລະຄະດີເດັກ;
3) ຄະດີກ່ຽວກັບແຮງງານ ແລະ ສາຍພົວພັນທາງດ້ານການບໍລິຫານ.

ເມື່ອທຳການໄກ່ເກ່ຍຄູ່ຄວາມແລ້ວ, ແຕ່ບໍ່ສາມາດຕົກລົງກັນໄດ້ ຫຼື ຕົກລົງກັນໄດ້ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດຕ້ອງເຮັດບົດບັນທຶກແລ້ວຄັດຕິດໄວ້ໃນສຳນວນຄະດີ[13].

## 5.2. ການບໍ່ຮັບ ແລະ ການຮັບຄຳຮ້ອງຟ້ອງມາພິຈາລະນາ

ໃນເວລາກວດກາຄຳຮ້ອງຟ້ອງນັ້ນ ຖ້າຈ່າສານຫາກເຫັນວ່າ ຄຳຮ້ອງຟ້ອງນັ້ນບໍ່ຖືກຕ້ອງຕາມທີ່ກຳນົດໄວ້ໃນກົດໝາຍແລ້ວ ຈ່າສານຕ້ອງໄດ້ສົ່ງຄຳຮ້ອງຟ້ອງນັ້ນຄືນໃຫ້ແກ່ຜູ້ຍື່ນຄຳຮ້ອງຟ້ອງຫຼື ໂຈດ, ພ້ອມກັນນັ້ນ ກໍຕ້ອງແນະນຳໃຫ້ເຂົາເຈົ້າໄປປັບປຸງ ຫຼື ແກ້ໄຂຈຸດບົກຜ່ອງຂອງຄຳຮ້ອງນັ້ນເສຍກ່ອນ ແລ້ວຈຶ່ງຮັບເອົາຄຳຮ້ອງຟ້ອງດັ່ງກ່າວມາພິຈາລະນາ.

### 5.2.1.ການບໍ່ຮັບຄຳຮ້ອງຟ້ອງມາພິຈາລະນາ

ໃນກໍລະນີທີ່ຜູ້ຮ້ອງຟ້ອງ ຫຼື ຜູ້ຖືກເສຍຫາຍຫາກໄດ້ຂຽນຄຳຮ້ອງຟ້ອງເພື່ອຍື່ນຕໍ່ສານ ຊຶ່ງມີເນື້ອໃນບໍ່ຖືກຕ້ອງ ແລະ ບໍ່ຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍແລ້ວ ສານຈະບໍ່ຮັບເອົາຄຳຮ້ອງຟ້ອງດັ່ງກ່າວມາພິຈາລະນາ ຊຶ່ງມີບາງກໍລະນີດັ່ງນີ້:

1) ບັນຫາທີ່ຮ້ອງຟ້ອງນັ້ນຫາກຍັງບໍ່ທັນໄດ້ໄກ່ເກ່ຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
2) ຂໍ້ຂັດແຍ່ງທາງດ້ານການຄ້າທີ່ຍັງບໍ່ທັນໄດ້ໄກ່ເກ່ຍຈາກສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕາມທີ່ໄດ້ກຳນົດນົດໄວ້ໃນສັນຍາ;
3) ບັນຫາທີ່ຮ້ອງຟ້ອງນັ້ນບໍ່ຕົກຢູ່ໃນສິດອຳນາດຂອງສານທີ່ຈະນຳມາພິຈາລະນາ;
4) ຄຳຮ້ອງຟ້ອງຂອງຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ຜູ້ບໍ່ມີສິດເປັນຜູ້ຕາງໜ້າ;
5) ຄຳຮ້ອງຟ້ອງທີ່ບໍ່ໄດ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 166 ຂອງກົດໝາຍວ່າດ້ວຍການດຳເນຄະດີແພ່ງ.

---

[12] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 166

[13] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 198

ສໍາລັບຂໍ້ 4 ແລະ ຂໍ້ 5 ນັ້ນຄູ່ຄວາມສາມາດແກ້ໄຂຄໍາຮ້ອງຟ້ອງຂອງຕົນໃຫ້ຖືກຕ້ອງຕາມກົດໝາຍຄືນໄດ້ ເພື່ອຍື່ນຕໍ່ສານຮັບມາພິຈາລະນາ [14].

**5.2.2. ການຮັບເອົາຄໍາຮ້ອງຟ້ອງມາພິຈາລະນາ**

ພາຍຫຼັງຈ່າສານ ໄດ້ມີການກວດກາຄໍາຮ້ອງຟ້ອງດັ່ງກ່າວ ແລະກໍເຫັນວ່າມີຄວາມຖືກຕ້ອງເປັນທີ່ຮຽບຮ້ອຍແລ້ວ, ຈ່າສານຕ້ອງຮັບ ແລະ ນໍາເອົາຄໍາຮ້ອງຟ້ອງດັ່ງກ່າວມາບັນທຶກເຂົ້າເລກທີຂາເຂົ້າຂອງເອກະສານ ເພື່ອຮັບເອົາຄໍາຮ້ອງຟ້ອງມາພິຈາລະນາຕາມຂັ້ນຕອນ ແລະ ໃຫ້ຖືກຕ້ອງຕາມກໍານົດເວລາຂອງການດໍາເນີນຄະດີ ດັ່ງນີ້:

- ຄະດີແພ່ງແລະຄອບຄົວ ໃຫ້ເລີ່ມດໍາເນປ່າງຊ້າ ສາມສິບວັນ;
- ຄະດີກ່ຽວກັບແຮງງານ ແລະ ສາຍພົວພັນທາງດ້ານບໍລິຫານໃຫ້ເລີ່ມດໍາເນີນຢ່າງຊ້າ ຊາວວັນ;
- ຄະດີການຄ້າແລະຄະດີເດັກ ໃຫ້ເລີ່ມດໍາເນີນຢ່າງຊ້າ ສິບຫ້າວັນ [15].

ໃນການເລີ່ມດໍາເນີນຄະດີຕາມທີ່ກ່າວມາຂ້າງເທິງນີ້ຄວາມໝາຍວ່າ ພາຍຫຼັງທີ່ສານໄດ້ຮັບຄໍາຮ້ອງຟ້ອງແລ້ວ ພາຍໃນກໍານົດເວລາດັ່ງກ່າວສານຕ້ອງເຄື່ອນໄຫວຢ່າງໃດຢ່າງໜຶ່ງ ເຊັ່ນ ການອອກໝາຍຮຽກຄູ່ຄວາມ, ການແຈ້ງໝາຍຮຽກ ໃຫ້ຝ່າຍທີ່ຖືກຮ້ອງຟ້ອງຊາບ ແລະອື່ນໆ ຕາມຂັ້ນຕອນໃນການດໍາເນີນຄະດີແພ່ງ.

**5.3. ການແຈ້ງຄໍາຮ້ອງຟ້ອງໃຫ້ຜູ້ຖືກຮ້ອງຟ້ອງຊາບ**

ພາຍຫຼັງຈ່າສານຮັບເອົາຄໍາຮ້ອງຟ້ອງມາພິຈາລະນາແລ້ວ ຈ່າສານຕ້ອງແຈ້ງໃຫ້ຜູ້ຖືກຮ້ອງຟ້ອງຊາບໂດຍເປັນລາຍລັກອັກສອນດ້ວຍການອອກໝາຍຮຽກເພື່ອໃຫ້ຜູ້ຖືກຮ້ອງຟ້ອງເຂົ້າມາສານແລະຮັບຊາບຄໍາຮ້ອງຟ້ອງ, ພ້ອມນັ້ນ ຈ່າສານຕ້ອງມອບສໍາເນົາຄໍາຮ້ອງຟ້ອງໃຫ້ຜູ້ຖືກຮ້ອງຟ້ອງ ເພື່ອໃຫ້ຜູ້ກ່ຽວຂຽນຄໍາແກ້ຟ້ອງຕາມເຫດຜົນ ແລະຕາມຄວາມເປັນຈິງ, ຫຼັງຈາກນັ້ນຈຶ່ງນໍາມາສົ່ງໃຫ້ສານຕາມພາຍຫຼັງ. ພ້ອມນີ້ ຈ່າສານຕ້ອງກໍານົດໄລຍະເວລາຂອງການມາສົ່ງຄໍາແກ້ຟ້ອງໃຫ້ສານຢ່າງຄັກແນ່.

**5.3.1.ການແຈ້ງດ້ວຍການອອກໝາຍຮຽກ**

ໃນການແຈ້ງໃຫ້ຜູ້ຖືກຮ້ອງຟ້ອງຊາບເຂົ້າມາສານ ແລະ ຮັບຊາບຄໍາຮ້ອງຟ້ອງນັ້ນ, ສານຕ້ອງແຈ້ງເປັນລາຍລັກອັກສອນໂດຍການອອກໝາຍຮຽກຊຶ່ງໃນການສົ່ງ ແລະ ການແຈ້ງໝາຍຮຽກນີ້ອາດນໍາໃຊ້ສີ່ຮູບການຕົ້ນຕໍຄື: ການສົ່ງໂດຍກົງຫາຜູ້ທີ່ກ່ຽວຂ້ອງ ແລະ ການສົ່ງຜ່ານທາງໄປສະນີ ຫຼື ໂທລະຄົມມະນາຄົມ.

**ກ. ການສົ່ງໂດຍກົງຫາຜູ້ທີ່ກ່ຽວຂ້ອງ**

ການສົ່ງໝາຍຮຽກໂດຍກົງຫາຜູ້ທີ່ກ່ຽວຂ້ອງ ແມ່ນຮູບການໜຶ່ງທີ່ມີຄວາມສໍາຄັນ ແລະ ຈໍາເປັນໃນເວລາດໍາເນີນຄະດີເພາະໃນຮູບການນີ້ມີຄວາມຮັບປະກັນສູງທີ່ເຮັດໃຫ້ຜູ້ຖືກຮຽກໄດ້ຮັບໝາຍຮຽກຈາກສານດ້ວຍຕົວຂອງຜູ້ກ່ຽວເອງ.

ການສົ່ງໂດຍກົງຕ້ອງດໍາເນການໂດຍພະນັກງານຂອງສານ ສົ່ງໃຫ້ຜູ້ກ່ຽວຂ້ອງເອງ ແລະ ຕ້ອງໄດ້ແຈ້ງໃຫ້ອົງການປົກຄອງບ້ານ ຮັບຊາບນໍາ.

ໃນກໍລະນີ ບໍ່ສາມາດສົ່ງໂດຍກົງຫາຜູ້ກ່ຽວໄດ້ ແມ່ນສາມາດສົ່ງຜ່ານນາຍບ້ານບ່ອນຜູ້ກ່ຽວສັງກັດຢູ່ຕາມທີ່ຢູ່ ຊຶ່ງໄດ້ລະບຸໃນສໍານວນຄະດີ; ໃນກໍລະນີທີ່ຜູ້ຖືກຮຽກຫາກເປັນພະນັກງານນັ້ນ ໝາຍຮຽກອາດສົ່ງຫາອົງການຈັດຕັ້ງບ່ອນຜູ້ກ່ຽວສັງກັດນັ້ນກໍໄດ້.

---

[14]ອ້າງແລ້ວ, ມາດຕາ 170.

[15]ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 179

**ຂ. ການສົ່ງຜ່ານທາງໄປສະນີ ຫຼື ໂທລະຄົມມະນາຄົມ**

ການສົ່ງໝາຍຮຽກຜ່ານທາງໄປສະນີ ຫຼື ໂທລະຄົມມະນາຄົມ ກໍເປັນອີກວິທີໜຶ່ງ ຊຶ່ງເປັນການນໍາເອົາໝາຍຮຽກຂອງສານໄປໃຫ້ຜູ້ຖືກຮຽກໂດຍຜ່ານທາງໄປສະນີ ຫຼື ໂທລະຄົມມະນາຄົມ ໃນກໍລະນີທີ່ຜູ້ກ່ຽວຂ້ອງ ໃນການດໍາເນີນຄະດີຫາກຢູ່ຮ່າງໄກ ແລະ ມີຄວາມຫຍຸ້ງຍາກຕໍ່ການສົ່ງໂດຍກົງຫາຜູ້ທີ່ກ່ຽວຂ້ອງນັ້ນ.

ໃນການສົ່ງໝາຍຮຽກດ້ວຍວິທີນີ້ຈະຖືວ່າຜູ້ທີ່ຖືກຮຽກທີ່ລະບຸໄວ້ໃນໝາຍຮຽກໄດ້ຮັບໝາຍຮຽກດັ່ງກ່າວ ນັບແຕ່ວັນທີ່ພະນັກງານໄປສະນີ ຫຼື ໂທລະຄົມມະນາຄົມໄດ້ສົ່ງເອກະສານດັ່ງກ່າວໃຫ້ແກ່ຜູ້ກ່ຽວ.

## 6. ການແກ້ຟ້ອງ ແລະ ການຟ້ອງແຍ່ງ

ການແກ້ຟ້ອງເປັນການກະທໍາຂອງຜູ້ຖືກຮ້ອງຟ້ອງ ເພື່ອດໍາເນີນການແກ້ຄໍາຮ້ອງຟ້ອງຊຶ່ງຜູ້ຮ້ອງຟ້ອງໄດ້ກ່າວອ້າງວ່າຜູ້ຖືກຮ້ອງຟ້ອງໄດ້ກະທໍາສິ່ງໃດສິ່ງໜຶ່ງທີ່ເປັນການລະເມີດສິດ ຫຼືຜົນປະໂຫຍດຂອງຜູ້ຮ້ອງຟ້ອງໂດຍບໍ່ມີມູນຄວາມຈິງ ຫຼື ເກີນຄວາມເປັນຈິງ ຫຼື ຂາດເຫດການໃດໜຶ່ງທີ່ບໍ່ສາມາດສະເໜີຕໍ່ສານພິຈາລະນາຕັດສິນໄດ້ແລ້ວນໍາເອົາຄໍາແກ້ຟ້ອງຍື່ນຕໍ່ສານ.

ການຟ້ອງແຍ່ງເປັນການກະທໍາຂອງຜູ້ຖືກຮ້ອງຟ້ອງ ຫຼື ຈໍາເລີຍເພື່ອໃຫ້ຜູ້ຮ້ອງຟ້ອງ ຫຼື ໂຈດປະຕິບັດພັນທະໃດໜຶ່ງໃຫ້ແກ່ຕົນເອງແລ້ວນໍາເອົາຄໍາຟ້ອງແຍ່ງຍື່ນຕໍ່ສານ.

### 6.1. ຄວາມໝາຍ, ຄວາມຈໍາເປັນຂອງຄໍາແກ້ຟ້ອງ ແລະ ກໍານົດເວລາໃນການແກ້ຟ້ອງ

#### 6.1.1. ຄວາມໝາຍຂອງຄໍາແກ້ຟ້ອງ

ຄໍາແກ້ຟ້ອງ ເປັນເອກະສານຂອງຜູ້ຖືກຮ້ອງຟ້ອງທີ່ຍື່ນຕໍ່ສານ ເພື່ອແກ້ຄໍາຮ້ອງຟ້ອງຂອງຜູ້ຮ້ອງຟ້ອງ ຫຼື ໂຈດ ໃນເມື່ອຕົນຫາກເຫັນວ່າຄໍາຮ້ອງຟ້ອງຫາກບໍ່ມີມູນຄວາມຈິງ ຫຼື ເກີນຄວາມຈິງກ່ຽວກັບການທວງເອົາການໃຊ້ແທນຄ່າເສັຍຫາຍ ຫຼື ຊັບສິ່ງຂອງ ຫຼື ຂາດເຫດການໃດໜຶ່ງທີ່ບໍ່ສາມາດຈະໃຫ້ສານພິຈາລະນາຕັດສິນໄດ້ ຜູ້ກ່ຽວມີສິດເຮັດຄໍາແກ້ຟ້ອງດ້ວຍເຫດຜົນ ພ້ອມທັງພະຍານ ແລະ ຫຼັກຖານມາຢັ້ງຢືນຄໍາແກ້ຟ້ອງດັ່ງກ່າວ.

#### 6.1.2. ຄວາມຈໍາເປັນຂອງຄໍາແກ້ຟ້ອງ

ຄໍາແກ້ຟ້ອງ ເປັນສິ່ງທີ່ມີຄວາມຈໍາເປັນຢ່າງຍິ່ງຕໍ່ບຸກຄົນ ຫຼື ການຈັດຕັ້ງທີ່ຖືກຮ້ອງຟ້ອງ ແລະ ຂະບວນການດໍາເນີນຄະດີຂອງສານ ທັງນີ້ກໍເພາະວ່າ ຄໍາແກ້ຟ້ອງເປັນສິ່ງທີ່ສະແດງອອກເຖິງການນໍາໃຊ້ສິດໃນການຕໍ່ສູ້ຄະດີຂອງຜູ້ຖືກຮ້ອງຟ້ອງ ຫຼື ຈໍາເລີຍ; ພ້ອມນີ້ຄໍາແກ້ຟ້ອງກໍເປັນພາຫະນະໜຶ່ງທີ່ຈະເຮັດໃຫ້ຄວາມເປັນຈິງຂອງຄະດີມີຄວາມແຈ້ງຂ່າວຂຶ້ນຕື່ມ ດ້ວຍເຫດຜົນທີ່ວ່າ ຖ້າຫາກໂຈດຮ້ອງຟ້ອງໂດຍບໍ່ມີຄວາມເປັນຈິງ ຫຼື ເກີນຄວາມເປັນຈິງນັ້ນ ຜູ້ຖືກຟ້ອງກໍຈະຊອກຫາເຫດຜົນ ພ້ອມທັງພະຍານ ແລະ ຫຼັກຖານມາຢັ້ງຢືນເຖິງຄວາມເປັນຈິງຕໍ່ສານ.

ຄໍາແກ້ຟ້ອງຂອງຜູ້ຖືກຮ້ອງຟ້ອງ ນອກຈາກຈະເຮັດໃຫ້ຄະດີດັ່ງກ່າວມີຄວາມແຈ້ງຂາວຂຶ້ນ ກໍຍັງຈະເຮັດໃຫ້ການດໍາເນີນຄະດີຂອງສານມີຄວາມວ່ອງໄວຂຶ້ນ ຕື່ມເນື່ອງຈາກຜູ້ຖືກຮ້ອງຟ້ອງ ຫຼື ຈໍາເລີຍ ໄດ້ປະຕິບັດສິດ ແລະ ພັນທະຂອງຕົນເອງໃນການດໍາເນີນຄະດີ ຊຶ່ງເຮັດໃຫ້ສານສາມາດດໍາເນີນຄະດີຕາມຂັ້ນຕອນກົດໝາຍໄດ້.

#### 6.1.3. ກໍານົດເວລາໃນການແກ້ຟ້ອງ

ໃນເມື່ອຜູ້ຖືກຮ້ອງຟ້ອງ ຫຼື ຈໍາເລີຍ ໄດ້ຮັບຊາບຄໍາຮ້ອງຟ້ອງແລ້ວ ຜູ້ກ່ຽວຕ້ອງຂຽນຄໍາແກ້ຟ້ອງມາຍື່ນຕໍ່ສານພາຍໃນກໍາເວລາ ສິບຫ້າວັນນັບແຕ່ວັນທີ່ຜູ້ກ່ຽວໄດ້ຮັບຊາບຄໍາຮ້ອງຟ້ອງເປັນຕົ້ນໄປ[16].

ໃນກໍລະນີຫາກຜູ້ຖືກຮ້ອງຟ້ອງ ຫຼື ຈໍາເລີຍໄດ້ຮັບຊາບຄໍາຮ້ອງຟ້ອງແລ້ວ ແຕ່ຜູ້ກ່ຽວບໍ່ສາມາດສົ່ງຄໍາແກ້ຟ້ອງທັນຕາມເວລາທີ່ກໍານົດໄວ້ຜູ້ກ່ຽວກໍມີສິດຮ້ອງຂໍຕໍ່ສານ ເພື່ອຂໍເລື່ອນເວລາໃນການສົ່ງຄໍາແກ້ຟ້ອງໃຫ້ສານຊຶ່ງສານຈະເປັນ

[16] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 175

ຜູ້ພິຈາລະນາກຳນົດເວລາໃນການສົ່ງຄຳແກ້ຟ້ອງດັ່ງກ່າວ ໂດຍອີງໃສ່ເຫດຜົນຕົວຈິງ ຂອງການຂໍເລື່ອນເວລາໃນການສົ່ງຄຳແກ້ຟ້ອງດັ່ງກ່າວ.

ນອກນີ້, ໂດຍອີງໃສ່ສະພາບຄວາມເປັນຈິງ ແລະ ເພື່ອເຮັດໃຫ້ການດຳເນີນຄະດີຖືກຕ້ອງຕາມຫຼັກການນັ້ນຜູ້ຖືກຮ້ອງຟ້ອງ ຫຼືຈຳເລີຍກໍມີສິດຮ້ອງຂໍໃຫ້ສານບັນທຶກເອົາຄຳໃຫ້ການຕາງການແກ້ຟ້ອງໃນເວລາຜູ່ກ່ຽວເຂົ້າມາສານກໍໄດ້.

### 6.2. ຄວາມໝາຍ ແລະ ຄວາມຈຳເປັນຄຳຟ້ອງແຍ່ງ

#### 6.2.1.ຄວາມໝາຍຂອງຄຳຟ້ອງແຍ່ງ

ຄຳຟ້ອງແຍ່ງ ເປັນເອກະສານຂອງຜູ່ຖືກຮ້ອງຟ້ອງ ຫຼື ຈຳເລີຍ ທີ່ຍື່ນຕໍ່ສານເພື່ອປົກສິດ ແລະ ຜົນປະໂຫຍດຂອງຕົນ ຖ້າຫາກເຫັນວ່າຜູ່ຮ້ອງຟ້ອງ ຫຼື ໂຈດ ຍັງມີພັນທະປະຕິບັດຕໍ່ຕົນ ເພື່ອໃຫ້ສານພິຈາລະນາໄປພ້ອມໆກັນ. ຄຳຟ້ອງແຍ່ງ ອາດຈະສົ່ງພ້ອມຄຳແກ້ຟ້ອງ ຫຼື ລຸນຫຼັງຄຳແກ້ຟ້ອງກໍໄດ້.

**ຕົວຢ່າງ:** ທ້າວ ກ ຮ້ອງຟ້ອງ ເພື່ອທວງເອົາເງິນຄ່າເສັຍຫາຍ ຈາກການເກີດອຸປະຕິເຫດນຳທ້າວ ຂ ຈຳນວນ 10.000.000 ກີບ, ໃນເວລາດຳເນີນຄະດີນັ້ນ ທ້າວ ຂ ເຫັນວ່າ ທ້າວ ກ ກໍຍັງມີໜີ້ສິນຕໍ່ຕົນຈຳນວນ 8.000.000 ກີບ ໃນກໍລະນີ້ ທ້າວ ຂ ສາມາດຍື່ນຄຳຟ້ອງແຍ່ງຕໍ່ສານເພື່ອທວງໃຫ້ທ້າວ ກ ໃຊ້ແທນໜີ້ສິນຕາມຈຳນວນດັ່ງກ່າວໂດຍໃຫ້ສານພິຈາລະນາໄປພ້ອມໆກັນ.

#### 6.2.2. ຄວາມຈຳເປັນຂອງຄຳຟ້ອງແຍ່ງ

ຄຳຟ້ອງແຍ່ງ ກໍເປັນສິ່ງທີ່ມີຄວາມຈຳເປັນຕໍ່ບຸກຄົນ ຫຼື ການຈັດຕັ້ງທີ່ຖືກຮ້ອງຟ້ອງ ແລະ ຂະບວນການດຳເນີນຄະດີຂອງສານ ທັງນີ້ກໍເພາະວ່າ ຄຳຟ້ອງແຍ່ງເປັນສິ່ງທີ່ສະແດງອອກ ເຖິງການນຳໃຊ້ສິດໃນການ ຕໍ່ສູ້ຄະດີຂອງຜູ່ຖືກຮ້ອງຟ້ອງ ຫຼື ຈຳເລີຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນເອງ ໂດຍສະເພາະແມ່ນ ຮຽກຮ້ອງໃຫ້ຜູ່ຮ້ອງຟ້ອງ ຫຼື ໂຈດ ຕ້ອງປະຕິບັດພັນທະໃຫ້ແກ່ຕົນ ໂດຍຈະຊອກຫາເຫດຜົນ ພ້ອມທັງພະຍານ ແລະ ຫຼັກຖານມາຢັ້ງຢືນເຖິງຄວາມເປັນຈິງຕໍ່ສານ.

ພ້ອມນີ້, ຄຳຟ້ອງແຍ່ງຂອງຜູ່ຖືກຮ້ອງຟ້ອງນອກຈາກ ເປັນການຮຽກຮ້ອງໃຫ້ຜູ່ຮ້ອງຟ້ອງ ຫຼື ໂຈດ ຕ້ອງປະຕິບັດພັນທະໃຫ້ແກ່ຕົນແລ້ວ ກໍຍັງເປັນການສ້າງເງື່ອນໄຂສະດວກໃຫ້ແກ່ການດຳເນີນຄະດີຂອງສານໃນການພິຈາລະນາຕັດສິນຄະດີ ໂດຍບໍ່ໄດ້ແຍກພິຈາລະນາຕັດສິນເປັນແຕ່ລະຄະດີ ສະເພາະແຕ່ເປັນການພິຈາລະນາຕັດສິນເປົ້າໝາຍການຮ້ອງຟ້ອງຂອງຜູ່ຮ້ອງຟ້ອງ ຫຼື ໂຈດ ແລະ ເປົ້າໝາຍຂອງການຟ້ອງແຍ່ງຂອງຜູ່ຖືກຮ້ອງຟ້ອງ ຫຼື ຈຳເລີຍໄປພ້ອມໆກັນ.

### 6.3. ການຮັບຮູ້ ແລະ ການຖອນຄຳຮ້ອງຟ້ອງຫຼືຄຳຟ້ອງແຍ່ງ

ໃນເວລາດຳເນີນຄະດີ ຄູ່ຄວາມອາດຈະມີການຮັບຮູ້ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງຂອງກັນ ແລະ ກັນ ຫຼື ຖ້າຫາກມີການຕົກລົງກັນໄດ້ ຄູ່ຄວາມກໍອາດຈະມີການຖອນຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງແລ້ວແຕ່ລະກໍລະນີ.

#### 6.3.1.ການຮັບຮູ້ຄຳຮ້ອງຟ້ອງຫຼືຄຳຟ້ອງແຍ່ງ

ໂຈດ ຫຼື ຈຳເລີຍ ມີສິດຮັບຮູ້ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງຂອງກັນ ແລະ ກັນບາງສ່ວນ ຫຼື ທັງໝົດ. ໃນການຮັບຮູ້ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງນັ້ນ ເປັນສາເຫດທີ່ພາໃຫ້ສານຕັດສິນ ໂດຍບໍ່ມີການໄຕ່ສວນຄະດີໃນທີ່ປະຊຸມສານຕື່ມອີກກໍໄດ້.

ໃນເວລາດຳເນີນຄະດີ ຖ້າຫາກວ່າຈຳເລີຍມີການຮັບຮູ້ ຫຼື ປະຕິເສດຄຳຮ້ອງຟ້ອງບາງສ່ວນຂອງໂຈດ ຫຼື ໂຈດມີການຮັບຮູ້ ຫຼື ປະຕິເສດຄຳຟ້ອງແຍ່ງຂອງຈຳເລີຍບາງສ່ວນ ສານຈະກຳນົດປະເດັນຂໍ້ຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ທັນຮັບຮູ້ ຫຼື ປະຕິເສດ.

ສຳລັບບັນຫາທີ່ໂຈດ ຫຼື ຈຳເລີຍ ຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຊອກຫາຫຼັກຖານມາຢັ້ງຢືນຕື່ມອີກ ຖ້າວ່າການຮັບຮູ້ ນັ້ນຫາກບໍ່ຂັດກັບຜົນປະໂຫຍດຂອງລັດ ຫຼື ສັງຄົມ ແລະ ລະບຽບກົດໝາຍ.

ໃນກໍລະນີທີ່ຄູ່ຄວາມຫາກຮັບຮູ້ຄໍາຮ້ອງຟ້ອງ ຫຼື ຄໍາຟ້ອງແຍ່ງທັງໝົດສານກໍຈະຮຽກໂຈດ ແລະ ຈໍາເລີຍເຂົ້າມາຊ້ອງໜ້າກັນເພື່ອເຮັດບົດບັນທຶກແລ້ວອອກຄໍາສັ່ງຈັດຕັ້ງປະຕິບັດ, ຖ້າຕົກລົງກັນບໍ່ໄດ້ຈຶ່ງໃຫ້ທໍາການພິຈາລະນາຕັດສິນຕາມລະບຽບກົດໝາຍ.

**ກ. ຈໍາເລີຍຮັບຮູ້ຄໍາຮ້ອງຟ້ອງຂອງໂຈດ**

ໃນເວລາດໍາເນີນຄະດີ ຖ້າວ່າຈໍາເລີຍຫາກຮັບຮູ້ຄໍາຮ້ອງຟ້ອງຂອງໂຈດທັງໝົດ ສານກໍບໍ່ຈໍາເປັນຈະສອບສວນເອົາຂໍ້ມູນຫຼັກຖານ, ເອົາຄໍາໃຫ້ການ ແລະ ອື່ນໆຂອງຝ່າຍຈໍາເລີຍຕື່ມອີກ ແລ້ວສານກໍຈະຮຽກໂຈດ ແລະ ຈໍາເລີຍເຂົ້າມາຊ້ອງໜ້າກັນເພື່ອເຮັດບົດບັນທຶກແລ້ວອອກຄໍາສັ່ງຈັດຕັ້ງປະຕິບັດ.

ໃນກໍລະນີ ຈໍາເລີຍຫາກຮັບຮູ້ຄໍາຮ້ອງຟ້ອງຂອງໂຈດ ສ່ວນໃດສ່ວນໜຶ່ງ ຫຼື ບາງສ່ວນນັ້ນ ສານກໍຈະກໍານົດປະເດັນຂັດແຍ່ງ ແລະ ສອບສວນເອົາຂໍ້ມູນຫຼັກຖານໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດຂອງຝ່າຍຈໍາເລີຍເທົ່ານັ້ນ.

**ຂ. ໂຈດຮັບຮູ້ຄໍາຟ້ອງແຍ່ງຂອງຈໍາເລີຍ**

ໃນເວລາດໍາເນີນຄະດີ ຖ້າວ່າໂຈດຫາກຮັບຮູ້ຄໍາຟ້ອງແຍ່ງຂອງຈໍາເລີຍທັງໝົດ ສານກໍບໍ່ຈໍາເປັນຈະສອບສວນເອົາຂໍ້ມູນຫຼັກຖານ, ເອົາຄໍາໃຫ້ການ ແລະ ອື່ນໆຂອງຝ່າຍໂຈດຕື່ມອີກ ແລ້ວສານກໍຈະຮຽກໂຈດ ແລະ ຈໍາເລີຍເຂົ້າມາຊ້ອງໜ້າກັນເພື່ອເຮັດບົດບັນທຶກແລ້ວອອກຄໍາສັ່ງຈັດຕັ້ງປະຕິບັດ.

ໃນກໍລະນີ ໂຈດຫາກຮັບຮູ້ຄໍາຟ້ອງແຍ່ງຂອງຈໍາເລີຍ ສ່ວນໃດສ່ວນໜຶ່ງ ຫຼື ບາງສ່ວນນັ້ນ ສານກໍຈະກໍານົດປະເດັນຂັດແຍ່ງ ແລະ ສອບສວນເອົາຂໍ້ມູນຫຼັກຖານໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດຂອງຝ່າຍໂຈດເທົ່ານັ້ນ.

**6.3.2. ການຖອນຄໍາຮ້ອງຟ້ອງ ຫຼື ຄໍາຟ້ອງແຍ່ງ**

ໃນເວລາດໍາເນີນຄະດີໂຈດ ຫຼື ຈໍາເລີຍມີສິດຖອນຄໍາຮ້ອງຟ້ອງ ຫຼື ຄໍາຟ້ອງແຍ່ງທັງໝົດຫຼືບາງສ່ວນ. ໃນກໍລະນີຫາກມີການຖອນບາງສ່ວນນັ້ນສານກໍຈະພິຈາລະນາຕັດສິນໃນສ່ວນທີ່ບໍ່ໄດ້ຖອນເທົ່ານັ້ນ. ຖ້າຫາກວ່າໄດ້ຖອນທັງໝົດກໍຈະພາໃຫ້ຄະດີນັ້ນສິ້ນສຸດລົງຍົກເວັ້ນຄະດີຢ່າຮ້າງ.

ໃນກໍລະນີທີ່ມີການຖອນຄໍາຟ້ອງແຍ່ງທັງໝົດ ແລະ ການຖອນດັ່ງກ່າວບໍ່ຂັດແຍ່ງກັບຜົນປະໂຫຍດຂອງລັດ ຫຼື ສັງຄົມ ແລະ ລະບຽບກົດໝາຍສານກໍຈະອອກຄໍາຊີ້ຂາດໃຫ້ຖອນຄໍາຟ້ອງແຍ່ງ. ໃນກໍລະນີຫາກມີການຖອນຄໍາຮ້ອງຟ້ອງທັງໝົດ ແລະ ບໍ່ມີຄໍາຟ້ອງແຍ່ງ ຂອງຈໍາເລີຍສານຈະອອກຄໍາສັ່ງຊັດມ້ຽນຄະດີ.

ໃນການຖອນຄໍາຮ້ອງຟ້ອງຫຼືຄໍາຟ້ອງແຍ່ງທັງໝົດ ຫຼື ບາງສ່ວນສາມາດປະຕິບັດໄດ້ກ່ອນປິດການໂຕ້ຖຽງຢູ່ທີ່ປະຊຸມສານຂັ້ນຕົ້ນ.

**ກ. ໂຈດຖອນຄໍາຮ້ອງຟ້ອງ**

ໃນເວລາດໍາເນີນຄະດີນັ້ນ ຖ້າໂຈດຫາກຖອນຄໍາຮ້ອງຟ້ອງຂອງຕົນສ່ວນໃດສ່ວນໜຶ່ງ ຫຼື ບາງສ່ວນນັ້ນ ສານກໍຈະພິຈາລະນາຕັດສິນໃນສ່ວນທີ່ບໍ່ໄດ້ຖອນເທົ່ານັ້ນ. ສໍາລັບສ່ວນທີ່ຖອນສານກໍຈະບໍ່ນໍາມາພິຈາລະນາໂດຍສານຈະອອກຄໍາຊີ້ຂາດໃຫ້ຖອນ ແລະ ບໍ່ຮັບເອົາຂໍ້ຂັດແຍ່ງທີ່ໂຈດໄດ້ຖອນໄປແລ້ວນັ້ນມາພິຈາລະນາຄືນອີກ.

ໃນກໍລະນີ ຖ້າວ່າໂຈດຫາກຖອນຄໍາຮ້ອງຟ້ອງຂອງຕົນທັງໝົດ ແລະບໍ່ມີຄໍາຟ້ອງແຍ່ງຂອງຈໍາເລີຍ ຊຶ່ງການຖອນດັ່ງກ່າວບໍ່ຂັດແຍ່ງກັບຜົນປະໂຫຍດຂອງລັດ ຫຼື ສັງຄົມ ແລະ ລະບຽບກົດໝາຍສານກໍຈະອອກຄໍາສັ່ງຊັດມ້ຽນຄະດີ.

ໃນການຖອນຄໍາຮ້ອງຟ້ອງທັງໝົດ ຫຼື ບາງສ່ວນສາມາດປະຕິບັດໄດ້ກ່ອນປິດການໂຕ້ຖຽງຢູ່ທີ່ປະຊຸມສານຂັ້ນຕົ້ນ.

**ຂ. ຈໍາເລີຍຖອນຄໍາຟ້ອງແຍ່ງ**

ໃນເວລາດໍາເນີນຄະດີນັ້ນ ຖ້າຈໍາເລີຍຫາກຖອນຄໍາຟ້ອງແຍ່ງຂອງຕົນສ່ວນໃດສ່ວນໜຶ່ງ ຫຼື ບາງສ່ວນນັ້ນ ສານກໍຈະພິຈາລະນາຕັດສິນໃນສ່ວນທີ່ບໍ່ໄດ້ຖອນເທົ່ານັ້ນ ໂດຍສານຈະອອກຄໍາຊີ້ຂາດໃຫ້ຖອນ ແລະ ບໍ່ຮັບເອົາຂໍ້ຂັດແຍ່ງທີ່ຈໍາເລີຍໄດ້ຖອນໄປແລ້ວນັ້ນມາພິຈາລະນາຄືນອີກ.

ໃນກໍລະນີ ຖ້າວ່າຈໍາເລີຍຫາກຖອນຄໍາຟ້ອງແຍ່ງຂອງຕົນທັງໝົດ ແລະ ການຖອນດັ່ງກ່າວບໍ່ຂັດແຍ່ງກັບຜົນປະໂຫຍດຂອງລັດ ຫຼື ສັງຄົມ ແລະ ລະບຽບກົດໝາຍສານກໍຈະອອກຄໍາຊີ້ຂາດໃຫ້ຈໍາເລີຍຖອນ.

ໃນການຖອນຄໍາຟ້ອງແຍ່ງທັງໝົດຫຼືບາງສ່ວນສາມາດປະຕິບັດໄດ້ກ່ອນປິດການໂຕ້ຖຽງຢູ່ທີ່ປະຊຸມສານຂັ້ນຕົ້ນ.

## 7. ໝາຍຮຽກ

### 7.1.ຄວາມໝາຍ ແລະ ຄວາມສໍາຄັນຂອງໝາຍຮຽກ

ໝາຍຮຽກ ແມ່ນເອກະສານທີ່ອອກໂດຍສານ ເພື່ອຮຽກຕົວໂຈດ, ຈໍາເລີຍ, ບຸກຄົນທີສາມ ແລະ ຜູ້ເຂົ້າຮ່ວມອື່ນໃຫ້ເຂົ້າມາສານ.

ໝາຍຮຽກມີຄວາມສໍາຄັນໃນລະບົບການດໍາເນີນຄະດີ ເນື່ອງຈາກວ່າການທີ່ຈະໃຫ້ຄູ່ຄວາມ ຫຼື ບຸກຄົນທີ່ມີສ່ວນກ່ຽວຂ້ອງໃນການດໍາເນີນຄະດີມາປະກົດຕົວຕໍ່ສານນັ້ນ ສານຈຶ່ງມີຄວາມຈໍາເປັນຕ້ອງໄດ້ນໍາໃຊ້ໝາຍຮຽກເພື່ອຮຽກຕົວພວກກ່ຽວເຂົ້າມາສານ. ສະນັ້ນ ຈຶ່ງເວົ້າໄດ້ວ່າໝາຍຮຽກແມ່ນຂົວຕໍ່ທີ່ສໍາຄັນລະຫວ່າງສານກັບຄູ່ຄວາມ, ບຸກຄົນທີສາມ ແລະ ຜູ້ເຂົ້າຮ່ວມອື່ນ ທີ່ກ່ຽວຂ້ອງໃນຄະດີໃດ.

ສໍາລັບຄູ່ຄວາມ ແລະ ບຸກຄົນທີສາມນັ້ນ ສານອອກໝາຍຮຽກໂຈດ ຫຼື ຈໍາເລີຍ ຫຼື ບຸກຄົນທີສາມ ຫຼື ຜູ້ເຂົ້າຮ່ວມອື່ນ ໃຫ້ເຂົ້າມາສານເພື່ອຮັບຊາບຄໍາຮ້ອງຟ້ອງ ແລະ ແກ້ຟ້ອງ, ຮັບຮູ້ ແລະ ປະຕິເສດຄໍາຟ້ອງແຍ່ງ, ແລະ ເພື່ອເອົາຂໍ້ມູນຫຼັກຖານທີ່ກ່ຽວຂ້ອງກັບຄະດີ ຊຶ່ງທັງໝົດນັ້ນກໍເພື່ອເຮັດໃຫ້ຜູ້ຮັບຜິດຊອບໃນການດໍາເນີນຄະດີສາມາດກໍານົດປະເດັນຂໍ້ຂັດແຍ່ງໄດ້ຢ່າງຊັດເຈນ ແລະ ພິຈາລະນາຕັດສິນຄະດີຢ່າງຖືກຕ້ອງ ທັງເປັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງໂຈດ, ຈໍາເລີຍ ແລະ ບຸນຄົນທີສາມ.

ສໍາລັບຂະບວນການດໍາເນີນຄະດີນັ້ນ ສານອອກໝາຍຮຽກໂຈດ ຫຼື ຈໍາເລີຍ ຫຼື ບຸກຄົນທີສາມ ຫຼື ຜູ້ເຂົ້າຮ່ວມອື່ນໃຫ້ເຂົ້າມາສານເພື່ອໃຫ້ຂໍ້ມູນຫຼັກຖານທີ່ກ່ຽວກັບຄະດີ ແລະ ເຮັດໃຫ້ການພິຈາລະນາຕັດສິນຄະດີເປັນໄປຕາມຂັ້ນຕອນຂອງການດໍາເນີນຄະດີ, ທັນຕາມກໍານົດເວລາທີ່ກໍານົດ ແລະ ມີຄວາມຖືກຕ້ອງ.

### 7.2. ການຕົກລົງອອກໝາຍຮຽກ

ໃນການອອກໝາຍຮຽກແຕ່ລະຄັ້ງ ແມ່ນຜູ້ພິພາກສາທີ່ມີໜ້າທີ່ໃນການຮັບຜິດຊອບຄົ້ນຄວ້າຄະດີທີ່ກ່ຽວຂ້ອງເປັນຜູ້ຕົກລົງອອກ ໂດຍກໍານົດຜູ້ທີ່ຈະຮຽກເຂົ້າມາສານ, ກໍານົດເວລາ ແລະ ກະກຽມປະເດັນສອບສວນແລ້ວແນະນໍາໃຫ້ຈ່າສານອອກໝາຍຮຽກບຸກຄົນກ່ຽວຂ່ອງ ເຂົ້າມາໃຫ້ການຕໍ່ສານ.

ໃນການອອກໝາຍຮຽກນັ້ນ ແມ່ນເປັນໜ້າທີ່ຂອງຈ່າສານທີ່ກ່ຽວຂ້ອງ ເປັນຜູ້ອອກໝາຍຮຽກ ໂດຍອີງຕາມການແນະນໍາຂອງຜູ້ພິພາກສາທີ່ຮັບຜິດຊອບໃນການດໍາເນີນຄະດີ ແລະ ຕ້ອງເຮັດເປັນສາມສະບັບ ຄື ສະບັບໜຶ່ງເອົາໃຫ້ຜູ້ທີ່ກ່ຽວຂ້ອງ, ສະບັບໜຶ່ງເອົາໄວ້ໃນສໍານວນຄະດີ ແລະ ອີກສະບັບໜຶ່ງເກັບມ້ຽນໄວ້ຢູ່ໃນສໍານັກຂອງຈ່າສານ.

### 7.3. ເນື້ອໃນຂອງໝາຍຮຽກ

ໃນການອອກໝາຍຮຽກແຕ່ລະຄັ້ງນັ້ນຈ່າສານຕ້ອງກໍານົດເນື້ອໃນໃຫ້ຄົບຖ້ວນ, ໜັກແໜ້ນ ເພື່ອເຮັດໃຫ້ຜູ້ຖືກຮຽກມີຄວາມເຂົ້າໃຈງ່າຍ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ.

ໃນການອອກໝາຍຮຽກນັ້ນ ຈ່າສານຕ້ອງກໍານົດເນື້ອໃນສໍາຄັນຕົ້ນຕໍ ດັ່ງນີ້:

- ຊື່ ຂອງສານປະຊາຊົນ;
- ຊື່ ແລະ ນາມສະກຸນ ຂອງຜູ້ຖືກຮຽກ;
- ຜູ້ຖືກຮຽກເຂົ້າມາສານພົວພັນກັບຄະດີເລື່ອງໃດ, ໃນຖານະ ແລະ ຈຸດປະສົງໃດ;
- ສະຖານທີ່ ແລະ ວັນເວລາເຂົ້າມາສານ;
- ຂໍ້ແນະນໍາໃຫ້ຜູ້ຖືກຮຽກນັ້ນປະຕິບັດສິ່ງໃດສິ່ງໜຶ່ງ ເຊັ່ນ ນໍາເອົາຫຼັກຖານທີ່ກ່ຽວຂ້ອງເຂົ້າມາສານ;

- ຄຳເຕືອນໃຫ້ຮູ້ກ່ຽວກັບຜົນສະທ້ອນຂອງຜູ້ຖືກຮຽກ ທີ່ບໍ່ເຂົ້າມາສານ [17].

**7.4. ການສົ່ງໝາຍຮຽກ**

ການສົ່ງໝາຍຮຽກ ແມ່ນການນຳເອົາໝາຍຮຽກຂອງສານໄປມອບໃຫ້ບຸກຄົນທີ່ກ່ຽວຂ້ອງໃນຄະດີ ຫຼື ຜູ້ທີ່ຖືກຮຽກຕາມບ່ອນຢູ່ຂອງຜູ້ກ່ຽວ ເພື່ອໃຫ້ເຂົ້າມາສານຕາມວັນເວລາທີ່ນັດໝາຍ.

ໝາຍຮຽກ ທີ່ສົ່ງໃຫ້ຜູ້ຖືກຮຽກນັ້ນຕ້ອງໃຫ້ຜູ້ກ່ຽວເຊັນຊື່ ຫຼື ແປະໂປ້ມືໃສ່ປຶ້ມບັນທຶກການສົ່ງເອກະສານນັ້ນ, ໃນກໍລະຜູ້ກ່ຽວບໍ່ຍອມເຊັນຊື່ ຫຼື ແປະໂປ້ມືໃສ່ ກໍໃຫ້ຜູ້ນຳສົ່ງນັ້ນ ໝາຍເຫດໄວ້ຢ່າງຄັກແນ່ ເພື່ອຢັ້ງຢືນໄວ້ເປັນຫຼັກຖານ. ພ້ອມນີ້ໃນການສົ່ງໝາຍຮຽກນັ້ນ ສານຕ້ອງຮັບປະກັນໃຫ້ຜູ້ຖືກຮຽກໄດ້ຮັບໝາຍຮຽກຂອງສານ ກ່ອນວັນນັດໝາຍເຂົ້າມາສານຢ່າງໜ້ອຍສາມວັນ.

ໃນການສົ່ງ ແລະ ການແຈ້ງໝາຍຮຽກນັ້ນ ສານສາມາດດຳເນີນໄດ້ດ້ວຍຫຼາຍຮູບການທີ່ແຕກຕ່າງກັນ ໂດຍອີງໃສ່ສະພາບການຕົວຈິງຂອງແຕ່ລະເຫດການ ເຊັ່ນ ການສົ່ງຫາຜູ້ທີ່ກ່ຽວຂ້ອງໂດຍກົງ; ການສົ່ງຜ່ານໄປສະນີ ຫຼື ໂທລະຄົມ; ການສົ່ງ ແລະ ແຈ້ງດ້ວຍການຕິດປະກາດ; ການສົ່ງ ແລະ ແຈ້ງຜ່ານທາງຊື່ມວນຊົນ ຊຶ່ງການນຳໃຊ້ແຕ່ລະຮູບການນັ້ນແມ່ນແລ້ວແຕ່ກໍລະນີຂອງຜູ້ຖືກຮຽກ ດັ່ງນີ້:

**ກ. ການສົ່ງໂດຍກົງຫາຜູ້ທີ່ກ່ຽວຂ້ອງ**

ການສົ່ງໝາຍຮຽກໂດຍກົງຫາຜູ້ທີ່ກ່ຽວຂ້ອງ ແມ່ນຮູບການໜຶ່ງທີ່ມີຄວາມສຳຄັນ ແລະ ຈຳເປັນໃນເວລາດຳເນີນຄະດີ ເພາະໃນຮູບການນີ້ມີຄວາມຮັບປະກັນສູງທີ່ເຮັດໃຫ້ຜູ້ຖືກຮຽກໄດ້ຮັບໝາຍຮຽກ ຈາກສານດ້ວຍຕົວຂອງຜູ້ກ່ຽວເອງ.

ໝາຍຮຽກຕ້ອງສົ່ງໂດຍກົງໃຫ້ຜູ້ກ່ຽວຂ້ອງເອງ ຫຼື ຜ່ານນາຍບ້ານບ່ອນຜູ້ກ່ຽວສັງກັດຢູ່ຕາມທີ່ຢູ່ ຊຶ່ງໄດ້ລະບຸໃນສຳນວນຄະດີ; ໃນກໍລະນີທີ່ຜູ້ຖືກຮຽກຫາກເປັນພະນັກງານນັ້ນ ໝາຍຮຽກອາດສົ່ງຫາອົງການຈັດຕັ້ງບ່ອນຜູ້ກ່ຽວສັງກັດນັ້ນກໍໄດ້. ການສົ່ງໂດຍກົງຕ້ອງດຳເນີນການໂດຍພະນັກງານຂອງສານ.

**ຂ. ການສົ່ງຜ່ານທາງໄປສະນີ ຫຼື ໂທລະຄົມ**

ການສົ່ງໝາຍຮຽກຜ່ານທາງໄປສະນີ ຫຼື ໂທລະຄົມກໍເປັນອີກວິທີໜຶ່ງ ຊຶ່ງເປັນການນຳເອົາໝາຍຮຽກຂອງສານໄປໃຫ້ຜູ້ຖືກຮຽກໂດຍຜ່ານທາງໄປສະນີ ຫຼື ໂທລະຄົມມະນາຄົມ.

ໃນກໍລະນີທີ່ຜູ້ກ່ຽວຂ້ອງໃນການດຳເນຄະດີຫາກຢູ່ຮ່າງໄກ ສານອາດຈະສົ່ງເອກະສານຜ່ານທາງໄປສະນີ ຫຼື ໂທລະຄົມມະນາຄົມກໍໄດ້.

ນັບແຕ່ວັນທີ່ພະນັກງານໄປສະນີ ຫຼື ໂທລະຄົມມະນາຄົມໄດ້ສົ່ງເອກະສານດັ່ງກ່າວໃຫ້ແກ່ຜູ້ທີ່ໄດ້ລະບຸຢູ່ໃນໝາຍຮຽກ ກໍຈະຖືວ່າບຸກຄົນດັ່ງກ່າວໄດ້ຮັບແລ້ວ.

**ຄ. ການສົ່ງ ແລະ ການແຈ້ງດ້ວຍການຕິດປະກາດ**

ການສົ່ງ ຫຼື ການແຈ້ງໝາຍຮຽກຂອງສານດ້ວຍການຕິດປະກາດ ກໍແມ່ນອີກວິທີໜຶ່ງຂອງການສົ່ງໝາຍຮຽກໂດຍສະເພາະໃນກໍລະນີຜູ້ຖືກຮຽກນັ້ນ ຫາກມີການຍ້າຍບ່ອນຢູ່ເລື້ອຍໆ ຊຶ່ງມີຄວາມຫຍຸ້ງຍາກຕໍ່ການສົ່ງໝາຍຮຽກຂອງສານ ຫຼື ໃນກໍລະນີທີ່ການສົ່ງໂດຍກົງ, ການສົ່ງຜ່ານທາງໄປສະນີ ຫຼື ໂທລະຄົມມະນາຄົມ ຫາກບໍ່ສາມາດດຳເນີນການໄດ້.

ການຕິດປະກາດ ແມ່ນໃຫ້ນຳເອົາໝາຍຮຽກສະບັບຕົ້ນຕິດໄວ້ ຢູ່ຫ້ອງການສານປະຊາຊົນທີ່ກ່ຽວຂ້ອງ, ຫ້ອງການປົກຄອງບ້ານ ແລະ ສະຖານທີ່ບ່ອນຜູ້ກ່ຽວອາໄສຢູ່ສຸດທ້າຍ.

ການຕິດປະກາດ ຕ້ອງປະສານສົມທົບກັບອົງການປົກຄອງບ້ານບ່ອນທີ່ຜູ້ກ່ຽວຢູ່ສຸດທ້າຍ ແລະ ເຮັດບົດບັນທຶກການຕິດປະກາດໂດຍບົ່ງບອກວັນເວລາ ແລະ ຜູ້ເຂົ້າຮ່ວມໃນການຕິດປະກາດພ້ອມລົງລາຍເຊັນຢັ້ງຢືນ.

ການຕິດປະກາດ ຈະມີຜົນບັງຄັບພາຍໃນເວລາ ສາມສິບວັນ ນັບແຕ່ວັນຕິດປະກາດເປັນຕົ້ນໄປ.

[17] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 142.

**ງ. ການສົ່ງ ແລະ ການແຈ້ງຜ່ານທາງສື່ມວນຊົນ**

ການສົ່ງ ແລະ ການແຈ້ງໝາຍຮຽກໂດຍຜ່ານທາງສື່ມວນຊົນ ແມ່ນໜຶ່ງໃນບັນດາສີ່ຮູບການຂອງການສົ່ງໝາຍຮຽກ ຊຶ່ງຈະນໍາໃຊ້ໃນກໍລະນີທີ່ຄູ່ຄວາມ ໂດຍສະເພາະຈໍາເລີຍເອົາຕົວຫຼົບໜີຈາກການດໍາເນຄະດີ ຫຼື ບໍ່ຮູ້ບ່ອນຢູ່; ສະນັ້ນ ສານອາດຈະຕົກລົງແຈ້ງຜ່ານທາງສື່ມວນຊົນກໍໄດ້.

ການແຈ້ງຜ່ານທາງສື່ມວນຊົນ ຈະມີຜົນບັງຄັບພາຍໃນເວລາສາມວັນ ນັບແຕ່ວັນທີ່ໄດ້ປະກາດຜ່ານທາງວິທະຍຸ, ໂທລະພາບ ຫຼື ໜັງສືພິມ.

**7.5. ຜົນສະທ້ອນຂອງການອອກໝາຍຮຽກ**

ການອອກໝາຍຮຽກຂອງສານ ແມ່ນມີຜົນສະທ້ອນທາງດ້ານກົດໝາຍຕໍ່ບຸກຄົນ, ຜູ້ຕາງໜ້າຂອງອົງການຈັດຕັ້ງ ຫຼື ວິສາຫະກິດທີ່ຖືກຮຽກ ເນື່ອງຈາກວ່າໝາຍຮຽກຂອງສານກໍແມ່ນຄໍາສັ່ງປະເພດໜຶ່ງທີ່ມີຜົນສັກສິດ ແລະ ມີຜົນບັງຄັບທົ່ວໄປ, ເມື່ອສານໄດ້ສົ່ງໝາຍຮຽກໃຫ້ໂຈດ ຫຼື ຈໍາເລີຍມາສານ ແຕ່ພວກກ່ຽວຫາກບໍ່ເຂົ້າມາສານຕາມໝາຍຮຽກຈະມີຜົນສະທ້ອນດັ່ງນີ້:

**7.5.1.ຜົນສະທ້ອນທີ່ເກີດຂຶ້ນກ່ອນການປະກອບສໍານວນຄະດີ**

ການທີ່ ຈໍາເລີຍບໍ່ເຂົ້າມາແກ້ຟ້ອງກ່ອນການປະກອບສໍານວນຄະດີຈະມີຜົນສະທ້ອນຄື:

- ໃນກໍລະນີຜູ້ທີ່ຖືກຮຽກຫາກໄດ້ຮັບໝາຍຮຽກແລ້ວເຖິງສາມຄັ້ງ ແລະ ຜູ້ກ່ຽວກໍບໍ່ໄດ້ມີການເຄື່ອນຍ້າຍໄປບ່ອນອື່ນແຕ່ຜູ້ກ່ຽວບໍ່ເຂົ້າມາສານຕາມໝາຍຮຽກ ໂດຍບໍ່ມີເຫດຜົນພຽງພໍສານຈະອອກຄໍາສັ່ງໃຫ້ພາຕົວຜູ້ກ່ຽວເຂົ້າມາສານແລ້ວດໍາເນີນຕາມຂັ້ນຕອນປົກກະຕິ;
- ໃນກໍລະນີຜູ້ຖືກຮຽກຫາກໄດ້ຍ້າຍໜີໄປຢູ່ບ່ອນໃໝ່ໂດຍແຈ້ງໃຫ້ອໍານາດການປົກຄອງຮັບຮູ້ນໍາ ສານກໍຈະມອບຄໍາຮ້ອງຟ້ອງຄືນໃຫ້ຜູ້ມາຍື່ນ ແລະ ແນະນໍາໃຫ້ຜູ້ກ່ຽວໄປຍື່ນຕໍ່ສານບ່ອນທີ່ຜູ້ຖືກຮ້ອງຟ້ອງຍ້າຍໄປຢູ່ບ່ອນໃໝ່ຢ່າງຖາວອນ ເພື່ອດໍາເນີນຄະດີກັບຜູ້ຖືກຮ້ອງຟ້ອງ ຕາມຂັ້ນຕອນທີ່ກົດໝາຍໄດ້ກໍານົດໄວ້;
- ໃນກໍລະນີທີ່ຜູ້ກ່ຽວໜີໄປໂດຍບໍ່ໄດ້ແຈ້ງໃຫ້ອໍານາດການປົກຄອງຊາບຫຼືເປັນການເອົາຕົວຫຼົບໜີສານກໍຈະດໍາເນີນຄະດີ ໃນກໍລະນີ ມີການຮ້ອງຂໍ ຊຶ່ງຜູ້ຖືກເສັຍຫາຍຕ້ອງໄດ້ຍື່ນຄໍາຮ້ອງຂໍເປັນລາຍລັກອັກສອນຕາມທີ່ອະທິບາຍໄວ້ໃນບົດທີ 6, ພາກທີ III ຂອງປຶ້ມຄູ່ມືນີ້.

**7.5.2. ຜົນສະທ້ອນທີ່ເກີດຂຶ້ນພາຍຫຼັງການປະກອບສໍານວນຄະດີ**

ໃນກໍລະນີໂຈດ, ຈໍາເລີຍບໍ່ເຂົ້າມາສານຕາມການໝາຍຮຽກ ຫຼື ບໍ່ມາແກ້ຟ້ອງພາຍຫຼັງການປະກອບສໍານວນຄະດີແມ່ນຈະມີຜົນສະທ້ອນດັ່ງນີ້:

**ກ. ຜົນສະທ້ອນຕໍ່ໂຈດ**

- ສານຈະອອກຄໍາສັ່ງຊັດມ້ຽນຄະດີທີ່ໂຈດຮ້ອງຟ້ອງນັ້ນ;
- ໂຈດຈະເສັຍສິດໃນການຮ້ອງຟ້ອງຄະດີດັ່ງກ່າວ.

**ຂ. ຜົນສະທ້ອນຕໍ່ຈໍາເລີຍ**

- ໃນກໍລະນີ ຈໍາເລີຍໄດ້ຮັບໝາຍຮຽກແລ້ວ ເຖິງສາມຄັ້ງ ແລະ ຜູ້ກ່ຽວກໍບໍ່ໄດ້ມີການເຄື່ອນຍ້າຍໄປບ່ອນອື່ນແຕ່ຜູ້ກ່ຽວບໍ່ເຂົ້າມາສານຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍ ສານຈະອອກຄໍາສັ່ງໃຫ້ພາຕົວຜູ້ກ່ຽວເຂົ້າມາສານ ໃນກໍລະນີທີ່ຂໍ້ມູນຫຼັກຖານບໍ່ທັນຄົບຖ້ວນພຽງພໍ ຫຼື ສານຈະດໍາເນີນການຕັດສິນລັບຫຼັງຜູ້ກ່ຽວໃນກໍລະນີມີຫຼັກຖານຄົບຖ້ວນພຽງພໍແລ້ວ;
- ໃນກໍລະນີ ຜູ້ຖືກຮຽກຫາກໄດ້ຍ້າຍໜີໄປຢູ່ບ່ອນໃໝ່ໂດຍແຈ້ງໃຫ້ອໍານາດການປົກຄອງ ຮັບຮູ້ນໍາຢ່າງຖືກຕ້ອງຕາມລະບຽບການແລ້ວສານກໍຈະໂອນສໍານວນຄະດີດັ່ງກ່າວໄປໃຫ້ສານ ບ່ອນທີ່ຈໍາເລີຍ ຍ້າຍໄປຢູ່ບ່ອນໃໝ່ນັ້ນ ເພື່ອດໍາເນີນຄະດີຕາມຂັ້ນຕອນທີ່ກົດໝາຍໄດ້ກໍານົດໄວ້;

- ໃນກໍລະນີ ທີ່ຈຳເລີຍໄດ້ໜີໄປໂດຍບໍ່ໄດ້ແຈ້ງໃຫ້ອຳນາດການປົກຄອງຊາບ ຫຼື ເປັນການເອົາຕົວຫຼົບໜີສານກໍ ຈະຕັດສິນລັບຫຼັງຜູ່ກ່ຽວຕາມລະບຽບການ ແລະ ການຕັດສິນໃນກໍລະນີນີ້ ຖືວ່າຊ້ອງໜ້າ.

ພາຍຫຼັງສານໄດ້ຕັດສິນລັບຫຼັງແລ້ວ ສານກໍຈະນຳເອົາຄຳຕັດສິນດັ່ງກ່າວໄປແຈ້ງໃຫ້ພໍ່ແມ່, ຍາດພີ່ນ້ອງໃກ້ຊິດ, ການຈັດຕັ້ງຫຼືນາຍບ້ານທີ່ກ່ຽວຂ້ອງເພື່ອຊາບ, ຈາກນັ້ນຈຶ່ງນຳເອົາຄຳຕັດສິນດັ່ງກ່າວໄປຕິດປະກາດຢູ່ບ່ອນຊຸບຕັ້ງຢູ່, ຫ້ອງການປົກຄອງບ້ານ, ອົງການທີ່ກ່ຽວຂ້ອງ ແລະ ບ່ອນຢູ່ສຸດທ້າຍຂອງຈຳເລີຍໃນກຳນົດເວລາສາມສິບວັນ[18].

### 7.6. ກໍລະນີຄູ່ຄວາມເຂົ້າມາສານຕາມໝາຍຮຽກ

ກ່ອນການຮຽກຕົວຄູ່ຄວາມເຂົ້າມາສານນັ້ນ ຜູ່ພິພາກສາທີ່ຮັບຜິດຄະດີຕ້ອງໄດ້ກຽມປະເດັນສອບຖາມຕ່າງໆ ຫຼື ສິ່ງທີ່ຈະດຳເນີນການຕໍ່ຜູ່ທີ່ຕົນໄດ້ຮຽກເຂົ້າມາພົບ.

ສະນັ້ນ ເມື່ອຄູ່ຄວາມ ຫຼື ຜູ່ຕາງໜ້າຂອງຄູ່ຄວາມຫາກເຂົ້າມາສານຕາມໝາຍຮຽກແລ້ວຜູ່ພິພາກສາທີ່ຮັບຜິດຊອບຄະດີດັ່ງກ່າວນັ້ນຕ້ອງໄດ້ກວດກາ, ເອົາຄຳໃຫ້ການ, ຟັງຄຳອະທິບາຍ, ແນະນຳ ຫຼື ເບິ່ງຫຼັກຖານຕ່າງໆໃນຄະດີຂອງຄູ່ຄວາມ.

ໃນກໍລະນີທີ່ຈຳເປັນ ເຊັ່ນ ຄຳໃຫ້ການບໍ່ກົງກັນ ກໍອາດຈະມີການສອບຖາມຊ້ອງໜ້າກັນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## 8. ລະບົບສານແລະສິດອຳນາດຂອງສານໃນການພິຈາລະນາຄະດີແພ່ງ

### 8.1. ລະບົບສານປະຊາຊົນຂອງສປປລາວ

ລະບົບການຈັດຕັ້ງຂອງສານປະຊາຊົນຂອງ ສປປ ລາວ ປະກອບມີຄື:

- ສານປະຊາຊົນສູງສຸດ;
- ສານປະຊາຊົນພາກ;
- ສານປະຊາຊົນແຂວງ, ນະຄອນ ແລະ ສານເດັກ;
- ສານປະຊາຊົນເຂດ;
- ສານທະຫານ.

### 8.2. ສິດອຳນາດຂອງສານປະຊາຊົນແຕ່ລະຂັ້ນ

#### 8.2.1. ສານປະຊາຊົນສູງສຸດ

ສານປະຊາຊົນສູງສຸດ ແມ່ນອົງການພິພາກສາສູງສຸດຂອງ ສປປ ລາວ ຊຶ່ງມີພາລະບົດບາດດຳເນີນການພິພາກສາຄະດີ, ຄຸ້ມຄອງທາງດ້ານການຈັດຕັ້ງ, ບໍລິຫານ, ກວດກາທາງດ້ານວິຊາສະເພາະ, ຊີ້ນຳການເຄື່ອນໄຫວ, ການປະຕິບັດໜ້າທີ່ຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານໃນທົ່ວປະເທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ມີທີ່ຕັ້ງຢູ່ນະຄອນຫຼວງວຽງຈັນ.

ສານປະຊາຊົນສູງສຸດ ມີສິດ ແລະ ໜ້າທີ່ໃນການດຳເນີນຄະດີ ດັ່ງນີ້:

- ພິຈາລະນາເປັນຂັ້ນລົບລ້າງທາງດ້ານກົດໝາຍຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາຂອງສານປະຊາຊົນພາກ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
- ພິຈາລະນາເປັນຂັ້ນຮື້ຟື້ນ ຄາສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຕາມຄຳສະເໜີຮື້ຟື້ນຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
- ພິຈາລະນາອອກຄຳສັ່ງ, ຄຳຊີ້ຂາດ ທີ່ພົວພັນກັບການດຳເນີນຄະດີ [19].

---

[18] ກົດໝາຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 357

[19] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 24

**8.2.2. ສານປະຊາຊົນພາກ**

ສານປະຊາຊົນພາກ ແມ່ນສານໜຶ່ງໃນລະບົບສານປະຊາຊົນຂອງ ສປປ ລາວ ຊຶ່ງມີພາລະບົດບາດດຳເນີນການພິພາກສາຄະດີເປັນຂັ້ນອຸທອນ ກ່ຽວກັບຄະດີທີ່ສານປະຊາຊົນແຂວງ, ນະຄອນ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນ; ພິພາກສາຄະດີ ເປັນຂັ້ນລົບລ້າງ ກ່ຽວກັບຄະດີທີ່ສານປະຊາຊົນແຂວງ, ນະຄອນ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນ ແລະ ໄດ້ສ້າງຕັ້ງຂຶ້ນປະຈຳຢູ່ ສາມພາກ ຄື: ພາກເໜືອຕັ້ງຢູ່ແຂວງຫຼວງພະບາງ, ພາກກາງຕັ້ງຢູ່ນະຄອນຫຼວງວຽງຈັນ ແລະ ພາກໃຕ້ຕັ້ງຢູ່ແຂວງຈຳປາສັກ.

**ສານປະຊາຊົນພາກ ມີສິດ ແລະ ໜ້າທີ່ໃນການດຳເນີນຄະດີ ດັ່ງນີ້:**

- ພິຈາລະນາເປັນຂັ້ນອຸທອນ ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນຂອງສານຂອງສານປະຊາຊົນແຂວງ, ນະຄອນ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ຫຼື ພາກ;
- ພິຈາລະນາເປັນຂັ້ນລົບລ້າງທາງດ້ານກົດໝາຍ ຄາສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາຂອງສານປະຊາຊົນແຂວງ, ນະຄອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນຂັ້ນອຸທອນຂອງແຂວງ, ນະຄອນຫຼືພາກ;
- ພິຈາລະນາອອກຄຳສັ່ງ, ຄຳຊີ້ຂາດ ທີ່ພົວພັນກັບການດຳເນີນຄະດີ;
- ສົ່ງຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາຂັ້ນອຸທອນ ທີ່ໃຊ້ໄດ້ຢ່າງເດັດຂາດ ພ້ອມດ້ວຍສຳນວນຄະດີໃຫ້ສານປະຊາຊົນແຂວງ, ນະຄອນ ເພື່ອສົ່ງໃຫ້ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
- ສົ່ງຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາຂອງສານລົບລ້າງ ໃຫ້ສານປະຊາຊົນເຂດ ເພື່ອອ່ານໃຫ້ຄູ່ຄວາມຊາບກ່ອນສົ່ງສຳນວນຄະດີ ແລະ ຄຳພິພາກສາໃຫ້ປະຕິບັດພາງ ໄປຍັງຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
- ສົ່ງຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາ ໃຫ້ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນພາກເພື່ອກວດກາ ແລະ ສົ່ງໃຫ້ອົງການທີ່ກ່ຽວຂ້ອງເພື່ອຮັບຮູ້ ແລະ ປະຕິບັດ [20].

**8.2.3. ສານປະຊາຊົນແຂວງ, ນະຄອນ**

ສານປະຊາຊົນແຂວງ, ນະຄອນ ແມ່ນສານໜຶ່ງໃນລະບົບສານປະຊາຊົນຂອງ ສປປ ລາວ ຊຶ່ງມີພາລະບົດບາດໃນການດຳເນີນການຕັດສິນຄະດີເປັນຂັ້ນຕົ້ນ ກ່ຽວກັບຄະດີທີ່ບໍ່ຂຶ້ນກັບສິດອຳນາດຂອງສານປະຊົາຊົນເຂດ ແລະ ພິພາກສາ ເປັນຂັ້ນອຸທອນ ກ່ຽວກັບຄະດີທີ່ສານປະຊົນເຂດໄດ້ຕັດສິນແລ້ວ.

ສານປະຊາຊົນແຂວງ, ນະຄອນ ມີສິດ ແລະ ໜ້າທີ່ໃນການດຳເນີນຄະດີ ດັ່ງນີ້:

- ພິຈາລະນາຕັດສິນເປັນຂັ້ນຕົ້ນ ຄະດີທີ່ມີມູນຄ່າເກີນກວ່າ 300.000.000 ກີບ ແລະ ຄະດີທີ່ບໍ່ຂຶ້ນກັບສິດອຳນາດຂອງສານປະຊາຊົນເຂດ;
- ອອກຄຳສັ່ງ, ຄຳຊີ້ຂາດ ກ່ຽວກັບການດຳເນີນຄະດີ;
- ສຶກສາອົບຮົມ, ໄກ່ເກ່ຍຄູ່ຄວາມໃນຄະດີ;
- ພິຈາລະນາພິພາກສາເປັນຂັ້ນອຸທອນ ຄຳສັ່ງ, ຄຳຊີ້ຂາດ ແລະ ຄະດີ ທີ່ສານປະຊາຊົນເຂດໄດ້ຕັດສິນແລ້ວ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊນເຂດ ຫຼື ແຂວງ, ນະຄອນ;
- ທວງເອົາສຳນວນຄະດີ ທີ່ເຫັນວ່າມີຄວາມສຳຄັນ ຫຼື ມີຄວາມຫຍຸ້ງຍາກເປັນພິເສດ ຈາກສານປະຊາຊົນເຂດມາພິຈາລະນາຕັດສິນເປັນຂັ້ນຕົ້ນດ້ວຍຕົນເອງ ຕາມການຕົກລົງຂອງຄະນະປະທານ;

[20]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 23

- ສົ່ງຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ແລະ ຄໍາພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດພ້ອມດ້ວຍສໍານວນຄະດີ ແລະ ຄໍາຕັດສິນ ຫຼື ຄໍາພິພາກສາ ໃຫ້ປະຕິບັດພາງໄປຍັງຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ;
- ສົ່ງຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ແລະ ຄໍາພິພາກສາໃຫ້ສານປະຊາຊົນຂັ້ນເທິງ, ອົງການໄອຍະການປະຊາຊົນແຂວງ, ນະຄອນ ເພື່ອກວດກາ ແລະ ສົ່ງໃຫ້ອົງການທີ່ກ່ຽວຂ້ອງເພື່ອຮັບຮູ້ ແລະ ປະຕິບັດ;
- ພິຈາລະນາຕັດສິນຮັບຮູ້ຄໍາຕົກລົງ ຫຼື ຄໍາຕັດສິນຂອງສານ ຫຼື ຂອງຄະນະກໍາມະການຕັດສິນຕ່າງປະເທດ;
- ຄະດີອື່ນທີ່ໄດ້ກໍານົດໄວ້ໃນກົດໝາຍ [21].

**8.2.4. ສານປະຊາຊົນເຂດ**

ສານປະຊາຊົນເຂດ ແມ່ນສານໜຶ່ງໃນລະບົບສານປະຊາຊົນຂອງ ສປປ ລາວ ຊຶ່ງມີພາລະບົດບາດດໍາເນີນການພິຈາລະນາຕັດສິນເປັນຂັ້ນຕົ້ນ ກ່ຽວກັບຄະດີທີ່ນອນຢູ່ໃນສິດອໍານາດຂອງຕົນ.

ສານປະຊາຊົນເຂດ ສ້າງຂຶ້ນໂດຍການໂຮມເອົາບັນດາສານປະຊາຊົນເມືອງ, ເທດສະບານໃດໜຶ່ງ ເຂົ້າກັນເປັນເຂດໜຶ່ງ ຕາມສະພາບພູມີສາດ, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຫຼື ມີຄະດີເກີດຂຶ້ນຫຼາຍ.

ສານປະຊາຊົນເຂດ ມີສິດ ແລະ ໜ້າທີ່ໃນການດໍາເນີນຄະດີ ດັ່ງນີ້:

- ສຶກສາອົບຮົມ, ໄກ່ເກ່ຍຄູ່ຄວາມໃນຄະດີເປັນຕົ້ນຕໍ;
- ພິຈາລະນາຕັດສິນຄະດີເປັນຂັ້ນຕົ້ນ ເຊັ່ນ ຄະດີແພ່ງ, ຄະດີແຮງງານທີ່ມີມູນຄ່າການຮ້ອງຟ້ອງ ແລະ ຄະດີກ່ຽວກັບສາຍຜົວເມັຍທີ່ມີຂໍ້ຂັດແຍ່ງເລື່ອງສິນສົມສ້າງ, ໜີ້ສິນບໍ່ເກີນ 300.000.000 ກີບ;
- ຄະດີທີ່ບໍ່ມີມູນຄ່າ ຍົກເວັ້ນຄະດີການຄ້າ ແລະ ຄະດີເດັກ;
- ຄະດີອື່ນທີ່ໄດ້ກໍານົດໄວ້ໃນກົດໝາຍ;
- ອອກຄໍາສັ່ງ, ຄໍາຊີ້ຂາດ ຫຼື ຄໍາຕັດສິນເປັນຂັ້ນຕົ້ນ;
- ສົ່ງສໍານວນຄະດີ ທີ່ຢູ່ໃນສິດອໍານາດຂອງຕົນໃຫ້ສານປະຊາຊົນແຂວງ, ນະຄອນ ພິຈາລະນາຕັດສິນເປັນຂັ້ນຕົ້ນ ເມື່ອເຫັນວ່າຄະດີມີຄວາມສໍາຄັນ ແລະ ຫຍຸ້ງຍາກເປັນພິເສດ ພາຍຫຼັງໄດ້ຮັບຄວາມເຫັນດີຈາກປະທານສານປະຊາຊົນດັ່ງກ່າວ;
- ສົ່ງຄໍາສັ່ງ, ຄໍາຊີ້ຂາດ ແລະ ຄໍາຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດ ພ້ອມດ້ວຍສໍານວນຄະດີ ແລະ ຄໍາຕັດສິນໃຫ້ປະຕິດບັດພາງ ໄປຍັງໜ່ວຍງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ;
- ສົ່ງຄໍາສັ່ງ, ຄໍາຊີ້ຂາດ ແລະ ຄໍາຕັດສິນ ໃຫ້ສານປະຊາຊົນຂັ້ນເທິງ, ອົງການໄອຍະການປະຊາຊົນເຂດເພື່ອກວດກາ ແລະ ສົ່ງໃຫ້ອົງການທີ່ກ່ຽວຂ້ອງ ເພື່ອຮັບຮູ້ ແລະ ປະຕິບັດ [22].

**8.2.5. ສານທະຫານ**

ສານທະຫານ ແມ່ນສານໜຶ່ງໃນລະບົບສານປະຊາຊົນຂອງ ສປປ ລາວ ຊຶ່ງມີພາລະບົດບາດດໍາເນີນການຕັດສິນຄະດີອາຍາ ກ່ຽວກັບການກະທໍາຜິດທີ່ເກີດຂຶ້ນໃນຂົງເຂດວຽກງານທະຫານ ຫຼື ໃນຂອບເຂດຕັ້ງທັບຂອງທະຫານ.

ສໍາລັບຄະດີແພ່ງ, ຄະດີການຄ້າ, ຄະດີແຮງງານ, ຄະດີຄອບຄົວ ແລະ ຄະດີເດັກນັ້ນສານທະຫານ ແມ່ນບໍ່ມີສິດອໍານາດໃນການພິຈາລະນາຕັດສິນ.

ສານທະຫານປະກອບດ້ວຍສານທະຫານຂັ້ນສູງ ແລະ ສານທະຫານພາກ. ສານທະຫານຂັ້ນສູງຕັ້ງຢູ່ນະຄອນຫຼວງວຽງຈັນບ່ອນດຽວ, ສ່ວນສານທະຫານພາກແມ່ນຕັ້ງຢູ່ສາມພາກຄື: ພາກເໜືອ,ພາກກາງ ແລະພາກໃຕ້.

---

[21] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 22

[22] ອ້າງແລ້ວ, ມາດຕາ 21

ການເຄື່ອນໄຫວວຽກງານຂອງສານທະຫານ ໄດ້ກໍານົດໄວ້ໃນນິຕິກໍາສະເພາະ ຊຶ່ງຄະນະປະຈໍາສະພາແຫ່ງຊາດເປັນຜູ້ຕົກລົງຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງໄດ້ປະສານສົມທົບກັບລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

**8.3. ສິດອໍານາດຂອງບັນດາຄະນະສານ**

**8.3.1. ສິດອໍານາດຂອງຄະນະສານແພ່ງ**

**ກ. ສິດອໍານາດຂອງຄະນະສານແພ່ງໃນການພິຈາລະນາການຮ້ອງຟ້ອງ**

ຄະນະສານແພ່ງ ມີສິດອໍານາດໃນການພິຈາລະນາຕັດສິນຄະດີກ່ຽວກັບ:

1) ຂໍ້ຂັດແຍ່ງກ່ຽວກັບກໍາມະສິດ ແລະ ມູນມໍຣະດົກ;
2) ຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທາງແພ່ງ ຍົກເວັ້ນຂໍ້ຂັດແຍ່ງທາງດ້ານການຄ້າທີ່ໄດ້ກໍານົດໄວ້ໃນກົດໝາຍ;
3) ຂໍ້ຂັດແຍ່ງກ່ຽວກັບການທວງເອົາການໃຊ້ແທນຄ່າເສັຍຫາຍ;
4) ຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທາງດ້ານບໍລິຫານ[23].

ສໍາລັບຄະດີ ທີ່ມີສາຍພົວພັນທາງດ້ານບໍລິຫານໂດຍບໍ່ມີອົງປະກອບຂອງການກະທໍາຜິດທາງອາຍາ ຊຶ່ງຄະນະສານແພ່ງຈະພິຈາລະນາຕັດສິນມີດັ່ງນີ້:

- ຄະດີກ່ຽວກັບຄວາມຜິດພາດໃນການຂຶ້ນບັນຊີຜູ້ມີສິດເລືອກຕັ້ງຊຶ່ງຄະນະກໍາມະການເລືອກຕັ້ງບໍ່ສາມາດແກ້ໄຂໄດ້;
- ຄະດີກ່ຽວກັບການກະທໍາຂອງພະນັກງານອົງການບໍລິຫານກ່ຽວກັບການປັບໃໝ, ການເກັບອາກອນລາຍໄດ້ທີ່ບໍ່ຖືກຕ້ອງ ແລະ ອື່ນໆ;
- ຄະດີກ່ຽວກັບການຮິບຊັບສິ່ງຂອງໂດຍບໍ່ຖືກຕ້ອງ;
- ຄະດີກ່ຽວກັບຄວາມຜິດພາດອື່ນໆໃນຂົງເຂດບໍລິຫານ[24].

**ຂ. ສິດອໍານາດຂອງຄະນະສານແພ່ງໃນການພິຈາລະນາການຮ້ອງຂໍ**

ຄະນະສານແພ່ງ ມີສິດອໍານາດພິຈາລະນາຕັດສິນກ່ຽວກັບ:

1) ການຮ້ອງຂໍໃຫ້ສານພິຈາລະນາແຕ່ງຕັ້ງເປັນຜູ້ຄຸ້ມຄອງຊັບ ຫຼື ມູນມໍຣະດົກ;
2) ການຮ້ອງຂໍໃຫ້ສານພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍ;
3) ການຮ້ອງຂໍໃຫ້ຮິບຊັບ ເຊັ່ນ ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ, ການເກັບຊັບສິ່ງຂອງທີ່ຕົກເຮ່ຍ, ການພົບພໍ້ວັດຖຸທີ່ມີຄ່າ ຫຼື ວັດຖຸບູຮານ;
4) ການຮ້ອງຂໍໃຫ້ສານພິຈາລະນາຮັບຮູ້ຄໍາຕັດສິນຂອງສານ ຫຼື ຂອງຄະນະກໍາມະການຕັດສິນຕ່າງປະເທດກ່ຽວກັບຄະດີແພ່ງ;
5) ການຮ້ອງຂໍອື່ນກ່ຽວກັບຄະດີແພ່ງ[25].

**8.3.2. ສິດອໍານາດຂອງຄະນະສານແຮງງານ**

ສໍາລັບຄະດີກ່ຽວກັບແຮງງານ ຊຶ່ງສານຈະນໍາມາພິຈາລະນາຕັດສິນໄດ້ ກໍຕໍ່ເມື່ອອົງການຄຸ້ມຄອງແຮງງານ ຫຼື ຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງກ່ຽວກັບແຮງງານ ຫາກບໍ່ສາມາດແກ້ໄຂໄດ້ ຊຶ່ງປະກອບມີດັ່ງນີ້:

1) ຂໍ້ຂັດແຍ່ງກ່ຽວກັບສັນຍາແຮງງານ;

---

[23] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 31

[24] ອ້າງແລ້ວ, ມາດຕາ 32

[25] ອ້າງແລ້ວ, ມາດຕາ 33.

2) ຂໍ້ຂັດແຍ່ງກ່ຽວກັບເງິນອຸດໜູນ ເນື່ອງມາຈາກການຍົກເລີກສັນຍາແຮງງານໂດຍບໍ່ຖືກຕ້ອງ;
3) ຂໍ້ຂັດແຍ່ງກ່ຽວກັບການຮ້ອງຂໍຄ່າເສັຍຫາຍຈາກອຸປະຕິເຫດແຮງງານຫຼືພະຍາດອາຊີບ;
4) ຂໍ້ຂັດແຍ່ງກ່ຽວກັບເງິນເດືອນ ຫຼື ຄ່າແຮງງານຂອງຜູ້ອອກແຮງງານ;
5) ຂໍ້ຂັດແຍ່ງອື່ນໆກ່ຽວກັບຄ່າແຮງງານ[26].

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານແຮງງານໂດຍສະເພາະຂໍ້ຂັດແຍ່ງທີ່ກ່ຽວກັບລະບຽບ ຫຼື ກ່ຽວກັບຜົນປະໂຫຍດລະຫວ່າງຜູ້ອອກແຮງງານດ້ວຍກັນ ຕ້ອງພິຈາລະນາແກ້ໄຂໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍແຮງງານ, ກົດໝາຍວ່າດ້ວຍກຳມະບານ, ກົດລະບຽບພາຍໃນຂອງຫົວໜ່ວຍແຮງງານແລະລະບຽບການອອກແຮງງານ; ແຕ່ສິ່ງທີ່ສຳຄັນໃນການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວຕ້ອງມີການເຂົ້າຮ່ວມຂອງທັງສອງຝ່າຍ ຫຼື ຜູ້ຕາງໜ້າ.

ໃນກໍລະນີຫາກທັງສອງຝ່າຍສາມາດຕົກລົງກັນໄດ້ທັງໝົດຫຼືບາງສ່ວນນັ້ນຕ້ອງໃຫ້ເຮັດບົດບັນທຶກໃນການຕົກລົງຢ່າງລະອຽດໂດຍຊ້ອງໜ້າ ແລະ ເຊັນຢັ້ງຢືນຮັບຮູ້ຈາກພະຍານແຕ່ລະຝ່າຍແລ້ວສົ່ງບົດບັນທຶກດັ່ງກ່າວໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງຂັ້ນຂອງຕົນພາຍໃນກຳນົດເວລາຫ້າວັນນັບຕັ້ງແຕ່ວັນໄດ້ເຊັນບົດບັນທຶກດັ່ງກ່າວເປັນຕົ້ນໄປເພື່ອຈັດຕັ້ງປະຕິບັດ.

ໃນກໍລະນີຖ້າຝ່າຍໃດຝ່າຍໜຶ່ງຫາກບໍ່ປະຕິບັດຕາມບົດບັນທຶກດັ່ງກ່າວນັ້ນກໍມີສິດຮ້ອງຂໍໃຫ້ອົງການຄຸ້ມຄອງແຮງງານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານເພື່ອພິຈາລະນາແກ້ໄຂ.

ໃນກໍລະນີຖ້າອົງການຄຸ້ມຄອງແຮງງານຫາກບໍ່ສາມາດແກ້ໄຂຂໍ້ຂັດແຍ່ງດັ່ງກ່າວໄດ້ຫຼືສາມາດແກ້ໄຂໄດ້ບາງສ່ວນພາຍໃນກຳນົດເວລາສິບຫ້າວັນແລ້ວ ຄູ່ກໍລະນີທີ່ບໍ່ພໍໃຈກໍມີສິດຍື່ນຄຳຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນ.

### 8.3.3. ສິດອຳນາດຂອງຄະນະສານການຄ້າ

**ກ. ສິດອຳນາດຂອງຄະນະສານການຄ້າໃນການພິຈາລະນາການຮ້ອງຟ້ອງ**

ຄະນະສານການຄ້າ ມີສິດອຳນາດພິຈາລະນາຕັດສິນຄະດີກ່ຽວກັບ:

1) ສັນຍາຮຸ້ນສ່ວນ;
2) ສັນຍາທາງດ້ານທຸລະກິດ, ການຄ້າຫຼື ເອກະສານການຄ້າ ເຊັ່ນ ໃບສັນຍາໃຊ້ໜີ້, ພັນທະບັດແລກເງິນ, ເຊັກ;
3) ສັນຍາກູ້ຢືມທາງການຄ້າຕົວຢ່າງ: ບຸກຄົນກູ້ຍືມເງິນກັບທະນາຄານ ແລະ ສະຖາບັນການເງິນທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມກົດໝາຍ;
4) ການລົ້ມລະລາຍຂອງວິສາຫະກິດ ແລະ ການຊຳລະສະສາງ;
5) ການສົ່ງອອກ ຫຼື ນຳເຂົ້າສິນຄ້າ, ການປະກັນໄພ;
6) ຂໍ້ຂັດແຍ່ງ ແລະ ຄຳຮ້ອງຟ້ອງກ່ຽວກາບການລະເມີດຊັບສິນທາງປັນຍາ ເປັນຕົ້ນລິຂະສິດ, ເຄື່ອງໝາຍການຄ້າ, ສິດທິບັດ ແລະ ການກະທຳອື່ນທີ່ພາໃຫ້ເກີດການແຂ່ງຂັນທີ່ບໍ່ເປັນທຳຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ[27].

**ຂ. ສິດອຳນາດຂອງຄະນະສານການຄ້າໃນການພິຈາລະນາການຮ້ອງຂໍ**

ຄະນະສານການຄ້າ ມີສິດອຳນາດໃນການພິຈາລະນາຕັດສິນ ກ່ຽວກັບ:

1) ການຮ້ອງຂໍໃຫ້ຢັ້ງຢືນ ຫຼື ບັງຄັບປະຕິບັດຄຳຕົກລົງ ຫຼື ຄຳຕັດສິນຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

---

[26]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 34

[27]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 37

2) ການຮ້ອງຂໍໃຫ້ຢັ້ງຢືນ ຫຼື ບັງຄັບປະຕິບັດຄຳຕົກລົງ ຫຼື ຄຳຕັດສິນຂອງສານ ຫຼື ຂອງຄະນະກຳມະການຕັດສິນຕ່າງປະເທດ, ຄຳຕັດສິນຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3) ການຮ້ອງຂໍໃຫ້ອອກຄຳສັ່ງຢຶດ, ອາຍັດຊັບ ຫຼື ການນຳໃຊ້ມາດຕະການອື່ນຂອງຄະນະກຳມະການຕັດສິນຂອງສູນ, ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຫຼື ສະເພາະກິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ກົດໝາຍວ່າດ້ວຍຊັບສິນທາງປັນຍາ;
4) ການຮ້ອງຂໍໃຫ້ນຳໃຊ້ມາດຕະການຕໍ່ນິຕິບຸກຄົນທີ່ຖືກຍຸບເລີກ ຫຼື ລົ້ມລະລາຍ;
5) ການຮ້ອງຂໍກ່ຽວກັບການປົກປ້ອງສິດທາງດ້ານຊັບສິນທາງປັນຍາ;
6) ການຮ້ອງຂໍອື່ນກ່ຽວກັບຄະດີການຄ້າ.

ການປົກປ້ອງສິດທາງດ້ານຊັບສິນທາງປັນຍາໄດ້ກຳນົດໄວ້ໃນລະບຽບການສະເພາະ[28].

**8.3.4. ສິດອຳນາດຂອງຄະນະສານຄອບຄົວ**

**ກ. ສິດອຳນາດຂອງຄະນະສານຄອບຄົວໃນການຮ້ອງຟ້ອງ**

ຄະນະສານຄອບຄົວ ມີສິດອຳນາດພິຈາລະນາຕັດສິນຄະດີ ກ່ຽວກັບ:

1) ສາຍຜົວເມຍ ເຊັ່ນ ການຢ່າຮ້າງ, ການແບ່ງປັນສິນສົມສ້າງ, ໜີ້ສິນຂອງຄູ່ຜົວເມຍ;
2) ການຮ້ອງຟ້ອງທວງເອົາຄ່າລ້ຽງດູລູກ;
3) ການຮ້ອງຟ້ອງທວງເອົາຄ່າລ້ຽງດູຜົວຫຼື ເມຍ, ພໍ່ແມ່ ແລະ ລູກທີ່ພົ້ນກະສຽນອາຍຸ ແຕ່ຂາດຄວາມສາມາດໃນການອອກແຮງງານຫຼື ເປັນບ້າເສຍຈິດ;
4) ສາຍພົວພັນຄອບຄົວ ເປັນຕົ້ນການຮັບຮູ້ການເປັນສາຍຍາດ;
5) ການຮ້ອງຟ້ອງເອົາລູກມາຢູ່ໃນການຄຸ້ມຄອງ;
6) ການປົດສິດໃນການເປັນພໍ່, ແມ່ ແລະ ລູກ;
7) ການເປັນລູກລ້ຽງ;
8) ການຮັບຮູ້ເດັກເປັນລູກ ຫຼື ການນຮັບຮູ້ການເປັນພໍ່;
9) ຜົນປະໂຫຍດຂອງເດັກ ເຊັ່ນ ການໃສ່ຊື່, ນາມສະກຸນ ແລະ ສັນຊາດຂອງເດັກ;
10) ຄວາມເສັຍຫາຍ ທີ່ເນື່ອງມາຈາກການບໍ່ປະຕິບັດຕາມການໝັ້ນໝາຍ, ການສູ່ຂໍ, ການຮ່ວມປະເວກ່ອນການເປັນຜົວເມັຍ ແລະອື່ນໆ[29].

**ຂ. ສິດອຳນາດຂອງຄະນະສານຄອບຄົວໃນການພິຈາລະນາການຮ້ອງຂໍ**

ຄະນະສານຄອບຄົວ ມີສິດອຳນາດພິຈາລະນາຕັດສິນ ກ່ຽວກັບ:

1) ການຮ້ອງຂໍ ໃຫ້ລົບລ້າງການແຕ່ງດອງເປັນໂມຄະ ຫຼື ຍົກເລີກການແຕ່ງດອງທີ່ບໍ່ສອດຄ່ອງກັບກົດໝາຍ;
2) ການຮ້ອງຂໍໃຫ້ສານຮັບຮູ້ການຢ່າຮ້າງດ້ວຍຄວາມສະໝັກໃຈ;
3) ການຮ້ອງຂໍໃຫ້ຮັບຮູ້ການແບ່ງປັນສິນສົມສ້າງພາຍຫຼັງການຢ່າຮ້າງດ້ວຍຄວາມສະໝັກໃຈ;
4) ການຮ້ອງຂໍໃຫ້ສານພິຈາລະນາການປ່ຽນແປງສິດໃນການຄຸ້ມຄອງລູກພາຍຫຼັງການຢ່າຮ້າງ;

---

[28] ອ້າງແລ້ວ, ມາດຕາ 38

[29] ອ້າງແລ້ວ, ມາດຕາ 38

5) ການຮ້ອງຂໍໃຫ້ສານອອກມາດຕະການຈຳກັດສິດຂອງພໍ່ ຫຼື ຂອງແມ່ຕໍ່ເດັກ;
6) ການຮ້ອງຂໍໃຫ້ສານອອກມາດຕະການຕໍ່ພໍ່ ຫຼື ແມ່ໃນການເບິ່ງແຍງລ້ຽງດູເດັກ ພາຍຫຼັງການຢ່າຮ້າງ;
7) ການຮ້ອງຂໍບັນຫາອື່ນກ່ຽວກັບຄະດີຄອບຄົວ[30].

**8.3.5. ສິດອຳນາດຂອງຄະນະສານເດັກ**

**ກ. ສິດອຳນາດຂອງຄະນະສານເດັກໃນການພິຈາລະນາການຮ້ອງຟ້ອງ**

ຄະນະສານເດັກ ມີສິດອຳນາດຕັດສິນຄະດີ ກ່ຽວກັບ:

1) ການໃຊ້ແທນຄ່າເສັຍຫາຍ ເນື່ອງມາຈາກການກະທຳຂອງເດັກທີ່ມີອາຍຸຕໍ່າກວ່າສິບແປດປີ;
2) ແຮງງານເດັກ;
3) ການກະທຳລະຫວ່າງເດັກດ້ວຍກັນ;
4) ການລະເມີດສິດທິຂອງເດັກ.

ໃນໄລຍະເວລາຂອງການດຳເນີນຄະດີເດັກ ເຖິງວ່າເດັກນັ້ນຈະມີຄວາມສາມາດທາງດ້ານການປະພຶດຫຼືມີອາຍຸຄົບສິບແປດປີແລ້ວກໍຕາມກໍໃຫ້ຄະນະສານດັ່ງກ່າວສືບຕໍ່ພິຈາລະນາຈົນກວ່າຄະດີຈະສຳເລັດ; ຖ້າຫາກມີການຂໍອຸທອນ ແລະ ຂໍລົບລ້າງ ກໍໃຫ້ຄະນະສານເດັກຂອງສານຂັ້ນເທິງມີສິດອຳນາດພິຈາລະນາຕໍ່ໄປ[31].

**ຂ. ສິດອຳນາດຂອງຄະນະສານເດັກໃນການພິຈາລະນາການຮ້ອງຂໍ**

ຄະນະສານເດັກ ມີສິດອຳນາດພິຈາລະນາ ກ່ຽວກັບ:

1) ການຮ້ອງຂໍໃຫ້ພິຈາລະນາໃຫ້ແຕ່ງຕັ້ງຜູ້ປົກຄອງເດັກ;
2) ການຮ້ອງຂໍໃຫ້ພິຈາລະນາອອກມາດຕະການຄຸ້ມຄອງ, ສຶກສາອົບຮົມເດັກ;
3) ການຮ້ອງຂໍໃຫ້ນຳໃຊ້ມາດຕະການຕໍ່ເດັກທີ່ກະທຳຜິດ;
4) ການຮ້ອງຂໍໃຫ້ແຕ່ງຕັ້ງຜູ້ຄຸ້ມຄອງຊັບສົມບັດຂອງເດັກ;
5) ການຮ້ອງຂໍໃຫ້ນຳໃຊ້ມາດຕະການເພື່ອປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ;
6) ການຮ້ອງຂໍອື່ນກ່ຽວກັບຄະດີເດັກ[32].

**8.4. ສິດອຳນາດທາງດ້ານພື້ນທີ່**

ສິດອຳນາດທາງດ້ານພື້ນທີ່ຂອງສານໝາຍເຖິງສິດອຳນາດຂອງສານໃນການນຳເອົາຄະດີມາພິຈາລະນາຕັດສິນໂດຍກຳນົດເອົາບ່ອນເຫດການຫຼືຂໍ້ຂັດແຍ່ງໄດ້ເກີດຂຶ້ນ; ຫຼື ບ່ອນຊັບທີ່ເປັນພື້ນຖານຕັ້ງຢູ່; ຫຼື ບ່ອນຈຳເລີຍຢູ່ຫຼືອາໄສຢູ່ໂດຍອີງຕາມແຕ່ລະກໍລະນີດັ່ງຕໍ່ໄປນີ້:

**ກໍລະນີທີໜຶ່ງ:** ສານທີ່ຈະນຳເອົາຄະດີໃດໜຶ່ງມາພິຈາລະນາຕັດສິນນັ້ນຕ້ອງແມ່ນສານບ່ອນທີ່ຈຳເລີຍຢູ່ ຫຼືອາໄສຢູ່ນັ້ນ ເປັນສານທີ່ມີສິດອຳນາດໃນການຕັດສິນຄະດີ;

**ກໍລະນີທີສອງ:**ສານປະຊາຊົນທີ່ຈະນຳເອົາຄະດີໃດໜຶ່ງມາພິຈາລະນາຕັດສິນໄດ້ຕ້ອງແມ່ນສານບ່ອນທີ່ເຫດການຫຼືຂໍ້ຂັດແຍ່ງໄດ້ເກີດຂຶ້ນນັ້ນ ເປັນສານທີ່ມີສິດອຳນາດຕັດສິນ;

**ກໍລະນີທີສາມ:** ສານປະຊາຊົນທີ່ຈະນຳເອົາຄະດີໃດໜຶ່ງມາພິຈາລະນາຕັດສິນຕ້ອງແມ່ນສານບ່ອນທີ່ຊັບທີ່ເປັນພື້ນຖານຂອງຈຳເລີຍຕັ້ງຢູ່ນັ້ນ ເປັນສານທີ່ມີສິດອຳນາດຕັດສິນ.

---

[30]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 45

[31]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 51

[32]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 52

# ບົດທີ 2
# ມາດຕະການຂອງສານ

## 1. ຄວາມໝາຍມາດຕະການຂອງສານ

ມາດຕະການຂອງສານ ແມ່ນຄໍາຕົກລົງຂອງສານກ່ຽວກັບຮູບຄະດີ ເພື່ອປົກປ້ອງສິດຜົນປະໂຫຍດຂອງຄູ່ຄວາມ ກ່ອນການລົງຄໍາຕັດສິນຂອງສານ ຮັບປະກັນການດໍາເນີນຄະດີໃຫ້ມີຄວາມຄົບຖ້ວນ, ຮອບດ້ານ ແລະ ພາວະວິໄວ ພ້ອມທັງຮັບປະກັນໃຫ້ຄໍາຕັດສິນຂອງສານໄດ້ຖືກຈັດຕັ້ງປະຕິບັດໃຫ້ມີຜົນສໍາເລັດ.

ສັງລວມແລ້ວ ໃນການອອກມາດຕະການຈຶ່ງມີຄວາມຈໍາເປັນໃນຂັ້ນຕອນຂອງການດໍາເນີນຄະດີ ເພື່ອຮັບປະກັນການເຄື່ອນໄຫວຂອງສານ ໃນການເກັບກໍາຂໍ້ມູນຫຼັກຖານໃຫ້ມີຄວາມຊັດເຈນ, ຄົບຖ້ວນພຽງພໍ ຊຶ່ງເປັນພື້ນຖານໃຫ້ແກ່ການຕັດສິນພິຈາລະນາຄະດີ ຂອງຜູ້ພິພາກສາໃຫ້ມີຄວາມສະດວກ ແລະ ດໍາເນີນໄປຕາມຂັ້ນຕອນຂອງກົດໝາຍຖືກຕ້ອງເປັນທໍາສອດຄ່ອງຕາມສະພາບການຕົວຈິງ ສານຈຶ່ງອາດອອກຄໍາຕົກລົງໃດໜຶ່ງທີ່ເປັນຄໍາສັ່ງພາຕົວ, ຄໍາສັ່ງຍຶດ ຫຼື ອາຍັດຊັບ, ການຍົກຍ້າຍ, ປັບໃໝ ຫຼືຄໍາສັ່ງອື່ນ ຈຸດປະສົງກໍເພື່ອເຮັດໃຫ້ຄໍາຕັດສິນຂອງສານໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

## 2. ຄວາມສໍາຄັນຂອງມາດຕະການຂອງສານ

ມາດຕະການຂອງສານ ແມ່ນມີຄວາມສໍາຄັນໃນການດໍາເນີນຄະດີຢູ່ສານ ເພື່ອຄຸ້ມຄອງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຄູ່ຄວາມ ໂດຍສະເພາະ ແມ່ນຊັບສິນທີ່ຢູ່ໃນການຂັດແຍ່ງບໍ່ໃຫ້ມີການເຄື່ອນໄຫວ ຫຼື ກະທໍາສິ່ງໃດໜຶ່ງຕໍ່ຊັບສິ່ງຂອງທີ່ຂັດແຍ່ງໃຫ້ມີການປ່ຽນແປງ, ຫາຍສາບສູນ ຫຼື ປ່ຽນເຈົ້າກໍາມະສິດ ຊຶ່ງຈະເປັນສາເຫດໃນການເກີດຄວາມຫຍຸ້ງຍາກໃນການຊອກຫາ ແລະ ເກັບກໍາຂໍ້ມູນຫຼັກຖານທີ່ຈໍາເປັນແກ່ຮູບຄະດີການອອກມາດຕະການ ຈຶ່ງເປັນທາງເລືອກໜຶ່ງໃຫ້ຜູ້ພິພາກສາສາມາດດໍາເນຄະດີໃຫ້ດໍາເນີນໄປໄດ້ງ່າຍດ່າຍ ແລະ ຮັບປະກັນການໃຊ້ແທນໜີ້ສິນຕາມຄໍາຕັດສິນຂອງສານ.

ສະນັ້ນ, ການອອກມາດຕະການຕ່າງໆ ຈຶ່ງເປັນພື້ນຖານໃຫ້ແກ່ຜູ້ພິພາກສາ ສາມາດກໍານົດຫຼັກການໃນການດໍາເນີນຄະດີ, ປະກອບຫຼັກຖານ ແລະ ພິຈາລະນາຕັດສິນຄະດີມີຄວາມຊັດເຈນ, ຮູ້ເຖິງເປົ້າໝາຍການຂັດແຍ່ງ ຫຼື ຊັບທີ່ເປັນສິ່ງຄໍ້າປະກັນ, ເພື່ອເປັນການສະກັດກັ້ນຜູ້ລະເມີດບໍ່ໃຫ້ເຄື່ອນໄຫວໂດຍບໍ່ຖືກຕ້ອງຕາມກົດໝາຍ. ສານອາດຈະອອກຄໍາສັ່ງຍຶດ ຫຼື ອາຍັດຊັບຂອງໂຈດ ຫຼື ຈໍາເລີຍໃນເວລາດໍາເນີນຄະດີກໍໄດ້ ຖ້າຫາກວ່າມີຄໍາຮ້ອງຂໍຂອງຝ່າຍໃດຝ່າຍໜຶ່ງ ຫຼື ຕາມສິດອໍານາດຂອງສານເອງ.

## 3. ປະເພດມາດຕະການຂອງສານ

ມາດຕະການຂອງສານໄດ້ແບ່ງເປັນສອງປະເພດຄື: ມາດຕະການຮັບປະກັນການຮ້ອງຟ້ອງ ແລະ ມາດຕະການຮີບດ່ວນຊົ່ວຄາວ.

### 3.1. ມາດຕະການຮັບປະກັນການຮ້ອງຟ້ອງ

ມາດຕະການຮັບປະການຮ້ອງຟ້ອງ ແມ່ນມາດຕະການປະເພດໜຶ່ງ ຊຶ່ງຮັບປະກັນການໃຊ້ແທນໜີ້ສິນຕາມຄໍາຮ້ອງຟ້ອງຕາມການຮ້ອງຂໍຂອງຄູ່ຄວາມເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນທີ່ຖືກລະເມີດ ຫຼື ໂຕ້ແຍ່ງຈາກໂຈດ

ຊ່ວຍຊຸກຍູ້ການພິຈາລະນາຂອງສານປະຊາຊົນໃຫ້ມີຄວາມໜັກແໜ້ນ ແລະ ຊັດເຈນ ແລະ ຮັດກຸມສານປະຊາຊົນອາດຈະພິຈາລະນາວາງມາດຕະການໃດໜຶ່ງດັ່ງລຸ່ມນີ້:[33].

1. ການຍຶດຊັບຂອງຄູ່ຄວາມ;
2. ການອາຍັດຊັບຂອງຄູ່ຄວາມທີ່ຢູ່ນຳຜູ້ກ່ຽວຫຼືຢູ່ນຳຜູ້ອື່ນແຕ່ບໍ່ໃຫ້ເກີນມູນຄ່າໜີ້ສິນ ແລະ ດອກເບ້ຍ;
3. ການບໍ່ອະນຸຍາດໃຫ້ຄູ່ຄວາມເຄື່ອນໄຫວ ຫຼື ກະທຳສິ່ງໃດໜຶ່ງທີ່ກ່ຽວຂ້ອງກັບຄະດີ;
4. ການບໍ່ອະນຸຍາດໃຫ້ຄູ່ຄວາມປະຕິບັດຂໍ້ຜູກພັນໃດໜຶ່ງ ທີ່ພົວພັນກັບຄະດີກັບຜູ້ອື່ນ;
5. ການຈຳກັດບໍລິເວນ;
6. ການພາຕົວ.

### 3.1.1. ການຍຶດຊັບ

ການຍຶດຊັບ ແມ່ນການເອົາຊັບເຄື່ອນທີ່ຂອງຄູ່ຄວາມ ຊຶ່ງພົວພັນກັບຄະດີມາໄວ້ເປັນຂອງກາງຕາມຄຳສັ່ງຂອງສານເພື່ອຮັບປະກັນໃນການດຳເນີນຄະດີ ແລະ ການໃຊ້ແທນຄ່າເສັຍຫາຍໃຫ້ແກ່ຄູ່ຄວາມ, ຊັບສິ່ງຂອງທີ່ຖືກຍຶດນັ້ນອາດນຳມາໄວ້ກັບ ເຈົ້າໜ້າທີ່ ຫຼື ສານ, ການຍຶດຊັບສ່ວນໃຫຍ່ແມ່ນຊັບທີ່ເຄື່ອນຍ້າຍໄດ້ ເຊັ່ນ ລົດ, ເຄື່ອງຈັກແລະ ອື່ນໆ ສາຍເຫດສ່ວນຫຼາຍ ຈຳເລີຍ ມັກຈະນຳຊັບສິ່ງຂອງ ຂອງຕົນໄປຂາຍ, ມອບໃຫ້ຜູ້ອື່ນ, ຊຸກເຊື່ອງ, ນຳໃຊ້ເປັນຫຼັກຊັບຄ້ຳປະກັນ ຫຼື ທຳລາຍຖິ້ມ ເພື່ອເປັນການຫຼົບຫຼີກການໃຊ້ແທນໜີ້ສິນແກ່ໂຈດ.

ສະນັ້ນ, ເພື່ອປົກປ້ອງການກະທຳດັ່ງກ່າວ ສານຈຶ່ງຈຳເປັນຕອ້ງອອກມາດຕະການ ບົນພື້ນຖານການຮ້ອງຂໍຂອງຄູ່ຄວາມເປັນລາຍລັກອັກສອນ ມາຫາສານ ຫຼື ການອອກໂດຍສານເອງ ຊຶ່ງສານຕ້ອງຮູ້ແຈ້ງກ່ຽວກັບ ຫຼັກຖານ (ຊັບທີ່ກ່ຽວຂ້ອງກັບຄະດີຢ່າງຊັດເຈນ) ແລະ ການຂັດແຍ່ງນັ້ນໄດ້ສົ່ງຜົນສະທ້ອນຕໍ່ຜົນປະໂຫຍດຂອງລັດ.

ໃນການຮ້ອງຂໍຂອງຄູ່ຄວາມຝ່າຍໜຶ່ງເປັນຜູ້ຮ້ອງຄຳຮ້ອງຂໍມາຫາສານ ຫຼື ຕາມຄຳເຫັນຂອງສານ ຫຼື ໂດຍໜ້າທີ່ຂອງສານເອງ ສານຕ້ອງເຮັດໃຫ້ຖືກເປົ້າໝາຍ, ຕ້ອງຮູ້ແຈ້ງກ່ຽວກັບປະເພດ, ຈຳນວນ, ບັນຊີຊັບ ຫຼື ສະຖານທີ່ເກັບມ້ຽນວັດຖຸສິ່ງຂອງ, ສິນຄ້າ ຫຼື ປະເພດສັງຫາລິມະຊັບອື່ນທີ່ພົວພັນກັບຄະດີ, ຖ້າຫາກແມ່ນຜົນປະໂຫຍດຂອງລັດແລ້ວ ສານຈະອອກຄຳສັ່ງຍຶດຊັບດັ່ງກ່າວມາຮັກສາໄວ້ໃນສະຖານທີ່ເໝາະສົມ[34].

ການນຳໃຊ້ມາດຕະການຍຶດຊັບ ແມ່ນຮັບປະກັນໃຫ້ການຈັດຕັ້ງປະຕິບັດຄາຕັດສິນຂອງສານມີປະສິດທິຜົນ ແລະ ສາມາດຮັບປະກັນການໃຊ້ແທນໜີ້ສິນໃຫ້ແກ່ເຈົ້າໜີ້ໄດ້ ສານມີສິດອອກຄຳສັ່ງຍຶດຊັບຕາມການຮ້ອງຂໍຂອງຄູ່ຄວາມ ຫຼື ຕາມຄຳເຫັນຂອງສານໂດຍໜ້າທີ່ຂອງສານເອງ ແຕ່ສານຄວນພິຈາລະນາເບິ່ງວ່າຊັບສິ່ງຂອງທີ່ຍຶດ ຫຼື ອາຍັດນັ້ນແມ່ນກຳມະສິດຂອງຈຳເລີຍ ຫຼື ບໍ່? ມູນຄ່າເທົ່າໃດ? ມີຄວາມຈຳເປັນ ແລະເປັນຜົນປະໂຫຍດໃຫ້ແກ່ການພິຈາລະນາຄະດີ ຫຼື ບໍ່ ? ບ່ອນເກັບມ້ຽນຊັບທີ່ຍຶດເໝາະສົມ ຫຼືບໍ່? ໃນກໍລະນີ ທີ່ຊັບສິ່ງຂອງທີ່ຖືກຍຶດມານັ້ນຫາກມີຄວາມຈຳເປັນຕ້ອງມີການຄຸ້ມຄອງ ຫຼື ແກ້ໄຂຢ່າງຮີບດ່ວນເນື່ອງຈາກວ່າຊັບສິ່ງຂອງດັ່ງກ່າວຈະປ່ຽນຮູບ ຫຼື ເສັຍຄຸນນະພາບ, ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຂອງສານຕ້ອງຄຸ້ມຄອງ, ປົກປັກຮັກສາ ຫຼື ຂາຍເອົາເງິນມາຮັກສາໄວ້ກ່ອນ.

ຕົວຢ່າງ: ກໍລະນີທີ່ສານໄດ້ອອກຄຳສັ່ງຍຶດຊັບໃນເວລາລົງຄຳຕັດສິນ ຕ້ອງບອກວ່າໃຫ້ຈຳເລີຍໃຊ້ແທນ (ໜີ້ສິນ ຫຼື ຄ່າເສັຍຫາຍ.....) ຈຳນວນ.....ແກ່ໂຈດ ຖ້າຫາກຈຳເລີຍບໍ່ສາມາດໃຊ້ແທນເງິນຈຳນວນດັ່ງກ່າວ ຈຶ່ງໃຫ້ນຳເອົາຊັບທີ່ຍຶດນັ້ນໄປຂາຍເພື່ອໃຊ້ແທນໜີ້ສິນ, ຖ້າມູນຄ່ານັ້ນຫາກເຫຼືອກໍໃຫ້ສົ່ງຄືນແກ່ຈຳເລີຍ ຖ້າຫາກບໍ່ພໍກໍໃຫ້ຈຳເລີຍຊອກຫາມາໃຊ້ແທນຈົນຄົບຕາມຈຳນວນ.

ຜົນສະທ້ອນຂອງການອອກຄຳສັ່ງຍຶດຊັບ ແມ່ນມີຜົນກະທົບໂດຍກົງຕໍ່ຄູ່ຄວາມ ກໍຄືຊັບສິ່ງຂອງທີ່ຖືກຍຶດນັ້ນຊຶ່ງຊັບສິ່ງຂອງທີ່ຖືກຍຶດຈະບໍ່ສາມາດມີການເຄື່ອນໄຫວ ຫຼື ປ່ຽນແປງ ຫຼື ຈະຕົກເປັນຂອງບຸກຄົນອື່ນຕາມການຕົກລົງ

---

[33]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 121

[34]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 122

ຂອງສານ. ດັ່ງນັ້ນ ຖ້າຫາກການອອກຄຳສັ່ງຍຶດຊັບມີຄວາມຖືກຕ້ອງແນ່ນອນ ກໍຈະເຮັດໃຫ້ບົດບາດຂອງສານສູງຂຶ້ນ, ມີຄວາມເຊື່ອຖືຈາກຄູ່ຄວາມ,ບໍ່ມີການລະແວງສົງໄສ ຊຶ່ງເຮັດໃຫ້ທັງຝ່າຍທີ່ຊະນະ ແລະ ຝ່າຍທີ່ເສັຍຄະດີຍອມຮັບໃນສິ່ງທີ່ສານ ໄດ້ອອກມາດຕະການຍຶດຊັບ.

### 3.1.2. ການອາຍັດຊັບ

ການອາຍັດຊັບ ແມ່ນການອອກຄຳສັ່ງໂດຍສານເພື່ອບໍ່ອະນຸຍາດໃຫ້ຊື້ຂາຍ, ມອບ, ໂອນ, ແລກປ່ຽນ, ຊວດຈຳ, ຄ້ຳປະກັນ, ຕໍ່ເຕີມ, ສ້ອມແປງ, ທຳລາຍ ຫຼືປ່ຽນແປງຊັບສິນບັດທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງໃນໄລຍະດຳເນີນຄະດີ, ສ່ວນໃນກໍລະນີແລ້ວແມ່ນຊັບທີ່ເຄື່ອນຍ້າຍບໍ່ໄດ້ ເຊັ່ນ ທີ່ດິນ, ເຮືອນ ຫຼື ສິ່ງກໍ່ສ້າງ. ສະນັ້ນການອາຍັດ ແມ່ນການບໍ່ໃຫ້ຈຳເລີຍນຳຊັບໃດໜຶ່ງ ຊຶ່ງອາດແມ່ນສັງຫາລິມະຊັບ(ຊັບເຄື່ອນທີ່) ຫຼືອະສັງຫາລິມະຊັບ (ຊັບຄົງທີ່) ໄປກະທຳສິ່ງໃດໜຶ່ງ ຄືດັ່ງທີ່ກ່າວມາຂ້າງເທິງນັ້ນ;

ການອາຍັດຊັບ ຕ້ອງອີງຕາມການຮ້ອງຂໍຂອງຄູ່ຄວາມຝ່າຍໜຶ່ງມາຫາສານ ຫຼື ຕາມຄຳເຫັນຂອງສານໂດຍໜ້າທີ່ຂອງສານເອງ ແລະ ສານເອງກໍຕ້ອງຄົ້ນຄ້ວາເບິ່ງວ່າມີຂໍ້ມູນຫຼັກຖານກ່ຽວກັບຊັບພົວພັນກັບຄະດີຢ່າງຊັດເຈນແລ້ວບໍ່ (ຮູ້ເຖິງທີ່ຕັ້ງອັນແນ່ນອນຂອງຊັບ), ຊັບດັ່ງກ່າວເປັນກຳມະສິດຂອງຄູ່ຄວາມແທ້ບໍ່ ຫຼື ເປັນກຳມະສິດຂອງລັດ. ເພື່ອເປັນປະໂຫຍດໃຫ້ແກ່ການດຳເນີນຄະດີ ຫຼື ເພື່ອຮັບປະກັນການຮ້ອງຟ້ອງ ຫຼື ການຟ້ອງແຍ່ງຂອງຄູ່ຄວາມ ແລະ ສາມາດປະຕິບັດໄດ້; ຖ້າຫາກແມ່ນຜົນປະໂຫຍດຂອງລັດແລ້ວສານຈະອອກຄຳສັ່ງອາຍັດຊັບໂດຍໜ້າທີ່ມາຮັກສາໄວ້ຈົນກວ່າສານຈະລົງຄຳຕັດສິນ ແລະ ນຳມາຕິບັດຕາມຄຳຕັດສິນໃນຂັ້ນຕໍ່ໄປ[35].

ໃນພາກປະຕິບັດຕົວຈິງນັ້ນ ການອັດຍັດຊັບທີ່ເປັນຫຼັກຊັບຄ້ຳປະກັນໃນສັນຍາ ສານອາດຈະອາຍັດຊັບອື່ນທີ່ເປັນກຳມະສິດຂອງລູກໜີ້ຕື່ມອີກກໍໄດ້ບົນພື້ນຖານການຮ້ອງຂໍອາຍັດຊັບຂອງເຈົ້າໜີ້ຢ່າງເປັນລາຍອັກສອນ ຫຼືຕາມຄຳເຫັນຂອງສານ ຊຶ່ງສານຕ້ອງເອົາໃຈໃສ່ພິຈາລະນາບັນຫາດັ່ງນີ້:

- ຊັບທີ່ຈະອາຍັດນັ້ນ ເປັນຊັບສິນປະເພດໃດ, ຕັ້ງຢູ່ໃສ, ໃຜເປັນຄຸ້ມຄອງ ແລະ ເປັນກຳມະສິດຂອງລູກໜີ້ແທ້ບໍ່ ?
- ມູນຄ່າຂອງຊັບສິນດັ່ງກ່າວ ປະມານເທົ່າໃດ, ສາມາດຮັບປະກັນການໃຊ້ແທນໜີ້ສິນແກ່ເຈົ້າທັງຕົ້ນທຶນພ້ອມດອກເບ້ຍໄດ້ບໍ່ ຖ້າມີມູນຄ່າພຽງພໍຈະໃຊ້ແທນໜີ້ສິນ ທັງຕົ້ນທຶນ ແລະ ດອກເບ້ຍແລ້ວ ສານຈະບໍ່ອາຍັດຊັບອື່ນ ຂອງລູກໜີ້ຕື່ມອີກ;

ຖ້າຫຼັກຊັບຄ້ຳປະກັນນັ້ນ ຫາກມີມູນຄ່າພຽງພໍຈະໃຊ້ແທນໜີ້ສິນ ໃຫ້ແກ່ເຈົ້າໜີ້ທັງຕົ້ນທຶນພ້ອມດອກເບ້ຍແລ້ວ ສານຕ້ອງອາຍັດຊັບອື່ນຂອງລູກໜີ້ຕື່ມອີກເພື່ອຮັບປະກັນການໃຊ້ແທນໜີ້ສິນແກ່ເຈົ້າໜີ້; ການອາຍັດຊັບອື່ນຂອງລູກໜີ້ ກ່ອນອື່ນໝົດສານຕ້ອງພິຈາລະນາຫຼັກຊັບທີ່ມີຄວາມສະດວກໃນເວລາຈັດຕັ້ງປະຕິບັດ ແລະບໍ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ລູກໜີ້.

ຜົນສະທ້ອນຂອງຄຳສັ່ງອາຍັດຊັບຂອງສານ ແມ່ນສິ່ງຜົນກະທົບຕໍ່ຄູ່ຄວາມ ຊຶ່ງຝ່າຍທີ່ຖືກອາຍັດຊັບນັ້ນກໍຈະບໍ່ສາມາດເອົາຊັບດັ່ງກ່າວໄປເຮັດນິຕິກຳ ຫຼື ສັນຍາໃດໆກັບບຸກຄົນອື່ນໄດ້ຕາມທີ່ກຳນົດໄວ້ໃນຂ້ອງເທິງນັ້ນ, ນອກຈາກນັ້ນ ການອອກຄຳສັ່ງອາຍັດຂອງສານທີ່ບໍ່ຖືກກັບເນື້ອໃນຄວາມເປັນຈິງ, ຂາດເນື້ອຫາທີ່ໜັກແໜ້ນກໍຈະເຮັດໃຫ້ການພິຈາລະນາຕັດສິນຂອງສານ ມີຄວາມຜິດພາດຄູ່ຄວາມບໍ່ໄດຮັບຄວາມຍຸຕິທຳ ເປັນຕົ້ນຂາດຄວາມເຊື່ອໝັ້ນ, ຍອມຮັບຈາກສັງຄົມ. ສະນັ້ນ ການອອກຄຳສັ່ງຕ່າງໆຂອງສານຕ້ອງມີຄວາມພິຖີພິຖັນໃນການກວດຂໍ້ມູນຂອງຊັບເປັນພິເສດສິ່ງສຳຄັນຕ້ອງຢືນຢູ່ບົນພື້ນຖານເຫດ ແລະ ຜົນຢ່າງກົງໄປກົງມາ.

**ຈາກຂໍ້ທີ່ອະທິບາຍຂ້າງເທິງສາມາດຈຳແນກໄດ້ວ່າ**: ການຍຶດຊັບ ແລະ ອາຍັດຊັບມີຄວາມແຕກຕ່າງກັນ ຄື:

- ການຍຶດຊັບໄດ້ມີແຕ່ຊັບເຄື່ອນທີ່ເທົ່ານັ້ນ ເຊັ່ນ ລົດຈັກ, ລົດໂດຍສານ, ລົດໄຖນາ, ລົດຟາດເຂົ້າ, ເຮືອ ແລະ ອື່ນໆ. ຊັບຄົງທີ່ ເຊັ່ນ ທີ່ດິນ, ເຮືອນບໍ່ສາມາດຍຶດໄດ້.

[35]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ 2012, ມາດຕາ 122

– ການອາຍັດຊັບແມ່ນເຈົ້າກຳມະສິດ ຫຼື ບຸກຄົນທີ່ບໍ່ແມ່ນເຈົ້າຂອງກຳມະສິດມີສິດຄອບຄອງ ແລະ ນຳໃຊ້ຊັບທີ່ໄດ້ຖືກອາຍັດໄວ້ ແຕ່ບໍ່ມີສິດຊື້ຂາຍ, ມອບໂອນ, ເອົາເປັນຫຼັກຊັບຄໍ້າປະກັນ. ຂໍ້ຫ້າມຕ່າງໆຈະເປັນການກຳນົດໄວ້ຢູ່ໃນຄຳສັ່ງຂອງສານກ່ຽວກັບການອາຍັດຊັບຊັບທີ່ຖືກສານໄດ້ອອກຄຳສັ່ງຢຶດໄວ້ເຈົ້າກຳມະສິດລວມທັງຜູ້ທີ່ບໍ່ແມ່ນເຈົ້າກຳມະສິດ, ບໍ່ມີສິດກ່ຽວກັບຊັບທີ່ຖືກຢຶດຄື ບໍ່ມີສິດຄອບຄອງນຳໃຊ້, ຊື້ຂາຍ, ມອບໂອນ ແລະ ອື່ນໆຈົນກວ່າຈະມີຄຳສັ່ງໃໝ່ຂອງສານ.

### 3.1.3. ບໍ່ອະນຸຍາດໃຫ້ຄູ່ຄວາມເຄື່ອນໄຫວ ຫຼື ກະທຳສິ່ງໃດໜຶ່ງທີ່ກ່ຽວຂອງກັບຄະດີ

ການບໍ່ອະນຸຍາດໃຫ້ຄູ່ຄວາມເຄື່ອນໄຫວ ຫຼື ກະທຳສິ່ງໃດໜຶ່ງທີ່ກ່ຽວຂອງກັບຄະດີ ແມ່ນການຢຸດເຊົາຊົ່ວຄາວໂດຍບໍ່ໃຫ້ຈຳເລີຍ ຫຼື ຄູ່ຄວາມການເຄື່ອນໄຫວວຽກງານໃດໜຶ່ງໃນເວລາດຳເນີນຄະດີ ຊຶ່ງອາດຈະສ້າງຄວາມເສຍຫາຍໃຫ້ແກ່ຊັບຂອງໂຈດ ຫຼື ຊັບ ທີ່ກຳລັງຂັດແຍ່ງກັນເພື່ອຮັບປະກັນບໍ່ໃຫ້ຈຳເລີຍເອົາຕົວລົບໜີໃນເວລາດຳເນີນຄະດີ, ຂົ່ມຂູ່ຄູ່ຄວາມ ຫຼື ພະຍານ ແລະ ທຳລາຍຫຼັກຖານ, ພ້ອມກັນນັ້ນ ກໍຍັງອຳນວຍຄວາມສະດວກໃຫ້ແກ່ສານເອງໃນການພິຈາລະນາຕາມການຮ້ອງຂໍຂອງຄູ່ຄວາມ ຫຼື ຕາມຄຳເຫັນຂອງສານເອງດ້ວຍວິທີການຕ່າງໆ ທີ່ກຳນົດໄວ້ໃນກົດໝາຍພ້ອມທັງຮັບປະກັນການດຳເນີນຄະດີ ໃຫ້ເປັນໄປຕາມຂັ້ນຕອນກົດໝາຍຢ່າງຖືກຕ້ອງເປັນທຳ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ.

ໂດຍລວມແລ້ວ ການບໍ່ອະຍາດໃຫ້ຄູ່ຄວາມເຄື່ອນໄຫວ ຫຼື ກະທຳສິ່ງໃດໜຶ່ງກ່ຽວກັບຄະດີຂອງສານຕ້ອງມີເງື່ອນໄຂລຸ່ມຄື: ຕ້ອງມີການຮ້ອງຂໍຂອງຄູ່ຄວາມ, ມີຂໍ້ມູນຫຼັກຖານທີ່ມີຜົນສະທ້ອນຕໍ່ຄະດີ (ສາມາດຮູ້ເຖິງການເຄື່ອນໄຫວທີ່ບໍ່ດີຂອງຈຳເລີຍ) ຫຼື ການເຄື່ອນນັ້ນໄດ້ແຕະຕ້ອງເຖິງຜົນປະໂຫຍດຂອງລັດ ຫຼື ສັງຄົມ.

ຕົວຢ່າງ: ຈຳເລີຍທຳການບຸກເບີກເນື້ອທີ່ດິນບ່ອນຂັດແຍ່ງກັນທີ່ຈະເປັນຂອງໂຈດ ຫຼື ຂອງລັດ ຊຶ່ງພາໃຫ້ສະພາບຂອງເນື້ອທີ່ດັ່ງກ່າວເສັຍຫາຍ ແລະ ກໍລະນີຈຳເລີຍກຳລັງກໍ່ສ້າງເຮືອນໃສ່ທີ່ດິນທີ່ຂັດແຍ່ງກັນໃກ້ຈະສຳເລັດແລ້ວເມື່ອມີຂໍ້ຂັດແຍ່ງເກີດຄວາມບໍ່ພໍໃຈແລ້ວຈະທຳລາຍເຮືອນດັ່ງກ່າວຖີ້ມ.

ການນຳໃຊ້ມາດຕະການດັ່ງກ່າວ ຖືວ່າມີຄວາມສຳຄັນໃນພິຈາລະນາຕັດສິນຄະດີຂອງສານໃຫ້ມີຄວາມຄົບຖ້ວນ, ຮອບດ້ານ ແລະ ສອດຄ່ອງກັບຄວາມເປັນຈິງ ເນື່ອງຈາກວ່າຄູ່ກໍລະນີບໍ່ສາມາດໂຕນໜີ ຫຼື ກະທຳໃນສິ່ງທີ່ຜິດຕໍ່ກົດໝາຍຈຳກັດ ແລະ ສະກັດກັ້ນຜົນເສຍຕ່າງໆທີ່ຈະເກີດຂຶ້ນພາຍຫຼັງ ສານມີສິດອອກຄຳສັ່ງບໍ່ອະນຸຍາດໃຫ້ຄູ່ຄວາມເຄື່ອນໄຫວວຽກງານໃດໜຶ່ງ ຕາມການຮ້ອງຂໍຂອງຄູ່ຄວາມ ຫຼື ຕາມຄຳເຫັນຂອງສານໂດຍໜ້າທີ່ຂອງສານເອງ, ແຕ່ກ່ອນຈະອອກຄຳສັ່ງນັ້ນ ສານຄວນພິຈາລະນາເບິ່ງວ່າ ຈຳເລີຍໄດ້ມີການເຄື່ອນໄຫວແນວໃດ, ຈຳເລີຍໄດ້ສ້າງຄວາມເສຍຫາຍໃຫ້ແກ່ໂຈດ ຫຼືບໍ່? ເປັນຕົ້ນການຂົ່ມຂູ່ຄູ່ຄວາມ ຫຼືພະຍານ, ການທຳລາຍຫຼັກຖານ; ທຸກຄຳສັ່ງຂອງສານໂດຍສະເພາະຄຳສັ່ງບໍ່ອະນຸຍາດໃຫ້ຄູ່ຄວາມເຄື່ອນໄຫວນັ້ນ ຕ້ອງໃຫ້ອະທິບາຍໃຫ້ຈະແຈ້ງ, ມີເຫດຜົນຂອງການອອກຄຳສັ່ງຈົນກວ່າຈະມີຄຳຕັດສິນທີ່ໃຊ້ຢ່າງເດັດຂາດຂອງສານ;

ຄຳສັ່ງບໍ່ອະນຸຍາດໃຫ້ຄູ່ຄວາມເຄື່ອນໄຫວດັ່ງກ່າວທີ່ອອກໂດຍສານ ແມ່ນມີຜົນສະທ້ອນຕໍ່ການດຳເນຄະດີໂດຍສະເພາະແມ່ນສິດ ແລະ ຜົນປະໂຫຍດຂອງໂຈດ, ຈຳເລີຍ, ເມື່ອສານໄດ້ລົງຄຳຕັດສິນ ກໍຈະສາມາດປະຕິບັດໄດ້ງ່າຍຂຶ້ນ ເພາະຜູ່ທີ່ມີພັນທະບໍ່ໄດ້ມີການສ້າງບັນຫາທີ່ຫຍຸ້ງຍາກທີ່ພົວພັນກັບຄະດີ.

### 3.1.4. ການບໍ່ອະນຸຍາດໃຫ້ຄູ່ຄວາມປະຕິບັດຂໍ້ຜູກພັນໃດໜຶ່ງ

ການບໍ່ອະນຸຍາດໃຫ້ຄູ່ຄວາມປະຕິບັດຂໍ້ຜູກພັນໃດໜຶ່ງ ແມ່ນການບໍ່ໃຫ້ຄູ່ຄວາມປະຕິບັດພັນທະຂອງຕົນໃນການເຄື່ອນໄຫວວຽກງານໃດໜຶ່ງ ທີ່ບໍ່ຖືກຕ້ອງ ແລະ ພົວພັນໃນຄະດີກັບຜູ້ອື່ນ ເຊັ່ນ ການເຮັດສັນຍາຊໍ້າຊ້ອນ, ການໂອນສິດຊື້ຂາດກ່ຽວກັບຊັບສິ່ງຂອງທີ່ກ່ຽວຂ້ອງກັບຄະດີເປັນຕົ້ນ ຊຶ່ງອາດຈະສ້າງຄວາມຫຍຸ້ງຍາກ ແລະ ຄວາມເສັຍຫາຍໃຫ້ແກ່ການດຳເນີນຄະດີຢູ່ສານ. ຍ້ອນເຫດຜົນດັ່ງກ່າວສານອາດອອກຄຳສັ່ງບໍ່ອະນຸຍາດໃຫ້ຄູ່ຄວາມປະຕິບັດຂໍ້ຜູກພັນໃດໜຶ່ງໂດຍອີງຕາມເງື່ອນໄຂດັ່ງນີ້: ຕາມການຮ້ອງຂໍຂອງຄູ່ຄວາມ ຫຼື ຕາມຄຳເຫັນໂດຍໜ້າທີ່ຂອງສານເອງ; ຕ້ອງ

ຮູ້ແຈ້ງຂໍ້ມູນທີ່ແນ່ນອນ ແລະ ຊັບທີ່ພົວພັນຄະດີ, ຊຶ່ງການເຄື່ອນໄຫວຂອງຈໍາເລີຍ ຫາກສ້າງຄວາມເສັຍຫາຍໃຫ້ແກ່ ຊັບຂອງໂຈດ ຫຼື ຊັບທີ່ກໍາລັງຂັດແຍ່ງກັນ ສານສາມາດອອກຄໍາສັ່ງຢຸດເຊົາການປະຕິບັດຂໍ້ຜູກພັນໃດໜຶ່ງໄດ້ທັນທີ.

ການນໍາໃຊ້ມາດຕະການນີ້ ແມ່ນມີຄວາມສໍາຄັນໃນການຈັດຕັ້ງປະຕິບັດຄໍາສັ່ງຂອງສານເພື່ອຮັບປະກັນໃຫ້ການ ດໍາເນີນຄະດີຢູ່ສານປະຊາຊົນດໍາເນໄປຢ່າງຕໍ່ເນື່ອງ ປາສະຈາກການແກ່ຍາວເວລາທີ່ເກີດມາຈາກການຊອກຫາຈໍາເລີຍ ຫຼື ຊັບສິນທີ່ຈະຖືກເຄື່ອນຍ້າຍໄປຫາບຸກຄົນອື່ນ ຖ້າບໍ່ມີຂໍ້ຜູກພັນອື່ນສານກໍສາມາດຮັບປະກັນການໃຊ້ແທນໜີ້ສິນ ໃຫ້ແກ່ເຈົ້າໜີ້ໄດ້ ໃນເວລາດໍາເນີນຄະດີຈົນກວ່າຈະມີຄໍາຕັດສິນທີ່ໃຊ້ຢ່າງເດັດຂາດຂອງສານ;

ຜົນສະທ້ອນຂອງຄໍາສັ່ງດັ່ງກ່າວ ຈະມີຜົນຕໍ່ຄູ່ຄວາມ ຜູ່ທີ່ສານໄດ້ອອກຄໍາສັ່ງບໍ່ໃຫ້ປະຕິບັດຂໍ້ຜູກພັນນັ້ນ ເນື່ອງ ຈາກວ່າ ຖ້າມີຄໍາສັ່ງຂອງສານແລ້ວ ຜູ່ກ່ຽວບໍ່ມີສິດປະຕິບັດຂໍ້ຜູກພັນ ທີ່ຈະສົ່ງຜົນສະທ້ອນຕໍ່ ຄະດີທີ່ສານພວມພິ ຈາລະນາ ກົງກັນຂ້າມ ຖ້າຜູ່ກ່ຽວຫາກໄດ້ລະເມີດຄໍາສັ່ງ ກໍຈະພາໃຫ້ຂໍ້ຜູກພັນທີ່ ຜູ່ກ່ຽວໄດ້ເຮັດກັບບຸກຄົນໃດໜຶ່ງນັ້ນ ເປັນໂມຄະໃຊ້ບໍ່ໄດ້ທາງກົດໝາຍ.

### 3.1.5. ການຈໍາກັດບໍລິເວນຕໍ່ຄູ່ຄວາມ

ການຈໍາກັນບໍລິເວນຕໍ່ຄູ່ຄວາມ ແມ່ນການບໍ່ໃຫ້ຄູ່ຄວາມຝ່າຍໃດຝ່າຍໜຶ່ງເຂົ້າ ຫຼື ອອກຈາກພື້ນທີ່ໃດໜຶ່ງ ຫຼື ບໍ່ໃຫ້ ອອກນອກປະເທດ ຕາມການຮ້ອງຂໍຂອງຄູ່ຄວາມ ຫຼື ຕາມຄໍາເຫັນໂດຍໜ້າທີ່ຂອງສານເອງເວັ້ນເສັຍແຕ່ກໍລະນີຈໍາ ເປັນຄູ່ຄວາມໃນຄະດີ ໄດ້ຊີ້ແຈງເຫດຜົນເປັນລາຍລັກອັກສອນ ແລະ ມີຫຼັກຊັບຄໍ້າປະກັນໄວ້ນໍາສານ ເພື່ອຮັບປະກັນ ໃຫ້ແກ່ການດໍາເນີນຄະດີໃຫ້ມີຄວາມຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ.

ການຈໍາກັດບໍລິເວນຕໍ່ຄູ່ຄວາມ ມີຄວາມສໍາຄັນໃຫ້ແກ່ສານໃນການກໍາເກັບຂໍ້ມູນຫຼັກຖານໃຫ້ແກ່ສານ ແລະ ເພື່ອ ສະໜັບສະໜູນ ຫຼັກການດໍາເນຄະດີຢູ່ສານໂດຍສະເພາະສ້າງເງື່ອນໄຂສະດວກໃຫ້ແກ່ສານໃນການເກັບກໍາຂໍ້ມູນຫຼັກ ຖານທີ່ພົວພັນກັບຄະດີນໍາຜູ່ກ່ຽວທັງຮັບປະກັນບໍ່ເຮັດໃຫ້ການດໍາເນີນຄະດີບໍ່ແກ່ຍາວ, ຮັບປະກັນໃນການປົກປ້ອງ ສິດ ແລະ ຜົນປະໂຫຍດຂອງຄູ່ຄວາມ ຜູ່ຖືກລະເມີດ;

ເງື່ອນໄຂການຈໍາກັດບໍລິເວນຕໍ່ຄູ່ຄວາມມີຈຸດປະສົງເພື່ອຮັບປະກັນໃຫ້ການດໍາເນີນຄະດີມີຄວາມໜັກແໜ້ນ ແລະ ຊັດເຈນ ໂດຍມີຄູ່ຄວາມໄດ້ເຂົ້າຮ່ວມນໍາເປັນຕົ້ນໃນການເກັບກໍາຂໍ້ມູນຫຼັກຖານໃຫ້ມີຄວາມແຈ້ງຂາວ; ສານຈະອອກ ມາດຕະການດັ່ງກ່າວຕ້ອງປະກອບດ້ວຍເງື່ອນໄຂຄື ມີການຮ້ອງຂໍຂອງຄູ່ຄວາມ, ຕ້ອງມີຂໍ້ມູນ ແລະ ເຫດການທີ່ ພົວພັນຄະດີ, ມີຂໍ້ມູນວ່າຜູ່ກ່ຽວຂ້ອງຈະເອົາຕົວຫຼົບໜີ ອາດຈະບໍ່ຮັບປະກັນແກ່ການດໍາເນຄະດີໃຫ້ຖືກຕ້ອງຕາມ ຫຼັກການອັນສ້າງຄວາມເສັຍຫາຍຕໍ່ຜົນປະໂຫຍດຂອງຄູ່ຄວາມ.

ການນໍາໃຊ້ມາດຕະການການຈໍາກັດບໍລິເວນຕໍ່ຄູ່ຄວາມ ແມ່ນມີຄວາມຈໍາເປັນ ແລະ ຕ້ອງຖືກເປົ້າໝາຍ ເພື່ອເຮັດ ໃຫ້ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານໃຫ້ມີຜົນສັກສິດ ແລະ ສາມາດຮັບປະກັນການໃຊ້ແທນໜີ້ສິນໃຫ້ແກ່ ເຈົ້າໜີ້ໄດ້.

ຜົນສະທ້ອນການຈໍາກັດບໍລິເວນຕໍ່ຄູ່ຄວາມ ແມ່ນຜົນກະທົບແກ່ສິດ ແລະ ເສລີພາບໃນການເຄື່ອນໄຫວໄປມາ ດັ່ງ ທີ່ກ່າວມາຂ້າງເທິງ, ສະນັ້ນສານ ກໍຕ້ອງມີຄວາມຮັບຜິດຊອບໃນການອອກຄໍາສັ່ງຕ້ອງໄດ້ພິຈາລະນາຢ່າງສົມເຫດສົມ ຜົນ ຖ້າຫາກມີຄວາມຜິດພາດ ຫຼື ບໍ່ສອດຄ່ອງກັບຕົວຈິງສານກໍຈະຂາດຄວາມເຊື່ອຖື, ຂາດຄວາມຍອມຮັບຈາກຄູ່ ຄວາມກໍຄືສັງຄົມ.

### 3.1.6. ໝາຍພາຕົວ

ໝາຍພາຕົວອອກໂດຍຄໍາສັ່ງຂອງສານ ແມ່ນມີລັກສະນະໂຈະຈົງ ແລະ ແນ່ນອນ ເພື່ອໃຫ້ເຈົ້າໜ້າທີ່ຕໍາຫຼວດນໍາ ເອົາຕົວຈໍາເລີຍ, ພະຍານເຂົ້າມາພົບກັບຜູ້ພິພາກສາຕາມວັນ, ເວລາ, ສະຖານທີ່ໄດ້ກໍານົດໄວ້ໃນໝາຍພາຕົວນັ້ນ ໃນ ກໍລະນີທີ່ຈໍາເລີຍບໍ່ເຂົ້າມາສານຕາມໝາຍຮຽກເຖິງສາມຄັ້ງໂດຍບໍ່ມີເຫດຜົນ, ສານກໍຈະອອກໝາຍພາຕົວຜູ້ກ່ຽວເຂົ້າ ມາສານເພື່ອກໍາເກັບຂໍ້ມູນຫຼັກຖານໃຫ້ຄົບຖ້ວນ, ຮອບດ້ານ ແລະ ຖືກເປົ້າໝາຍ, ນອກຈາກນັ້ນ ກໍເປັນການຮັບປະ ກັນບໍ່ໃຫ້ຈໍາເລີຍເອົາຫຼົບໜີຈາກການດໍາເນີນຄະດີ.

ການອອກໝາຍພາຕົວຈໍາເລີຍ ມີເປົ້າໝາຍເພື່ອນໍາເອົາຜູ້ກ່ຽວຂ້ອງເຂົ້າມາຊີ້ແຈງລາຍລະອຽດ, ຊີ້ບອກຄວາມເປັນຈິງຂອງຄະດີຕໍ່ສານ ຊຶ່ງຕ້ອງມີເງື່ອນໄຂໃນຕົ້ນຕໍຄື ບໍ່ເຂົ້າມາຕາມໝາຍຮຽກຂອງສານເຖິງສາມຄັ້ງໂດຍບໍ່ມີເຫດຜົນ ຫຼື ສານສາມາດຮູ້ໄດ້ວ່າ ຜູ້ກ່ຽວມີເຈດຕະນາ ບໍ່ເຄົາລົບນັບຖືສານ ກໍຄືບໍ່ປະຕິບັດຕາມໝາຍຮຽກ ຫຼື ໝາຍເຊີນຂອງສານ ອັນຈະພາໃຫ້ ເກີດອຸປະສັກໃນການດໍາເນີນຄະດີ, ເຮັດໃຫ້ຄະດີຖືກແກ່ຍາວ. ສະນັ້ນ ເມື່ອຈໍາເລີຍຫາກບໍ່ເຂົ້າມາສານໂດຍບໍ່ມີເຫດຜົນ ຜູ້ພິພາກສາກໍຈະນໍາສະເໜີຕໍ່ຄະນະສານເພື່ອພິຈາລະນາອອກຄໍາສັ່ງໃຫ້ພາຕົວຜູ້ກ່ຽວເຂົ້າມາສານໂດຍມອບໃຫ້ເຈົ້າໜ້າທີ່ຕໍາຫຼວດໄປປະສານສົມທົບກັບອົງການປົກຄອງບ້ານເພື່ອນໍາຕົວຜູ້ກ່ຽວເຂົ້າມາສານ. ສໍາລັບຄ່າໃຊ້ຈ່າຍຕ່າງໆໃນການພາຕົວແມ່ນຜູ້ຮ້ອງຂໍ ຫຼື ຜູ້ສະເໜີເປັນຜູ້ຮັບຜິດຊອບ.

ການນໍາໃຊ້ມາດຕະການອອກໝາຍພາຕົວ ແມ່ນມີຄວາມຮັບປະກັນໃຫ້ການດໍາເນີນຄະດີໃຫ້ຖືກເປົ້າໝາຍຜູ້ພິພາກສາເອງກໍສາມາດຄົ້ນຫາຂໍ້ມູນໄດ້ຢ່າງຊັດເຈນ, ຄົບຖ້ວນ ແລະ ທ່ວງທັນກັບເວລາ ພ້ອມທັງຮັບປະກັນໃຫ້ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານໃຫ້ມີຜົນສັກສິດ.

ຜົນສະທ້ອນຂອງການອອກໝາຍພາຕົວ ແມ່ນຈໍາເລີຍ ຈະຖືກຈໍາກັດສິດ ແລະ ພັນທະໃນການເຄື່ອນໄຫວໂດຍທັນທີ ໝາຍຄວາມວ່າ ຜູ້ຖືກພາຕົວຕ້ອງໄດ້ເຂົ້າສານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຕາມວັນເວລາ ສານນັດໝາຍ ແລະ ເມື່ອສານໄດ້ເຮັດວຽກນໍາ ຜູ້ກ່ຽວຕາມຈຸດປະສົງ ຄົບຖ້ວນແລ້ວ ກໍອະນຸຍາດໃຫ້ຜູ້ກ່ຽວກັບຄືນບ້ານ.

### 3.1.7. ການອອກມາດຕະການຮັບປະກັນການຮ້ອງຟ້ອງອື່ນ

ມາດຕະການຮັບປະກັນການຮ້ອງຟ້ອງ ແມ່ນມີໃນກໍລະນີມາດຕະການທີ່ສານສາມາດນໍາໃຊ້ໄດ້ ສິ່ງສໍາຄັນມາດຕະການນັ້ນແມ່ນເພື່ອປົກປ້ອງຜົນປະໂຫຍດຂອງຄູ່ຄວາມໃນການດໍາເນຄະດີ, ສ່ວນບັນດາຫົກມາດຕະການຮັບປະກັນການຮ້ອງຟ້ອງທີ່ໄດ້ອະທິບາຍມາຂ້າງນັ້ນເປັນພຽງມາດຕະການທີ່ພົ້ນເດັ່ນ ແລະ ມັກນໍາໃຊ້ໃນກໍລະນີໃນຂັ້ນຕອນການດໍາເນີນຄະດີ ກົດໝາຍຈຶ່ງໄດ້ກໍານົດເອົາມາດຕະການທີ່ໂດດເດັ່ນໃຫ້ເຫັນເທົ່າ, ສະນັ້ນບໍ່ຄວນເຂົ້າໃຈວ່າມີແຕ່ຫົກມາດຕະການເທົ່ານັ້ນສານສາມາດນໍາໃຊ້ໄດ້ ໃນຄວາມເປັນຈິງແລ້ວ ຍັງມີມາດຕະການອື່ນອີກ ຖ້າສານເຫັນວ່າມີຄວາມຈໍາເປັນໃຫ້ແກ່ການດໍາເນີນຄະດີໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຄູ່ຄວາມ ໂດຍສະເພາະເປັນເຄື່ອງມືໃຫ້ແກ່ຜູ້ພິພາກສາ, ພະນັກງານສານ ຫຼື ໄອຍະການປະຊາຊົນເພື່ອເຮັດໃຫ້ການດໍາເນີນຄະດີໃຫ້ມີຄວາມແຈ້ງຂາວ, ໜັກແໜ້ນ ແລະ ຊັດເຈນ ເພື່ອຮັບປະກັນການໃຊ້ແທນໜີ້ສິນຕາມຄໍາຮ້ອງຟ້ອງ ສານອາດຈະພິຈາລະນາອອກມາດຕະການໃດໜຶ່ງຕາມຄໍາຮ້ອງຂໍຂອງຄູ່ຄວາມໃນຄະດີ ຫຼື ຕາມຄໍາເຫັນຂອງສານ ຫາກແມ່ນຜົນປະໂຫຍດຂອງລັດ ຫຼື ຂອງສັງຄົມກໍໄດ້.

**ຕົວຢ່າງ:** ຈາເລີຍ ເປັນຜູ້ຄຸ້ມຄອງນາໃຊ້ທີ່ດິນ ແລະ ເຮືອນ ບໍ່ຂັດແຍ່ງກັນ ເພື່ອຮັບປະກັນບໍ່ໃຫ້ ທີ່ດິນ ແລະ ເຮືອນນັ້ນ ເຊື່ອມຄຸນນະພາບ ສານສາມາດອອກມາດຕະການ ສັ່ງໃຫ້ຈໍາເລີຍ ສ້ອມແປງເຮັດໃຫ້ຊັບສິ່ງຂອງນັ້ນດີຂຶ້ນ.

ການອອກມາດຕະການອື່ນຂອງສານ ແມ່ນມີຜົນສະທ້ອນຕາມມາທີ່ແຕກຕ່າງກັນແລ້ວ ແຕ່ມາດຕະການທີ່ສານນໍາໃຊ້ ສິ່ງສໍາຄັນທຸກມາດຕະການສານທີ່ອອກໄປນັ້ນແມ່ນມີຈຸດປະສົງເພື່ອຮັບປະກັນການຮ້ອງຟ້ອງຂອງຄູ່ຄວາມເທົ່ານັ້ນ ຈຶ່ງສາມາດອອກມາດຕະການໄດ້.

## 3.2. ມາດຕະການຮິບດ່ວນຊົ່ວຄາວ

ມາດຕະການຮິບດ່ວນຊົ່ວຄາວ ໝາຍເຖິງຄໍາຕົກລົງຂອງສານ ກ່ຽວກັບຮູບຄະດີໃນສະພາບການຮີບດ່ວນໃນໄລຍະການດໍາເນີນຄະດີ ກ່ອນສານລົງຄໍາຕັດສິນ ເພື່ອປົກປັກຮັກສາ ຊັບສິ່ງຂອງທີ່ພົວພັນກັບຄະດີໃຫ້ມີມູນຄ່າຄືເດີມທັງເປັນການຮັບປະກັນໃຫ້ແກ່ປະຕິບັດຄໍາຕັດສິນຂອງສານ ໂດຍ ຜູ້ເປັນເຈົ້າໜີ້ ຈະໄດ້ຮັບການທົດແທນຄືນຢ່າງທ່ວງທັນເວລາ, ມາດຕະການຮິບດ່ວນຊົ່ວຄາວ ນີ້ເປັນມາດຕະການທີ່ ມີລັກສະນະເດັດຂາດມີຜົນບັງຄັບປະຕິບັດໃນທັນທີທັນໃດ, ເມື່ອສານໄດ້ອອກຄໍາສັ່ງໃຫ້ນໍາໃຊ້ແລ້ວ ຄູ່ຄວາມຈະບໍ່ມີສິດຂໍອຸທອນ ຫຼື ຂໍລົບລ້າງ, ຍົກເວັ້ນມາດຕະ ການຕໍ່ຜົວຫຼື ເມັຍ ຊຶ່ງປະກອບມີມາດຕະການລຸ່ມນີ້:

1. ມາດຕະການຮີບດ່ວນຊົ່ວຄາວ ;
2. ມາດຕະການຂອງສານຕໍ່ຄົນເສຍຈິດ;
3. ມາດຕະການຂອງສານຕໍ່ ນິຕິບຸກຄົນທີ່ ຖືກຍຸບເລີກ ;
4. ມາດຕະການຂອງສານຕໍ່ ຜົວຫຼື ເມັຍ ;
5. ມາດຕະການຂອງສານ ຕໍ່ເດັກ.

### 3.2.1. ມາດຕະການຮີບດ່ວນຊົ່ວຄາວ

ມາດຕະການຮີບດ່ວນຊົ່ວຄາວ ແມ່ນການອອກຄໍາຕັດສິນທີ່ເດັດຂາດຂອງສານໃນເວລາດໍາເນີນຄະດີໃຫ້ປະຕິບັດສິ່ງໃດສິ່ງໜຶ່ງໃນທັນໃດກ່ຽວກັບຊັບສິ່ງຂອງທີ່ມີການຂັດແຍ່ງກັນ ເພື່ອປົກປັກຮັກສາຊັບສິ່ງຂອງ ບໍ່ໃຫ້ມີການປ່ຽນຮູບ ຫຼື ເສື່ອມເສຍຄຸນນະພາບກ່ອນການຕັດສິນຄະດີແນ່ໃສ່ຮັບປະກັນການດໍາເນີນຄະດີ ໃຫ້ມີຄວາມວ່ອງໄວ, ລະອຽດ ແລະ ທັນເວລາ, ນອກນັ້ນຍັງເປັນບ່ອນອີງໃຫ້ແກ່ຜູ້ພິພາກສາໃນການເຄື່ອນໄຫວປະຕິບັດໜ້າທີ່ໃຫ້ມີຄວາມຄົບຖ້ວນ, ຊັດເຈນ ແລະ ຮອບດ້ານ.

ການອອກມາດຕະການຮີບດ່ວນຊົ່ວຄາວ ແມ່ນມີເງື່ອນໄຂຄື ຕ້ອງມີການຮ້ອງຂໍຂອງຄູ່ຄວາມ ທີ່ເປັນລາຍລັກອັກສອນໄປຫາສານ, ມີຂໍ້ມູນຫຼັກຖານທີ່ຄົບຖ້ວນກ່ຽວກັບຊັບສິ່ງຂອງທີ່ພົວພັນຄະດີ, ການອອກໂດຍສານຕໍ່ຊັບສິ່ງຂອງທີ່ຂັດແຍ່ງ ຫຼື ຮູ້ໄດ້ວ່າຊັບສິ່ງຂອງທີ່ມີການຂັດແຍ່ງກັນນັ້ນເປັນກໍາມະສິດຂອງລັດ.

ເມື່ອຄູ່ຄວາມຫາກເຫັນວ່າ ມີຄວາມຜິດປົກກະຕິຕໍ່ຊັບສິ່ງຂອງທີ່ຂັດແຍ່ງເປັນຕົ້ນ ແມ່ນຊັບສິ່ງຂອງທີ່ມີການເສື່ອມຄຸນນະພາບໄວ ບໍ່ຮັບປະກັນໃນການຮັກສາຊັບສິ່ງຂອງໃຫ້ຢູ່ໃນສະພາບເດີມ ຄູ່ຄວາມກໍມີສິດຮ້ອງຂໍຕໍ່ສານ ຫຼື ສານເອງຫາກພົບເຫັນຄວາມຜິດປົກກະຕິທີ່ເກີດຂຶ້ນດັ່ງກ່າວ ສານກໍຕ້ອງອອກຄໍາສັ່ງ ເພື່ອໃຫ້ມີການຄຸ້ມຄອງ ຫຼື ຊື້ຂາດຢ່າງຮີບດ່ວນ. ສານຈະອອກຄໍາສັ່ງມອບສິດຄຸ້ມຄອງ ຫຼື ຊີ້ຂາດໃນຊັບສິ່ງຂອງນັ້ນໃຫ້ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫຼື ບຸກຄົນຜູ້ໃດຜູ້ໜຶ່ງກໍໄດ້[36] ຖ້າບໍ່ທັນມີບຸກຄົນໃດຄຸ້ມຄອງກໍມອບໃຫ້ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຂອງສານເປັນຜູ້ຄຸ້ມຄອງ, ປົກປັກຮັກສາ ຫຼື ຂາຍເອົາເງິນມາໄວ້ເພື່ອຈັດຕັ້ງປະຕິບັດຄໍາຕັດສິນຂອງສານ. ຄໍາສັ່ງຂອງສານກ່ຽວກັບການນໍາໃຊ້ມາດຕະການຮີບດ່ວນຊົ່ວຄາວໃຫ້ປະຕິບັດໃນທັນໃດ. ຊັບສິ່ງຂອງທີ່ຖືກຄຸ້ມຄອງຕາມຄໍາສັ່ງເທິງນີ້ຈະນໍາມາຊໍາລະສະສາງຕາມຄໍາຕັດສິນ ຫຼື ຄໍາພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

ຜົນສະທ້ອນການອອກມາດຕະການຮີບດ່ວນຊົ່ວຄ່າວ ແມ່ນມີຜົນສະທົບຕໍ່ຊັບສິ່ງຂອງ ທີ່ພົວພັນກັບຄະດີນັ້ນອາດຈະຖືກປ່ຽນຮູບເປັນຊັບສິ່ງຂອງແນວໃໝ່ ເຊັ່ນ ເຂົ້າ, ປາ ຫຼື ອາຫານ ກໍຈະປ່ຽນເປັນເງິນ ຊຶ່ງສານຈະບໍ່ອະນຸຍາດໃຫ້ທໍາການຊື້ຂາຍ, ມອບໂອນ ຫຼື ໄປເຮັດສັນຍາອື່ນໆ ທີ່ຂັດກັບຄໍາສັ່ງຂອງສານ.

### 3.2.2. ມາດຕະການຂອງສານຕໍ່ຄົນເສຍຈິດ

ມາດຕະການຂອງສານຕໍ່ຄົນເສຍຈິດ ແມ່ນການນໍາສົ່ງຜູ້ກໍ່ຄວາມເສຍຫາຍທີ່ເປັນຄົນເສຍຈິດ ເພື່ອໄປປິ່ນປົວຢູ່ໂຮງໝໍໂລກຈິດ ຫຼື ສະຖານທີ່ສະເພາະ ຊຶ່ງຜູ້ກໍ່ຄວາມເສຍຫາຍມີອາການເຈັບປ່ວຍໜັກ ແລະ ມີອາການເປັນບ້າເສຍຈິດ; ພາຍຫຼັງທີ່ໄດ້ປິ່ນປົວດີແລ້ວຕ້ອງນໍາເອົາຜູ້ກໍ່ຄວາມເສຍຫາຍ ຫຼື ຜູ້ຮັບຜິດຊອບທາງແພ່ງ ຫຼື ຜູ້ໃຊ້ແທນຄ່າເສຍຫາຍນັ້ນມາດໍາເນີນຄະດີ ຫຼື ນໍາມາປະຕິບັດຄໍາຕັດສິນ ຫຼື ຄໍາພິພາກສາຂອງສານຕໍ່ໄປ[37].

ເພື່ອຮັບປະກັນການພິຈາລະນາຕັດສິນຂອງສານໃຫ້ມີຄວາມຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ໃນການເຄື່ອນໄຫວປະຕິບັດໜ້າທີ່ຜູ້ພິພາກສາ ຕ້ອງຮັບປະກັນການດໍາເນີນຄະດີໃຫ້ໄປຕາມຂັ້ນຕອນຕາມກົດໝາຍທັງເປັນບັນຫາລະອຽດອ່ອນ ເນື່ອງຈາກວ່າບຸກຄົນດັ່ງກ່າວອາດຈະບໍ່ມີຄວາມພ້ອມທີ່ຈະນໍາມາປະຕິບັດ ຫຼື ດໍາເນີນຄະດີຕາມ

---

[36] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 134

[37] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 135

ຂະບວນການຂອງສານໃຫ້ເກີດຄວາມມີຄວາມເປັນທຳແກ່ຜູ່ກ່ຽວ ສະນັ້ນ, ເມື່ອສານເຫັນສະພາບ ຜູ່ກ່ຽວບໍ່ເປັນປົກປະຕິມີຄວາມສົງໄສ ກ່ຽວກັບການຄວບຄຸມບັນຊາການກະທຳຂອງຜູ່ກ່ຽວແລ້ວ ສານກໍມີສິດອອກຄຳສັ່ງສົ່ງຕົວໄປປິ່ນປົວຢູ່ໂຮງໝໍໂລກຈິດໃຫ້ໄດ້ຮັບການປິ່ນປົວຫາຍດີແລ້ວ ຈຶ່ງສືບຕໍ່ດຳເນີນຄະດີ ກັບຜູ່ກ່ຽວຕາມລະບຽບກົດໝາຍ.

ສານຈະອອກມາດຕະການດັ່ງກ່າວໄດ້ຕ້ອງປະກອບດ້ວຍເງື່ອນໄຂ ຄື ມີການຮ້ອງຂໍຂອງຄູ່ຄວາມ ຫຼື ພໍ່ແມ່ຍາດພີ່ນ້ອງຂອງຜູ່ກ່ຽວ ທີ່ຍື່ນຕໍ່ສານ, ສາມາດຮູ້ກ່ຽວກັບສະພາບຄວາມຜິດປົກກະຕິ ຂອງຜູ້ເປັນບ້າເສັຍຈິດ ຫຼື ສານສາມາດອອກໄດ້ໂດຍໜ້າທີ່ຂອງສານເອງ ຖ້າເຫັນວ່າ ຜູ່ກ່ຽວມີບັນຫາງດ້ານຈິດປະສາດ.

ການນຳໃຊ້ມາດຕະການຕໍ່ຄົນເສັຍຈິດ ກໍເປັນປ້ອງກັນ ຫຼືກເວັ້ນບໍ່ໃຫ້ຜູ້ກ່ຽວໄປກະທຳຜິດ ຫຼື ກໍຄວາມເສັຍຫາຍຕື່ມອີກ ລວມທັງບໍ່ໃຫ້ຊັບສິນທີ່ເປັນຂອງຜູ້ກ່ຽວນັ້ນຖືກທຳລາຍ, ເຄື່ອນຍ້າຍ ຫຼື ມອບໃຫ້ບຸກຄົນອື່ນ ສ່ວນໃນການພິຈາລະນາຕັດສິນຄະດີຂອງສານກໍມີຄວາມຈຳເປັນ ຊຶ່ງຈະເຮັດໃຫ້ການດຳເນີນຄະດີໃນແຕ່ລະຂັ້ນຕອນດຳມີຄວາມເລິກເຊິ່ງ, ຈະແຈ້ງ, ຮອບດ້ານ ແລະ ຮັບປະກັນຄວາມຍຸຕິທຳ ແກ່ຄູ່ຄວາມ, ສະນັ້ນ ສານຈຶ່ງມີຄວາມຈຳເປັນໃນການອອກມາດຕະການຕໍ່ຄົນເສັຍຈິດ ໃຫ້ຖືກຕ້ອງຕາມຫຼັກການ ພ້ອມນີ້ ເນື້ອໃນຂອງມາດຕະການກໍຕ້ອງອະທິບາຍໃຫ້ຈະແຈ້ງ ຍົກເຫດ ແລະ ຜົນ ຄັກແນ່ເພື່ອເປັນບ່ອນອີງ ແລະ ແຈ້ງໃຫ້ຄູ່ຄວາມຝ່າຍກົງກັນຂ້າມຮັບຮູ້ນຳ;

ຜົນສະທ້ອນໃນການໃຊ້ມາດຕະການຕໍ່ຄົນເສັຍຈິດ ແມ່ນມີການກະທົບໂດຍກົງຕໍ່ການດຳເນີນຄະດີຖືກໂຈະ ຫຼື ເຮັດໃຫ້ຄະດີມີຄວາມແກ່ຍາວ ຈົນກວ່າຜູ່ກ່ຽວ ຈະຫາຍດີເປັນປົກກະຕິໃນພາກປະຕິບັດວຽກງານຕົວຈິງ ສານຈະອອກມາດຕະການນີ້ແມ່ນອີງຕາມສຸກຂະພາບ ແລະ ຄວາມພ້ອມຂອງຜູ້ກໍ່ຄວາມເສັຍຫາຍ ຫຼື ຜູ້ຮັບຜິດຊອບທາງແພ່ງ ຫຼື ຜູ້ໃຊ້ແທນຄ່າເສຍຫາຍຊຶ່ງບໍ່ສາມາດຈະກຳນົດເວລາທີ່ແນນອນໄດ້ດັ່ງນັ້ນ, ໃນມາດຕະການນີ້ຜູ້ເປັນເຈົ້າໜີ້ກໍອາດຈະເກີດຄວາມອັບປະໂຫຍດສົມຄວນ, ແຕ່ສານຕ້ອງຢືນຢູ່ໃນຫຼັກການຄວາມເປັນທຳຂອງຄູ່ຄວາມເປັນຫຼັກ, ແຕ່ເຖິງຢ່າງໃດກໍຕາມ ຖ້າຫາກມີຄວາມຈຳເປັນເມື່ອເຫັນວ່າການດຳເນີນຄະດີ ຈະມີຄວາມແກ່ຍາວ ແລະ ຜູ່ກ່ຽວ ກໍບໍ່ມີທ່າທາງດີຂຶ້ນ ພໍ່ແມ່, ຜູ່ປົກຄອງ, ຜູ່ຕາງໜ້າໂຮງຮຽນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ມີສິດຮ້ອງຂໍຕໍ່ສານ ໃຫ້ຮັບຮູ້ວ່າຜູ່ກ່ຽວບໍ່ມີຄວາມສາມາດທາງດ້ານການປະພຶດ ແລະ ແຕ່ງຕັ້ງ ຜູ່ປົກຄອງຕາມລະບຽບກົດໝາຍ ຈຶ່ງສືບຕໍ່ດຳເນີນຄະດີນຳຜູ່ປົກຄອງຜູ່ກ່ຽວໄດ້.

ຕົວຢ່າງ: ໃນຄະດີອຸປະຕິເຫດ ພາຍຫຼັງທີ່ເຫດເກີດຂຶ້ນແລ້ວຜູ້ກະທຳຜິດເກີດມີອາການເສັຍຈິດບໍ່ສາມາດຈື່ຈຳສິ່ງຕ່າງໆໄດ້ ກໍລະນີນີ້ໃນເມື່ອຜູ້ກ່ຽວມີພໍ່ແມ່ ຫຼື ຜູ້ປົກຄອງນັ້ນກໍຕ້ອງໄດ້ຮັບຜິດຊອບຄວາມເສັຍຫາຍທີ່ເກີດຂຶ້ນ.

### 3.2.3. ມາດຕະການຂອງສານຕໍ່ນິບຸກຄົນທີ່ຖືກຍຸບເລີກ

ມາດຕະການຂອງສານຕໍ່ນິຕິບຸກທີ່ຖືກຍຸບເລີກ ແມ່ນການຍຶດ ຫຼື ອາຍັດຊັບຂອງນິຕິບຸກຄົນທີ່ເປັນຜູ້ຮັບຜິດຊອບທາງແພ່ງ ຫຼື ຜູ້ໃຊ້ແທນຄ່າເສັຍຫາຍຊຶ່ງໄດ້ຖືກຍຸບເລີກກ່ອນ ຫຼື ພາຍຫຼັງທີ່ສານໄດ້ອອກຄຳຕັດສິນ ຫຼື ຄຳພິພາກສາເປັນຜູ້ລົ້ມລະລາຍທາງດ້ານວິສະຫະກິດ; ເພື່ອຮັບປະກັນການພິຈາລະນາຕັດສິນຂອງສານປະຊາຊົນໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ສ້າງຄວາມສະດວກໃຫ້ແກ່ດຳເນີນຄະດີໃຫ້ຖືກຕ້ອງ ແລະ ຍຸຕິທຳ.

ສານຈະນຳໃຊ້ມາດຕະການຍຶດ ຫຼື ອາຍັດຊັບຂອງນິຕິບຸກຄົນທີ່ເປັນຜູ້ຮັບຜິດຊອບທາງແພ່ງ ຫຼື ຜູ້ໃຊ້ແທນຄ່າເສັຍຫາຍຊຶ່ງໄດ້ຖືກຍຸບເລີກກ່ອນ ຫຼື ພາຍຫຼັງທີ່ສານໄດ້ອອກຄຳຕັດສິນ ຫຼື ຄຳພິພາກສາກໍໄດ້ໂດຍໃຫ້ອອກຄຳສັ່ງຍຶດ ຫຼື ອາຍັດຊັບ. ເມື່ອອອກຄຳສັ່ງຍຶດ ຫຼື ອາຍັດຊັບໄວ້ແລ້ວຕ້ອງທຳການແກ້ໄຂບັນຫາດັ່ງກ່າວກັບຜູ້ທີ່ຮັບຜິດຊອບຊັບສິ່ງຂອງຂອງນິຕິບຸກຄົນທີ່ໄດ້ຖືກຍຸບເລີກນັ້ນໃຫ້ສຳເລັດໃນກຳນົດບໍ່ໃຫ້ເກີນ ສາມສິບວັນ ພາຍຫຼັງທີ່ສານໄດ້ຕັດສິນເປັນຕົ້ນໄປ, ສຳລັບການຊຳລະສະສາງໜີ້ສິນ ໃນກໍລະນີທີ່ວິສາຫະກິດໄດ້ລົ້ມລະລາຍນັ້ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ[38].

---

[38] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 136

ການອອກມາດຕະການຕໍ່ນິຕິບຸກຄົນທີ່ຖືກຍຸບເລີກນັ້ນ ຕ້ອງອີງໃສ່ເງື່ອນໄຂດັ່ງນີ້ ຕ້ອງມີການຮ້ອງຂໍຂອງຄູ່ຄວາມທີ່ຍື່ນຕໍ່ສານ, ສານສາມາດອອກຄໍາສັ່ງໂດຍສານເອງຫາກຮູ້ໄດ້ເຖິງຂໍ້ມູນທີ່ແນ່ນອນຂອງຊັບທີ່ພົວພັນກັບຄະດີ ຫຼື ສານເຫັນໄດ້ວ່າການເຄື່ອນໄຫວຂອງຜູ້ກ່ຽວແມ່ນແຕະຕ້ອງເຖິງຜົນປະໂຫຍດຂອງລັດ.

ສັງລວມແລ້ວ ການອອກມາດຕະການຕໍ່ນິຕິບຸກຄົນທີ່ຖືກຍຸບເລີກແມ່ນຕ້ອງສາມາດຮູ້ໄດ້ຂໍ້ມູນຫຼັກຖານ ແລະ ຊັບທີ່ພົວພັນຄະດີ ເມື່ອເຫັນວ່າການດໍາເນີນທຸລະກິດຮຸ້ນສ່ວນນັ້ນຫຼຸບທຶນ ແລະ ບໍ່ສາມາດແກ້ໄຂສະພາບການເງິນ ຫຼື ມີເຫດພາວະວິໄສທີ່ພາໃຫ້ວິສະຫະກິດນັ້ນບໍ່ສາມາດດໍາເນທຸລະກິດໄປໄດ້ ແລະ ຂາຮຸ້ນໃດໜຶ່ງກໍາລັງກະທໍາການລະເມີດສັນຍາຊຶ່ງສ້າງຄວາມເສັຍຫາຍຢ່າງຮ້າຍແຮງຕໍ່ວິສະຫະກິດຂອງນິຕິບຸກຄົນ ເຊັ່ນ ບໍລິສັດປຸງແຕ່ງໄມ້, ບໍລິສັດຜະລິດເຈັ້ຍ... ທີ່ຖືກຍົກເລີກເປັນຜູ້ຮັບຜິດຊອບທາງແພ່ງ ຫຼື ຜູ້ໃຊ້ແທນຄ່າເສັຍຫາຍສານຈະນໍາໃຊ້ມາດຕະການ ຄືອອກຄໍາສັ່ງຢຶດ ຫຼື ອາຍັດຊັບຂອງນິຕິບຸກຄົນຊຶ່ງໄດ້ຖືກຍຸບເລີກ ຫຼື ລົ້ມລະລາຍກ່ອນ ຫຼື ຫຼັງທີ່ສານໄດ້ອອກຄໍາຕັດສິນ ຫຼື ຄໍາພິພາກສາກໍໄດ້ຕາມທີ່ໄດ້ລະບຸໄວ້ໃນມາດຕາ 136 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ແລະ ຕາມກົດໝາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ.

ການນໍາໃຊ້ມາດຕະການຕໍ່ນິຕິບຸກຄົນທີ່ຖືກຍຸບເລີກ ແມ່ນມີຜົນດີໃຫ້ແກ່ຄູ່ຄວາມ ໂດຍສະເພາະແມ່ນການປົກປ້ອງສິດຜົນປະຂອງເຈົ້າໜີ້ທີ່ຈະໄດ້ຮັບຄວາມອັບປະໂຫຍດຈາກການຫຼັກທຶນ ຈາກການເຄື່ອນໄຫວທຸລະກິດຂອງລູກໜີ້ ແລະ ເພື່ອຮັບປະກັນເວລາ ສານໄດ້ລົງຄໍາຕັດສິນແລ້ວຊັບສິນຂອງລູກໜີ້ ຈະບໍ່ຖືກຈໍາໜ່າຍອອກກ່ອນຊໍາລະໜີ້, ເຈົ້າໜີ້ຈະໄດ້ຮັບການໃຊ້ແທນເງິນຄືນ, ທັງເຮັດໃຫ້ຄໍາຕັດສິນຂອງສານມີຜົນສັກສິດ ພ້ອມທັງສ້າງເງື່ອນໄຂສະດວກແກ່ສານໃນການເກັບກໍາຂໍ້ມູນຫຼັກຖານ ໃຫ້ໄດ້ຢ່າງຄົບຖ້ວນ ຮອບດ້ານ ນັ້ນສານມີສິດອອກມາດຕະການຕໍ່ນິຕິບຸກຄົນທີ່ຖືກຍຸບເລີກຕາມການຮ້ອງຂໍຂອງຄູ່ຄວາມ ຫຼື ຕາມຄໍາເຫັນຂອງສານ ຫຼື ໂດຍໜ້າທີ່ຂອງສານ.

ມາດຕະການຕໍ່ນິຕິບຸກຄົນທີ່ຖືກຍຸບເລີກ ແມ່ນຜົນສະທ້ອນໂດຍກົງຕໍ່ບຸກຄົນ, ນິຕິບຸກຄົນທີ່ຖືກຍົກເລີກເນື່ອງຈາກວ່າພາຍຫຼັງທີ່ເຫັນວ່າວິສາຫະກິດ ຫຼື ຜູ້ດໍາເນີນທຸລະກິດເອງນັ້ນບໍ່ສາມາດເຄື່ອນໄຫວກິດຈະການຂອງຕົນເອງຕໍ່ໄປແລ້ວ ສານຕ້ອງມີຄວາມຈໍາເປັນອອກຄໍາສັ່ງຍຶດ ຫຼື ອາຍັດຊັບສົມບັດຂອງວິສາຫະກິດທີ່ມີຢູ່ໄວ້ເສັຍກ່ອນແລ້ວ ຈຶ່ງກ້າວໄປສູ່ການປະກາດລົ້ມລະລາຍຂອງວິສາຫະກິດໂດຍສານ ກົງກັນຂ້າມ ຖ້າຫາກວິສາຫະກິດສາມາດເຄື່ອນໄຫວທຸລະກິດຂອງຕົນຢ່າງມີປະສິດທິຜົນ, ສາມາດຟື້ນຟູ ແລະ ທົດແທນໜີ້ສິນໃຫ້ແກ່ເຈົ້າໜີ້ເປັນທີ່ຮຽບຮ້ອຍແລ້ວສານກໍຈະຍົກເລີກຄໍາສັ່ງດັ່ງກ່າວ ແລະ ອະນຸຍາດໃຫ້ດໍາເນີນກິດຈະການຕໍ່ໄປ.

### 3.2.4. ການນໍາໃຊ້ມາດຕະການຂອງສານຕໍ່ຜົວ ຫຼື ເມັຍ

ມາດຕະການຂອງສານຕໍ່ຜົວ ຫຼື ເມັຍ ແມ່ນມາດຕະການປະເພດໜຶ່ງທີ່ມີຜົນບັງຄັບໃຫ້ຄູ່ຜົວ-ເມັຍ ໂດຍການຕັດເງິນເດືອນ ຫຼື ລາຍໄດ້ ຫຼື ຍຶດ ຫຼື ອາຍັດຊັບທີ່ຕົກເປັນພູດຂອງຜົວ ຫຼື ເມັຍເພື່ອປະຕິບັດພັນທະຈ່າຍຄ່າເບິ່ງແຍງລ້ຽງດູຜົວ ຫຼື ເມັຍທີ່ບໍ່ສາມາດດູແລຕົນເອງໄດ້ ເຊັ່ນ ຜົວ ຫຼື ເມັຍເສຍອົງຄະ, ໃບ້ບ້າເສັຍຈິດ, ເປັນພະຍາດຮ້າຍແຮງ, ເມັຍມີລູກນ້ອຍ ຫຼື ຖືພາມານ ແລະ ລູກທີ່ຍັງບໍ່ທັນເຖິງກະສຽນອາຍຸ ສິບແປດປີໄດ້ອາໄສຢູ່ນໍາຜົວ ຫຼື ເມັຍຕາມຄໍາຕັດສິນຂອງສານພາຍຫຼັງທີ່ຜົວ ຫຼື ເມັຍໄດ້ມີການຢ່າຮ້າງກັນ ທັງນີ້ເພື່ອຄວາມສະດວກໃນການດໍາເນີນຄະດີຂອງຜູ້ພິພາກສາເປັນໄປຕາມຂັ້ນຕອນ, ຖືກຕ້ອງຕາມກົດໝາຍ ແລະ ເຫດການຂອງຄະດີໃຫ້ສອດຄ່ອງກັນນັ້ນ ສານຕ້ອງໃຫ້ຄວາມເປັນທໍາແກ່ຄູ່ຄວາມທັງສອງຝ່າຍ ໂດຍການນໍາເອົາທຸກບັນຫາທີ່ຄູ່ຜົວເມັຍໄດ້ສະເໜີມາຫາສານນັ້ນມາຄົ້ນຄ້ວາວ່າມີເຫດຜົນ ຫຼື ບໍ່ແລ້ວ ຈຶ່ງອອກມາຕະການຕາມແຕ່ກໍລະນີທີ່ເຫັນວ່າເໝາະສົມ.

ການອອກມາດຕະການຕໍ່ຜົວ ຫຼື ເມັຍທີ່ໄດ້ມີການຢ່າຮ້າງກັນ ມີເງື່ອນໄຂດັ່ງນີ້:
ການຮ້ອງຂໍຂອງຄູ່ຄວາມ ຫຼື ຜູ້ປົກປ້ອງອື່ນ ເຊັ່ນ ຜູ້ປົກຄອງເດັກທີ່ບໍ່ເຖິງກະສຽນອາຍຸ, ຜົວຫຼືເມັຍ ບໍ່ສາມາດເບິ່ງແຍ່ງຕົນເອງໄດ້ຍ້ອນການເຈັບເປັນທີ່ເກີດຈາກໃນເວລາ ທັງສອງຢູ່ນໍາກັນ ຫຼື ການອອກຄໍາສັ່ງ ໂດຍຄໍາເຫັນຂອງສານ ຖ້າຫາກພົວພັນກັບຜົນປະໂຫຍດຂອງເດັກ.

ການນຳໃຊ້ມາດຕະການຕໍ່ຜົວ ຫຼື ເມັຍກໍເພື່ອຮັບປະກັນໃນການປົກປ້ອງສິດຜົນປະໂຫຍດຂອງຜົວ ແລະ ເມັຍ, ເດັກນ້ອຍທີ່ບໍ່ທັນ ເຖິງກະສຽນອາຍຸນັ້ນໃຫ້ໄດ້ຮັບການອຸດໜູນຕາມລະບຽບການ, ທັງຮັບປະກັນຄວາມປອດໄພທາງດ້ານຈິດໃຈ ຫຼື ການດຳລົງຊີວິດ ທີ່ພ່ອງໃສ ຂອງ ຜົວເມັຍ ອາດຈະກະທົບຈາກການຂັດແຍ່ງທີ່ເກີດຂຶ້ນດັ່ງນັ້ນ, ມາດຕະການຕໍ່ຜົວ ຫຼື ເມັຍ ກໍຍັງເປັນສິ່ງຊຸກຍູ້ໃຫ້ສານເຄື່ອນໄຫວຢ່າງຖືກເປົ້າໝາຍການດຳເນີນຄະດີ ລວມທັງສ້າງຄວາມສະດວກໃນການການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ມີຜົນສັກສິດ.

ມາດຕະການຕໍ່ຜົວ ຫຼືເມັຍ ຈະມີຜົນສະທ້ອນໂດຍກົງຕໍ່ກັບຄອບຄົວ ແລະ ຊັບສິນບັດ ຂອງພວກກ່ຽວເພາະເງິນເດືອນ ຫຼື ລາຍໄດ້ ຂອງຜົວ ຫຼື ເມັຍ ຈະຖືກຕັດຮອນມາໃຊ້ຈ່າຍ ຕາມຄຳສັ່ງຂອງສານ ບາງເທື່ອອາດຈະທົບຕໍ່ການດຳລົງຊີວິດຂອງພວກກ່ຽວ, ແຕ່ກໍບໍ່ຄວນຖືວ່າຈະສ້າງຄວາມອັບປະໂຫຍດ ແກ່ຜູ້ຖືກນຳໃຊ້ມາດຕະການເພາະສານຈະນຳໃຊ້ມາດຕະການນີ້ ກໍບົນພື້ນຖານ ການໃຫ້ຄວາມເປັນທຳແກ່ ຜົວ ຫຼືເມັຍ ຊຶ່ງບໍ່ສາມາດເບິ່ງແຍງຕົນເອງໄດ້ຍ້ອນເກີດຂຶ້ນໃນເວລາ ທີ່ທັງສອງຍັງມີ ສາຍພົວພັນຜົວເມັຍ ນຳກັນ, ສະນັ້ນ ເມື່ອເກີດມີບັນຫາທາງດ້ານຄອບຄົວໃນເວລານີ້ ທັງສອງກໍຕ້ອງມີຄວາມຮັບຜິດຊອບຮ່ວມກັນ ຈຶ່ງເປັນຖືກຕ້ອງ.

### 3.2.5. ມາດຕະການຂອງສານຕໍ່ເດັກ

ມາດຕະການຂອງສານຕໍ່ເດັກທີ່ບໍ່ທັນເຖິງອາຍຸ ສິບແປດປີ ແມ່ນມາດຕະການທີ່ມີລັກສະນະສຶກສາອົບຮົມ, ເບິ່ງແຍງລ້ຽງດູເດັກ ແລະ ຕິດຕາມການປະພຶດຂອງເດັກເພື່ອປົກປ້ອງ ແລະ ສິດຜົນປະໂຫຍດຂອງເດັກ; ຊຶ່ງອາດເປັນການດຳເນີນການທາງບໍລິຫານຕໍ່ເດັກໃນເມື່ອເດັກກະທຳຜິດກົດໝາຍ; ສານອາດຈະອອກຄຳສັ່ງໃດໜຶ່ງເພື່ອໃຫ້ຜູ້ປົກຄອງຂອງເດັກທີ່ມີຄະດີ ເຊັ່ນ ການເບິ່ງແຍງລ້ຽງດູເດັກ, ການແຕ່ງຕັ້ງຜູ້ປົກຄອງເດັກ, ການປິ່ນປົວ ແລະ ສຶກສາອົບຮົມເດັກ, ຕິດຕາມການປະພຶດຂອງເດັກ, ນຳເດັກໄປກວດ, ປິ່ນປົວພະຍາດ, ບໍ່ໃຫ້ເດັກໄປເຮັດວຽກງານໜັກ ຫຼື ວຽກງານອື່ນທີ່ ມີລັກສະນະທີ່ເປັນອັນຕະລາຍຕໍ່ສຸຂະພາບ ຂອງເດັກຕາມທີ່ໄດ້ກຳນົດໄວ້ໃນກົດໝາຍແຮງງານ, ລາຍງາຍຄວາມເປັນຈິງ ຕໍ່ສານໃນຄະດີເດັກ. ການດຳເນີນຄະດີອາຍາສຳລັບເດັກຕ້ອງຖືຜົນປະໂຫຍດຂອງເດັກ ເປັນປັດໃຈສຳຄັນ ທັງນີ້ກໍເພື່ອຮັບປະກັນການພິຈາລະນາຕັດສິນຂອງສານໃຫ້ມີລະອຽດອ່ອນ, ຄົບຖ້ວນ ແລະ ຈະແຈ້ງທັງເປັນບ່ອນອີງໃຫ້ແກ່ຜູ້ພິພາກສາໃນການເຄື່ອນໄຫວປະຕິບັດໜ້າທີ່ຢ່າງເໝາະສົມຕໍ່ເດັກ.

ການອອກມາດຕະການຕໍ່ເດັກ ແມ່ນຕ້ອງອີງໃສ່ເງື່ອນໄຂ ຄື ມີການຮ້ອງຂໍຂອງຄູ່ຄວາມ, (ພໍ່ ຫຼື ແມ່ຂອງເດັກ, ຜູ້ປົກປ້ອງເດັກ ຫຼື ຜູ້ປົກຄອງເດັກ ທີ່ກະທຳຜິດ) ຫຼື ອອກຄຳສັ່ງໂດຍສານ ຖ້າເຫັນວ່າມີຄວາມຈຳເປັນ ໃນການປົກປ້ອງເດັກບໍ່ໃຫ້ກະທົບກະເທືອນທາງດ້ານຮ່າງກາຍ ແລະ ສະພາບຈິດໃຈຂອງຜູ້ກ່ຽວ.

ການນຳໃຊ້ມາດຕະການຕໍ່ເດັກ ແມ່ນມີຄວາມສຳຄັນໃນການດຳເນີນຄະດີການອອກມາດຕະການຂອງສານຕ້ອງໄດ້ເອົາໃຈໃສ່ເປັນພິເສດເພື່ອຮັບປະກັນບໍ່ໃຫ້ເປັນການແຕະຕ້ອງທາງດ້ານຮ່າງກາຍ ແລະ ສະພາບຈິດໃຈຂອງເດັກສິ່ງສຳຄັນແມ່ນຕ້ອງໄດ້ຮັບການຮ່ວມມື, ປຶກສາຫາລືຈາກພໍ່ແມ່ ຫຼື ຜູ້ປົກຄອງເດັກເປັນຢ່າງດີ ລວມທັງການປ້ອງກັນບໍ່ໃຫ້ເດັກໄປກະທຳຜິດຕື່ມອີກ, ນອກນັ້ນການນາໃຊ້ມາດຕະການກໍຕ້ອງເຮັດຢ່າງຮີບດ່ວນ, ທັນເວລາ ແລະ ຮັກສາຄວາມລັບເພື່ອໃຫ້ເດັກກັບຄືນສູ່ຄອບຄົວ ແລະ ສັງຄົມງ່າຍຂຶ້ນ.

ການນຳໃຊ້ມາດຕະການຕໍ່ເດັກ ແມ່ນມີຜົນສະທ້ອນຕໍ່ຄອບຄົວຊຶ່ງສະແດງອອກໃນເມື່ອເດັກຫາກໄປກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນພາລະໃນການຮັບຜິດຊອບທົດແທນຄ່າເສັຍຫາຍກໍແມ່ນພໍ່ແມ່ ຫຼື ຜູ້ປົກຄອງ, ສຳລັບເດັກກໍຈະບໍ່ມີຜົນກະທົບທາງດ້ານຮ່າງກາຍ, ສະພາບຈິດໃຈ, ເຮັດໃຫ້ເດັກມີສຸຂະພາບຈິດທີ່ດີ ມີອະນາຄົດແຈ່ມໃສ ແລະ ສະແຫວງຫາຄວາມກ້າວໜ້າ, ດັ່ງນັ້ນ ໃນການອອກມາດຕະການຂອງສານ ຕ້ອງພິຈາລະນາຢ່າງທີ່ຖ້ວນ ບົນຫຼັກການປາບພະຍາດເອົາຄົນ ກໍຄືສ້າງເງື່ອນໄຂ ໃນການສຶກສາອົບຮົມໃຫ້ເດັກຮັກໃນສິ່ງທີ່ຖືກຕ້ອງ ບໍ່ກໍ່ຄວາມເສັຍຫາຍແກ່ຜູ້ອື່ນ ແລະ ເປັນເດັກດີຂອງຊາດ.

ນອກຈາກມາດຕະການຮີບດ່ວນຊົ່ວຄາວທີ່ໄດ້ອະທິບາຍມາຂ້າງເທິງ ຍັງມີມາດຕະການຊົ່ວຄາວອື່ນຂອງສານອີກຖ້າເຫັນວ່າມີຄວາມຈຳປັນ ຕ້ອງຄຸ້ມຄອງ ແລະ ນຳໃຊ້ຊັບສິ່ງຂອງທີ່ຂັດແຍ່ງກັນ ສານກໍສາມາດອອກຄຳສັ່ງໃຫ້ຄູ່

ຄວາມຝ່າຍໃດຝ່າຍໜຶ່ງ ຄຸ້ມຄອງ ຫຼື ນຳໃຊ້ ຊັບສິ່ງຂອງທີ່ ພົວພັນກັບຄະດີ ກ່ອນກໍໄດ້ຈົນກວ່າການດຳເນີນຄະດີສິ້ນສຸດ ເຊັ່ນ ການຂັດແຍ່ງ ກຳມະສິດທີ່ດິນນາ ສານຈະໃຫ້ຜູ້ເຄີຍຄອບຄອງມານັ້ນ ທຳການຜະລິດກ່ອນກໍໄດ້.

## 4. ການຂໍອຸທອນ, ປ່ຽນແປງ, ຂໍລຶບລ້າງຫຼືສະເໜີຄັດຄ້ານມາດຕະການຮັບປະກັນການຮ້ອງຟ້ອງ

ການຂໍອຸທອນ, ຂໍລຶບລ້າງຫຼືສະເໜີຄັດຄ້ານມາດຕະການຮັບປະກັນການຮ້ອງຟ້ອງ ແມ່ນການນຳໃຊ້ສິດໃນການດຳເນີນຄະດີເພື່ອປົກສິດ ແລະ ຜົນປະໂຫຍດຂອງຄູ່ຄວາມ ຖ້າວ່າຜູ້ພິພາກສາຫາກໄດ້ນຳໃຊ້ມາດຕະການຂອງສານທີ່ບໍ່ຖືກຕ້ອງແລ້ວ ກໍຈະສ້າງຄວາມເສຍປະໂຫຍດແກ່ຄູ່ຄວາມ ຊຶ່ງຈະນຳໄປສູ່ການຂໍອຸທອນ, ຂໍລຶບລ້າງ ຫຼື ມີການສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການປະຊາຊົນ ແຕ່ການຂໍອຸທອນ,ຫຼື ສະເໜີຄັດຄ້ານ ກ່ຽວກັບມາດຕະການຮັບປະກັນການຮ້ອງຟ້ອງ ຕ້ອງເຮັດຂຶ້ນພາຍໃນກຳນົດເວລາເຈັດວັນ ຫຼື ສິບວັນ ສຳລັບການຂໍລຶບລ້າງ ນັບແຕ່ວັນໄດ້ຮັບຊາບຄຳສັ່ງໃຫ້ປະຕິບັດມາດຕະການຂອງສານເປັນຕົ້ນໄປ. ພາຍຫຼັງຄູ່ຄວາມໄດ້ຮ້ອງຂໍໃຫ້ສານປະຊາຊົນໃຫ້ອອກມາດຕະການອາຍັດ ຫຼື ຍຶດຊັບຝ່າຍໃດຝ່າຍໜຶ່ງ ແລະ ເມື່ອສານໄດ້ຄົ້ນຄວ້າພິຈາລະນາແລ້ວ ເຫັນວ່າມູນຂໍ້ມູນຫຼັກຖານຄົບຖ້ວນ ສານປະຊາຊົນບ່ອນທີ່ກ່ຽວຂ້ອງກໍເປັນຜູ້ອອກຄຳສັ່ງຍຶດຊັບ ຫຼື ອາຍັດຊັບ, ແຕ່ຖ້າວ່າຄູ່ຄວາມ ຫຼື ຜູ້ເປັນເຈົ້າຂອງຊັບບໍ່ພໍໃຈກ່ຽວກັບການອອກມາດຕະການຂອງສານຄູ່ຄວາມມີສິດການຂໍອຸທອນມາດຕະການໄປຍັງສານຂັ້ນເທິງຖັດໄປ ພາຍໃນກຳນົດເວລາເຈັດວັນ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຄັດຄ້ານມາດຕະການນັ້ນໄດ້ ຖ້າເຫັນວ່າມາດຕະການຮັບປະກັນການຮ້ອງຟ້ອງນັ້ນ ບໍ່ຕ້ອງຖືກຕາມກົດໝາຍ ແລະ ສະພາບຄວາມເປັນຈິງ;

**ຕົວຢ່າງ:** ຄູ່ຄວາມໄດ້ຮ້ອງຂໍໃຫ້ສານປະຊາຊົນເຂດ ເປັນຜູ້ອອກຄຳສັ່ງອາຍັດຊັບຝ່າຍໃດຝ່າຍໜຶ່ງ ແຕ່ວ່າເຈົ້າກຳມະສິດບໍ່ພໍໃຈກັບການນຳໃຊ້ມາດຕະການຂອງສານ ຝ່າຍທີ່ຖືກອາຍັດຊັບກໍສາມາດຂໍອຸທອນມາດຕະການຂອງສານພາຍໃນພາຍໃນເຈັດວັນ ໄປຍັງສານປະຊາຊົນແຂວງ, ນະຄອນ; ເມື່ອສານໄດ້ຄົ້ນຄວ້າຫາກເຫັນວ່າການຮ້ອງຂໍຂອງຄູ່ຄວາມມີເຫດຜົນ ແລະ ມີຂໍ້ມູນຫຼັກຖານຄົບຖ້ວນ ແລະ ສອດຄອງກັບສະພາບຕົວຈິງແລ້ວສານປະຊາຊົນແຂວງ, ນະຄອນ ກໍຈະພິຈາລະນາລຶບລ້າງຄຳສັ່ງດັ່ງກ່າວ. ຖ້າບໍ່ມີເຫດຜົນ ສານປະຊາຊົນແຂວງ,ນະຄອນ ກໍຈະອອກຄຳສັ່ງ ຢັ້ງຢືນເອົາ ແລະ ຍັງໃຫ້ ສິດແກ່ ຄູ່ຄວາມຂໍລຶບລ້າງຄຳສັ່ງດັ່ງກ່າວ ໄປຍັງສານປະຊາຊົນພາກພາຍໃນກຳນົດເວລາສິບວັນ ເພື່ອພິຈາລະນາເປັນຂັ້ນລຶບລ້າງ, ເມື່ອເຫັນວ່າ ສານຂັ້ນລຸ່ມອອກຄຳສັ່ງຖືກຕ້ອງແລ້ວ ສານພາກກໍຈະອອກຄຳສັ່ງຢັ້ງຢືນເອົາ ຫຼື ບໍ່ຖືກຕ້ອງ ກໍຈະລຶບລ້າງຕາມແຕ່ລະກໍລະ.

ນອກນັ້ນ, ກົດໝາຍຍັງອະນຸຍາດໃຫ້ມີຂໍການລຶບລ້າງ ຫຼືປ່ຽນແປງເປົ້າໝາຍຂອງການຍຶດ ຫຼື ອາຍັດໃນເວລາດຳເນີນຄະດີຢູ່ສານ ທີ່ໄດ້ອອກມາດຕະການ ໂດຍບໍ່ມີກຳນົດເວລາໝາຍຄວາມວ່າ ຄູ່ຄວາມຈະຮ້ອງຂໍລຶບລ້າງ ຫຼື ປ່ຽນແປງເວລາໃດກໍໄດ້ ແລະ ຢູ່ສານທຸກຂັ້ນ, ແຕ່ຕ້ອງແຈ້ງໃຫ້ຄູ່ຄວາມຝ່າຍກົງກັນຂ້າມຮັບຮູ້ ແລະ ເຫັນດີເປັນເອກະພາບນຳ ສິ່ງສຳຄັນ ການຂໍລຶບລ້າງ ຫຼື ປ່ຽນແປງຄາສັ່ງຍຶດມາເປັນອາຍັດຊັບ ຫຼື ປ່ຽນແປງເປົ້າໝາຍ ຊັບທີ່ຍຶດ ຫຼື ອາຍັດ ມາເປັນຊັບຢ່າງອື່ນນັ້ນ ຕ້ອງໃຫ້ມີມູນຄ່າເທົ່າທຽມກັນກັບຊັບໄດ້ຍຶດ ຫຼື ອາຍັດກ່ອນແລ້ວ ທັງນີ້ ກໍເພື່ອເປັນການຮັບປະກັນການຮ້ອງຟ້ອງຂອງຄູ່ຄວາມ, ເວັ້ນເສຍແຕ່ ຄູ່ຄວາມຝ່າຍກົງກັນຂ້າມຫາກເຫັນດີເທົ່ານັ້ນ[39].

**ຕົວຢ່າງ:** ຄູ່ຄວາມໄດ້ຮ້ອງຂໍໃຫ້ສານ ຍຶດຊັບທີ່ພົວພັນຄະດີ ເຊັ່ນ ໃຫ້ຍຶດລົດບັນທຸກແຕ່ເມື່ອສານໄດ້ພິຈາລະນາແລ້ວ ແລະ ເຫັນວ່າມີຂໍ້ມູນຫຼັກຖານຄົບຖ້ວນສານກໍໄດ້ອອກຄຳສັ່ງຍຶດຊັບດັ່ງກ່າວ ແຕ່ຫາກວ່າຝ່າຍໃດໜຶ່ງເຫັນວ່າໄດ້ຮັບຄວາມເສຍປະໂຫຍດ ແລະ ບໍ່ຖືກກັບເປົ້າໝາຍໃນການຍຶດຄູ່ຄວາມສາມາດຂໍໃຫ້ສານປ່ຽນແປງ ຫຼື ລຶບລ້າງຈາກການຍຶດລົດບັນທຸກມາເປັນເຮືອນແທນກໍໄດ້.

ຕົວຢ່າງ: ຄູ່ຄວາມໄດ້ຂໍໃຫ້ສານອາຊັບທີ່ເປັນເຮືອນ ແລະ ລົດ ເມື່ອສານພິຈາລະນາແລ້ວເຫັນວ່າມີຂໍ້ມູນຫຼັກຖານທີ່ຄົບຖ້ວນ ສານຈຶ່ງໄດ້ອອກຄຳສັງອາຊັບເຮືອນ ແລະ ລົດ, ແຕ່ວ່າຈຳເລີຍບໍ່ພໍໃຈທີ່ໂຈດໄດ້ໃຫ້ສານອາຊັບຈຳ

---

[39] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 131

ເລີຍຈຶ່ງໄດ້ຮ້ອງຂໍລົບລ້າງ ຫຼື ປ່ຽນແປງຄໍາສັ່ງດັ່ງກ່າວມາເປັນການອາຊັບເຮືອນກໍໄດ້ເພາະວ່າການອາຍັດລົດ ແມ່ນເປັນເຄື່ອງມືຫາກິນຂອງຈໍາເລີຍ ສານຈຶ່ງສາມາດອອກຄໍາສັ່ງລົບລ້າງ ຫຼື ປ່ຽນແປງຄໍາສັ່ງດັ່ງກ່າວໄດ້.

## 5. ຜົນບັງຄັບຂອງຄໍາສັ່ງໃຫ້ປະຕິບັດມາດຕະການ

ຜົນບັງຄັບຂອງຄໍາສັ່ງໃຫ້ປະຕິບັດມາດຕະການຂອງສານ ແມ່ນເກີດຜົນບັງຄັບແກ່ຄູ່ຄວາມ, ໝາຍຄວາມວ່າ ເມື່ອສານໄດ້ອອກມາດຕະການໃດໜຶ່ງແລ້ວ ຊັບສິ່ງຂອງທີ່ເປັນເປົ້າໝາຍ ຂອງການອອກມາດຕະການນັ້ນ ແມ່ນຈະບໍ່ສາມາດນໍາໄປຊື້ຂາຍ ຫຼື ເຮັດຢ່າງໃດຢ່າງໜຶ່ງໄດ້ ຈົນກວ່າມີຄໍາສັ່ງ ຂອງສານໃຫ້ປ່ຽນແປງມາດຕະການນັ້ນ, ເຖິງວ່າຄູ່ຄວາມຍັງຮ້ອງຂໍອຸທອນຫຼື ຂໍລົບລ້າງມາດຕະການກໍຕາມ, ນອກນັ້ນ ກໍຍັງມີຜົນບັງຄັບປະຕິບັດສໍາລັບບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຂອງພັກ,ຂອງລັດ, ຂອງສັງຄົມທີ່ກ່ຽວຂ້ອງ ຕ້ອງໃຫ້ຄວາມຮ່ວມມືແກ່ພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ໃນການຈັດຕັ້ງປະຕິບັດມາດຕະການຕົວຈິງ ເພື່ອເຮັດໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມຍຸຕິທໍາຂອງສັງຄົມ; ຄໍາສັ່ງດັ່ງກ່າວຈະສິ້ນສຸດພາຍຫຼັງທີ່ສານໄດ້ອອກຄໍາຕັດສິນ ຫຼື ຄໍາພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ. ຊັບສິ່ງຂອງທີ່ຖືກຄຸ້ມຄອງ ຫຼື ຊີ້ຂາດ ຫຼື ຍຶດ ຫຼື ອາຍັດຊັບດ້ວຍຄໍາສັ່ງນັ້ນ ແລ້ວກໍຈະນໍາມາໃຊ້ແທນຄ່າເສຍຫາຍຕາມຄໍາຕັດສິນ ຫຼື ຄໍາພິພາກສາຂອງສານ[40].

ໃນກໍລະນີ ຄູ່ຄວາມບໍ່ປະຕິບັດຕາມພັນທະ ແລະ ມີເຈດຕະນາຫຼີກລ້ຽງບໍ່ຍອມປະຕິບັດຄໍາສັ່ງຂອງສານໂດຍເຈດຕະນາຫຼືຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຫຼື ບຸກຄົນອື່ນທີ່ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຄໍາຕັດສິນນັ້ນ ໄດ້ທໍາການນາບຂູ່, ໃຊ້ຄວາມຮຸນແຮງ ຫຼື ດວ້ຍຮູບການອື່ນກໍຈະມີຄວາມຜິດທາງອາຍາຕາມມາດຕາ 173 ຂອງກົດໝາຍອາຍາໄດ້ກໍານົດໄວ້ວ່າ: “ບຸກຄົນຜູ້ໃດຫາກບໍ່ປະຕິບັດຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາຂອງສານຈະຖືກລົງໂທດຕັດອິດສະຫຼະພາບແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ປັບໃໝແຕ່ 100.000 ກີບ ຫາ 5.000.000ກີບ[41].

## 6. ການຈັດຕັ້ງປະຕິບັດມາດຕະການຮັບປະກັນການຮ້ອງຟ້ອງ

ການຈັດຕັ້ງປະຕິບັດມາດຕະການຮັບປະກັນຮ້ອງຟ້ອງ ໃຫ້ການດໍາເນີນໄປຢ່າງຮັດກຸມ, ຄົບຖ້ວນ ແລະ ທັນກັບເວລາ ພ້ອມທັງຮັບປະກັນໃຫ້ມີຄວາມຖືກຕ້ອງ ແລະ ຍຸຕິທໍາສົມເຫດສົມຜົນ ແນໃສ່ເຮັດສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍດັ່ງນັ້ນ, ການຈັດຕັ້ງປະຕິບັດມາດຕະການຂອງສານຕ້ອງເຄົາລົບບົນພື້ນຖານກົດໝາຍ ເພາະຄໍາສັ່ງຂອງຄະນະສານຈະມີຜົນບັງຄັບປະຕິບັດຄືກັນກັບຄໍາຕົກລົງອື່ນຂອງສານ, ບຸກຄົນ, ການຈັດຕັ້ງ ຫຼື ວິສາຫະກິດທີ່ມີການລະເມີດເນື້ອໃນໃດໜຶ່ງຕາມທີ່ໄດ້ກໍານົດໄວ້ໃນຄໍາສັ່ງດັ່ງກ່າວຕ້ອງຮັບຜິດຊອບຕໍ່ກົດໝາຍ ແລະ ຜົນເສັຍຫາຍທັງໝົດທີ່ຕົນໄດ້ກໍ່ຂຶ້ນ;

ໃນການຈັດຕັ້ງປະຕິບັດມາດຕະການຂອງສານໂດຍສະເພາະ ແມ່ນຄໍາສັ່ງຍຶດ ຫຼື ອາຍັດຊັບຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນສານຕ້ອງຮຽກຄູ່ຄວາມເຂົ້າຮ່ວມເພື່ອແຈ້ງ ແລະ ແນະນໍາຄໍາສັ່ງຂອງສານໄປຕິດໄວ້ບ່ອນຊັບສິ່ງຂອງຕັ້ງຢູ່, ຫ້ອງການປົກຄອງບ້ານ, ສານປະຊາຊົນ ແລະ ຂະແໜງການທີ່ກ່ຽວຂ້ອງ ຫຼື ການຈັດຕັ້ງປະຕິບັດມາດຕະການອື່ນຂອງສານແມ່ນຂຶ້ນກັບແຕ່ລະມາດຕະການທີ່ກ່ຽວຂ້ອງ ສິ່ງສໍາຄັນ ຕ້ອງຮຽກຄູ່ຄວາມມາຮັບຊາບ ແລະ ແຈ້ງຄໍາສັ່ງດັ່ງກ່າວຕໍ່ອົງການປົກຄອງບ້ານ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ ແຈ້ງໃຫ້ເຈົ້າໜ້າທີ່ຕາຫຼວດເພື່ອຄຸ້ມຄອງ ແລະ ຕິດຕາມເອົາຈໍາເລີຍເຂົ້າມາສານ ຖ້າເປັນມາດຕະການຈໍາກັດບໍລິເວນ. ໃນການຈັດຕັ້ງປະຕິບັດມາດຕະການຂອງສານນັ້ນ ຖ້າວ່າຄູ່ຄວາມຝ່າຍໜຶ່ງຫາກເປັນຜູ້ຮ້ອງຂໍ ໃຫ້ຫາສານອອກມາດຕະການຜູ້ຮ້ອງຂໍໃຫ້ອອກມາດຕະການຮັບປະກັນການຮ້ອງຟ້ອງຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ຫຼື ສານຈະໃຫ້ຝ່າຍໃດໜຶ່ງໃຊ້ຈ່າຍກ່ອນກໍໄດ້ ຖ້າການອອກມາດຕະການຍ້ອນເຫດຜົນຂອງສານ.

---

[40]ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 140

[41]ກົດໝາຍວ່າດ້ວຍອາຍາ, ສະບັບປັບປຸງປີ 2005, ມາດຕາ 173

**ຕົວຢ່າງ : ໝາຍພາຕົວ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********00*******

ແຂວງ/ນະຄອນ.................

ສານ.......................... ເລກທີ........../........

ຄະນະສານ............. ລົງວັນທີ......................

## ໝາຍພາຕົວ

ຄະນະສານ................ຂອງສານປະຊາຊົນແຂວງ ..........................ຊຶ່ງປະກອບດ້ວຍ

ທ່ານ ......................................................................... ປະທານ

ທ່ານ ......................................................................... ເປັນຄະນະ

ທ່ານ ......................................................................... ເປັນຄະນະ

ນັ່ງພ້ອມດ້ວຍ ທ່ານ ............................................................... ຈ່າສານ

ໄດ້ເປີດປະຊຸມສານຂຶ້ນໃນວັນທີ ...................................ເວລາ ............... ຢູ່ທີ່ຫ້ອງປະຊຸມສານ ຂອງສານປະຊາຊົນ ແຂວງ .........................ເພື່ອພິຈາລະນາ ຄະດີ ........ ເລກທີ......../ຂຕ ລົງວັນທີ..........................

**ລະຫວ່າງ**

ທ້າວ/ນາງ...........................ນາມສະກຸນ....................ອາຍຸ........ປີ,ອາຊີບ...................,ສັນຊາດ...............

ປັດຈຸບັນຢູ່ໜ່ວຍ.............,ບ້ານ....................,ເມືອງ..................,ແຂວງ ..........................................ໂຈດ

ທ້າວ/ນາງ...........................ນາມສະກຸນ.......................ອາຍຸ........ປີ,ອາຊີບ...................,ສັນຊາດ................

ປັດຈຸບັນຢູ່ໜ່ວຍ...........ບ້ານ.................., ເມືອງ............................ແຂວງ...................................ຈຳເລີຍ

**ກ່ຽວເລື່ອງ:** ...........................................................................

ເຫັນວ່າຈຳເລີຍ/ພະຍານ ໄດ້ຮັບໝາຍຮຽກແລ້ວ ແຕ່ບໍ່ຍອມເຂົ້າມາຕາມໝາຍຮຽກຂອງເຖິງສານເຖິງ 3 ຄັ້ງ ຄື : ຄັ້ງທີໜຶ່ງ ວັນທີ .................., ຄັ້ງທີສອງ ວັນທີ ............., ຄັ້ງທີສາມ ວັນທີ ............................... ໂດຍບໍ່ມີເຫດຜົນ.

ເຫັນຕາມມາດຕາ 2(ໃໝ່) ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ

ເຫັນຕາມ ມາດຕາ 127 ຂອງກົດໝາຍວ່າດ້ວຍການດຳເນຄະດີແພ່ງ ສະບັບປັບປຸງ.

**ດ້ວຍເຫດນີ້**

ຄະນະສານ................ຂອງສານປະຊາຊົນ............... ແຂວງ/ນະຄອນ.......ຈຶ່ງໄດ້ອອກຄຳສັ່ງ ໃຫ້ເຈົ້າໜ້າທີ່ ປກສ ແຂວງ/ນະຄອນ......... ພາຕົວ ທ້າວ/ນາງ ................ ນາມສະກຸນ.................., ອາຍຸ...........ປີ, ອາຊີບ ............, ສັນຊາດ ................ ປັດຈຸບັນຢູ່ ເຮືອນເລກທີ .........., ໜ່ວຍ.............., ບ້ານ............, ເມືອງ..............., ແຂວງ/ນະຄອນ................. ເຂົ້າມາຫ້ອງການ ຂອງສານປະຊາຊົນ ແຂວງ/ນະຄອນ....... ໃນວັນທີ ............ເວລາ .... ໂມງ ຕອນ........... ເພື່ອພົບທ່ານ........... ຈຸດປະສົງ...............

ຄຳສັ່ງສະບັບນີ້ ມີຜົນບັງຄັບນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ໄດ້ພາຕົວຜູ້ກ່ຽວຕາມຄຳສັ່ງນີ້ແລ້ວ **ປະທານຄະນະສານ**

ວັນທີ .............................

ເຈົ້າໜ້າທີ່ຜູ້ປະຕິບັດ

**ເຊັນ** .....................

**ຂຽນຊື່ແຈ້ງ** ...............

**ຕົວຢ່າງ : ຄຳສັ່ງຍຶດ**

ສາທາລະນະລັດ ປະຊາທິປະໄຕ ປະຊາທິປະໄຕ ປະຊາຊົນລາວ<br>
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ<br>
----------==00==----------

ແຂວງ....................

ສານ...................... ເລກທີ........./.........

ຄະນະສານ................. ລົງວັນທີ..................

# ຄຳສັ່ງຍຶດຊັບ

ຄະນະສານ ........... ຂອງສານປະຊາຊົນ ແຂວງ ............................ ຊຶ່ງປະກອບດ້ວຍ
ທ່ານ ....................................................................................... ເປັນປະທານ
ທ່ານ ....................................................................................... ຄະນະ
ທ່ານ ....................................................................................... ຄະນະ
ນັ່ງພ້ອມດວ້ຍ ທ່ານ ................................................................. ຈ່າສານ

ໄດ້ເປີດປະຊຸມສານຂຶ້ນໃນວັນທີ .......... ເວລາ............ຢູ່ທີ່ຫ້ອງປະຊຸມສານປະຊາຊົນ........................ ແຂວງ/ນະຄອນ............................. ເພື່ອພິຈາລະນາຄະດີ.........../ຂຕ ລົງວັນທີ..............

**ລະຫວ່າງ**

ທ້າວ/ນາງ ..................... ນາມສະກຸນ..............ອາຍຸ.......... ປີ, ສັນຊາດ.............., ອາຊີບ..............., ປັດຈຸບັນຢູ່ໜ່ວຍ.............ບ້ານ........................., ເມືອງ ......................., ແຂວງ/ນະຄອນ.......................

ທ້າວ/ນາງ ...................... ນາມສະກຸນ............. ອາຍຸ........ປີ, ສັນຊາດ ..............., ອາຊີບ ......, ປັດຈຸບັນຢູ່ໜ່ວຍ..........ບ້ານ .................., ເມືອງ .................., ແຂວງ/ນະຄອນ.......................

ກ່ຽວເລື່ອງ: ..................................................

ເຫັນວ່າ ເພື່ອຮັບປະກັນການຮ້ອງຟ້ອງ, ປົກປ້ອງຜົນປະໂຫຍດຂອງລັດ, ສັງຄົມ, ຄູ່ຄວາມ ແລະ ເປັນປະໂຫຍດໃນການດຳເນຄະດີ.......................ຈຶ່ງຕົກລົງຍຶດຊັບດັ່ງຕໍ່ໄປນີ້:

..............................................................................................................................................
..............................................................................................................................................
..............................................................................................................................................

ເຫັນຕາມ ມາດຕາ 2 (ໃໝ່) ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ

ເຫັນຕາມ ມາດຕາ 122 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງ ເຫັນຕາມມາດຕາ 21 (ໃໝ່) ຂໍ້ 4 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງ

**ດ້ວຍເຫດນີ້**

ຄະນະສານ.................................ຂອງສານປະຊາຊົນ.............................ແຂວງ/ນະຄອນ ຈຶ່ງໄດ້ອອກຄຳສັ່ງ ໃຫ້ເຈົ້າໜ້າທີ່ປກສ ແຂວງ/ນະຄອນ ... ຍຶດຊັບຕາມທີ່ໄດ້ກ່າວ ມາຂ້າງເທິງນີ້ມາໄວ້ທີ່...............................

ຄຳສັ່ງສະບັບນີ້ມີຜົນບັງຄັບນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.ໄອຍະການ, (ໂຈດທາງແພ່ງ), ຈຳເລີຍ ຫຼື ບຸກຄົນທີສາມ ທີ່ມີຜົນປະໂຫຍດຮ່ວມ ມີສິດຂໍອຸທອນ ຫຼືຄັດຄ້ານ ຄຳສັ່ງສະບັບນີ້ ໄດ້ພາຍໃນກຳນົດ 7 ວັນ ນັບແຕ່ວັນຮັບຊາບເປັນຕົ້ນໄປ.

**ໄດ້ຍຶດຊັບດັ່ງກ່າວຕາມຄຳສັ່ງນີ້ແລ້ວ** **ໄດ້ຮັບຊາບຄຳສັ່ງຍຶດຊັບນີ້ແລ້ວ** **ປະທານຄະນະສານ**

ວັນທີ ....................................... ວັນທີ ............................

ເຈົ້າໜ້າທີ່ຜູ້ປະຕິບັດ ເຊັນ ............................

1. ເຊັນ ..................... ຊື່ແຈ້ງ ..........................
2. ເຊັນ .....................
3. ເຊັນ ....................

**ຕົວຢ່າງ : ຄຳສັ່ງອາຍັດ**

ສາທາລະນະລັດ ປະຊາທິປະໄຕ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------==00==----------

ແຂວງ/ນະຄອນ..................

ສານ................................. ເລກທີ........../.........

ຄະນະສານ......................... ລົງວັນທີ..........................

## ຄຳສັ່ງອາຍັດຊັບ

ຄະນະສານ ........... ................ຂອງສານປະຊາຊົນ ແຂວງ .................. ຊຶ່ງປະກອບດ້ວຍ

ທ່ານ ........................................................................................ ເປັນປະທານ

ທ່ານ ........................................................................................ ເປັນຄະນະ

ທ່ານ ........................................................................................ ເປັນຄະນະ

ນັ່ງພ້ອມດ້ວຍ ທ່ານ ........................................................................... ຈ່າສານ

ໄດ້ເປີດປະຊຸມສານຂຶ້ນໃນວັນທີ ......................... ເວລາ..................... ຢູ່ທີ່ຫ້ອງປະຊຸມສານ ຂອງສານປະຊາຊົນ ແຂວງ........................... ເພື່ອພິຈາລະນາຄະດີ................/ຂຕ ລົງວັນທີ........................

**ລະຫວ່າງ**

ທ້າວ/ນາງ ........................ນາມສະກຸນ..........ອາຍຸ ........ປີ, ສັນຊາດ................, ອາຊີບ..........., ປັດຈຸບັນ ຢູ່ໜ່ວຍ..........ບ້ານ ........................., ເມືອງ ................., ແຂວງ/ນະຄອນ...............................

ທ້າວ/ນາງ ......................ນາມສະກຸນ...........ອາຍຸ........ ປີ, ສັນຊາດ ................, ອາຊີບ.........., ປັດຈຸບັນ ຢູ່ໜ່ວຍ..........ບ້ານ ..............., ເມືອງ ..............., ແຂວງ/ນະຄອນ....................................

**ກ່ຽວເລື່ອງ:** ...............................................

ເຫັນວ່າ ເພື່ອຮັບປະກັນການຮ້ອງຟ້ອງ, ປົກປ້ອງຜົນປະໂຫຍດຂອງລັດ, ສັງຄົມ, ຄູ່ຄວາມ ແລະເປັນປະໂຫຍດໃນການດຳເນຄະດີ ..................... ຈຶ່ງຕົກລົງອາຍັດຊັບດັ່ງຕໍ່ໄປນີ້:

.............................................................................................................................

.............................................................................................................................

.............................................................................................................................

.............................................................................................................................

ເຫັນຕາມ ມາດຕາ 2 (ໃໝ່) ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ

ເຫັນຕາມ ມາດຕາ 123 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ເຫັນຕາມ ມາດຕາ 21 (ໃໝ່) ຂໍ້ 4 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງ ປີ 2006;

**ດ້ວຍເຫດນີ້**

ຄະນະສານ ............ ຂອງສານປະຊາຊົນ ແຂວງ/ນະຄອນ.............................. ຈຶ່ງໄດ້ອອກ ຄຳສັ່ງອາຍັດຊັບຕາມທີ່ໄດ້ກ່າວມາຂ້າງເທິງໄວ້ ແລະຫ້າມບໍ່ໃຫ້ຜູ້ໃດຜູ້ໜຶ່ງທຳການຊື້ຂາຍ, ມອບໂອນ, ຍົກຊັບ, ມອບຊັບ, ຊວດຈຳ, ປຸກສ້າງ, ຕໍ່ເຕີມ, ສ້ອມແປງ ແລະ ອື່ນໆ ກ່ຽວກັບຊັບດັ່ງກ່າວຈົນກວ່າຈະມີຄຳສັ່ງ ປ່ຽນແປງ ຫຼື ລົບລ້າງ.

ຄຳສັ່ງສະບັບນີ້ ມີຜົນບັງຄັບນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ໄອຍະການ, (ໂຈດທາງແພ່ງ), ຈຳເລີຍ ຫຼື ບຸກຄົນທີສາມ ທີ່ມີຜົນປະໂຫຍດຮ່ວມ ມີສິດຂໍອຸທອນ ຫຼື ຄັດຄ້ານ ຄຳສັ່ງສະບັບນີ້ ໄດ້ພາຍໃນກຳນົດ 7 ວັນ ນັບແຕ່ວັນຮັບຊາບເປັນຕົ້ນໄປ.

**ໄດ້ຮັບຊາບຄຳສັ່ງອາຍັດຊັບດັ່ງກ່າວແລ້ວ** **ປະທານຄະນະສານ**

ວັນທີ ......................................

ຜູ້ຮັບຊາບ.................................

ເຊັນ ....................ຊື່ແຈ້ງ..........

# ບົດທີ 3
# ການຄົ້ນຄວ້າຄະດີ

## 1. ຄວາມໝາຍຂອງການຄົ້ນຄວ້າຄະດີ

ບັນຫາ ຫຼື ຂໍ້ຂັດແຍ່ງທີ່ເກີດຂຶ້ນ ຊຶ່ງບໍ່ສາມາດຕົກລົງກັນໄດ້ ເມື່ອຝ່າຍໃດຝ່າຍໜຶ່ງຫາກໄດ້ຍື່ນຄໍາຮ້ອງຟ້ອງ ຫຼື ຮ້ອງຂໍໄປຫາສານ ຖ້າວ່າສານໄດ້ຮັບຄໍາຮ້ອງດັ່ງກ່າວມາພິຈາລະນາ **ເອີ້ນວ່າຄະດີ.**

ການຄົ້ນຄວ້າຄະດີ ແມ່ນການພິຈາລະນາບັນດາເອກກະສານ, ຂໍ້ມູນຫຼັກຖານຕ່າງໆ ທີ່ປະກອບຢູ່ໃນສໍານວນຄະດີຢ່າງລະອຽດຖີ່ຖ້ວນ, ຮອບດ້ານ ແລະພາວະວິໄສຂອງຜູ້ພິພາກສາ ເພື່ອໃຫ້ຂໍ້ຂັດແຍ່ງຕ່າງໆນັ້ນມີຄວາມແຈ້ງຂາວ, ສາມາດສະຫຼຸບເຫດການທັງໝົດຂອງຂໍ້ຂັດແຍ່ງໃນຄະດີນັ້ນໄດ້ເພື່ອນໍາມາພິຈາລະນາຕັດສິນໃນທີ່ປະຊຸມສານ.

ການຄົ້ນຄວ້າຄະດີຂອງສານປະຊາຊົນ ມີຫຼັກການ ແລະ ລະບຽບການທີ່ຄືກັນແຕ່ວິທີການຄົ້ນຄວ້າຂອງສານປະຊາຊົນແຕ່ລະຂັ້ນແມ່ນແຕກຕ່າງກັນໂດຍສະເພາະ ສານຂັ້ນຕົ້ນຈະຕ້ອງໄດ້ດໍາເນການເລີ່ມແຕ່ຕົ້ນເພື່ອຊອກຫາຂໍ້ມູນຫຼັກຖານໃຫ້ຄົບຖ້ວນ, ຮອບດ້ານ, ພາວະວິໄສ ແລະຮັດກຸມເພື່ອຮັບປະກັນການຕັດສິນຄະດີໃຫ້ມີຄວາມຍຸຕິທໍາ. ສະນັ້ນ ການຄົ້ນຄວ້າຄະດີຢູ່ສານຂັ້ນຕົ້ນຕ້ອງມີວິທີການທີ່ລະອຽດຮອບຄອບເພື່ອຮັບປະກັນການດໍາເນີນຄະດີໃຫ້ມີຄວາມຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ; ເຖິງຢ່າງໃດກໍຕາມການຮິບໂຮມຫຼັກຖານໂດຍພື້ນຖານແລ້ວ ແມ່ນຄູ່ຄວາມເປັນຜູ້ປະກອບຫຼັກຖານຢ່າງຄົບຖ້ວນເພື່ອສະເໜີຕໍ່ສານ ແຕ່ອີງຕາມສະພາບຕົວຈິງການປະກອບສໍານວນຄໍາຮ້ອງຟ້ອງ ແລະ ແກ້ຟ້ອງຕໍ່ສານຂອງຄູ່ຄວາມແມ່ນຍັງເຮັດບໍ່ໄດ້ດີອັນເນື່ອງມາຈາກພວກເຂົາເຈົ້າບໍ່ມີພື້ນຖານຄວາມຮູ້ທາງດ້ານກົດໝາຍ ແລະ ກໍຂາດທະນາຍຄວາມ ໃນການຊ່ວຍເຫຼືອພວກເຂົາໃນການກະກຽມເອກະສານຮ້ອງຟ້ອງຕໍ່ສານ ເຮັດໃຫ້ການປະກອບເອກະສານຮ້ອງຟ້ອງ ແລະ ແກ້ຟ້ອງຕໍ່ສານຍັງບໍ່ທັນຄົບຖ້ວນ, ສະນັ້ນ ຜູ້ພິພາກສາແລະ ຜູ້ຊ່ວຍຜູ້ພິພາກສາທີ່ເຮັດໜ້າທີ່ໂດຍກົງໃນການຄົ້ນຄວ້າຄະດີໃນສານຂັ້ນຕົ້ນ ຈຶ່ງຕ້ອງຮັບພາລະໜ້າທີ່ໜັກໜ່ວງໃນການເກັບກໍາຫຼັກຖານເພີ່ມເຕີມເພື່ອໃຫ້ຄະດີມີຄວາມແຈ້ງຂາວສາມາດຕັດສິນໄດ້[42].

ພາຍຫຼັງທີ່ຜູ້ພິພາກສາ ໄດ້ຮັບສໍານວນຄະດີຈາກຫົວໜ້າຄະນະສານທີ່ກ່ຽວຂ້ອງແລ້ວ ຕ້ອງເລີ່ມດໍາເນີນການຄົ້ນຄວ້າສໍານວນຄະດີທີ່ຕົນຮັບຜິດຊອບ ຕາມກໍານົດເວລາຂອງການພິຈາລະນາທີ່ໄດ້ກໍານົດໄວ້ໃນກົດໝາຍ (ມາດຕາ 179 ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ຂໍ້ຂັດແຍ່ງທາງແພ່ງ ແລະ ຄອບຄົວ 30 ວັນ, ແຮງງານ ແລະ ສາຍພົວພັນດ້ານບໍລິຫານ 20 ວັນ, ການຄ້າ ແລະ ເດັກ 15 ວັນ); ການຄົ້ນຄວ້າສໍານວນຄະດີໃນສານປະຊາຊົນຂັ້ນຕົ້ນ ແລະ ຂັ້ນອຸທອນ ມີຄວາມຄ້າຍຄືກັນທາງດ້ານຫຼັກການ ແລະ ວິທີການເຊັ່ນ: ຄົ້ນຄວ້າເນື້ອຄະດີ ແລະ ພິຈາລະນາໃນທີ່ປະຊຸມສານແຕ່ວ່າຂັ້ນຕອນ ແລະ ວິທີການລະອຽດນັ້ນ ແມ່ນມີຄວາມແຕກຕ່າງ ກັນໃນບາງດ້ານ ເຊັ່ນ ການຄົ້ນຄວ້າສໍານວນຄະດີຂອງສານຂັ້ນອຸທອນ ແມ່ນຕ້ອງໄດ້ເອົາໃຈໃສ່ບັນຫາທີ່ຄູ່ຄວາມຂໍອຸທອນນັ້ນ; ສໍານວນຄະດີທີ່ຈະນໍາມາຄົ້ນຄວ້ານັ້ນ ເຖິງວ່າຈະມີຄວາມແຕກຕ່າງກັນໃນບາງດ້ານກໍຕາມແຕ່ໂດຍພື້ນຖານແລ້ວ ປະກອບມີ: ຄໍາຮ້ອງຟ້ອງ, ຄໍາແກ້ຟ້ອງ ຫຼື ຄໍາຟ້ອງແຍ່ງ, ຄໍາໃຫ້ການ, ຫຼັກຖານຕ່າງໆ;

## 2. ຄວາມສໍາຄັນຂອງການຄົ້ນຄວ້າຄະດີ

ການຄົ້ນຄວ້າຄະດີ ແມ່ນມີຄວາມສໍາຄັນໃນການພິຈາລະນາບັນດາຂໍ້ມູນຫຼັກຖານ, ກວດກາ ແລະ ຊັ່ງຊາຕີລາຄາຫຼັກຖານໃຫ້ມີຄວາມຄົບຖ້ວນ, ຮອບດ້ານ ແລະແຈ້ງຂາວ ເພື່ອໃຫ້ການພິຈາລະນາຕັດສິນມີຄວາມຍຸຕິທໍາ.

ການຄົ້ນຄວ້າຄະດີ ເປັນຂັ້ນຕອນທີ່ມີຄວາມສໍາຄັນໃນການດໍາເນີນຄະດີເພາະຖືວ່າເປັນຂັ້ນຕອນທີ່ເອົາຂໍ້ມູນຫຼັກຖານ ແລະ ວິນິດໄສເຫດການຫຼັກຖານໃນສໍານວນຄະດີ ແລະ ເປັນບ່ອນອີງໃຫ້ແກ່ຜູ້ພິພາກສາໃນການພິຈາລະນາ

[42] ຫຼັກສູດສະຖາບັນຄົ້ນຄວ້າ ແລະຝຶກອົບຮົມ 2009 ຂອງສານປະຊາຊົນສູງສຸດ

ທາງດ້ານເນື້ອຄະດີ ແລະ ກົດໝາຍ ຊຶ່ງທຸກບັນຫາທີ່ ຄູ່ຄວາມສະເໜີຕໍ່ສານຕ້ອງໄດ້ຮັບການພິຈາລະນາ ເຖິງແມ່ນວ່າບັນຫາເຫລົ່ານັ້ນຈະມີເຫດຜົນ ຫຼື ບໍ່ມີເຫດຜົນກໍຕາມກໍສາມາດຮູ້ໄດ້ວ່າທຸກການສະເໜີໄດ້ຮັບການພິຈາລະນາຕ້ອງສະແດງອອກໃນການກຳນົດເຫດການຂອງຄະດີ ວ່າແມ່ນຂໍ້ຂັດແຍ່ງກ່ຽວກັບຫຍັງ ຂໍ້ຂັດແຍ່ງດັ່ງກ່າວກຳນົດໄວ້ໃນມາດຕາໃດຂອງກົດໝາຍ, ເຫດການກະທຳຜິດດັ່ງກ່າວຜິດຕໍ່ມາດຕາໃດຂອງກົດໝາຍ, ຊຶ່ງສານຂັ້ນຕົ້ນຕ້ອງໄດ້ກຳນົດເຫດການຂອງຄະດີຢ່າງຈະແຈ້ງ, ແລ້ວຈຳແນກອອກມາວ່າເຫດການດັ່ງກ່າວມີຂໍ້ຂັດແຍ່ງຈັກປະເດັນ ເມື່ອກຳນົດເຫດການ, ຂໍ້ຂັດແຍ່ງຂອງຄະດີຄົບຖ້ວນ, ການພິຈາລະນາ ແລະ ການວິນິດໄສຂອງສານຢູ່ໃນຄຳຕັດສິນກໍຕ້ອງບົນພື້ນຖານທີ່ກຳນົດຢູ່ໃນເນື້ອຄະດີຈະບໍ່ສາມາດນຳບັນຫາທີ່ບໍ່ໄດ້ກຳນົດໄວ້ໃນເນື້ອຄະດີມາວິນິດໄສ.

## 3. ວິທີການຄົ້ນຄວ້າຄະດີ

### 3.1. ຜູ້ຄົ້ນຄວ້າ ແລະ ການຄ້ານຕົວຜູ້ຄົ້ນຄວ້າຄະດີ

ຜູ້ຄົ້ນຄ້ວາຄະດີ ແມ່ນຜູ້ພິພາກສາທີ່ມີໜ້າທີ່ ແລະຄວາມຮັບຜິດຊອບໃນການຄົ້ນຄວ້າຄະດີຕາມການມອບໝາຍຂອງຫົວໜ້າຄະນະສາ[43] ແລະ ຢູ່ໃນຂອບເຂດຂອງກົດໝາຍທີ່ກຳນົດເພື່ອເຮັດໃຫ້ການແກ້ໄຂຄະດີໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະຖືກຕ້ອງສອດຄ່ອງຕາມກົດໝາຍ;

ການຄ້ານຕົວຜູ້ຄົ້ນຄວ້າຄະດີ ແມ່ນສິດຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ທີ່ບໍ່ເຫັນດີໃຫ້ຜູ້ພິພາກສາຜູ້ໃດຜູ້ໜຶ່ງເຂົ້າຮ່ວມໃນການດຳເນີນຄະດີ ຍ້ອນວ່າໃນກໍລະນີ ຜູ້ພິພາກສາ ຫຼື ຜູ້ຮັບຜິດຊອບຄະດີກຳລັງຄົ້ນຄວ້າຄະດີຢູ່ໃນໄລຍະເວລາດຳເນີນຄະດີ ຖ້າວ່າຄູ່ຄວາມໄດ້ຮູ້ແຈ້ງວ່າ ຜູ້ຄົ້ນຄວ້າຄະດີ ເປັນຍາດພີ່ນ້ອງ, ໝູ່ຄູ່ຮັກແພງຂອງຄູ່ຄວາມ ແລະມີຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດຝ່າຍໜຶ່ງຄູ່ຄວາມມີສິດຄັດຄ້ານຕົວຂອງຜູ້ຄົ້ນຄ້ວາຄະດີ ແລະໃຫ້ຜູ້ກ່ຽວຂໍຖອນຕົວຈາກການຄົ້ນຄວ້າຄະດີນັ້ນ. ເພື່ອໃຫ້ມີຄວາມໂປ່ງໃສ, ແຈ້ງຂາວ ແລະ ຍຸຕິທຳໃຫ້ແກ່ຄູ່ຄວາມໃນການດຳເນີນຄະດີຢູ່ສານປະຊາຊົນ ຊຶ່ງແນ່ໃສ່ແກ້ໄຂຂໍ້ຂັດແຍ່ງຕ່າງໆເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ ທີ່ຖືກລະເມີດຫຼືໂຕ້ແຍ່ງ ຊຶ່ງທັງໝົດນັ້ນແມ່ນພັນທະ ແລະ ຄວາມຮັບຜິດຊອບຂອງຜູ້ພິພາກສາທີ່ຕ້ອງຄົ້ນຄວ້າຄະດີຢ່າງລະອຽດ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ໂດຍລະນຶກຢູ່ສະເໝີວ່າການແກ້ໄຂຂໍ້ຂັດແຍ່ງ ຫຼືການໃຫ້ຄວາມຍຸຕິທຳ.

ຜູ້ພິພາກສາ ກຳລັງຄົ້ນຄວ້າຄະດີຢູ່ໃນໄລຍະເວລາດຳເນີນຄະດີຢູ່ນັ້ນ ເຖິງແມ່ນວ່າຜູ້ພິພາກສາ ບໍ່ໄດ້ແຈ້ງກໍຕາມແຕ່ຖ້າວ່າຄູ່ຄວາມໄດ້ຮູ້ແຈ້ງວ່າ ຜູ້ຄົ້ນຄວ້າຄະດີ ເປັນຍາດພີ່ນ້ອງ, ໝູ່ຄູ່ຮັກແພງຂອງຄູ່ຄວາມ ແລະ ມີຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດຝ່າຍໜຶ່ງຄູ່ຄວາມມີສິດຄ້ານຕົວຂອງຜູ້ຄົ້ນຄ້ວາຄະດີ ແລະ ໃຫ້ຜູ້ກ່ຽວຖອນຕົວຈາກການຄົ້ນຄວ້າຄະດີນັ້ນ. ເມື່ອມີການຖອນຕົວຫຼືຄ້ານຕົວ ໃນເວລາຄົ້ນຄວ້າຄະດີຄະນະສານຕ້ອງພິຈາລະນາສາເຫດຂອງການຖອນຕົວຫຼືຄ້ານຕົວດັ່ງກ່າວ ຖ້າຫາກມີເຫດຜົນຫົວໜ້າຄະນະສານຈະມອບຄະດີໃຫ້ຜູ້ພິພາກສາອື່ນເປັນຜູ້ທຳການຄົ້ນຄວ້າແທນ.

ສ່ວນການຄ້ານຕົວໃນທີ່ປະຊຸມສານ ຖ້າຫາກວ່າຜູ້ຄົ້ນຄວ້າຄະດີເປັນຍາດຕິພີ່ນ້ອງ, ມີຜົນປະໂຫຍດກັບຄູ່ຄວາມ ແລະ ໝູ່ຄູ່ຮັກແພງຂອງຄູ່ຄວາມ ໃນເວລາພວມດຳເນີນຄະດີ ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ແມ່ນບໍ່ຮູ້ວ່າຜູ້ກ່ຽວມີສ່ວນພົວພັນກັບຄະດີດັ່ງກ່າວນັ້ນ ຈົນມາເຖິງມື້ເປີດປະຊຸມສານ ຄູ່ຄວາມກໍສາມາດຄ້ານຕົວໄດ້ ແຕ່ຕ້ອງອະທິບາຍສາເຫດ ແລະ ເຫດຜົນການຄ້ານຕົວ ຖ້າມີເຫດຜົນກໍປ່ຽນຕົວຄະນະສານ ທີ່ຖືກຄ້ານຕົວນັ້ນ ຖ້າບໍ່ມີເຫດຜົນກໍສືບຕໍ່ພິຈາລະນາແຕ່ດີແທ້ ຖ້າມີການຄ້ານຕົວແລ້ວ ຕ້ອງໄດ້ປ່ຽນຜູ້ໃໝ່ມາເປັນຄະນະສານແທນ ເພື່ອຄວາມເຊື່ອໝັ້ນ ແລະ ຄວາມສະບາຍໃຈຂອງຄູ່ຄວາມ, ສ່ວນລາຍລະອຽດ ແມ່ນໄດ້ອະທິບາຍໃນຂໍ້ 3.1.3 ບົດທີ 5 ຂອງພາກທີ II.

---

[43] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 56 ແລະ186

### 3.2. ການຄົ້ນຄວ້າຄະດີ

ການຄົ້ນຄວ້າຄະດີເປັນຂັ້ນຕອນທີ່ມີຄວາມສຳຄັນໃນການດຳເນີນຄະດີ ເພາະຖືວ່າເປັນຂັ້ນຕອນທີ່ເກັບກຳຂໍ້ມູນ ຫຼັກຖານ ແລະ ເຫດການຂອງຄະດີ ຖ້າໃນຂັ້ນຕອນນີ້ດຳເນີນຢ່າງມີປະສິດທິພາບ ກໍຈະເຮັດໃຫ້ການແກ້ໄຂຄະດີມີຄວາມຖືກຕ້ອງ ແລະຍຸຕິທຳ ຊຶ່ງມີຫຼັກການຄົ້ນຄວ້າຄື:

#### 3.2.1. ການກຳນົດເຫດການຂອງຄະດີ

ໃນການກຳນົດເຫດການຂອງຄະດີຖືເປັນປະເດັນຫຼັກ ແລະ ເປັນຂັ້ນຕອນທີ່ສາມາດເຮັດໃຫ້ການດຳເນີນຄະດີດຳເນີນຖືກເປົ້າໝາຍແລະແກ້ໄຂປະເດັນຕ່າງໆໃຫ້ຖືກຕ້ອງຕາມຈຸດປະສົງຂອງຄູ່ຄວາມທີ່ສະເໜີຕໍ່ສານປະຊາຊົນ.ໂດຍ ບົນພື້ນຖານແລ້ວ ການກຳນົດເຫດການຂອງຄະດີ ແມ່ນອີງໃສ່ຄຳຮ້ອງຟ້ອງຂອງໂຈດ ແລະ ແກ້ຟ້ອງຂອງຈຳເລີຍເປັນພື້ນຖານ ນອກຈາກນັ້ນ ບັນດາຂໍ້ມູນຫຼັກຖານທີ່ທັງສອງຝ່າຍສະເໜີມານຳຄຳຮ້ອງຟ້ອງ ແລະ ແກ້ຟ້ອງນັ້ນກໍເປັນພື້ນຖານໃນການເຮັດໃຫ້ເຫດການຂອງຄະດີແຈ້ງຂາວຂຶ້ນ. ຖ້າຢາກເຮັດໃຫ້ການກຳນົດເຫດການຂອງຄະດີແຈ້ງຂາວ ແລະ ຊັດເຈນນັ້ນແມ່ນຕ້ອງຜ່ານການເກັບກຳຂໍ້ມູນຫຼັກຖານຢ່າງຄົບຖ້ວນ, ຮອບດ້ານ ແລະພາວະວິໄສ ຈຶ່ງສາມາດສະຫຼຸບເຫດການຂອງຄະດີຢ່າງຖືກຕ້ອງ ແລະ ຊັດເຈນໄດ້.

ການກຳນົດເຫດການຂອງຄະດີນັ້ນ ຕ້ອງກຳນົດນັບແຕ່ມື້ທີ່ມີສາຍພົວພັນເກີດຂຶ້ນຫາມື້ເກີດມີຂໍ້ຂັດແຍ່ງ ແລະ ເມື່ອເກີດມີຂໍ້ຂັດແຍ່ງແລ້ວໄດ້ມີການແກ້ໄຂແນວໃດຈົນຮອດມື້ມີການຮ້ອງຟ້ອງຕໍ່ສານ ເຊັ່ນ ສັນຍາກູ້ຢືມໃນການກຳນົດເຫດການຕ້ອງກຳນົດວ່າໂຈດ ແລະ ຈຳເລີຍໄດ້ເຮັດສັນຍາກູ້ຢືມກັນ ຫຼື ເອົາເງິນໃຫ້ກັນຢືມວັນເດືອນປີໃດ, ມີການຕົກລົງດອກເບ້ຍ, ຫຼັກຊັບຄ້ຳປະກັນແນວໃດ, ເມື່ອກູ້ຢືມກັນແລ້ວຈຳເລີຍໄດ້ປະຕິບັດພັນທະຈ່າຍຕົ້ນທຶນ ແລະ ດອກເບ້ຍແນວໃດ, ເປັນຫຍັງຈຶ່ງເກີດມີຂໍ້ຂັດແຍ່ງກັນຂຶ້ນ, ເມື່ອເກີດຂໍ້ຂັດແຍ່ງກັນຂຶ້ນແລ້ວໄດ້ມີການໄກ່ເກ່ຍ ຫຼື ຕົກລົງກັນແນວໃດກ່ອນຈະມາຟ້ອງຕໍ່ສານໂດຍທີ່ໂຈດຮ້ອງຂໍແນວໃດ ແລະ ຈຳເລີຍຮັບຮູ້ແນວໃດ[44].

ເຫດການຂອງຄະດີທີ່ກຳນົດຂຶ້ນຈະສັ້ນ ຫຼື ຍາວແມ່ນຂຶ້ນກັບແຕ່ລະປະເພດຄະດີແຕ່ສິ່ງສຳຄັນເນື້ອໃນຂອງເຫດການຄະດີຕ້ອງປະກອບດ້ວຍ ສາມ ເນື້ອໃນຕົ້ນຕໍ:

- ເຫດການທີ່ພາໃຫ້ມີນິຕິເຫດ ຫຼືມີສາຍພົວພັນຂອງຄູ່ຄວາມເກີດຂຶ້ນ;
- ມີການລະເມີດນິຕິເຫດ ຫຼືສາຍພົວພັນທີ່ຕົກລົງກັນນັ້ນ ແລະ ສ້າງຄວາມເສັຍຫາຍ;
- ມີການຮ້ອງຂໍໃຫ້ສານພິຈາລະນາແກ້ໄຂ.

**ຕົວຢ່າງ:** ໃນວັນທີ 12 ກຸມພາ 2013 ທ້າວ ກ ໄດ້ກູ້ຢືມເງິນນຳທ້າວ ຂ ຈຳນວນ 50.000.000 ກີບ, ດອກເບ້ຍ 5% ຕໍ່ເດືອນໂດຍເອົາທີ່ດິນ ແລະ ເຮືອນ ອອກຊື່ທ້າວ ບຸນມີ ກ ຕັ້ງຢູ່ບ້ານດອນແດງ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ ເປັນຫຼັກຊັບຄ້ຳປະກັນ, ກຳນົດເວລາກູ້ຢືມ 10 ເດືອນ, ຕາມສັນຍາກູ້ຢືມ ສະບັບລົງວັນທີ 12 ກຸມພາ 2013, ເມື່ອໝົດກຳນົດເວລາຂອງສັນຍາກູ້ຢືມແລ້ວ ທ້າວ ກ ບໍ່ຈ່າຍຕົ້ນທຶນ ແລະ ດອກເບ້ຍໃຫ້ທ້າວ ພູມີ ສະນັ້ນທ້າວ ຂ ຈຶ່ງທວງໃຫ້ທ້າວ ກ ຊຳລະທັງຕົ້ນທຶນ ແລະ ດອກເບ້ຍແຕ່ ທ້າວ ກ ບໍ່ຍອມຈ່າຍໂດຍອ້າງວ່າເຮັດທຸລະກິດລົ້ມຈົມ, ຊຶ່ງກໍໄດ້ມີການໄກ່ເກ່ຍກັນຢູ່ໜ່ວຍໄກ່ເກ່ຍຂັ້ນບ້ານແລ້ວແຕ່ ບໍ່ສາມາດຕົກລົງກັນໄດ້ສະນັ້ນທ້າວພູຈຶ່ງຮ້ອງຟ້ອງຕໍ່ສານເພື່ອທວງເອົາຕົ້ນທຶນ ຈຳນວນ 20.000.000 ກີບ ແລະດອກເບ້ຍ ຈຳນວນ 5% ຕໍ່ເດືອນ ຈົນຮອດມື້ສານຕັດສິນ.

#### 3.2.2. ການກຳນົດປະເດັນຂໍ້ຂັດແຍ່ງ

ການກຳນົດປະເດັນຂໍ້ຂັດແຍ່ງ ແມ່ນການຮຽບຮຽງເຫດການຂອງຄະດີ ຫຼື ປະເດັນທີ່ຄູ່ຄວາມຍັງບໍ່ເອກະພາບກັນ ຫຼື ບໍ່ສາມາດຕົກລົງກັນໄດ້ ເພື່ອໃຫ້ຜູ້ຄົ້ນຄວ້າຄະດີຊອກຫາປະເດັນຂໍ້ຂັດແຍ່ງ ທີ່ໂຈດສະເໜີຕໍ່ສານພິຈາລະນາມີຈັກປະເດັນ, ຊຶ່ງຕ້ອງແຍກໃຫ້ໄດ້ວ່າໂຈດຢາກໃຫ້ສານພິຈາລະນາແກ້ໄຂຫຍັງແທ້, ຖ້າບໍ່ຈະແຈ້ງຕ້ອງຮຽກໂຈດມາຊີ້ແຈງ

[44] ຫຼັກສູນສະຖາບັນຄົ້ນຄວ້າ ແລະຝຶກອົບຮົມ ປີ 2010 ຂອງສານປະຊາຊົນສູງສຸດ

ແລະ ສະຫຼຸບການຮ້ອງຂໍຕໍ່ສານວ່າມີຈັກປະເດັນ; ພ້ອມທັງກວດເບິ່ງເອກະສານທີ່ກ່ຽວຂ້ອງ ກັບແຕ່ລະປະເດັນ ເພື່ອຊອກຫາສາເຫດ ແລະ ເຫດຜົນການຮ້ອງຟ້ອງແລ້ວ ຈຶ່ງສະຫຼຸບຫຍໍ້ປະເດັນການຮ້ອງຟ້ອງຂອງໂຈດອອກມາຕ່າງຫາກວ່າມີຈັກປະເດັນ. ຫຼັງຈາກໄດ້ຂໍ້ສະຫຼຸບຂອງໂຈດແລ້ວ ກໍເລີ່ມກວດກາຄໍາແກ້ຟ້ອງຂອງຈໍາເລີຍ ວ່າມີການຮັບຮູ້ການຮ້ອງຟ້ອງຂອງໂຈດແນວໃດ, ຮັບຮູ້ທັງໝົດທຸກປະເດັນ ຫຼື ບາງປະເດັນ ຫຼື ປະຕິເສດບໍ່ຮັບຮູ້ຈັກປະເດັນ ຊຶ່ງຖ້າຜົນການກວດກາຄໍາແກ້ຟ້ອງເປັນແນວໃດ ຜູ້ຄົ້ນຄວ້າຄະດີ ສາມາດດໍາເນີນຄະດີຕໍ່ໄປຄື:

– ຖ້າມີການຮັບຮູ້ໝົດທຸກປະເດັນກໍພະຍາຍາມຮຽກຄູ່ຄວາມມາໄກ່ເກ່ຍ ເພື່ອຫຼີກລ້ຽງການຕັດສີນ, ຖ້າຕົກລົງກັນບໍ່ໄດ້ກໍໃຫ້ນໍາເອົາຄະດີດັ່ງກ່າວອອກພິຈາລະນາຕັດສີນໂດຍບໍ່ຈໍາເປັນ ຕ້ອງຊອກຫາພະຍານຫຼັກຖານເພີ່ມຕື່ມອີກ;

– ຖ້າຮັບຮູ້ບາງປະເດັນຕ້ອງກວດກາເບິ່ງວ່າຮັບຮູ້ປະເດັນໃດ, ຍັງຄ້າງປະເດັນໃດແລ້ວກໍສຸມໃສ່ຊອກຫາຂໍ້ມູນຫຼັກຖານມາແກ້ໄຂປະເດັນທີ່ຍັງບໍ່ທັນຮັບຮູ້ເອກະພາບນັ້ນເປັນຫຼັກ ເຊັ່ນ ໂຈດຮ້ອງຂໍມາ 4 ປະເດັນ, ຈໍາເລີຍຮັບຮູ້ 3 ປະເດັນ, ກໍຄວນສຸມໃສ່ຄົ້ນຄວ້າໃສ່ ແຕ່ໜຶ່ງປະເດັນທີ່ຍັງບໍ່ເອກະພາບກັນໂດຍຕ້ອງ ກວດຫຼັກຖານພະຍານຂອງສອງຝ່າຍຢ່າງຄົບຖ້ວນ ແລະ ຮອບດ້ານ;

– ຖ້າຈໍາເລີຍປະຕິເສດບໍ່ຮັບຮູ້ຈັກປະເດັນກໍສະເໜີໃຫ້ໂຈດສະແດງຂໍ້ມູນຫຼັກຖານ ເພື່ອສະໜັບສະໜູນການຮ້ອງຂໍຂອງຕົນຕໍ່ສານໂດຍໃຫ້ເຮັດແຕ່ລະປະເດັນວ່າປະເດັນໃດມີຫຼັກຖານອັນໃດແລ້ວ ຜູ້ຄົ້ນຄວ້າຄະດີສາມາດກວດກາຕາມ ແຕ່ລະປະເດັນດັ່ງກ່າວ;

ບັນຫາໃດທີ່ໂຈດສະເໜີໃນຄໍາຮ້ອງຟ້ອງນັ້ນຜູ້ຄົ້ນຄວ້າຄະດີຕ້ອງກໍາໃຫ້ໄດ້ວ່າບັນຫາເຫຼົ່ານັ້ນ ມີເປົ້າໝາຍແນວໃດໂດຍກໍານົດເປັນປະເດັນໄວ້ຢ່າງລະອຽດຈາກນັ້ນກໍຮຽບຮຽງຄືນ ການແກ້ຟ້ອງຂອງຝ່າຍ ຈໍາເລີຍວ່າບັນຫາໃດທີ່ໂຈດສະເໜີນັ້ນຈໍາເລີຍຮັບຮູ້ ແລະ ຍັງບັນຫາໃດທີ່ຂັດແຍ່ງກັນຢູ່, ການຂັດແຍ່ງນັ້ນ ມີປະເດັນແນວໃດ, ມີເປົ້າໝາຍເພື່ອຫຍັງ, ບັນຫາທີ່ຈະແກ້ໄຂ, ບັນຫາທີ່ຂັດແຍ່ງກັນນັ້ນມີອັນໃດ, ຕ້ອງການຫຼັກຖານໃດ ມາແກ້ໄຂປະເດັນຂັດແຍ່ງນັ້ນ;

**ຕົວຢ່າງ:** ທ້າວ ກ ໄດ້ຮ້ອງຟ້ອງໃຫ້ທ້າວ ຂ ໃຊ້ແທນເງິນຄ່າສ້ອມແປງລົດຄືນຜູ້ກ່ຽວ ຈໍານວນ 10.000.000 ກີບ; ປະເດັນທີ່ຕ້ອງຄົ້ນຄ້ວາແມ່ນ ກ ແລະ ຂ ມີການຕົກລົງເຮັດສັນຍານໍາກັນໂຈດມີສິດຮ້ອງຟ້ອງໄດ້ ຫຼື ບໍ່ ? ທັງສອງຕົກລົງການຊໍາລະສະສາງກັນແນວໃດ? ຈໍາເລີຍຮັບຮູ້ແນວໃດຕໍ່ການກ່າວອ້າງຂອງໂຈດຖ້າ ຂ ຮັບຮູ້ວ່າໜີ້ສິນທີ່ ກ ໄດ້ຮ້ອງຟ້ອງແລ້ວກໍບໍ່ຈໍາເປັນຈະຄົ້ນຫາຫຼັກຖານມາປະກອບຕື່ມອີກ, ກົງກັນ ຂ້າມຖ້າ ຂ ປະຕິເສດບໍ່ຮັບຮູ້ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງນັ້ນຜູ້ຮັບຜິດຊອບຄະດີຕ້ອງແນະນໍາໃຫ້ຜູ້ກ່ຽວເອົາຫຼັກຖານມາຢັ້ງຢືນ ເຊັ່ນ ໃບຮັບເງິນ, ບຶດບັນທຶກການຊໍາລະໜີ້ສິນ ແລະ ອື່ນໆ.

ການກໍານົດປະເດັນຂໍ້ຂັດແຍ່ງນັ້ນຜູ້ຄົ້ນຄວ້າຄະດີ ຕ້ອງພະຍາຍາມຮຽບຮຽງລໍາດັບເຫດການ ຂອງຄະດີບົນພື້ນຖານການກ່າວ ອ້າງຂອງໂຈດແລະຈໍາເລີຍ ແລະ ຂໍ້ມູນຫຼັກຖານຕ່າງໆໃນສໍານວນຄະດີຈາກນັ້ນ ຈະສະຫຼຸບວ່າສາເຫດພາໃຫ້ເກີດມີຂໍ້ຂັດແຍ່ງນັ້ນແມ່ນຍ້ອນສາເຫດໃດ, ເມື່ອຮູ້ສາເຫດການຂັດແຍ່ງກັນ ແລ້ວສາມາດກໍານົດໄດ້ວ່າບັນຫາທີ່ບໍ່ສາມາດແກ້ໄຂກັນໄດ້ໃນຜ່ານມາ ຊຶ່ງໂຈດສະເໜີໃຫ້ສານພິຈາລະນາມີຈັກບັນຫາ [45] ພ້ອມທັງການໂຕ້ຕອບຂອງຝ່າຍຈໍາເລີຍມີຈັກປະເດັນຈາກນັ້ນຜູ້ຄົ້ນຄວ້າຄະດີສາມາດ ສະຫຼຸບໂດຍພື້ນຖານວ່າມີການເອກະພາບກັນຈັກປະເດັນ ແລະ ຍັງຂັດແຍ່ງກັນມີຈັກປະເດັນ.

**ຕົວຢ່າງ:** ທ້າວ **ກ** (ໂຈດ) ອ້າງວ່າທ້າວ **ຂ** (ຈໍາເລີຍ)ໄດ້ກູ້ຢືມເງິນຈໍານວນ 30.000.000 ກີບ, ກໍານົດດອກເບ້ຍ 5% ຕໍ່ເດືອນ, ກໍານົດ 6 ເດືອນ, ໂດຍເອົາທີ່ດິນ ແລະ ເຮືອນຢູ່ບ້ານດອນແດງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນມາເປັນ ຫຼັກຊັບຄໍ້າປະກັນຕາມສັນຍາກູ້ຢືມ ສະບັບລົງວັນທີ 20 ມີນາ 2008, ຜ່ານມາທ້າວ **ຂ** ໄດ້ຊໍາລະດອກເບ້ຍໃຫ້ຕົນແລ້ວຈໍານວນ 4.000. 000 ກີບ, ເມື່ອໝົດກໍານົດເວລາຂອງສັນຍາແລ້ວທ້າວ **ຂ** ບໍ່ຍອມຊາລະຕົ້ນທຶນ

---

[45]ອີງຕາມ ພາກປະຕິບັດຕົວຈິງ ຂອງການຄົ້ນຄວ້າຄະດີຢູ່ສານປະຊາຊົນ

ແລະ ດອກເບ້ຍ ສະນັ້ນ ຕົນຈຶ່ງຮ້ອງຟ້ອງເພື່ອທວງເອົາເງິນຕົ້ນທຶນຈຳນວນ 30.000.000 ກີບ, ພ້ອມດ້ວຍດອກເບ້ຍ 10,000,000 ກີບ,ພ້ອມໃຫ້ຂາຍຫຼັກຊັບຄ້ຳປະກັນ ເພື່ອໃຊ້ແທນໜີ້ສິນທີ່ຍັງຄ້າງຄືນໃຫ້ແກ່ຕົນ.

ທ້າວ ຂ (ຈຳເລີຍ) ອ້າງວ່າໄດ້ກູ້ຢືມເງິນນຳທ້າວ ກ ຈານວນ 30.000.000ກີບ, ຕົກລົງດອກເບ້ຍ 5% ຕໍ່ເດືອນ, ຜ່ານມາໄດ້ຊຳລະຕົ້ນທຶນໃຫ້ທ້າວ ກ ແລ້ວຈຳນວນ 4.000.000 ກີບ, ສ່ວນທ້າວ ກ ຈະຂາຍຫຼັກຊັບຄ້ຳປະກັນນັ້ນ ເຫັນວ່າຕົນໄດ້ມອບທີ່ດິນ ແລະ ເຮືອນໃຫ້ທ້າວ ງ ແລ້ວ, ສະນັ້ນ ຕົນສະເໜີຂໍຊຳລະຕົ້ນທຶນຈຳນວນ 16.000.000 ກີບ, ພ້ອມດອກເບ້ຍຕາມກົດໝາຍ.

ເມື່ອເບິ່ງຕາມເຫດການມາຂ້າງເທິງນັ້ນເຫັນວ່າປະເດັນຂໍ້ຂັດແຍ່ງກັນນີ້ແມ່ນມີຄືເງິນຈຳນວນ 4.000.000 ກີບ ນັ້ນແມ່ນໄດ້ຈ່າຍຕົ້ນທຶນຫຼືດອກເບ້ຍກັນແທ້ຕ້ອງໄດ້ຊອກຫາເອກະສານມາອ້າງອີງ, ນອກນັ້ນປະເດັນ ໜຶ່ງອີກກໍແມ່ນ ຫຼັກຊັບຄ້ຳປະກັນວ່າມີການຄ້ຳປະກັນທ້າວ ກ ແທ້ບໍ່ຫຼືຄ້ຳປະກັນນາທ້າວ ງ ແລະໄດ້ມອບໃຫ້ທ້າວ ງ ໄປແລ້ວຊຶ່ງຕ້ອງ ໄດ້ຫາຂໍ້ມູນຫຼັກຖານມາອ້າງອີງ.

ເມື່ອຮູ້ປະເດັນຂັດແຍ່ງແລ້ວຕ້ອງກຳນົດໄດ້ວ່າບັນຫາທີ່ຍັງຂັດແຍ່ງກັນນັ້ນແມ່ນຫຍັງຕ້ອງການຫຼັກຖານອັນໃດ ປະກອບຜູ້ຄົ້ນຄວ້າຄະດີຕ້ອງໄດ້ເຮັດປະເດັນໄວ້ເພື່ອປະກອບຫຼັກຖານ ຫຼື ຂຶ້ນແຜນໄວ້ວ່າບັນຫາ ດັ່ງກ່າວຈະເອົາຫຼັກ ຖານໃດ, ຄຳໃຫ້ການຂອງໃຜ, ບັນຫາທີ່ຕ້ອງຖາມຜູ່ມາໃຫ້ການ ແຕ່ລະຄົນມີບັນຫາໃດສິ່ງນີ້ຕ້ອງໄດ້ເຮັດປະເດັນໄວ້ ແລະ ປະຕິບັດຕາມຂັ້ນຕອນ ຫຼື ແຜນການທີ່ກຳນົດໄວ້.

o ຮ່າງສະຫຼຸບປະເດັນຂັດແຍ່ງຄະດີ

| ໂຈດຮ້ອງຟ້ອງ | ຈຳເລີຍແກ້ຟ້ອງ | ປະເດັນຂັດແຍ່ງ |
|---|---|---|
| - ກູ້ຢືມ **10,000,000** ກີບ<br>- ດອກເບ້ຍ **5%/** ເດືອນ, ຍັງບໍ່ທັນຈ່າຍ<br>- ເອົາທີ່ດິນເປັນຫຼັກຊັບຄ້ຳປະກັນ | - ຢືມແທ້, ຈ່າຍແລ້ວ **3.000.000** ກີບ;<br>- ຈ່າຍດອກເບ້ຍແລ້ວ **2.000.00** ກີບ<br>- ຮັບຮູ້ການຄ້ຳປະກັນ | - ຍັງຄ້າງເທົ່າໃດ? ຕົ້ນທຶນ **10.000.000** ກີບ ຫຼື **3.000.000** ກີບ<br>- ຈ່າຍດອກເບ້ຍເທົ່າໃດແທ້ ? |

**3.2.3. ການກຳນົດຫຼັກຖານ**

ການກຳນົດຫຼັກຖານ ແມ່ນການກວດກາ, ເກັບກຳຂໍ້ມູນຫຼັກຖານ ແລະ ເພື່ອແກ້ໄຂແຕ່ລະປະເດັນຂັດແຍ່ງໃນ ຄະດີ ໃຫ້ດຳເນີນໄປຢ່າງມີຄວາມຄອບຖ້ວນ, ຮອບດ້ານ ແລະພາວະວິໄສ;

ການກຳນົດຂໍ້ມູນຫຼັກຖານນັ້ນຜູ້ຄົ້ນຄວ້າຄະດີ ຕ້ອງຮ່າງແຜນການຄົ້ນຄວ້າດຳເນີນຄະດີ (ມີເອກະສານຕິດຄັດ)ໂດຍ ແຜນການຄົ້ນຄວ້ານີ້ ຕ້ອງປະກອບດ້ວຍປະເດັນຂັດແຍ່ງ ແລະ ລາຍການຫຼັກຖານທີ່ຕ້ອງເກັບກຳເພື່ອນຳມາແກ້ໄຂ ແຕ່ລະປະເດັນຂັດແຍ່ງ, ກຳນົດຫຼັກຖານແຕ່ລະປະເພດ ແລະ ຫຼັກຖານໃດບໍ່ຄວນເກັບມາ; ໃນການເກັບກຳຂໍ້ມູນຫຼັກ ຖານນັ້ນ ບາງຄັ້ງຕ້ອງໄດ້ເອົາທັງຫຼັກຖານຕົ້ນຕໍ ແລະ ຫຼັກຖານສຳຮອງໄປພ້ອມໆກັນ, ບາງຄັ້ງຫຼັກຖານສຳຮອງກໍເປັນ ຫຼັກຖານຕົ້ນຕໍໄດ້ ທັງນີ້ຕ້ອງຂຶ້ນກັບປະເດັນຂັດແຍ່ງວ່າມີການຂັດແຍ່ງເລື່ອງຫຍັງ, ເມື່ອຮູ້ແລ້ວຈຶ່ງສາມດກຳນົດໄດ້ວ່າ ອັນໃດເປັນຫຼັກຖານຕົ້ນຕໍ ອັນໃດເປັນຫຼັກຖານສຳຮອງ.

**ຕົວຢ່າງ:** ສັນຍາກູ້ຢືມ ທີ່ມີການຂັດແຍ່ງເລື່ອງການບໍ່ທັນໄດ້ຮັບເງິນໝົດນັ້ນ ນອກຈາກສັນຍາກູ້ຢືມແລ້ວອັນ ຕົ້ນຕໍອີກອັນໜຶ່ງຕ້ອງກວດວ່າມີໃບຮັບເງິນຕົວຈິງບໍ່ ເພື່ອສົມທຽບກັບການກຳນົດ ໄວ້ໃນສັນຍາ.

ໃນການເກັບກຳຂໍ້ມູນຫຼັກຖານ ຕ້ອງເລີ່ມຈາກການກຳນົດຫຼັກຖານ ຈະສາມາດແກ້ໄຂບັນຫາຂໍ້ຂັດແຍ່ງໃນຄະດີໄດ້ ໂດຍແຕ່ລະປະເພດຂໍ້ຂັດແຍ່ງ ຈະຕ້ອງການຫຼັກຖານອັນໃດມາຢັ້ງຢືນ ຊຶ່ງແຕ່ລະປະເພດຂໍ້ຂັດແຍ່ງແມ່ນຕ້ອງການຫຼັກຖານຕ່າງກັນ ຂຶ້ນຢູ່ກັບຈຸດພິເສດ ແລະ ລັກສະນະຂອງປະເພດຂໍ້ຂັດແຍ່ງດັ່ງກ່າວ.

ການຄົ້ນຄວ້າຄະດີ ຍັງບໍ່ທັນມີຫຼັກການ, ລະບຽບການ ແລະ ວິທີການທີ່ແນ່ນອນຊັດເຈນ ທີ່ເປັນບ່ອນອີງໃຫ້ຜູ້ພິພາກສາໄດ້ນຳໃຊ້ຢ່າງເປັນເອກະພາບກັນໃນທົ່ວປະເທດ ທັງນີ້ກໍເນື່ອງຈາກວ່າຄະດີ ແຕ່ລະປະເພດແມ່ນມີລັກສະນະ ແລະຈຸດພິເສດທີ່ບໍ່ຄືກັນ, ດັ່ງນັ້ນ ການຄົ້ນຄວ້າ ຫຼືເກັບກຳຫຼັກຖານຕ້ອງອີງໃສ່ລັກສະນະ ແລະ ຈຸດພິເສດຂອງແຕ່ລະປະເພດຄະດີ, ສິ່ງສຳຄັນຕ້ອງກຳໃຫ້ໄດ້ວ່າຄະດີແຕ່ລະປະເພດນັ້ນ ມີຄວາມຈຳເປັນຕ້ອງເອົາຫຼັກຖານອັນໃດ ຫຼືຕ້ອງການຫຼັກຖານອັນໃດເປັນຕົ້ນຕໍ ຈຶ່ງສາມາດແກ້ໄຂຄະດີດັ່ງກ່າວນັ້ນໄດ້.

**ຕົວຢ່າງ:** ຂໍ້ຂັດແຍ່ງກ່ຽວກັບທີ່ດິນ ເປັນຂໍ້ຂັດແຍ່ງທີ່ສະລັບຊັບຊ້ອນ ຊຶ່ງການປະກອບຫຼັກຖານໃສ່ຂໍ້ຂັດແຍ່ງປະເພດນີ້ແມ່ນມີຄວາມຫຍຸ້ງຍາກ ຈຶ່ງພາໃຫ້ການເກັບກຳຂໍ້ມູນຫຼັກຖານ ຂອງສານຕໍ່ບັນຫາດັ່ງກ່າວ ມີອັນຜິດພາດ ແລະບໍ່ສອດຄ່ອງກັບປະເດັນທີ່ຂັດແຍ່ງ ສະນັ້ນ ໃນການຄົ້ນຄວ້າ ຫຼື ເກັບກຳຫຼັກຖານກ່ຽວກັບທີ່ດິນຕ້ອງເອົາໃຈໃສ່ຄື:

– ກ່ອນອື່ນໝົດຕ້ອງຮູ້ວ່າປະຫວັດຄວາມເປັນມາຂອງທີ່ດິນບ່ອນຂັດແຍ່ງກັນມີຄວາມເປັນມາແນວໃດໝາຍຄວາມວ່າ ເຄົ້າມູນຂອງດິນເບື້ອງຕົ້ນເປັນຂອງໃຜ? ໂດຍກວດເບິ່ງເອກະສານເຄົ້າມູນຂອງທີ່ດິນມີຄືແນວໃດ?

– ໃຜເປັນຜູ້ຄຸ້ມຄອງໃນປັດຈຸບັນ, ການໄດ້ສິດໃນການຄຸ້ມຄອງນັ້ນ ແມ່ນຍ້ອນການມອບ, ການຊື້ ຫຼື ດ້ວຍວິທີໃດ?ແລະຄຸ້ມຄອງມາຈັກປີແລ້ວ;

– ເອກະສານຢັ້ງຢືນກຳມະສິດໃນທີ່ດິນປັດຈຸບັນມີຄືແນວໃດ, ອອກຊື່ໃຜ?

– ມີສິ່ງປຸກສ້າງໃນທີ່ດິນດັ່ງກ່າວ ຫຼືບໍ່, ສິ່ງປຸກສ້າງນັ້ນເປັນຂອງໃຜ, ສ້າງຂຶ້ນປີໃດ?

– ແລະບັນຫາອື່ນໆ ທີ່ສານຄວນຊອກຮູ້ ແລະ ເກັບກຳຂໍ້ມູນຫຼັກຖານຕາມເຫດການທີ່ຄູ່ຄວາມມີຂໍ້ຂັດແຍ່ງກັນບົນພື້ນຖານການກຳນົດປະເດັນຂັດແຍ່ງ ແລະ ການຕັ້ງປະເດັນສອບສວນຢ່າງພາວະວິໄສ.

**ຕົວຢ່າງ**: ການທວງເອົາການໃຊ້ແທນຄ່າເສັຍຫາຍ ແມ່ນບັນຫາທີ່ຍາກສຳລັບການປະກອບຫຼັກຖານ ແລະ ການຊັ່ງຊາຕີລາຄາຫຼັກຖານ ຊຶ່ງຄວາມເສັຍຫາຍທີ່ເກີດຂຶ້ນມັນມີໃນກໍລະນີປະເພດ, ໃນກໍລະນີຮູບການມີທັງເສຍຫາຍທາງດ້ານວັດຖຸ ແລະ ຈິດໃຈ ຊຶ່ງບາງຄວາມເສັຍຫາຍກໍບໍ່ສາມາດຊອກຫຼັກຖານມາ ຢັ້ງຢືນເປັນທີ່ແນ່ນອນໄດ້, ນອກນັ້ນໃນຕົວຈິງຜູ້ຖືກເສັຍຫາຍບໍ່ມັກ ເກັບຫຼັກຖານການໃຊ້ຈ່າຍຄ່າເສັຍຫາຍໄວ້ ຈຶ່ງພາໃຫ້ມີຄວາມຫຍຸ້ງຍາກ ແລະຕ້ອງໄດ້ເກັບກຳຫຼັກຖານຢ່າງລະອຽດ ແລະ ລະມັດລະວັງ ໂດຍມີຂັ້ນຕອນດັ່ງນີ້:

- ເຫດການເກີດຂຶ້ນຢູ່ໃສ, ເມື່ອໃດ, ສ້າງຄວາມເສັຍຫາຍແກ່ສິດຜົນປະໂຫຍດຂອງຜູ້ຮ້ອງຟ້ອງ ຫຼືບໍ່, ແລະສ້າງຄວາມເສັຍຫາຍແນວໃດ?

- ຄວາມເສັຍຫາຍທີ່ເກີດຂຶ້ນ ມາຈາກການກະທຳຂອງຂອງບຸກຄົນໃດ, ມີສາຍພົວພັນ ເຫດ ແລະ ຜົນແນວໃດ ຊຶ່ງບັນຫາດັ່ງກ່າວມັນຈຳເປັນຕ້ອງໄດ້ເກັບກຳຂໍ້ມູນຫຼັກຖານຢ່າງຈະແຈ້ງກ່ຽວກັບເຫດການຂອງຄະດີທີ່ເກີດຂຶ້ນກັບຜົນຈາກເຫດການດັ່ງກ່າວ;

- ຄວາມເສັຍຫາຍທີ່ເກີດຂຶ້ນມີຫຍັງແດ່ ເຊັ່ນ ລົດຕຳກັນ ອັນໃດເປ່ເພແດ່, ຄົນບາດເຈັບບໍ່,.. ມີຄວາມເສັຍຫາຍຫຼາຍປານໃດ ຊຶ່ງຄວາມເສັຍຫາຍດັ່ງກ່າວ ຕ້ອງມີເອກະສານຢັ້ງຢືນຢ່າງຄັກແນ່ ເຊັ່ນ ໃບບິນໃຊ້ຈ່າຍຄ່າສ້ອມແປງ, ຄ່າປິ່ນປົວ ແລະ ອື່ນໆ ຊຶ່ງເອກະສານເຫຼົ່ານັ້ນສານຕ້ອງໄດ້ເກັບກຳ ແລະ ເອົາມາໄວ້ໃນສຳນວນຄະດີ ໂດຍໃຫ້ຜູ້ຖືກເສັຍຫາຍສະຫຼຸບລວມມາແລ້ວ ສານຈະກວດກາສົມທຽບໃສ່ຫຼັກຖານວ່າ ມີຄວາມເຊື່ອຖືໄດ້ແນວໃດ, ເຊື່ອຖືໄດ້ທັງໝົດ ຫຼື ບາງສ່ວນ;

- ເມື່ອຮູ້ສາເຫດ ແລະ ມູນຄ່າຂອງຄວາມເສັຍຫາຍແລ້ວ ສານຕ້ອງຊອກຫຼັກຖານກ່ຽວກັບຄວາມຜິດຕໍ່ເຫດການວ່າໃຜເປັນຜູ້ມີຄວາມຜິດ, ໃຜຜິດໜ້ອຍ, ໃຜຜິດຫຼາຍ ຊຶ່ງບັນຫາດັ່ງກ່າວ ແມ່ນຕ້ອງອີງໃສ່ຫຼາຍປັດໃຈ ແລະສະພາບແວດລ້ອມອື່ນໆ ແຕ່ຖ້າເປັນການລະເມີດກົດຈາລະຈອນພາໃຫ້ເກີດອຸປະຕິເຫດ ຕ້ອງຊອກຫາຫຼັກຖານກ່ຽວ

ກັບບົດສະຫຼຸບຂອງເຈົ້າໜ້າທີ່ຕໍາຫຼວດ; ນອກນັ້ນ ຍັງຊອກຮູ້ວ່າ ມີຜູ່ກໍ່ຄວາມເສຍຫາຍ ຫຼື ຜູ່ຮັບຜິດຊອບຕໍ່ຄ່າເສຍຫາຍດັ່ງກ່າວຄົນດຽວ ຫຼື ໃນກໍລະນີຄົນ, ຮັບຜິດຊອບຝ່າຍດຽວ ຫຼື ທັງສອງຝ່າຍ ຊຶ່ງຕ້ອງໄດ້ແບ່ງຄວາມຮັບຜິດ ຊອບຕາມທີ່ກໍານົດໄວ້ໃນມາດຕາ 90 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນນອກສັນຍາ; ນອກນັ້ນ ຖ້າຜູ່ກໍ່ຄວາມເສຍຫາຍເປັນເດັກທີ່ບໍ່ເຖິງກະສຽນອາຍຸ ຫຼື ຜູ່ຮັບໃຊ້ ວຽກຕ້ອງເກັບກໍາຫຼັກຖານກ່ຽວກັບຜູ່ກ່ຽວຂ້ອງທີ່ຕ້ອງໄດ້ມາຮັບຜິດຊອບຄ່າເສັຍຫາຍວ່າ ແມ່ນໃຜຈະຮັບຜິດຊອບແທນຜູ່ກໍ່ຄວາມເສັຍຫາຍ, ໃຫ້ຜູ່ປົກຄອງ ຫຼື ຜູ່ໃຊ້ວຽກຮັບຜິດຊອບຕໍ່ຄ່າເສັຍຫາຍ ຕາມທີ່ກໍານົດໄວ້ໃນມາດຕາ 92 ແລະ 93 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນນອກສັນຍາ; ນອກນັ້ນ ຖ້າຜູ່ເສັຍຫາຍຫາກມີລາຍໄດ້ປະຈໍາ ສານຕ້ອງໄດ້ວິນິດໄສ ຄ່າປ່ອຍການອີກ ຕາມທີ່ກໍານົດໄວ້ ໃນມາດຕາ 91 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນນອກສັນຍາ; ໃນການຊອກຫຼັກຖານກ່ຽວກັບຄ່າເສັຍຫາຍນັ້ນ ຕ້ອງອີງໃສ່ໃບບິນທີ່ມີການຢັ້ງຢືນເປັນເອກະສານສໍາຄັນ.

### 3.2.4. ການກວດກາຫຼັກຖານ

ຜູ່ພິພາກສາ ຢູ່ໃນສານຂັ້ນຕົ້ນ ເປັນບຸກຄົນສໍາຄັນ ໃນການເກັບກໍາ, ຮິບໂຮມຫຼັກຖານ ເພື່ອໃຫ້ຄົບຖ້ວນແລ້ວນໍາມາຄົ້ນຄວ້າ, ໄຈ້ແຍກ, ຊັ່ງຊາຕີລາຄາຫຼັກຖານ; ຊຶ່ງການຊັ່ງຊາຕີລາຄາຫຼັກຖານນັ້ນຕ້ອງຢູ່ບົນພື້ນຖານຫຼັກຖານ ສາມປະເພດຄື: ຫຼັກຖານທາງດ້ານວັດຖຸ, ຫຼັກຖານທາງດ້ານເອກະສານ ແລະ ຫຼັກຖານທາງດ້ານບຸກຄົນ[46]. ໃນການເກັບກໍາຂໍ້ມູນຫຼັກຖານຄະດີ ຜູ່ຄົ້ນຄວ້າຄະດີຕ້ອງໄດ້ກວດກາ, ຊັ່ງຊາຕີລາຄາຫຼັກຖານແຕ່ລະຢ່າງທີ່ເກັບກໍາ ແລະ ຮິບໂຮມມາໄດ້ໃນສໍານວນຄະດີ ເພື່ອຕີລາຄາຄືນວ່າຄະດີດັ່ງກ່າວມີຫຼັກຖານຄົບຖ້ວນ ແລະ ເຫດການຂອງຄະດີແຈ້ງຂາວພໍສາມາດລົງຄໍາຕັດສິນໄດ້ຫຼືບໍ່; ຊຶ່ງປະຕິບັດຕາມແຜນການດໍາເນີນຄະດີ ແລະ ແຜນການເກັບກໍາຫຼັກຖານທີ່ກໍານົດໄວ້ ຜູ່ພິພາກສາຕ້ອງກວດກາຫຼັກຖານພຽງພໍແລ້ວ ຫຼືບໍ? ຖ້າຫາກຫຼັກຖານບໍ່ຄົບຖວ້ນ ກໍໃຫ້ຜູ່ຄົ້ນຄວ້າປະກອບຫຼັກຖານຄືນໃໝ່ ຊຶ່ງລະອຽດຢູ່ໃນບົດທີ 4 ຂອງພາກທີ II;

ຖ້າມີຫຼັກຖານຄົບຖ້ວນ ແລະເຫດການແຈ້ງຂາວແລ້ວ ກໍກະກຽມເພື່ອນໍາຜ່ານໝູ່ຄະນະເພື່ອນໍາອອກພິຈາລະນາໄຕ່ສວນໃນທີ່ປະຊຸມສານ. ຊຶ່ງລະອຽດແມ່ນຢູ່ບົດທີ 5 ຂອງພາກທີ II.

### 3.3. ການມີສ່ວນຮ່ວມຂອງຄູ່ຄວາມໃນການຄົ້ນຄວ້າຄະດີ

ການມີສ່ວນຮ່ວມຂອງຄູ່ຄວາມໃນການຄົ້ນຄວ້າ ແມ່ນມີສໍາຄັນໃນການເກັບກໍາຂໍ້ມູນຫຼັກຖານ ແລະ ປະກອບຫຼັກຖານໃຫ້ແກ່ສານ ຊຶ່ງເປັນພື້ນຖານຄົ້ນຄວ້າໃຫ້ມີຄວາມຄົບຖ້ວນ, ຮອບດ້ານ ແລະພາວະວິໄສ; ການໃຫ້ຄູ່ຄວາມມາມີສ່ວນຮ່ວມໃນການດໍາເນີນຄະດີແຕ່ເບື້ອງຕົ້ນ ໂດຍເອົາຄູ່ຄວາມມາມີສ່ວນຮ່ວມໃນການດໍາເນີນຄະດີເພື່ອຢັ້ງຢືນການຍື່ນເອກະສານ ແລະ ສະເໜີບັນຫາໃຫ້ສານພິຈາລະນາ ຫຼື ໃຫ້ຄູ່ຄວາມມາຊ້ອງໜ້າກັນເພື່ອຕົກລົງບັນຫາ ແລະສະເໜີວິທີແກ້ໄຂຮ່ວມກັບສານປະຊາຊົນ.

ພາຍຫຼັງສານກວດກາເອກະສານໃນເບື້ອງຕົ້ນທີ່ສາມາດສະຫຼຸບໄດ້ໂດຍພື້ນຖານແລ້ວທໍາອິດໃຫ້ຮຽກໂຈດ ແລະຈໍາເລີຍມາຊ້ອງໜ້າກັນ, ການຊ້ອງໜ້ານີ້ກໍເພື່ອຈຸດປະສົງ:

– ທໍາການປະນີປະນອມໄກ່ເກ່ຍຄູ່ຄວາມທັງສອງຝ່າຍ;

– ຢັ້ງຢືນການຮ້ອງຟ້ອງ-ແກ້ຟ້ອງຂອງແຕ່ລະຝ່າຍເພື່ອສະຫຼຸບເອກະພາບ, ຖ້າເປັນໄປໄດ້ເຮັດບົດບັນທຶກຕ່າງຫາກແລ້ວເຊັນຮັບຮູ້ເອກະພາບໃນການຮ້ອງຟ້ອງ;

– ການໃຫ້ຄູ່ຄວາມມີສ່ວນຮ່ວມໃນການດໍາເນີນຄະດີແຕ່ເບື້ອງຕົ້ນ ຊຶ່ງໃນນີ້ອາດຈະປຶກສາຫາລືຮ່ວມກັນເພື່ອຊອກຫາທາງອອກຮ່ວມກັນສາມຝ່າຍ: ສານ, ໂຈດ ແລະ ຈໍາເລີຍ ໂດຍສານເປັນໃຈກາງ. ໃນນີ້ອາດມີການວາງແຜນຮ່ວມກັນໃນການດໍາເນີນຄະດີ ແລະ ກໍານົດຂັ້ນຕອນການດໍາເນີນຄະດີ.

[46]ກົດໝາຍວ່າການດໍາເນີນຄະດີແພ່ງ, ສະບັບປັບປຸງ ປີ2012, ມາດຕາ 192 ແລະ 98

ໃນການຮຽກຄູ່ຄວາມເຂົ້າສານກໍເພື່ອໃຫ້ໂຈດ ແລະ ຈໍາເລີຍຮັບຮູ້ ແລະ ຢັ້ງຢືນຊ້ອງໜ້າວ່າຂໍ້ຂັດແຍ່ງມີຈັກປະເດັນ ແລະ ເອກະພາບກັນຈັກປະເດັນ; ນອກນັ້ນຍັງກວດສອບຂໍ້ມູນຫຼັກຖານວ່າໄດ້ຍື່ນໃຫ້ສານຄົບຖ້ວນແລ້ວບໍ່, ຍັງຫຼັກຖານໃດທີ່ຈະສະເໜີໃຫ້ສານລົງເກັບກໍາ ເຊັ່ນ ພະຍານມີຈັກຄົນ, ການລົງກວດກາສະຖານທີ່ຂັດແຍ່ງເມື່ອໃດ, ເພື່ອຈຸດປະສົງຫຍັງ; ນອກນັ້ນຂໍ້ມູນຫຼັກຖານທີ່ສານຄົ້ນຄວ້າເຫັນວ່າຕ້ອງໄດ້ສະເໜີໃຫ້ຄູ່ຄວາມຈະນໍາມາໃຫ້ສານໄດ້ບໍ່ ຫຼື ຂໍ້ມູນຫຼັກຖານນັ້ນມີທີ່ມາແນວໃດ, ໂດຍຮຽກຄູ່ຄວາມມາປຶກສາຫາລືຊ້ອງໜ້າ ແລະ ວາງແຜນການດໍາເນຄະດີຮ່ວມກັນ, ໃນໄລຍະນີ້ ສານກໍພະຍາຍາມທໍາການປະນີປະນອມໄກ່ເກັ່ຍໄປພ້ອມ ເມື່ອປຶກສາຫາລືກ່ຽວກັບແຜນການແລ້ວກໍໃຫ້ຄູ່ຄວາມເອກະພາບ ແລະ ເຊັນຢັ້ງຢືນໃນແຜນການຄົ້ນຄວ້າຄະດີແລ້ວ ມອບໃຫ້ຄູ່ຄວາມຄົນລະສະບັບເພື່ອຕິດຕາມ ແລະ ໃຫ້ຄວາມຮ່ວມມືໃນການດໍາເນຄະດີໃນຕໍ່ໜ້າ.

ໃນກໍລະນີຫຼັກຖານບໍ່ຄົບຖ້ວນ ເມື່ອຜູ້ພິພາກສາໄດ້ຄົ້ນຄວ້າ ແລະ ກວດກາທັງໝົດຄໍາຮ້ອງຟ້ອງຂອງໂຈດ ແລະ ຄໍາແກ້ຟ້ອງຂອງຈໍາເລີຍ ພ້ອມດ້ວຍຂໍ້ມູນຫຼັກຖານຂອງແຕ່ລະຝ່າຍຢ່າງລະອຽດແລ້ວ ເຫັນວ່າຂໍ້ມູນຫຼັກຖານຂອງຝ່າຍໂຈດ ຫຼືຝ່າຍຈໍາເລີຍບໍ່ຄົບຖ້ວນ, ພຽງພໍ ສານກໍຈະສະເໜີໃຫ້ຄູ່ຄວາມນໍາເອົາຂໍ້ມູນຫຼັກຖານມາປະກອບໃຫ້ຄົບຖ້ວນຕື່ມ ຫຼື ຊີ້ແຈງປະເດັນທີ່ບໍ່ທັນຈະແຈ້ງນັ້ນຕໍ່ສານ; ຖ້າຫາກບໍ່ມີ ຫຼື ໝົດແລ້ວ ສານກໍຈະໃຫ້ຝ່າຍໂຈດ ແລະ ຈໍາເລີຍຢັ້ງຢືນເປັນລາຍລັກອັກສອນຕໍ່ສານໄວ້ວ່າຂໍ້ມູນຫຼັກຖານແມ່ນໄດ້ສະເໜີຕໍ່ສານຢ່າງຄົບຖ້ວນແລ້ວ ຖ້າມີຄວາມຈໍາເປັນສານກໍຈະລົງເກັບກໍາຂໍ້ມູນຫຼັກຖານດ້ວຍສານເອງ ເຊັ່ນ ການລົງຊັນນະສູດສະຖານທີ່ບ່ອນທີ່ມີຂໍ້ຂັດແຍ່ງ, ການເອົາຄໍາໃຫ້ການຂອງພະຍານ, ການສົ່ງເອກະສານໄປໃຫ້ພາກສ່ວນທີ່ກ່ຽວຂ້ອງທໍາການພິສູດເປັນຕົ້ນລາຍເຊັນ, ການສົ່ງເອກະສານໄປໃຫ້ພາກສ່ວນທີ່ກ່ຽວຂ້ອງຢັ້ງຢືນຄວາມຖືກຕ້ອງເປັນຕົ້ນໃບຕາດິນ ແລະ ອື່ນໆ; ສ່ວນລະອຽດແມ່ນຂໍ້ 5.1.2 ຂອງບົດທີ 4 ພາກທີ II.

ໃນກໍລະນີຫຼັກຖານຄົບຖ້ວນ ຜູ້ພິພາກສາທີ່ຮັບຜິດຊອບຄະດີຄົ້ນຄວ້ານັ້ນ ກວດກາທັງໝົດຄໍາຮ້ອງຟ້ອງຂອງໂຈດ ແລະ ຄໍາແກ້ຟ້ອງຂອງຈໍາເລີຍ ພ້ອມດ້ວຍຂໍ້ມູນຫຼັກຖານຕ່າງໆ ຂອງແຕ່ລະຝ່າຍຢ່າງລະອຽດແລ້ວ ຜູ້ຄົ້ນຄວ້າເຫັນວ່າຂໍ້ມູນຫຼັກຖານຂອງຝ່າຍໂຈດ ຫຼື ຝ່າຍຈໍາເລີຍ ມີຄວາມຄົບຖ້ວນ, ພຽງພໍ ແລະແຈ້ງຂາວແລ້ວ ຜູ້ຄົ້ນຄວ້າກໍກະກຽມເພື່ອນໍາຜ່ານໝູ່ຄະນະ ເພື່ອນໍາອອກພິຈາລະນາໄຕ່ສວນໃນທີ່ປະຊຸມສານ; ສ່ວນລາຍລະອຽດ ແມ່ນຢູ່ຂໍ້ 3.5 ຂອງບົດທີ 5 ພາກທີ II.

### 3.4. ສະຫຼຸບຫຍໍ້ຜົນຂອງການຄົ້ນຄວ້າຄະດີ

ໃນການດໍາເນີນຄະດີ ຜູ້ຄົ້ນຄວ້າຕ້ອງໄດ້ສະຫຼຸບປະເມີນເປັນແຕ່ລະໄລຍະວ່າຄະດີດັ່ງ ກ່າວແຈ້ງຂາວ, ຫຼັກຖານທີ່ເກັບກໍາມາຄົບຖ້ວນ, ພຽງພໍທີ່ສາມາດຈະຕັດສິນໄດ້ແລ້ວບໍ່. ຖ້າເຫັນວ່າຂໍ້ມູນຫຼັກຖານຄົບຖ້ວນ, ພຽງພໍແລ້ວ ຜູ້ຄົ້ນຄວ້າຄະດີຕ້ອງເຮັດບົດສະຫຼຸບສັງລວມເຫດການຂໍ້ຂັດແຍ່ງ ແລະປະເດັນທີ່ຂັດແຍ່ງ ເປັນລາຍລັກອັກສອນ ເພື່ອກຽມນໍາສະເໜີຜ່ານກອງປະຊຸມວິຊາການ ຄວາມພ້ອມກ່ອນຈະນໍາຂຶ້ນໄຕ່ສວນ ແລະ ຕັດສິນທີ່ປະຊຸມສານ.

ໃນການເຂົ້າຜ່ານຄະດີນັ້ນ ຜູ້ຄົ້ນຄວ້າຄະດີຕ້ອງໄດ້ເຮັດບົດລາຍງານຫຍໍ້ໆກ່ຽວກັບຄະດີ ເພື່ອລາຍງານຕໍ່ຄະນະໂດຍກໍານົດເຫດການຂອງຄະດີ, ປະເດັນຂັດແຍ່ງ, ປະເດັນທີ່ເອກະພາບ ແລະປະເດັນໃດທີ່ຍັງມີຂໍ້ສົງໄສ ທີ່ຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າ ພ້ອມດ້ວຍຂໍ້ມູນຫຼັກຖານອ້າງອີງຕ່າງໆ, ແລະ ທີ່ສໍາຄັນແມ່ນຄໍາເຫັນຂອງຜູ້ຄົ້ນຄວ້າວ່າຈະແກ້ໄຂຄະດີດັ່ງກ່າວແນວໃດ, ອີງໃສ່ຫຼັກຖານໃດ; ເພື່ອລາຍງານຕໍ່ຄະນະ ຈາກນັ້ນ ຄະນະກໍປະກອບຄໍາເຫັນ ແລະ ຄົ້ນຄວ້າປະເດັນຂັດແຍ່ງກັນ ຊຶ່ງຜູ້ຮັບຜິດຊອບຕ້ອງໄດ້ລາຍງານ, ຊີ້ແຈງ ແລະ ສະແດງຂໍ້ມູນຫຼັກຖານອ້າງອີງ[47];

ການຜ່ານຄະດີໃນສານຂັ້ນຕົ້ນ ຖືໄດ້ວ່າມີຄວາມສໍາຄັນ ແລະ ຕ້ອງໄດ້ເຮັດຢ່າງລະອຽດຮອບຄອບ ເພື່ອຮັບປະກັນການຕັດສິນໃຫ້ຖືກຕ້ອງ ແລະ ມີຄວາມຍຸຕິທໍາ ສະນັ້ນ ການລາຍງານໃນເວລາຜ່ານຄະດີຕ້ອງລາຍງານຢ່າງລະອຽດຈະແຈ້ງ ເພື່ອໃຫ້ຄະນະສານໄດ້ກວດກາຊັ່ງຊາຕີລາຄາຫຼັກຖານ ໃນເບື້ອງຕົ້ນວ່າມີຂໍ້ມູນຫຼັກຖານຄົບຖ້ວນ ພໍສາມາດຕັດສິນໄດ້ບໍ່, ສະນັ້ນຜູ້ຄົ້ນຄວ້າຄະດີຕ້ອງເຂົ້າໃຈ ແລະ ກໍາເຫດການຂອງຄະດີຢ່າງລະອຽດຈະແຈ້ງວ່າຝ່າຍ

[47]ຫຼັກສູດການຄົ້ນຄ້ວາຄະດີ ຂອງສະຖາບັນຄົ້ນຄວ້າ ແລະຝຶກອົບຮົມ ຂອງສານປະຊາຊົນສູງສຸດ ປີ 2009

ໂຈດສະເໜີຫຍັງມີຫຼັກຖານອັນໃດ, ຝ່າຍຈຳເລີຍສະເໜີຫຍັງ, ມີຫຼັກຖານອັນໃດ ເພື່ອນຳສະເໜີ ແລະຊີ້ແຈງຕໍ່ຄະນະສານ. ສະນັ້ນເພື່ອເຮັດໃຫ້ຄະນະສານເຂົ້າໃຈ ແລະ ກຳໄດ້ປະເດັນຂໍ້ຂັດແຍ່ງ ເພື່ອເປັນຂໍ້ມູນໃນການຕັດສິນນັ້ນ ຜູ່ຮັບຜິດຊອບຄົ້ນຄວ້າຄະດີຕ້ອງລາຍງານຢ່າງຊັດເຈັນ ແລະ ຖືກຕ້ອງຕາມຄວາມເປັນຈິງ.

ໃນການລາຍງານຜ່ານຄະດີນັ້ນ ຜູ່ຮັບຜິດຊອບຄະດີຕ້ອງສະຫຼຸບໂດຍຫຍໍ້ປະເດັນທີ່ຂັດແຍ່ງກັນ ມີຈັກປະເດັນ ໂດຍສະເໜີເອກະສານທີ່ພົວພັນກັບປະເດັນທີ່ຂັດແຍ່ງນັ້ນວ່າມີຫຼັກຖານອັນໃດແດ່, ພ້ອມທັງຍົກຂໍ້ສັງເກດຈຸດບົກພ່ອງ ແລະ ຈຸດເດັ່ນຂອງເອກະສານຫຼັກຖານຕ່າງໆ ຕໍ່ທີ່ປະຊຸມເພື່ອຖົກຖຽງ ແລະ ພິຈາລະນາ ແຕ່ລະປະເດັນຢ່າງຮອບຄອບ ແລະ ຍຸດຕິທຳ.

ການລາຍງານຄະດີຈະເຮັດໃຫ້ຄະນະສານເຂົ້າໃຈຢ່າງຈະແຈ້ງນັ້ນແມ່ນຂຶ້ນກັບທັກສະ ແລະ ວິທີການຂອງແຕ່ລະຄົນ ແລະ ແຕ່ລະປະເພດຄະດີອີກດ້ວຍ ຊຶ່ງເນື້ອໃນການລາຍງານຕ້ອງປະກອບດ້ວຍ:

- ພາກລວມ: ເລກທີຄະດີ, ລົງວັນທີ, ຊື່ໂຈດ, ຈຳເລີຍ, ກ່ຽວເລື່ອງ;
- ພາກເນື້ອຄະດີ: ກຳນົດເຫດການໂດຍຫຍໍ້

ການກຳນົດເຫດການມີ2 ວິທີຄື: ວິທີທີ 1 ລາຍງານຕາມຄຳຮອງຟ້ອງຂອງໂຈດ ແລະ ຄຳແກ້ຟ້ອງຂອງຈຳເລີຍໂດຍຫຍໍ້; ວິທີທີ 2 ແມ່ນສັງລວມເອົາເຫດການຈາກທັງໝົດໃນສຳນວນຄະດີ (ຄຳຮ້ອງຟ້ອງ, ແກ້ຟ້ອງ ແລະ ເອກະສານອື່ນໆ ເມື່ອອ່ານແລ້ວຈະສະຫຼຸບໄດ້ວ່າເລື່ອງມັນເປັນແນວໃດ) ວິທີທີ 2 ນີ້ ບາງປະເພດຂໍ້ຂັດແຍ່ງບໍ່ສາມາດສະຫຼຸບເປັນເລື່ອງໄດ້ ຕ້ອງເວົ້າຕາມຄຳຮ້ອງຂອງແຕ່ລະຝ່າຍ (ຕາມວິທີທີ 1).

ການລາຍງານເນື້ອຄະດີທີ່ຢາກໃຫ້ເຂົ້າໃຈງ່າຍຕ້ອງລາຍງານຕາມລັກສະນະ ແລະ ຈຸດພິເສດຂອງຂໍ້ຂັດແຍ່ງເຊັ່ນ:

- ມູນມໍຣະດົກ ຕ້ອງໄດ້ແຕ້ມແຜນວາດການສືບທອດ (ສາຍຍາດ) ແລະບັນຊີມູນມໍຣະດົກ;
- ສັນຍາກູ້ຢືມຕ້ອງ ລາຍງານຕົ້ນທຶນ ແລະ ເຮັດບັນຊີການຈ່າຍແຕ່ລະຄັ້ງ;
- ຢ່າຮ້າງ ຕ້ອງກຳນົດຊັບເດີມ ແລະສິນສົມສ້າງ ທີ່ແຕ່ລະຝ່າຍອ້າງ ແລະ ເອກະພາບກັນ;
- ທີ່ດິນຕ້ອງເຮັດແຜນວາດ ແລະເຮັດປະຫັວດຄວາມເປັນມາຂອງດິນ ເຊັ່ນ ການໂອນ ແລະ ຊື້ຂາຍກັນແຕ່ລະໄລຍະຈົນເຖິງມື້ຂັດແຍ່ງ.

- **ພາກສະເໜີຫຼັກຖານ:** ຝ່າຍໂຈດສະເໜີໃຫ້ສານພິຈາລະນາ ຈັກບັນຫາ ແຕ່ລະບັນຫາມີ ຫຼັກຖານອັນໃດອ້າງອີງ, ຝ່າຍຈຳເລີຍຮັບຮູ້ ຫຼື ປະຕິເສດຄືແນວໃດ , ມີຫຼັກຖານອັນໃດອ້າງອີງ, ພ້ອມທັງສະຫຼຸບສຸດທ້າຍວ່າມີການຂັດແຍ່ງກັນແນວໃດ (ຖ້າມີການຮັບຮູ້ບາງສ່ວນ), ແຕ່ລະຝ່າຍມີຫຼັກຖານຫຍັງ? ຊຶ່ງຜູ່ຄົ້ນຄວ້າຄະດີຕ້ອງໄດ້ກະກຽມເພື່ອນຳສະເໜີ ແລະ ຊີ້ແຈງຕໍ່ຄະນະສານໃນເວລາຜ່ານຄະດີ.
- **ພາກສະເໜີຄຳເຫັນ:** ຜູ່ຄົ້ນຄວ້າຄະດີ ຕ້ອງສະເໜີຄຳເຫັນຂອງຕົນຕໍ່ຄະນະສານວ່າຄວນ ມີວິທີ ຫຼື ທາງອອກແນວໃດກ່ຽວກັບຄະດີນີ້ ເພາະຜູ່ຄົ້ນຄວ້າເປັນຜູ່ທີ່ກຳປະເດັນຕ່າງໆ ໄດ້ຫຼາຍກວ່າໝູ່ ໂດຍສະເໜີຄຳເຫັນພ້ອມທັງວິເຄາະວິໃຈຂໍ້ມູນຫຼັກຖານທີ່ສະໜັບສະໜູນຄຳເຫັນຂອງຕົນ ຢ່າງມີເຫດມີຜົນ;

ໃນການລາຍງານຜ່ານຄະດີນັ້ນ ຜູ່ຮັບຜິດຊອບຄະດີຕ້ອງສະຫຼຸບໂດຍຫຍໍ້ປະເດັນທີ່ຂັດແຍ່ງກັນ ມີຈັກປະເດັນ ໂດຍສະເໜີເອກະສານທີ່ພົວພັນກັບປະເດັນທີ່ຂັດແຍ່ງນັ້ນວ່າມີຫຼັກຖານອັນໃດແດ່, ພ້ອມທັງຍົກຂໍ້ສັງເກດຈຸດບົກພ່ອງ ແລະ ຈຸດເດັ່ນຂອງເອກະສານຫຼັກຖານຕ່າງໆ ຕໍ່ທີ່ປະຊຸມເພື່ອຖົກຖຽງ ແລະ ພິຈາລະນາ ແຕ່ລະປະເດັນຢ່າງຮອບຄອບ ແລະ ຍຸຕິທຳ.

ເມື່ອເຫັນວ່າຄະດີດັ່ງກ່າວນັ້ນ ແຈ້ງຂາວ ໂດຍມີຫຼັກຖານພຽງພໍກຳນົດວັນປະຊຸມສານໂດຍກຳນົດປະເດັນການໄຕ່ສວນໄວ້ ເພື່ອສະດວກໃນເວລາໄຕ່ສວນ ແລະ ກຳນົດວັນໄຕ່ສວນ ແລະຜູ່ພິພາກສາຂຶ້ນຕັດສິນ, ໃນກໍລະທີ່ເຫັນວ່າຄະດີບໍ່ທັນແຈ້ງຂາວ ຍັງຕ້ອງໄດ້ເກັບກຳຂໍ້ມູນຫຼັກຖານເພີ່ມເຕີມ ຄະນະສານກໍຄວນກຳນົດປະເດັນ ເພື່ອໃຫ້ກັບໄປເກັບກຳຂໍ້ມູນຫຼັກຖານຄືນໃໝ່.

ຕົວຢ່າງ: ຮ່າງບົດສະຫຼຸບລາຍງານຜ່ານຄະດີ

## ບົດລາຍງານ
## ກ່ຽວກັບການຄົ້ນຄວ້າຄະດີ

ເລກທີຄະດີ ເລກທີ 05/ ຂຕ. ກ ລົງວັນທີ20 /2/ 2004

**ລະຫວ່າງ**

ທ້າວ ຈັນສີ ........................................................................................ ໂຈດ

ນາງ ແສງເພັດ ........................................................................................ ຈຳເລີຍ

**ກ່ຽວເລື່ອງ:** ສັນຍາກູ້ຢືມ

## 1. ເຫດການຂອງຄະດີ

### 1.1. ການຮ້ອງຟ້ອງຂອງໂຈດ

ໃນວັນທີ 12 /1/ 2003 ນາງ .ຈັນ.ໄດ້ມາກູ້ຢືມເງິນ ນຳທ້າວ..ແສງເພັດ...(ໂຈດ) ຈຳນວນ 10.000.000 ກີບ, ຕົກລົງດອກເບັ້ຍ3% ຕໍ່ເດືອນ , ກຳນົດເວລາກູ້ຢືມ 6 ເດືອນ, ໂດຍເອົາ ທີ່ດິນ ແລະ ເຮືອນ ທີ່ເປັນກຳມະສິດ ຂອງ ທ້າວ ສີຈັນ ( ອ້າຍຂອງຈຳເລີຍ) ມາເປັນຫຼັກຊັບຄໍ້າ ປະກັນ, ເມື່ອກູ້ຢືມໄປແລ້ວ ຈຳເລີຍໄດ້ນຳດອກເບັ້ຍມາໃຊ້ແທນຄືນໃຫ້ແກ່ໂຈດ ຈຳນວນ 500.000 ກີບ, ຈາກນັ້ນ ກໍບໍ່ນຳຕົ້ນທຶນ ແລະ ດອກເບັ້ຍມາໃຊ້ແທນຄືນ ໂດຍອ້າງເຫດຜົນວ່າ ການເຮັດທຸລະກິດຫຼຸດທຶນ, ຜ່ານມາໂຈດກໍໄດ້ໄປທວງໃນກໍລະນີເຫື່ອ ແລະ ໄດ້ໄກ່ເກັ່ຍຢູ່ຂັ້ນບ້ານແລ້ວແຕ່ບໍ່ສາ ມາດຕົກລົງກັນໄດ້ ໂຈດຈຶ່ງຮ້ອງຟ້ອງຕໍ່ສານ;

**ການຮ້ອງຂໍຂອງໂຈດ ເພື່ອໃຫ້ສານພິຈາລະນາ:**

- ຮ້ອງຂໍເອົາຕົ້ນທຶນທີ່ກູ້ຢືມຄືນ ຈຳນວນ 10.000.000 ກີບ;
- ດອກເບັ້ຍ 7.500.000 ກີບ;
- ໃຫ້ຂາຍຫຼັກຊັບຄໍ້າປະກັນໃຊ້ແທນໜີ້ສິນ.

### 1.2. ການແກ້ຟ້ອງຂອງຈຳເລີຍ

- ຮັບຮູ້ເຫດການຮ້ອງຟ້ອງຂອງໂຈດ;
- ແຕ່ຜ່ານມາໄດ້ຈ່າຍດອກເບັ້ຍໄປແລ້ວ ຈຳນວນ 1.500.000 ກີບ;
- ຫຼັກຊັບຄໍ້າປະກັນ ເປັນກຳມະສິດຂອງອ້າຍ ບໍ່ສາມາດນຳມາຂາຍໄດ້.

## 2. ປະເດັນຂໍ້ຂັດແຍ່ງໃນຄະດີ

- ເລື່ອງ ການຈ່າຍດອກເບັ້ຍ ໂຈດ ວ່າຈ່າຍ 500.000 ກີບ, ຈຳເລີຍວ່າຈ່າຍ 1.500.000 ກີບ;
- ຫຼັກຊັບຄໍ້າປະກັນ ບໍ່ມີໃບມອບກຳມະສິດໃຫ້ໄປຄໍ້າປະກັນຈາກເຈົ້າກຳມະສິດ.

## 3. ຫຼັກຖານຢັ້ງຢືນປະເດັນຂັດແຍ່ງ

- ສັນຍາກູ້ຢືມສະບັບລົງວັນທີ 12/1/ 2003;
- ໃບຮັບເງິນ ສະບັບລົງວັນທີ 15/ 1/ 2003;
- ປຶ້ມບັນທຶກສ່ວນຕົວຂອງ ໂຈດ;
- ເອກະສານການຖອນເງິນຈຳນວນ 1.500.000 ກີບ ຂອງຈາເລີຍ ຢູ່ທະນາຄານການຄ້າ;
- ໃບຕາດິນອອກ ຊື່ອ້າຍຈຳເລີຍ;

– ບົດບັນທຶກໄກ່ເກ່ຍຢູ່ຂັ້ນບ້ານ ສະບັບລົງວັນທີ................
– ບົດບັນທຶກໄກ່ເກ່ຍ ຊ້ອງໜ້າຢູ່ສານ ສະບັບລົງວັນທີ ..........
– ບົດບັນທຶກຄໍາໃຫ້ການຂອງໂຈດ ສະບັບລົງວັນທີ...ທີ່ຮັບຮູ້ການຈ່າຍດອກເບັ້ຍ ຈໍານວນ1,500,000 ກີບ;
– ບົດບັນທຶກຄໍາໃຫ້ການຂອງອ້າຍ ຈໍາເລີຍ ສະບັບລົງວັນທີ................
– ແລະ ອື່ນໆ.

## 4. ຄໍາເຫັນຂອງຜູ້ຄົ້ນຄວ້າຄະດີ

ຜ່ານການຄົ້ນຄວ້າ ເຫັນວ່າ ຄໍາຮ້ອງຟ້ອງມີເຫດຜົນບາງສ່ວນ ຈຶ່ງມີຄໍາເຫັນຄື:

– ໃຫ້ຈໍາເລີຍ ໃຊ້ແທນຕົ້ນທຶນ ຈໍານວນ10.000.000 ກີບ ຄືນໃຫ້ແກ່ໂຈດ;
– ໃຫ້ຈໍາເລີຍໃຊ້ດອກເບັຍ 33% ຕໍ່ປີ ໂດຍໃຫ້ນັບແຕ່ເດືອນ 5/2003 ເປັນຕົ້ນໄປ ຈົນກວ່າປະຕິບັດສາເລັດ;
– ຫຼັກຊັບຄໍ້າປະກັນ ຄວນຂາຍໃຊ້ແທນ ຖ້າຈໍາເລີຍບໍ່ສາມາດໃຊ້ແທນໜີ້ສິນໄດ້.

**ດັ່ງນັ້ນ ຈຶ່ງສະເໜີຕໍ່ຄະນະສານພິຈາລະນາ.**

**ຜູ້ຮັບຜິດຊອບ**

**ສໍານວນຄະດີ**

### 3.5. ຄະນະສານກວດກາຜົນຂອງການຄົ້ນຄວ້າໃນເບື້ອງຕົ້ນ

ຫຼັງຈາກ ທີ່ຜູ້ຄົ້ນຄວ້າຄະດີ ໄດ້ນໍາເອົາບົດສະຫຼຸບສະເໜີຜ່ານໝູ່ຄະນະ ພ້ອມທັງຢາຍບົດສະຫຼຸບໃຫ້ຜູ້ພິພາກສາ ໃນກອງປະຊຸມວິຊາການຄົ້ນຄວ້າ ເມື່ອຜູ້ພິພາກສາໄດ້ຄົ້ນຄວ້າສໍານວນຄະດີ ແລະ ອ່ານບົດສະຫຼຸບແລ້ວ ເມື່ອມີຂໍ້ສົງໃສ ຫຼື ຂໍ້ມູນຫຼັກຖານຕ່າງໆບໍ່ແຈ້ງຂາວ ຫົວໜ້າຄະນະສານ ຫຼື ຜູ້ເຂົ້າຮ່ວມ ຈະຕັ້ງປະເດັນຄໍາຖາມ ໂດຍສະເພາະຈະເປັນຜູ້ເຈາະຈີ້ຄໍາຖາມຕໍ່ກັບຜູ້ຄົ້ນຄວ້າຄະດີ ເພື່ອກໍານົດຈຸດປະສົງ ແລະ ເປົ້າໝາຍສອບສວນແລ້ວ ຄະນະສານຕ້ອງໄດ້ດໍາເນີນການສອບສວນ ຫຼື ຊັກຖາມເຂົ້າປະເດັນ ເພື່ອໃຫ້ໄດ້ຄໍາຕອບ ແລະ ປະເດັນທີ່ກ່ຽວຂ້ອງກັບເຫດການຂອງຄະດີ; ຊຶ່ງອາດຕັ້ງປະເດັນສອບສວນໄວ້ເພື່ອໃຫ້ໄດ້ເນື້ອໃນທີ່ຕ້ອງການ ແລະ ສິ່ງເຫລົ່ານັ້ນພົວພັນ ແລະ ສາມາດນໍາມາກໍານົດເຫດການຂອງຄະດີ. ຖ້າຫາກວ່າ ມີຂໍ້ມູນຫຼັກຖານຂອງຝ່າຍໂຈດ ຫຼື ຝ່າຍຈໍາເລີຍບໍ່ຄົບຖ້ວນ, ພຽງພໍ ຫຼື ບໍ່ຈະແຈ້ງ ຫົວໜ້າຄະນະສານ ກໍແນະນໍາໃຫ້ຜູ້ຄົ້ນຄວ້າຄະດີເກັບກໍາຫຼັກຖານຄືນໃໝ່ອີກ[48]; ຖ້າຫາກວ່າມີຂໍ້ມູນຫຼັກຖານຄົບຖ້ວນ, ພຽງພໍ ແລະ ແຈ້ງຂາວ ຜູ້ຄົ້ນຄວ້າຄະດີ ກໍກໍານົດວັນຕັດສິນ, ປະກອບຄະນະສານຕັດສິນ, ກໍານົດຜູ້ເຂົ້າຮ່ວມ ແລະ ໃຫ້ຈ່າສານອອກໝາຍຮຽກ ພ້ອມທັງເຮັດບົດສະຫຼຸບຄະດີ ເພື່ອລາຍງານໃຫ້ຫົວໜ້າອົງການໄອຍະການປະຊາຊົນຮັບຊາບ.

### 3.5.1. ກໍລະນີຫຼັກຖານຄົບຖ້ວນ

ຖ້າເຫັນວ່າມີຂໍ້ມູນຫຼັກຖານ ຂອງຝ່າຍໂຈດ ຫຼື ຝ່າຍຈໍາເລີຍ ມີຄົບຖ້ວນ, ພຽງພໍ ທີ່ສາ ມາດເປັນພື້ນຖານໃຫ້ແກ່ການກໍານົດເຫດການຂອງຄະດີຢ່າງແຈ້ງຂາວແລ້ວ; ຫົວໜ້າຄະນະສານກໍຕົກລົງໃຫ້ຜູ້ຄົ້ນຄວ້າຄະດີກໍານົດເວລາ ຫຼື ວັນນໍາເອົາຄະດີອອກພິຈາລະນາໄຕ່ສວນໃນທີ່ປະຊຸມສານ,ປະກອບຄະນະສານຕັດສິນ, ກໍານົດຜູ້ເຂົ້າຮ່ວມ ແລະ ໃຫ້

---

[48] ກົດໝາຍວ່າການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 193

ຈ່າອອກໝາຍຮຽກໃຫ້ຜູ້ເຂົ້າຮ່ວມໃນທີ່ປະຊຸມສານ; ໃນການຕົກລົງນຳເອົາຄະດີອອກພິຈາລະນາໄຕ່ສວນໃນທີ່ປະຊຸມສານນັ້ນ ແມ່ນເຮັດເປັນຂໍ້ຕົກລົງຂອງຄະນະສານກ່ອນວັນ ເປີດປະຊຸມສານຢ່າງໜ້ອຍສາມວັນ[49].

**3.5.2. ກໍລະນີຫຼັກຖານບໍ່ຄົບຖ້ວນ**

ຖ້າເຫັນວ່າ ຂໍ້ມູນຫຼັກຖານ ຂອງຝ່າຍໂຈດ ຫຼືຝ່າຍຈຳເລີຍບໍ່ຄົບຖ້ວນ, ພຽງພໍ ຫຼືບໍ່ຈະແຈ້ງ ຫົວໜ້າຄະນະສານ ກໍຈະແນະນຳໃຫ້ຜູ້ຄົ້ນຄ້ວາຄະດີ ໄປເກັບກຳຂໍ້ມູນຫຼັກຖານຄືນໃໝ່ ແລະ ຈະບໍ່ນຳເອົາຄະດີດັ່ງກ່າວອອກມາພິຈາລະນາໃນທີ່ຫ້ອງປະຊຸມສານ ຕາມການຕົກລົງເຫັນດີຂອງໝູ່ຄະນະ ເພື່ອຮັບປະກັນໃຫ້ການພິຈາລະນາຕັດສິນຂອງສານໃຫ້ມີຄວາມຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ[50].

**3.5.3. ການຊັດມ້ຽນຄະດີ**

ການຊັດມ້ຽນຄະດີ ແມ່ນການຢຸດເຊົາການດຳເນີນຄະດີ ເນື່ອງຈາກວ່າຜ່ານການດຳເນີນຄະດີ ເຫັນວ່າໂຈດ ໃນຄະດີນັ້ນບໍ່ມີສິດຮ້ອງຟ້ອງກ່ຽວກັບບັນຫາທີ່ກ່ຽວຂ້ອງ, ຄະດີທີ່ທຳການຮ້ອງຟ້ອງຢູ່ນັ້ນ ໄດ້ມີຄຳສັ່ງຊັດມ້ຽນ ຫຼື ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານມາກ່ອນແລ້ວ ຫຼື ຄະດີ ຊຶ່ງໂຈດໄດ້ຖອນຄຳຮ້ອງຟ້ອງແລ້ວ[51].

ຜ່ານການກວດກາຄະດີນັ້ນ ຂອງຫົວໜ້າຄະນະສານ ແລະ ຜູ້ເຂົ້າຮ່ວມ ໄດ້ກວດກາທັງໝົດຄາຮ້ອງຟ້ອງຂອງໂຈດ ແລະ ຄຳແກ້ຟ້ອງຂອງຈຳເລີຍ ພ້ອມດ້ວຍຂໍ້ມູນຫຼັກຖານຕ່າງໆຂອງແຕ່ລະຝ່າຍຢ່າງລະອຽດແລ້ວ ເຫັນວ່າສຳນວນຄະດີດັ່ງກ່າວໄດ້ມີຄຳສັ່ງຊັດມ້ຽນ, ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານມາກ່ອນແລ້ວ, ອາຍຸຄວາມໃນການຮ້ອງຟ້ອງໝົດໄປ ແລະ ຄະດີດັ່ງກ່າວໂຈດໄດ້ຖອນຄຳຮ້ອງຟ້ອງແລ້ວ. ຫົວໜ້າຄະນະສານ ຈະອອກຄຳສັ່ງຂອງຄະນະສານບໍ່ຮັບຄະດີນັ້ນ ມາພິຈາລະນາຄືນໃໝ່ອີກ;

ຕົວຢ່າງ: ຈຳເລີຍ ໄດ້ກູ້ຢືມເງິນນຳ ໂຈດ ຈຳນວນ 50.000.000 ກີບ, ດອກເບັ້ຍ 5 % ຕໍ່ເດືອນໂດຍເອົາທີ່ດິນ ແລະ ເຮືອນອອກຊື່ຈຳເລີຍ ຕັ້ງຢູ່ບ້ານດອນແດງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ເປັນຫຼັກຊັບຄ້ຳປະກັນ, ກຳນົດເວລາກູ້ຢືມ 11 ເດືອນ, ຕາມສັນຍາກູ້ຢືມສະບັບລົງວັນທີ 12 ກຸມພາ 2013, ເມື່ອໝົດກຳນົດເວລາຂອງສັນຍາກູ້ຢືມແລ້ວ ຈຳເລີຍບໍ່ຈ່າຍຕົ້ນທຶນ ແລະດອກເບັ້ຍໃຫ້ໂຈດ, ສະນັ້ນ ໂຈດ ຈຶ່ງທວງໃຫ້ ຈຳເລີຍ ຊຳລະທັງຕົ້ນທຶນ ແລະ ດອກເບັ້ຍແຕ່ຈຳເລີຍບໍ່ຍອມຈ່າຍໂດຍອ້າງວ່າເຮັດທຸລະກິດລົ້ມລະລາຍ, ຊຶ່ງກໍໄດ້ມີການໄກ່ເກ່ຍກັນຢູ່ໜ່ວຍໄກ່ເກ່ຍຂັ້ນບ້ານແລ້ວ ແຕ່ບໍ່ສາມາດຕົກລົງກັນໄດ້ ສະນັ້ນ ໂຈດຈຶ່ງຮ້ອງຟ້ອງຕໍ່ສານ ເພື່ອທວງເອົາຕົ້ນທຶນ ຈຳນວນ 20.000 .000 ກີບ ແລະ ດອກເບັ້ຍ ຈຳນວນ 5% ຕໍ່ເດືອນ.

ຫຼັງຈາກນັ້ນ ໂຈດ ໄດ້ຮ້ອງຮ້ອງຟ້ອງຂຶ້ນມາຫາສານ ເພື່ອໃຫ້ສານພິຈາລະນາຕັດສິນ ຜ່ານການພິຈາລະນາຄົ້ນຄວ້າ, ຕີລາຄາຂໍ້ມູນຫຼັກຖານນັ້ນ ເຫັນວ່າຂໍ້ມູນຫຼັກຖານຕ່າງໆຂອງຝ່າຍໂຈດ ມີຄວາມຄົບຖ້ວນ ແລະແຈ້ງຂ່າວ ສານຈຶ່ງໄດ້ພິຈາລະນາຕັດສິນໃຫ້ໂຈດແລ້ວ ໂດຍມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ໃນກໍລະນີ ໂຈດບໍ່ມີສິດຮ້ອງຟ້ອງໄດ້ອີກ ຄະນະສານຈະອອກຄຳຊີ້ຂາດ ໂດຍອອກຄຳສັ່ງຊັດມ້ຽນໄວ້ ຊຶ່ງບໍ່ໃຫ້ຄະດີດັ່ງກ່າວ ມາພິຈາລະນາຄືນໃໝ່ອີກ ຕາມທີ່ໄດ້ກຳນົດໄວ້ກົດໝາຍດຳເນີນຄະດີແພ່ງ;

ໃນກໍລະນີ ຖ້າວ່າ ໂຈດ ຖອນຄຳຮ້ອງຟ້ອງທັງໝົດ ຜູ້ພິພາກສາໄດ້ອອກຄຳສັ່ງຊັດມ້ຽນຄະດີແລ້ວ ແຕ່ໂຈດ ກໍຍັງມາຮ້ອງຟ້ອງຂຶ້ນມາຫາໃຫ້ສານພິຈາລະນາອີກ ເມື່ອຜູ້ພິພາກສາ ໄດ້ກວດກາພົບເຫັນຄະດີດັ່ງກ່າວນັ້ນ ຜ່ານມາໄດ້ໂຈດໄດ້ຖອນຄຳຮ້ອງຟ້ອງແລ້ວ ຊຶ່ງໃນສາເຫດນີ້ ໂຈດບໍ່ສິດທີ່ຈະຮ້ອງຟ້ອງຈຳເລີຍໄດ້ອີກ ແລະ ຄະນະສານ ຈະແນະນຳໃຫ້ຜູ້ຄົ້ນຄວ້າ ບໍ່ໃຫ້ເອົາຄະດີດັ່ງກ່າວ ມາພິຈາລະນາຄືນໃໝ່ອີກ;

---

[49]ກົດໝາຍວ່າການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 204

[50]ກົດໝາຍວ່າການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 205

[51]ກົດໝາຍວ່າການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 203

ໃນກໍລະນີໂຈດ ໄດ້ຮ້ອງຮ້ອງຟ້ອງຕໍ່ສານ ເພື່ອໃຫ້ສານພິຈາລະນາຕັດສິນໃຫ້ແກ່ຕົນ ແຕ່ຜ່ານການພິຈາລະນາຄົ້ນຄວ້າ, ຕີລາຄາຂໍ້ມູນຫຼັກຖານໃນສຳນວນຄະດີ ເຫັນວ່າຄະດີດັ່ງກ່າວນັ້ນ ໄດ້ໝົດອາຍຸຄວາມໃນການຮ້ອງຟ້ອງແລ້ວ ຊຶ່ງໂຈດບໍ່ມີສະດຮ້ອງຟ້ອງໄດ້ອີກ ຄະນະສານຈະອອກຄຳຊີ້ຂາດເປັນຄຳສັ່ງຊັດມ້ຽນໄວ້ ຊຶ່ງບໍ່ໃຫ້ຄະດີດັ່ງກ່າວມາພິຈາລະນາຄືນໃໝ່ອີກ.

## 4. ການໄກ່ເກ່ຍຄູ່ຄວາມ

ນອກຈາກການຕັດສິນ ແລະການພິພາກສາຄະດີແລ້ວການໄກ່ເກ່ຍແມ່ນຮູບການໜຶ່ງທີ່ໃຊ້ໃນການແກ້ໄຂຄະດີ, ເພາະວ່າ ການໄກ່ເກ່ຍ ແມ່ນການສຶກສາອົບຮົມໃຫ້ຄູ່ຄວາມ ທັງສອງຝ່າຍໄດ້ປະນີປະນອມ, ຜ່ອນຜັນ ແລະຕົກລົງກັນໂດຍດີ, ໃຫ້ໂອກາດຄູ່ຄວາມຕົກລົງ ດ້ວຍຄວາມສະໝັກໃຈ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ຄູ່ຄວາມມີຄວາມເຂົ້າອົກເຂົ້າໃຈ ເຊິ່ງກັນ ແລະກັນ, ເຮັດໃຫ້ສັງຄົມມີຄວາມສະຫງົບ; ສານປະຊາຊົນ ແມ່ນມີໜ້າທີ່ ແລະ ຄວາມຮັບຜິດຊອບໃນການໄກ່ເກ່ຍຄູ່ຄວາມ ໂດຍການຊອກທຸກເງື່ອນໄຂ ແລະ ວິທີ ເພື່ອໃຫ້ຄູ່ຄວາມສາມາດຕົກລົງກັນດ້ວຍດີຢູ່ໃນທຸກຂັ້ນຕອນຂອງການດຳເນີນຄະດີ ແລະ ສານປະຊາຊົນທຸກຂັ້ນ[52]. ຂໍ້ຂັດແຍ່ງທີ່ສາມາດນຳມາພິຈາລະນາໄກ່ເກ່ຍໄດ້ ແມ່ນຂໍ້ຂັດແຍ່ງເລັກນ້ອຍ, ບໍ່ມີມູນຄ່າສູງ ເຊັ່ນ ສາຍພົວພັນຄອບຄົວ, ກຳມະສິດກ່ຽວກັບສັດລ້ຽງ, ການຂໍທາງຜ່ານ, ມູນມໍຣະດົກແລະອື່ນໆ ຕ້ອງໃຫ້ໜ່ວຍໄກ່ເກ່ຍຂັ້ນບ້ານທຳການໄກ່ເກ່ຍເສັຍກ່ອນ, ຖ້າຫາກຕົກລົງກັນບໍ່ໄດ້ກໍໃຫ້ຫ້ອງການຍຸຕິທຳເມືອງທຳການສຶກສາອົບຮົມ, ປະນີປະນອມ ແລະ ໄກ່ເກ່ຍຄູ່ຄວາມຕື່ມອີກ ກໍໄດ້ຕາມລະບຽບການຂອງພາກສ່ວນທີ່ກ່ຽວຂ້ອງ;

ການໄກ່ເກ່ຍຢູ່ສານປະຊາຊົນ ແມ່ນມີຄວາມສຳຄັນໃນກໍລະນີໃນການດຳເນີນຄະດີ ແລະ ສາມາດກໍມີວິທີ ການໄກ່ເກ່ຍ 2 ວິທີ ຄື ການໄກ່ເກ່ຍໃນການຄົ້ນຄວ້າຄະດີ ແລະ ການໄກ່ເກ່ຍໃນເວລາພິຈາລະນາຄະດີໃນທີ່ປະຊຸມສານ;

- **ການໄກ່ເກ່ຍໃນການຄົ້ນຄວ້າຄະດີ**

ໃນການເຂົ້າຮ່ວມໄກ່ເກ່ຍຢູ່ສານຕ້ອງມີຜູ້ພິພາກສາ, ຈ່າສານ, ໂຈດ, ຈຳເລີຍ ຫຼື ຜູ້ຕາງໜ້າຄູ່ຄວາມໃນຄະດີເຂົ້າຮ່ວມ. ຊຶ່ງໃນກໍລະນີຈຳເປັນສານອາດຈະເຊີນຜູ້ຕາງໜ້າອົງການປົກຄອງ, ຜູ້ຕາງໜ້າອົງການຈັດຕັ້ງ ຫຼື ຜູ້ກ່ຽວຂ້ອງອື່ນເຂົ້າຮ່ວມນຳກໍໄດ້;

ໃນເວລາຜູ້ພິພາກສາດຳເນີນຄະດີນັ້ນຜູ້ພິພາກສາກໍຈະໃຫ້ໂອກາດຄູ່ຄວາມຕົກລົງໄກ່ເກ່ຍກັນໂດຍດີເສັຍກ່ອນການໄກ່ເກ່ຍຜູ້ພິພາກສາຕ້ອງປະຕິບັດດັ່ງຕໍ່ລົງໄປນີ້:

- ຜູ້ພິພາກສາທີ່ທຳການໄກ່ເກ່ຍຕ້ອງແຈ້ງຊື່, ນາມສະກຸນ, ໜ້າທີ່ຕຳແໜ່ງຂອງຕົນ ແລະ ແຈ້ງຊື່ ແລະນາມສະກຸນ, ໜ້າທີ່ຕຳແໜ່ງຂອງຈ່າສານ ທີ່ເຮັດໜ້າທີ່ເປັນຜູ້ບັນທຶກໃຫ້ຄູ່ຄວາມ;
- ແຈ້ງຄະດີ, ເລກທີ, ລົງວັນທີ, ລະຫວ່າງ, ກ່ຽວເລື່ອງແລະແຈ້ງເນື້ອຄະດີໂດຍຫຍໍ້ໃຫ້ຄູ່ຄວາມຊາບພ້ອມທັງສຶກສາອົບຮົມໃຫ້ຄູ່ຄວາມຕົກລົງກັນໂດຍດີ;
- ໃຫ້ໂຈດເປັນຜູ້ສະເໜີກ່ອນຕໍ່ສິ່ງທີ່ໂຈດຕ້ອງການຢາກໄດ້ຈາກຈຳເລີຍ;
- ໃຫ້ຈຳເລີຍສະເໜີຕອບຄວາມຕ້ອງການຂອງໂຈດທີ່ສະເໜີມານັ້ນວ່າ ຈຳເລີຍຈະສາມາດຕອບສະໜອງຕາມການສະເໜີຂອງໂຈດໄດ້ຫຼືບໍ່? ;
- ຖ້າຕົກລົງກັນໄດ້ກໍໃຫ້ບັນທຶກເອົາການຕົກລົງນັ້ນໂດຍຫຍໍ້ ແລະກຳນົດເວລາປະຕິບັດຜົນຂອງການຕົກລົງພ້ອມທັງໃຫ້ຄູ່ຄວາມທັງສອງຝ່າຍລົງລາຍເຊັນ.

ໃນກໍລະນີ ຄູ່ຄວາມຕົກລົງເຫັນດີເປັນເອກະພາບໄກ່ເກ່ຍກັນແລ້ວ ຜູ້ພິພາກສາທີ່ຮັບຜິດຊອບຄົ້ນຄ້ວາຕ້ອງໄດ້ເຮັດບົດບັນທຶກການໄກ່ເກ່ຍເປັນລາຍລັກອັກສອນພ້ອມທັງໃຫ້ຄູ່ຄວາມ ແລະ ຜູ້ທີ່ເຂົ້າຮ່ວມອື່ນໆລົງລາຍເຊັນ ຫຼືແປະໂປ້ມືໃສ່ບົດບັນທຶກຂອງການໄກ່ເກ່ຍຈະມີຜົນບັງຄັບປະຕິບັດ ແລະ ຄະນະສານທີ່ກ່ຽວຂ້ອງ ຕ້ອງເຮັດຄຳສັ່ງໃຫ້ປະຕິບັດພາຍໃນ 5 ວັນ ນັບແຕ່ມື້ໄກ່ເກ່ຍເປັນຕົ້ນໄປ, ສານປະຊາຊົນຈະບໍ່ນຳເອົາຄະດີທີ່ຄູ່ຄວາມໄດ້ໄກ່ເກ່ຍກັນຢູ່

[52]ກົດໝາຍວ່າການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 18

ສານແລ້ວ ນັ້ນມາພິຈາລະນາຕື່ມອີກ[53]. ສິ່ງທີ່ສຳຄັນຜູ້ພິພາກສາຕ້ອງກຳໃຫ້ໄດ້ຄະດີທີ່ ຈະສາມາດໄກ່ເກ່ຍໄດ້ນັ້ນຕ້ອງເປັນຄະດີທີ່ພົວພັນສະເພາະສິດ ແລະ ຜົນປະໂຫຍດ ຂອງຄູ່ຄວາມທັງສອງຝ່າຍເທົ່ານັ້ນ;

ຫ້າມເດັດຂາດບໍ່ໃຫ້ຜູ້ພິພາກສາໄກ່ເກ່ຍຄະດີທີ່ຄູ່ຄວາມຂັດແຍ່ງກັນນັ້ນຫາກເຫັນວ່າຄະດີດັ່ງກ່າວຂັດກັບສິດ, ຜົນປະໂຫຍດຂອງລັດແລະບຸກຄົນອື່ນໆ[54].

- **ການໄກ່ເກ່ຍໃນເວລາພິຈາລະນາຄະດີໃນທີ່ປະຊຸມສານ**

ໃນເວລາພິຈາລະນາຄະດີໃນທີ່ປະຊຸມສານຄະນະສານ ກໍຈະໃຫ້ໂອກາດຄູ່ຄວາມ ຕົກລົງໄກ່ເກ່ຍກັນເສຍກ່ອນ

ຖ້າຫາກວ່າ ຜູ້ພິພາກສາໄດ້ໄກ່ເກ່ຍຄູ່ຄວາມ ແຕ່ບໍ່ສາມາດຕົກລົງກັນໄດ້ຄະດີດັ່ງກ່າວ ຈະນຳເອົາໄປຕັດສິນທີ່ຫ້ອງປະຊຸມສານ ເພື່ອໃຫ້ການດຳເນີນຄະດີ ມີຄວາມຄົບຖ້ວນ, ຮອບດ້ານ ແລະຄວາມຍຸຕິທຳໃຫ້ແກ່ຄູ່ຄວາມ; ຫຼັງຈາກນັ້ນ ເມື່ອຜູ້ພິພາກສາ ໄດ້ທຳການໄຕ່ສວນຄະດີທີ່ປະຊຸມສານ ປະທານຄະນະສານຈະທຳການໄກ່ເກັຍອີກເທື່ອໜຶ່ງ ເພື່ອໝັ້ນໃຈວ່າຄູ່ຄວາມອາດຈະກັບຄືນມາຕົກລົງກັນອີກ ຖ້າຫາກວ່າຄູ່ຄວາມສາມາດຕົກລົງກັນໄດ້ປະທານຄະນະສານ ກໍຈະເຮັດຄຳສັ່ງປະຕິບັດຜົນໄກ່ເກ່ຍໃນທີ່ປະຊຸມສານ; ໃນກໍລະຄູ່ຄວາມຕົກລົງກັນບໍ່ໄດ້ ປະທານຄະນະສານຈະດຳເນີນການໄຕ່ສວນ ເພື່ອຊອກຫາຂໍ້ມູນຄວາມຈິງຈາກຄູ່ຄວາມ ທັງນີ້ເພື່ອໃຫ້ເຮັດການພິຈາລະນາຕັດສິນໃຫ້ມີຄວາມວ່ອງໄວ, ສະດວກ ແລະມີຄວາມເປັນທຳໃຫ້ແກ່ຄູ່ຄວາມ ສ່ວນລາຍລະອຽດ ແມ່ນຢູ່ບົດທີ 5 ຂອງພາກທີ II.

### 4.1. ບົດບັນທຶກຂອງການໄກ່ເກ່ຍ

ບົດບັນທຶກການໄກ່ເກ່ຍ ແມ່ນເອກະສານຂອງສານທີ່ເຮັດຂຶ້ນໂດຍຜູ້ພິພາກສາຂອງສານໃດໜຶ່ງ, ໃນການເຮັດບົດບັນທຶກການໄກ່ເກ່ຍແຕ່ລະຄັ້ງຜູ້ພິພາກສາຈະເຮັດໜ້າທີ່ເປັນຜູ້ໄກ່ເກ່ຍຄູ່ຄວາມໃຫ້ມີການປະນີປະນອມກັນໂດຍດີ, ຕົກລົງກັນໂດຍສັນຕິວິທີ ສ່ວນຈ່າສານຈະເຮັດໜ້າທີ່ເປັນຜູ້ບັນທຶກການໄກ່ເກ່ຍ.

ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນກ່ອນອື່ນໝົດ ຄູ່ຄວາມຕ້ອງໄດ້ທຳການປຶກສາຫາລືກັນ ຖ້າຕົກລົງກັນບໍ່ໄດ້ ຈຶ່ງນຳບັນຫາດັ່ງກ່າວ ສະເໜີຕໍ່ໜ່ວຍໄກ່ເກ່ຍຂັ້ນບ້ານ ເພື່ອທຳການສຶກສາອົບຮົມໄກ່ເກ່ຍທີ່ມີລັກສະນະຜ່ອນສັ້ນຜ່ອນຍາວໃຫ້ກັນເພື່ອຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໃນສັງຄົມ ໂດຍສະເພາະຄະດີທີ່ມີລັກສະນະເລັກນ້ອຍ, ມູນຄ່າບໍ່ສູງ, ຄະດີກ່ຽວກັບສາຍພົວພັນຄອບຄົວ, ກຳມະສິດກ່ຽວກັບການລ້ຽງສັດ, ການຂໍທາງຜ່ານ ແລະອື່ນໆ ຖ້າບໍ່ຜ່ານການໄກ່ເກ່ຍຢູ່ຂັ້ນບ້ານສານຈະບໍ່ຮັບເອົາຄະດີດັ່ງກ່າວມາພິຈາລະນາ, ການໄກ່ເກ່ຍອາດຈະເຮັດຫຼາຍຄັ້ງແຕ່ຕ້ອງເຮັດບົດບັນທຶກໄວ້. ຖ້າຫາກວ່າ ຄູ່ຄວາມຕົກລົງເຫັນດີເປັນເອກະພາບໄກ່ເກ່ຍກັນແລ້ວຜູ້ພິພາກສາຈະໄດ້ເຮັດບົດບັນທຶກການໄກ່ເກ່ຍເປັນລາຍລັກອັກສອນພ້ອມ ທັງໃຫ້ຄູ່ຄວາມແລະຜູ້ທີ່ເຂົ້າຮ່ວມອື່ນໆລົງລາຍເຊັນຫຼືແປະໂປ້ມືໃສ່ເປັນຫຼັກຖານ[55]; ຈາກນັ້ນກໍເຮັດຄຳສັ່ງປະຕິບັດຜົນຂອງການໄກ່ເກ່ຍພາຍໃນກຳນົດ 5 ວັນ ນັບແຕ່ວັນໄກ່ເກ່ຍເປັນຕົ້ນໄປ.

ໃນກໍລະນີ ຜູ້ພິພາກສາ ໄດ້ເຮັດການໄກ່ເກ່ຍແລ້ວ ແຕ່ວ່າຄູ່ຄວາມບໍ່ສາມາດຕົກລົງກັນໄດ້ ຜູ້ພິພາກສາ ກໍເຮັດບົດບັນທຶກການໄກ່ເກ່ຍເປັນລາຍລັກອັກສອນພ້ອມທັງໃຫ້ຄູ່ຄວາມ ແລະ ຜູ້ທີ່ເຂົ້າຮ່ວມອື່ນໆລົງລາຍ ເຊັ່ນ ຫຼື ແປະໂປ້ມືໃສ່ເປັນຫຼັກຖານ; ຄູ່ຄວາມ ມີສິດຮ້ອງຟ້ອງຕໍ່ສານ ເພື່ອໃຫ້ສານປະຊາຊົນພິຈາລະນາຕັດສິນຕາມຂັ້ນຕອນກົດໝາຍ.

### 4.2. ຄຳສັ່ງປະຕິບັດຜົນຂອງການໄກ່ເກ່ຍ

ຄຳສັ່ງປະຕິບັດຜົນຂອງການໄກ່ເກ່ຍ ແມ່ນຄຳຕົກລົງຂອງສານ ຊຶ່ງເປັນເອກະສານປະເພດໜຶ່ງທີ່ມີຜົນບັງຄັບຄືຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;

---

[53]ກົດໝາຍວ່າການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 199 ແລະ 201

[54]ກົດໝາຍວ່າການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 197

[55]ກົດໝາຍວ່າການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 199

ພາຍຫຼັງເກີດຂໍ້ແຍ່ງກັນ ຊຶ່ງຄູ່ຄວາມບໍ່ສາມາດຊອກທາງອອກໃນທາງທີ່ຜ່ອນສັ້ນຜ່ອນຍາວແກ່ກັນຢູ່ໜ່ວຍໄກ່ເກ່ຍຂັ້ນບ້ານ ແລະ ຫ້ອງການຍຸຕິທຳເມືອງ ສຳລັບຂໍ້ຂັດແຍ່ງເລັກນ້ອຍ ແລະຂໍ້ຂັດແຍ່ງທີ່ມີມູນຄ່າສູງ ແລ້ວຄູ່ຄວາມຝ່າຍທີ່ຖືກລະເມີດນັ້ນ ກໍມີສິດຮ້ອງຟ້ອງຂຶ້ນສານ ເພື່ອໃຫ້ສານນັບແຕ່ຂັ້ນຕົ້ນ, ຂັ້ນອຸທອນຈົນເຖິງ ຂັ້ນລົບລ້າງ ສານມີສິດທຳການ ໄກ່ເກ່ຍຄູ່ຄວາມໄດ້ທຸກຂັ້ນຕອນ, ສຳລັບການໄກ່ເກ່ຍຢູ່ສານນັ້ນ ມີຈຸດພິເສດແຕກຕ່າງຈາກການໄກ່ເກ່ຍຢູ່ບ່ອນອື່ນໆ ເນື່ອງຈາກວ່າ ຖ້າຄູ່ຄວາມໄດ້ຍິນຍອມ ຕົກລົງຢຸດຕິຂໍ້ຂັດແຍ່ງນຳກັນໂດຍດີແລ້ວ ສານກໍຈະເຮັດບົດບັນທຶກໄກ່ເກ່ຍ ແລະ ອອກຄຳສັ່ງປະຕິບັດພາຍໃນກຳນົດ 5 ວັນ ນັບແຕ່ມື້ໄກ່ເກ່ຍເປັນຕົ້ນໄປຊຶ່ງຜົນຂອງຄຳສັ່ງໄກ່ເກ່ຍແມ່ນຄືຄຳຕັດສິນທີ່ໄດ້ຢ່າງເດັດຂາດ ແລະ ສານກໍຈະບໍ່ນຳເອົາຄະດີທີ່ຄູ່ຄວາມຕົກລົງກັນແລ້ວນັ້ນ ມາພິຈາລະນາຕື່ມອີກຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ[56].

ຕົວຢ່າງ: ທ້າວ **ກ** ໄດ້ຮ້ອງຟ້ອງຂຶ້ນ ສານເພື່ອທວງເອົາກາມະສິດ ໃນທີ່ດິນ ແລະ ເຮືອນນາ ນາງ **ຂ** ໃນໄລຍະການດຳເນີນຄະດີ ສານໄດ້ທຳການໄກ່ເກ່ຍ ຊຶ່ງທັງສອງໄດ້ຕົກລົງ ແລະຍິນຍອມປະຕິບັດ ນຳກັນຄື ທ້າວ **ກ** ຍິນດີຈ່າຍຄ່າບົວລະບັດປົກຮັກສາແກ່ ນາງ **ຂ** ຈານວນ 7.000.000ກີບ ພາຍຫຼັງ ສານໄດ້ອອກຄຳສັ່ງປະຕິບັດຜົນຂອງການໄກ່ເກ່ຍເປັນທີ່ຮຽບຮ້ອຍແລ້ວ ນາງ **ຂ** ພັດປີ້ນຄວາມວ່າບໍ່ປະຕິບັດ ແລະນາສະເໜີໃຫ້ສານຕັດສິນນັ້ນ ສານຈະບໍ່ຮັບເອົາຄະດີດັ່ງກ່າວມາພິຈາລະນາຕື່ມອີກ.

[56] ກົດໝາຍວ່າການດາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 201

▪ ເອກະສານຊ້ອນທ້າຍ

**ຕົວຢ່າງ 1:**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---------===000===---------

ແຂວງ/ນະຄອນ..................

ສານ................................ ເລກທີ ........../...........

ຄະນະສານ........................ ລົງວັນທີ ...........................

# ບົດບັນທຶກການໄກ່ເກັ່ຍ

ອີງຕາມ ມາດຕາ 2 (ໃໝ່) ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ2003;

ອີງຕາມ ມາດຕາ 194 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012;

ອີງຕາມ ສຳນວນຄະດີແພ່ງເລກທີ......................ລົງວັນທີ.........................................;

**ລະຫວ່າງ**

ທ້າວ/ນາງ............................ນາມສະກຸນ........................ອາຍຸ..........ປີ,ສັນຊາດ...................., ອາຊີບ.....................ປັດຈຸບັນຢູ່ໜ່ວຍ............., ບ້ານ.................,ເມືອງ......................., ແຂວງ/ນະຄອນ ...............................................ໂຈດ;

ທ້າວ/ນາງ...........................ນາມສະກຸນ..................ອາຍຸ...........ປີ,ສັນຊາດ........., ອາຊີບ............ ປັດຈຸບັນຢູ່ໜ່ວຍ..........., ບ້ານ..............,ເມືອງ......................, ແຂວງ/ນະຄອນ..........................ຈຳເລີຍ;

**ກ່ຽວເລື່ອງ:**...........................................

ໃນວັນທີ...................., ເວລາ......................, ທີ່ຫ້ອງການສານປະຊາຊົນ...................,ຕໍ່ໜ້າຜູ້ພິພາກສາ ທ່ານ...............................ນັ່ງພ້ອມດ້ວຍຈ່າສານ ທ່ານ.............................ຜ່ານການໄກ່ເກັ່ຍ ໂຈດ ແລະຈຳເລີຍ ສາມາດຕົກລົງກັນໄດ້ດັ່ງນີ້:

........................................................................................................................
........................................................................................................................
........................................................................................................................
........................................................................................................................
........................................................................................................................
........................................................................................................................
........................................................................................................................
........................................................................................................................
........................................................................................................................
........................................................................................................................
........................................................................................................................

ສ່ວນຄ່າອາກອນຂອງລັດ ຈຳນວນ............................ກີບ, ຝ່າຍ......................................ຍິນດີ ຮັບຜິດຊອບເສັຍ, ພ້ອມນັ້ນຄ່າໃຊ້ຈ່າຍຕ່າງໆ ໃນການປະຕິບັດບົດບັນທຶກການໄກ່ເກ່ຍ ແມ່ນຝ່າຍ ...............................................ຍິນດີຮັບຜິດຊອບ.

ບົດບັນທຶກການໄກ່ເກ່ຍສະບັບນີ້ ເຮັດຂຶ້ນດ້ວຍຄວາມສະໝັກໃຈຂອງທັງສອງຝ່າຍ ໂດຍບໍ່ມີການ ບັງຄັບ ນາບຂູ່, ເມື່ອໄດ້ອ່ານໃຫ້ຄູ່ຄວາມຟັງແລ້ວ ເຫັນວ່າ ຖືກຕ້ອງຕາມການຕົກລົງ ຈຶ່ງພ້ອມກັນ ລົງລາຍເຊັນໄວ້ເປັນຫຼັກ ຖານ.

| **ໂຈດ ແລະ ຈຳເລີຍ** | **ຜູ້ພິພາກສາ** | **ຈ່າສານ** |
|---|---|---|

1. ...............................
2. ................................

**ຕົວຢ່າງ 2**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---------===000===---------

ແຂວງ/ນະຄອນ................

ສານ.............................. ເລກທີ ........../...........

ຄະນະສານ.................... ລົງວັນທີ ..........................

# ບົດບັນທຶກການໄກ່ເກ່ຍໃນທີ່ປະຊຸມສານ

ອີງຕາມ ມາດຕາ 2 (ໃໝ່) ຂອງກົດໝາຍວ່າດ້ວຍ ສານປະຊາຊົນ ສະບັບປັບປຸງ ປີ 2003

ອີງຕາມ ມາດຕາ 199ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012

ຄະນະສານ...........................ຂອງສານ.............................................ປະກອບດ້ວຍ:

ທ່ານ............................................................................................ ປະທານ

ທ່ານ....................................................................................... ຄະນະ

ທ່ານ....................................................................................... ຄະນະ

ນັ່ງພ້ອມດ້ວຍທ່ານ................................................................................... ຈ່າສານ

ໃນວັນທີ..........ເດືອນ..................ປີ............ເວລາ......................ໂມງ...........ນາທີ,ທີ່ຫ້ອງປະຊຸມ ສານຂອງສານ.............ໄດ້ທຳການໄກ່ເກ່ຍຄະດີເລກທີ...............ລົງວັນທີ................

ລະຫວ່າງ

ທ້າວ/ນາງ..................................ນາມສະກຸນ................ອາຍຸ...........ປີ,ສັນຊາດ............., ອາຊີບ...... ...........ປັດຈຸບັນຢູ່ໜ່ວຍ............, ບ້ານ..............,ເມືອງ...................,ແຂວງ/ນະຄອນ........................ .....................................................................ໂຈດ

ທ້າວ/ນາງ...................................ນາມສະກຸນ................ອາຍຸ.........ປີ,ສັນຊາດ............., ອາຊີບ .....................ປັດຈຸບັນຢູ່ໜ່ວຍ............, ບ້ານ.................,ເມືອງ......................., ແຂວງ/ນະຄອນ.......... ....................................................................ຈຳໂຈດ

**ກ່ຽວເລື່ອງ:**........................................................

ຜ່ານການໄກ່ເກັ່ຍ ໂຈດ ແລະ ຈຳເລີຍ ສາມາດຕົກລົງກັນໄດ້ ດັ່ງນີ້:.................................................................................................................................... ....................................................................................................................................... ....................................................................................................................................... ....................................................................................................................................... .......................................................................................................................................

ສ່ວນຄ່າອາກອນຂອງລັດ ຈຳນວນ..................................ກີບ, ຝ່າຍ............................ຍິນດີ ຮັບຜິດຊອບເສັຍ, ພ້ອມນັ້ນຄ່າໃຊ້ຈ່າຍຕ່າງໆ ໃນການປະຕິບັດ ບົດບັນທຶກການໄກ່ເກັ່ຍ ແມ່ນຝ່າຍ ..........................ຍິນດີຮັບຜິດຊອບ.

ບົດບັນທຶກການໄກ່ເກັ່ຍສະບັບນີ້ ເຮັດຂຶ້ນດ້ວຍຄວາມສະໝັກໃຈຂອງທັງສອງຝ່າຍ ໂດຍບໍ່ມີການ ບັງຄັບ ນາບຂູ່ຂົ່ມ, ເມື່ອໄດ້ອ່ານໃຫ້ຄູ່ຄວາມຟັງແລ້ວ ເຫັນວ່າ ຖືກຕ້ອງຕາມການຕົກລົງ ຈຶ່ງພ້ອມກັນ ລົງລາຍເຊັນໄວ້ເປັນ ຫຼັກຖານ.

**ໂຈດ ແລະ ຈຳເລີຍ** **ປະທານຄະນະສານ** **ຈ່າສານ**

1...........................
2...........................

**ຜູ້ເຂົ້າຮ່ວມ**

1. ...........................................
2. ...........................................
3. ...........................................
4. ...........................................

- ຮ່າງຄຳສັ່ງປະຕິບັດຜົນຂອງການໄກ່ເກັ່ຍ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**
---------===000===---------

ແຂວງ/ນະຄອນ.................. ເລກທີ........./.............
ສານ................................ ລົງວັນທີ ..........................

# ຄຳສັ່ງປະຕິບັດຜົນຂອງການໄກ່ເກັ່ຍ

ອີງຕາມ ມາດຕາ 2 (ໃໝ່) ຂອງກົດໝາຍວ່າດ້ວຍ ສານປະຊາຊົນ ສະບັບປັບປຸງ ປີ 2003;
ອີງຕາມ ມາດຕາ 201 ຂອງກົດໝາຍວ່າດ້ວຍການດາເນີນຄະດີແພ່ງ ສະບັບປັບປຸງ ປີ2012;
ອີງຕາມ ບົດບັນທຶກການໄກ່ເກັ່ຍຂອງຄູ່ຄວາມ ສະບັບລົງວັນທີ....................................;
ອີງຕາມ ສຳນວນຄະດີ...................ເລກທີ................ລົງວັນທີ.................................

**ລະຫວ່າງ**

ທ້າວ/ນາງ....................................ນາມສະກຸນ..................ອາຍຸ...........ປີ,ສັນຊາດ............., ອາຊີບ ......................ປັດຈຸບັນຢູ່ໜ່ວຍ............., ບ້ານ.................,ເມືອງ..............................., ແຂວງ/ນະຄອນ .............................................................ໂຈດ;

ທ້າວ/ນາງ............................ນາມສະກຸນ.....................ອາຍຸ...........ປີ, ສັນຊາດ................., ອາຊີບ ......................ປັດຈຸບັນຢູ່ໜ່ວຍ............, ບ້ານ.................., ເມືອງ................................, ແຂວງ/ນະຄອນ .............................................................ຈຳເລີຍ;

**ກ່ຽວເລື່ອງ:**.............................

ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດຜົນຂອງການໄກ່ເກັ່ຍ ສະບັບລົງວັນທີ........................ຢ່າງຖືກຕ້ອງ ແລະ ຄົບຖ້ວນ.

ປະທານສານ..........................ຈຶ່ງອອກຄຳສັ່ງສະບັບນີ້ ໃຫ້ຄູ່ຄວາມທັງສອງຝ່າຍ ຈົ່ງພ້ອມກັນປະຕິບັດຢ່າງເຂັ້ມງວດ.

**ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.**

**ຫົວໜ້າຄະນະສານ**

# ບົດທີ 4
# ຫຼັກຖານ

## 1. ຄວາມໝາຍຂອງຫຼັກຖານ

ຫຼັກຖານໝາຍເຖິງຂໍ້ມູນອ້າງອີງ ທີ່ຄູ່ຄວາມ, ບຸກຄົນທີສາມ ຫຼື ສານເປັນຜູ່ປະກອບ ແລະ ເກັບກຳມາເພື່ອຢັ້ງຢືນໃຫ້ແກ່ການຮ້ອງຟ້ອງ ຫຼື ຮ້ອງຂໍ, ການແກ້ຟ້ອງ ຫຼື ການຟ້ອງແຍ່ງຂອງຄູ່ຄວາມເພື່ອໃຫ້ສານພິຈາລະນາ, ທັງເປັນສິ່ງທີ່ໃຊ້ເພື່ອກຳນົດສິ່ງໃດສິ່ງໜຶ່ງ ທີ່ມີຄວາມຈິງທາງດ້ານກົດໝາຍ ບົນພື້ນຖານການຕີລາຄາຢ່າງຮອບຄອບ ແລະ ເດັດຂາດຂອງຜູ່ພິພາກສາທີ່ຮັບຜິດຊອບຄົ້ນຄວ້າຄະດີ.

" ຫຼັກຖານໃນຄະດີແພ່ງ ແມ່ນບັນດາແຫຼ່ງຂໍ້ມູນເປັນຕົ້ນແມ່ນວັດຖຸ, ເອກະສານ, ຄຳໃຫ້ການທີ່ພົວພັນກັບຄະດີ ຊຶ່ງຄູ່ຄວາມ, ບຸກຄົນທີສາມ ຫຼື ສານ ນຳມາຍື່ນຕໍ່ສານປະກອບ ແລະ ເກັບກຳມາ ເພື່ອຊ່ວຍໃຫ້ສານສາມາດກຳນົດເຫດການທີ່ພາໃຫ້ມີການຮ້ອງຟ້ອງ ຫຼື ຮ້ອງຂໍ, ການແກ້ຟ້ອງ ຫຼື ການຟ້ອງແຍ່ງ ແລະ ເຫດການອື່ນທີ່ມີຄວາມໝາຍສຳຄັນ ເພື່ອເປັນບ່ອນອີງໃຫ້ແກ່ສານໃນການຕັດສິນຄະດີຢ່າງຖືກຕ້ອງ"[57].

ສາມາດເວົ້າໄດ້ວ່າ: ຫຼັກຖານໃນຄະດີແພ່ງ ແມ່ນບັນດາຂໍ້ມູນທີ່ມີຈິງ ຊຶ່ງຄູ່ຄວາມລວມມີ: ໂຈດ, ຈຳເລີຍ, ບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງປະກອບໃຫ້ສານ ຫຼື ໂດຍແມ່ນສານເປັນຜູ່ເກັບກຳຕາມຂັ້ນຕອນ ແລະ ລະບຽບການ ຊຶ່ງກົດໝາຍການດຳເນີນຄະດີແພ່ງໄດ້ກຳນົດ, ເພື່ອຊີ້ແຈງໃຫ້ເຫັນການຮ້ອງຟ້ອງ ຫຼື ຮ້ອງຂໍ, ການແກ້ຟ້ອງ ຫຼື ຟ້ອງແຍ່ງຂອງຄູ່ຄວາມແມ່ນມີບ່ອນອີງ, ສອດຄ່ອງຕາມຄວາມເປັນຈິງ ຊຶ່ງຊ່ວຍເຮັດໃຫ້ການດຳເນີນຄະດີຖືກດຳເນີນໄປຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ.

ຂອງຫຼັກຖານໃນຄະດີແພ່ງມີຄຸນລັກສະນະດັ່ງນີ້:

- ຄຸນລັກສະນະພາວະວິໄສ: ຫຼັກຖານປາກົດຕົວ ແລະ ຄົງຕົວແບບພາວະວິໄສ ບໍ່ຂຶ້ນກັບແນວຄວາມຄິດຂອງຄົນ.

- ຄຸນລັກສະນະກ່ຽວພັນ: ຫຼັກຖານແມ່ນຂໍ້ມູນເປັນພື້ນຖານໃຫ້ແກ່ການຢັ້ງຢືນການຄົງຕົວ ຫຼື ບໍ່ຄົງຕົວຂອງບັນດາປາກົດການ ທີ່ມີຄວາມໝາຍໃຫ້ແກ່ການດຳເນີນຄະດີແພ່ງ; ບັນດາປາກົດການ, ເຫດການທີ່ຖືວ່າເປັນຫຼັກຖານໄດ້ກໍຕໍ່ເມື່ອມັນບັນຈຸບັນດາເນື້ອໃນທີ່ກ່ຽວພັນເຖິງການດຳເນີນຄະດີ.

- ຄຸນລັກສະນະສອດຄ່ອງ: ບໍ່ແມ່ນວ່າຂໍ້ມູນຕົວຈິງໃດໆ ທີ່ພົວພັນເຖິງບັນດາປາກົດການ, ເຫດການຂອງຄະດີລ້ວນແຕ່ຖືວ່າແມ່ນບ່ອນອີງໃຫ້ສານໃນການດຳເນຄະດີ ຊຶ່ງມີພຽງແຕ່ຂໍ້ມູນທີ່ເກັບກຳໄດ້ຜ່ານການກວດກາ ແລະ ຊັ່ງຊາຕີລາຄາຕາມກົດໝາຍໄດ້ກຳນົດ ຈຶ່ງຈະຖືວ່າເປັນຫຼັກຖານທີ່ສອດຄ່ອງ ແລະ ມີຄຸນຄ່າທາງດ້ານກົດໝາຍ.

ຄຸນລັກສະນະສອດຄ່ອງຂອງຫຼັກຖານສາມາດສະຫຼຸບໄດ້ດັ່ງນີ້:

- ຕ້ອງແມ່ນຫຼັກຖານທີ່ບໍ່ຂັດກັບກົດໝາຍການດຳເນີນຄະດີແພ່ງ.
- ຕ້ອງແມ່ນຫຼັກຖານທີ່ໄດ້ຜ່ານການກວດກາ, ຢັ້ງຢືນຢ່າງຄັກແນ່.
- ຕ້ອງແມ່ນຫຼັກຖານທີ່ສະໜອງໃຫ້ຕາມໄລຍະເວລາທີ່ສານ ຫຼື ກົດໝາຍໄດ້ກຳນົດໄວ້.
- ຕ້ອງແມ່ນຫຼັກຖານທີ່ເປີດເຜີຍຕາມຂໍ້ກຳນົດຂອງກົດໝາຍ.
- ຕ້ອງແມ່ນຫຼັກຖານທີ່ໄດ້ຜ່ານການປະກອບ ແລະ ເກັບກຳຢ່າງຖືກຕ້ອງຕາມຂໍ້ກຳນົດຂອງກົດໝາຍ.

ນອກນັ້ນ ຫຼັກຖານທັງໝົດທີ່ກ່ຽວຂ້ອງກັບເຫດການຂອງຄະດີແມ່ນເກີດຂຶ້ນພ້ອມກັບເຫດການຂອງຄະດີ ບໍ່ໝາຍຄວາມວ່າ ເກີດມີເຫດການແລ້ວ ຈຶ່ງສ້າງຫຼັກຖານຂຶ້ນມາຢັ້ງຢືນເຫດການນັ້ນ ອາດຈະເຮັດໃຫ້ຫຼັກຖານມີການຄາດເຄື່ອນທັງບໍ່ສອດຄ່ອງກັບຄວາມເປັນຈິງ.

---

[57] ກົດໝາຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 96

## 2. ຄວາມສຳຄັນຂອງຫຼັກຖານ

ຫຼັກຖານມີບົດບາດສຳຄັນໃນກໍລະນີໃນຂັ້ນຕອນການດຳເນີນຄະດີ ເພື່ອຊອກຫາຄວາມຈິງທີ່ເປັນພື້ນຖານໃຫ້ແກ່ການຕັດສິນຄະດີຂອງສານ ເພື່ອຮັບປະກັນສິດຜົນປະໂຫຍດອັນຊອບທຳໃຫ້ແກ່ຄູ່ຄວາມ, ຮັບປະກັນໃຫ້ແກ່ການດຳເນີນຄະດີ ຂອງສານດຳເນໄປຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ.

ເພື່ອຢາກໃຫ້ການດຳເນີນຄະດີແພ່ງມີຄວາມຖືກຕ້ອງ, ສາມາດກຳນົດໄດ້ຄວາມຈິງພາວະວິໄສ, ມີຜົນສະຫຼຸບທີ່ຖືກຕ້ອງ, ສານຕ້ອງອີງໃສ່ຫຼັກຖານເພື່ອຢັ້ງຢືນທາດແທ້ຂອງຂໍ້ຂັດແຍ່ງທີ່ເກີດຂຶ້ນຂອງຄູ່ຄວາມ; ຫຼັກຖານແມ່ນສິ່ງຢັ້ງຢືນເພື່ອກຳນົດເຫດການທີ່ມີຄວາມໝາຍຕໍ່ກັບການດຳເນີນຄະດີແພ່ງ; ສະນັ້ນ ຫຼັກຖານຈຶ່ງມີຄວາມສຳຄັນໃນກໍລະນີແກ່ຄູ່ຄວາມເພາະຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຈະຮຽກຮ້ອງໃຫ້ຄູ່ຄວາມອີກຝ່າຍໜຶ່ງປະຕິບັດພັນທະແກ່ຕົນນັ້ນ ຕ້ອງໃຫ້ມີຫຼັກຖານມາຢັ້ງຢືນການຮຽກຮ້ອງຂອງຕົນ ຢ່າງຄົບຖ້ວນ, ໜັກແໜ້ນ ທາງດ້ານກົດໝາຍ, ເພາະສານຈະຮັບຮູ້ສິດທີ່ຂັດແຍ່ງກັນກໍຕໍ່ເມື່ອ ມີຫຼັກຖານທາງດ້ານນິຕິກຳ ຫຼື ນິຕິເຫດ ທີ່ພາໃຫ້ກຳເດແກ່ສິດຂອງຜູ່ຮຽກຮ້ອງ, ກົງກັນຂ້າມ ຖ້າການຮຽກຮ້ອງຂອງຄູ່ຄວາມນັ້ນ ຫາກປາສະຈາກຂໍ້ມູນຫຼັກຖານຢ່າງຄົບຖ້ວນແລ້ວ ສານກໍຈະບໍ່ຮັບຮູ້ສິດໃນການຮຽກຮ້ອງນັ້ນ, ເວັ້ນເສັຍແຕ່ ຜູ່ຖືກຮຽກຮ້ອງນັ້ນ ຫາກຮັບຮູ້ການຮຽກຮ້ອງດັ່ງກ່າວເທົ່ານັ້ນ ຈຶ່ງສາມາດເປັນພື້ນຖານໃຫ້ແກ່ສານພິຈາລະນາຕັດສິນໄດ້.

– ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫາກຂາດຫຼັກຖານຢັ້ງຢືນ ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຕົນຈະເປັນຜົນສະທ້ອນໃຫ້ຕົນເອງກາຍເປັນຝ່າຍທີ່ເສັຍປຽບ ໃນການຕໍ່ສູ້ຄະດີຢູ່ສານ, ສະນັ້ນ ຫຼັກຖານຈຶ່ງເປັນກຸນແຈໃນການຊອກຫາຄວາມຈິງ ເພື່ອພິສູດຄວາມໂປ່ງໃສຂອງຄູ່ຄວາມ ສາມາດເຮັດໃຫ້ການແກ້ໄຂຂໍ້ຂັດແຍ່ງ ທີ່ເກີດຂຶ້ນລະຫວ່າງຄູ່ຄວາມຈົບລົງໂດຍໄວ ແລະ ສ້າງຄວາມ ເຊື່ອຖືໃຫ້ແກ່ການຕັດສິນຄະດີຂອງສານຖືກດຳເນີນໄປຢ່າງພາວະວິໄສ, ປາສະຈາກການທາງສຽງຈົ່ມວ່າ ຈາກສັງຄົມວ່າສານຕັດສິນບໍ່ຖືກຕ້ອງບໍ່ມີຄວາມເປັນທຳ ຊຶ່ງຕັດສິນໂດຍຂາດຫຼັກຖານອ້າງອີງ.

**ຕົວຢ່າງ:** ຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງ ທ້າວ ກ ແລະ ທ້າວ ຂ ຊຶ່ງ ທ້າວ ກ ອ້າງວ່າ ທ້າວ ຂ ໄດ້ລະເມີດສັນຍາຊື້ຂາຍລົດຈັກນຳຕົນ, ແຕ່ ທ້າວ ຂ ໄດ້ປະຕິເສດວ່າ ຕົນເອງບໍ່ເຄີຍຕົກລົງຊື້ລົດຈັກນຳ ທ້າວ ກ ແຕ່ຢ່າງໃດ, ສ່ວນທ້າວ ກ ພັດອ້າງວ່າ ຕົນມີສັນຍາທີ່ເປັນລາຍລັກອັກສອນ, ມີການຢັ້ງຢືນຈາກທະບຽນສານຢ່າງຄັກແນ່, ສານຈະນຳໃຊ້ດຸນພິນິດຈາກຫຼັກຖານທີ່ ທ້າວ ກ ສະໜອງໃຫ້ນັ້ນ ເພື່ອເປັນບ່ອນອີງໃນການພິຈາລະນາຄະດີດັ່ງກ່າວ; ຈາກສິ່ງທີ່ກ່າວມານີ້ ທ້າວ ກ ຈະເປັນຝ່າຍໄດ້ປຽບໃນການໄດ້ສິດ, ສ່ວນທ້າວ ຂ ຈະເປັນຝ່າຍ ເສັຍປຽບໃນການເສັຍສິດ ແລະ ສານຈະມີບ່ອນອີງໃນການພິຈາລະນາຕັດສິນຄະດີດັ່ງກ່າວ ຍ້ອນມີຫຼັກຖານ ທາງດ້ານເອກະສານທີ່ ທ້າວ ກ ສະໜອງໃຫ້ແກ່ສານ.

– ຫຼັກຖານແມ່ນສິ່ງຢັ້ງຢືນຢ່າງພາວະວິໄສ ທັງເປັນຄວາມສອດຄ່ອງທາງດ້ານໂລຊິກ (Logic) ຊ່ວຍໃຫ້ຜູ່ພິພາກສາ ແລະ ພາກສ່ວນຢັ້ງຢືນອື່ນໆ ສາມາດກຳນົດຄວາມເຊື່ອຖືໄດ້ດ້ວຍຄວາມໝັ້ນໃຈຕົນເອງ.

– ຫຼັກຖານເປັນພື້ນຖານຊ່ວຍໃຫ້ການດຳເນີນຄະດີຂອງສານ ສາມາດດຳເນໄປຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ທັງສ້າງຄວາມໂປ່ງໃສ ໃຫ້ແກ່ການດຳເນີນຄະດີ, ເປັນການເປີດໂອກາດໃຫ້ແກ່ຄູ່ຄວາມແຕ່ລະຝ່າຍໄດ້ສະແດງຄວາມບໍລິສຸດຕໍ່ເຈດຈຳນົງຂອງຕົນ ພ້ອມນີ້ຫຼັກຖານຍັງແມ່ນພາຫານະ ທີ່ຊ່ວຍໃຫ້ສານສາມາດຕັດສິນຄະດີໄດ້ໂດຍອາໄສຫຼັກຖານທີ່ໜ້າເຊື່ອຖືໄດ້ເປັນບ່ອນອີງ ຈຶ່ງສ້າງຄວາມໝັ້ນໃຈແກ່ຜູ່ພິພາກສາ.

– ສັງລວມແລ້ວ ຫຼັກຖານ ແມ່ນບັນຫາໃຈກາງ ແລະ ເປັນແກ່ນສານຂອງການດຳເນີນຄະດີແພ່ງ, ທຸກຂັ້ນຕອນຂອງການດຳເນີນຄະດີແພ່ງ ນັບແຕ່ບາດກ້າວ ການຍື່ນຄຳຮ້ອງຟ້ອງຂອງໂຈດ ຈົນສິ້ນສຸດການດຳເນີນຄະດີ ແລະ ຜົນຂອງການດຳເນີນຄະດີດັ່ງກ່າວ ລ້ວນແຕ່ຂຶ້ນກັບຫຼັກຖານເປັນສ່ວນໃຫຍ່, ດ້ວຍເຫດນີ້ ຈຶ່ງສາມາດເວົ້າໄດ້ວ່າ ນີ້ແມ່ນສ່ວນສຳຄັນທີ່ສຸດເພື່ອຢັ້ງຢືນກ່ຽວກັບເຫດການຄວາມເປັນຈິງຂອງຄະດີ, ໂດຍອີງໃສ່ຫຼັກຖານເທົ່ານັ້ນ ຈຶ່ງເຮັດໃຫ້ຄູ່ຄວາມມີບ່ອນອີງໃນການປົກປ້ອງ ສິດຜົນປະໂຫຍດອັນຊອບທຳຂອງຕົນ, ບັນດາສານທີ່ມີສິດອຳນາດໃນການດຳເນີນຄະດີແພ່ງ ຈະສາມາດກຳນົດເຫດການຄະດີ ແລະ ນຳໃຊ້ກົດໝາຍໃສ່ເຫດການຄະດີໄດ້ຢ່າງຖືກຕ້ອງ, ຄົບ

ຖ້ວນ, ຈະແຈ້ງເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນໃນການພິຈາລະນາຕັດສິນໃຫ້ຖືກກົດໝາຍ ໂດຍອີງໃສ່ຂໍ້ມູນຫຼັກຖານເປັນຕົ້ນຕໍ.

## 3. ທີ່ມາຂອງຫຼັກຖານ

ທີ່ມາຂອງຫຼັກຖານແມ່ນບ່ອນທີ່ຫຼັກຖານໄດ້ເກີດຂຶ້ນພ້ອມກັບນິຕິເຫດ ຫຼື ເຫດການໃດໜຶ່ງ ຊຶ່ງເປັນສິ່ງຢັ້ງຢືນເຖິງ ນິຕິເຫດ ຫຼື ເຫດການນັ້ນ ຢ່າງສັດຈະວິພາກ ແລະ ຄົງຕົວ ຊຶ່ງບໍ່ສາມາດມີການປ່ຽນແປງໄດ້, ຫຼັກຖານມີທີ່ມາຈາກຫຼາຍແຫຼ່ງແຕກຕ່າງກັນໄປ ໂດຍຂຶ້ນກັບນິຕິເຫດ ຫຼື ເຫດການ ຊຶ່ງຄູ່ຄວາມໄດ້ສ້າງຂຶ້ນ.

ຫຼັກຖານມີທີ່ມາຈາກ: ບັນດາເອກະສານທີ່ສາມາດອ່ານໄດ້, ເບິ່ງໄດ້, ຈັບບາຍໄດ້ ຫຼື ຟັງສຽງໄດ້; ບັນດາວັດຖຸ, ຄຳໃຫ້ການຂອງຄູ່ຄວາມ, ຄຳໃຫ້ການພະຍານ; ບົດສະຫຼຸບຂອງການກວດກາ; ບົດບັນທຶກຜົນຂອງການລົງກວດກາຢູ່ສະຖານທີ່ຂໍ້ຂັດແຍ່ງເກີດຂຶ້ນ; ການວາງສະແດງວັດຖຸສິ່ງຂອງຕ່າງໆ; ຜົນຂອງການປະເມີນລາຄາຊັບສິນ ແລະ ບັນດາແຫຼ່ງທີ່ມາຂອງຫຼັກຖານອື່ນຕາມກົດໝາຍໄດ້ກຳນົດ.

ຫຼັກຖານໄດ້ມາຈາກທີ່ມາດັ່ງນີ້: (1). ເອກະສານ, ວັດຖຸສິ່ງຂອງ ແລະ ສຽງ; (2). ການວາງສະແດງວັດຖຸສິ່ງຂອງຕ່າງໆ; (3). ການໃຫ້ການຂອງຄູ່ຄວາມ, ບຸກຄົນທີສາມ, ພະຍານໃນຄະດີ; (4). ບົດສະຫຼຸບ ຫຼື ບົດລາຍງານຂອງຜູ່ຊ່ຽວຊານ ຫຼື ເຈົ້າໜ້າທີ່ກ່ຽວຂ້ອງ ລວມທັງຂໍ້ມູນຈາກປະເທດທີ່ ສປປ ລາວ ເປັນພາຄີໃນສັນຍາ ແລະ ສົນທິສັນຍາສາກົນກ່ຽວກັບວຽກງານຍຸຕິທຳ; (5). ບົດບັນທຶກລົງກວດກາບັນຫາທີ່ຂັດແຍ່ງ; (6). ຜົນຂອງການຕີລາຄາຊັບສົມບັດທີ່ຂັດແຍ່ງ; (7). ທີ່ມາອື່ນໆທີ່ຖືກຕ້ອງຕາມກົດໝາຍ[58].

ຕໍ່ກັບຂໍ້ກຳນົດຂ້າງເທິງນັ້ນ, ສາມາດເວົ້າໄດ້ວ່າ: ທີ່ມາຂອງຫຼັກຖານໃນການດຳເນີນຄະດີແພ່ງ ຕາມກົດໝາຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012 ໄດ້ການົດພຽງແຕ່ 6 ທີ່ມາຕົ້ນຕໍຂອງຫຼັກຖານເທົ່ານັ້ນ, ນອກຈາກ 6 ທີ່ມາຂອງຫຼັກຖານນີ້ແລ້ວ ໃນຂໍ້ທີ 7 ຍັງໄດ້ກຳນົດວ່າ: “ ທີ່ມາອື່ນໆທີ່ຖືກຕ້ອງຕາມກົດໝາຍ” ໝາຍຄວາມວ່າ ນອກຈາກແຫຼ່ງທີ່ມາຂອງຫຼັກຖານທີ່ກຳນົດໄວ້ໃນກົດໝາຍແລ້ວ ສານຍັງສາມາດນຳໃຊ້ແຫຼ່ງທີ່ມາຂອງຫຼັກຖານອື່ນ ທີ່ເຫັນວ່າບໍ່ຂັດກັບກົດໝາຍມາເປັນພື້ນຖານໃນການພິຈາລະນາຕັດສິນຄະດີກໍໄດ້.

ເຖິງຢ່າງໃດກໍຕາມ, ບໍ່ແມ່ນວ່າບັນດາເອກະສານ, ເຫດການຕ່າງໆ ທີ່ໄດ້ມາຈາກແຫຼ່ງທີ່ມາຂອງຫຼັກຖານກໍຈະຖືວ່າເປັນຫຼັກຖານ ແລະ ນຳໃຊ້ເຂົ້າໃນການພິຈາລະນາຕັດສິນໄດ້ ຊຶ່ງບັນດາເອກະສານ ແລະ ເຫດການຕ່າງໆນີ້ ຕ້ອງຮັບປະກັນຄຸນລັກສະນະພື້ນຖານຂອງຫຼັກຖານ ກໍຄືຕ້ອງແມ່ນຫຼັກຖານທີ່ສາມາດຢັ້ງຢືນຄວາມເປັນຈິງຢ່າງແນ່ນອນພ້ອມກັນນັ້ນຕ້ອງສອດຄ່ອງກັບຂໍ້ກຳນົດຂອງກົດໝາຍການດຳເນີນຄະດີແພ່ງ.

**ຕົວຢ່າງ:** ບົດບັນທຶກຄຳໃຫ້ການຄູ່ຄວາມ ແມ່ນທີ່ມາຂອງຫຼັກຖານ ຊຶ່ງມີກໍລະຄຳໃຫ້ການທັງໝົດເປັນຄຳໃຫ້ການເທັດ, ຄຳໃຫ້ການດັ່ງກ່າວນັ້ນຈະບໍ່ຖືວ່າເປັນຫຼັກຖານທີ່ຖືກຕ້ອງໄດ້.

ບັນດາຫຼັກຖານທີ່ກ່າວມາຂ້າງເທິງນັ້ນ ແມ່ນໄດ້ມາໂດຍທາງກົງ ແລະ ທາງອ້ອມ ຊຶ່ງເວົ້າວ່າຫຼັກຖານທາງກົງ ແລະ ຫຼັກຖານທາງອ້ອມ:

- **ຫຼັກຖານທາງກົງ**

ຫຼັກຖານທາງກົງແມ່ນຫຼັກຖານທີ່ມີສາຍພົວພັນໂດຍກົງກັບກັບຄະດີສະແດງໃຫ້ເຫັນຜົນສະຫຼຸບກ່ຽວກັບບັນຫາຂອງເປົ້າໝາຍທີ່ຢັ້ງຢືນ ເຊັ່ນ: ໜັງສືສັນຍາ, ໜັງສືຢັ້ງຢືນມອບກຳມະສິດ ຫຼື ບົດບັນທຶກຄຳໃຫ້ການຂອງພະຍານ ທີ່ຢັ້ງຢືນເຫດການເກີດຂຶ້ນໂດຍກົງ.

- **ຫຼັກຖານທາງອ້ອມ**

ຫຼັກຖານທາງອ້ອມແມ່ນຫຼັກຖານ ຊຶ່ງຕ້ອງໄດ້ຜ່ານໃນກໍລະນີຂັ້ນຕອນໃນການພິສູດຈຶ່ງສາມາດສະຫຼຸບໄດ້ກ່ຽວກັບບັນຫາຂອງເປົ້າໝາຍທີ່ຢັ້ງຢືນເຫດການເກີດ ເຊັ່ນ ໜັງສືຢັ້ງຢືນອື່ນ, ຕາປະທັບ, ລາຍເຊັນ... ອີງໃສ່ຫຼັກຖານທາງ

[58] ກົດຫມາຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 97

ອ້ອມຈຶ່ງສາມາດຊອກໄດ້ຫຼັກຖານທາງກົງ; ຕ້ອງໃຫ້ບູລິມະສິດປະກອບ ແລະເກັບກາຫຼັກຖານທາງກົງ ແຕ່ບໍ່ຄວນປະລະຫຼັກຖານທາງອ້ອມ.

## 4. ປະເພດຫຼັກຖານ

ປະເພດຫຼັກຖານແມ່ນບັນດາຄຸນລັກສະນະຫຼືເອກະລັກຂອງຫຼັກຖານແຕ່ລະຢ່າງຊຶ່ງຕ້ອງຈັດເປັນກຸ່ມຂອງແຕ່ລະປະເພດຫຼັກຖານຊຶ່ງເປັນການສະດວກແກ່ການດຳເນີນຄະດີໃນການໄຈ້ແຍກ ແລະ ວິເຄາະຫຼັກຖານໂດຍຮັບປະກັນບໍ່ໃຫ້ມີການສັບສົນປົນເປກັນ; ຫຼັກຖານມີສາມປະເພດຄື: ຫຼັກຖານທາງດ້ານວັດຖຸ, ຫຼັກຖານທາງດ້ານເອກະສານ ແລະ ຫຼັກຖານທາງດ້ານບຸກຄົນ[59].

### 4.1. ຫຼັກຖານທາງດ້ານວັດຖຸ

ຫຼັກຖານທາງດ້ານວັດຖຸ ແມ່ນຫຼັກຖານທີ່ໄດ້ມາຈາກວັດຖຸທີ່ແຕກຕ່າງກັນຂອງໂລກວັດຖຸ, ແມ່ນວັດຖຸທີ່ບັນຈຸບັນດາຂໍ້ມູນກ່ຽວພັນກັບຄະດີແພ່ງ, ວັດຖຸທີ່ເປັນຫຼັກຖານນັ້ນ ຕ້ອງໃຫ້ອ່ານໄດ້, ເບິ່ງເຫັນໄດ້, ຈັບບາຍໄດ້ ຫຼື ຟັງສຽງໄດ້ ເນື່ອງຈາກວ່າ ຫຼັກຖານທີ່ເປັນວັດຖຸນັ້ນ ຕ້ອງໄດ້ນຳມາຜ່ານການຊັ່ງຊາຕີລາຄາຂອງສານເພື່ອໃຫ້ຄຳວິນິດໄສກ່ຽວກັບວັດຖຸທີ່ເປັນຫຼັກຖານສາມາດສ່ອງແສງເຖິງຄວາມເປັນຈິງຂອງຄະດີ, ສະນັ້ນ ມັນມີຄວາມຈຳເປັນໃນກໍລະນີກ່ຽວກັບຫຼັກຖານທາງດ້ານວັດຖຸ ທີ່ເຮັດໃຫ້ຄູ່ຄວາມ ຫຼື ສານສາມາດເຂົ້າໃຈເນື້ອແທ້ ແລະ ຄຸນລັກສະນະຂອງວັດຖຸທີ່ກ່ຽວຂ້ອງ.

ຫຼັກຖານທາງດ້ານວັດຖຸ ແມ່ນວັດຖຸຕົ້ນສະບັບປັດຈຸບັນ ຫຼື ຫຼັກຖານທາງດ້ານວັດຖຸທີ່ພົວພັນເຖິງຄະດີແພ່ງຈຶ່ງຈະມີຄຸນຄ່າທາງດ້ານນິຕິກຳ; ສະນັ້ນ ສານບໍ່ພຽງແຕ່ເກັບກຳຫຼັກຖານທາງດ້ານວັດຖຸ ຕາມຂັ້ນຕອນຂໍ້ກຳນົດຂອງກົດໝາຍ ຊຶ່ງຍັງຕ້ອງປົກປັກຮັກສາເພື່ອຮັບປະກັນຄຸນຄ່າຂອງຫຼັກຖານທາງດ້ານວັດຖຸ; ຖ້າຄູ່ຄວາມສະໜອງຂໍ້ມູນຫຼັກຖານໃຫ້ແກ່ສານແລ້ວ, ຜູ້ພິພາກສາຕ້ອງສ້າງບົດບັນທຶກພັນລະນາລາຍລະອຽດກ່ຽວກັບຮູບລັກສະນະຂອງວັດຖຸ, ໂດຍສະເພາະສັນຍາລັກ ທີ່ສະແດງໃຫ້ເຫັນຢູ່ໃນວັດຖຸດັ່ງກ່າວ, ຕໍ່ກັບວັດຖຸທີ່ບໍ່ສາມາດເຄື່ອນຍ້າຍໄດ້ ຕ້ອງໄດ້ມີການພິຈາລະນາກັບທີ່, ວັດຖຸທີ່ເຊື່ອມຄຸນນະພາບໄວຕ້ອງພິຈາລະນາໃຫ້ທັນເວລາ ແລະ ສະແດງໃຫ້ເຫັນຢ່າງຄົບຖ້ວນໃນຂັ້ນຕອນການພິຈາລະນາຄືສ້າງບົດບັນທຶກ, ຖ່າຍຮູບໄວ້, ຖ່າຍວີດີໂອບັນທຶກ ຫຼື ນຳໃຊ້ມາດຕະການອື່ນເພື່ອຮັກສາວັດຖຸ ກໍຄືຄຸນນະພາບຂອງມັນ ໄວ້ຢ່າງຍາວນານ ຈົນກວ່າການດຳເນີນຄະດີສິ້ນສຸດລົງ.

ບຸກຄົນຜູ່ສະເໜີຫຼັກຖານທາງດ້ານວັດຖຸໂດຍຕົນເອງ ມີພັນທະຊີ້ແຈງກ່ຽວກັບເຫດການ ຫຼື ທີ່ມາຂອງຫຼັກຖານເພື່ອເປັນບ່ອນອີງໃນການພິຈາລະນາຄະດີຢູ່ສານ ທັງນີ້ກໍເນື່ອງຈາກວ່າໃນການພິຈາລະນາຕັດສິນຄະດີຂອງສານແມ່ນເລັງໃສ່ບັນດາຂໍ້ມູນຫຼັກຖານທຸກຢ່າງທີ່ຄູ່ຄວາມໄດ້ສະເໜີຕໍ່ສານເພື່ອຢັ້ງຢືນ ຄຳຮ້ອງຟ້ອງ, ຄຳແກ້ຟ້ອງຫຼືຟ້ອງແຍ່ງຂອງຕົນ, ສະນັ້ນຖ້າຄູ່ຄວາມຫາກໄດ້ສະເໜີຫຼັກຖານທາງດ້ານວັດຖຸ ແກ່ສານແລ້ວເຮັດແນວໃດເພື່ອໃຫ້ສານເຂົ້າໃຈວັດຖຸທີ່ຄູ່ຄວາມນຳມາເປັນຫຼັກຖານນັ້ນມີການພົວພັນກັບເຫດການຂອງຄະດີກໍຕ້ອງແມ່ນຄູ່ຄວາມເອງເປັນຜູ່ອະທິບາຍ ຫຼື ແຈ້ງຕໍ່ສານກ່ຽວກັບທີ່ມາຂອງຫຼັກຖານ ຊຶ່ງພົວພັນກັບຄະດີ.

**ຕົວຢ່າງ:** *ທ້າວກ ອ້າງວ່າທ້າວຂໍຂັບຂີ່ລົດຕຳກັບລົດຈັກຂອງຜູ່ກ່ຽວເຮັດໃຫ້ກົງລົດບິດບ້ຽວໂດຍທ້າວ ກ ໄດ້ເອົາກົງລົດນັ້ນມາສະແດງຕໍ່ສານໃນກໍລະນີນີ້ທ້າວກໍຕ້ອງໄດ້ອະທິບາຍຊີ້ແຈງ ໃຫ້ສານຮັບຮູ້ວ່າກົງລົດທີ່ທ້າວ ກ ນຳມາສະແດງນັ້ນແມ່ນກົງລົດຄັນໃດພ້ອມກັບສາເຫດພາໃຫ້ກົງລົດຖືກບິດບ້ຽວທັງນີ້ກໍເພື່ອໃຫ້ສານຮັບຮູ້ທີ່ມາຂອງຫຼັກຖານຈະແຈງອັນຈະເປັນຂໍ້ມູນໃຫ້ແກ່ການດຳເນີນຄະດີຖືກດຳເນີນໄປຕາມເປົ້າໝາຍ ແລະ ສອດຄ່ອງກັບເຫດການຂອງຄະດີ.*

ຖ້າວ່າຫຼັກຖານທາງດ້ານວັດຖຸທີ່ກ່ຽວຂ້ອງກັບຄະດີນັ້ນ ຫາກໄດ້ມາຈາກບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດທີ່ບໍ່ໄດ້ເຂົ້າຮ່ວມໃນຄະດີແລ້ວ ຫຼັກຖານດັ່ງກ່າວກໍຈະຖືກສົ່ງຄືນ ແຕ່ສານຕ້ອງໄດ້ບັນທຶກຫຼັກຖານດັ່ງກ່າວໄວ້ໃນ

[59] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 98

ສຳນວນຄະດີ; ໃນຫຼັກການນີ້ ມີຈຸດປະສົງຮັບປະກັນເຮັດໃຫ້ການດຳເນີນຄະດີຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ, ສະນັ້ນ ສານຈະພິຈາລະນາຕັດສິນຄະດີໃດໜຶ່ງໃຫ້ໄດ້ຕາມຈຸດປະສົງຄືແນວນັ້ນກໍຕ້ອງໃຫ້ ມີຫຼັກຖານເປັນບ່ອນອີງຢ່າງຈະແຈ້ງຈຶ່ງສາມາດສ້າງຄວາມໝັ້ນໃຈແກ່ສານໃນການລົງຄຳຕັດສິນ, ເມື່ອເປັນເຊັ່ນນັ້ນໃນເວລາສອບສວນປະກອບຫຼັກຖານດຳເນີນຄະດີ ນອກຈາກຄູ່ຄວາມມີພັນທະໃນການຍື່ນຫຼັກຖານທາງດ້ານວັດຖຸແກ່ສານແລ້ວຖ້າເຫັນວ່າຫຼັກຖານຍັງບໍ່ພຽງພໍສານມີສິດສະເໜີໃຫ້ຄູ່ຄວາມ ຫຼື ບຸກຄົນທີສາມຊອກມາເພີ່ມເຕີມ ຫຼື ສານມີສິດອອກຄຳສັ່ງໃຫ້ບຸກຄົນ ຫຼື ອົງການຈັດຕັ້ງທີ່ຄຸ້ມຄອງຫຼັກຖານທາງດ້ານວັດຖຸນັ້ນ ມາສະແດງຕໍ່ສານເພື່ອກວດກາ.

**ຕົວຢ່າງ:** ທ້າວ ກ ທວງເອົາສິດຄອບຄອງ ແລະ ນຳໃຊ້ທີ່ດິນ ຈາກ ທ້າວ ຂ ໂດຍ ທ້າວ ກ ອ້າງວ່າ ທ້າວ ຂ ໄດ້ລັກຂຶ້ນໃບຕາດິນກວມເອົາເນື້ອທີ່ດິນຂອງຜູ້ກ່ຽວ ຜ່ານການດຳເນີນຄະດີສານຕ້ອງການເອກະສານຂໍ້ມູນການອອກໃບຕາດິນຂອງທ້າວ ຂ ທີ່ອົງການຄຸ້ມຄອງທີ່ດິນຮັກສາໄວ້ເພື່ອນຳມາກວດກາສານກໍມີສິດອອກຄຳສັ່ງໃຫ້ອົງການຄຸ້ມຄອງທີ່ດິນນັ້ນນຳເອົາເອກະສານທີ່ກ່ຽວຂ້ອງກັບການຂຶ້ນໃບຕາດິນແກ່ທ້າວ ຂ ມາສະແດງຕໍ່ສານ ແລະ ສານກໍຈະສຳເນົາຫຼືບັນທຶກຜົນການກວດການັ້ນໄວ້ໃນສຳນວນຄະດີ ແລະ ສົ່ງເອກະສານໄດ້ກວດກາແລ້ວຄືນແກ່ອົງການຄຸ້ມຄອງທີ່ດິນ.

### 4.2. ຫຼັກຖານທາງດ້ານເອກະສານ

ຫຼັກຖານທາງດ້ານເອກະສານແມ່ນເອກະສານຕົ້ນສະບັບ ຫຼື ສະບັບສຳເນົາທີ່ມີການຢັ້ງຢືນຢ່າງຖືກຕ້ອງ ທັງໝົດທີ່ພົວພັນກັບເຫດການທີ່ຂັດແຍ່ງກັນ, ຖ້າເອກະສານຫາກເປັນພາສາຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ພ້ອມທັງຢັ້ງຢືນ ຫຼື ຮັບຮອງຈາກນາຍທະບຽນສານຄັກແນ່.

ບັນດາເອກະສານທີ່ເປັນຫຼັກຖານນັ້ນຕ້ອງແມ່ນເອກະສານຕົ້ນສະບັບ ຫຼື ສຳເນົາຊຶ່ງມີການຢັ້ງຢືນຄວາມຖືກຕ້ອງ ຫຼື ການຈັດຕັ້ງທີ່ມີສິດອຳນາດສະໜອງ ແລະ ຢັ້ງຢືນໃຫ້. ບັນດາເອກະສານທີ່ຟັງໄດ້, ເບິ່ງເຫັນໄດ້ຕ້ອງໄດ້ຄັດຕິດບັນດາເອກະສານທີ່ເປັນຕົ້ນກຳເນີດຂອງເອກະສານດັ່ງກ່າວ ຫຼື ເອກະສານທີ່ພົວພັນເຖິງການບັນທຶກສຽງ, ຖ່າຍວີດີໂອ; ບັນດາເອກະສານນີ້ ຈະແມ່ນບົດບັນທຶກ, ກະແຊັດບັນທຶກສຽງ, ແຜ່ນຊີດີບັນທຶກພາບ, ຟິມຮູບ ຊຶ່ງໄດ້ຜ່ານຂັ້ນຕອນການຄັດລອກອອກມາເປັນເອກະສານໂດຍມີການຢັ້ງຢືນຈາກຄູ່ຄວາມຈຶ່ງຖືວ່າເປັນຫຼັກຖານທີ່ໄດ້ມາຢ່າງຖືກຕ້ອງຕາມກົດໝາຍ; ຖ້າຄູ່ຄວາມຫາກບໍ່ສາມາດສະເໜີໃຫ້ ເຫັນບັນດາເອກະສານທີ່ກ່າວມານັ້ນແລ້ວ ບັນດາເອກະສານທີ່ຟັງໄດ້, ເບິ່ງເຫັນໄດ້ທີ່ຄູ່ຄວາມສະໜອງໃຫ້ ກໍຈະບໍ່ເປັນຫຼັກຖານ.

**ຕົວຢ່າງ:** ຫຼັກຖານທາງດ້ານເອກະສານແມ່ນໄດ້ມາຈາກໜັງສືຢັ້ງຢືນກຳມະສິດ, ສັນຍາ, ຮູບພາບ, ບັນຊີຊັບສິນ ແລະ ເອກະສານອື່ນທີ່ພົວພັນກັບຂໍ້ຂັດແຍ່ງ.

ບຸກຄົນຜູ້ສະເໜີຫຼັກຖານດ້ວຍຕົນເອງ ຫຼື ສະເໜີໃຫ້ສານທວງເອົາຫຼັກຖານໃດໜຶ່ງ ຊຶ່ງເປັນເອກະສານນັ້ນ ມີພັນທະຊີ້ແຈງກ່ຽວກັບເຫດການ ຫຼື ທີ່ມາຂອງຫຼັກຖານ ເພື່ອເປັນບ່ອນອີງໃນການພິຈາລະນາຄະດີຂອງສານ.

ຖ້າວ່າຫຼັກຖານທີ່ເປັນເອກະສານທີ່ກ່ຽວຂ້ອງກັບຄະດີນັ້ນ ຫາກໄດ້ມາຈາກບຸກຄົນ, ອົງການຈັດ ຕັ້ງ ຫຼື ວິສາຫະກິດ ທີ່ບໍ່ໄດ້ເຂົ້າຮ່ວມໃນຄະດີແລ້ວ ຫຼັກຖານດັ່ງກ່າວກໍຈະຖືກສົ່ງຄືນ ແຕ່ສານຕ້ອງໄດ້ບັນທຶກຫຼັກຖານດັ່ງກ່າວໄວ້ໃນສຳນວນຄະດີ.

ຫຼັກຖານທາງດ້ານເອກະສານນີ້ ກໍເປັນຫຼັກຖານໜຶ່ງທີ່ສຳຄັນໃນການດຳເນີນຄະດີເພາະຄູ່ຄວາມແຕ່ລະຝ່າຍພະຍາຍາມຊອກຫາຫຼືສ້າງເອກະສານໃຫ້ເປັນຫຼັກຖານມາຢັ້ງຢືນຕໍ່ສານ, ສະນັ້ນ ການສ້າງຫຼັກຖານທີ່ເປັນຫຼັກຖານນັ້ນຕ້ອງໄດ້ເອົາໃສ່ເປັນພິເສດເພື່ອເຮັດໃຫ້ຖືກຕ້ອງກັບຄວາມເປັນຈິງຂອງເຫດການຊຶ່ງເກີດຂຶ້ນ, ນອກນັ້ນຮູບແບບຂອງການສ້າງເອກະສານກໍຕ້ອງເອົາໃຈໃສ່ເຮັດໃຫ້ຖືກກັບຮູບແບບຂອງການສ້າງເອກະສານແຕ່ລະປະເພດເຊັ່ນ ເອກະສານສັນຍາກໍເຮັດຂຶ້ນຖືກກັບຮູບແບບຂອງສັນຍາຫຼືເອກະສານຢັ້ງຢືນກຳມະສິດໃນຊັບສິ່ງຂອງກໍຕ້ອງເຮັດໃຫ້ຖືກຕ້ອງກັບຮູບແບບ, ລົງວັນທີ, ເດືອນປີ, ລົງລາຍເຊັນ ແລະ ແປະໂປ້ມືຜູ້ກ່ຽວຂ້ອງພ້ອມປະຕາຄັກແນ່ຈຶ່ງເປັນເອກະສານສົມບູນອັນເຮັດໃຫ້ຜູ້ນຳໃຊ້ເອກະສານມີຄວາມໝັ້ນໃຈຕໍ່ເອກະສານຂອງຕົນ.

**4.3. ຫຼັກຖານທາງດ້ານບຸກຄົນ**

ຫຼັກຖານທາງດ້ານບຸກຄົນແມ່ນໄດ້ມາຈາກຄໍາໃຫ້ການຂອງຄູ່ຄວາມ, ຄໍາໃຫ້ການ ແລະ ການຢັ້ງຢືນຂອງພະຍານ ແລະ ຜູ່ເຂົ້າຮ່ວມໃນການດໍາເນີນຄະດີອື່ນທີ່ພົວພັນກັບຂໍ້ຂັດແຍ່ງ.

ຄໍາໃຫ້ການຂອງຄູ່ຄວາມ ຫຼື ບຸກຄົນທີສາມ ແມ່ນຫຼັກຖານທາງດ້ານບຸກຄົນ ຕ້ອງໄດ້ຮັບການບັນທຶກເປັນລາຍລັກອັກສອນ, ດ້ວຍການບັນທຶກສຽງ, ອັດແຜ່ນສຽງ, ວີດີໂອ ຫຼື ໃຫ້ການດ້ວຍປາກເປົ່າຢູ່ສານ.

ຄໍາໃຫ້ການຂອງ ຄູ່ຄວາມ ແລະ ບຸກຄົນທີສາມ ທີ່ກ່ຽວຂ້ອງກັບຄະດີຈະຖືກກວດກາ ແລະ ຕີລາຄາພ້ອມກັບຫຼັກຖານອື່ນທີ່ເກັບກໍາໄດ້ໃນຄະດີ[60].

ເຫດການ ຫຼື ຂໍ້ມູນທີ່ຄູ່ຄວາມອ້າງຂຶ້ນເປັນພື້ນຖານໃຫ້ແກ່ຄໍາຮ້ອງຟ້ອງ, ຄໍາແກ້ຟ້ອງ ຫຼື ຄໍາຟ້ອງແຍ່ງຂອງຕົນນັ້ນສານຈະໃຊ້ດຸນພິນິດ ເພື່ອພິຈາລະນາຕາມຄວາມເປັນຈິງ; ສານຈະຖືວ່າເຫດການຫຼືຂໍ້ມູນນັ້ນເປັນຄວາມຈິງໄດ້ກໍຕໍ່ເມື່ອສານຫາກເຊື່ອວ່າຄໍາກ່າວອ້າງຂອງຄູ່ຄວາມຖືກຕ້ອງຕາມເຫດການຕົວຈິງຂອງຄະດີ.

ບົດບັນທຶກຄໍາໃຫ້ການຂອງຄູ່ຄວາມ; ຄູ່ຄວາມ ແມ່ນຜູ່ທີ່ມີສິດຜົນປະໂຫຍດກ່ຽວຂ້ອງກັບຄະດີ, ເຂົາເຈົ້າແມ່ນຜູ່ທີ່ເຂົ້າຮ່ວມໂດຍກົງເຂົ້າໃນການພົວພັນທາງດ້ານກົດໝາຍທີ່ກໍາລັງມີຂໍ້ຂັດແຍ່ງ ຫຼື ກໍາລັງມີການດໍາເນີນການແກ້ໄຂຢູ່ສານ; ບົດບັນທຶກຄໍາໃຫ້ການຂອງຄູ່ຄວາມຂຶ້ນກັບຄວາມຊົງຈໍາ ແລະ ເຫດການ ຊຶ່ງມັກຈະມີລັກສະນະອັດຕະວິໄສ, ຄໍາເວົ້າໃນບົດບັນທຶກຄໍາໃຫ້ການຂອງຄູ່ຄວາມມັກ ຈະປົກປ້ອງສິດຜົນປະໂຫຍດອັນຊອບທໍາຂອງຕົນ, ຄວນພິຈາລະນາປະເດັນດັ່ງກ່າວນີ້ ເພື່ອໃຫ້ສານເຊື່ອໝັ້ນ ແລະ ເອົາໃຈໃສ່ເມື່ອມີການຊັ່ງຊາຕີລາຄາ; ຄໍາໃຫ້ການຂອງຄູ່ຄວາມຈະເຮັດດ້ວຍລາຍລັກອັກສອນ ຫຼື ດ້ວຍການບັນທຶກສຽງ, ຖ່າຍພາບຕາມຂັ້ນຕອນເວລາເອົາຄໍາໃຫ້ການ , ບັນທຶກປະຫວັດຫຍໍ້ ແລະ ລົງລາຍເຊັນຂອງຄູ່ຄວາມ.

ບົດບັນທຶກຄໍາໃຫ້ການຂອງບຸກຄົນທີສາມ ແມ່ນໄດ້ມາຈາການໃຫ້ການຂອງບຸກຄົນທີ່ບໍ່ແມ່ນຄູ່ຄວາມໂດຍກົງ, ແຕ່ຜູ່ກ່ຽວຫາກມີສ່ວນພົວພັນກັບເປົ້າໝາຍຂໍ້ຂັດແຍ່ງ ທີ່ໂຈດ ແລະ ຈໍາເລີຍ ພວມຂັດແຍ່ງກັນ ອັນໄດ້ແຕະຕ້ອງເຖິງຜົນປະໂຫຍດຂອງຜູ່ກ່ຽວ, ສະນັ້ນ ເພື່ອເປັນການປົກປ້ອງສິດ ແລະ ຜົນປະໂຫຍດນັ້ນ ບຸກຄົນທີສາມກໍຕ້ອງໃຫ້ການດ້ວຍຄວາມເປັນຈິງທີ່ຕົນເອງໄດ້ ພົວພັນກັບເປົ້າໝາຍຂໍ້ຂັດແຍ່ງ ເພື່ອສະເໜີໃຫ້ສານພິຈາລະນາໄປພ້ອມໆກັນ.

ບົດບັນທຶກຄໍາໃຫ້ການຂອງພະຍານ; ພະຍານ ແມ່ນຜູ່ທີ່ຮູ້ແຈ້ງກ່ຽວກັບບັນດາຂໍ້ມູນທີ່ກ່ຽວຂ້ອງເຖິງເຫດການ, ແຕ່ພັດບໍ່ມີສິດຜົນປະໂຫຍດໃນຄະດີດັ່ງກ່າວ, ເພາະສະນັ້ນ ຄໍາໃຫ້ການພະຍານມັກຈະທ້ອນໃຫ້ເຫັນລັກສະນະພາວະວິໄສ ກວ່າຄໍາໃຫ້ການຂອງຄູ່ຄວາມ, ແຕ່ກໍຈະມີສິ່ງໃດ ສິ່ງໜຶ່ງກະທົບໃສ່ ເຊັ່ນ ຊັກຊວນ, ຊື້ຈ້າງ ຊຶ່ງມີການໃຫ້ການຜິດພາດ, ຂາດຄວາມຊັດເຈນ; ຄໍາໃຫ້ການຂອງພະຍານຕາມຂໍ້ກໍານົດຂອງກົດໝາຍຕ້ອງໄດ້ບັນທຶກເປັນລາຍລັກອັກສອນ ຫຼື ບັນທຶກສຽງ, ບັນທຶກພາບ ແຕ່ຕ້ອງເຊັນຊື່ຮັບຮູ້ ແລະ ແປະໂປ້ມືໃສ່; ພະຍານຕ້ອງເປັນຜູ່ທີ່ມີກະສຽນອາຍຸ 18 ປີ ຂຶ້ນໄປ, ມີຄວາມສາມາດທາງດ້ານການປະພຶດຢ່າງຄົບຖ້ວນ; ຖ້າບຸກຄົນນັ້ນຫາກມີຄວາມສາມາດທາງດ້ານການປະພຶດຈໍາກັດ ຫຼື ສູນເສັຍຄວາມສາມາດທາງດ້ານການປະພຶດຕ້ອງມີຜູ່ຕາງໜ້າເຂົ້າຮ່ວມໃນເວລາດໍາເນີນຄະດີ.

ຄືດັ່ງທີ່ພວກເຮົາຮັບຮູ້ນໍາກັນແລ້ວວ່າພະຍານ ແມ່ນຫຼັກຖານທາງດ້ານບຸກຄົນ ທີ່ສໍາຄັນໃນການດໍາເນີນຄະດີ, ສະນັ້ນ ຜູ່ທີ່ເປັນພະຍານໃນການດໍາເນີນຄະດີ ຕ້ອງເປັນບຸກຄົນທີ່ຮູ້ເຫັນເຫດການຂອງຄະດີຢ່າງຊັດເຈນ ຈຶ່ງເປັນພະຍານໃນຄະດີໄດ້ ແລະ ພະຍານກໍຕ້ອງລາຍງານສະພາບເຫດການທີ່ຕົນເອງໄດ້ຮູ້ຫຼືເຫັນເທົ່ານັ້ນ ບໍ່ຕ້ອງມີການຄາດຄະເນເອົາ ຫຼື ເວົ້າບໍ່ມີມູນຄວາມຈິງ, ອີກຢ່າງໜຶ່ງ ຖ້າພະຍານຫາກໄດ້ໃຫ້ການເທັດ ລາຍງານບໍ່ສອດຄ່ອງກັບຄວາມເປັນຈິງ ຍັງມີຄວາມຜິດທາງອາຍາຕາມທີ່ບົ່ງໄວ້ໃນມາດຕາ 164 ຂອງກົດໝາຍອາຍາ, ສະນັ້ນ ບັນຫານີ້ຕ້ອງຄວນເອົາໃຈໃສ່ໃນຂັ້ນຕອນການດໍາເນີນຄະດີ ຜູ່ພິພາກສາ, ຜູ່ຊ່ອຍຜູ່ພິພາກສາ ຫຼື ນັກວິຊາການຕ້ອງໄດ້ແຈ້ງສິດ ແລະ

---

[60]ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 100

ພັນທະໃຫ້ຜູ່ກ່ຽວຮັບຮູ້ດັກແນ່ ທັງນີ້ ກໍເພື່ອເປັນການຫຼີກລ້ຽງການໃຫ້ການເທັດຂອງພະຍານອັນຈະສ້າງຄວາມສັບສົນແກ່ຜູ້ພິພາກສາໃນເວລາພິຈາລະນາຕັດສີນຄະດີ.

## 5. ການປະກອບ ແລະ ເກັບກຳຂໍ້ມູນຫຼັກຖານ

ການປະກອບຫຼັກຖານ ແລະ ການເກັບກຳຂໍ້ມູນຫຼັກຖານ ແມ່ນການຮິບໂຮມເອົາຂໍ້ມູນຫຼັກຖານ ຊຶ່ງຈະແມ່ນວັດຖຸ, ສິ່ງຂອງ ແລະ ບຸກຄົນທີ່ພົວພັນກັບຄະດີຊຶ່ງໄດ້ມາຈາກຄູ່ຄວາມຫຼືບຸກຄົນທີສາມຊຶ່ງນຳມາຢັ້ງຢືນຄຳຮ້ອງຟ້ອງ, ແກ້ຟ້ອງຫຼືຟ້ອງແຍ່ງຂອງຕົນ ຊຶ່ງຄູ່ຄວາມມີ ພັນທະໃນການສະໜອງ ຂໍ້ມູນຫຼັກຖານໃຫ້ແກ່ສານ ເພື່ອເປັນພື້ນຖານໃຫ້ແກ່ການພິຈາລະນາປະເດັນຂໍ້ຂັດແຍ່ງກັນໃຫ້ແຈ້ງຂາວ ແລະ ສາມາດກຳນົດເຫດການທີ່ເປັນຂໍ້ເທັດຈິງຂອງຄະດີ; ສານພຽງແຕ່ດຳເນີນການເກັບກຳຂໍ້ມູນຫຼັກຖານ ໃນເວລາທີ່ຄູ່ຄວາມໄດ້ນຳໃຊ້ທຸກວິທີໃນການປະກອບຫຼັກຖານ ແຕ່ຍັງບໍ່ສາມາດປະກອບຫຼັກຖານໄດ້ດ້ວຍຕົນເອງ ແລະ ຮຽກຮ້ອງໃຫ້ສານເປັນຜູ່ເກັບກຳຂໍ້ມູນຫຼັກຖານ ຊຶ່ງສານກໍເຫັນວ່າມີຄວາມຈຳເປັນ ເຊັ່ນ ການເອົາຄຳໃຫ້ການ, ການລົງກວດກາສະຖານທີ່ຂັດແຍ່ງ, ການສະເໜີໃຫ້ພາກສ່ວນກ່ຽວຂ້ອງສະໜອງຂໍ້ມູນໃຫ້ແກ່ສານ ຊຶ່ງລາຍລະອຽດໄດ້ກຳນົດໄວ້ໃນມາດຕາ 191 ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ 2012; ຂໍ້ກຳນົດດັ່ງກ່າວ ແມ່ນເພື່ອຢາກແບ່ງປັນຄວາມຮັບຜິດຊອບໃຫ້ແກ່ຄູ່ຄວາມ ຫຼຸດຜ່ອນພາລະໃຫ້ແກ່ສານ; ນອກຈາກນັ້ນ ກໍເພື່ອເປັນການຮັບປະກັນລັກສະນະພາວະວິໄສ, ສະກັດກັ້ນການສວຍໃຊ້ໜ້າທີ່ໃນທາງທີ່ຜິດກົດໝາຍຢູ່ໃນການເກັບກຳຂໍ້ມູນຫຼັກຖານທີ່ມີຜົນປະໂຫຍດ ອັນສ້າງຄວາມເສັຍຫາຍໃຫ້ແກ່ຝ່າຍໃດຝ່າຍໜຶ່ງ.

ໃນການດຳເນີນຄະດີ ຄູ່ຄວາມຕ້ອງການເຮັດໃຫ້ມີຄວາມກະຈ່າງແຈ້ງຕໍ່ກັບຄວາມຮຽກຮ້ອງຕ້ອງການຫຼື ການໂຕ້ແຍ່ງຂອງຕົນ ກໍຕ້ອງໃຫ້ມີຫຼັກຖານມາຢັ້ງຢືນເພື່ອເປັນບ່ອນອີງສອດຄ່ອງກັບກົດໝາຍ, ອີກຢ່າງໜຶ່ງ ຂໍ້ຂັດແຍ່ງທາງແພ່ງແມ່ນຂໍ້ຂັດແຍ່ງທີ່ພົວພັນເຖິງຜົນປະໂຫຍດສ່ວນຕົວ ຄູ່ຄວາມເອງ, ສະນັ້ນ ຄູ່ຄວາມຕ້ອງນຳເອົາຫຼັກຖານທີ່ເປັນຜົນປະໂຫດແກ່ຕົນມາສະໜອງໃຫ້ແກ່ສານ ເພື່ອພິຈາລະນາ; ເຖິງຢ່າງໃດກໍຕາມບາງກໍລະນີກໍແມ່ນສານເອງເປັນຜູ່ເກັບກຳຂໍ້ມູນຫຼັກຖານໃຫ້ແກ່ຄູ່ຄວາມເພື່ອສ້າງຄວາມກະຈ່ານແຈ້ງ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ ແລະ ຂອງສັງຄົມ, ການປະກອບຫຼັກຖານເພື່ອໃຫ້ສານຕ້ອງໃຫ້ຮັບປະກັນດ້ານໄລຍະເວລາ, ວ່ອງໄວ ແລະ ທ່ວງທັນກັບເວລາທີ່ກຳນົດໄວ້.

ການເກັບກຳຂໍ້ມູນຫຼັກຖານໂດຍສານນັ້ນບໍ່ໃຫ້ເຂົ້າໃຈວ່າເປັນພັນທະຂອງສານເພາະສານຈະບໍ່ຮູ້ເຫດການຕົວຈິງດີຄືກັບຄູ່ຄວາມສານພຽງແຕ່ກວດກາບັນດາຫຼັກຖານທີ່ຄູ່ຄວາມໄດ້ສະເໜີມາ, ເມື່ອເຫັນວ່າ ຍັງບໍ່ທັນພຽງພໍ ຫຼື ບໍ່ແຈ້ງຂາວສານກໍຈະຮຽກເອົາບຸກຄົນທີ່ກ່ຽວຂ້ອງນຳມາປະກອບໃຫ້ສານ ຫຼື ມາໃຫ້ການເພີ່ມເຕີມ ຫຼື ລົງກວດກາເປົ້າໝາຍຂອງຂໍ້ຂັດແຍ່ງ, ແຕ່ຜູ່ເປັນເຈົ້າການກໍຍັງແມ່ນພາລະຂອງຄູ່ຄວາມເອງ.

### 5.1. ວິທີການປະກອບ ແລະ ເກັບກຳຂໍ້ມູນຫຼັກຖານ

ວິທີການປະກອບ ແລະ ເກັບກຳຂໍ້ມູນຫຼັກຖານ ແມ່ນວິທີການນຳເອົາຫຼັກຖານມາສະເໜີຕໍ່ສານເພື່ອໃຫ້ສານພິຈາລະນາ ໂດຍສະແດງອອກດ້ວຍສອງວິທີຄື: ການປະກອບຫຼັກຖານ ແມ່ນການນາເອົາຫຼັກຖານມາສະເໜີຕໍ່ສານໂດຍຄູ່ຄວາມ ແລະ ການເກັບກຳຂໍ້ມູນຫຼັກຖານມາເປັນພື້ນຖານໃນການພິຈາລະນາຕັດສີນໂດຍສານ.

ຕາມຫຼັກການແລ້ວ ຄູ່ຄວາມມີສິດ ແລະ ພັນທະໃນການປະກອບຫຼັກຖານໃຫ້ແກ່ສານ ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຕົນ ແລະ ສານກໍສາມາດເກັບກຳຂໍ້ມູນຫຼັກຖານໂດຍສານເອງ ຖ້າເຫັນວ່າມີຄວາມຈຳເປັນ, ແຕ່ເຖິງຢ່າງໃດກໍຕາມໃນກໍລະນີຄູ່ຄວາມໄດ້ຍົກໃຫ້ເຫັນຢ່າງຈະແຈ້ງວ່າ ບໍ່ສາມາດປະກອບຫຼັກຖານໄດ້ດ້ວຍຕົນເອງ ເຊັ່ນ ຫຼັກຖານຢູ່ນຳພາກສ່ວນທີ່ກ່ຽວຂ້ອງ, ສະນັ້ນ ໃນກໍລະນີນີ້ ສານຈະຕ້ອງດຳເນີນການເກັບກຳຂໍ້ມູນຫຼັກຖານໂດຍສານເອງ ເພື່ອເຮັດໃຫ້ການດຳເນີນຄະດີສາມາດນຳໄປສູ່ການຕັດສີນໄດ້ ແລະ ທັງເປັນການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຜູ່ທີ່ຖືກເສັຍຫາຍ. ສະນັ້ນ ສາມາດເວົ້າໄດ້ວ່າ ການນຳເອົາຫຼັກຖານມາສະເໜີໃຫ້ສານເປັນ

ບ່ອນອີງໃນການພິຈາລະນາຕັດສິນຄະດີນັ້ນມີສອງວິທີຄື: ການປະກອບຫຼັກຖານໂດຍຄູ່ຄວາມ ແລະ ເກັບກຳຂໍ້ມູນຫຼັກຖານໂດຍສານ.

### 5.1.1. ການປະກອບຫຼັກຖານໂດຍຄູ່ຄວາມ

ເມື່ອມີການຍື່ນຄຳຮ້ອງຟ້ອງຂຶ້ນສານແລ້ວ ຄູ່ຄວາມມີສິດປະກອບຫຼັກຖານທີ່ຕົນເຫັນວ່າເປັນຜົນປະໂຫຍດ ແລະ ຢັ້ງຢືນຄຳຮ້ອງຟ້ອງ, ຄຳແກ້ຟ້ອງ ຫຼື ຟ້ອງແຍ່ງ ຂອງຕົນນັ້ນພວກກ່ຽວກໍມີສິດຍື່ນໃຫ້ສານ.

ການປະກອບຫຼັກຖານແມ່ນພັນທະຕົ້ນຕໍຂອງຄູ່ຄວາມເພື່ອໃຫ້ມີບ່ອນອີງ ແລະ ໃຫ້ມີຄວາມກະຈ່າງແຈ້ງ ຕໍ່ກັບຄວາມຮຽກຮ້ອງ ຫຼື ການແກ້ຟ້ອງ ຫຼື ຟ້ອງແຍ່ງຂອງຕົນນັ້ນ ຄູ່ຄວາມຕ້ອງສະໜອງບັນດາຂໍ້ມູນຫຼັກຖານໃຫ້ຄົບຖ້ວນ ແລະ ໜັກແໜ້ນໃຫ້ແກ່ສານ ຊຶ່ງການປະກອບຫຼັກຖານໂດຍຄູ່ຄວາມສະແດງອອກດັ່ງລຸ່ມນີ້:

**ກ. ການຍື່ນ ແລະ ການມອບຮັບຫຼັກຖານ**

ໃນຂັ້ນຕອນການດຳເນີນຄະດີຄູ່ຄວາມ ສາມາດຍື່ນຫຼັກຖານທີ່ຕົນມີຕໍ່ສານໄດ້ຕະຫຼອດເວລານັບແຕ່ສານໄດ້ຮັບຄຳຮ້ອງຟ້ອງມາພິຈາລະນາຈົນເຖິງການປິດການໂຕ້ຖຽງໃນທີ່ປະຊຸມສານຂັ້ນຕົ້ນ, ເວັ້ນເສຍແຕ່ມີຂໍ້ມູນຫຼັກຖານໃໝ່; ການຍື່ນຫຼັກຖານຕໍ່ສານ ແມ່ນການປະຕິບັດພັນທະຂອງຄູ່ຄວາມໃນການສະໜອງຫຼັກຖານເພື່ອຢັ້ງຢືນເຖິງເຫດຜົນ ແລະ ຄວາມຖືກຕ້ອງຂອງຕົນ. ຄູ່ຄວາມທີ່ໄດ້ຄຸ້ມຄອງຫຼັກຖານຢູ່ນັ້ນຕ້ອງມີຄວາມກະຕືລືລົ້ນຕໍ່ການນຳເອົາຫຼັກຖານມາຍື່ນຕໍ່ສານໂດຍໄວ ທັງນີ້ ກໍເພື່ອໃຫ້ຜູ້ພິພາກສາຮັບຜິດຊອບຄົ້ນຄວ້າຄະດີມີໂອກາດໄດ້ໃຊ້ເວລາສຶກສາຫຼັກຖານທີ່ປະກອບແກ່ສານຢ່າງເຕັມສ່ວນ ຊຶ່ງມັນກໍຈະເປັນຜົນດີແກ່ຄູ່ຄວາມ.

ເມື່ອຄູ່ຄວາມໄດ້ຍື່ນຫຼັກຖານຕໍ່ສານ, ສານຕ້ອງສ້າງບົດບັນທຶກກ່ຽວກັບການຮັບເອົາຫຼັກຖານດັ່ງກ່າວ, ເນື້ອໃນບົດບັນທຶກຈະຕ້ອງລະບຸລະອຽດກ່ຽວກັບຊື່, ຮູບການ, ເນື້ອໃນ, ຈຸດພິເສດຂອງຫຼັກຖານ, ເວລາ ແລະ ສະຖານທີ່ຮັບເອົາຫຼັກຖານ, ລາຍເຊັນຂອງຜູ້ຮັບ ແລະ ຜູ້ຍື່ນ.

ການຍື່ນຫຼັກຖານຂອງຄູ່ຄວາມໃຫ້ສານມີຈຸດພິເສດດັ່ງນີ້:

- ຍື່ນຕໍ່ສານນັບແຕ່ສົ່ງຄຳຮ້ອງຟ້ອງ, ແກ້ຟ້ອງ ຫຼື ຟ້ອງແຍ່ງ ຈົນເຖິງການໂຕ້ຖຽງໃນທີ່ປະຊຸມສານຂັ້ນຕົ້ນ, ເວັ້ນເສຍແຕ່ມີຂໍ້ມູນຫຼັກຖານໃໝ່ ຍື່ນຢູ່ສານຂັ້ນເທິງກໍໄດ້;
- ຫຼັກຖານທີ່ເປັນເອກະສານ ທີ່ຈະຍື່ນຕໍ່ສານຕ້ອງເປັນຕົ້ນສະບັບ, ຖ້າບໍ່ດັ່ງນັ້ນກໍຕ້ອງມີການຢັ້ງຢືນສຳເນົາ, ຮູບຖ່າຍ ຫຼື ວິທີ ອື່ນມາຢັ້ງຢືນຕໍ່ສານ;
- ສຳລັບຫຼັກຖານທາງດ້ານເອກະສານທີ່ເປັນພາສາຕ່າງປະເທດ ເມື່ອມາຍື່ນຕໍ່ສານຕ້ອງໄດ້ແປເປັນພາລາວ ຊຶ່ງມີການຢັ້ງຢືນການແປຈາກນາຍທະບຽນສານຄັກແນ່.

ໃນພາກປະຕິບັດຕົວຈິງ ການຍື່ນ ແລະ ມອບຮັບຫຼັກຖານກໍຖືເປັນສຳຄັນໃນການດຳເນີນຄະດີເນື່ອງຈາກຄູ່ຄວາມ ຜູ້ຍື່ນຫຼັກຖານໃຫ້ແກ່ສານມີຄວາມໝັ້ນໃຈວ່າຫຼັກຖານທີ່ຕົນໄດ້ຍື່ນຂຶ້ນສານນັ້ນ ສານໄດ້ນຳມາຄົ້ນຄວ້າພິຈາລະນາ ແລະ ຊັ່ງຊາຕີລາຄາທັງໝົດ, ແຕ່ເວລາມອບຮັບຫຼັກຖານແກ່ສານຫາກເຮັດແບບບໍ່ຮອບຄອບ ແລະ ບັນດາຜູ້ພິພາກສາໄດ້ປະກອບເຂົ້າໃນສຳນວນກໍບໍ່ໄດ້ລາຍງານລະອຽດກ່ຽວກັບເອກະສານ, ຫຼັກຖານດັ່ງກ່າວແມ່ນໃຜເປັນຜູ້ມອບ, ໃຜເປັນຜູ້ເກັບກຳ... ແລ້ວຈະສ້າງຄວາມຫຍຸ້ງຍາກໃຫ້ແກ່ການນຳໃຊ້, ຕີລາຄາບັນດາຫຼັກຖານດັ່ງກ່າວ ຈາກເຫດຜົນທີ່ກ່າວມານັ້ນ ຈຶ່ງມີຜົນສະທ້ອນຕາມມາວ່າ ສານພິຈາລະນາຫຼັກຖານບໍ່ຄົບຖ້ວນ ຫຼື ຫຼັກຖານທີ່ຍື່ນຕໍ່ສານຖືກເສຍຫາຍອາດຈະບໍ່ຮັບປະກັນໄດ້ເຖິງຄວາມເປັນທຳແກ່ຄູ່ຄວາມ, ສະນັ້ນ ກົດໝາຍວ່າດ້ວຍການດຳເນຄະດີແພ່ງສະບັບປັບປຸງປີ 2012 ຈຶ່ງໄດ້ກຳນົດລະອຽດກ່ຽວກັບບັນຫານີ້ ເພື່ອຮັບປະກັນໃຫ້ແກ່ບັນດາເອກະສານ, ຫຼັກຖານບໍ່ຖືກຫຼົງລືມ, ຖືກດັດແປງ ຫຼື ບໍ່ຖືກເສຍຫາຍ...ພ້ອມນັ້ນກໍຮັບປະກັນຄຸນຄ່າທາງດ້ານນິຕິກຳໃນໄລຍະການນຳໃຊ້, ການມອບຮັບຫຼັກຖານຕ້ອງໄດ້ປະຕິບັດຕາມລະບຽບການຢ່າງເຄັ່ງຄັດເຮັດຢ່າງຮອບຄອບ, ມີລາຍການຫຼັກຖານຈະແຈ້ງ ແລະ ສາມາດການກວດກາໄດ້ທຸກເວລາ.

ຈາກປາກົດການຄືແນວນັ້ນຜູ້ຍື່ນຫຼັກຖານຕໍ່ສານຕ້ອງເຮັດໃບສະເໜີໂດຍບົ່ງບອກລາຍການ, ລັກສະນະຂອງຫຼັກຖານ, ຈຳນວນໜ້າເອກະສານ ແລະ ອື່ນໆ. ສານຕ້ອງກວດກາຫຼັກຖານດັ່ງກ່າວ ຖ້າເຫັນວ່າຖືກຕ້ອງຕາມລາຍການທີ່ບົ່ງໄວ້ໃນໃບສະເໜີນັ້ນແລ້ວ ກໍໃຫ້ສານເຮັດບົດບັນທຶກມອບຮັບຫຼັກຖານຢ່າງຖືກຕ້ອງ; ການເຮັດບົດບັນທຶກມອບຮັບຫຼັກຖານ ຕ້ອງບົ່ງບອກ ວັນ, ເວລາ ແລະ ສະຖານທີ່ມອບຮັບຫຼັກຖານ ຊື່ຜູ້ມອບ ແລະ ຜູ້ຮັບ, ລັກສະນະ, ປະເພດ ແລະ ຈຳນວນຫຼັກຖານ ໂດຍເຮັດເປັນສາມສະບັບ ໂດຍໃຫ້ຜູ້ມອບ ແລະ ຜູ້ຮັບລົງລາຍເຊັນຢັ້ງຢືນ ແລະ ປະທັບຕາຂອງສານ ແລ້ວມອບໃຫ້ຜູ້ຍື່ນຫຼັກຖານເກັບໄວ້ໜຶ່ງສະບັບ, ສ່ວນອີກສະບັບໜຶ່ງເກັບຮັກສາໄວ້ໃນສຳນວນຄະດີ ແລະ ອີກສະບັບໜຶ່ງຮັກສາໄວ້ໃນສານຂັ້ນຕົ້ນທີ່ກ່ຽວຂ້ອງ[61].

**ຂ. ການຮ້ອງຂໍໃຫ້ສານກະທຳອັນໃດອັນໜຶ່ງ**

ການຮ້ອງຂໍໃຫ້ສານກະທຳອັນໃດອັນໜຶ່ງແມ່ນເຮັດຂຶ້ນໃນໄລຍະຂັ້ນຕອນການສອບສວນປະກອບຫຼັກຖານ ຊຶ່ງຄູ່ຄວາມຫາກບໍ່ສາມາດເກັບກຳຂໍ້ມູນຫຼັກຖານໄດ້ດ້ວຍຕົນເອງ, ຄູ່ຄວາມມີສິດຮຽກຮ້ອງໃຫ້ສານກະທຳອັນໃດອັນໜຶ່ງເພື່ອໃຫ້ໄດ້ມາຊຶ່ງຫຼັກຖານໃນຄະດີ ເຊັ່ນ ຫຼັກຖານບໍ່ຢູ່ໃນມືຄູ່ຄວາມເອງ ແລະ ຄູ່ຄວາມກໍບໍ່ສາມາດນຳເອົາຫຼັກຖານທີ່ກ່ຽວຂ້ອງໃນ ຄະດີນັ້ນມາຢັ້ງຢືນຕໍ່ສານດ້ວຍຕົນເອງ, ຄູ່ຄວາມຈະສະເໜີໃຫ້ສານ ເພື່ອໃຫ້ສານສະເໜີຫາພາກສ່ວນທີ່ກຳລັງຮັກສາຫຼັກຖານດັ່ງກ່າວສະໜອງຂໍ້ມູນຫຼັກຖານໃຫ້ແກ່ສານ ແລະ ກໍລະນີອື່ນໆທີ່ຄູ່ຄວາມຮຽກຮ້ອງຕໍ່ສານເພື່ອໃຫ້ສານເກັບກຳຂໍ້ມູນຫຼັກຖານແທນຕົນເອງ ແລະ ສານກໍຈະພິຈາລະນາກ່ຽວກັບບັນຫານີ້ ເມື່ອເຫັນວ່າມີຄວາມຈຳເປັນຕ້ອງໄດ້ນຳເອົາຫຼັກຖານທີ່ຢູ່ໃນການຄຸ້ມຄອງຂອງພາກສ່ວນທີ່ກ່ຽວຂ້ອງມາພິຈາລະນາ.

ບັນຫາທີ່ກ່າວມາຂ້າງເທິງນັ້ນ ເປັນການໃຫ້ສິດຄູ່ຄວາມໃນການຮ້ອງຂໍຕໍ່ສານເພື່ອສ້າງຄວາມສະດວກໃຫ້ແກ່ຕົນເອງໃນການປະກອບຫຼັກຖານ, ແຕ່ເຖິງຢ່າງໃດກໍຕາມການຮ້ອງຂໍຂອງຄູ່ຄວາມບໍ່ໝາຍຄວາມວ່າສານຈະຮັບພິຈາລະນາໂລດ ຈຳເປັນຕ້ອງມີການຄົ້ນຄວ້າພິຈາລະນາຂອງສານຢ່າງຄັກແນ່ວ່າຈຳເປັນ ຫຼື ບໍ່ ເພາະບາງກໍລະຈະແຕະຕ້ອງເຖິງຄວາມລັບຂອງປະເທດຊາດ ຫຼື ແຕະຕ້ອງເຖິງຄວາມລັບຂອງອົງການຈັດຕັ້ງ ຫຼື ບຸກຄົນທີ່ເກັບຮັກສາຫຼັກຖານດັ່ງກ່າວ, ສະນັ້ນ ຈຶ່ງເວົ້າໄດ້ວ່າສານມີສິດປະຕິເສດຕໍ່ກັບການຮ້ອງຂໍຂອງຄູ່ຄວາມ ຖ້າຫາກເຫັນວ່າບໍ່ມີຄວາມຈຳເປັນ; ກ່ຽວກັບປະເດັນນີ້ ຄູ່ຄວາມຕ້ອງໄດ້ເອົາໃຈໃສ່ໃນການຮັກສາບັນດາຫຼັກຖານທີ່ເປັນຜົນປະໂຫຍດແກ່ຕົນ ຕ້ອງເກັບຮັກສາໄວ້ໃຫ້ດີຮັບປະກັນຄວາມປອດໄພ ບໍ່ໃຫ້ມີການຕົກເຮ່ຍເສັຍຫາຍ, ເວລາໃດຕ້ອງການນຳໃຊ້ຫຼັກຖານກໍສາມາດນຳມາອ້າງອີງຢ່າງໄດ້.

**ຄ. ໂຕ້ແຍ່ງກ່ຽວກັບຫຼັກຖານ**

ໃນການດຳເນີນຄະດີສານຈະຊອກຮູ້ຄວາມເປັນຈິງຂອງຂັດແຍ່ງ ຕ້ອງໄດ້ເປີດໂອກາດໃຫ້ຄູ່ຄວາມສອງຝ່າຍມີການໂຕ້ແຍ່ງຫຼັກຖານ ເຊິ່ງກັນ ແລະ ກັນບົນພື້ນຖານຫຼັກຖານທຸກຢ່າງທີ່ແຕ່ລະຝ່າຍມີ, ໂດຍອະທິບາຍເຫດຜົນທີ່ໄດ້ປະຕິເສດຫຼັກຖານຝ່າຍກົງກັນຂ້າມເປັນລາຍລັກອັກສອນ.

ໃນການໂຕ້ແຍ່ງກ່ຽວກັບຫຼັກຖານແມ່ນຄູ່ຄວາມແຕ່ລະຝ່າຍນຳເອົາຂໍ້ມູນມາສະເໜີ ຫຼື ຢັ້ງຢືນຕໍ່ສານ " ຄູ່ຄວາມຝ່າຍທີ່ໂຕ້ແຍ່ງກ່ຽວກັບຫຼັກຖານຂອງຄູ່ຄວາມຝ່າຍກົງກັນຂ້າມ ຕ້ອງນຳເອົາຂໍ້ມູນມາສະເໜີ ຫຼື ຢັ້ງຢືນຄວາມເປັນຈິງຕໍ່ສານ; ທຸກຫຼັກຖານທີ່ຄູ່ຄວາມສະເໜີນັ້ນ ສານຕ້ອງແຈ້ງໃຫ້ຄູ່ຄວາມຝ່າຍກົງກັນຂ້າມຮັບຊາບເພື່ອໂຕ້ແຍ່ງ"[62]. ການໂຕ້ແຍ່ງຫຼັກຖານແມ່ນຄູ່ຄວາມສາມາດໂຕ້ແຍ່ງ ຫຼັກຖານ ເຊິ່ງກັນ ແລະ ກັນໄດ້ໃນຂັ້ນຕອນການປະກອບຫຼັກຖານ ຫຼື ກ່ອນການເປີດການໄຕ່ສວນໃນທີ່ປະຊຸມສານ.

ການໂຕ້ແຍ່ງຫຼັກຖານຂອງຄູ່ຄວາມນັ້ນ ແມ່ນຄູ່ຄວາມເອງມີພັນທະຕ້ອງຊອກຫຼັກຖານ ມາຢັ້ງຢືນຄຳຮ້ອງຟ້ອງ ຫຼື ຟ້ອງແຍ່ງຂອງຕົນ ພ້ອມທັງມີພັນທະໃນການຊອກຫຼັກຖານມາພິສູດ ການກ່າວອ້າງຂອງຕົນ ໃນກໍລະນີ ຖືກຄູ່ຄວາມຝ່າຍກົງກັນຂ້າມຫາກປະຕິເສດຈະບໍ່ແມ່ນພັນທະຂອງຝ່າຍທີ່ຖືກກ່າວອ້າງ ແຕ່ຢ່າງໃດ.

---

[61]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 104

[62]ກົດຫມາຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 105

**ຕົວຢ່າງ:** ທ້າວ ກ ໄດ້ຕົກລົງຊື້ຂາຍລົດເກງ ໜຶ່ງຄັນນຳ ນາງ ຂ ລາຄາ 200,000,000 ກີບ ໂດຍ ນາງ ຂ ໄດ້ມອບລົດຈັກໃຫ້ ທ້າວ ກ ເປັນທີ່ຮຽບຮ້ອຍແລ້ວ ແລະ ທ້າວ ກ ກໍໄດ້ຈ່າຍເງິນ ກ່ອນ ຈຳນວນ 150,000,000 ກີບ ຍັງຄ້າງ 50,000,000 ກີບ ຊຶ່ງໄດ້ຕົກລົງໃຫ້ ທ້າວ ກ ຊຳລະ ບໍ່ໃຫ້ ກາຍໜຶ່ງເດືອນ ຕໍ່ມາ, ພໍຮອດກຳນົດເວລາ ນາງ ຂ ກໍໄດ້ໄປທວງເອົາເງິນທີ່ຍັງຄ້າງ ນຳ ທ້າວ ກ, ແຕ່ຖືກ ທ້າວ ກ ອ້າງວ່າ ໄດ້ຊຳລະເງິນທີ່ຍັງຄ້າງແກ່ ນາງ ຂ ຄົບຖ້ວນແລ້ວ, ເມື່ອເປັນເຊັ່ນນັ້ນ ນາງ ຂ ຈຶ່ງຮ້ອງຟ້ອງຕໍ່ສານເພື່ອ ທວງໃຫ້ ທ້າວ ກ ຊຳລະເງິນ ຈຳນວນທີ່ຍັງຄ້າງ.

ເຫດການນີ້ ນາງ ຂ ກໍໄດ້ນຳເອົາໜັງສືສັນຍາຊື້ຂາຍລົດມາຢັ້ງຢືນ ຊຶ່ງ ທ້າວ ກ ກໍຮັບຮູ້ສະແດງວ່າ ທັງສອງຮັບຮູ້ໄດ້ເຮັດສັນຍານຳກັນ (ນິຕິເຫດ) ຊຶ່ງບໍ່ຈຳເປັນຕ້ອງ ໃຫ້ ນາງ ຂ ຊອກຫຼັກຖານມາພິສູດ ເຫດການນີ້ຕື່ມອີກ. ສ່ວນທ້າວ ກ ໄດ້ອ້າງວ່າ ຕົນຊຳລະເງິນ ໃຫ້ ນາງ ຂ ຄົບຖ້ວນແລ້ວ, ແຕ່ຖືກ ນາງ ຂ ປະຕິເສດ ບໍ່ຮັບຮູ້ພັນທະໃນການຊອກຫຼັກຖານມາພິສູດວ່າ ທ້າວ ກ ໄດ້ຊຳລະເງິນ ກໍເປັນພາລະ ຂອງ ທ້າວ ກ ເປັນຕົ້ນ ຕ້ອງມີປຶ້ມບັນທຶກການຊຳລະເງິນ, ໃບຮັບເງິນ ຫຼື ຫຼັກຖານອື່ນໆມາຢັ້ງຢືນ.

ໃນທາງກົງກັນຂ້າມຖ້າ ທ້າວ ກ ຫາກມີຫຼັກຖານການຊຳລະເງິນ ທີ່ຍັງຄ້າງຄົບຖ້ວນຄື ໃບຮັບຈຳນວນ 50.000.000 ກີບ, ແຕ່ ນາງ ຂ ປະຕິເສດວ່າ ເງິນ ຈຳນວນ ນີ້ແມ່ນເປັນການຊຳລະໜີ້ສິນກູ້ຢືມ ບໍ່ແມ່ນ ຄ່າລົດທີ່ຍັງຄ້າງ ໃນກໍລະນີ້ ພັນທະໃນການຊອກຫຼັກຖານມາພິສູດ ກໍຕົກເປັນພາລະຂອງ ນາງ ຂ ຊຶ່ງຕ້ອງຊອກຫາ ຫຼັກຖານມາພິສູດວ່າ ທ້າວ ກ ຍັງຄ້າງເງິນ ກູ້ຢືມ ຜູ່ກ່ຽວ.

ເວົ້າລວມແລ້ວການໂຕ້ແຍ່ງກ່ຽວກັບຫຼັກຖານ ແມ່ນການເປີດໂອກາດໃຫ້ຄູ່ຄວາມ ທັງສອງຝ່າຍມີສິດໃນການແກ້ຂໍ້ອ້າງຕໍ່ຝ່າຍ ກົງກັນຂ້າມທີ່ມີຫຼັກຖານມາສະເໜີກ່ອນ, ບາງກໍລະນີຫຼັກຖານທີ່ຝ່າຍໂຈດອາດອ້າງວ່າຝ່າຍຈຳເລີຍມີການລະເມີດສິດຂອງໂຈດ, ສ່ວນ ຝ່າຍຈຳເລີຍກໍມີສິດໃນການປະຕິເສດວ່າຕົນເອງບໍ່ໄດ້ລະມິດສິດຂອງໂຈດໂດຍການສະເໜີຫຼັກຖານມາອ້າງວ່າຕົນໄດ້ປະຕິບັດຖືກຕ້ອງຕາມສິດ ແລະ ພັນທະຂອງຕົນຢ່າງຄົບຖ້ວນ, ເວົ້າຢ່າງໜຶ່ງການໂຕ້ແຍ່ງກ່ຽວກັບຫຼັກຖານແມ່ນການອ້າງເຫດ ແລະ ຜົນດ້ວຍຫຼັກຖານຂອງຄູ່ຄວາມ ເພື່ອໃຫ້ສານພິຈາລະນາຊອກຫາຄວາມເປັນຈິງ ແລ້ວວາງມາດຕາກົດໝາຍດັດປັບຂໍ້ຂັດແຍ່ງຂອງຄູ່ຄວາມ.

| |
|---|
| ບົດຮຽນສົມທຽບໃນລະບົບການດຳເນີນຄະດີຂອງຍີ່ປຸ່ນ ການໂຕ້ແຍ່ງຫຼັກຖານໃນຂັ້ນຕອນການດຳເນີນຄະດີ ຜູ່ພິພາກສາ ໄດ້ຮຽກເອົາຄູ່ຄວາມເຂົ້າມາໃນຫ້ອງປະຊຸມທຳມະດາ ໂດຍຊ້ອງໜ້າ ຜູ່ພິພາກສາ ແລະຈ່າສານບັນທຶກ (ບໍ່ແມ່ນບັນລັງຕັດສິນ) ເພື່ອເປີດໂອກາດໃຫ້ ໂຈດ ແລະ ຈຳເລີຍ ອະທິບາຍທຸກຫຼັກຖານທີ່ໄດ້ປະກອບມາໃຫ້ສານແລະທັງສະແດງໃຫ້ຄູ່ຄວາມຝ່າຍກົງກັນຂ້າມຮັບຮູ້ ແລະ ສາມາດນຳເອົາໄປຄົ້ນຄວ້າ ແລະເຮັດຄຳໂຕ້ແຍ່ງກ່ອນການເຂົ້າພິຈາລະນາຄະດີໃນທີ່ປະຊຸມສານ. ສາມາດຖອດຖອນບົດຮຽນໄດ້ ຄື ເປັນການສ້າງເງື່ອນໄຂສະດວກແກ່ຄູ່ຄວາມໃນການໂຕ້ແຍ່ງຫຼັກຖານ ຊຶ່ງຈະໄດ້ຄວາມເປັນຈິງຂອງເຫດການຄະດີງ່າຍຂຶ້ນ ແລະ ທັງຮັບປະກັນໃຫ້ແກ່ການພິຈາລະນາຕັດສິນຄະດີໃນທີ່ປະຊຸມສານ. |

### 5.1.2. ການເກັບກຳຫຼັກຖານໂດຍສານ

ພາຍຫຼັງທີ່ຄູ່ຄວາມໄດ້ປະກອບຫຼັກຖານມາໃຫ້ສານແລ້ວ ສານກໍຕ້ອງໄດ້ກວດກາເບິ່ງຫຼັກຖານທັງໝົດຕາມລາຍການຫຼັກຖານທີ່ຄູ່ຄວາມໄດ້ຍື່ນໃຫ້, ຖ້າເຫັນວ່າຄົບຖ້ວນພຽງພໍແລ້ວ ກໍຈະປະກອບຄະນະສານພິຈາລະນາຕັດສິນໃນທີ່ປະຊຸມສານ ກົງກັນຂ້າມ ຖ້າເຫັນວ່າຫຼັກຖານ ຍັງບໍ່ທັນຄົບຖ້ວນພຽງພໍ ຫຼື ຫຼັກຖານບໍ່ທັນຈະແຈ້ງພໍໃຫ້ສານພິຈາລະນາຕັດສິນໄດ້ສານກໍຈະເປັນເກັບກຳຂໍ້ມູນຫຼັກຖານຕື່ມອີກ; ການປະກອບຫຼັກຖານໂດຍສານປະຕິບັດດ້ວຍວິທີຄື ຮຽກບຸກຄົນກ່ຽວຂ້ອງມາໃຫ້ການ; ລົງກວດກາບັນຫາທີ່ຂັດແຍ່ງ; ແຕ່ງຕັ້ງຜູ່ຊ່ຽວຊານທຳການພິສູດ; ສະເໜີ

ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊີ້ແຈງ ຫຼື ຢັ້ງຢືນ ຫຼື ສະໜອງຫຼັກຖານທີ່ກ່ຽວຂ້ອງ ແລະ ມອບໃຫ້ສານອື່ນເກັບກຳຫຼັກຖານ ແລະ ສອບສວນແທນ[63].

**ກ. ຮຽກບຸກຄົນທີ່ກ່ຽວຂ້ອງມາໃຫ້ການ**

ການຮຽກບຸກຄົນທີ່ກ່ຽວຂ້ອງມາໃຫ້ການຕໍ່ສານແມ່ນລວມມີ ໂຈດ, ຈຳເລີຍ, ບຸກຄົນທີສາມ, ພະຍານ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ ຈະຕ້ອງໄດ້ເຂົ້າມາໃຫ້ການຕໍ່ສານເພື່ອສ້າງຄວາມກະຈ່າງແຈ້ງກ່ຽວກັບເປົ້າໝາຍຂອງຄຳຮ້ອງຟ້ອງ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ ຫຼື ຄຳຮ້ອງຂໍ ຊຶ່ງຄຳໃຫ້ການນັ້ນ ບຸກຄົນທີ່ກ່ຽວຂ້ອງຕ້ອງຕອບຄຳຖາມຕາມປະເດັນສອບສວນທີ່ສານໄດ້ກະກຽມໄວ້; ບຸກຄົນທີ່ເຂົ້າມາໃຫ້ການຕໍ່ສານນັ້ນມີສິດໃຫ້ຄຳຊີ້ແຈງເພີ່ມເຕີມ ເປັນລາຍລັກອັກສອນມາຍື່ນຕໍ່ສານ, ຖ້າຄູ່ຄວາມບໍ່ສາມາດຂຽນ ຫຼື ບໍ່ຕ້ອງການຂຽນກໍສາມາດມາໃຫ້ການຕໍ່ສານໂດຍກົງກໍໄດ້ ໂດຍມີຜູ້ພິພາກສາເປັນຜູ້ສອບສວນ, ຈ່າສານ ຫຼື ພະນັກງານວິຊາການຂອງສານເປັນຜູ້ບັນທຶກແລ້ວອ່ານໃຫ້ຟັງ, ຈາກນັ້ນ ຈຶ່ງພ້ອມກັນລົງລາຍເຊັນ ແລະ ແປະໂປ້ມືໃສ່ [64]; ກໍລະນີທີ່ເອົາຄຳໃຫ້ການຂອງເດັກ ຫຼື ຜູ້ບໍ່ມີຄວາມສາມາດດ້ານການປະພຶດຕ້ອງໃຫ້ພໍ່ແມ່ ຫຼື ຜູ້ປົກປ້ອງຂອງຜູ້ກ່ຽວເຂົ້າຮ່ວມນຳ; ສຳລັບຄົນຫູໜວກປາກກືກ, ຄົນປັນຍາອ່ອນ, ຄົນເສັຍຈິດ, ເດັກທີ່ຍັງບໍ່ເຖິງກະສຽນອາຍຸ 18 ປີ, ຍາດພີ່ນ້ອງໃກ້ສິດຂອງຄູ່ຄວາມຝ່າຍໃດຝ່າຍໜຶ່ງ ອາດຈະນຳມາໃຫ້ການເພື່ອເປັນຂໍ້ມູນແຕ່ບໍ່ຖືວ່າເປັນພະຍານໃນຄະດີໄດ້ ເນື່ອງຈາກວ່າບຸກຄົນດັ່ງກ່າວ ບໍ່ມີຄວາມສາມາດທາງດ້ານການປະພຶດເຕັມສ່ວນ, ບໍ່ສາມາດບັນຊາການກະທຳຂອງຕົນເອງ, ສ່ວນຜູ້ທີ່ເປັນຍາດຕິພີ່ນ້ອງຂອງຄູ່ຄວາມຝ່າຍໃດກໍຕ້ອງໃຫ້ການນັບສະໜູນຍາດພີ່ນ້ອງຕົນເອງສະເໝີ[65]. ການເອົາຄຳໃຫ້ການສາມາດເຮັດຂຶ້ນໄດ້ຢູ່ທີ່ສານ ຫຼື ຢູ່ບ່ອນ ຢູ່ຂອງຜູ້ທີ່ຈະໃຫ້ການຕໍ່ສານ ຊຶ່ງແລ້ວແຕ່ຄວາມເໝາະສົມ.

ການເອົາຄຳໃຫ້ການໃນຂັ້ນຕອນດຳເນີນຄະດີ ແມ່ນມີຜົນປະໂຫຍດໃນກໍລະນີແກ່ສານ ເພື່ອເຮັດໃຫ້ຜູ້ຮັບຜິດຊອບດຳເນີນຄະດີມີຄວາມເຂົ້າໃຈປະເດັນຂໍ້ຂັດແຍ່ງ ທີ່ຍັງຄຸມເຄືອ ຫຼື ສັບສົນ, ສະນັ້ນ ຜູ້ຮັບຜິດຊອບດຳເນີນຄະດີ ກໍຄືຜູ້ພິພາກສາ ຈຳເປັນຕ້ອງໄດ້ຮຽກເອົາຜູ້ກ່ຽວຂ້ອງເຂົ້າມາໃຫ້ການ, ແຕ່ກ່ອນຈະອອກໝາຍຮຽກນັ້ນ ຕ້ອງກະກຽມປະເດັນຄຳຖາມໄວ້ເສັຍກ່ອນແລ້ວ ຈຶ່ງມອບໝາຍໃຫ້ຈ່າສານເປັນ ຜູ້ອອກໝາຍຮຽກເອົາຜູ້ກ່ຽວຂ້ອງມາໃຫ້ການ. ໃນເວລາຊັກຖາມ ກໍຕ້ອງເລັ່ງໃສ່ຄຳຖາມທີ່ຕັ້ງໄວ້ໃຫ້ສຳເລັດເສັຍກ່ອນ ແລ້ວຈຶ່ງສູ່ປະເດັນອື່ນ ເນື່ອງຈາກວ່າປະເດັນທີ່ຕັ້ງໄວ້ກ່ອນນັ້ນ ແມ່ນຖືກສ້າງເວລາ ຜູ້ຮັບຜິດຊອບດຳເນີນຄະດີໄດ້ຄົ້ນຄວ້າ ແລ້ວຍັງເຫັນວ່າບໍ່ທັນແຈ້ງຂາວ ຈຶ່ງຮ່າງຄຳຖາມໄວ້ ຊຶ່ງຖືວ່າແມ່ນຄຳຖາມໄດ້ມາຈາກການຄົ້ນຄວ້າແລ້ວ; ສິ່ງຫຼີກລ້ຽງ ແມ່ນຜູ້ຄົ້ນຄວ້າຄະດີ ບໍ່ຄວນຖືວ່າການເອົາຄຳໃຫ້ການເປັນເລື່ອງທຳມະດາ, ບໍ່ຈຳເປັນຮ່າງປະເດັນສອບສວນ ອາໄສຄວາມຈື່ຈຳຂອງຕົນເອງກໍໄດ້; ມັນຈະມີຄວາມສ່ຽງຄືການເອົາຄຳໃຫ້ການບໍ່ຖືກເປົ້າ, ບໍ່ໄດ້ໃຈຄວາມຂອງຂໍ້ຂັດແຍ່ງ ທີ່ສານຕ້ອງການ, ອາດຈະເສັຍເວລາ ຕ້ອງໄດ້ເອົາຄຳໃຫ້ການໃນກໍລະນີ ເທື່ອທັງສ້າງຄວາມລຳຄານແກ່ຄູ່ຄວາມ ອັນຈະກ້າວໄປເຖິງການບໍ່ຮັບປະກັນໄດ້ຄວາມເປັນຈິງຈາກຄູ່ຄວາມ.

ໃນການເອົາຄຳໃຫ້ການຂອງຄູ່ຄວາມ ຖ້າເຫັນວ່າຄຳໃຫ້ການຂອງຄູ່ຄວາມແຕ່ລະຝ່າຍ ຫາກຍັງມີ ຂໍ້ສົງໄສ ຫຼື ຄຳໃຫ້ການບໍ່ກົງກັນ ຕ່າງຄົນຕ່າງກໍອ້າງໄປຄົນລະຢ່າງ ໃນກໍລະນີນີ້ຄວາມຈຳເປັນຜູ້ຮັບຜິດຊອບດຳເນີນຄະດີຕ້ອງໄດ້ຮຽກຄູ່ຄວາມທັງສອງຝ່າຍ ມາໃຫ້ການຊ້ອງໜ້າກັນ ໂດຍຍົກເອົາປະເດັນທີ່ແຕ່ລະຝ່າຍອ້າງມານັ້ນ ໃຫ້ທັງສອງຊີ້ແຈງ ແລະ ໃຫ້ຄວາມກະຈ່າງແຈ້ງປະເດັນທີ່ຕົນບໍ່ເອກະພາບ ບົນພື້ນຖານມີຂໍ້ມູນຫຼັກຖານມາຢັ້ງຢືນກໍຍິ່ງເປັນການດີ[66].

**ຕົວຢ່າງ:** ທ້າວ ກ ອ້າງວ່າ ທ້າວ ຂ ໄດ້ ຂາຍລົດຈັກ ຍີ່ຫໍ້ ຮອນດາ ສະໂກບປີ ໃຫ້ຜູ້ກ່ຽວ ໃນລາຄາ 5.000.000 ກີບ, ແຕ່ ທ່າວ ຂ ອ້າງວ່າຕົນບໍ່ໄດ້ຂາຍລົດຈັກໃຫ້ ທ້າວ ກ ພຽງແຕ່ໃຫ້ ທ້າວ ກ ເຊົ່າໄປນຳໃຊ້; ໃນກໍລະນີ ຜູ້ຮັບຜິດຊອບຄະດີຈະເອົາທັງສອງມາໃຫ້ການຊ້ອງໜ້າກັນ ເພື່ອຊອກຮູ້ວ່າເຫດການທີ່ຂັດແຍ່ງ ເປັນການຊື້ຂາຍ ຫຼື

---

[63] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012, ມາດຕາ 106

[64] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012, ມາດຕາ 108

[65] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012, ມາດຕາ 80

[66] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 108

ເປັນການເປັນການເຊົ່າ ໂດຍຈະເລັ່ງໃສ່ໃຫ້ ທ້າວ ກ ອະທິບາຍກ່ຽວກັບ ເຫດການໄດ້ຊື້ ລົດຈັກ ແລະ ມີຫຼັກຖານມາ ຢັ້ງຢືນ ແລ້ວ ຈຶ່ງໃຫ້ ທ້າວ ຂ ອະທິບາຍກ່ຽວກັບການເຊົ່າລົດຈັກ ຕໍ່ ຜູ້ຮັບຜິດຊອບຄະດີ ຊຶ່ງເປີດໂອກາດໃຫ້ທັງສອງ ໂຕ້ແຍ່ງຫຼັກຖານນຳກັນອີກດ້ວຍ.

ອີກປະການໜຶ່ງທີ່ສຳຄັນກໍຄືເວລາຜູ້ຮັບຜິດຊອບດຳເນີນຄະດີໄດ້ເອົາຄຳໃຫ້ການຕ້ອງໃຫ້ມີຈ່າສານ ຫຼື ນັກວິຊາ ການເຂົ້າຮ່ວມນຳເປັນຜູ້ບັນທຶກ, ອ່ານໃຫ້ຟັງ ພ້ອມກັນລົງລາຍເຊັນ ແລະ ແປໂປ້ມືໄວ້[67].

**ຂ. ລົງກວດກາບັນຫາຂັດແຍ່ງ**

ການລົງກວດກາບັນຫາຂັດແຍ່ງແມ່ນການລົງໄປເບິ່ງສະຖານທີ່ ທີ່ເປົ້າໝາຍຂອງຂໍ້ຂັດແຍ່ງ ເພື່ອເປັນການສ້າງ ສ້າງມະໂນພາບທີ່ເຫັນປະຈັກຕາແກ່ຄະນະສານ ຊຶ່ງເຫັນໄດ້ຈຸດຂັດແຍ່ງຕົວຈິງ ເຊັ່ນ ຂໍ້ຂັດແຍ່ງກ່ຽວກັບເຂດແດນທີ່ ດິນກວມກັນ, ຂອບເຂດເນື້ອທີ່ດິນຕິດຈອດ ຫຼື ການຂໍທາງຜ່ານ... ແລ້ວຈຶ່ງເປັນເງື່ອນໄຂພາໃຫ້ຄະນະສານກຳນົດ ເຫດການຂອງຄະດີໄດ້ຢ່າງຊັດເຈນ, ເວລາຄະນະສານຈະໄປລົງກວດກາ ສະຖານ ທີ່ຄັດແຍ່ງ ກໍຕ້ອງມີການຂຶ້ນແຜນ ຄັກແນ່ຄື: ກຳນົດຜູ້ເຂົ້າຮ່ວມ, ງົບປະມານ, ເນື້ອໃນການລົງກວດກາ ແລະ ກຳນົດວັນເວລາ ໂດຍມີການແບ່ງວຽກກັນ ຢ່າງຊັດເຈນ, ຜູ້ແຕ້ມແຜນວາດ, ຜູ້ຄິດໄລ່ເນື້ອທີ່ ແລະ ຜູ້ບັນທຶກ[68].

ການລົງກວດກາບັນຫາຂັດແຍ່ງແມ່ນຈະດຳເນີນຕາມການສະເໜີຂອງຄູ່ຄວາມ ຫຼື ຕາມຄຳເຫັນຂອງສານທີ່ເຫັນ ວ່າມີຄວາມຈຳເປັນ, ການລົງກວດກາບັນຫາຂັດແຍ່ງຕ້ອງມີການເຂົ້າຮ່ວມຂອງຄູ່ຄວາມ, ອົງການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ; ຝ່າຍຮ້ອງຂໍໃຫ້ລົງກວດກາຈະຕ້ອງໄດ້ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍດັ່ງກ່າວ ແລະ ສານຈະຕ້ອງ ໄດ້ສະຫຼຸບຄ່າໃຊ້ຈ່າຍເປັນລາຍລັກອັກສອນ ແລະ ໃຫ້ວິນິດໄສລົງໃນຄຳຕັດສິນ ຖ້າເຫຼືອກໍສົ່ງຄືນແກ່ຜູ້ນຳເງິນມາວາງ ສານ ຖ້າບໍ່ພໍກໍແນະນຳໃຫ້ ຜູ້ກ່ຽວມາວາງເພີ່ມຕື່ມແລ້ວຈຶ່ງຕັດສິນໃຫ້ຄູ່ຄວາມ ຜູ້ເສັຍຄະດີຮັບຜິດຊອບຄ່າໃຊ້ຈ່າຍໃນ ການລົງກວດກາຂໍ້ຂັດແຍ່ງຕາມກົດໝາຍ.

**ຄ. ແຕ່ງຕັ້ງຜູ້ຊ່ຽວຊານທຳການພິສູດ**

ຫຼັກຖານໃນການດຳເນີນຄະດີແມ່ນມາຈາກໃນກໍລະນີແຫຼ່ງ ຊຶ່ງບາງຫຼັກຖານກໍມີລັກສະນະເຕັກນິກສະເພາະ ຊຶ່ງ ສານບໍ່ສາມາດຈະອ່ານໃຫ້ເຂົ້າໃຈເນື້ອໃນຂອງຫຼັກຖານໃຫ້ໄດ້ຢ່າງຊັດເຈນ, ຄູ່ຄວາມຕ່າງກໍອ້າງໄປຄົນລະຢ່າງ ສະນັ້ນ ສານຢາກເຂົ້າໃຈກ່ຽວກັບຫຼັກຖານ ຢ່າງຊັດເຈນນັ້ນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ ແຕ່ງຕັ້ງຜູ້ຊ່ຽວຊານ ສະເພາະດ້ານທຳ ການພິສູດຫຼັກຖານໃຫ້ມີຄວາມຊັດເຈນ ແລະ ແຈ້ງຂາວຂຶ້ນຕື່ມ.

**ຕົວຢ່າງ** ທ້າວ ກໍອ້າງວ່າ ທ້າວ ຂໍຕິດໜີ້ ຜູ້ກ່ຽວ, ແຕ່ ທ້າວ ຂ ປະຕິເສດວ່າ ບໍ່ໄດ້ຕິດໜີ້ ທ້າວ ກໍ ໜັງສືສັນຍາ ກໍ ບໍ່ແມ່ນ ລາຍເຊັນຂອງຕົນ; ໃນກໍລະ ນີ້ຄະນະສານຜູ້ຮັບຜິດຊອບດຳເນຄະດີ ຕ້ອງສະເໜີ ນຳສົ່ງໜັງສື ສັນຍາ ພ້ອມ ເອກະສານ ປຽບທຽບໄປຍັງ ກົມພິສູດຫຼັກຖານເຕັກນິກທາງອາຍາ ກະຊວງປ້ອງກັນ ຄວາມສະຫງົບ ເພື່ອທຳການ ພິສູດລາຍເຊັນທີ່ຂັດແຍ່ງກັນ ຕາມລະບຽບການ.

ກໍລະນີມີຄວາມຈຳເປັນຕ້ອງມີການແຕ່ງຕັ້ງຜູ້ຊ່ຽວຊານທຳການພິສູດຫຼັກຖານ ຍ້ອນວ່າຫຼັກຖານໄດ້ມານັ້ນຍັງບໍ່ ທັນຈະແຈ້ງ, ມີອັນສົງໃສ; ເຊັ່ນ ຕົວໜັງສື, ລາຍເຊັນ, ຕາປະທັບ, ຊັບສິ່ງຂອງ ຫຼື ສະຖານທີ່ຕ່າງໆຕາມການສະເໜີ ຂອງ ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຫຼື ຕາມຄຳເຫັນຂອງສານ, ສານຕ້ອງໄດ້ສະເໜີຕໍ່ຂະແໜງການກ່ຽວຂ້ອງ ຫຼື ແຕ່ງຕັ້ງ ຜູ້ຊ່ຽວຊານທຳການພິສູດ ຫຼື ຢັ້ງຢືນ; ເນື້ອໃນການແຕ່ງຕັ້ງຕ້ອງລະບຸໃຫ້ເຫັນເປົ້າໝາຍການພິສູດ ຫຼື ການຢັ້ງຢືນນັ້ນ ໃຫ້ລະອຽດ, ກຳນົດເວລາພິສູດ ພ້ອມທັງຄັດຕິດຂໍ້ມູນເອກະສານທີ່ຈະພິສູດນັ້ນ ແລະ ຕ້ອງແຈ້ງໃຫ້ຄູ່ຄວາມ ຫຼື ບຸກ ຄົນອື່ນທີ່ກ່ຽວຂ້ອງຊາບ[69].

---

[67]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 108 ລະບຽບການບັນທຶກເອົາຄຳໃຫ້ການຕ້ອງໄດ້ປະຕິບັດຕາມ ເນື້ອໃນຂອງມາຕານີ້ຢ່າງເຂັ້ມງວດ ເຊັ່ນ ມີຊື່ ແລະ ນາມສະກຸນຂອງຜູ້ເຂົ້າຮ່ວມ, ປະຫັວດຍໍ້ຂອງຜູ້ໃຫ້ການ, ມີລາຍເຊັນກຳກັບໜ້າແຖວ ບ່ອນປ່ຽນແປງ, ເພີ່ມເຕີມ ຫຼື ຂີດຂ້າ, ລົງລາຍເຊັນແລະ ແປະໂປ້ມື...

[68]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 111

[69]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ112

ຜູ້ຊ່ຽວຊານທີ່ໄດ້ທຳການພິສູດຫຼັກຖານຕາມການສະເໜີຂອງສານນັ້ນ ຕ້ອງເອົາໃຈໃສ່ດຳເນການພິສູດຫຼັກຖານຕາມຫຼັກວິຊາການຢ່າງເຄັ່ງຄັດ ພິຈາລະນາຢ່າງຮອບຄອບສອດຄ່ອງຕາມຫຼັກວິທະຍາສາດ, ພາຍຫຼັງສຳເລັດແລ້ວ ກໍຕ້ອງເຮັດບົດສະຫຼຸບຜົນຂອງການພິສູດ ສົ່ງໄປຍັງສານທີ່ສະເໜີໃຫ້ທຳການພິສູດໃນເວລາອັນຄວນ; ຫຼີກລ້ຽງການຮັບບໍລິການພິສູດ ຫຼັກຖານໂດຍຄູ່ຄວາມ ຫາກໄດ້ສະເໜີພິສູດແບບສ່ວນຕົວ ຊຶ່ງອາດຈະຮັບປະກັນບໍ່ໄດ້ເຖິງຄວາມເປັນທຳທັງເຮັດໃຫ້ຄູ່ຄວາມ ຝ່າຍກົງກັນຂ້າມເກີດມີຄວາມສົງໄສໃນການປະຕິບັດວຽກງານຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ[70].

**ງ. ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊີ້ແຈງ, ຢັ້ງຢືນ ຫຼື ສະໜອງຫຼັກຖານທີ່ກ່ຽວຂ້ອງ**

ຫຼັກຖານທີ່ຄູ່ຄວາມໄດ້ສະເໜີຕໍ່ສານ ສານຕ້ອງໄດ້ທຳການກວດກາ, ຊັ່ງຊາ ແລະ ຕີລາຄາທັງໝົດ, ແຕ່ບັນດາຂໍ້ມູນຫຼັກຖານທີ່ມີນັ້ນຕ້ອງເປັນຫຼັກຖານທີ່ແຈ້ງຂາວ ຊັດເຈນແລ້ວ ເທົ່ານັ້ນ ຈຶ່ງຖືກນຳເຂົ້າພິຈາລະນາ, ສະນັ້ນ ສານຕ້ອງໄດ້ກວດກາລະອຽດເສັຍກ່ອນ, ເມື່ອເຫັນວ່າ ບາງຫຼັກຖານຍັງມີອັນສົງໄສ, ມີເນື້ອໃນບໍ່ແຈ້ງຂາວ ກໍສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊີ້ແຈງ ຫຼື ຢັ້ງຢືນຕາມລະບຽບການ.

**ຕົວຢ່າງ:** ທີ່ດິນຕອນດຽວມີສອງໃບຕາດິນ ສານກໍຕ້ອງເຮັດໜັງສືສະເໜີ ອົງການຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ທີ່ດິນ ເປັນຜູ້ຮັບຜິດຊອບ ຊີ້ແຈງຂັ້ນຕອນການອອກໃບຕາດິນ ຫຼື ຢັ້ງຢືນວ່າໃບຕາດິນຂອງຜູ້ໃດຖືກຕ້ອງ ແລະ ມີຄຸນຄ່າໃຊ້ໄດ້ທາງດ້ານກົດໝາຍ.

ກໍລະນີດັ່ງກ່າວນີ້ແມ່ນເຮັດຂຶ້ນເມື່ອຄູ່ຄວາມບໍ່ສາມາດຍື່ນຫຼັກຖານດ້ວຍຕົນເອງ ແລະ ຫຼັກຖານບໍ່ຢູ່ນຳຄູ່ຄວາມ, ບັນດາຫຼັກຖານທີ່ກ່ຽວຂ້ອງຢູ່ໃນການຄຸ້ມຄອງ, ປົກປັກຮັກສາຂອງອົງການຈັດຕັ້ງໃດໜຶ່ງ ຊຶ່ງຄູ່ຄວາມບໍ່ສາມາດນຳມາຍື່ນຕໍ່ສານໄດ້, ສານຈະຕ້ອງເຮັດໜັງສືສະເໜີຫາພາກສ່ວນທີ່ກ່ຽວຂ້ອງ ໃຫ້ສະໜອງຫຼັກຖານໃຫ້ແກ່ສານຕາມການຮ້ອງຂໍຂອງຄູ່ຄວາມ ຫຼື ຕາມຄຳເຫັນຂອງສານ; ຖ້າຫຼັກຖານເປັນເອກະສານທີ່ເປັນຕົ້ນສະບັບທີ່ພາກສ່ວນທີ່ກ່ຽວຂ້ອງໄດ້ສົ່ງມາຍັງສານ, ເມື່ອສານໄດ້ກວດກາ, ນຳໃຊ້ຫຼັກຖານເຫຼົ່ານັ້ນ ແລະ ໄດ້ສຳເນົາເກັບໄວ້ໃນສຳນວນແລ້ວ ສານຕ້ອງສົ່ງຫຼັກຖານຕົ້ນສະບັບນັ້ນຄືນໃຫ້ອົງການຈັດຕັ້ງດັ່ງກ່າວ.

**ຈ. ມອບໃຫ້ສານອື່ນເກັບກຳຂໍ້ມູນຫຼັກຖານ ແລະ ສອບສວນແທນ**

ຕາມຫຼັກການແລ້ວສານບ່ອນເຫດການ ຫຼື ຂໍ້ຂັດແຍ່ງ ຫຼື ຊັບສົມບັດເປັນພື້ນຖານ ຫຼື ບ່ອນຈຳເລີຍອາໄສ ຢູ່ນັ້ນເປັນສານທີ່ ມີສິດອຳນາດພິຈາລະນາຕັດສິນຄະດີ[71]; ແຕ່ໃນເວລາດຳເນີນຄະດີ ບາງເທື່ອຈຳເລີຍ ພັດມີການໂຍກຍ້າຍຄອບຄົວໄປຢູ່ທ້ອງຖິ່ນອື່ນອາດແມ່ນຍ້ອນເຫດຜົນທາງດ້ານທຸລະກິດ ຫຼື ເຫດຜົນອື່ນ ຫຼື ບຸກຄົນທີສາມ ຫຼື ຜູ້ເຂົ້າຮ່ວມດຳເນຄະດີອື່ນໄດ້ໄປຢູ່ບ່ອນອື່ນ ຊຶ່ງເປັນອຸປະສັກແກ່ສານໃນການດຳເນຄະດີ, ຖ້າຫາກເຫັນວ່າມີຄວາມຈຳເປັນ, ຄູ່ຄວາມ, ບຸກຄົນທີສາມ, ພະຍານ, ບຸກຄົນທີ່ເຂົ້າຮ່ວມໃນການດຳເນີນຄະດີ ຫາກບໍ່ສາມາດມາໃຫ້ການຕໍ່ສານເນື່ອງຈາກ ຢູ່ທ້ອງຖິ່ນຕ່າງກັນ ຫຼື ສາເຫດອື່ນ ແລະ ຫຼັກຖານຕັ້ງຢູ່ທ້ອງຖິ່ນອື່ນ, ສະນັ້ນ ເພື່ອສະດວກໃນການເກັບກຳຂໍ້ມູນຫຼັກຖານ ແລະ ການເອົາຄຳໃຫ້ການໄດ້ຢ່າງສະດວກ, ສະນັ້ນ ສານທີ່ມີສິດອຳນາດດຳເນີນຄະດີ ກໍມີສິດມອບໃຫ້ສານບ່ອນທີ່ ຈຳເລີຍ ຫຼື ພະຍານ ຫຼື ບຸກຄົນທີ່ເຂົ້າຮ່ວມການດຳເນີນຄະດີອາໄສຢູ່ ເພື່ອທຳການເກັບກຳຂໍ້ມູນຫຼັກຖານ ແລະ ສອບສວນແທນກໍໄດ້.

ໃນການມອບໝາຍນັ້ນ ຕ້ອງໄດ້ລະບຸເນື້ອໃນຂອງຄະດີໂດຍຫຍໍ້ ແລະ ຫຼັກຖານ ຊຶ່ງສານທີ່ຮັບມອບໝາຍນັ້ນຄວນເກັບກຳ; ການມອບໝາຍດັ່ງກ່າວມີຜົນບັງຄັບປະຕິບັດສຳລັບສານທີ່ຮັບມອບໝາຍເທົ່ານັ້ນ ແລະ ໃຫ້ປະຕິບັດພາຍໃນກຳນົດເວລາ 30 ວັນ ສຳລັບການມອບໝາຍຂອງສານໃຫ້ເກັບກຳຂໍ້ມູນຫຼັກຖານ ແລະ ສິບຫ້າວັນ ສຳລັບການມອບໝາຍໃຫ້ສານອື່ນເອົາຄຳໃຫ້ການແທນ, ພາຍຫຼັງເກັບຂໍ້ມູນຫຼັກຖານ ແລະ ສອບສວນແທນແລ້ວ ສານທີ່ໄດ້ຮັບມອບໝາຍຕ້ອງໄດ້ສົ່ງຜົນຂອງການເກັບກຳຂໍ້ມູນຫຼັກຖານ ແລະ ບົດບັນທຶກຄຳໃຫ້ການສົ່ງໃຫ້ສານທີ່ມອບໝາຍໃນທັນທີ[72].

---

[70]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 113

[71]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 25

[72]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 116

**ຂໍ້ສັງເກດ:** ຈຸດດີ-ຈຸດອ່ອນໃນການເກັບກຳຂໍ້ມູນຫຼັກຖານໂດຍສານ

| **ຈຸດດີ** | **ຈຸດອ່ອນ** |
|---|---|
| ສານສາມາດຮູ້ໄດ້ວ່າຫຼັກຖານນັ້ນມີຈິງ | ອາດຈະມີທາງສຽງຕໍ່ສານຖ້າສານເຮັດຜິດພາດ |
| ສາມາດຮູ້ຂໍ້ມູນລະອຽດກ່ຽວກັບຫຼັກຖານ | ສັງຄົມ, ຄູ່ຄວາມຈະຄິດວ່າຜູ້ພິພາກສາເຂົ້າຂ້າງອອກຂາ |
| ຜູ້ພິພາກສາມີຄວາມເຊື່ອໝັ້ນຕໍ່ຫຼັກຖານໃນຄະດີ | ອາດຈະຕ້ອງໄດ້ໄປພິສູດຫຼັກຖານທີ່ບໍ່ຈະແຈ້ງ |
| ສ້າງຄວາມໝັ້ນໃຈໃຫ້ຄູ່ຄວາມ | ສິ້ນເປືອງງົບປະມານ |
| ສານສາມາດຮັບຮູ້ບັນຫາຕົວຈິງ | ແກ່ຍາວເວລາດຳເນີນຄະດີ, ສານເຮັດວຽກໜັກ |
| ຂາດທະນາຍຄວາມ, ສານຕ້ອງຊ່ວຍປະຊາຊົນ | ເປັນເລື່ອງກິດຈະການພາຍໃນຂອງຄູ່ຄວາມເອງ |
| ປະຊາຊົນບໍ່ສາມາດເກັບກຳດ້ວຍຕົນເອງນຳອົງການຂອງລັດ ສານຈະຕ້ອງຊ່ວຍ | ເປັນການຍາດວຽກທະນາຍຄວາມ |

## 6. ລະບຽບການພິຈາລະນາຂໍ້ມູນຫຼັກຖານ

ລະບຽບການພິຈາລະນາຂໍ້ມູນຫຼັກຖານ ແມ່ນການຂໍ້ກຳນົດໃຫ້ສິດແກ່ສານໃນການພິຈາລະນາ ຫຼັກຖານຂອງຄູ່ຄວາມທີ່ໄດ້ຍື່ນມາຍັງສານໝາຍຄວາມວ່າທຸກໆຫຼັກຖານ ທີ່ຄູ່ຄວາມໄດ້ຍື່ນແກ່ສານ ສານກໍຕ້ອງນຳພິຈາລະນາທັງໝົດ; ໃນການດຳເນີນຄະດີຢູ່ສານຂັ້ນຕົ້ນ ນັບແຕ່ບາດກ້າວການຍື່ນຄຳຮ້ອງຟ້ອງ ຊຶ່ງສານໄດ້ປະກອບເປັນສຳນວນຄະດີຈົນເຖິງປິດການໂຕ້ຖຽງໃນທີ່ປະຊຸມສານ, ສານຈະຕ້ອງໄດ້ພິຈາລະນາຕາມ ຫຼັກຖານທີ່ຄູ່ຄວາມສະໜອງໃຫ້ ຫຼື ຈາກການເກັບກຳຫຼັກຖານມາໄດ້ໂດຍສານເອງ, ໃນເວລາພິຈາລະນາຫຼັກຖານນັ້ນ ສານຈະຕ້ອງຖາມຄູ່ຄວາມວ່າ ຫຼັກຖານທີ່ຍື່ນມາໃຫ້ສານນັ້ນຄົບຖ້ວນແລ້ວ ຫຼື ບໍ່, ຖ້າບໍ່ຄົບສານກໍຈະແນະນຳໃຫ້ຄູ່ຄວາມນຳເອົາຫຼັກຖານມາສະເໜີຕື່ມຕາມໄລຍະເວລາທີ່ສານເຫັນວ່າເໝາະສົມ, ສະນັ້ນ ຈຶ່ງສາມາດເວົ້າໄດ້ວ່າການພິຈາລະນາຂໍ້ມູນຫຼັກຖານແມ່ນການລວບລວມເອົາບັນດາຫຼັກຖານຕ່າງໆທີ່ເຫັນວ່າມີຄວາມຈຳເປັນຕໍ່ກັບການດຳເນຄະດີຢູ່ສານ ເວົ້າຢ່າງໜຶ່ງແມ່ນການໃຫ້ໂອກາດຄູ່ຄວາມນຳເອົາຫຼັກຖານມາຢັ້ງຢືນຕໍ່ກັບຂໍ້ອ້າງຂອງຕົນຢູ່ໃນບາດກ້າວການສອບສວນ ແລະ ປະກອບຫຼັກຖານ[73].

## 7. ການກວດກາ ແລະ ຄັດຈ້ອນຫຼັກຖານ

ພາຍຫຼັງທີ່ຄູ່ຄວາມໄດ້ປະກອບຫຼັກຖານ ແລະ ສານໄດ້ເກັບກຳຫຼັກຖານ ສຳເລັດແລ້ວ ຜູ້ພິພາກສາຕ້ອງໄດ້ທຳການກວດກາ, ໄຈ້ແຍກ ແລະ ຄັດຈ້ອນຫຼັກຖານ ຂອງຄູ່ຄວາມແຕ່ລະຝ່າຍທັງໝົດ, ທຸກໆຫຼັກຖານຂອງແຕ່ລະຝ່າຍສະເໜີຂຶ້ນມານັ້ນ ຕ້ອງໃຫ້ຝ່າຍກົງກັນຂ້າມ ຊີ້ແຈງ ຫຼື ໂຕ້ແຍ້ງ ແລະ ມີຄຳເຫັນຕໍ່ຫຼັກຖານ ເພື່ອເປັນພື້ນຖານໃຫ້ແກ່ສານກຳນົດເຫດການຂອງຄະດີຖືກຕ້ອງຕາມຄວາມເປັນຈິງ ສິ່ງສຳຄັນໃນການໄຈ້ແຍກ ແລະ ຄັດຈ້ອນຫຼັກຖານນັ້ນ ຜູ້ພິພາກສາ ຕ້ອງພະຍາຍາມຄັດຈ້ອນເອົາ ແຕ່ຫຼັກຖານທີ່ເປັນຜົນປະໂຫຍດ ແລະ ກ່ຽວຂ້ອງກັບເຫດການຂອງຄະດີເທົ່ານັ້ນ ຂຽນລົງໃນພາກວິນິດໄສ ແລະ ຕັດສິນ, ແຕ່ເຖິງຢ່າງໃດກໍຕາມ ຫຼັກຖານອັນໃດທີ່ບໍ່ເປັນພື້ນຖານໃນ

---

[73] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 120 ໃນເວລາດຳເນີນຄະດີຢູ່ສານຂັ້ນຕົ້ນ ນັບແຕ່ໄດ້ຮັບສຳນວນຄະດີ ຈົນເຖິງປິດການໂຕ້ຖຽງໃນທີ່ ປະຊຸມສານ ຄະນະສານຕ້ອງຖາມຄູ່ຄວາມວ່າ ຂໍ້ມູນຫຼັກຖານທີ່ຍື່ນມານັ້ນ ຄົບຖ້ວນແລ້ວ ຫຼືບໍ່, ຖ້າ ຫາກບໍ່ທັນຄົບຖ້ວນ ກໍຈະໃຫ້ຜູ້ກ່ຽວນຳເອົາມາສະເໜີເພີ່ມຕື່ມ ພາຍໃນກຳນົດເວລາທີ່ສານເຫັນວ່າ ເໝາະສົມ, ຖ້າຫາກຄົບຖ້ວນ ແລະ ພຽງພໍແລ້ວ ສານກໍຈະນຳເອົາຄະດີອອກພິຈາລະນາຕັດສິນ”

ການລົງຄຳຕັດສິນນັ້ນ ສານກໍຕ້ອງໄດ້ ລົງຄຳວິນິດໄສໃຫ້ເຫດຜົນທາງດ້ານກົດໝາຍ ທີ່ບໍ່ສາມາດນຳເອົາຫຼັກຖານ ທີ່ຜູ່ກ່ຽວສະເໜີມານັ້ນ ມາເປັນບ່ອນອີງໃນການລົງຄຳຕັດສິນ[74].

ການກວດກາ ແລະຄັດຈ້ອນຫຼັກຖານ ແມ່ນກວດກາເບິ່ງ ຕາມລາຍການຫຼັກຖານທີ່ ຄູ່ຄວາມໄດ້ຍື່ນຕໍ່ສານ ແລະ ຕາມລາຍການທີ່ສານເກັບກຳໄດ້ ຖ້າເຫັນວ່າ ຄົບຖ້ວນ ແລະ ສາມາດກຳນົດເຫດການ ຂອງຄະດີໄດ້ຢ່າງຊັດເຈນພໍຈະນຳເຂົ້າພິຈາລະນາຕັດສິນໃນທີ່ປະຊຸມສານແລ້ວ ຫົວໜ້າຄະນະສານແພ່ງ ກໍຈະອອກຄຳຕົກລົງ ເພື່ອນຳເອົາຄະດີອອກພິຈາລະນາໄຕ່ສວນໃນທີ່ປະຊຸມສານ, ກຳນົດຜູ່ເຂົ້າຮ່ວມ, ວັນເວລາປະຊຸມສານ ແລະ ມອບໃຫ້ຜູ່ພິພາກສາ ທີ່ເປັນຄະນະສານຕັດສິນກະກຽມການໄຕ່ສວນໃນທີ່ປະຊຸມສານ[75]. ກົງກັນຂ້າມ ຜ່ານການກວດກາ ແລະ ຄັດຈ້ອນ ຫຼັກຖານແລ້ວ ຫາກພົບເຫັນວ່າ ຫຼັກຖານທີ່ຄູ່ຄວາມປະກອບມານັ້ນ ບໍ່ຄົບຖ້ວນ, ບໍ່ພຽງພໍ ຫຼື ຜູ່ພິພາກສາຮັບຜິດຊອບດຳເນີນຄະດີນັ້ນ ເກັບກຳຫຼັກຖານ ຍັງບໍ່ຄົບຖ້ວນ ຊຶ່ງບໍ່ສາມາດ ຈະນຳເອົາຄະດີເຂົ້າໄຕ່ສວນໃນທີ່ປະຊຸມສານໄດ້ ສານກໍຈະແນະນຳ ໃຫ້ຄູ່ຄວາມ ທີ່ກ່ຽວຂ້ອງນຳເອົາຫຼັກຖານມາປະກອບຕື່ມອີກ ຫຼື ແນະນຳ ໃຫ້ຜູ່ພິພາກສາຮັບຜິດຊອບດຳເນີນຄະດີ ທຳການເກັບກຳຂໍ້ມູນຫຼັກຖານຕື່ມອີກ[76].

ການຄັດຈ້ອນຫຼັກຖານນັ້ນ ເປັນໜ້າທີ່ໜຶ່ງທີ່ສຳຄັນຂອງຜູ່ຮັບຜິດຊອບຄົ້ນຄວ້າຄະດີຄື ຕ້ອງຄັດຈ້ອນໃຫ້ຮູ້ຈະແຈ້ງວ່າ ປະເດັນອັນໃດທີ່ຄູ່ຄວາມເປັນເອກະພາບກັນແລ້ວ ແລະ ປະເດັນອັນໃດທີ່ຍັງບໍ່ທັນເອກະພາບກັນ ແມ່ນເລັງໃສ່ການປະກອບຫຼັກຖານ ສະເພາະແຕ່ປະເດັນທີ່ ຍັງບໍ່ທັນເປັນເອກະພາບເທົ່ານັ້ນ, ສ່ວນພັນທະໃນການປະກອບຫຼັກຖານ ຝ່າຍໃດສະເໜີກໍແມ່ນຝ່າຍ ນັ້ນມີພັນທະ ຊອກຫຼັກຖານມາຢັ້ງຢືນການກ່າວອ້າງຂອງຕົນ ຕາມທີ່ໄດ້ບົ່ງໄວ້ໃນຂໍ້ 5.1.1. (ຄ) ຂອງບົດນີ້.

**ຕົວຢ່າງ:** ທ້າວ ກ ໄດ້ຮ້ອງຟ້ອງຂຶ້ນສານ ເພື່ອຂໍແບ່ງປັນມູນມໍຣະດົກ ທີ່ດິນນາໜຶ່ງທົ່ງ ນຳ ນາງ ຂ, ຜ່ານການເກັບຂໍ້ມູນຫຼັກຖານ ນາງ ຂ ໄດ້ໃຫ້ການວ່າ ທີ່ດິນນາ ທົ່ງທີ່ ທ້າວ ກ ຮ້ອງຂໍ ແບ່ງປັນນັ້ນແມ່ນ ມູນມໍຣະດົກ ສືບທອດຈາກພໍ່ແມ່;ນາງ ຂ ອ້າງວ່າ ມູນມໍຣະດົກຂອງພໍ່ແມ່ ໄດ້ແບ່ງປັນກັນນານໃນກໍລະນີປີແລ້ວ, ນາທົ່ງນີ້ຕົກເປັນພູດ ຂອງຕົນ. ກໍລະນີນີ້ປະເດັນທີ່ທັງສອງເອກະພາບກັນ ແມ່ນທີ່ດິນນາບ່ອນຂັດແຍ່ງ ເປັນມູນມໍຣະດົກຂອງພໍ່ແມ່ ພວກກ່ຽວ ຊຶ່ງບໍ່ຈຳເປັນຊອກຫາຫຼັກຖານມາປະກອບວ່າ ທີ່ດິນນານັ້ນຈະແມ່ນມູນມໍຣະດົກ ຫຼື ເອກະພາບກັນແລ້ວ; ປະເດັນທີ່ບໍ່ທັນເປັນເອກະພາບກັນ ແມ່ນ ທ້າວ ກ ອ້າງວ່າ ທີ່ດິນນາມູນນີ້ບໍ່ທັນໄດ້ແບ່ງປັນ, ແຕ່ ນາງ ຂ ພັດອ້າງວ່າໄດ້ແບ່ງປັນກັນແລ້ວ, ສະນັ້ນ ນາງ ຂ ຈຶ່ງມີພັນທະໃນການປະກອບຫຼັກຖານວ່າ ທີ່ດິນນາຕອນຂັດແຍ່ງກັນໄດ້ມີການແບ່ງປັນກັນແລ້ວ.

ສະນັ້ນ, ບໍ່ວ່າຈະແມ່ນ ຄູ່ຄວາມຫຼື ຜູ່ພິພາກສາຮັບຜິດຊອບ ໃນການດຳເນີນຄະດີ ກໍຕາມໃນເວລາປະກອບຫຼັກຖານໃຫ້ແກ່ສານ ກໍຕ້ອງນຳເອົາຫຼັກຖານທັງໝົດທີ່ຕົນເອງມີ ແລະ ເຫັນວ່າເປັນຜົນປະໂຫຍດ ແກ່ການກ່າວອ້າງຂອງຕົນນຳມາປະກອບໃຫ້ສານທີ່ກ່ຽວຂ້ອງຢ່າງຄົບຖ້ວນ ແລະ ຜູ່ພິພາກສາ ຮັບຜິດ ຊອບດຳເນຄະດີ ກໍຕ້ອງຂຶ້ນແຜນການດຳເນຄະດີໃຫ້ຊັດເຈນ ເພື່ອເກັບຂໍ້ມູນຫຼັກຖານໃຫ້ໄດ້ຢ່າງຄົບຖ້ວນ ແລະ ແຈ້ງຂາວ ເພື່ອສາມາດກຳນົດເຫດການຂອງຄະດີ ຖືກກັບຄວາມເປັນຈິງ ແລະອາງມາດຕາກົດໝາຍ ມາດັດປັບເຫດການຄະດີ ແນໃສ່ຮັບປະກັນຄວາມເປັນທຳແກ່ຄູ່ຄວາມທັງສອງຝ່າຍ ແລະ ຮັບປະກັນກຳນົດເວລາດຳເນີນຄະດີ.

## 8. ການຄຸ້ມຄອງຫຼັກຖານ

ການຄຸ້ມຄອງຫຼັກຖານໃນຄະດີແພ່ງແມ່ນການປົກປັກຮັກສາຫຼັກຖານ, ເພື່ອຮັບປະກັນເຮັດໃຫ້ຫຼັກຖານສາມາດນຳໃຊ້ໄດ້ເປັນປົກກະຕິໃນໄລຍະການດຳເນີນຄະດີທີ່ຍັງບໍ່ທັນມີການລົງຄຳຕັດສິນຂອງສານ ເພື່ອປົກປ້ອງບໍ່ໃຫ້ສູນຫາຍ, ເປ່ເພ ຫຼື ດັດແປງ ເວົ້າຢ່າງໜຶ່ງກໍເພື່ອເຮັດໃຫ້ຫຼັກຖານຍັງຄົງຢູ່ໃນສະພາບເດີມໄດ້ນານເທົ່າໃດຍິ່ງຈະເປັນການດີ

[74]ກົດຫມາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 192

[75]ກົດຫມາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 205

[76]ກົດຫມາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 204

ຊຶ່ງຈຳເປັນຕ້ອງມີການຄຸ້ມຄອງຫຼັກຖານໂດຍສານອາດ ຈະແມ່ນຄູ່ຄວາມຝ່າຍໃດຝ່າຍໜຶ່ງເປັນ ຜູ້ຄຸ້ມຄອງ ໂດຍການເຫັນດີຂອງສານ ແລະ ບາງກໍລະນີ ກໍອາດຈະແຕ່ງຕັ້ງໃຫ້ອົງການວິຊາສະເພາະທີ່ກ່ຽວຂ້ອງໃດໜຶ່ງເປັນຜູ້ຄຸ້ມຄອງ ຫຼື ສານເອງເປັນຜູ້ຄຸ້ມຄອງຕາມຄວາມຈຳເປັນ.

**ຕົວຢ່າງ:** ທ້າວ ກ ທວງເອົາກາມະສິດໃນທີ່ດິນ ກັບ ທ້າວ ຂ ໂດຍ ທ້າວ ກ ໄດ້ເອົາໃບຕາດິນສະບັບຕົ້ນມາປະກອບໃສ່ສຳນວນຄະດີ, ເມື່ອເຫັນເປັນເຊັ່ນນັ້ນ ໃບຕາດິນຂອງ ທ້າວ ກ ຈະຮັບປະກັນບໍ່ໄດ້ຕໍ່ຄວາມ ເສັຍຫາຍ ເພາະ ການດຳເນີນຄະດີອາດໃຊ້ເວລາ ແລະ ສຳນວນ ກໍມີການເຄື່ອນຍ້າຍໄປໃນກໍລະນີບ່ອນ, ສະນັ້ນ ສານກໍຈະອັດສຳເນົາໃບຕາດິນ ຂອງ ທ້າວ ກ ໄວ້ໃນສຳນວນຄະດີ ແລ້ວສົ່ງສະບັບເດີມ ໃຫ້ ທ້າວ ກ ເປັນ ຜູ້ປົກປັກຮັກສາດ້ວຍຕົນເອງ ແລະ ສານຕ້ອງການນຳມາສະແດງເວລາໃດ ທ້າວ ກ ຕ້ອງນຳມາສະເໜີຕໍ່ສານ.

ໃນພາກປະຕິບັດຕົວຈິງ ຜູ້ຮັບຜິດຊອບດຳເນີນຄະດີຕ້ອງໄດ້ໄຈ້ແຍກບັນດາຫຼັກຖານ ແຕ່ລະປະເພດ ທີ່ຄູ່ຄວາມນຳມາປະກອບໃຫ້ແກ່ສານຢ່າງລະອຽດ, ຖ້າບໍ່ຈຳເປັນບໍ່ຄວນຮັກສາດ້ວຍຕົນເອງ ທັງນີ້ກໍເພື່ອ ເປັນການປ້ອງກັນບໍ່ໃຫ້ມີການຕົກເຮັ່ຍເສັຍຫາຍ ເຊັ່ນ ຖ້າເປັນເງິນ ກໍຕ້ອງນຳໄປຝາກໄວ້ທະນາຄານ, ເປັນອາວຸດກໍຝາກໄວ້ ນຳອົງການປ້ອງກັນຄວາມສະຫງົບ ຫຼື ເປັນເອກະສານຕ້ອງອັດສຳເນົາໄວ້ສຳນວນ, ສ່ວນສະບັບຕົ້ນກໍສົ່ງຄືນແກ່ ຜູ້ເປັນເຈົ້າຂອງເອກະສານ.

ສຳລັບຫຼັກຖານທາງ ດ້ານບຸກຄົນເປັນຕົ້ນແມ່ນ ພະຍານຈະໄດ້ຮັບການປົກປ້ອງຕາມກົດໝາຍ ຖ້າມີການບັງຄັບນາບຂູ່ຈາກບຸກຄົນໃດໜຶ່ງ ອັນຈະເຮັດໃຫ້ ພະຍານໃຫ້ການບໍ່ເປັນໄປຕາມຄວາມຈິງ ຜູ້ບັງຄັບນາບຂູ່ກໍຈະມີຄວາມຜິດທາງອາຍາ ແລະ ຖືກດຳເນີນຄະດີຕາມທີ່ບົ່ງໄວ້ໃນມາດຕາ 97 ຂອງກົດໝາຍອາຍາ, ສະນັ້ນ ໃນການດຳເນີນຄະດີພະຍານ ບໍ່ຕ້ອງລັງເລໃຈ ຫຼື ຢຳເກງ ກັບອິດທິພົນຂອງຜູ້ໃດ ຜູ້ໜຶ່ງ ຕ້ອງປະຕິບັດຕາມສິດ ແລະ ພັນທະຂອງຕົນຕາມທີ່ບົ່ງໄວ້ໃນກົດໝາຍ ກໍຄືລາຍງານຕາມຄວາມເປັນຈິງ ສິ່ງທີ່ຕົນໄດ້ຮູ້ ໄດ້ເຫັນເຫດການຄະດີ.

ການຄຸ້ມຄອງຫຼັກຖານອາດຈະເຮັດດ້ວຍໃນກໍລະນີວິທີ ເຊັ່ນ ການຖ່າຍຮູບ, ບັນທຶກສຽງ, ສຳເນົາ, ບັນທຶກ, ການນຳຫຼັກຖານໄປເກັບມ້ຽນບ່ອນທີ່ປອດໄພ; ຄູ່ຄວາມມີສິດຮ້ອງຂໍຕໍ່ສານ ເພື່ອອອກຄຳສັ່ງໃດໜຶ່ງໃນການຄຸ້ມຄອງຫຼັກຖານ[77].

## 9. ການຊັ່ງຊາຕີລາຄາຫຼັກຖານ

ການຊັ່ງຊາຕີລາຄາຫຼັກຖານແມ່ນການກະທຳທີ່ມີລັກສະນະ ທີ່ເປັນຂັ້ນຕອນສອດຄ່ອງກັນ (Logic) ພິເສດຂອງຜູ້ພິພາກສາ ເພື່ອກຳນົດລະດັບຄວາມເຊື່ອຖື, ຄຸນຄ່າຂອງການຢັ້ງຢືນແຕ່ລະຫຼັກຖານ ກໍຄື ລະຫວ່າງບັນດາຫຼັກຖານດ້ວຍກັນໃນຂັ້ນຕອນການດຳເນຄະດີ; ການຊັ່ງຊາຕີລາຄາຫຼັກຖານກໍ ແມ່ນປະເດັນທີ່ໄດ້ຮັບການເອົາໃຈໃສ່ເປັນພິເສດຢູ່ໃນພາກທິດສະດີ ແລະຕົວຈິງຂອງລະບົບກົດໝາຍ; ບັນດາຫຼັກຖານທັງໝົດທີ່ຄູ່ຄວາມນຳມາຢັ້ງຢືນຄຳຮ້ອງ, ແກ້ຟ້ອງ ຫຼື ຟ້ອງແຍ່ງນັ້ນ ຕ້ອງນຳມາຊັ່ງຊາຕີລາຄາ ຈະມີຄວາມເຊື່ອຖື ຫຼື ບໍ່ນັ້ນ ຜູ້ພິພາກສາ ຕ້ອງຕັດສິນໃຈດ້ວຍຄວາມໝັ້ນໃຈຂອງຕົນ.

ເວົ້າອີກຢ່າງໜຶ່ງ ການຊັ່ງຊາຕີລາຄາຫຼັກຖານແມ່ນການເຄື່ອນໄຫວດ້ານມັນສະໝອງຂອງຜູ້ພິພາກສາ ຕໍ່ກັບຄວາມເຊື່ອໝັ້ນຂອງຕົນເອງວ່າບັນດາເຫດການທີ່ຄູ່ຄວາມອ້າງມານັ້ນມີຈິງ ຫຼື ບໍ່, ແຕ່ວ່າການຊັ່ງຊາຕີລາຄາຫຼັກຖານນີ້ຈະປົນເປກັບຄວາມຮັບຮູ້ທີ່ໃກ້ຄຽງກັນ, ສະນັ້ນ ຜູ້ພິພາກສາ ຈຶ່ງຕ້ອງມີຄວາມລະມັດລະວັງເປັນພິເສດໃນການຊັ່ງຊາຕີລາຫຼັກຖານດັ່ງກ່າວ.

"ສານຕ້ອງກວດກາ, ຊັ່ງຊາຕີລາຄາຫຼັກຖານດ້ວຍຄວາມໝັ້ນໃຈຂອງຕົນບົນພື້ນຖານການພິຈາລະນາເຫດການຂອງຄະດີທັງໝົດຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ; ຫຼັກຖານຈະມີຄຸນຄ່າໃຊ້ໄດ້ ກໍຕໍ່ເມື່ອສານໄດ້ກວດກາ,

[77] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 117

ຕີລາຄາ ແລະ ຮັບຮູ້ແລ້ວເທົ່ານັ້ນ; ສານຕ້ອງເອົາການຮັບຮູ້ຫຼັກຖານທີ່ເປັນເອກະພາບຂອງຄູ່ຄວາມເປັນຫຼັກໃນການພິຈາລະນາ"[78].

ແຕ່ລະຫຼັກຖານຕ້ອງໄດ້ຊັ່ງຊາຕີລາຄາ ເພື່ອກໍານົດຄຸນລັກສະນະສອດຄ່ອງ, ຖືກຕ້ອງ ແລະພົວພັນເຖິງຄະດີ, ການກໍານົດບັນດາຫຼັກຖານທີ່ເກັບກໍາມາໄດ້ນັ້ນ ຕ້ອງໄດ້ຮັບການຄຸ້ມຄອງເພື່ອໃຊ້ເຂົ້າໃນການພິຈາລະນາຄະດີຢູ່ສານ ໂດຍສະເພາະ ຄະນະສານຈະຕ້ອງໄດ້ນໍາມາຊັ່ງຊາຕີລາຄາໃນຫ້ອງປະຊຸມລັບ. ໃນການຊັ່ງຊາຕີລາຄາຫຼັກຖານ ຜູ້ພິພາກສາຕ້ອງຖືຄວາມ ສໍາຄັນຫຼັກຖານທັງໝົດ ຂອງບັນດາຫຼັກຖານທີ່ຮິບໂຮມມາໄດ້ບໍ່ຄວນ ຖືວ່າຫຼັກຖານທາງດ້ານເອກະສານສໍາຄັນກວ່າຫຼັກຖານທາງດ້ານວັດຖຸ ຫຼື ບຸກຄົນ ທຸກຫຼັກຖານແມ່ນ ມີຄວາມສໍາຄັນເໝືອນກັນ ສິ່ງສໍາຄັນຫຼັກຖານກັບເຫດການຂອງຄະດີ ຕ້ອງມີຄວາມສອດຄ່ອງກັນ ຊຶ່ງສາມາດເປັນສິ່ງຢັ້ງຢືນ ຄວາມເປັນຈິງໄດ້ຢ່າງຊັດເຈນ, ຫາຍຄວາມສົງໄສແລ້ວ ຜູ້ພິພາກສາມີສິດເຊື່ອຖືເອົາເປັນພື້ນຖານໃນການພິຈາລະນາຕັດສິນໄດ້.

ການຊັ່ງຊາຕີລາຄາຫຼັກຖານ (Evidence) ຜູ້ພິພາກສາ ຕ້ອງຄໍານຶ່ງເຖິງຫຼັກການຊັ່ງຊາຕີລາຄາຫຼັກຖານ ແຕ່ລະປະເພດ ໂດຍສະເພາະ ປະເພດຫຼັກຖານ ທາງດ້ານບຸກຄົນ, ທາງດ້ານເອກະສານ ແລະ ຫຼັກຖານທາງດ້ານວັດຖຸ ລວມເຖິງອົງປະກອບຄວາມເປັນຈິງຂອງເຫດການ (Fact) ຊຶ່ງປະກອບດ້ວຍ: ອົງປະກອບຫຼັກທີ່ສໍາຄັນ (primaryfacts), ອົງປະກອບທາງອ້ອມ (indirectfacts) ແລະ ອົງປະກອບເພີ່ມ (supplementary facts)

+ ອົງປະກອບຫຼັກ ທີ່ສໍາຄັນ (primary facts) ແມ່ນອົງປະກອບຄວາມເປັນຈິງທີ່ມີປະໂຫຍດໃນການສັນຖານຜົນສັກສິດທາງດ້ານກົດໝາຍ ເຊັ່ນ ການເກີດ, ການປ່ຽນແປງ, ການສະໃນກໍລະນີຂອງສິດທິ.

**ຕົວຢ່າງ:** ທ້າວ ກ ແລະ ນາງ ຂ ໄດ້ຕົກລົງ ເຮັດສັນຍາ ເຊົ່າເຮືອນ ນໍາກັນ, ຄ່າເຊົ່າ ປີລະ 10,000,000 ກີບ ຈ່າຍລ່ວງໜ້າ ໃນຕົ້ນເດືອນມັງກອນ ຂອງແຕ່ລະປີ, ພໍຮອດກໍານົດ ທ້າວ ກ ບໍ່ຈ່າຍຄ່າເຊົ່າ ນາງ ຂ ຈຶ່ງຮ້ອງຟ້ອງຂຶ້ນສານ; ຄໍາຕົກລົງຂອງຄູ່ສັນຍານັ້ນ ເປັນອົງປະກອບຄວາມເປັນຈິງ ຂອງເຫດການ ຊຶ່ງພາໃຫ້ ທ້າວ ກ ແລະ ນາງ ຂ ເກີດມີສິດແລະພັນທະຕໍ່ກັນ.

+ ອົງປະກອບທາງອ້ອມ (indirect facts) ແມ່ນອົງປະກອບຄວາມເປັນຈິງທີ່ມີປະໂຫຍດໃນການສັນຖານວ່າມີອົງປະກອບຫຼັກທີ່ສໍາຄັນ ຫຼື ບໍ່.

ຈາກຕົວຢ່າງຂ້າງເທິງ ທ້າວ ກ ໄດ້ອ້າງວ່າຕົນໄດ້ຊໍາລະເງິນຄ່າເຊົ່າແກ່ ນາງ ຂ ຄົບຖ້ວນແລ້ວ ໂດຍ ທ້າວ ຄ ນ້ອງຂອງຕົນຮູ້ເຫັນນໍາ ໃນກໍລະນີນີ້ ທ້າວ ຄ ພະຍານເປັນອົງປະກອບຄວາມເປັນທາງອ້ອມ.

+ ອົງປະກອບເພີ່ມ (supplementary facts) ແມ່ນອົງປະກອບຄວາມເປັນຈິງທີ່ມີອິດທິພົນຕໍ່ກໍາລັງການພິສູດຂອງຫຼັກຖານ.

ສືບຕໍ່ຕົວຢ່າງຂ້າງເທິງ ທ້າວ ຄ ຜູ້ເປັນພະຍານ ເປັນນ້ອງ ຂອງ ທ້າວ ກ ເອງ ແນ່ນອນ ຜູ້ກ່ຽວຕ້ອງ ໃຫ້ການຢັ້ງຢືນເປັນຜົນປະໂຫຍດແກ່ ອ້າຍຂອງຕົນສະເໝີ ໃນກໍລະນີ້ແມ່ນອົງປະກອບເພີ່ມເຕີມ.

ສັງລວມແລ້ວ ເວລາຜູ້ພິພາກສາ ຈະຊັ່ງຊາຕີລາຄາຫຼັກຖານ ເພື່ອລົງຄໍາຕັດສິນນັ້ນ ຕ້ອງໄດ້ໄຈ້ແຍກ, ຄົ້ນຄິດພິຈາລະນາ ບັນດາຂໍ້ມູນຫຼັກຖານທັງໝົດໃຫ້ຄົບຖ້ວນວ່າ ຫຼັກຖານອັນໃດເປັນອົງປະກອບ ຄວາມຈິງຕົ້ນຕໍ, ອັນໃດເປັນອົງປະກອບທາງອ້ອມ ແລະ ຫຼັກຖານອັນໃດເປັນອົງປະກອບຄວາມຈິງເພີ່ມ ເພື່ອເປັນພື້ນຖານເຮັດໃຫ້ຜູ້ພິພາກສາຕັດສິນໃຈລົງຄໍາຕັດສິນໄດ້ງ່າຍຂຶ້ນ.

## 10. ການນໍາໃຊ້ຫຼັກຖານ

ການນໍາໃຊ້ຫຼັກຖານແມ່ນການນໍາເອົາຫຼັກຖານທີ່ໄດ້ເກັບກໍາມາໄດ້ ແລະ ຜ່ານການຊັ່ງຊາຕີລາຄາໂດຍ ສານແລ້ວມານໍາໃຊ້ເຂົ້າໃນການດໍາເນີນຄະດີເພື່ອເປັນພື້ນຖານ ຫຼື ເປັນບ່ອນອີງໃນການລົງຄໍາຕັດສິນຂອງສານ. ການນໍາໃຊ້ຫຼັກຖານ ແມ່ນມີຄວາມສໍາຄັນໃນກໍລະນີໃນການພິຈາລະນາຕັດສິນຄະດີ ຜູ້ພິພາກສາ ຕ້ອງໄດ້ນໍາໃຊ້ເຂົ້າໃນການພິຈາລະນາຄະດີທັງໝົດ ໝາຍຄວາມວ່າ ທຸກຫຼັກຖານ ທີ່ສານເຊື່ອຖືວ່າມີ ເຫດຜົນພຽງພໍສານ ຕ້ອງນໍາໃຊ້ໃນການພິຈາລະນາ

[78] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງ ປີ 2012 , ມາດຕາ 118

ຕັດສິນໂດຍ ໄດ້ລົງຄຳວິນິດໄສອະທິບາຍ ໃຫ້ເຫດຜົນການ ເຊື່ອຖືເອົາຫຼັກຖານນັ້ນຢ່າງຊັດເຈນ ບົນພື້ນຖານລະບຽບກົດໝາຍ; ສຳລັບຫຼັກຖານ ຂອງຄູ່ຄວາມ ທີ່ສານເຫັນວ່າບໍ່ມີເຫດຜົນກໍໃຫ້ລົງຄຳວິນິດໄສລົງໃນຄຳຕັດສິນ ເໝືອນກັນທັງນີ້ ກໍເພື່ອເປັນການ ຈຳກັດທາງສຽງຈົ່ມວ່າ ຂອງຄູ່ຄວາມ ທີ່ອ້າງວ່າສານບໍ່ໄດ້ພິຈາລະນາຫຼັກຖານຂອງຕົນ ຊຶ່ງເປັນສາເຫດພາໃຫ້ຄູ່ຄວາມບໍ່ພໍໃຈ ແລ້ວຂໍອຸທອນຄຳຕັດສິນ”[79].

[79]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 119

# ບົດທີ 5
# ການປະຊຸມສານ

## 1. ຄວາມໝາຍຂອງການປະຊຸມສານ

ການປະຊຸມສານ ແມ່ນການເປີດປະຊຸມຂອງຄະນະສານຕັດສິນ *"ແຕ່ນີ້ຕໍ່ໄປຈະເອີ້ນວ່າຄະນະສານໃນບົດນີ້"* ເພື່ອພິຈາລະນາຕັດສິນຄະດີໂດຍຜ່ານການກວດກາ, ຊັ່ງຊາຕີລາຄາຫຼັກຖານ ແລະເພື່ອໃຫ້ຄູ່ຄວາມໄດ້ມີໂອກາດໃນການສະເໜີຫຼັກຖານເພີ່ມເຕີມ, ການໄຕ່ສວນຄູ່ຄວາມ ແລະຜູ້ເຂົ້າຮ່ວມໃນການດຳເນີນຄະດີຂອງສານ, ການໂຕ້ຖຽງໃຫ້ຄວາມກະຈ່າງແຈ້ງຂອງຄູ່ຄວາມ, ການສະເໜີຄຳຄິດຄຳເຫັນຂອງຄູ່ຄວາມແຕ່ລະຝ່າຍ ແລະການອະທິບາຍເຫດຜົນກ່ຽວກັບບັນຫາຕ່າງໆຕໍ່ຄະນະສານ.

## 2. ຄວາມສຳຄັນຂອງການປະຊຸມສານ

ການປະຊຸມສານ ແມ່ນມີຄວາມສຳຄັນໃນກໍລະນີທັງຕໍ່ຄູ່ຄວາມທີ່ເປັນຜູ້ເຂົ້າຮ່ວມໃນການດຳເນີນຄະດີ ແລະ ຕໍ່ສານທີ່ເປັນຜູ້ຮັບຜິດຊອບໃນການດຳເນີນຄະດີ;

**- ຄວາມສຳຄັນຕໍ່ຄູ່ຄວາມ:** ການປະຊຸມສານ ແມ່ນຈະດຳເນຢ່າງເປີດເຜີຍ ທຸກຄົນກໍສາມາດເຂົ້າຮ່ວມໃນທີ່ປະຊຸມສານໄດ້ ຖ້າຫາກກົດໝາຍບໍ່ໄດ້ກຳນົດຂໍ້ຍົກເວັ້ນ, ຊຶ່ງເປັນການເປີດໂອກາດໃຫ້ທຸກຄົນໄດ້ເຂົ້າເຫັນຂັ້ນຕອນຕ່າງໆໃນການດຳເນການປະຊຸມສານຂອງຄະນະສານ ພ້ອມທັງເຮັດໃຫ້ຜູ້ເຂົ້າຮ່ວມເຊື່ອໝັ້ນຕໍ່ການນຳເອົາຂໍ້ມູນຫຼັກຖານມາພິຈາລະນາຂອງຄະນະສານ ໂດຍຜ່ານການໄຕ່ສວນ, ການໂຕ້ຖຽງ, ການຊັກຖາມ, ການຮັບຟັງ, ການພິສູດຂໍ້ມູນຫຼັກຖານ, ການສະເໜີບັນຫາ ຫຼື ຄຳຄິດຄຳເຫັນຕ່າງໆຈາກຜູ້ເຂົ້າຮ່ວມໃນທີ່ປະຊຸມສານ. ນອກຈາກນັ້ນ ຜູ້ເຂົ້າຮ່ວມກໍສາມາດຊັ່ງຊາເບິ່ງຂໍ້ມູນຫຼັກຖານທັງສອງຝ່າຍທີ່ໄດ້ສະເໜີ ຫຼື ປະກອບໃຫ້ແກ່ຄະນະສານໄດ້ວ່າຂໍ້ມູນຫຼັກຖານຝ່າຍໃດທີ່ເປັນຫຼັກຖານຈິງ, ຫຼັກຖານເທັດ, ຫຼັກຖານໃດມີຄວາມໜັກແໜ້ນ, ຮັດກຸມ ທີ່ເປັນເຫດຜົນໃຫ້ຄະນະສານນຳໄປພິຈາລະນາຕັດສິນຕາມລະບຽບກົດໝາຍ ແລະ ສອດຄ່ອງກັບເຫດການຕົວຈິງຂອງຄະດີ ພ້ອມກັນນັ້ນກໍສາມາດເຮັດໃຫ້ຄູ່ຄວາມ ແລະ ສັງຄົມຍອມຮັບຕໍ່ຜົນການຕັດສິນຂອງສານ ແລະ ພ້ອມກັນຈັດຕັ້ງປະຕິບັດໄດ້ວ່ອງໄວ.

**- ຄວາມສຳຄັນຕໍ່ສານ:** ການປະຊຸມສານແມ່ນເຮັດໃຫ້ຄະນະສານທີ່ຮັບຜິດຊອບພິຈາລະນາຕັດສິນຄະດີນັ້ນໄດ້ເຂົ້າເຖິງຂໍ້ມູນຫຼັກຖານໂດຍກົງ ດ້ວຍການເກັບກຳ, ກວດກາ, ຄັດຈ້ອນຮ່ວມກັນກັບຄູ່ຄວາມໃນທີ່ປະຊຸມສານ ຊຶ່ງກໍເປັນການສະແດງໃຫ້ເຫັນຄວາມໂປ່ງໃສຂອງສານ ແລະ ໃຫ້ຄວາມຍຸຕິທຳແກ່ຄູ່ຄວາມທັງສອງຝ່າຍ. ນອກຈາກນັ້ນໃນການດຳເນີນຄະດີແພ່ງນັ້ນ ຂັ້ນຕອນການປະຊຸມສານກໍເປັນຂັ້ນຕອນໜຶ່ງທີ່ສຳຄັນ ຖ້າບໍ່ມີການປະຊຸມສານກໍຖືວ່າການດຳເນີນຄະດີຂອງສານບໍ່ຄົບຖ້ວນ ແລະບໍ່ປະຕິບັດຕາມຂັ້ນຕອນຂອງການດຳເນີນຄະດີ ແລະ ທັງເປັນການລະເມີດກົດໝາຍ.

ໃນການດຳເນີນປະຊຸມສານກໍຈະມີລະບຽບການເຄັ່ງຄັດ ແລະຂັ້ນຕອນດຳເນີນການຄັກແນ່ ຊຶ່ງແຕ່ລະຂັ້ນຕອນນັ້ນໄດ້ແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບກັນຢ່າງຂາດຕົວ ລະຫວ່າງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ແລະພະນັກງານຂອງສານ ໂດຍສະເພາະກໍແມ່ນຄະນະສານ ແລະ ຈ່າສານ ຊຶ່ງຮັບໜ້າທີ່ສຳຄັນໃນການດຳເນີນ ແລະ ບັນຊາການປະຊຸມສານໃຫ້ເປັນໄປຢ່າງເປັນລະບຽບຮຽບຮ້ອຍ ແລະ ສາມາດເກັບກຳຂໍ້ມູນຫຼັກຖານໄດ້ຢ່າງຄົບຖ້ວນ, ພຽງພໍຕາມຈຸດປະສົງທີ່ໄດ້ວາງໄວ້ ພ້ອມກັນນັ້ນ ກໍເພື່ອເຮັດໃຫ້ຄູ່ຄວາມມີຄວາມສະເໝີພາບກັນໃນການດຳເນີນຄະດີທັງເປັນການປະຕິບັດໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ. ດັ່ງນັ້ນ ຄະນະສານ, ຈ່າສານ, ພະນັກງານໄອຍະການປະຊາຊົນ ແລະ ຜູ້ເຂົ້າຮ່ວມໃນທີ່ປະຊຸມສານຕ້ອງເອົາໃຈໃສ່ ແລະ ເປັນເຈົ້າການໃນການປະຕິບັດໜ້າທີ່ຢູ່ທີ່ປະຊຸມສານ ໂດຍມີການປະສານງານ ແລະ ຮ່ວມມືກັນ ຕາມພາລະໜ້າທີ່ຂອງໃຜລາວ.

## 3. ຂັ້ນຕອນຂອງການປະຊຸມສານ

ຂັ້ນຕອນຂອງການປະຊຸມສານປະກອບດ້ວຍ: ການເປີດປະຊຸມສານ, ການໄຕ່ສວນຄະດີໃນທີ່ປະຊຸມສານ, ການໂຕ້ຖຽງຂອງຄູ່ຄວາມໃນທີ່ປະຊຸມສານ, ການຖະແຫຼງຂອງພະນັກງານໄອຍະການປະຊາຊົນ, ການປິດປະຊຸມສານຊົ່ວຄາວ ແລະການປະກາດຄຳຕັດສີນ.

### 3.1. ການເປີດປະຊຸມສານ

ການເປີດປະຊຸມສານ ເປັນບາດກ້າວໜຶ່ງຂອງການປະຊຸມສານ ຫຼື ການດຳເນີນຄະດີແພ່ງ ເນື່ອງຈາກວ່າ ຈະເຮັດໃຫ້ຄະນະສານກຳນົດເຫດການຂອງຄະດີ, ເປັນການໃຫ້ໂຈດ, ຈຳເລີຍ ລວມທັງບຸກຄົນທີສາມ ແລະຜູ້ເຂົ້າຮ່ວມອື່ນ ໄດ້ອະທິບາຍຕໍ່ເຫດການຂອງຄະດີ ແລະໂຕ້ຖຽງກ່ຽວກັບບັນຫາທີ່ມີຂໍ້ຂັດແຍ່ງເຊິ່ງກັນ ແລະ ກັນ ຕໍ່ໜ້າຄະນະສານ ເພື່ອເກັບກຳໃຫ້ໄດ້ຂໍ້ມູນຫຼັກຖານທີ່ແຈ້ງຂາວ, ຊັດເຈນ, ພຽງພໍ ແລະຄະນະສານກໍສາມາດລົງຄຳຕັດສີນໄດ້ຢ່າງຖືກຕ້ອງຕາມລະບຽບກົດໝາຍ ແລະສອດຄ່ອງກັບເຫດການຕົວຈິງຂອງຄະດີ.

#### 3.1.1. ການກະກຽມກ່ອນການເປີດປະຊຸມສານ

ການກະກຽມກ່ອນການເປີດປະຊຸມສານຈະເປັນໜ້າທີ່ ແລະ ພາລະບົດບາດຂອງຈ່າສານທີ່ຈະຕ້ອງໄດ້ກວດກາເບິ່ງວ່າ ຄູ່ຄວາມໃນຄະດີ, ບຸກຄົນທີສາມ, ພະຍານ ແລະ ບຸກຄົນທີ່ກ່ຽວຂ້ອງ ທີ່ຄະນະສານຈະນຳເອົາມາພິຈາລະນາໃນທີ່ປະຊຸມສານ ແລະ ບຸກຄົນທີ່ຖືກຮຽກໃຫ້ເຂົ້າມາຮ່ວມການປະຊຸມສານ ໄດ້ເຂົ້າມາຄົບຖ້ວນຕາມໝາຍຮຽກ ຫຼື ບໍ, ຖ້າຫາກໄດ້ເຂົ້າມາຄົບຖ້ວນແລ້ວ ຈ່າສານຈະເປັນຜູ້ຈັດບ່ອນນັ່ງໃຫ້ແກ່ຄູ່ຄວາມ ໂດຍຈັດໃຫ້ໂຈດ ແລະ ບຸກຄົນທີສາມຝ່າຍໂຈດ ລວມທັງພະຍານຝ່າຍໂຈດນັ້ນ ນັ່ງຢູ່ທາງເບື້ອງຂວາມືຂອງຄະນະສານ, ສ່ວນຈຳເລີຍ, ບຸກຄົນທີສາມຝ່າຍຈຳເລີຍ ແລະ ພະຍານຝ່າຍຈຳເລີຍນັ້ນ ໃຫ້ນັ່ງຢູ່ທາງເບື້ອງຊ້າຍມືຂອງຄະນະສານ.

ພາຍຫຼັງທີ່ໄດ້ຈັດບ່ອນນັ່ງໃຫ້ແກ່ຜູ້ເຂົ້າຮ່ວມຢູ່ຫ້ອງປະຊຸມສານເປັນທີ່ຮຽບຮ້ອຍແລ້ວ, ຈ່າສານກໍປະກາດລະບຽບຂອງການປະຊຸມສານໃຫ້ທຸກຄົນທີ່ເຂົ້າຮ່ວມນັ້ນຮັບຊາບ ແລະພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລ້ວກໍເຊີນຄະນະສານເຂົ້າມາໃນຫ້ອງປະຊຸມສານ. ພາຍຫຼັງທີ່ຄະນະສານໄດ້ເຂົ້າມາຫ້ອງປະຊຸມສານແລ້ວ ຈ່າສານກໍລາຍງານຄວາມພ້ອມໃນການປະຊຸມສານໃຫ້ແກ່ຄະນະສານຊາບ ໂດຍສະເພາະກໍແມ່ນລາຍງານການເຂົ້າມາຮ່ວມໃນທີ່ປະຊຸມສານຂອງຄູ່ຄວາມ, ບຸກຄົນທີສາມ ແລະ ບຸກຄົນທີ່ກ່ຽວຂ້ອງໃນການດຳເນີນຄະດີດັ່ງກ່າວ, ລາຍງານຫຍໍ້ກ່ຽວກັບເລກທີ, ລົງວັນທີຂອງຄະດີ, ຊື່ຂອງໂຈດ, ຈຳເລີຍ ລວມທັງບຸກຄົນທີສາມ, ຂໍ້ຂັດແຍ່ງກ່ຽວກັບເລື່ອງໃດ ແລ້ວກໍມອບສຳນວນຄະດີທີ່ຈະນຳມາພິຈາລະນາໃນມື້ນັ້ນໃຫ້ແກ່ຄະນະສານ, ຕໍ່ຈາກນັ້ນຈ່າສານກໍເປັນຜູ້ບັນທຶກຄຳໃຫ້ການຂອງບຸກຄົນທີ່ເຂົ້າຮ່ວມໃນທີ່ປະຊຸມສານໃສ່ປຶ້ມບັນທຶກປະຊຸມສານ, ນຳເອົາຫຼັກຖານທີ່ຄູ່ຄວາມສະເໜີຂຶ້ນໃນທີ່ປະຊຸມສານໃຫ້ຄະນະສານຄົ້ນຄ້ວາ, ກວດກາ ແລະ ພິຈາລະນາ, ຄວບຄຸມພະຍານມາໃຫ້ການ ແລະ ບັນຫາອື່ນໆ ຕາມສິດ ແລະ ໜ້າທີ່ຂອງຈ່າສານທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012.

**ລະບຽບລວມຂອງການປະຊຸມສານມີດັ່ງນີ້:**

*"- ທຸກຄົນທີ່ຢູ່ໃນຫ້ອງປະຊຸມສານຕ້ອງເຄົາລົບຄະນະສານ, ປະຕິບັດຕາມລະບຽບການຂອງຫ້ອງປະຊຸມສານ ແລະ ປະຕິບັດຕາມຄຳເຕືອນ ຫຼື ຄຳສັ່ງຂອງປະທານຄະນະສານ;*

*- ໃນເວລາທີ່ຄະນະສານເຂົ້າ-ອອກຫ້ອງປະຊຸມສານທຸກຄົນທີ່ຢູ່ໃນຫ້ອງປະຊຸມສານຕ້ອງຢືນຂຶ້ນເພື່ອເຄົາລົບຄະນະສານ ແລະ ພ້ອມກັນຮັກສາຄວາມສະຫງົບ;*

*- ການມີຄຳເຫັນແຕ່ລະຄັ້ງຂອງຜູ້ເຂົ້າຮ່ວມໃນທີ່ປະຊຸມສານຕ້ອງໄດ້ຮັບອະນຸຍາດຈາກປະທານຄະນະສານເສັຍກ່ອນ ແລະກໍຕ້ອງລຸກຢືນຂຶ້ນ ເພື່ອສະເໜີຄຳເຫັນ. ແຕ່ໃນກໍລະນີທີ່ຜູ້ເຂົ້າຮ່ວມໃນທີ່ປະຊຸມສານນັ້ນຫາກມີບັນຫາທາງດ້ານສຸຂະພາບປະທານຄະນະສານກໍຈະອະນຸຍາດໃຫ້ນັ່ງມີຄຳເຫັນ ຫຼື ໃຫ້ການກໍໄດ້;*

*- ເດັກທີ່ມີອາຍຸຕໍ່າກວ່າສິບຫ້າປີ ແມ່ນບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນທີ່ປະຊຸມສານ ເວັ້ນເສັຍແຕ່ໄດ້ຮັບອະນຸຍາດຈາກສານ;*

*- ການຖ່າຍຮູບພາບ, ວີດີໂອ ຫຼື ອັດສຽງ ໃນທີ່ປະຊຸມສານຕ້ອງໄດ້ຮັບອະນຸຍາດຈາກສານ;*

*- ຜູ້ລະເມີດຄຳເຕືອນ ຫຼື ຄຳສັ່ງຂອງຄະນະສານຈະຖືກສັ່ງໃຫ້ອອກຈາກຫ້ອງປະຊຸມສານ"*[80]

*ລະບຽບກ່ຽວກັບການປະຊຸມສານຂ້າງເທິງນີ້ ແມ່ນຈ່າສານຈະເປັນຜູ້ແຈ້ງກ່ອນການເປີດປະຊຸມສານ ແລະກ່ອນຄະນະສານເຂົ້າມາຫ້ອງປະຊຸມສານ, ສ່ວນລະບຽບການປະຊຸມສານສະເພາະໄດ້ກຳນົດໄວ້ຕ່າງຫາກ.*

### 3.1.2. ການເລີ່ມເປີດປະຊຸມສານ

ການເປີດປະຊຸມສານ ແມ່ນເລີ່ມຂຶ້ນພາຍຫຼັງທີ່ຄະນະສານໄດ້ເຂົ້າສູ່ຫ້ອງປະຊຸມສານ ພ້ອມທັງໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບຄວາມພ້ອມໃນການປະຊຸມສານຈາກຈ່າສານ ໂດຍສະເພາະ ແມ່ນການລາຍງານກ່ຽວກັບເລກທີ, ລົງວັນທີຂອງຄະດີ, ຄູ່ຄວາມແມ່ນໃຜ, ຜູ້ເຂົ້າຮ່ວມໃນທີ່ປະຊຸມສານເຂົ້າມາສານຕາມໝາຍຮຽກ, ໝາຍເຊີນຂອງສານຢ່າງຄົບຖ້ວນ ແລະພ້ອມທັງໄດ້ຮັບສຳນວນຄະດີທີ່ຈະນຳມາພິຈາລະນາໃນທີ່ປະຊຸມສານຈາກຈ່າສານແລ້ວນັ້ນ. ປະທານຄະນະສານເປັນຜູ້ປະກາດເປີດປະຊຸມສານ ແລະແຈ້ງຄະດີທີ່ຈະນຳອອກມາພິຈາລະນາໃຫ້ແກ່ຜູ້ເຂົ້າຮ່ວມໃນທີ່ປະຊຸມສານຮັບຊາບວ່າມີຄະດີກ່ຽວກັບເລື່ອງໃດທີ່ຄະນະສານຈະນຳເອົາມາພິຈາລະນາ ໂດຍແຈ້ງວ່າຄະດີເລກທີ, ລົງວັນທີເທົ່າໃດ, ກ່ຽວກັບເລື່ອງໃດ, ຊື່ຂອງໂຈດ, ຊື່ຂອງຈຳເລີຍ, ຊື່ຂອງບຸກຄົນທີສາມ (ຖ້າມີ).

ໃນກໍລະນີຄະດີທີ່ຈະນຳມາພິຈາລະນາໃນມື້ດຽວກັນນັ້ນ ປະທານຄະນະສານກໍຈະແຈ້ງຕໍ່ທີ່ປະຊຸມສານວ່າມີຄະດີໃດແດ່ ໂດຍແຈ້ງເປັນແຕ່ລະຄະດີ, ພ້ອມກັນນັ້ນ ກໍແຈ້ງວ່າມີໃຜແດ່ທີ່ໄດ້ຖືກແຕ່ງຕັ້ງໃຫ້ປະກອບເປັນຄະນະສານຕັດສິນຄະດີດັ່ງກ່າວ ໂດຍແຈ້ງຊື່ຂອງຄະນະສານເຊັ່ນ ຊື່ຂອງປະທານຄະນະສານ, ຊື່ຂອງຜູ້ພິພາກສາທີ່ປະກອບ ແລະນັ່ງເປັນຄະນະສານ, ລວມທັງຊື່ຂອງຈ່າສານ, ຊື່ຂອງພະນັກງານໄອຍະການປະຊາຊົນທີ່ຖືກແຕ່ງຕັ້ງໃຫ້ເຂົ້າຮ່ວມໃນທີ່ປະຊຸມສານ, ຊື່ຂອງຜູ້ຕາງໜ້າ, ຊື່ຂອງຜູ້ຊ່ຽວຊານ ແລະຜູ້ແປພາສາ (ໃນກໍລະນີຄະດີໃດຫາກມີຜູ້ຕາງໜ້າ, ຜູ້ຊ່ຽວຊານ ແລະ ຜູ້ແປພາສາເຂົ້າຮ່ວມ).

ຫຼັງຈາກນັ້ນ ປະທານຄະນະສານກໍຈະສືບຕໍ່ແຈ້ງສິດໃນການຄ້ານຕິວຄະນະສານ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ແລະ ຜູ້ແປພາສາ ໃຫ້ແກ່ຄູ່ຄວາມຮັບຊາບ, ແຈ້ງສິດໃນການຕໍ່ສູ້ຄະດີແກ່ຄູ່ຄວາມ, ແຈ້ງພັນທະໃຫ້ແກ່ຜູ້ຊ່ຽວຊານ ແລະ ພະຍານໃນການໃຫ້ການຕາມຄວາມເປັນຈິງ, ແຈ້ງພັນທະໃຫ້ແກ່ຜູ້ແປພາສາໃນການແປພາສາໃຫ້ຖືກຕ້ອງພ້ອມທັງສິດ ແລະ ພັນທະອື່ນໆ ຕາມລະບຽບກົດໝາຍ.[81]

### 3.1.3. ການຄ້ານຕິວຄະນະສານ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ແລະ ຜູ້ແປພາສາ

ພາຍຫຼັງທີ່ປະທານຄະນະສານໄດ້ແຈ້ງລາຍຊື່ ແລະ ແຈ້ງສິດໃນການຄ້ານຕິວຄະນະສານ (ຜູ້ພິພາກສາ 03 ທ່ານ), ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ແລະຜູ້ແປພາສາ ໃຫ້ຄູ່ຄວາມທີ່ເຂົ້າຮ່ວມໃນການພິຈາລະນາຄະດີຮັບຊາບແລ້ວນັ້ນ, ຄູ່ຄວາມໃນຄະດີກໍມີສິດໃນການສະເໜີຄ້ານຕິວ ຫຼື ຂໍປ່ຽນຕົວຄະນະສານທັງໝົດ, ຜູ້ພິພາກສາຜູ້ໃດຜູ້ໜຶ່ງໃນຄະນະສານ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ແລະ ຜູ້ແປພາສາໄດ້.

**ກ. ໃນກໍລະນີມີການສະເໜີຄ້ານຕິວຄະນະສານ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ແລະ ຜູ້ແປພາສາ**

---

[80] ກົດໝາຍວ່າການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 218

[81] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 223 ໄດ້ກຳນົດໄວ້ວ່າ ປະທານຄະນະສານຈະເປັນຜູ້ກ່າວເປີດປະຊຸມສານຢ່າງເປັນທາງການ ແລະແຈ້ງຄະດີທີ່ຈະນຳອອກມາພິຈາລະນານັ້ນ ພ້ອມທັງແຈ້ງລາຍຊື່ຕາມລຳດັບ ເຊັ່ນ ຄະນະສານຕັດສິນໂດຍເລີ່ມຈາກປະທານ, ຄະນະສານ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ແລະຜູ້ແປພາສາ ໃຫ້ຜູ້ເຂົ້າຮ່ວມໃນທີ່ປະຊຸມສານພ້ອມທັງແຈ້ງສິດໃນການຄ້ານຕິວໃຫ້ຄູ່ຄວາມຮັບຊາບ.

ໃນກໍລະນີທີ່ຄູ່ຄວາມຝ່າຍໃດຝ່າຍໜຶ່ງຫາກໄດ້ສະເໜີຄ້ານຕົວທັງໝົດຄະນະສານ ຫຼື ຄ້ານຕົວຜູ້ພິພາກສາຜູ້ໃດຜູ້ໜຶ່ງໃນຄະນະສານ,ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ແລະ ຜູ້ແປພາສານັ້ນ. ປະທານຄະນະສານກໍປະກາດປິດປະຊຸມສານໄວ້ຊົ່ວຄາວ ແລ້ວເຂົ້າຫ້ອງປະຊຸມລັບ ເພື່ອນໍາເອົາບັນຫາການສະເໜີຄ້ານຕົວຂອງຄູ່ຄວາມນັ້ນໄປພິຈາລະນາເຫດຜົນຂອງການສະເໜີຄ້ານຕົວດັ່ງກ່າວ ພ້ອມທັງແຈ້ງໃຫ້ຄູ່ຄວາມ ແລະ ຜູ້ເຂົ້າຮ່ວມໃນທີ່ປະຊຸມສານທັງໝົດນັ່ງລໍຖ້າຟັງການແຈ້ງຕອບຈາກຄະນະສານວ່າ ຈະສືບຕໍ່ດໍາເນການປະຊຸມສານ ຫຼື ປ່ຽນຕົວຜູ້ທີ່ຖືກຄ້ານຕົວນັ້ນ ຊຶ່ງກໍານົດເວລາກ່ຽວກັບການພິຈາລະນາເຫດຜົນຂອງການສະເໜີຄ້ານຕົວນັ້ນ ຈະບໍ່ໄດ້ແຈ້ງຕໍ່ຜູ້ເຂົ້າຮ່ວມໃນທີ່ປະຊຸມສານວ່າຈະໃຊ້ເວລາດົນປານໃດ ແຕ່ການພິຈາລະນາຂອງຄະນະສານຢູ່ໃນຫ້ອງປະຊຸມລັບນັ້ນ ຈະອີງໃສ່ວ່າການສະເໜີຄ້ານຕົວບຸກຄົນໃດ, ເຖິງຢ່າງໃດກໍຕາມ ຄະນະສານເອງກໍຕ້ອງໄດ້ພິຈາລະນາໃຫ້ໄວເທົ່າທີ່ຈະໄວໄດ້ ເພື່ອຮັກສາເວລາໃນການປະຊຸມສານຕໍ່ໃນກໍລະນີຄະນະສານເຫັນວ່າ ການສະເໜີຄ້ານຕົວບໍ່ມີເຫດຜົນພຽງພໍ ແລະ ຈະສືບຕໍ່ປະຊຸມສານ.

ພາຍຫຼັງ ທີ່ຄະນະສານໄດ້ພິຈາລະນາບັນຫາການສະເໜີຄ້ານຕົວຢູ່ໃນຫ້ອງປະຊຸມລັບແລ້ວ, ຖ້າຫາກເຫັນວ່າການສະເໜີຄ້ານຕົວດັ່ງກ່າວມີເຫດຜົນພຽງພໍ, ຄະນະສານກໍຈະປ່ຽນຕົວຄະນະສານ ຫຼື ປ່ຽນຕົວຜູ້ທີ່ຖືກສະເໜີຄ້ານຕົວນັ້ນ ແລ້ວກັບເຂົ້າມາຫ້ອງປະຊຸມສານຕໍ່ ໂດຍຈະເລີ່ມຕົ້ນດ້ວຍການເປີດປະຊຸມສານຄືນໃໝ່ທັງໝົດ. ແຕ່ໃນທາງກົງກັນຂ້າມ ຖ້າຄະນະສານຫາກເຫັນວ່າການສະເໜີຄ້ານຕົວບໍ່ມີເຫດຜົນພຽງພໍ ຄະນະສານກໍຈະກັບເຂົ້າມາໃນຫ້ອງປະຊຸມສານເຊັ່ນດຽວກັນ ແລ້ວສືບຕໍ່ດໍາເນການປະຊຸມສານ ໂດຍທີ່ປະທານຄະນະສານຈະເປັນຜູ້ປະກາດເປີດປະຊຸມສານຕໍ່, ແຕ່ກ່ອນທີ່ຈະສືບຕໍ່ດໍາເນີນການປະຊຸມສານນັ້ນ ປະທານຄະນະສານຈະເປັນຜູ້ຊີ້ແຈງເຫດຜົນຂອງການບໍ່ປ່ຽນຕົວຜູ້ທີ່ຖືກສະເໜີຄ້ານຕົວຕໍ່ຄູ່ຄວາມ ແລະ ທຸກຄົນທີ່ເຂົ້າຮ່ວມໃນທີ່ປະຊຸມສານ ໂດຍສະເພາະກໍແມ່ນການອະທິບາຍເຫດຜົນໃຫ້ຜູ້ທີ່ໄດ້ສະເໜີຄ້ານຕົວນັ້ນຮັບຮູ້ ແລະເຂົ້າໃຈວ່າມີເຫດຜົນອັນໃດຄະນະສານ ຈຶ່ງບໍ່ສາມາດປ່ຽນຕົວຕາມການສະເໜີຄ້ານຕົວຂອງຄູ່ຄວາມໄດ້ ເພື່ອບໍ່ໃຫ້ຜູ້ທີ່ໄດ້ສະເໜີຄ້ານຕົວໄດ້ມີການລະແວງ ແລະ ບໍ່ເຊື່ອໝັ້ນຕໍ່ຄະນະສານ ຫຼື ຜູ້ທີ່ຖືກສະເໜີຄ້ານຕົວນັ້ນວ່າຈະບໍ່ໃຫ້ຄວາມເປັນທໍາແກ່ຝ່າຍຕົນເອງ.

**ຂ. ໃນກໍລະນີບໍ່ມີການສະເໜີຄ້ານຕົວຄະນະສານ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ແລະ ຜູ້ແປພາສາ**

ໃນກໍລະນີທີ່ບໍ່ໄດ້ມີການສະເໜີຄ້ານຕົວຄະນະສານ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ແລະຜູ້ແປພາສາແລ້ວ ປະທານຄະນະສານກໍຈະສືບຕໍ່ດໍາເນີນການປະຊຸມສານ ໂດຍແຈ້ງສິດ ແລະ ພັນທະຂອງຜູ້ເຂົ້າຮ່ວມໃນທີ່ປະຊຸມສານ, ອະທິບາຍສິດ ແລະພັນທະຂອງໂຈດ, ຈໍາເລີຍ ລວມທັງບຸກຄົນທີສາມ ແລະຜູ້ເຂົ້າຮ່ວມໃນການດໍາເນີນຄະດີທີ່ໄດ້ເຂົ້າມາຮ່ວມໃນທີ່ປະຊຸມສານໂດຍສະເພາະກໍແມ່ນສິດສະເໜີພາບກັນໃນການຕໍ່ສູ້ຄະດີ, ສິດໃນການນໍາສະເໜີຂໍ້ມູນຫຼັກຖານ ແລະ ສິດໃນການຊີ້ແຈງບັນຫາຕ່າງໆ (ການໂຕ້ຖຽງ) ທີ່ກ່ຽວຂ້ອງກັບຄະດີຕໍ່ທີ່ປະຊຸມສານ ເຊັ່ນ ຄູ່ຄວາມໃນຄະດີສາມາດນໍາເອົາຂໍ້ມູນຫຼັກຖານຕ່າງໆມາສະເໜີຕໍ່ຄະນະສານຢູ່ໃນທີ່ປະຊຸມສານ (ຫຼັກຖານທາງດ້ານວັດຖຸ), ສະເໜີຊີ້ແຈງບັນຫາໃດທີ່ຍັງບໍ່ທັນຈະແຈ້ງ ຫຼື ສະເໜີເອກະສານເພີ່ມເຕີມ (ຫຼັກຖານທາງດ້ານເອກະສານ), ສະເໜີໃຫ້ສານໄຕ່ສວນບຸກຄົນໃດບຸກຄົນໜຶ່ງ ຊຶ່ງບຸກຄົນທີ່ຄູ່ຄວາມສະເໜີໃຫ້ຄະນະສານໄຕ່ສວນນັ້ນບໍ່ເຄີຍໄດ້ໃຫ້ການຕໍ່ສານ ຫຼື ບໍ່ເຄີຍໄດ້ເຂົ້າຮ່ວມໃນການດໍາເນີນຄະດີດັ່ງກ່າວນັ້ນມາກ່ອນ (ຫຼັກຖານທາງດ້ານບຸກຄົນ) ແລະອື່ນໆທີ່ຄູ່ຄວາມເຫັນວ່າຂໍ້ມູນຫຼັກຖານດັ່ງກ່າວນັ້ນຈະເປັນປະໂຫຍດໃຫ້ຄະນະສານໄດ້ນໍາມາຄົ້ນຄ້ວາ, ກວດກາ, ພິຈາລະນາ, ຊັ່ງຊາຕີລາຄາ ແລະ ລົງຄໍາຕັດສິນໃຫ້ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ ແລະ ເຫດການຕົວຈິງ.

### 3.1.4. ການແຈ້ງສິດ ແລະພັນທະຂອງຜູ້ເຂົ້າຮ່ວມໃນທີ່ປະຊຸມສານ

ປະທານຄະນະສານຈະເປັນຜູ້ແຈ້ງກ່ຽວກັບສິດ ແລະ ພັນທະຂອງຄູ່ຄວາມ ແລະ ຜູ້ເຂົ້າຮ່ວມອື່ນໆ ທີ່ສາມາດປະຕິບັດໄດ້ຢູ່ໃນຫ້ອງປະຊຸມສານຊາບ ເຊັ່ນ ສິດໃນການນໍາສະເໜີຂໍ້ມູນຫຼັກຖານ ແລະ ສິດໃນການຊີ້ແຈງບັນຫາ

ຕ່າງໆຂອງຄູ່ຄວາມ, ພັນທະໃນການໃຫ້ການຕາມຄວາມເປັນຈິງຂອງບັນດາພະຍານ, ພັນທະໃນການໃຫ້ຂໍ້ມູນທີ່ແທ້ຈິງຂອງຜູ່ຊ່ຽວຊານ ແລະ ພັນທະໃນການແປພາສາໃຫ້ຖືກຕ້ອງຂອງຜູ່ແປພາສາ ແລະ ອື່ນໆ.

ພາຍຫຼັງທີ່ໄດ້ແຈ້ງສິດ ແລະ ພັນທະຕ່າງໆສໍາເລັດແລ້ວ ປະທານຄະນະສານກໍຈະໃຫ້ຄູ່ຄວາມສະເໜີ ຫຼື ການຮ້ອງຂໍບັນຫາຕ່າງໆທີ່ມີຕໍ່ຄະນະສານ ເຊັ່ນ ການສະເໜີ ຫຼື ຮ້ອງຂໍໃຫ້ຄະນະສານລົງເກັບກໍາຂໍ້ມູນເອົາຫຼັກຖານເພີ່ມເຕີມ, ການຂໍໃຫ້ເລື່ອນການພິຈາລະນາຄະດີ ໃນທີ່ປະຊຸມສານດ້ວຍເຫດຜົນໃດເຫດຜົນໜຶ່ງ. ໃນກໍລະນີທີ່ມີການສະເໜີ ຫຼື ການຮ້ອງຂໍ ຫຼື ຄະນະສານເອງຫາກພົບບັນຫາໃດໜຶ່ງທີ່ເຫັນວ່າມີຄວາມຫຍຸ້ງຍາກສັບສົນແລ້ວ ປະທານຄະນະສານກໍປິດປະຊຸມສານໄວ້ຊົ່ວຄາວ ເພື່ອເຂົ້າໄປປຶກສາຫາລືກັນຢູ່ໃນຫ້ອງປະຊຸມລັບ ແລະ ພິຈາລະນາຕົກລົງຊີ້ຂາດໃນທີ່ປະຊຸມສານຕໍ່ຄໍາສະເໜີ ຫຼື ຄໍາຮ້ອງຂໍ ຫຼື ບັນຫາດັ່ງກ່າວ. ແຕ່ຖ້າບໍ່ມີການສະເໜີ ຫຼືຮ້ອງຂໍບັນຫາໃດໆຂອງຄູ່ຄວາມ ແລະຜູ່ເຂົ້າຮ່ວມໃນການດໍາເນີນຄະດີຢູ່ໃນທີ່ປະຊຸມສານ ແລະ ຄະນະສານເຫັນວ່າຄະດີດັ່ງກ່າວບໍ່ມີບັນຫາໃດທີ່ຫຍຸ້ງຍາກສັບສົນແລ້ວ ຄະນະສານກໍຈະສືບຕໍ່ດໍາເນີນການປະຊຸມສານ ໂດຍກ້າວເຂົ້າສູ່ບາດກ້າວການໄຕ່ສວນຄະດີ.

### 3.2. ການໄຕ່ສວນຄະດີໃນທີ່ປະຊຸມສານ

ການໄຕ່ສວນຄະດີຢູ່ທີ່ປະຊຸມສານ ທາດແທ້ກໍແມ່ນການຊັກຖາມ, ການຮັບຟັງການສະເໜີຂອງຜູ່ເຂົ້າຮ່ວມໃນທີ່ປະຊຸມສານ ເພື່ອເປັນການກວດກາ, ພິສູດຂໍ້ມູນຫຼັກຖານທີ່ເປັນປະເດັນໃນຄະດີ ຊຶ່ງຜູ່ພິພາກສາທີ່ຮັບຜິດຊອບດໍາເນີນຄະດີໄດ້ເກັບກໍາ ແລະ ຄູ່ຄວາມໄດ້ປະກອບມານັ້ນ ທັງເປັນການຊອກຫາຂໍ້ມູນຫຼັກຖານເພີ່ມເຕີມໃນກໍລະນີທີ່ຄະນະສານໄດ້ກວດກາ ຫຼື ພິສູດແລ້ວ ຫາກເຫັນວ່າຂໍ້ມູນຫຼັກຖານໃນຄະດີຍັງບໍ່ທັນແຈ້ງຂາວ ແລະ ຊັດເຈນພໍທີ່ຈະໃຫ້ຄະນະສານລົງຄໍາຕັດສິນໄດ້[82].

ການໄຕ່ສວນຄະດີ ກໍເປັນບາດກ້າວໜຶ່ງຂອງການປະຊຸມສານ ຊຶ່ງຄະນະສານຈະປະຕິບັດໄປຕາມຂັ້ນຕອນ ແລະລໍາດັບຂອງການໄຕ່ສວນ ໂດຍເລີ່ມຈາກການໄຕ່ສວນໂຈດ, ບຸກຄົນທີສາມຝ່າຍໂຈດ, ຈໍາເລີຍ, ບຸກຄົນທີສາມຝ່າຍຈໍາເລີຍ ແລະ ໄຕ່ສວນພະຍານ ໂດຍທີ່ຄະນະສານຈະຮັບຟັງການສະເໜີຫຼັກຖານຂອງຄູ່ຄວາມ ແລະ ຜູ່ເຂົ້າຮ່ວມໃນທີ່ປະຊຸມສານ, ຟັງຄໍາເຫັນສຸດທ້າຍຂອງຜູ່ຊ່ຽວຊານ ແລະ ພະນັກງານຈາກອົງການຈັດຕັ້ງທີ່ກ່ຽວຂ້ອງທີ່ເຂົ້າມາຮ່ວມໃນການປະຊຸມສານນັ້ນ ຊຶ່ງກໍເປັນການປະຕິບັດທີ່ສອດຄ່ອງກັບເນື້ອໃນຂອງມາດຕາ 206 ວັກ 01 ຂອງກົດ ໝາຍວ່າດ້ວຍການດໍາເນີນຄະດີແພ່ງສະບັບປັບປຸງປີ 2012 ແລະ ມາດຕາດັ່ງກ່າວໄດ້ກໍານົດໄວ້ວ່າ ການໄຕ່ສວນຄະດີຕ້ອງດໍາເນີນດ້ວຍການຖາມ, ການຟັງ ຫຼື ການສະເໜີຂອງຜູ່ເຂົ້າຮ່ວມໃນທີ່ປະຊຸມສານ ເພື່ອເປັນການກວດກາ, ພິສູດຫຼັກຖານທີ່ເປັນປະເດັນ ຫຼື ຂໍ້ຂັດແຍ່ງຂອງຄະດີ.

ຕາມຫຼັກການຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ໂດຍສະເພາະແລ້ວມາດຕາ 206 ວັກ 02 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງສະບັບປັບປຸງປີ 2012 ຍັງໄດ້ກໍານົດໄວ້ວ່າ *ການໄຕ່ສວນຄະດີຢູ່ທີ່ປະຊຸມສານຂັ້ນຕົ້ນຕ້ອງເຮັດໂດຍກົງ, ທາງປາກເປົ່າ, ຢ່າງເປີດເຜີຍ ຫຼື ປິດລັບໃນບາງກໍລະ, ມີການໂຕ້ຖຽງ, ເຮັດຢ່າງຕໍ່ເນື່ອງ, ເປັນແຕ່ລະຄະດີໂດຍບໍ່ມີການສັບປ່ຽນຄະນະສານ ແລະຖ້າມີການສັບປ່ຽນຄະນະສານຕ້ອງດໍາເນີນການໄຕ່ສວນຄືນໃໝ່* ຊຶ່ງໃນແຕ່ລະຫຼັກການນັ້ນມີຄວາມໝາຍດັ່ງນີ້:

**- ເຮັດໂດຍກົງ:** ແມ່ນການດໍາເນີນຂຶ້ນຂອງຜູ່ພິພາກສາທີ່ປະກອບເປັນຄະນະສານຄົບອົງປະກອບຂອງການພິຈາລະນາຄະດີ ໂດຍມີຄູ່ຄວາມເຂົ້າຮ່ວມໃນທີ່ປະຊຸມສານ, ຖ້າຫາກຄູ່ຄວາມບໍ່ສາມາດເຂົ້າຮ່ວມໃນທີ່ປະຊຸມສານໃນບາງກໍລະນີກໍສາມາດຕັດສິນໄດ້ ແລະການຕັດສິນດັ່ງກ່າວຖືວ່າເປັນການຕັດສິນລັບຫຼັງ ຊຶ່ງການພິຈາລະນາດັ່ງກ່າວຖືວ່າເປັນການໄຕ່ສວນແບບໂດຍກົງ ໝາຍຄວາມວ່າ ການໄຕ່ສວນແບບໂດຍກົງ ຄູ່ຄວາມຕ້ອງໄດ້ເຂົ້າມາຮ່ວມໃນທີ່ປະຊຸມສານ ແລະ ການດໍາເນີນການປະຊຸມສານຕ້ອງຊ້ອງໜ້າຄູ່ຄວາມ.

[82] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 206

*" ໃນລະບົບການດຳເນີນຄະດີແພ່ງຂອງປະເທດຍີ່ປຸ່ນ ໂດຍສະເພາະກໍແມ່ນຂັ້ນຕອນຂອງການໄຕ່ສວນໃນທີ່ປະຊຸມສານ ແມ່ນໄດ້ອະນຸຍາດໃຫ້ມີການໄຕ່ສວນຄະດີໂດຍຜ່ານທາງໂທລະສັບ, ຜ່ານລະບົບວີດີໂອທາງໄກໄດ້, ແຕ່ສິ່ງສຳຄັນຄູ່ຄວາມຕ້ອງໄດ້ເຂົ້າມາສະຖານທີ່ ຊຶ່ງສາມາດຕິດຕໍ່ກັນໄດ້ສະດວກ ແລະສ່ວນຫຼວງຫຼາຍໃນກໍລະນີກໍແມ່ນນຳໃຊ້ຫ້ອງການສະພາທະນາຍຄວາມທີ່ເປັນຜູ້ຕາງໜ້າຂອງຄູ່ຄວາມນັ້ນ."*

**- ການໄຕ່ສວນທາງປາກເປົ່າ:** ແມ່ນການສອບຖາມຄູ່ຄວາມ ແລະ ຜູ້ເຂົ້າຮ່ວມໃນທີ່ປະຊຸມສານນັ້ນດຳເນີນທາງປາກເປົ່າ ຊຶ່ງຄະນະສານ ແລະຄູ່ຄວາມ ພ້ອມທັງຜູ້ເຂົ້າຮ່ວມໃນທີ່ປະຊຸມສານຈະມີການຊັກຖາມຕໍ່ໜ້າເຊິ່ງກັນແລະກັນ. ໃນກໍລະນີທີ່ຄູ່ຄວາມ ຫຼື ຜູ້ເຂົ້າຮ່ວມໃນທີ່ປະຊຸມສານຫາກບໍ່ສາມາດດຳເນີນທາງປາກເປົ່າ ຫຼື ຜູ້ທີ່ບໍ່ຮູ້ ແລະບໍ່ເຂົ້າໃຈພາສາລາວນັ້ນກໍສາມາດຖາມ-ຕອບກັນໄດ້ໂດຍຜ່ານການແປພາສາ ເຊັ່ນ ຄູ່ຄວາມຝ່າຍໃດໜຶ່ງບໍ່ສາມາດເວົ້າພາສາລາວ, ເປັນຄົນປາກກືກ ແລະອື່ນໆ ກໍຈຳເປັນຕ້ອງໄດ້ຜ່ານການແປພາສາ ເນື່ອງຈາກວ່າ ໃນຫຼັກການດຳເນີນຄະດີຂອງສານນັ້ນກົດໝາຍໄດ້ກຳນົດໃຫ້ນຳໃຊ້ແຕ່ພາສາລາວເທົ່ານັ້ນ ຖ້າຜູ້ເຂົ້າຮ່ວມໃນການດຳເນີນຄະດີຫາກບໍ່ຮູ້ພາສາລາວກໍມີສິດໃຊ້ພາສາຕົນເອງ ຫຼື ພາສາອື່ນກໍໄດ້ ແຕ່ຕ້ອງຜ່ານການແປພາສາ[83].

**- ການໄຕ່ສວນຢ່າງເປີດເຜີຍ:** ແມ່ນການໄຕ່ສວນຄະດີຈະເຮັດຢ່າງເປີດເຜີຍຕໍ່ໜ້າປະຊາຊົນ ຊຶ່ງບຸກຄົນໃດກໍສາມາດເຂົ້າຮ່ວມເບິ່ງການໄຕ່ສວນໄດ້ຕາມລະບຽບການ, ແຕ່ມີຂໍ້ຍົກເວັ້ນຕໍ່ບຸກຄົນທີ່ສານບໍ່ອະນຸຍາດໃຫ້ເຂົ້າເບິ່ງການໄຕ່ສວນຄະດີໄດ້ ໂດຍສະເພາະກໍແມ່ນເດັກທີ່ຍັງບໍ່ເຖິງກະສຽນອາຍຸ ສິບແປດປີ, ຖ້າຫາກວ່າບໍ່ເປັນຜູ້ທີ່ກ່ຽວຂ້ອງກັບຄະດີ ແລະ ບໍ່ໄດ້ຮັບອະນຸຍາດຈາກຄະນະສານເສຍກ່ອນ. ເຖິງຢ່າງໃດກໍຕາມການໄຕ່ສວນຂອງຄະນະສານໃນບາງກໍລະນີກໍບໍ່ອະນຸຍາດໃຫ້ຄົນນອກເຂົ້າເບິ່ງການໄຕ່ສວນຄະດີໄດ້ ຖ້າບັນຫາທີ່ຄະນະສານກຳລັງໄຕ່ສວນຢູ່ນັ້ນຫາກມີຄວາມກ່ຽວພັນເຖິງຄວາມລັບສ່ວນຕົວຂອງບຸກຄົນ ແລະ ຄວາມລັບຂອງຊາດ ເຊັ່ນ ການອັບອາຍທາງເພດ, ການແຕະຕ້ອງເຖິງກຽດສັກສີຢ່າງຮຸນແຮງ, ບັນຫາທີ່ກ່ຽວຂ້ອງກັບຄວາມລັບທາງລັດຖະການ, ບັນຫາທີ່ກ່ຽວຂ້ອງກັບຄວາມລັບທາງການທະຫານທີ່ພົວພັນເຖິງຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ໝາຍຄວາມວ່າ ຖ້າມີບັນຫາທີ່ກ່ຽວຂ້ອງກັບຄວາມລັບຕ່າງໆໃດໜຶ່ງທີ່ກ່າວມາຂ້າງເທິງນັ້ນ ຄະນະສານກໍຈະໄຕ່ສວນຄະດີບຸກຄົນທີ່ກ່ຽວຂ້ອງຢ່າງປິດລັບ.

ແຕ່ເມື່ອການໄຕ່ສວນຄະດີແບບປິດລັບນັ້ນໄດ້ສຳເລັດລົງແລ້ວ ບັນຫາໃດທີ່ບໍ່ເປັນຄວາມລັບ ຄະນະສານກໍຈະນຳອອກມາໄຕ່ສວນຢ່າງເປີດເຜີຍຄືເກົ່າ ເຖິງວ່າຄະດີໃດທີ່ມີການໄຕ່ສວນແບບປິດລັບ ຫຼື ບໍ່ປິດລັບກໍຕາມ ແຕ່ເວລາທີ່ປະກາດຄຳຕັດສິນນັ້ນ ຄະນະສານກໍຈະອອກມາປະກາດຢູ່ໃນຫ້ອງປະຊຸມສານຢ່າງເປີດເຜີຍ.

**- ການໄຕ່ສວນຢ່າງຕໍ່ເນື່ອງ ໂດຍບໍ່ມີການສັບປ່ຽນຄະນະສານ:** ແມ່ນການດຳເນີນການໄຕ່ສວນຄະດີນັ້ນຕ້ອງດຳເນີນໄປຢ່າງຕໍ່ເນື່ອງ ຊຶ່ງບໍ່ອະນຸຍາດໃຫ້ສັບປ່ຽນຄະນະສານໃນໄລຍະການໄຕ່ສວນຄະດີ. ໃນກໍລະນີທີ່ໝົດໂມງເວລາລັດຖະການແລ້ວ ແຕ່ຄະນະສານຫາກບໍ່ສາມາດໄຕ່ສວນຄະດີນັ້ນໃຫ້ສຳເລັດໄດ້, ຄະນະສານກໍສາມາດເລື່ອນການໄຕ່ສວນຄະດີໄປໃສ່ມື້ໃໝ່ໄດ້ ແຕ່ການສືບຕໍ່ໄຕ່ສວນຄະດີໃນມື້ໃໝ່ນັ້ນ ຜູ້ພິພາກສາທີ່ເປັນຄະນະສານຕ້ອງແມ່ນຜູ້ເກົ່າ ແລະ ບໍ່ອະນຸຍາດໃຫ້ຜູ້ພິພາກສາຜູ້ໃໝ່ມາປ່ຽນແທນ ແລ້ວສືບຕໍ່ການໄຕ່ສວນຄະດີດັ່ງກ່າວນັ້ນໄດ້, ຖ້າມີຄວາມຈຳເປັນຕ້ອງໄດ້ມີການສັບປ່ຽນຄະນະສານນັ້ນ ການໄຕ່ສວນຄະດີຕ້ອງໄດ້ເລີ່ມຕົ້ນຄືນໃໝ່ທັງໝົດ ໂດຍປະທານຄະນະສານຈະເລີ່ມເປີດປະຊຸມສານຄືນໃໝ່ ແລ້ວປະຕິບັດຕາມຂັ້ນຕອນການປະຊຸມສານ.

### 3.2.1. ຄະນະສານຕັດສິນລາຍງານເນື້ອຄະດີໂດຍຫຍໍ້

ກ່ອນຈະເລີ່ມການໄຕ່ສວນຄະດີໃນທີ່ປະຊຸມສານນັ້ນ ຄະນະສານຈະເລີ່ມຕົ້ນດ້ວຍການລາຍງານເນື້ອຄະດີໂດຍຫຍໍ້ ຊຶ່ງປະທານຄະນະສານຈະເປັນຜູ້ລາຍງານເອງ ຫຼື ຈະມອບໃຫ້ຜູ້ພິພາກສາຜູ້ໃດຜູ້ໜຶ່ງ ທີ່ເປັນຜູ້ຮັບຜິດຊອບໃນການດຳເນີນຄົ້ນຄ້ວາຄະດີດັ່ງກ່າວ ແລະ ໄດ້ຖືກແຕ່ງຕັ້ງປະກອບໃຫ້ນັ່ງເປັນຄະນະສານໃນການພິຈາລະນາຕັດສິນຄະດີນີ້ນັ້ນເປັນຜູ້ລາຍງານກໍໄດ້. ການລາຍງານເນື້ອຄະດີແມ່ນສະຫຼຸບເອົາຄຳຮ້ອງຟ້ອງ, ຄຳໃຫ້ການ ແລະຄຳໃຫ້ການຊ້ອງ

[83] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 14

ໜ້າຂອງໂຈດ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ, ຄຳໃຫ້ການ, ຄຳໃຫ້ການຊ້ອງໜ້າຂອງຈຳເລີຍ ແລະ ຄຳຮ້ອງຟ້ອງຂອງບຸກຄົນທີສາມ (ຖ້າມີ) ນັ້ນມີຄືແນວໃດ ເພື່ອໃຫ້ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ຫຼື ຜູ້ເຂົ້າມາຮ່ວມໃນທີ່ປະຊຸມສານນັ້ນຮູ້ວ່າຄະດີທີ່ຄະນະສານນຳມາພິຈາລະນານັ້ນມີບັນຫາຂັດແຍ່ງກັນແນວໃດ, ບັນຫາທີ່ຄູ່ຄວາມທັງສອງຝ່າຍສະເໜີມານັ້ນມີອັນໃດແດ່, ມີບັນຫາໃດແດ່ທີ່ຄູ່ຄວາມໄດ້ເປັນເອກະພາບກັນແລ້ວ ແລະ ຍັງມີບັນຫາ ຫຼື ປະເດັນໃດແດ່ທີ່ຄູ່ຄວາມຍັງບໍ່ທັນເປັນເອກະພາບກັນ.

ພາຍຫຼັງທີ່ໄດ້ລາຍງານເນື້ອຄະດີຕໍ່ທີ່ປະຊຸມສານແລ້ວ, ປະທານຄະນະສານກໍສະເໜີໃຫ້ໂຈດ ແລະ ບຸກຄົນທີສາມຝ່າຍໂຈດ (ຖ້າມີ) ເປັນຜູ້ຢັ້ງຢືນການຮ້ອງຟ້ອງຂອງຕົນເອງຄືນວ່າ ມາຮອດໃນມື້ປະຊຸມສານນັ້ນ ຍັງຈະຢັ້ງຢືນເອົາຕາມຄຳຮ້ອງຟ້ອງທີ່ໄດ້ຂຽນ ແລະ ໄດ້ຍື່ນຕໍ່ສານໃນເບື້ອງຕົ້ນ ແລະ ຄຳໃຫ້ການທີ່ໄດ້ໃຫ້ການຕໍ່ສານ ຕາມຄະນະສານໄດ້ລາຍງານຜ່ານມານັ້ນທັງໝົດ ຫຼື ບໍ, ມີບັນຫາໃດແດ່ທີ່ຢາກເພີ່ມເຕີມ ຫຼື ປ່ຽນແປງ ຫຼື ຕັດອອກ. ພາຍຫຼັງທີ່ໄດ້ຖາມຝ່າຍໂຈດສຳເລັດແລ້ວກໍຈະຖາມຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍ (ຖ້າມີ) ເຊັ່ນກັນວ່າ ມາຮອດໃນທີ່ປະຊຸມສານນັ້ນຝ່າຍຈຳເລີຍຍັງຈະຢັ້ງຢືນເອົາຕາມຄຳແກ້ຟ້ອງ, ຄຳຟ້ອງແຍ່ງ ແລະ ຄຳໃຫ້ການຂອງຕົນຕາມທີ່ຄະນະສານໄດ້ສະຫຼຸບ ແລະ ລາຍງານຕໍ່ທີ່ປະຊຸມສານຜ່ານມາ ຫຼື ບໍ, ມີບັນຫາໃດແດ່ທີ່ຢາກເພີ່ມເຕີມ ຫຼື ປ່ຽນແປງ ຫຼື ຕັດອອກ ພ້ອມກັນນັ້ນ ຄະນະສານກໍຈະຖາມຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍ (ຖ້າມີ) ວ່າໄດ້ຮັບຮູ້ຕໍ່ການຮ້ອງຟ້ອງຂອງຝ່າຍໂຈດນັ້ນຄືແນວໃດເຊັ່ນ ຮັບຮູ້ຄຳຮ້ອງຟ້ອງທັງໝົດ ຫຼື ບາງສ່ວນ ຫຼື ປະຕິເສດທັງໝົດ ແລະໃນກໍລະນີທີ່ມີການຟ້ອງແຍ່ງຂອງຝ່າຍຈຳເລີຍນັ້ນ, ປະທານຄະນະສານກໍຈະປະຕິບັດໃນການຖາມໂຈດຝ່າຍໂຈດເຊັ່ນດຽວກັນກັບທີ່ໄດ້ຊັກຖາມຝ່າຍຈຳເລີຍຜ່ານມາແລ້ວນັ້ນ.

**ກ. ກໍລະນີຈຳເລີຍຮັບຮູ້ຄຳຮ້ອງຟ້ອງຂອງໂຈດ ແລະໂຈດຮັບຮູ້ຄຳຟ້ອງແຍ່ງຂອງຈຳເລີຍໃນທີ່ປະຊຸມສານ**

ໃນກໍລະນີທີ່ຈຳເລີຍຮັບຮູ້ຄຳຮ້ອງຟ້ອງຂອງໂຈດທັງໝົດ ຫຼື ໂຈດໄດ້ຮັບຮູ້ຄຳຟ້ອງແຍ່ງຂອງຈຳເລີຍທັງໝົດ ຢູ່ໃນທີ່ປະຊຸມສານນັ້ນ, ຄະນະສານກໍຈະນຳເອົາຄະດີດັ່ງກ່າວອອກພິຈາລະນາຕັດສິນເລີຍ ໂດຍບໍ່ດຳເນີນການໄຕ່ສວນທັງສອງຝ່າຍຕື່ມອີກ[84] ໝາຍຄວາມວ່າ ຖ້າຫາກຄູ່ຄວາມຝ່າຍໃດຝ່າຍໜຶ່ງຫາກໄດ້ຮັບຮູ້ຕໍ່ການຮ້ອງຟ້ອງຂອງອີກຝ່າຍໜຶ່ງແລ້ວ ຈະເຫັນວ່າຄູ່ຄວາມບໍ່ມີບັນຫາໃດທີ່ເປັນຂໍ້ຂັດແຍ່ງກັນ ແລະ ຄະນະສານກໍບໍ່ຈຳເປັນທີ່ຈະໄຕ່ສວນເອົາຂໍ້ມູນກ່ຽວກັບບັນຫາໃດອີກ ຕໍ່ຈາກນັ້ນປະທານຄະນະສານກໍໃຫ້ພະນັກງານໄອຍະການປະຊາຊົນທີ່ໄດ້ເຂົ້າຮ່ວມໃນທີ່ປະຊຸມສານນັ້ນໄດ້ຖະແຫຼງ ແລະ ມີຄຳເຫັນຕໍ່ທີ່ປະຊຸມສານ.

ພາຍຫຼັງພະນັກງານໄອຍະການປະຊາຊົນໄດ້ມີຄຳເຫັນພ້ອມທັງຖະແຫຼງສຳເລັດແລ້ວ ປະທານຄະນະສານກໍປະກາດປິດປະຊຸມສານໄວ້ຊົ່ວຄາວ ເພື່ອນຳເອົາຄະດີດັ່ງກ່າວນັ້ນເຂົ້າໄປພິຈາລະນາ ແລະ ຮ່າງຄຳຕັດສິນ ໃນຫ້ອງປະຊຸມລັບ. ຫຼັງຈາກໄດ້ພິຈາລະນາ ແລະ ຮ່າງຄຳຕັດສິນສຳເລັດແລ້ວ ຄະນະສານກໍອອກມາປະກາດການເປີດປະຊຸມສານຕໍ່ເພື່ອປະກາດຄຳຕັດສິນ, ພາຍຫຼັງປະກາດ (ອ່ານ) ຄຳຕັດສິນສຳເລັດກໍຖືວ່າການປະຊຸມສານໃນມື້ນັ້ນໄດ້ສິ້ນສຸດລົງແລ້ວປະທານຄະນະສານກໍປະກາດປິດປະຊຸມສານ.

ໃນກໍລະນີທີ່ຈຳເລີຍຫາກຮັບຮູ້ຄຳຮ້ອງຟ້ອງຂອງໂຈດບາງສ່ວນ ຫຼື ໂຈດຮັບຮູ້ຄຳຟ້ອງແຍ່ງຂອງຈຳເລີຍບາງສ່ວນນັ້ນ ຄະນະສານກໍໄຕ່ສວນຝ່າຍໂຈດ, ຝ່າຍຈຳເລີຍ ແລະບັນດາພະຍານ ພ້ອມທັງບຸກຄົນອື່ນທີ່ກ່ຽວຂ້ອງກັບຄະດີໃນບັນຫາ ຫຼື ປະເດັນທີ່ຝ່າຍໂຈດ ແລະຝ່າຍຈຳເລີຍບໍ່ຮັບຮູ້ ຫຼື ປະຕິເສດເທົ່ານັ້ນ ໝາຍຄວາມວ່າ ການໄຕ່ສວນໃນກໍລະນີນີ້ ຄະນະສານຈະບໍ່ນຳເອົາບັນຫາທີ່ຝ່າຍໂຈດ ແລະ ຝ່າຍຈຳເລີຍໄດ້ເຫັນດີເປັນເອກະພາບກັນແລ້ວນັ້ນມາໄຕ່ສວນ ແລະໂຕ້ຖຽງໃນທີ່ປະຊຸມສານຕື່ມອີກ. ຊຶ່ງຄະນະສານຈະນຳເອົາພຽງແຕ່ບັນຫາທີ່ຝ່າຍໂຈດ ແລະ ຝ່າຍຈຳເລີຍຍັງບໍ່ທັນເປັນເອກະພາບ ແລະ ຍັງເປັນຂໍ້ຂັດແຍ່ງກັນເທົ່ານັ້ນມາໄຕ່ສວນ ແລະ ໂຕ້ຖຽງ ເພື່ອໃຫ້ໄດ້ຂໍ້ມູນຫຼັກຖານທີ່ຊັດເຈນ ແລະ ແຈ້ງຂາວ ພ້ອມທັງເປັນພື້ນຖານຕົ້ນຕໍໃຫ້ແກ່ການລົງຄຳຕັດສິນ.

---

[84] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 227 ວັກ 02.

**ຂ. ກໍລະນີຈໍາເລີຍປະຕິເສດຄໍາຮ້ອງຟ້ອງຂອງໂຈດ ແລະ ໂຈດປະຕິເສດຄໍາຟ້ອງແຍ່ງຂອງຈໍາເລີຍ.**

ໃນກໍລະນີທີ່ຈໍາເລີຍ ໄດ້ປະຕິເສດຄໍາຮ້ອງຟ້ອງຂອງໂຈດ ແລະ ໂຈດໄດ້ປະຕິເສດຄໍາຟ້ອງແຍ່ງຂອງຈໍາເລີຍນັ້ນ ຄະນະສານກໍຈະກ້າວເຂົ້າສູ່ບາດກ້າວການໄຕ່ສວນຄະດີ, ແຕ່ກ່ອນຈະເລີ່ມການໄຕ່ສວນຄະດີຢ່າງລະອຽດນັ້ນ ຄະນະສານ ກໍຍັງໃຫ້ໂອກາດແກ່ຄູ່ຄວາມໄດ້ມີການປະນີປະນອມກັນດ້ວຍການໄກ່ເກ່ຍໃນທີ່ປະຊຸມສານ ແລະ ຖ້າຫາກການໄກ່ເກ່ຍບໍ່ສາມາດຕົກລົງກັນໄດ້ ຄະນະສານຈຶ່ງກ້າວເຂົ້າສູ່ບາດກ້າວການໄຕ່ສວນຢ່າງລະອຽດຕາມລໍາດັບ ເຊັ່ນ ໄຕ່ສວນຝ່າຍໂຈດກ່ອນ, ພາຍຫຼັງສໍາເລັດແລ້ວຈຶ່ງໄຕ່ສວນຝ່າຍຈໍາເລີຍ, ໄຕ່ສວນພະຍານ ແລະ ບຸກຄົນກ່ຽວຂ້ອງທີ່ໄດ້ເຂົ້າຮ່ວມໃນທີ່ປະຊຸມສານ.

ໃນກໍລະນີທີ່ໂຈດ, ບຸກຄົນທີສາມໄດ້ຖອນຄໍາຮ້ອງຟ້ອງ ຫຼືຈໍາເລີຍໄດ້ຖອນຄໍາຟ້ອງແຍ່ງໃນທີ່ປະຊຸມສານນັ້ນຄະນະສານກໍຈະປະຕິບັດຕາມຂັ້ນຕອນຕາມທີ່ໄດ້ອະທິບາຍໄວ້ໃນບົດທີ 1 ຂໍ້ 6.4, ພາກທີ II ຂອງປຶ້ມຄູ່ປຶ້ມສະບັບນີ້.

**3.2.2. ການໄກ່ເກ່ຍຄະດີໃນທີ່ປະຊຸມສານ**

ການໄກ່ເກ່ຍຄະດີໃນທີ່ປະຊຸມສານ ແມ່ນປະທານຄະນະສານຈະໃຫ້ໂຈດ,ຈໍາເລີຍ ແລະ ບຸກຄົນທີສາມ ໃນຄະດີໄດ້ມີໂອກາດໄກ່ເກ່ຍ, ປະນີປະນອມ ແລະ ຕົກລົງແກ້ໄຂບັນຫາກັນໂດຍດີເສັຍກ່ອນ ຊຶ່ງປະທານຄະນະສານຈະເປັນຜູ້ອະທິບາຍກ່ຽວກັບຜົນບັງຄັບປະຕິບັດຂອງການໄກ່ເກ່ຍ ແລະ ສານກໍຈະບໍ່ນໍາເອົາຄະດີທີ່ໂຈດ ແລະ ຈໍາເລີຍ ຫຼື ບຸກຄົນທີສາມ ໄດ້ຕົກລົງໄກ່ເກ່ຍກັນແລ້ວນັ້ນມາພິຈາລະນາຄືນໃໝ່ຕື່ມອີກ. ແຕ່ການໄກ່ເກ່ຍລະຫວ່າງໂຈດ, ຈໍາເລີຍ ແລະ ບຸກຄົນທີສາມ ຫຼື ສິ່ງທີ່ຄູ່ຄວາມໄດ້ຕົກລົງກັນນັ້ນ ຕ້ອງບໍ່ໃຫ້ມີການລະເມີດກົດໝາຍ ເຊັ່ນ ບັນຫາທີ່ໂຈດ, ຈໍາເລີຍ, ບຸກຄົນທີສາມ ໄດ້ຕົກລົງກັນນັ້ນຕ້ອງບໍ່ຂັດກັບສິດ ແລະ ຜົນປະໂຫຍດຂອງລັດ ແລະ ສັງຄົມ ໂດຍສະເພາະກໍແມ່ນການຕົກລົງແບ່ງປັນຊັບສິນທີ່ເປັນກໍາມະສິດຂອງລັດ ຖ້າຄະນະສານເຫັນວ່າການຕົກລົງດ້ວຍການໄກ່ເກ່ຍຂອງຄູ່ຄວາມຫາກຂັດກັບສິດ ແລະຜົນປະໂຫຍດຂອງລັດ ແລະ ສັງຄົມແລ້ວ ຄະນະສານກໍຈະບໍ່ອະນຸຍາດໃຫ້ຄູ່ຄວາມໄດ້ມີການຕົກລົງໃນຮູບການໄກ່ເກ່ຍກັນອີກ.

ການໄກ່ເກ່ຍຄະດີໃນທີ່ປະຊຸມສານ ສາມາດເຮັດຂຶ້ນໄດ້ນັບແຕ່ຂັ້ນຕອນກ່ອນການໄຕ່ສວນຄະດີຈົນຮອດຂັ້ນຕອນກ່ອນພະນັກງານໄອຍະການປະຊາຊົນຖະແຫຼງ ຫຼື ກ່ອນທີ່ປະທານຄະນະສານຈະປິດປະຊຸມສານໄວ້ຊົ່ວຄາວ ເພື່ອນໍາເອົາຄະດີໄປພິຈາລະນາ ແລະ ຮ່າງຄໍາຕັດສິນຢູ່ໃນຫ້ອງປະຊຸມລັບເທົ່ານັ້ນ ຖ້າປະທານຄະນະສານໄດ້ປະກາດປິດປະຊຸມສານໄວ້ຊົ່ວຄາວ ເພື່ອນໍາເອົາຄະດີໄປພິຈາລະນາ ແລະ ຮ່າງຄໍາຕັດສິນຢູ່ໃນຫ້ອງປະຊຸມລັບແລ້ວ ກໍຈະບໍ່ອະນຸຍາດໃຫ້ຄູ່ຄວາມໄດ້ມີການໄກ່ເກ່ຍຢູ່ໃນສານຂັ້ນຂອງຕົນອີກ, ແຕ່ໂຈດ, ຈໍາເລີຍ, ບຸກຄົນທີສາມ ຫຼື ຜູ້ທີ່ກ່ຽວຂ້ອງໃນຄະດີດັ່ງກ່າວກໍຍັງສາມາດຕົກລົງດ້ວຍຮູບການໄກ່ເກ່ຍກັນໄດ້ໃນການດໍາເນຄະດີຂອງສານຂັ້ນເທິງ ລວມທັງຫ້ອງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ.

ໃນກໍລະທີ່ໂຈດ, ຈໍາເລີຍ, ບຸກຄົນທີສາມ ໄດ້ມີການຕົກລົງໄກ່ເກ່ຍປະນີປະນອມກັນຢູ່ໃນທີ່ປະຊຸມສານແລ້ວ ຄະນະສານກໍຈະເຮັດບົດບັນທຶກການໄກ່ເກ່ຍຄະດີໃນທີ່ປະຊຸມສານ ໂດຍອອກບົດບັນທຶກໄກ່ເກ່ຍຂອງຄະນະສານ ຊຶ່ງປະກອບດ້ວຍປະທານຄະນະສານ, ຜູ້ພິພາກສາທີ່ປະກອບເປັນຄະນະສານ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ວັນທີ, ເດືອນ, ປີ ແລະ ເວລາຂອງການເປີດການໄກ່ເກ່ຍ ຫຼື ເປີດປະຊຸມສານ.

ພາຍຫຼັງເຮັດບົດບັນທຶກໄກ່ເກ່ຍສໍາເລັດແລ້ວ ກໍຈະໃຫ້ໂຈດ, ຈໍາເລີຍ, ບຸກຄົນທີສາມ, ຈ່າສານ, ພະນັກງານໄອຍະການປະຊາຊົນ ແລະ ຄະນະສານລົງລາຍເຊັນໃສ່ບົດບັນທຶກການໄກ່ເກ່ຍນັ້ນ. ຫຼັງຈາກນັ້ນຄະນະສານກໍຈະອອກຄໍາສັ່ງປະຕິບັດຜົນຂອງການໄກ່ເກ່ຍດັ່ງກ່າວນັ້ນພາຍໃນກໍານົດເວລາ ຫ້າວັນ ນັບແຕ່ວັນທີ່ໄດ້ມີການຕົກລົງໄກ່ເກ່ຍກັນເປັນຕົ້ນໄປ[85] ຊຶ່ງຄໍາສັ່ງປະຕິບັດຜົນຂອງການໄກ່ເກ່ຍ ມີຜົນບັງຄັບປະຕິບັດຄືກັນກັບຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດ

[85] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງສະບັບປັບປຸງ ປີ 2012, ມາດຕາ 201 ໄດ້ກໍານົດໄວ້ວ່າ ເມື່ອມີການໄກ່ເກ່ຍແລ້ວສານຕ້ອງອອກຄໍາສັ່ງ (ຄໍາສັ່ງອອກໃນນາມຄະນະສານ) ປະຕິບັດຜົນຂອງການໄກ່ເກ່ຍຢູ່ສານພາຍໃນກໍານົດເວລາ ຫ້າ ວັນ ນັບແຕ່ວັນເຮັດບົດບັນທຶກໄກ່ເກ່ຍເປັນຕົ້ນໄປ ແລະຄໍາສັ່ງປະຕິບັດຜົນຂອງການໄກ່ເກ່ຍມີຜົນບັງຄັບຄືກັນກັບຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ.

ຂາດຂອງສານ ແລະ ບໍ່ອະນຸຍາດໃຫ້ຄູ່ຄວາມ ແລະ ບຸກຄົນທີສາມ ຮ້ອງຂໍອຸທອນຄໍາສັ່ງດັ່ງກ່າວໄດ້ອີກ ສານທີ່ໄດ້ໄກ່ເກັ່ຍ ແລະ ອອກຄໍາສັ່ງປະຕິບັດຜົນການໄກ່ເກັ່ຍນັ້ນ ກໍສົ່ງບົດບັນທຶກໄກ່ເກັ່ຍ, ຄໍາສັ່ງປະຕິບັດຜົນຂອງການໄກ່ເກັ່ຍພ້ອມທັງສໍານວນຄະດີໃຫ້ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານເປັນຜູ້ຈັດຕັ້ງປະຕິບັດບົດບັນທຶກໄກ່ເກັ່ຍນັ້ນຢ່າງເຂັ້ມງວດ.

### 3.2.3. ການເລີ່ມການໄຕ່ສວນຄະດີໃນທີ່ປະຊຸມສານ

ການໄຕ່ສວນຄະດີໃນທີ່ປະຊຸມສານ ຄະນະສານຈະດໍາເນີນໄປຕາມລໍາດັບຂອງການໄຕ່ສວນ ຊຶ່ງປະທານຄະນະສານຈະໃຫ້ໂຈດຂຶ້ນມາສະເໜີຕໍ່ຄະນະສານເປັນຄົນທໍາອິດເພື່ອສະເໜີໂດຍຫຍໍ້ກ່ຽວກັບເຫດຜົນຂອງການຮ້ອງຟ້ອງ ແລະ ປະເດັນທີ່ມີຂໍ້ຂັດແຍ່ງກັນ ພ້ອມທັງສະເໜີຂໍ້ມູນຫຼັກຖານຕ່າງໆທີ່ສາມາດຢັ້ງຢືນໃນຄໍາຮ້ອງຟ້ອງຂອງຜູ້ກ່ຽວຕໍ່ຄະນະສານ, ໃນການສະເໜີຂອງໂຈດທັງໝົດນັ້ນຈະຕ້ອງໄດ້ລົງເລິກເຖິງປະເດັນທີ່ຂັດແຍ່ງກັນ ແລະ ວິທີແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ພ້ອມກັນນັ້ນໂຈດກໍສະເໜີໃຫ້ບຸກຄົນທີສາມຂອງໂຈດເອງ (ຖ້າມີ) ເພື່ອຂຶ້ນມາໃຫ້ການ ແລະ ມີຄໍາເຫັນ ເພື່ອຢັ້ງຢືນຄືນກ່ຽວກັບເຫດການຂອງຄະດີຕໍ່ຄະນະສານ.

ພາຍຫຼັງທີ່ໂຈດ ແລະ ບຸກຄົນທີສາມຝ່າຍໂຈດ ໄດ້ສະເໜີ ແລະ ມີຄໍາເຫັນຢັ້ງຢືນສໍາເລັດແລ້ວ, ຄະນະສານກໍສະເໜີໃຫ້ຈໍາເລີຍຂຶ້ນມາລາຍງານເຫດການຂອງຄະດີ ເພື່ອມີຄໍາເຫັນຮັບຮູ້ ຫຼື ປະຕິເສດການສະເໜີຂອງຝ່າຍໂຈດ ພ້ອມທັງສະແດງຫຼັກຖານຕ່າງໆ ເພື່ອເປັນການຢັ້ງຢືນໃນຄໍາກ່າວອ້າງຂອງຕົນຕໍ່ຄະນະສານ, ນອກຈາກນັ້ນຈໍາເລີຍເອງຍັງມີສິດສະເໜີຟ້ອງແຍ່ງໂຈດໃນຂັ້ນຕອນນີ້ອີກດ້ວຍ. ໃນກໍລະນີທີ່ມີບຸກຄົນທີສາມຂອງຝ່າຍຈໍາເລີຍເຂົ້າຮ່ວມໃນການດໍາເນີນຄະດີຢູ່ທີ່ປະຊຸມສານນັ້ນຈໍາເລີຍກໍສາມາດສະເໜີໃຫ້ຂຶ້ນມາໃຫ້ການ ແລະ ມີຄໍາເຫັນຢັ້ງຢືນຕໍ່ຄະນະສານຄືກັນກັບບຸກຄົນທີສາມຝ່າຍໂຈດ.

ເມື່ອທັງສອງຝ່າຍໄດ້ສະເໜີຄໍາເຫັນ ແລະ ໃຫ້ການຕໍ່ຄະນະສານຢ່າງຄົບຖ້ວນແລ້ວ ຄະນະສານກໍໄຕ່ສວນບັນດາພະຍານ ແລະ ຜູ້ເຂົ້າຮ່ວມອື່ນໆຕາມລໍາດັບ. ສໍາລັບການໄຕ່ສວນພະຍານນັ້ນ ຄະນະສານຈະເປັນຜູ້ພິຈາລະນາວ່າຄະດີດັ່ງກ່າວມີຄວາມຈໍາເປັນຍັງຈະຕ້ອງໄດ້ສອບຖາມ ແລະ ໄຕ່ສວນພະຍານ ຫຼື ຜູ້ເຂົ້າຮ່ວມຜູ້ໃດແດ່ ແລະ ຈະໄຕ່ສວນຜູ້ໃດກ່ອນ. ນອກຈາກຄະນະສານຈະເປັນຜູ້ໄຕ່ສວນບັນດາພະຍານ ແລະ ຜູ້ເຂົ້າຮ່ວມໃນການດໍາເນີນຄະດີຢູ່ທີ່ປະຊຸມສານແລ້ວ, ຜູ້ເຂົ້າຮ່ວມໃນການດໍາເນີນຄະດີດ້ວຍກັນເຊັ່ນ ໂຈດ, ຈໍາເລີຍ, ບຸກຄົນທີສາມ ກໍຍັງສາມາດຊັກຖາມກັນເອງ ແລະ ຊັກຖາມບັນດາພະຍານທີ່ໄດ້ໃຫ້ການຕໍ່ຄະນະສານໄດ້, ແຕ່ການຊັກຖາມຂອງແຕ່ລະຝ່າຍນັ້ນຕ້ອງຢູ່ພາຍໃຕ້ການບັນຊາ, ຄວບຄຸມ ແລະ ໄດ້ຮັບອະນຸຍາດຈາກປະທານຄະນະສານທີ່ກໍາລັງພິຈາລະນາຄະດີຢູ່ໃນຫ້ອງປະຊຸມສານນັ້ນເສັຍກ່ອນ.

**ກ. ການໄຕ່ສວນໂຈດ ແລະ ບຸກຄົນທີສາມຝ່າຍໂຈດ**

ໃນກໍລະນີຈໍາເລີຍຫາກປະຕິເສດຄໍາຮ້ອງຟ້ອງຂອງໂຈດ ຫຼື ໂຈດໄດ້ປະຕິເສດຄໍາຟ້ອງແຍ່ງຂອງຈໍາເລີຍ ແລະ ທັງສອງຝ່າຍບໍ່ສາມາດຕົກລົງດ້ວຍການປະນີປະນອມດ້ວຍຮູບແບບການໄກ່ເກັ່ຍກັນໄດ້ແລ້ວ, ຄະນະສານກໍຈະເລີ່ມການໄຕ່ສວນໂຈດ ແລະ ບຸກຄົນທີສາມຝ່າຍໂຈດ (ຖ້າມີ), ຖ້າວ່າຄະດີດັ່ງກ່າວຫາກມີໂຈດຫຼາຍຄົນ ຄະນະສານກໍຈະໄຕ່ສວນໂຈດເປັນແຕ່ລະຄົນ, ຊຶ່ງວິທີການໄຕ່ສວນກໍຈະເລີ່ມດ້ວຍການຖາມປະຫວັດຂອງຜູ້ຖືກຖາມ ແລ້ວສະເໜີໃຫ້ຜູ້ກ່ຽວອະທິບາຍເຫດການຂອງຄະດີຄືນ ແລະ ເປົ້າໝາຍ ຫຼື ຈຸດປະສົງໃນການຮ້ອງຟ້ອງເພື່ອໃຫ້ສານພິຈາລະນານັ້ນ ມາຮອດໃນມື້ປະຊຸມສານມີຈັກປະເດັນ ຫຼື ມີຈັກບັນຫາ. ຫຼັງຈາກນັ້ນ ຄະນະສານກໍຈະໄຕ່ສວນປະເດັນທີ່ມີຂໍ້ຂັດແຍ່ງ ພ້ອມທັງໃຫ້ໂຈດ ແລະ ບຸກຄົນທີສາມຝ່າຍໂຈດນໍາເອົາຫຼັກຖານມາສະເໜີເພີ່ມເຕີມ ແລະ ຢັ້ງຢືນຕໍ່ຄໍາໃຫ້ການ ຫຼື ການສະເໜີຂອງຕົນທີ່ໄດ້ສະເໜີຕໍ່ຄະນະສານນັ້ນ.

ໃນການໄຕ່ສວນໂຈດ, ຈໍາເລີຍ ແລະ ບຸກຄົນທີສາມໃນທີ່ປະຊຸມສານ ຄະນະສານຈະບໍ່ໄດ້ມີກໍານົດເວລາໃນການໄຕ່ສວນໃຫ້ແຕ່ລະຝ່າຍວ່າຈະໃຊ້ເວລາດົນປານໃດ, ແຕ່ຖ້າໂຈດ ແລະ ບຸກຄົນທີສາມຝ່າຍໂຈດຫາກໄດ້ໃຫ້ການ ແລະ ສະເໜີອອກນອກປະເດັນ, ອະທິບາຍເຫດການທີ່ບໍ່ກ່ຽວຂ້ອງກັບປະເດັນຂັດແຍ່ງ ຫຼື ບັນຫາຂອງຄະດີແລ້ວ

ປະທານຄະນະສານກໍຈະເປັນຜູ້ຄວບຄຸມໃຫ້ຜູ້ໃຫ້ການ ຫຼື ຜູ້ສະເໜີນັ້ນກັບເຂົ້າມາສູ່ປະເດັນການຊັກຖາມຂອງຄະນະສານ ຫຼື ປະເດັນທີ່ມີຂໍ້ຂັດແຍ່ງເທົ່ານັ້ນ.

ເມື່ອຄະນະສານໄດ້ໄຕ່ສວນໂຈດ ແລະ ບຸກຄົນທີສາມຝ່າຍໂຈດສິ້ນສຸດລົງເປັນທີ່ຮຽບຮ້ອຍແລ້ວ, ຄະນະສານກໍໃຫ້ສິດແກ່ຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍສະເໜີມີຄຳເຫັນ ຫຼື ຊັກຖາມຕໍ່ປະເດັນທີ່ໂຈດ ແລະ ບຸກຄົນທີສາມຝ່າຍໂຈດໄດ້ຍົກຂຶ້ນມານັ້ນ ຊຶ່ງກໍເປັນການສອດຄ່ອງກັບຫຼັກຖານໂຕ້ແຍ່ງ ແລະ ໂຕ້ຖຽງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ 2012.[86]

**ຂ. ການໄຕ່ສວນຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍ**

ການໄຕ່ສວນຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍ ຄະນະສານກໍຈະເລີ່ມດຳເນພາຍຫຼັງທີ່ໄດ້ໄຕ່ສວນໂຈດ ແລະ ບຸກຄົນທີສາມຝ່າຍໂຈດສຳເລັດລົງແລ້ວ, ຊຶ່ງການໄຕ່ສວນຝ່າຍຈຳເລີຍນີ້ກໍບໍ່ແຕກຕ່າງກັບການໄຕ່ສວນຝ່າຍໂຈດ ໂດຍຄະນະສານກໍຈະເຈາະຈົງໄຕ່ສວນພຽງແຕ່ປະເດັນ ຫຼື ບັນຫາທີ່ຄະນະສານເຫັນວ່າຍັງບໍ່ທັນຈະແຈ້ງ ຫຼື ບັນຫາທີ່ຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍ ໄດ້ມີການໂຕ້ແຍ່ງຝ່າຍໂຈດຢູ່ໃນຄຳແກ້ຟ້ອງ, ຄຳຟ້ອງແຍ່ງ ແລະ ຄຳໃຫ້ການທີ່ໄດ້ສະເໜີຕໍ່ຄະນະສານມາກ່ອນນັ້ນ. ທຸກບັນຫາທີ່ຍັງບໍ່ທັນແຈ້ງຂາວ ແລະ ຊັດເຈນທີ່ຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍໄດ້ສະເໜີມາກ່ອນນັ້ນພວກກ່ຽວກໍຕ້ອງໄດ້ຊີ້ແຈງ, ອະທິບາຍກ່ຽວກັບປະເດັນ ແລະ ບັນຫາດັ່ງກ່າວຕໍ່ຄະນະສານ.

ເມື່ອຄະນະສານໄດ້ໄຕ່ສວນຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍສິ້ນສຸດລົງແລ້ວ, ຄະນະສານກໍໃຫ້ສິດແກ່ໂຈດ ແລະ ບຸກຄົນທີສາມຝ່າຍໂຈດໄດ້ມີຄຳເຫັນ ຫຼື ໂຕ້ແຍ່ງຕໍ່ປະເດັນ ຫຼື ບັນຫາທີ່ຝ່າຍຈຳເລີຍໄດ້ສະເໜີ ແລະ ຍົກຂຶ້ນມານັ້ນຄືກັນກັບການໃຫ້ສິດແກ່ຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍໄດ້ສະເໜີ ພາຍຫຼັງທີ່ສຳເລັດການໄຕ່ສວນໂຈດ ແລະ ບຸກຄົນທີສາມຝ່າຍໂຈດ ຕາມທີ່ໄດ້ອະທິບາຍໄວ້ໃນຂໍ້ ກ ເທິງນີ້.

**ຄ. ການໄຕ່ສວນພະຍານ**

ກ່ອນທີ່ຄະນະສານຈະເລີ່ມການໄຕ່ສວນພະຍານໃນທີ່ປະຊຸມສານນັ້ນ, ປະທານຄະນະສານຈະເປັນຜູ້ອະທິບາຍເຫດຜົນຂອງປະເດັນ ຫຼື ບັນຫາທີ່ພົວພັນກັບຄະດີ ພ້ອມທັງແຈ້ງສິດ, ພັນທະ ແລະຄວາມຮັບຜິດຊອບຂອງບັນດາພະຍານຕໍ່ການໃຫ້ການເທັດ (ໃຫ້ການບໍ່ຖືກຕາມຄວາມຈິງ) ກ່ອນ. ຫຼັງຈາກນັ້ນ ຄະນະສານກໍຈະເລີ່ມການໄຕ່ສວນໂດຍສະເໜີໃຫ້ພະຍານລາຍງານກ່ຽວກັບເຫດການຂອງຄະດີໃຫ້ລະອຽດ ໂດຍສະເພາະກໍແມ່ນຄວາມເປັນມາຂອງຄະດີ ແລະສາຍກ່ຽວພັນລະຫວ່າງພະຍານ ແລະ ເຫດການຂອງຄະດີ ແລ້ວຈຶ່ງຖາມບັນຫາທີ່ຍັງບໍ່ທັນຈະແຈ້ງຕ່າງໆຕາມລຳດັບ.

ໃນກໍລະນີທີ່ພະຍານໄດ້ໃຫ້ການໃນທີ່ປະຊຸມສານ ຫາກຂັດກັບຄຳໃຫ້ການຂອງຜູ້ກ່ຽວທີ່ໄດ້ໃຫ້ການໃນໄລຍະເວລາດຳເນີນຄະດີຜ່ານມານັ້ນ ຄະນະສານກໍຈະໃຫ້ພະຍານຜູ້ນັ້ນຊີ້ແຈງຕໍ່ກັບຄຳໃຫ້ການດັ່ງກ່າວ ພ້ອມທັງໃຫ້ຜູ້ກ່ຽວຊີ້ແຈງບັນຫາອື່ນໆທີ່ພົວພັນກັບຄະດີ. ນອກຈາກພະຍານຈະໃຫ້ການ ແລະ ຊີ້ແຈງບັນຫາຕ່າງໆທີ່ພົວພັນກັບຄະດີແລ້ວ, ຝ່າຍໂຈດ ແລະ ຝ່າຍຈຳເລີຍ ຫຼື ຜູ້ປົກປ້ອງຂອງຄູ່ຄວາມທັງສອງຝ່າຍຍັງສາມາດຊັກຖາມບັນດາພະຍານທີ່ພວກກ່ຽວຍັງມີບັນຫາ ແລະ ຂໍ້ຂ້ອງໃຈຕໍ່ກັບບັນຫາທີ່ພະຍານໄດ້ໃຫ້ການ ແລະ ຊີ້ແຈງຜ່ານມານັ້ນໄດ້[87].

ການໄຕ່ສວນບຸກຄົນທີ່ມີອາຍຸຕ່ຳກວ່າສິບແປດປີ, ຄົນຫູໜວກ, ປາກກືກ ແລະຄົນປັນຍາອ່ອນເສັຍຈິດຕ້ອງໃຫ້ມີການເຂົ້າຮ່ວມຂອງຜູ້ປົກປ້ອງ, ພໍ່ແມ່ ຫຼື ຜູ້ປົກຄອງ ຫຼື ຜູ້ຕາງໜ້າອື່ນໆມາເຂົ້າຮ່ວມໃນທີ່ປະຊຸມສານ. ໃນເວລາໄຕ່ສວນບຸກຄົນທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ ອາດໃຫ້ຜູ້ເຂົ້າຮ່ວມອື່ນໆໃນຄະດີອອກຈາກຫ້ອງປະຊຸມສານ. ແຕ່ພາຍຫຼັງໄຕ່ສວນສຳເລັດແລ້ວ ຄະນະສານກໍແຈ້ງຄຳໃຫ້ການຂອງບຸກຄົນດັ່ງກ່າວນັ້ນໃຫ້ພວກກ່ຽວຮັບຮູ້ ແລະ

---

[86] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 11 ວັກ 02 ໄດ້ກຳນົດໄວ້ວ່າ ໃນການໄຕ່ສວນຂອງຄະນະສານຕ້ອງຮັບປະກັນໃຫ້ຄູ່ຄວາມໄດ້ນຳສະເໜີຫຼັກຖານ ແລະອະທິບາຍຊີ້ແຈງຂໍ້ມູນຫຼັກຖານຂອງຕົນ ຫຼື ໂຕ້ຖຽງຕໍ່ຫຼັກຖານຂອງຝ່າຍກົງກັນຂ້າມ.

[87] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 232.

ໃຫ້ສິດແກ່ພວກກ່ຽວຖາມບຸກຄົນດັ່ງກ່າວໄດ້. ພາຍຫຼັງຄະນະສານໄດ້ໄຕ່ສວນເອົາຄຳໃຫ້ການເດັກທີ່ມີອາຍຸບໍ່ເຖິງສິບແປດປີສຳເລັດແລ້ວ ຖ້າຫາກຄະນະສານເຫັນວ່າເດັກດັ່ງກ່າວບໍ່ມີຄວາມຈຳເປັນໃຫ້ຢູ່ຫ້ອງປະຊຸມສານຕໍ່ໄປອີກນັ້ນ ຄະນະສານກໍຈະໃຫ້ອອກຈາກຫ້ອງປະຊຸມສານ.

ສຳລັບຄຳໃຫ້ການທີ່ໄດ້ຈາກການໄຕ່ສວນບຸກຄົນທີ່ມີອາຍຸຕໍ່າກວ່າ ສິບແປດ ປີ, ຄົນຫູໜວກ, ປາກກືກ ແລະ ຄົນປັນຍາອ່ອນເສັຍຈິດ ແລະ ຍາດພີ່ນ້ອງໃກ້ຊິດຂອງຄູ່ຄວາມຝ່າຍໃດຝ່າຍໜຶ່ງນັ້ນສາມາດນຳມາເປັນຂໍ້ມູນໃນການຄົ້ນຄ້ວາ ແຕ່ບໍ່ສາມາດນຳມາເປັນພະຍານ ຫຼື ຫຼັກຖານໃນການພິຈາລະນາຕັດສິນຄະດີຂອງສານໄດ້[88].

**ງ. ການສະເໜີຫຼັກຖານເພີ່ມເຕີມໃນທີ່ປະຊຸມສານ**

ການສະເໜີຫຼັກຖານເພີ່ມເຕີມໃນທີ່ປະຊຸມສານ ແມ່ນການປະກອບບັນດາຫຼັກຖານຕ່າງໆຂອງຄູ່ຄວາມທີ່ຍັງບໍ່ທັນໄດ້ປະກອບໃຫ້ສານ ຫຼື ປະກອບແລ້ວແຕ່ຍັງບໍ່ທັນຄົບຖ້ວນໃນເວລາດຳເນີນຄະດີດັ່ງກ່າວ ຊຶ່ງຫຼັກຖານນັ້ນປະກອບດ້ວຍຫຼັກຖານທາງດ້ານວັດຖຸ, ຫຼັກຖານທາງດ້ານເອກະສານ ແລະ ຫຼັກຖານທາງດ້ານບຸກຄົນ.

**1) ການສະເໜີຫຼັກຖານທາງດ້ານວັດຖຸ**

ການສະເໜີຫຼັກຖານທາງດ້ານວັດຖຸ ແມ່ນການສະເໜີຫຼັກຖານທີ່ເປັນວັດຖຸໃນໄລຍະເວລາຂອງການໄຕ່ສວນຄະດີໃນທີ່ປະຊຸມສານ, ຖ້າຄະນະສານຫາກເຫັນວ່າມີຄວາມຈຳເປັນຕ້ອງມີຫຼັກຖານທາງດ້ານວັດຖຸມາເພີ່ມເຕີມ, ຄະນະສານກໍຈະໃຫ້ໂຈດ,ຈຳເລີຍ ແລະ ບຸກຄົນທີສາມ ນຳມາປະກອບໃຫ້ແກ່ສານ ຫຼື ຄູ່ຄວາມທັງສອງຝ່າຍ ຫຼື ຝ່າຍໃດຝ່າຍໜຶ່ງຫາກໄດ້ສະເໜີເອງນັ້ນ ຄະນະສານກໍຈະໃຫ້ຄູ່ຄວາມນຳມາສະເໜີ ຫຼື ຢັ້ງຢືນກ່ຽວກັບຫຼັກຖານດັ່ງກ່າວຕໍ່ທີ່ປະຊຸມສານ ເພື່ອເຮັດໃຫ້ເຫດການຂອງຄະດີມີຄວາມຊັດເຈນ, ແຈ້ງຂາວຂຶ້ນຕື່ມອີກ. ສຳລັບຫຼັກຖານທາງດ້ານວັດຖຸກໍອາດຈະເປັນຫຼັກຖານທີ່ຄູ່ຄວາມໄດ້ສະເໜີ ຫຼື ບໍ່ທັນໄດ້ສະເໜີມາກ່ອນ.

**ຕົວຢ່າງ:** ຝ່າຍຈຳເລີຍໄດ້ມີວັດຖຸໃດໜຶ່ງທີ່ເຊື່ອວ່າວັດຖຸດັ່ງກ່າວຈະເປັນຫຼັກຖານໃຫ້ແກ່ການພິຈາລະນາຕັດສິນຄະດີຂອງຄະນະສານ, ແຕ່ວັດຖຸດັ່ງກ່າວນັ້ນຝ່າຍຈຳເລີຍຍັງບໍ່ທັນໄດ້ປະກອບໃຫ້ແກ່ສານເທື່ອ ຫຼື ປະກອບໃຫ້ແລ້ວແຕ່ບໍ່ທັນຄົບຖ້ວນໃນເວລາທີ່ຜູ່ພິພາກສາຄົ້ນຄ້ວາເກັບກຳຂໍ້ມູນດຳເນີນຄະດີ ແລະຝ່າຍຈຳເລີຍເອງກໍສະເໜີວ່າຈະເອົາມາຢັ້ງຢືນໃຫ້ຄະນະສານຢູ່ໃນທີ່ປະຊຸມສານ, ໃນກໍລະນີນີ້ຝ່າຍຈຳເລີຍກໍສາມາດນຳມາສະເໜີ ແລະຢັ້ງຢືນຕໍ່ທີ່ປະຊຸມສານໄດ້ ຊຶ່ງເອີ້ນວ່າ ການສະເໜີຫຼັກຖານທາງດ້ານວັດຖຸໃນທີ່ປະຊຸມສານ.

**2) ການສະເໜີຫຼັກຖານທາງດ້ານເອກະສານ**

ການສະເໜີຫຼັກຖານທາງດ້ານເອກະສານ ແມ່ນການສະເໜີຫຼັກຖານທີ່ໃນໄລຍະເວລາດຳເນີນຄະດີຂອງສານນັ້ນ ໂຈດ, ຈຳເລີຍ, ບຸກຄົນທີສາມ, ພະຍານ ແລະ ຜູ່ກ່ຽວຂ້ອງໄດ້ໃຫ້ການ ແລະ ຜູ້ພິພາກສາທີ່ຮັບຜິດຊອບຄະດີ ກໍໄດ້ບັນທຶກຂໍ້ມູນ ຫຼື ໄດ້ສອບຖາມເອົາຄຳໃຫ້ການເປັນທີ່ຮຽບຮ້ອຍແລ້ວ, ແຕ່ເວລາທີ່ຄະນະສານໄຕ່ສວນໃນທີ່ປະຊຸມສານນັ້ນ ພວກກ່ຽວຫາກບໍ່ໄດ້ເຂົ້າມາຮ່ວມຄະນະສານກໍຈະນຳເອົາຂໍ້ມູນ ຫຼື ຄຳໃຫ້ການຂອງພວກກ່ຽວທີ່ໄດ້ບັນທຶກໄວ້ແລ້ວນັ້ນມາອ່ານຕໍ່ທີ່ປະຊຸມສານ. ໃນກໍລະນີທີ່ພວກກ່ຽວຫາກໄດ້ເຂົ້າມາຮ່ວມໃນທີ່ປະຊຸມສານ ແຕ່ຜ່ານການໄຕ່ສວນແລ້ວເຫັນວ່າຂໍ້ມູນ ຫຼື ຄຳໃຫ້ການໃນເວລາໄຕ່ສວນ ແລະ ຂໍ້ມູນ ຫຼື ຄຳໃຫ້ການທີ່ໄດ້ບັນທຶກໄວ້ໃນໄລຍະຜ່ານມານັ້ນຫາກບໍ່ກົງກັນ ຫຼື ຂັດກັນ ຄະນະສານກໍຈະໃຫ້ຜູ້ກ່ຽວຊີ້ແຈງ ແລະ ອະທິບາຍກ່ຽວກັບບັນຫາທີ່ຂັດກັນນັ້ນຕໍ່ທີ່ປະຊຸມສານ.

ໃນກໍລະນີຫຼັກຖານທາງດ້ານເອກະສານທີ່ເປັນຄວາມລັບຂອງລັດ, ຄວາມລັບທາງລັດຖະການ ຫຼື ຄວາມລັບສ່ວນຕົວຂອງບຸກຄົນນັ້ນ ຄະນະສານຈະບໍ່ອະນຸຍາດໃຫ້ນຳອອກມາສະເໜີໃນທີ່ປະຊຸມສານ, ຖ້າຫາກຝ່າຍທີ່ຢາກສະເໜີ ຫຼື ປະກອບຫຼັກຖານດັ່ງກ່າວຕ້ອງປະກອບໃຫ້ແກ່ສານໃນເວລາດຳເນີນຄະດີ ຫຼື ຍື່ນຕໍ່ສານເກັບໄວ້ໃນສຳນວນຄະດີ ເພື່ອໃຫ້ຄະນະສານພິຈາລະນາ.

---

[88] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 80 ວັກ 02.

**ຕົວຢ່າງ:** ຜູ້ຊ່ຽວຊານໄດ້ກວດພິສູດເອກະສານໃດໜຶ່ງ ແລະ ຜ່ານມາຜູ້ກ່ຽວກໍໄດ້ມີບົດສະຫຼຸບຜົນຂອງການກວດພິສູດປະກອບໃຫ້ແກ່ສານແລ້ວ ແຕ່ໃນມື້ປະຊຸມສານນັ້ນ ຄະນະສານກໍໄດ້ອອກໝາຍເຊີນຜູ້ກ່ຽວເພື່ອເຂົ້າມາຮ່ວມການປະຊຸມສານອີກ ຖ້າຄະນະສານຫາກເຫັນວ່າຜູ້ກ່ຽວຈຳເປັນຕ້ອງໄດ້ອະທິບາຍບັນຫາໃດໜຶ່ງເພີ່ມເຕີມຕໍ່ຄະນະສານ ແຕ່ຜູ້ກ່ຽວບໍ່ສາມາດເຂົ້າມາຮ່ວມໄດ້ ຄະນະສານກໍຈະຖືເອົາ ແລະ ແຈ້ງບົດສະຫຼຸບຜົນຂອງການກວດພິສູດດັ່ງກ່າວຕໍ່ທີ່ປະຊຸມສານ ເພື່ອໃຫ້ຄູ່ຄວາມ ແລະ ຜູ້ເຂົ້າຮ່ວມໃນຫ້ອງປະຊຸມສານຮັບຮູ້.

**3) ການສະເໜີຫຼັກຖານທາງດ້ານບຸກຄົນ**

ການໄຕ່ສວນເພື່ອເປັນຫຼັກຖານທາງດ້ານບຸກຄົນ ຫາດແທ້ກໍແມ່ນການເອົາຄຳໃຫ້ການຂອງພະຍານ ແລະ ເປັນຫຼັກຖານທີ່ໄດ້ມາຈາກຄຳໃຫ້ການຂອງບຸກຄົນທີ່ຮູ້ເຫັນເຫດການຂອງຄະດີ ຊຶ່ງໄດ້ເຂົ້າຮ່ວມໃນການໄຕ່ສວນ ພ້ອມທັງເປັນຫຼັກຖານທີ່ຝ່າຍໂຈດ ແລະ ຝ່າຍຈຳເລີຍບໍ່ເຄີຍໄດ້ສະເໜີຕໍ່ສານສອບສວນເອົາຄຳໃຫ້ການໃນເວລາທີ່ຜູ້ພິພາກສາດຳເນີນຄະດີມາກ່ອນ.

ໃນເວລາຄະນະສານໄດ້ໄຕ່ສວນຄະດີໃນທີ່ປະຊຸມສານ ຖ້າໂຈດ, ຈຳເລີຍ ແລະບຸກຄົນທີສາມ ຫາກເຫັນວ່າຕົນເອງຍັງມີບັນຫາທີ່ຈະສະເໜີໃຫ້ຄະນະສານໄຕ່ສວນບຸກຄົນໃດໜຶ່ງທີ່ເຫັນວ່າບຸກຄົນດັ່ງກ່າວຈະເປັນຫຼັກຖານທາງດ້ານບຸກຄົນ ແລະເປັນເຫດຜົນທີ່ຈະເຮັດໃຫ້ຄະນະສານນຳມາພິຈາລະນາຕັດສິນໃຫ້ແກ່ຝ່າຍຕົນ, ແຕ່ບຸກຄົນທີ່ໂຈດ, ຈຳເລີຍ ແລະບຸກຄົນທີສາມ ໄດ້ສະເໜີໃຫ້ໄຕ່ສວນນັ້ນ ໃນໄລຍະດຳເນີນຄະດີຜ່ານມາຜູ້ກ່ຽວແມ່ນຍັງບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີ ຫຼື ບໍ່ເຄີຍໄດ້ໃຫ້ການຕໍ່ສານມາກ່ອນ.

ໃນກໍລະນີບຸກຄົນທີ່ໂຈດ, ຈຳເລີຍ ແລະບຸກຄົນທີສາມ ໄດ້ສະເໜີໃຫ້ຄະນະສານໄຕ່ສວນນັ້ນຫາກໄດ້ເຂົ້າຮ່ວມໃນການດຳເນຄະດີ ຫຼື ຜູ້ພິພາກສາທີ່ຮັບຜິດຊອບຄົ້ນຄ້ວາຄະດີໄດ້ສອບສວນເອົາຄຳໃຫ້ການມາກ່ອນແລ້ວ ຄະນະສານຈະບໍ່ໄຕ່ສວນບຸກຄົນດັ່ງກ່າວຄືນໃໝ່ອີກ. ຊຶ່ງການໄຕ່ສວນນັ້ນ ຄະນະສານກໍປະຕິບັດຕາມບາດກ້າວ ຫຼື ຂັ້ນຕອນຂອງການໄຕ່ສວນພະຍານຕາມທີ່ໄດ້ອະທິບາຍໄວ້ໃນຂໍ້ ຄ ເທິງນີ້.

ສຳລັບຂັ້ນຕອນ ຫຼື ບາດກ້າວຂອງການໄຕ່ສວນບຸກຄົນ ທີ່ເປັນຫຼັກຖານທາງດ້ານບຸກຄົນ ແມ່ນຄະນະສານປະຕິບັດຄືກັນກັບການໄຕ່ສວນພະຍານຕາມທີ່ອະທິບາຍມາຂ້າງເທິງ, ແຕ່ກໍຍັງມີຈຸດແຕກຕ່າງກັນຄື ການໄຕ່ສວນພະຍານແມ່ນການໄຕ່ສວນບຸກຄົນທີ່ໂຈດ, ຈຳເລີຍ ແລະບຸກຄົນທີສາມ ໄດ້ສະເໜີ ຫຼື ຄະນະສານໄດ້ມີຂໍ້ມູນ ແລະຮັບຮູ້ແລ້ວວ່າຈະໄດ້ໄຕ່ສວນບຸກຄົນດັ່ງກ່າວໃນທີ່ປະຊຸມສານ. ສ່ວນການໄຕ່ສວນບຸກຄົນທີ່ຈະນຳມາເປັນຫຼັກຖານທາງດ້ານບຸກຄົນ ແມ່ນການໄຕ່ສວນບຸກຄົນທີ່ໂຈດ, ຈຳເລີຍ ແລະ ບຸກຄົນທີສາມ ບໍ່ເຄີຍໄດ້ສະເໜີຕໍ່ສານສອບສວນເອົາຄຳໃຫ້ການໃນເວລາທີ່ຜູ້ພິພາກສາເກັບກຳຂໍ້ມູນກ່ຽວກັບຄະດີ ແລະ ຄະນະສານທີ່ຈະຂຶ້ນພິຈາລະນາຕັດສິນຄະດີໃນທີ່ປະຊຸມສານນັ້ນກໍບໍ່ຮູ້ມາກ່ອນວ່າຈະໄດ້ໄຕ່ສວນ ຫຼື ເກັບກຳຂໍ້ມູນນຳຜູ້ກ່ຽວ, ແຕ່ໂຈດ, ຈຳເລີຍ ແລະບຸກຄົນທີສາມ ໄດ້ສະເໜີໃຫ້ຄະນະສານໄຕ່ສວນບຸກຄົນດັ່ງກ່າວໃນເວລາໄຕ່ສວນຢູ່ທີ່ປະຊຸມສານ ເພື່ອໃຫ້ສານນຳເອົາຄຳໃຫ້ການຂອງບຸກຄົນເຫຼົ່ານັ້ນ ມາເປັນຫຼັກຖານທາງດ້ານບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 235 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ 2012.

**ຕົວຢ່າງ:** ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ໄດ້ສະເໜີໃຫ້ຄະນະສານໄຕ່ສວນບຸກຄົນໃດໜຶ່ງເພີ່ມເຕີມ, ຊຶ່ງບຸກຄົນດັ່ງກ່າວນັ້ນ ຍັງບໍ່ເຄີຍໄດ້ເຂົ້າຮ່ວມໃນການດຳເນີນຄະດີ ແລະ ບໍ່ເຄີຍໃຫ້ການຕໍ່ສານໃນເວລາທີ່ຜູ້ພິພາກສາທີ່ຮັບຜິດຊອບຄົ້ນຄ້ວາຄະດີໄດ້ດຳເນຄະດີດັ່ງກ່າວມາກ່ອນ, ແຕ່ຄູ່ຄວາມຝ່າຍໃດຝ່າຍໜຶ່ງໄດ້ມາສະເໜີໃນທີ່ປະຊຸມສານ ເພື່ອໃຫ້ຄະນະສານໄຕ່ສວນເອົາຄຳໃຫ້ການຂອງຜູ້ກ່ຽວ ຊຶ່ງຄະນະສານກໍຈະໄຕ່ສວນບຸກຄົນດັ່ງກ່າວ ແລະ ການໄຕ່ສວນນັ້ນ ແມ່ນເປັນການເກັບກຳຂໍ້ມູນຫຼັກຖານທາງດ້ານບຸກຄົນເພີ່ມເຕີມ.

**ຈ. ການຟັງຄຳເຫັນຂອງຜູ້ຊ່ຽວຊານ ຫຼື ຜູ້ຕາງໜ້າຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ**

ຄະດີໃດຫາກມີຜູ້ຊ່ຽວຊານໃນຂະແໜງການໃດໜຶ່ງ ຫຼື ໄດ້ມີພະນັກງານ ຊຶ່ງເປັນຜູ້ຕາງໜ້າຂອງອົງການຈັດຕັ້ງທີ່ກ່ຽວຂ້ອງໄດ້ເຂົ້າມາຮ່ວມໃນການໄຕ່ສວນຢູ່ທີ່ປະຊຸມສານ ເຊັ່ນ ຜູ້ຊ່ຽວຊານກວດພິສູດຊັບສິ່ງຂອງໃດໜຶ່ງ ຫຼື ພະນັກງານຜູ້ຕາງໜ້າຈາກຫ້ອງການທີ່ຄູ່ຄວາມຝ່າຍໃດຝ່າຍໜຶ່ງໄດ້ສັງກັດຢູ່. ພາຍຫຼັງທີ່ໄດ້ມີການສະເໜີ, ໄຕ່ສວນ ແລະ

ປະກອບຫຼັກຖານຕ່າງໆຂອງຄູ່ຄວາມ ແລະ ຜູ້ເຂົ້າຮ່ວມໃນທີ່ປະຊຸມສານແລ້ວ ຄະນະສານກໍສະເໜີໃຫ້ຜູ້ຊ່ຽວຊານໄດ້ມີຄໍາເຫັນໃນປະເດັນທີ່ມີຂໍ້ສົງໄສຕໍ່ຜົນການກວດພິສູດທີ່ຜູ້ກ່ຽວໄດ້ທໍາການກວດພິສູດຜ່ານມາ ເພື່ອອະທິບາຍເພີ່ມເຕີມຕໍ່ການກວດພິສູດດັ່ງກ່າວ ແລະ ໃນກໍລະນີທີ່ມີຜູ້ຕາງໜ້າຂອງອົງການທີ່ກ່ຽວຂ້ອງໃນຄະດີໄດ້ເຂົ້າຮ່ວມໃນການໄຕ່ສວນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງພະນັກງານທີ່ສັງກັດຢູ່ໃນອົງການຈັດຕັ້ງ ຫຼື ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຄະນະສານກໍໃຫ້ຜູ້ຕາງໜ້າຂອງອົງການຈັດຕັ້ງທີ່ເຂົ້າຮ່ວມນັ້ນ ໄດ້ມີຄໍາເຫັນຕໍ່ທີ່ປະຊຸມສານ ເພື່ອເຮັດໃຫ້ຄະດີມີຄວາມຊັດເຈນ, ແຈ້ງຂາວ, ມີຂໍ້ມູນຫຼັກຖານໜັກແໜ້ນ ແລະ ພຽງພໍ ຊຶ່ງຈະພາໃຫ້ຄະນະສານສາມາດພິຈາລະນາຕັດສິນດ້ວຍຄວາມຍຸຕິທໍາ ພ້ອມທັງຖືກຕ້ອງຕາມລະບຽບກົດໝາຍ ແລະ ສອດຄ່ອງກັບເຫດການຕົວຈິງຂອງຄະດີ.

**3.3. ການໂຕ້ຖຽງໃນທີ່ປະຊຸມສານ**

ການໂຕ້ຖຽງໃນທີ່ປະຊຸມສານ ເນື້ອແທ້ກໍແມ່ນການອອກຄໍາຄິດຄໍາເຫັນທີ່ມີລັກສະນະໂຕ້ແຍ່ງລະຫວ່າງໂຈດ ແລະ ຈໍາເລີຍ ຢູ່ທີ່ປະຊຸມສານກ່ຽວກັບເຫດການ ແລະ ຄວາມເປັນຈິງຂອງຄະດີ ໂດຍຄະນະສານຈະເປັນຜູ້ນໍາເອົາບັນດາຂໍ້ມູນຫຼັກຖານທີ່ຄູ່ຄວາມໄດ້ປະກອບໃຫ້ສານມາກ່ອນນັ້ນ ແລະ ບັນດາຂໍ້ມູນຫຼັກຖານທີ່ຜູ້ພິພາກສາຜູ້ຮັບຜິດຊອບຄົ້ນຄ້ວາດໍາເນີນຄະດີເກັບກໍາມາ ພ້ອມທັງສັງລວມເອົາບັນດາປະເດັນທີ່ໂຈດ ແລະ ຈໍາເລີຍ ຫຼື ບັນຫາທີ່ຄະນະສານຍັງມີຂໍ້ສົງໄສ ແລະ ຈຸດຂັດແຍ່ງນັ້ນ ເພື່ອຍົກຂຶ້ນມາໂຕ້ຖຽງກັນ.

ໃນການດໍາເນການໂຕ້ຖຽງ ປະທານຄະນະສານຈະເປັນຜູ້ເປີດການໂຕ້ຖຽງລະຫວ່າງໂຈດກັບຈໍາເລີຍ ພ້ອມທັງຜູ້ປົກປ້ອງຂອງພວກກ່ຽວ (ຖ້າມີ) ໂດຍຈະໃຫ້ຝ່າຍໂຈດໄດ້ມີຄໍາເຫັນຕໍ່ຫຼັກຖານທີ່ໄດ້ນໍາສະເໜີຂຶ້ນມາກ່ອນ ແລະ ພາຍຫຼັງທີ່ໂຈດໄດ້ມີຄໍາເຫັນຕໍ່ຫຼັກຖານດັ່ງກ່າວເປັນທີ່ຮຽບຮ້ອຍແລ້ວ ຈຶ່ງໃຫ້ຝ່າຍຈໍາເລີຍມີຄໍາເຫັນ. ໃນໄລຍະເວລາດໍາເນີນການໂຕ້ຖຽງ, ຖ້າຫາກໂຈດ ແລະຈໍາເລີຍ ຍັງມີຂໍ້ມູນຫຼັກຖານໃດທີ່ຍັງບໍ່ທັນໄດ້ສະເໜີ ຫຼື ບໍ່ທັນໄດ້ປະກອບໃຫ້ສານໃນເວລາດໍາເນີນຄະດີ, ທັງສອງຝ່າຍກໍສາມາດນໍາເອົາເອກະສານ ຫຼື ຫຼັກຖານຕ່າງໆທີ່ຕົນເອງມີ ແລະ ຄິດວ່າຈະເປັນຜົນປະໂຫຍດໃຫ້ຄະນະສານພິຈາລະນາຕັດສິນຄະດີໃຫ້ແກ່ຝ່າຍຕົນເອງນັ້ນ ຜູ້ກ່ຽວກໍສາມາດນໍາອອກມາສະເໜີ ແລະ ປະກອບໃຫ້ແກ່ຄະນະສານຕື່ມອີກກໍໄດ້.

ຄະດີໃດມີບຸກຄົນທີສາມໄດ້ເຂົ້າຮ່ວມໃນທີ່ປະຊຸມສານ, ພາຍຫຼັງທີ່ໂຈດ ແລະຈໍາເລີຍ ໄດ້ໂຕ້ຖຽງກັນສໍາເລັດແລ້ວ ຄະນະສານກໍຈະໃຫ້ບຸກຄົນທີສາມ ໄດ້ມີຄໍາເຫັນ ຫຼື ຍົກຫຼັກຖານ ແລະ ປະເດັນທີ່ຕົນເອງຍັງບໍ່ທັນໄດ້ເປັນເອກະພາບກັນນັ້ນຂຶ້ນມາໂຕ້ຖຽງ. ໃນການພິຈາລະນາເວລາໂຕ້ຖຽງຢູ່ທີ່ປະຊຸມສານ ເຊັ່ນ ການຊັກຖາມໂຈດ, ຈໍາເລີຍ, ບຸກຄົນທີສາມ ພ້ອມທັງບັນດາພະຍານນັ້ນ ຄະນະສານຈະວາງຕົວເປັນກາງດ້ວຍເຫດຜົນຢ່າງມີຈຸດສຸມ ພ້ອມກັນນັ້ນກໍໃຫ້ໂອກາດ ແລະ ໃຫ້ສິດແຕ່ລະຝ່າຍໄດ້ມີຄໍາເຫັນອະທິບາຍ ແລະ ໂຕ້ຖຽງກັນຢ່າງເຕັມສ່ວນ ເພື່ອຊອກຫາຄວາມຖືກຕ້ອງ ແລະ ຄວາມເປັນຈິງໃນຄະດີ ພ້ອມທັງຮັບປະກັນໃນການລົງຄໍາຕັດສິນໃຫ້ໄດ້ຄວາມຍຸຕິທໍາ[89].

ຫຼັກຖານທີ່ເປັນລາຍລັກອັກສອນໃດທີ່ຍັງບໍ່ທັນຈະແຈ້ງ ຄະນະສານກໍຈະນໍາຂຶ້ນມາໂຕ້ຖຽງກັນໃນທີ່ປະຊຸມສານ ເພື່ອໃຫ້ໂຈດ ແລະຈໍາເລີຍ ໄດ້ມີຄໍາເຫັນຕໍ່ກັບຫຼັກຖານ ຫຼື ເອກະສານດັ່ງກ່າວ. ໃນກໍລະນີຈໍາເປັນ ແລະ ມີຂໍ້ມູນຫຼັກຖານໃດທີ່ກ່ຽວພັນກັບວິຊາສະເພາະໃດໜຶ່ງນັ້ນ ຄະນະສານກໍຈະເຊີນຜູ້ຊ່ຽວຊານ ຫຼື ພະນັກງານຈາກອົງການທີ່ກ່ຽວຂ້ອງເຂົ້າມາຊີ້ແຈງ ແລະໃຫ້ຄໍາເຫັນໃນທີ່ປະຊຸມສານ ຫຼື ອາດຈະນໍາສົ່ງເອກະສານຂໍ້ມູນຫຼັກຖານດັ່ງກ່າວໃຫ້ຂະແໜງການທີ່ກ່ຽວຂ້ອງທໍາການກວດພິສູດ.

ສໍາລັບຂໍ້ມູນຫຼັກຖານໃດທີ່ເປັນວັດຖຸແມ່ນມີຄວາມຈໍາເປັນຕ້ອງໄດ້ຮັບການຄົ້ນຄ້ວາພິຈາລະນາຂອງຄະນະສານ ແລະ ປະທານຄະນະສານ ກໍຈະນໍາສະເໜີຫຼັກຖານທາງດ້ານວັດຖຸນັ້ນຕໍ່ບຸກຄົນທີ່ເຂົ້າຮ່ວມຢູ່ທີ່ປະຊຸມສານ ແຕ່ໃນກໍລະນີຈໍາເປັນບົດບັນທຶກຂອງຂະແໜງການທີ່ກ່ຽວຂ້ອງໄດ້ທໍາການກວດພິສູດຈະແມ່ນກ່ອນ ຫຼື ໃນເວລາໂຕ້ຖຽງນັ້ນຄະນະສານກໍຈະໄດ້ແຈ້ງຕໍ່ຜູ້ເຂົ້າຮ່ວມໃນທີ່ປະຊຸມສານ ແລະ ພາຍຫຼັງທີ່ປະທານຄະນະສານໄດ້ແຈ້ງຕໍ່ທີ່ປະຊຸມ

[89] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 237

ສານແລ້ວ ບຸກຄົນທີ່ເຂົ້າຮ່ວມໃນຄະດີກໍມີສິດສະເໜີຄຳຄິດຄຳເຫັນຂອງຕົນຕໍ່ກັບຜົນຂອງການກວດພິສູດດັ່ງກ່າວ ພ້ອມກັນນັ້ນທຸກຄຳເຫັນຂອງຜູ້ຊ່ຽວຊານກໍຈະນຳສະເໜີຕໍ່ທີ່ປະຊຸມສານ ແລະບຸກຄົນທີ່ເຂົ້າຮ່ວມໃນຄະດີກໍສາມາດຊັກຖາມຜູ້ຊ່ຽວຊານໄດ້.

ເມື່ອໄດ້ຄົ້ນຄ້ວາຂໍ້ມູນຫຼັກຖານສຳເລັດແລ້ວ ຖ້າຫາກມີຜູ້ຕາງໜ້າຂອງອົງການຈັດຕັ້ງທີ່ກ່ຽວຂ້ອງໄດ້ເຂົ້າຮ່ວມໃນການພິຈາລະນາຄະດີໃນທີ່ປະຊຸມສານນັ້ນ, ຄະນະສານກໍຈະຟັງຄຳເຫັນຂອງຜູ້ຕາງໜ້າດັ່ງກ່າວ ຊຶ່ງຄະນະສານ ແລະ ບັນດາບຸກຄົນທີ່ເຂົ້າຮ່ວມໃນຄະດີ ຍັງສາມາດຖາມຜູ້ຕາງໜ້າຂອງອົງການຈັດຕັ້ງທີ່ກ່ຽວຂ້ອງນັ້ນໄດ້ ພ້ອມກັນນັ້ນ ຄູ່ຄວາມແຕ່ລະຝ່າຍຍັງສາມາດຊັກຖາມ ເຊິ່ງກັນ ແລະ ກັນ, ຍົກປະເດັນຂັດແຍ່ງ ຫຼື ຫຼັກຖານຕ່າງໆມາພິຈາລະນາໂຕ້ຖຽງກັນຕື່ມ ແຕ່ການໂຕ້ຖຽງນັ້ນແມ່ນຢູ່ພາຍໃຕ້ການນຳພາຂອງປະທານຄະນະສານ ເພື່ອໃຫ້ເຫດການຂອງຄະດີມີຄວາມແຈ້ງຂາວ ແລະ ຮັດກຸມຂຶ້ນຕື່ມ ທັງນີ້ກໍເພື່ອເຮັດໃຫ້ການເກັບກຳຂໍ້ມູນຫຼັກຖານໄດ້ໃນກໍລະນີເທົ່າທີ່ຈະໃນກໍລະນີໄດ້.

ເມື່ອຄະນະສານໄດ້ຄົ້ນຄ້ວາຫຼັກຖານ ແລະ ເຫດການຕ່າງໆຈະແຈ້ງແລ້ວ ປະທານຄະນະສານກໍໃຫ້ຜູ້ເຂົ້າຮ່ວມໃນຄະດີມີສິດສະເໜີເພີ່ມເຕີມ, ຕໍ່ຈາກນັ້ນຄະນະສານກໍໃຫ້ທະນາຍຄວາມ (ຖ້າມີ) ໄດ້ຖະແຫຼງກ່ຽວກັບຄະດີ ແລະຖ້າບໍ່ມີຄຳສະເໜີໃດໆຕື່ມອີກແລ້ວ ປະທານຄະນະສານກໍປະກາດປິດການໂຕ້ຖຽງ.

### 3.3.1. ລຳດັບຂອງການໂຕ້ຖຽງ

ພາຍຫຼັງການໄຕ່ສວນຄະດີໃນທີ່ປະຊຸມສານໄດ້ສິ້ນສຸດລົງແລ້ວ, ຄະນະສານກໍຈະເລີ່ມການໂຕ້ຖຽງຕາມລຳດັບໂດຍໃຫ້ໂຈດເປັນຜູ້ສະເໜີ ຫຼື ມີຄຳເຫັນຕໍ່ຂໍ້ມູນຫຼັກຖານ ຫຼື ປະເດັນທີ່ຍັງມີຂໍ້ສົງໄສ ແລະເປັນໃຈກາງຂອງຂໍ້ຂັດແຍ່ງທີ່ຄະນະສານໄດ້ຍົກຂຶ້ນມາໂຕ້ຖຽງນັ້ນກ່ອນ. ຖ້າເອກະສານ ຫຼື ຂໍ້ມູນຫຼັກຖານທີ່ຄະນະສານໄດ້ຍົກຂຶ້ນມາໂຕ້ຖຽງນັ້ນຫາກເປັນເອກະສານທີ່ຝ່າຍໂຈດໄດ້ນຳສະເໜີ ແລະ ປະກອບໃຫ້ແກ່ສານແລ້ວ ໂຈດເອງຕ້ອງໄດ້ຊີ້ແຈງ ແລະ ໃຫ້ເຫດຜົນຕໍ່ການສະເໜີ ພ້ອມທັງຢັ້ງຢືນກ່ຽວກັບເອກະສານ ແລະ ຂໍ້ມູນຫຼັກຖານດັ່ງກ່າວ. ຫຼັງຈາກນັ້ນຄະນະສານຈຶ່ງໃຫ້ຈຳເລີຍມີຄຳເຫັນ ແລະ ຊີ້ແຈງຄືນວ່າຮັບຮູ້ ຫຼື ປະຕິເສດແນວໃດຕໍ່ເອກະສານຂໍ້ມູນຫຼັກຖານດັ່ງກ່າວ, ຖ້າຈຳເລີຍໄດ້ປະຕິເສດກໍຕ້ອງໄດ້ນຳເອົາຫຼັກຖານມາຢັ້ງຢືນ ຫຼື ຊີ້ແຈງກ່ຽວກັບປະເດັນທີ່ມີຂໍ້ສົງໄສ ຫຼື ຂໍ້ຂັດແຍ່ງທີ່ຕົນເອງໄດ້ປະຕິເສດນັ້ນ.

ຄະດີໃດຫາກມີບຸກຄົນທີສາມເຂົ້າຮ່ວມໃນທີ່ປະຊຸມສານນັ້ນ ພາຍຫຼັງທີ່ໂຈດ ແລະ ຈຳເລີຍ ໄດ້ໂຕ້ຖຽງກັນສຳເລັດແລ້ວ ຄະນະສານກໍຈະໃຫ້ບຸກຄົນທີ່ສາມໄດ້ມີຄຳເຫັນ ຫຼື ຍົກຫຼັກຖານ ແລະ ປະເດັນທີ່ຕົນເອງຍັງບໍ່ທັນໄດ້ເປັນເອກະພາບກັນນັ້ນຂຶ້ນມາໂຕ້ຖຽງກັນ. ນອກຈາກນັ້ນ ຄະນະສານອາດຈະນຳເອົາຂໍ້ມູນຫຼັກຖານໃດໜຶ່ງທີ່ຄູ່ຄວາມ ຫຼື ບຸກຄົນທີສາມ ຍັງບໍ່ທັນໄດ້ເປັນເອກະພາບກັນນັ້ນຍົກຂຶ້ນມາໂຕ້ຖຽງກັນໃນທີ່ປະຊຸມສານຕື່ມອີກກໍໄດ້ ແລ້ວກໍຈະເລີ່ມການໂຕ້ຖຽງຕາມລຳດັບຂອງການໂຕ້ຖຽງເຊັ່ນດຽວກັນ.

### 3.3.2. ຂອບເຂດຂອງການໂຕ້ຖຽງ

ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012 ໂດຍສະເພາະມາດຕາ 239 ກໍບໍ່ໄດ້ກຳນົດລະອຽດກ່ຽວກັບກຳນົດເວລາຂອງການໂຕ້ຖຽງ ແລະການຊີ້ແຈງຂອງໂຈດ, ຈຳເລີຍ ລວມທັງບຸກຄົນທີສາມ, ແຕ່ໃນຂັ້ນຕອນ ຫຼື ບາດກ້າວຂອງການໂຕ້ຖຽງ ຄະນະສານໂດຍສະເພາະກໍແມ່ນປະທານຄະນະສານທີ່ບັນຊາຢູ່ໃນຫ້ອງປະຊຸມສານ ຈະເປັນຜູ້ຄວບຄຸມການໂຕ້ຖຽງໃຫ້ຢູ່ໃນຂອບເຂດປະເດັນທີ່ຂັດແຍ່ງກັນເທົ່ານັ້ນ ແຕ່ຖ້າໂຈດ, ຈຳເລີຍລວມທັງບຸກຄົນທີສາມ ຫຼື ຜູ້ເຂົ້າຮ່ວມໃນການພິຈາລະນາຄະດີຢູ່ທີ່ປະຊຸມສານ ຫາກມີຄຳເຫັນຍາວເກີນໄປ, ມີຄຳເຫັນທີ່ບໍ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ ຫຼື ຍົກຫຼັກຖານທີ່ບໍ່ກ່ຽວຂ້ອງກັບປະເດັນ ຫຼື ບັນຫາທີ່ກຳລັງໂຕ້ຖຽງກັນຢູ່ນັ້ນ, ປະທານຄະນະສານກໍຈະເປັນຜູ້ຄວບຄຸມໃຫ້ກັບເຂົ້າມາສູ່ປະເດັນທີ່ເປັນບັນຫາ ແລະຂໍ້ຂັດແຍ່ງຕົ້ນຕໍຂອງຄະດີ ເພື່ອໃຫ້ໄດ້ຂໍ້ມູນຫຼັກຖານທີ່ຊັດເຈນ, ແຈ້ງຂາວຂຶ້ນ ພ້ອມທັງເປັນການປະຢັດເວລາຂອງການພິຈາລະນາຄະດີໃນທີ່ປະຊຸມ

ສານອີກດ້ວຍ[90]. ນີ້ກໍສະແດງໃຫ້ເຫັນແລ້ວວ່າ ຜູ້ເຂົ້າຮ່ວມໃນການດໍາເນີນຄະດີຈະຕ້ອງໂຕ້ຖຽງກັນຢູ່ໃນຂອບເຂດຂອງບັນຫາ ຫຼື ຂໍ້ຂັດແຍ່ງ ຊຶ່ງເປັນປະເດັນທີ່ຄູ່ຄວາມຍັງບໍ່ທັນເປັນເອກະພາບກັນເທົ່ານັ້ນ ແລະ ຄະນະສານຈະບໍ່ອະນຸຍາດໃຫ້ອະທິບາຍ ຫຼື ມີຄໍາເຫັນອອກນອກປະເດັນຊຶ່ງບໍ່ເປັນຂໍ້ຂັດແຍ່ງ.

**ຕົວຢ່າງ:** ຂໍ້ຂັດແຍ່ງກ່ຽວກັບສັນຍາກູ້ຢືມເງິນ ແລະໂຈດໄດ້ຮ້ອງຟ້ອງຈໍາເລີຍ ເພື່ອທວງເອົາເງິນຄືນຈໍານວນ 10,000,000 ກີບ, ແຕ່ຈໍາເລີຍພັດອ້າງວ່າໄດ້ກູ້ຢືມນໍາໂຈດພຽງແຕ່ 5,000,000 ກີບ, ສະນັ້ນ ປະເດັນຂໍ້ຂັດແຍ່ງກໍແມ່ນເງິນຈໍານວນ 5,000,000 ກີບ ທີ່ຈໍາເລີຍໄດ້ປະຕິເສດບໍ່ຮັບຮູ້ ແລະ ຄະນະສານກໍຕ້ອງຍົກເອົາປະເດັນ ຫຼື ຫຼັກຖານກ່ຽວກັບເງິນຈໍານວນດັ່ງກ່າວນັ້ນຂຶ້ນມາໂຕ້ຖຽງ.

### 3.3.3. ການມີຄໍາເຫັນສຸດທ້າຍຂອງຄູ່ຄວາມ

ພາຍຫຼັງທີ່ຄະນະສານໄດ້ດໍາເນການໄຕ່ສວນ ແລະໂຕ້ຖຽງກັນຢູ່ທີ່ປະຊຸມສານ ພ້ອມທັງຄູ່ຄວາມໄດ້ຍົກຂໍ້ມູນຫຼັກຖານຄົບຖ້ວນ ແລະ ຈະແຈ້ງເປັນທີ່ຮຽບຮ້ອຍແລ້ວ ຄະນະສານກໍໃຫ້ໂຈດ, ຈໍາເລີຍ ລວມທັງບຸກຄົນທີສາມ ສັງລວມຄືນກ່ຽວກັບການຮ້ອງຟ້ອງ ແລະ ການແກ້ຟ້ອງ ຫຼື ການຟ້ອງແຍ່ງຂອງຕົນ ພ້ອມທັງມີຄໍາເຫັນສຸດທ້າຍກ່ຽວກັບຂໍ້ມູນຫຼັກຖານທີ່ໄດ້ສະເໜີຕໍ່ຄະນະສານນັ້ນວ່າມາຮອດນີ້ຄົບຖ້ວນ ແລະ ບໍ່ມີເອກະສານໃດຕື່ມອີກແລ້ວທີ່ຈະມາປະກອບໃຫ້ແກ່ສານ ຫຼື ຍັງມີຫຼັກຖານໃດທີ່ຍັງບໍ່ທັນໄດ້ປະກອບ ຫຼື ບໍ່ສາມາດນໍາມາສະເໜີ ແລະ ປະກອບໃຫ້ສານໄດ້ ທັງນີ້ກໍເພື່ອຮັບປະກັນໃຫ້ການພິຈາລະນາຕັດສິນຂອງສານຖືກຕ້ອງ ແລະ ໄດ້ຮັບຄວາມຍຸຕິທໍາ ທັງເປັນການສະກັດກັ້ນ ແລະ ປ້ອງກັນບໍ່ໃຫ້ຄູ່ຄວາມນໍາເອົາຂໍ້ມູນຫຼັກຖານໃໝ່ໄປສະເໜີ ຫຼື ປະກອບຢູ່ສານຂັ້ນເທິງ.

**ຕົວຢ່າງ:** ພາຍຫຼັງທີ່ຄະນະສານດໍາເນີນການໄຕ່ສວນ ແລະ ໂຕ້ຖຽງສໍາເລັດແລ້ວ ກ່ອນທີ່ປະທານຄະນະສານຈະສະເໜີໃຫ້ພະນັກງານໄອຍະການປະຊາຊົນທີ່ເຂົ້າຮ່ວມໃນທີ່ປະຊຸມສານໄດ້ມີຄໍາເຫັນ ຫຼື ຖະແຫຼງນັ້ນ, ປະທານຄະນະສານຈະຖາມຄູ່ຄວາມກ່ອນວ່າ ນອກຈາກທີ່ໄດ້ໄຕ່ສວນ ແລະໂຕ້ຖຽງກັນມານັ້ນ ໂຈດ, ຈໍາເລີຍ ລວມທັງບຸກຄົນທີສາມ ຍັງມີຂໍ້ມູນຫຼັກຖານໃດອີກທີ່ຈະປະກອບໃຫ້ແກ່ສານ ແລະ ຖ້າຄູ່ຄວາມຫາກບໍ່ມີຂໍ້ມູນຫຼັກຖານໃດເພີ່ມເຕີມ ແລະ ເຫັນວ່າຂໍ້ມູນຫຼັກຖານໃນສໍານວນຄະດີ ແລະ ຜົນຂອງການໄຕ່ສວນເຮັດໃຫ້ຄະດີແຈ້ງຂາວພໍທີ່ຈະໃຫ້ຄະນະສານລົງຄໍາຕັດສິນໄດ້ແລ້ວ ປະທານຄະນະສານກໍຈະໃຫ້ພະນັກງານໄອຍະການປະຊາຊົນຖະແຫຼງ ແລ້ວກໍປະກາດປິດປະຊຸມສານຊົ່ວຄາວ ເພື່ອນໍາເອົາຄະດີໄປພິຈາລະນາຢູ່ຫ້ອງປະຊຸມລັບ ແລະ ຮ່າງຄໍາຕັດສິນ.

## 3.4. ພະນັກງານໄອຍະການປະຊາຊົນຖະແຫຼງ

ເມື່ອການໂຕ້ຖຽງໄດ້ສິ້ນສຸດລົງ ພ້ອມທັງຄູ່ຄວາມໄດ້ມີຄໍາເຫັນສຸດທ້າຍ ແລະ ຖ້າຄະນະສານເຫັນວ່າຄະດີດັ່ງກ່າວນັ້ນ ໄດ້ມີຂໍ້ມູນຫຼັກຖານໜັກແໜ້ນ, ຄົບຖ້ວນ, ຮອບດ້ານ, ຊັດເຈນ ແລະ ແຈ້ງຂ່າວ ພໍທີ່ຈະໃຫ້ຄະນະສານລົງຄໍາຕັດສິນໄດ້ແລ້ວ ປະທານຄະນະສານກໍສະເໜີໃຫ້ພະນັກງານໄອຍະການປະຊາຊົນທີ່ໄດ້ເຂົ້າມາຮ່ວມໃນທີ່ປະຊຸມສານນັ້ນ ມີຄໍາເຫັນ ຫຼື ຖະແຫຼງກ່ຽວກັບການດໍາເນີນຄະດີວ່າ ການພິຈາລະນາຄະດີຢູ່ໃນທີ່ປະຊຸມສານ ໂດຍສະເພາະກໍແມ່ນການດໍາເນີນການປະຊຸມສານຂອງຄະນະສານໄດ້ປະຕິບັດຖືກຕ້ອງຕາມລະບຽບ ຫຼື ຂັ້ນຕອນຂອງກົດໝາຍໄດ້ກໍານົດໄວ້ ຫຼື ບໍ່, ພ້ອມທັງສະເໜີ ແລະ ໃຫ້ເຫດຜົນໃນການພິຈາລະນາ ເພື່ອໃຫ້ຄະນະສານຕັດສິນໃນຂັ້ນຕອນຕໍ່ໄປ.

ພາຍຫຼັງທີ່ພະນັກງານໄອຍະການປະຊາຊົນໄດ້ຖະແຫຼງຕໍ່ທີ່ປະຊຸມສານແລ້ວ ຄະນະສານຈະບໍ່ອະນຸຍາດໃຫ້ຄູ່ຄວາມ ຫຼື ຜູ້ເຂົ້າຮ່ວມໃນທີ່ປະຊຸມສານໄດ້ມີຄໍາເຫັນອີກ ແລະ ປະທານຄະນະສານກໍປະກາດປິດປະຊຸມສານຊົ່ວຄາວເພື່ອນໍາເອົາຄະດີໄປພິຈາລະນາຢູ່ຫ້ອງປະຊຸມລັບ ດ້ວຍການຊັ່ງຊາ, ຕີລາຄາຂໍ້ມູນຫຼັກຖານ, ລົງຄໍາເຫັນຊີ້ຂາດກ່ຽວກັບຄະດີ ແລະ ຮ່າງຄໍາຕັດສິນ ພ້ອມທັງສະເໜີໃຫ້ຄູ່ຄວາມ ແລະ ຜູ້ເຂົ້າຮ່ວມໃນທີ່ປະຊຸມສານນັ່ງລໍຖ້າຟັງການປະກາດຄໍາຕັດສິນ.

---

[90] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 239

### 3.5. ການພິຈາລະນາຄະດີໃນຫ້ອງປະຊຸມລັບ

ການພິຈາລະນາຄະດີຢູ່ໃນຫ້ອງປະຊຸມລັບ ຄະນະສານຈະພິຈາລະນາແຕ່ລະປະເດັນທີ່ຂັດແຍ່ງ ຫຼື ຮ້ອງຟ້ອງ ຫຼື ຟ້ອງແຍ່ງຂອງຄູ່ຄວາມ ພ້ອມທັງນຳເອົາຂໍ້ມູນຫຼັກຖານໃນສຳນວນຄະດີມາກວດກາ, ຊັ່ງຊາ, ຕີລາຄາດ້ວຍຄວາມໝັ້ນໃຈ ດ້ວຍຄວາມເປັນເອກະລາດຂອງຜູ້ພິພາກສາ ບົນພື້ນຖານຂໍ້ມູນຫຼັກຖານຕົວຈິງ ແລະ ເຫດຜົນທາງດ້ານກົດໝາຍ ຈຶ່ງຈະລົງຄຳເຫັນຊີ້ຂາດກ່ຽວກັບການຕັດສິນຄະດີດັ່ງກ່າວ.

ສຳລັບລະບຽບການລົງຄຳເຫັນ ແລະ ການອອກສຽງໃນການຕັດສິນຊີ້ຂາດກ່ຽວກັບຄະດີໃດໜຶ່ງນັ້ນ ຄະນະສານຈະຖືເອົາຕາມສຽງສ່ວນໃນກໍລະນີ ໂດຍໃຫ້ຄະນະສານ ຊຶ່ງເປັນຜູ້ພິພາກສາທີ່ມີຄຸນວຸດທິຕໍ່າກວ່າໝູ່ເປັນຜູ້ອອກຄຳເຫັນ ແລະ ອອກສຽງກ່ອນ, ສ່ວນປະທານຄະນະສານຈະລົງຄຳເຫັນ ແລະ ອອກສຽງເປັນຜູ້ສຸດທ້າຍ ຄະນະສານ ຫຼື ຜູ້ພິພາກສາຜູ້ໃດທີ່ບໍ່ເຫັນດີເອົາຕາມສຽງສ່ວນໃນກໍລະນີນັ້ນ ກໍມີສິດຂຽນຄຳຄິດຄຳເຫັນຂອງຕົນເອງໄວ້ໃນສຳນວນຄະດີ ເພື່ອໃຫ້ສານຂັ້ນເທິງໄດ້ກວດກາການຕັດສິນຕາມສຽງສ່ວນໃນກໍລະນີ ແລະ ຄຳເຫັນຂອງຜູ້ທີ່ບໍ່ເຫັນດີນັ້ນອັນໃດມີເຫດຜົນໜັກແໜ້ນກວ່າກັນ (ໃນກໍລະນີທີ່ມີການຮ້ອງຂໍອຸທອນ) ພ້ອມດຽວກັນນັ້ນ ກໍເປັນການປະເມີນຄວາມສາມາດຂອງຜູ້ພິພາກສາແຕ່ລະຄົນອີກດ້ວຍ. ໃນການພິຈາລະນາຄະດີຢູ່ໃນຫ້ອງປະຊຸມລັບ ຄະນະສານຈະເຮັດບົດບັນທຶກເພື່ອບັນທຶກຄຳເຫັນພ້ອມດ້ວຍເຫດຜົນ ແລະ ການລົງຄະແນນສຽງຂອງຜູ້ພິພາກສາທີ່ເປັນຄະນະສານຕັດສິນແຕ່ລະຄົນ ແລ້ວພ້ອມກັນລົງລາຍເຊັນໄວ້ໃນບົດບັນທຶກດັ່ງກ່າວ ເພື່ອໃຫ້ສານຂັ້ນເທິງໄດ້ກວດກາເຊັ່ນດຽວກັນ.

ສຳລັບຜູ້ທີ່ມີສິດໃນການພິຈາລະນາຄະດີຢູ່ໃນຫ້ອງປະຊຸມລັບນັ້ນ ຈະປະກອບດ້ວຍຜູ້ພິພາກສາ ສາມຄົນທີ່ໄດ້ຂຶ້ນປະຊຸມສານ (ຄະນະສານທີ່ຂຶ້ນບັນລັງ) ເທົ່ານັ້ນ, ຊຶ່ງຈ່າສານ ແລະພະນັກງານໄອຍະການປະຊາຊົນ ກໍບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນການພິຈາລະນາຄະດີຢູ່ໃນຫ້ອງປະຊຸມລັບນຳຄະນະສານນັ້ນໄດ້.

## 4. ການປະກາດຄຳຕັດສິນ

ພາຍຫຼັງທີ່ຄະນະສານໄດ້ພິຈາລະນາຄະດີຢູ່ໃນຫ້ອງປະຊຸມລັບ ແລະ ໄດ້ລົງຄຳເຫັນຊີ້ຂາດເປັນເອກະພາບກັນໃນການຕັດສິນ ພ້ອມທັງຮ່າງຄຳຕັດສິນສຳເລັດແລ້ວ, ຄະນະສານກໍກັບເຂົ້າມາໃນຫ້ອງປະຊຸມສານອີກຄັ້ງໜຶ່ງ ເພື່ອປະກາດຄຳຕັດສິນ ໂດຍປະທານຄະນະສານຈະເປັນຜູ້ປະກາດເປີດປະຊຸມສານຕໍ່ ແລະ ປະກາດ (ອ່ານ) ຄຳຕັດສິນ ຊຶ່ງກ່ອນຈະປະກາດຄຳຕັດສິນນັ້ນ ຈະໃຫ້ຄູ່ຄວາມຂຶ້ນມາຢືນຢູ່ຕໍ່ໜ້າຄະນະສານ ເພື່ອຟັງຄຳຕັດສິນ ແລະ ໃນເວລາທີ່ປະກາດຄຳຕັດສິນນັ້ນ ທຸກຄົນທີ່ຢູ່ໃນຫ້ອງປະຊຸມສານນັ້ນຕ້ອງໄດ້ລຸກຢືນຂຶ້ນທັງໝົດ ເພື່ອຟັງຄຳຕັດສິນຂອງສານ; ສ່ວນຄະນະສານ, ຈ່າສານ ແລະ ພະນັກງານໄອຍະການປະຊາຊົນ ແມ່ນສາມາດນັ່ງຮັບຟັງການປະກາດຄຳຕັດສິນນັ້ນໄດ້.

ໃນກໍລະນີທີ່ຄູ່ຄວາມຝ່າຍໃດຝ່າຍໜຶ່ງຫາກມີສຸຂະພາບບໍ່ແຂງແຮງ ຊຶ່ງໄດ້ມາເຂົ້າຮ່ວມໃນທີ່ປະຊຸມສານນັ້ນ ປະທານຄະນະສານກໍອະນຸຍາດໃຫ້ນັ່ງຮັບຟັງການປະກາດຄຳຕັດສິນໄດ້. ສ່ວນວິທີການປະກາດຄຳຕັດສິນ ປະທານຄະນະສານຈະເລີ່ມອ່ານນັບແຕ່ພາກວິນິດໄສເປັນຕົ້ນໄປຈົນສຳເລັດ[91] ໝາຍຄວາມວ່າ ອ່ານນັບແຕ່ພາກວິນິດໄສຈົນຮອດການແຈ້ງສິດໃນການຂໍອຸທອນຄຳຕັດສິນຂອງຄູ່ຄວາມ ຫຼື ການສະເໜີຄັດຄ້ານຄຳຕັດສິນຂອງຫົວໜ້າອົງການໄອຍະການປະຊາຊົນ.

ໃນກໍລະນີທີ່ມີຄວາມຈຳເປັນ ຊຶ່ງຄະນະສານເຫັນວ່າການພິຈາລະນາຄະດີໃນຫ້ອງປະຊຸມລັບ ແລະ ຮ່າງຄຳຕັດສິນຈະບໍ່ສຳເລັດ ຫຼື ມີເຫດຜົນໃດໜຶ່ງຊຶ່ງເປັນສາເຫດທີ່ບໍ່ສາມາດປະກາດຄຳຕັດສິນໃນມື້ນັ້ນໄດ້ ຄະນະສານກໍຈະເລື່ອນການປະກາດຄຳຕັດສິນໄປປະກາດມື້ໃໝ່ ແຕ່ຕ້ອງປະກາດພາຍໃນກຳນົດເວລາ ເຈັດວັນ ນັບແຕ່ມື້ທີ່ສານໄດ້ແຈ້ງການເລື່ອນການປະກາດຄຳຕັດສິນນັ້ນເປັນຕົ້ນໄປ. ປະການສຳຄັນການເລື່ອນການປະກາດຄຳຕັດສິນ ຄະນະສານຕ້ອງແຈ້ງເລື່ອນການປະກາດຄຳຕັດສິນກ່ອນທີ່ພະນັກງານໄອຍະການປະຊາຊົນມີຄຳເຫັນ ຫຼື ຖະແຫຼງຕໍ່ທີ່ປະ

---

[91] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012, ມາດຕາ 247.

ຊຸມສານ ຖ້າຫາກພະນັກງານໄອຍະການປະຊາຊົນໄດ້ມີຄໍາເຫັນ ຫຼື ຖະແຫຼງ ແລະ ປະທານຄະນະສານກໍໄດ້ປະກາດປິດປະຊຸມສານໄວ້ຊົ່ວຄາວ ເພື່ອນໍາເອົາຄະດີໄປພິຈາລະນາຢູ່ຫ້ອງປະຊຸມລັບແລ້ວ ກໍຈະບໍ່ອະນຸຍາດໃຫ້ເລື່ອນການປະກາດຄໍາຕັດສິນໄດ້ອີກ[92] ໝາຍຄວາມວ່າ ພາຍຫຼັງທີ່ໄດ້ປິດປະຊຸມສານໄວ້ຊົ່ວຄາວ ແລະ ໄດ້ນໍາເອົາຄະດີເຂົ້າໄປພິຈາລະນາຢູ່ໃນຫ້ອງປະຊຸມລັບແລ້ວ ຄະນະສານຕ້ອງລົງຄໍາເຫັນຊີ້ຂາດກ່ຽວກັບຜົນຂອງການຕັດສິນ ພ້ອມທັງຮ່າງຄໍາຕັດສິນ ແລ້ວອອກມາປະກາດຄໍາຕັດສິນເທົ່ານັ້ນ ຊຶ່ງຈະບໍ່ສາມາດເລື່ອນການປະກາດຄໍາຕັດສິນໄດ້ອີກ.

ພາຍຫຼັງທີ່ປະທານຄະນະສານໄດ້ປະກາດຄໍາຕັດສິນສໍາເລັດແລ້ວ ກໍຖືວ່າການພິຈາລະນາຄະດີໃນທີ່ປະຊຸມສານໄດ້ສິ້ນສຸດລົງ ແລະປະທານຄະນະສານກໍປະກາດປິດປະຊຸມສານ ພ້ອມທັງມອບຫ້ອງປະຊຸມສານໃຫ້ແກ່ຈ່າສານເປັນຜູ້ບໍລິຫານ ແລ້ວຄະນະສານກໍຈະອອກຈາກຫ້ອງປະຊຸມສານ. ຊຶ່ງຕໍ່ຈາກນັ້ນ ຈ່າສານຈະເປັນຜູ້ສືບຕໍ່ອະທິບາຍເຫດຜົນຂອງການຕັດສິນ, ອະທິບາຍລະບຽບກ່ຽວກັບການຂໍອຸທອນ ໂດຍສະເພາະແມ່ນອະທິບາຍໃຫ້ແກ່ຄູ່ຄວາມຝ່າຍທີ່ບໍ່ພໍໃຈຕໍ່ຄໍາຕັດສິນ ແລະມີຈຸດປະສົງຮ້ອງຂໍອຸທອນ ພ້ອມທັງໃຫ້ໂຈດ, ຈໍາເລີຍ ລວມທັງບຸກຄົນທີສາມ ທີ່ເຂົ້າຮ່ວມໃນການພິຈາລະນາຄະດີຢູ່ທີ່ປະຊຸມສານລົງລາຍເຊັນ ແລະ ແປະໂປ້ມືໃສ່ປຶ້ມບັນທຶກປະຊຸມສານ ພ້ອມກັນນັ້ນຄະນະສານ ແລະພະນັກງານໄອຍະການປະຊາຊົນກໍລົງລາຍເຊັນໄວ້. ສໍາລັບຈ່າສານກໍລົງລາຍເຊັນ, ໃສ່ຊື່ແຈ້ງ ແລະຈ້ໍາກາປະທັບຂອງຈ່າສານໃສ່ໃນປຶ້ມບັນທຶກປະຊຸມສານເຊັ່ນດຽວກັນ.

ໃນກໍລະນີທີ່ມີຝ່າຍໃດຝ່າຍໜຶ່ງບໍ່ພໍໃຈຕໍ່ຄໍາຕັດສິນ ແລະມີຈຸດປະສົງຮ້ອງຂໍອຸທອນການຕັດສິນຫາສານຂັ້ນເທິງນັ້ນ ຈ່າສານຈະເປັນຜູ້ຂຽນໃບຮັບການຈອງຂໍອຸທອນໃຫ້ແກ່ຝ່າຍທີ່ຂໍອຸທອນ ພ້ອມທັງກໍານົດເວລາໃຫ້ແກ່ຜູ້ຮ້ອງຂໍອຸທອນມາຍື່ນຄໍາຮ້ອງຂໍອຸທອນພາຍໃນກໍານົດເວລາ ຊາວວັນ ນັບແຕ່ວັນລົງຄໍາຕັດສິນເປັນຕົ້ນໄປ ເນື່ອງຈາກວ່າ ພາຍໃນກໍານົດເວລາ ຊາວສາມວັນ ນັບແຕ່ວັນລົງຄໍາຕັດສິນນັ້ນ ຈ່າສານຕ້ອງສົ່ງສໍານວນຄະດີດັ່ງກ່າວໄປຍັງສານຂັ້ນອຸທອນເພື່ອພິຈາລະນາ. ກ່ອນທີ່ຈ່າສານຈະຮັບຄໍາຮ້ອງຂໍອຸທອນຂອງຄູ່ຄວາມນັ້ນ ຈ່າສານຈະເປັນຜູ້ກວດກາເບິ່ງຄໍາຮ້ອງຂໍອຸທອນຕາມຮ່າງແບບພິມຂອງສານ ວ່າຖືກຕ້ອງ ແລະ ຄົບຖ້ວນແລ້ວ ຫຼື ບໍ່, ຖ້າຫາກມີເນື້ອໃນບໍ່ຄົບຖ້ວນ ຫຼືບໍ່ທັນຖືກຕ້ອງນັ້ນ ຈ່າສານຈະເປັນຜູ້ແນະນໍາໃຫ້ຜູ້ຮ້ອງຂໍອຸທອນນໍາໄປແກ້ໄຂຂໍ້ບົກພ່ອງນັ້ນເສຍກ່ອນ ຖ້າເຫັນວ່າຖືກຕ້ອງ ແລະ ຄົບຖ້ວນແລ້ວ ກໍຮັບຄໍາຮ້ອງຂໍອຸທອນ ພ້ອມທັງເກັບເງິນຄ່າໃຊ້ຈ່າຍໃນການດໍາເນີນຄະດີຢູ່ສານຂັ້ນອຸທອນຈາກຜູ້ຮ້ອງຂໍອຸທອນນັ້ນ ແລະ ແຈ້ງໃຫ້ຄູ່ຄວາມຝ່າຍກົງກັນຂ້າມນັ້ນຊາບກ່ຽວກັບການຮ້ອງຂໍອຸທອນດັ່ງກ່າວ.

## 5. ການບໍ່ສາມາດສືບຕໍ່ການໄຕ່ສວນຄະດີ

ການບໍ່ສາມາດສືບຕໍ່ການໄຕ່ສວນຄະດີ ແມ່ນກໍລະທີ່ມີເຫດການໃດໜຶ່ງໄດ້ເກີດຂຶ້ນໃນເວລາກໍາລັງປະຊຸມສານ ຫຼື ການໄຕ່ສວນຄະດີ ຊຶ່ງເປັນເຫດເຮັດໃຫ້ຄະນະສານບໍ່ສາມາດສືບຕໍ່ການໄຕ່ສວນໄດ້ ຄະນະສານກໍສາມາດເລື່ອນ ຫຼື ໂຈະການໄຕ່ສວນຄະດີໄດ້ຕາມແຕ່ລະກໍລະນີດັ່ງນີ້:

### 5.1. ການເລື່ອນການໄຕ່ສວນຄະດີ

ການເລື່ອນໄຕ່ສວນຄະດີ ແມ່ນການບໍ່ສືບຕໍ່ໄຕ່ສວນຄະດີ ຖ້າມີສາເຫດ ແລະກໍລະນີໃດໜຶ່ງເກີດຂຶ້ນ ເຊັ່ນ ຄູ່ຄວາມໃນຄະດີຝ່າຍໃດຝ່າຍໜຶ່ງບໍ່ເຂົ້າມາຮ່ວມການປະຊຸມສານຍ້ອນບໍ່ໄດ້ຮັບໝາຍຮຽກ ຫຼື ໄດ້ຮັບໝາຍຮຽກແລ້ວແຕ່ບໍ່ເຂົ້າມາຮ່ວມປະຊຸມສານ ຍ້ອນມີເຫດຜົນພຽງພໍ ເຊັ່ນ ເຈັບເປັນ, ໄປວຽກທາງລັດຖະການທີ່ຫ່າງໄກ, ຄູ່ຄວາມທັງສອງຝ່າຍບໍ່ໄດ້ເຂົ້າມາຮ່ວມປະຊຸມສານໂດຍບໍ່ຮູ້ສາເຫດ, ຍົກເວັ້ນກໍລະທີ່ມີໃບສະເໜີຢ່າງເປັນລາຍລັກອັກສອນໃຫ້ສານພິຈາລະນາຄະດີໂດຍບໍ່ມີການເຂົ້າຮ່ວມຂອງຄູ່ຄວາມ, ຜູ້ເຂົ້າຮ່ວມອື່ນໆບໍ່ມາຮ່ວມປະຊຸມສານ ຊຶ່ງການເຂົ້າຮ່ວມຂອງຜູ້ກ່ຽວມີຄວາມຈໍາເປັນໃຫ້ແກ່ການພິຈາລະນາຄະດີ ແລະອື່ນໆ.

ການເລື່ອນການໄຕ່ສວນຄະດີໃນທີ່ປະຊຸມສານ ແມ່ນການເລື່ອນພາຍຫຼັງທີ່ໄດ້ເປີດການໄຕ່ສວນ ແລະ ຄະນະສານສາມາດເຮັດຂຶ້ນໄດ້ກ່ອນການປິດການໄຕ່ສວນ ຫຼື ໃນເວລາໄຕ່ສວນ ໂດຍການສະເໜີຂອງຄູ່ຄວາມ ຫຼື ຕາມຄໍາ

---

92 ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 248

ເຫັນຂອງຄະນະສານເອງ ຖ້າເຫັນວ່າຂໍ້ມູນຫຼັກຖານໃນຄະດີບໍ່ພຽງພໍ ຊຶ່ງມີຄວາມຈຳເປັນຕ້ອງນຳເອົາຫຼັກຖານໃໝ່ມາເພີ່ມເຕີມ ເຊັ່ນ ເອົາຄຳໃຫ້ການຂອງພະຍານທີ່ມີຄວາມສຳຄັນຕໍ່ຄະດີ, ເອົາຄຳໃຫ້ການຂອງບຸກຄົນທີສາມເຂົ້າຮ່ວມໃນຄະດີ ແລະ ເຫດຜົນອື່ນໆ. ໃນການປະກາດເລື່ອນການໄຕ່ສວນ ຕ້ອງປະກາດກ່ອນການປິດການໄຕ່ສວນເທົ່ານັ້ນ, ຖ້າຫາກປະທານຄະນະສານໄດ້ປະກາດປິດການໄຕ່ສວນແລ້ວ ຈະປະກາດເລື່ອນການໄຕ່ສວນຄະດີນັ້ນແມ່ນບໍ່ໄດ້.

**5.2. ການໂຈະການໄຕ່ສວນຄະດີ**

ການໂຈະການໄຕ່ສວນຄະດີ ແມ່ນການຢຸດເຊົາການໄຕ່ສວນຄະດີໄວ້ຊົ່ວຄາວຍ້ອນມີສາເຫດໃດໜຶ່ງທີ່ເປັນອຸປະສັກໃຫ້ແກ່ການໄຕ່ສວນ ຊຶ່ງສາເຫດຂອງການໂຈະທີ່ບໍ່ຈຳເປັນຕ້ອງໄດ້ມີການຮ້ອງຂໍ ຫຼື ສະເໜີຈາກຄູ່ຄວາມ ແລະ ຄະນະສານຈະໂຈະການໄຕ່ສວນຄະດີໂດຍອັດຕະໂນມັດນັ້ນມີບາງສາເຫດດັ່ງນີ້:

- ການເສຍຊີວິດຂອງຄູ່ຄວາມໃນຄະດີໃດໜຶ່ງ ຫຼື ການຫຍຸບຕົວຂອງການຈັດຕັ້ງທີ່ເປັນນິຕິບຸກຄົນ ຖ້າຫາກວ່າຂໍ້ຂັດແຍ່ງນັ້ນສາມາດໃຫ້ສິດສືບຕໍ່ໄປໄດ້.
- ຄູ່ຄວາມຝ່າຍໃດຝ່າຍໜຶ່ງສູນເສຍຄວາມສາມາດທາງດ້ານການປະພຶດພາຍຫຼັງທີ່ໄດ້ມີການຮ້ອງຟ້ອງກັນ ຫຼື ໄຕ່ສວນສ່ວນໃດສ່ວນໜຶ່ງແລ້ວ.
- ຄະດີທີ່ມີຄວາມຈຳເປັນຕ້ອງລໍຖ້າການຕັດສິນຄະດີອື່ນທີ່ມີການພົວພັນກັບຄະດີທີ່ກ່ຽວຂ້ອງ.

ເຖິງຢ່າງໃດກໍຕາມ ເງື່ອນໄຂຂອງການໂຈະການໄຕ່ສວນຄະດີ ຕ້ອງສົມເຫດສົມຜົນ ໂດຍມີການຢັ້ງຢືນທີ່ເປັນລາຍລັກອັກສອນຢ່າງຄັກແນ່ ເຊັ່ນ ກໍລະນີການເສຍຊີວິດຂອງຄູ່ຄວາມກໍຕ້ອງມີການຢັ້ງຢືນຈາກອຳນາດການປົກຄອງບ້ານ, ການສູນເສຍຄວາມສາມາດທາງດ້ານການປະພຶດກໍຕ້ອງໄດ້ຮັບການຢັ້ງຢືນຈາກຄະນະຜູ້ຊ່ຽວຊານການແພດ ຫຼື ໄດ້ມີຄຳຕັດສິນຂອງສານກ່ຽວກັບການປະກາດວ່າເປັນບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ, ຄະດີໃດທີ່ມີຄວາມຈຳເປັນຕ້ອງລໍຖ້າການດຳເນີນຄະດີອື່ນກໍຕ້ອງໄດ້ຮັບການຢັ້ງຢືນຈາກພາກສ່ວນທີ່ກຳລັງດຳເນີນຄະດີດັ່ງກ່າວນັ້ນ. ປະການສຳຄັນ ເຫດຜົນຕ່າງໆທີ່ກ່າວມານັ້ນກໍຍັງຕ້ອງໄດ້ຮັບການພິຈາລະນາຈາກຄະນະສານວ່າມີຄວາມຈຳເປັນ ຫຼື ບໍ່ຈຳເປັນທີ່ຈະໂຈະການໄຕ່ສວນຄະດີດັ່ງກ່າວ.

ນອກຈາກທີ່ກ່າວມາຂ້າງເທິງນັ້ນຍັງມີບາງກໍລະນີທີ່ການໄຕ່ສວນຄະດີຈະຖືກໂຈະຕາມການຮ້ອງຂໍຂອງຄູ່ຄວາມຝ່າຍໃດຝ່າຍໜຶ່ງ ເຊັ່ນ ຄູ່ຄວາມໃນຄະດີໄປຮັບໃຊ້ໃນກຳລັງປ້ອງກັນປະກອບອາວຸດ ຫຼື ຖືກມອບໝາຍໃຫ້ໄປປະຕິບັດພັນທະໃດໜຶ່ງຂອງລັດ ຫຼື ໄປປະຕິບັດວຽກງານຢູ່ແຫ່ງອື່ນເປັນເວລາດົນນານ, ໂຈດ ຫຼື ຈຳເລີຍຈຳເປັນຕ້ອງນອນປິ່ນປົວຢູ່ໂຮງໝໍ ຫຼື ເປັນພະຍາດທີ່ຮ້າຍແຮງ ແລະບໍ່ສາມາດເຂົ້າມາສານໄດ້, ສານໄດ້ອອກຄຳສັ່ງໃຫ້ຜູ້ຊ່ຽວຊານກວດພິສູດ ແລະ ກໍລະນີອື່ນໆ.

ການໂຈະການໄຕ່ສວນຄະດີ ແມ່ນຄະນະສານເອງເປັນຜູ້ພິຈາລະນາວ່າມີເຫດຜົນ ຫຼື ບໍ່ມີເຫດຜົນ ແລະ ມີຄວາມຈຳເປັນ ຫຼື ບໍ່ມີຄວາມຈຳເປັນ ຖ້າຄະນະສານຫາກເຫັນວ່າມີຂໍ້ມູນຫຼັກຖານຄົບຖ້ວນພຽງພໍແລ້ວ ກໍສາມາດຕັດສິນເລີຍໄດ້ ໂດຍບໍ່ຈຳເປັນໂຈະການໄຕ່ສວນຄະດີນັ້ນອີກ. ແຕ່ໃນກໍລະທີ່ຄະນະສານໄດ້ໂຈະການໄຕ່ສວນແລ້ວນັ້ນ, ເມື່ອເຫັນວ່າເຫດການພື້ນຖານຂອງການໂຈະການໄຕ່ສວນຄະດີໄດ້ຕົກໄປ ຄະນະສານກໍຈະເປີດປະຊຸມສານ ແລະ ໄຕ່ສວນຄະດີຄືນໃໝ່ຕາມຄຳຮ້ອງຂໍຂອງຄູ່ຄວາມໃນຄະດີ ຫຼື ຕາມຄຳເຫັນສົມຄວນຂອງສານເອງ.

ສຳລັບການໂຈະການໄຕ່ສວນຄະດີຍ້ອນການເສຍຊີວິດຂອງຄູ່ຄວາມ ຖ້າຂໍ້ຂັດແຍ່ງນັ້ນຫາກກ່ຽວພັນກັບກຳມະສິດທີ່ຜູ້ສືບທອດສາມາດສືບຕໍ່ໄດ້ ເຊັ່ນ ທີ່ດິນ ຫຼື ຊັບສິນທີ່ເປັນກຳມະສິດຂອງຜູ້ທີ່ເສຍຊີວິດ ຊຶ່ງຈະກາຍເປັນມູນມໍຣະດົກນັ້ນສານກໍຈະໂຈະການໄຕ່ສວນຄະດີໄວ້ຈົນກວ່າຈະມີຜູ້ສືບທອດຂອງຄູ່ຄວາມຜູ້ທີ່ເສຍຊີວິດນັ້ນເຂົ້າມາສືບທອດເປັນຄູ່ຄວາມຕາມສິດສືບທອດມູນມໍຣະດົກ ສານຈຶ່ງສືບຕໍ່ການພິຈາລະນາຄະດີໂດຍໃຫ້ຜູ້ສືບທອດຂອງຜູ້ກ່ຽວເຂົ້າມາເປັນຄູ່ຄວາມໃນຄະດີແທນ ແລະ ປະຕິບັດສິດ ແລະ ພັນທະດັ່ງດຽວກັນກັບຄູ່ຄວາມທີ່ໄດ້ເສຍຊີວິດນັ້ນ ແລະ ເປັນການສືບຕໍ່ແທນຕົວ ຊຶ່ງຫຼັກການນີ້ແມ່ນຄືກັນກັບລະບົບການດຳເນຄະດີແພ່ງຂອງປະເທດຍີ່ປຸ່ນ (ການສືບຕໍ່ແທນຕົວ).

## 6. ການບັນທຶກການປະຊຸມສານ

ການບັນທຶກປະຊຸມສານ ແມ່ນໜ້າທີ່ຂອງຈ່າສານທີ່ຈະບັນທຶກທັງໝົດຂອງການປະຊຸມສານ ນັບແຕ່ເປີດປະຊຸມສານຈົນຮອດຂັ້ນຕອນການປະກາດຄຳຕັດສີນ ຊຶ່ງຈະເລີ່ມບັນທຶກນັບແຕ່ເລກທີ, ລົງວັນທີຂອງຄະດີ, ລາຍຊື່ຂອງຄະນະສານ, ຈ່າສານ, ພະນັກງານໄອຍະການປະຊາຊົນ ທີ່ເຂົ້າຮ່ວມໃນທີ່ປະຊຸມສານ, ວັນທີ, ເດືອນ, ປີ ແລະ ສະຖານທີ່ຂອງການເປີດປະຊຸມສານ, ຊື່ຂອງຝ່າຍໂຈດ, ຊື່ຂອງຝ່າຍຈຳເລີຍ, ຊື່ຂໍ້ຂັດແຍ່ງ ລວມທັງບັນທຶກຄຳໃຫ້ການ ຫຼື ຄຳເຫັນຂອງຜູ້ເຂົ້າຮ່ວມໃນທີ່ປະຊຸມສານໃນເວລາໄຕ່ສວນ ຫຼື ໂຕ້ຖຽງໃນທີ່ປະຊຸມສານ.

ໃນກໍລະນີມີບັນຫາໃດທີ່ສຳຄັນ ຊຶ່ງຄະນະສານເກັບກຳໄດ້ໃນເວລາໄຕ່ສວນ ຫຼື ໂຕ້ຖຽງ ແລະ ເຫັນວ່າຈະເປັນເຫດຜົນ ຫຼື ຫຼັກຖານໃຫ້ແກ່ການພິຈາລະນາຕັດສີນຄະດີນັ້ນ ຄະນະສານຈະແນະນຳໃຫ້ຈ່າສານທີ່ກຳລັງບັນທຶກການປະຊຸມສານນັ້ນຈົດບັນທຶກຂໍ້ຄວາມສຳຄັນນັ້ນໃສ່ປຶ້ມປະຊຸມສານຢ່າງລະອຽດ ແລະຈະແຈ້ງ ເພື່ອເປັນຂໍ້ມູນສຳຄັນໃນການພິຈາລະນາຕັດສີນຄະດີ ພ້ອມທັງບັນທຶກຜົນຂອງການຕັດສີນຂອງຄະນະສານໃສ່ປຶ້ມປະຊຸມສານ.

ພາຍຫຼັງທີ່ປະທານຄະນະສານໄດ້ປິດປະຊຸມສານແລ້ວ ຈ່າສານຈະເປັນຜູ້ແນະນຳໃຫ້ຜູ້ເຂົ້າຮ່ວມລົງລາຍເຊັນ ແລະ ແປະໂປ້ມືໃສ່ປຶ້ມບັນທຶກປະຊຸມສານນັ້ນ ແຕ່ກ່ອນທີ່ຜູ້ເຂົ້າຮ່ວມຈະລົງລາຍເຊັນ ແລະ ແປະໂປ້ມືນັ້ນ, ຈ່າສານຈະອ່ານເນື້ອໃນບົດບັນທຶກປະຊຸມສານໃຫ້ແກ່ຟັງ ໂດຍສະເພາະແລ້ວແມ່ນໂຈດ, ຈຳເລີຍ, ບຸກຄົນທີສາມ, ພະຍານໃນຄະດີຊາບກ່ອນ, ເມື່ອຜູ້ເຂົ້າຮ່ວມໃນທີ່ປະຊຸມສານໄດ້ລົງລາຍເຊັນ ແລະ ແປະໂປ້ມືໃສ່ບົດບັນທຶກປະຊຸມສານເປັນທີ່ຮຽບຮ້ອຍແລ້ວ ຈ່າສານກໍລົງລາຍເຊັນ ແລະ ຈ້ຳກາປະທັບຂອງຈ່າສານພ້ອມທັງຊື່ແຈ້ງໃສ່, ສ່ວນຄະນະສານ ແລະ ພະນັກງານໄອຍະການປະຊາຊົນ ກໍລົງລາຍເຊັນໃສ່ປຶ້ມປະຊຸມສານເຊັ່ນດຽວກັນ.

ໃນກໍລະນີທີ່ຜູ້ເຂົ້າຮ່ວມປະຊຸມສານຜູ້ໃດຜູ້ໜຶ່ງຫາກບໍ່ຍອມລົງລາຍເຊັນ ຫຼື ບໍ່ຍອມແປະໂປ້ໃສ່ບົດບັນທຶກປະຊຸມສານນັ້ນ ຈ່າສານກໍຈະບັນທຶກໄວ້ໃນປຶ້ມປະຊຸມສານ, ເມື່ອສຳເລັດແລ້ວ ກໍສຳເນົາບົດບັນທຶກປະຊຸມສານໄວ້ໃນສຳນວນຄະດີໜຶ່ງສະບັບ ເພື່ອໃຫ້ສານຂັ້ນເທິງກວດກາໃນກໍລະນີທີ່ຄູ່ຄວາມໄດ້ຮ້ອງຂໍອຸທອນຄຳຕັດສີນ ຫຼື ຫົວໜ້າອົງການໄອຍະການປະຊາຊົນໄດ້ສະເໜີຄັດຄ້ານຄຳຕັດສີນຫາສານຂັ້ນເທິງ[93].

---

[93] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 219

# ບົດທີ 6
# ຄຳຕັດສິນຂອງສານ

## 1. ຄວາມໝາຍຂອງຄຳຕັດສິນ

ຄຳຕົກລົງ ແມ່ນເອກະສານຂອງສານ ຊຶ່ງປະກອບດ້ວຍຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະຄຳພິພາກສາຂອງສານ[94]. ດັ່ງນັ້ນ ຈຶ່ງສາມາດເວົ້າໄດ້ວ່າຄຳຕັດສິນແມ່ນຄຳຕົກລົງໜຶ່ງຂອງສານ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ຫຼື ບັນຫາໃດໜຶ່ງທີ່ຄູ່ຄວາມທຳການຮ້ອງຂໍ, ຮ້ອງຟ້ອງ ແລະຟ້ອງແຍ່ງ ເພື່ອໃຫ້ສານປະຊາຊົນພິຈາລະນາແກ້ໄຂ ແລະຕັດສິນຕາມລະບຽບກົດໝາຍ[95]ເຊັ່ນ ຂໍ້ຂັດແຍ່ງກ່ຽວກັບກຳມະສິດ, ຊັບສິນບັດ, ມູນມໍຣະດົກ, ສັນຍາ ແລະບັນຫາການຮ້ອງຂໍອື່ນໆ ທີ່ກຳນົດໄວ້ໃນກົດໝາຍ[96]. ສຳລັບ “ຄຳຕັດສິນ” ແມ່ນຈະໃຊ້ເອີ້ນຄຳຕົກລົງຂອງສານປະຊາຊົນທີ່ໄດ້ຕັດສິນຄະດີເປັນຂັ້ນຕົ້ນ, ສ່ວນຄຳຕົກລົງຂອງສານປະຊາຊົນທີ່ຕັດສິນເປັນຂັ້ນອຸທອນ ຫຼື ຂັ້ນລົບລ້າງນັ້ນ ເອີ້ນວ່າ "ຄຳພິພາກສາ"[97].

## 2. ຄວາມສຳຄັນຂອງຄຳຕັດສິນ

ຄຳຕັດສິນຂອງສານແມ່ນມີຄວາມສຳຄັນກວ່າໝູ່ໃນຂະບວນການດຳເນີນຄະດີຂອງສານ ລວມທັງຂະບວນການຍຸຕິທຳ ເນື່ອງຈາກວ່າ ທຸກຄຳຕັດສິນຂອງສານ ຈະອອກໃນນາມສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ແລະ ກໍມີຄວາມສຳຄັນທັງຕໍ່ຄູ່ຄວາມ ແລະ ຕໍ່ສານເອງ.

– **ຄວາມສຳຄັນຕໍ່ຄູ່ຄວາມ:** ຄຳຕັດສິນຂອງສານ ແມ່ນມີຄວາມສຳຄັນໃນ ເພາະເປັນສິ່ງປົກປ້ອງສິດ, ຜົນປະໂຫຍດອັນຊອບທຳ ແລະ ສິດເສລີພາບຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ໂດຍສະເພາະແມ່ນໂຈດ, ຈຳເລີຍ ລວມທັງບຸກຄົນທີສາມ ພ້ອມທັງເປັນຄຳຕອບໃຫ້ແກ່ຄູ່ຄວາມທີ່ຄອງຄອຍຟັງຜົນຂອງການຕັດສິນຄະດີຂອງສານ. ນອກຈາກນັ້ນ ຄຳຕັດສິນຂອງສານຍັງເປັນວຽກງານທີ່ສັງຄົມໃຫ້ຄວາມສົນໃຈ ແລະ ຕິດຕາມການຜົນຂອງການດຳເນີນຄະດີຂອງສານ ເພາະວ່າ ເປັນການພິສູດເຖິງຜົນງານ ແລະ ຄຸນນະພາບຂອງຜູ້ພິພາກສາ ຊຶ່ງເປັນຜູ້ເຮັດໜ້າທີ່ໃຫ້ຄວາມຍຸຕິທຳແກ່ສັງຄົມ ແລະ ຕັດສິນຊີ້ຂາດບັນຫາທີ່ສຳຄັນຢູ່ໃນສັງຄົມທີ່ພົວພັນເຖິງສິດຜົນປະໂຫຍດ ແລະ ສິດເສລີພາບຂອງພົນລະເມືອງ.
– **ຄວາມສຳຄັນຕໍ່ສານ:** ຄຳຕັດສິນຂອງສານ ແມ່ນມີຄວາມສຳຄັນຕໍ່ສານເອງ ເນື່ອງຈາກວ່າ ຂັ້ນຕອນການອອກຄຳຕັດສິນໄດ້ຖືກກຳນົດໂດຍຂະບວນການຍຸຕິທຳ ແລະ ເປັນຂັ້ນຕອນໜຶ່ງໃນການດຳເນີນຄະດີຂອງສານ ພ້ອມທັງຮັບປະກັນໃຫ້ອົງການຈັດຕັ້ງຂອງພັກ, ລັດ, ອົງການຈັດຕັ້ງສັງຄົມ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນພົນລະເມືອງທຸກຄົນໄດ້ປະຕິບັດກົດໝາຍຢ່າງຖືກຕ້ອງ ແລະ ການຕັດສິນຢ່າງເປັນທຳ. ອີກປະການໜຶ່ງ ຜົນຂອງການຕັດສິນຍັງສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມຕໍ່ສານ ພ້ອມກັນນັ້ນຍັງເປັນບົດຮຽນໃຫ້ແກ່ສຶກສາ, ນັກຮຽນຮູ້, ປັນຍາຊົນ ຫຼື ຜູ້ພິພາກສາ ຮຸ່ນຕໍ່ໄປໄດ້ນຳໄປສຶກສາຄົ້ນຄ້ວາ ທັງເປັນການປະກອບສ່ວນໃນການສ້າງສະຕິກົດໝາຍໃຫ້ແກ່ສັງຄົມໄດ້ຮັບຮູ້ ເພື່ອປະຕິບັດຕາມແນວທາງນະໂຍບາຍຂອງພັກໃນການສ້າງລັດແຫ່ງ ສ ປປ ລາວ ເປັນລັດແຫ່ງກົດໝາຍເທື່ອລະກ້າວ.

[94] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 03 ຂໍ້ 08.
[95] ສານປະຊາຊົນສູງສຸດ, ປຶ້ມຄູ່ມືການຂຽນຄຳຕັດສິນຄະດີແພ່ງ ປີ 2006, ໜ້າ 01.
[96] ສານປະຊາຊົນສູງສຸດ, ປຶ້ມຄູ່ມືການຂຽນຄຳຕັດສິນຄະດີແພ່ງ 2006, ໜ້າ 01 ແລະ 02.
[97] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 03, ຂໍ້ 12.

## 3. ຜົນສັກສິດຂອງຄຳຕັດສິນຂອງສານ

ຜົນສັກສິດຂອງຄຳຕັດສິນຂອງສານ ແມ່ນຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ແນວລາວສ້າງຊາດ, ວິສາຫະກິດ ແລະ ພົນລະເມືອງທຸກຄົນຕ້ອງເຄົາລົບ, ບຸກຄົນ ແລະ ອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງຕ້ອງໄດ້ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ ໝາຍຄວາມວ່າ ທຸກຄຳຕັດສິນຂອງສານມີຜົນບັງຄັບຕໍ່ຄູ່ຄວາມ ລວມທັງບຸກຄົນທີສາມ, ອົງການຈັດຕັ້ງ ຫຼື ບຸກຄົນທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານປະກົດຜົນເປັນຈິງ, ທຸກຄົນຕ້ອງຍອມຮັບ ແລະ ປະຕິບັດຕາມ ເຖິງວ່າຕົນເອງຈະບໍ່ໄດ້ເປັນໂຈດ ຫຼື ຈຳເລີຍ ຫຼື ບຸກຄົນທີສາມໃນຄະດີໃດໜຶ່ງກໍຕາມ. ນອກຈາກນັ້ນ ຄຳຕັດສິນຂອງສານຍັງມີຜົນສັກສິດຕໍ່ບຸກຄົນ ຫຼື ອົງການຈັດຕັ້ງຂອງ ສປປ ລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ຫຼື ພົນລະເມືອງຂອງບັນດາປະເທດທີ່ ສປປ ລາວ ໄດ້ເຂົ້າຮ່ວມເປັນພາຄີ ຫຼື ມີສົນທິສັນຍາທີ່ກ່ຽວຂ້ອງຮ່ວມກັນ.

ໃນກໍລະນີທີ່ສານໄດ້ລົງຄຳຕັດສິນໄປແລ້ວ ແລະ ຄຳຕັດສິນດັ່ງກ່າວບໍ່ໄດ້ຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນນັ້ນຄຳຕັດສິນດັ່ງກ່າວກໍເປັນຄຳຕັດສິນທີ່ໃຊ້ໄດ້ເດັດຂາດຂອງສານ ແລະ ຕ້ອງນຳໄປຈັດຕັ້ງປະຕິບັດຢ່າງເຂັ້ມງວດ ຊຶ່ງຄູ່ຄວາມບໍ່ສາມາດນຳເອົາບັນຫາເກົ່າທີ່ສານໄດ້ພິຈາລະນາຕັດສິນໄປແລ້ວນັ້ນມາຮ້ອງຟ້ອງຄືນໃໝ່ໄດ້ອີກ[98].

**ຕົວຢ່າງ:** ທ້າວ ກ ແລະ ທ້າວ ຂ ຊຶ່ງເປັນອ້າຍນ້ອງຄີງກັນ ເມື່ອພໍ່ແມ່ເສຍຊີວິດແລ້ວ ທັງສອງໄດ້ເກີດມີຂໍ້ຂັດແຍ່ງກ່ຽວກັບມູນມໍຣະດົກ, ຜ່ານການດຳເນີນຄະດີ ສານໄດ້ລົງຄຳຕັດສິນໂດຍແບ່ງປັນມູນມໍຣະດົກນັ້ນຕາມລະບຽບກົດໝາຍ. ສະນັ້ນ ຖ້າສານໄດ້ລົງຄຳຕັດສິນ ແລະ ເມື່ອຄຳຕັດສິນນັ້ນໃຊ້ໄດ້ຢ່າງເດັດຂາດແລ້ວ ທ້າວ ກ ແລະທ້າວ ຂ ຕ້ອງໄດ້ຍອມຮັບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຄຳຕັດສິນສະບັບດັ່ງກ່າວນັ້ນຢ່າງເຂັ້ມງວດ.

## 4. ເນື້ອໃນຄຳຕັດສິນຂອງສານ

ຄຳຕັດສິນຂອງສານ ປະກອບດ້ວຍ 4 ພາກ ທີ່ມີເນື້ອໃນທີ່ແຕກຕ່າງກັນ ຊຶ່ງຄຳຕັດສິນໃດໜຶ່ງປະກອບມີດັ່ງນີ້:

- ພາກສະເໜີ
- ພາກເນື້ອຄະດີ
- ພາກວິນິດໄສ
- ພາກຕັດສິນ

### 4.1. ພາກສະເໜີ

ພາກສະເໜີຂອງຄຳຕັດສິນ ແມ່ນພາກທີ່ບັນຈຸຂໍ້ຄວາມຕ່າງໆ ຊຶ່ງມີຄວາມສຳຄັນຕໍ່ກັບຮູບຄະດີ:

- ຊື່ ແຂວງ,ນະຄອນ ຫຼື ເຂດ ທີ່ສານປະຊາຊົນ ນັ້ນຕັ້ງຢູ່;
- ເລກທີ ແລະລົງວັນທີ ຂອງຄຳຕັດສິນ;
- ຊື່ ແລະ ນາມສະກຸນຂອງຄະນະສານ, ຈ່າສານ ແລະ ພະນັກງານໄອຍະການປະຊາຊົນ;
- ວັນທີ, ເດືອນ, ປີ, ເວລາ ແລະສະຖານທີ່ ບ່ອນເປີດປະຊຸມສານ;
- ເລກທີ, ລົງວັນທີ, ເດືອນ, ປີ ຂອງຄະດີທີ່ນຳມາພິຈາລະນາ;
- ຊື່ ແລະນາມສະກຸນຂອງໂຈດ, ອາຍຸ, ອາຊີບ, ທີ່ຢູ່ປັດຈຸບັນ (ໜ່ວຍ, ບ້ານ, ເມືອງ, ແຂວງ);
- ຊື່ ແລະນາມສະກຸນຂອງຈຳເລີຍ ອາຍຸ, ອາຊີບ, ທີ່ຢູ່ປັດຈຸບັນ (ໜ່ວຍ, ບ້ານ, ເມືອງ, ແຂວງ);
- ຊື່ ແລະນາມສະກຸນຂອງບຸກຄົນທີສາມ (ຖ້າມີ), ອາຍຸ, ອາຊີບ, ທີ່ຢູ່ປັດຈຸບັນ (ໜ່ວຍ, ບ້ານ, ເມືອງ, ແຂວງ);

---

[98] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012, ມາດຕາ 185

- ຊື່ ແລະ ນາມສະກຸນຂອງຜູ້ຕາງໜ້າໂຈດ ຫຼື ຈຳເລີຍ (ຖ້າມີ), ອາຍຸ, ອາຊີບ, ທີ່ຢູ່ປັດຈຸບັນ (ໜ່ວຍ, ບ້ານ, ເມືອງ, ແຂວງ);
- ຊື່ຂໍ້ຂັດແຍ່ງຂອງຄະດີ;

ນອກຈາກທີ່ໄດ້ກຳນົດມາຂ້າງເທິງນັ້ນແລ້ວ ໃນພາກສະເໜີຍັງໄດ້ກຳນົດຂໍ້ຍ່ອຍ "ວ່າດ້ວຍສານ" ຊຶ່ງເນື້ອໃນຕົ້ນຕໍຂອງຂໍ້ຍ່ອຍນີ້ປະກອບດ້ວຍ:

- "ໃນນາມສາທາລະນະລັດປະຊາທິປະໄຕປະຊາຊົນລາວ";
- "ໂດຍອີງຕາມໜ້າທີ່ ແລະ ສິດອຳນາດຂອງສານ ຕາມກົດໝາຍວ່າດ້ວຍສານປະຊາຊົນສະບັບປັບປຸງ";

ຊຶ່ງສອງຂໍ້ຂ້າງເທິງນີ້ຕ້ອງໃສ່ໃນທຸກຄຳຕັດສີນ.

- "ໄດ້ແຈ້ງຊື່ ແລະ ນາມສະກຸນຂອງຄະນະສານ, ຈ່າສານ ແລະພະນັກງານໄອຍະການປະຊາຊົນ ແລະ ຄະດີທີ່ນຳອອກມາພິຈາລະນາໃຫ້ໂຈດ, ຈຳເລີຍ, ບຸກຄົນທີສາມ, ຜູ້ຕາງໜ້າໂຈດ ຫຼື ຈຳເລີຍ ຊາບແລ້ວ";
- "ໄດ້ແຈ້ງສິດໃນການຄ້ານຕໍ່ຄະນະສານ ຫຼື ບຸກຄົນໃດໜຶ່ງໃນຄະນະສານ, ຈ່າສານ ແລະ ພະນັກງານໄອຍະການປະຊາຊົນໃຫ້ໂຈດ, ຈຳເລີຍ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ຊາບແລ້ວ";
- "ໄດ້ແຈ້ງສິດໃນການຕໍ່ສູ້ຄະດີໃຫ້ໂຈດ, ຈຳເລີຍ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ຊາບແລ້ວ";
- "ໄດ້ຟັງຄຳໃຫ້ການຂອງໂຈດ, ຈຳເລີຍ ແລະບຸກຄົນທີສາມ ໃນທີ່ປະຊຸມສານແລ້ວ";
- "ໄດ້ຟັງຄຳຖະແຫຼງຂອງຫົວໜ້າອົງການໄອຍະການປະຊາຊົນ ແລ້ວ".

**4.2. ພາກເນື້ອຄະດີ**

ພາກເນື້ອຄະດີ ແມ່ນພາກສ່ວນໜຶ່ງທີ່ສຳຄັນຂອງຄຳຕັດສີນ ຊຶ່ງພາກນີ້ຈະກຳນົດເຫດການທີ່ມີສາຍພົວພັນທາງດ້ານກົດໝາຍ, ສະແດງໃຫ້ເຫັນສາເຫດໃນການລະເມີດສິດ ແລະຜົນປະໂຫຍດເຊິ່ງກັນ ແລະ ກັນ, ການສະເໜີຂອງຄູ່ຄວາມທັງສອງຝ່າຍທີ່ຈະໃຫ້ສານນຳມາພິຈາລະນາກ່ຽວກັບບັນຫາ ຫຼື ຂໍ້ຂັດແຍ່ງນັ້ນ ໂດຍສະຫຼຸບເອົາຕາມເນື້ອໃນຄຳຮ້ອງຟ້ອງ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ ທີ່ໂຈດ,ຈຳເລີຍ ລວມທັງບຸກຄົນທີສາມ ແລະ ຜູ້ເຂົ້າຮ່ວມອື່ນໆ ໄດ້ສະເໜີຕໍ່ສານ ນອກນັ້ນກໍສັງລວມເອົາຄຳໃຫ້ການ ຫຼື ຄຳໃຫ້ການຊ້ອງໜ້າຂອງຄູ່ຄວາມ, ຜູ້ຕາງໜ້າອົງການຈັດຕັ້ງຂອງລັດ, ສັງຄົມ ແລະອື່ນໆໄວ້ໃນພາກເນື້ອຄະດີ.

**4.3. ພາກວິນິດໄສ**

ພາກວິນິດໄສ ແມ່ນພາກທີ່ສຳຄັນ ເນື່ອງຈາກວ່າ ໃນພາກນີ້ສານໄດ້ອະທິບາຍໃຫ້ເຫດຜົນໃນການລົງຄຳຕັດສີນ ແລະເປັນເນື້ອໃນທີ່ສານໄດ້ກຳນົດລະອຽດຕໍ່ເຫດການຂໍ້ຂັດແຍ່ງ ຫຼື ເຫດການຂອງຄະດີ ໂດຍໄຈ້ແຍກວ່າອັນໃດເປັນຂໍ້ເທັດຈິງ ແລະອະທິບາຍຊີ້ແຈງ ພ້ອມທັງໃຫ້ເຫດຜົນຢ່າງຈະແຈ້ງ, ລະອຽດໃນແຕ່ລະບັນຫາທີ່ໂຈດ, ຈຳເລີຍ ລວມທັງບຸກຄົນທີສາມ ໄດ້ສະເໜີມາ ເຖິງແມ່ນວ່າ ການສະເໜີຂອງຄູ່ຄວາມຈະມີເຫດຜົນ ຫຼື ບໍ່ມີເຫດຜົນກໍຕາມ, ການວິນິດໄສບົນພື້ນຖານຂໍ້ມູນຫຼັກຖານ ແລະ ເນື້ອໃນມາດຕາຂອງກົດໝາຍທີ່ກ່ຽວຂ້ອງໃສ່ໃນແຕ່ລະປະເດັນທີ່ເຫັນວ່າມັນຖືກຕ້ອງ ແລະ ສອດຄ່ອງກັບເຫດການຕົວຈິງທີ່ເກີດຂຶ້ນນັ້ນ ທັງພາໃຫ້ເກີດສິດ ແລະ ພັນທະໃຫ້ແກ່ຄູ່ຄວາມ.

ພາກວິນິດໄສ ຍັງເປັນໝາກຫົວໃຈຂອງຄຳຕັດສີນ ເພາະວ່າ ການວິນິດໄສຂອງສານແມ່ນສິ່ງໜຶ່ງທີ່ຢັ້ງຢືນເຖິງເຫດການຂອງຄະດີໃຫ້ແຈ້ງຂາວ, ເຮັດໃຫ້ຄູ່ຄວາມ ແລະຜູ້ເຂົ້າຮ່ວມໃນການດຳເນີນຄະດີ ຫຼື ຜູ້ທີ່ໄດ້ອ່ານຄຳຕັດສີນໄດ້ເຂົ້າໃຈເຖິງເຫດຜົນຢ່າງຈະແຈ້ງ ພ້ອມກັນນັ້ນການວິນິດໄສ ຫຼື ການໃຫ້ຄຳເຫັນຕ່າງໆຢູ່ໃນຄຳຕັດສີນກໍເພື່ອສ້າງຄວາມເຊື່ອໝັ້ນ ແລະ ເປັນທີ່ເຂົ້າໃຈໃຫ້ແກ່ໂຈດ,ຈຳເລີຍ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງກັບຄະດີ.

ສຳລັບລຳດັບຂອງການວິນິດໄສຂອງສານນັ້ນ ແມ່ນວິນິດໄສບັນຫາ ຫຼື ປະເດັນທີ່ສານເຫັນວ່າການກ່າວອ້າງຂອງຄູ່ຄວາມເປັນເຫດຜົນທີ່ພາໃຫ້ສານນຳມາພິຈາລະນາລົງຄຳຕັດສີນໂດຍອີງໃສ່ພື້ນຖານທາງດ້ານຂໍ້ເທັດຈິງ ແລະ ພື້ນຖານທາງດ້ານກົດໝາຍ ຊຶ່ງສອດຄ່ອງກັບມາດຕາຂອງກົດໝາຍທີ່ກ່ຽວຂ້ອງກ່ອນ. ຫຼັງຈາກນັ້ນ ຈຶ່ງວິນິດໄສບັນຫາ ຫຼື ປະເດັນ ທີ່ສານເຫັນວ່າການກ່າວອ້າງຂອງຄູ່ຄວາມບໍ່ມີເຫດຜົນ ແລະ ບໍ່ເປັນສາເຫດທີ່ສານຈະນຳມາພິຈາລະນາຕັດ

ສິນໃຫ້ ໝາຍຄວາມວ່າ ການວິນິດໄສຕ້ອງໃຫ້ລະອຽດ, ຈະແຈ້ງ, ເປັນລຳດັບໂດຍບໍ່ໃຫ້ຂັດກັນພ້ອມທັງໄຈ້ແຍກສອງປະເດັນຄື ການພິສູດຂໍ້ເທັດຈິງແມ່ນຂຽນໄວ້ກ່ອນ ແລ້ວຈຶ່ງຂຽນການນຳໃຊ້ມາດຕາຂອງກົດໝາຍຕາມຫຼັງ; ຈາກນັ້ນຈຶ່ງວິນິດໄສກ່ຽວກັບຄວາມຮັບຜິດຊອບຕໍ່ຄ່າທຳນຽມສານ ແລະ ຄ່າສິ້ນເປືອງໃນການດຳເນີນຄະດີຕາມລຳດັບ.

**ຕົວຢ່າງ:** ຖ້າຄະນະສານຫາກເຫັນວ່າຄຳຮ້ອງຟ້ອງຂອງໂຈດມີເຫດຜົນ ແລະ ຄຳຟ້ອງແຍ່ງ ຂອງຈຳເລີຍບໍ່ມີເຫດຜົນນັ້ນ ຄະນະສານກໍຈະວິນິດໄສເຫດຜົນຂອງຄຳຮ້ອງຟ້ອງຂອງໂຈດກ່ອນ ແລ້ວຈຶ່ງວິນິດໄສຄຳຟ້ອງແຍ່ງຂອງຈຳເລີຍ ນຳຫຼັງ ເຊັ່ນ ເອກະສານທີ່ໂຈດນຳມາຢັ້ງຢືນແມ່ນມີເຫດຜົນພຽງພໍ ທີ່ສາມາດເຊື່ອຖືໄດ້ທາງດ້ານກົດໝາຍ ຍ້ອນວ່າເອກະສານດັ່ງກ່າວເປັນເອກະສານສະບັບຕົ້ນ ແລະ ມີການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງຢ່າງຖືກຕ້ອງ; ສ່ວນເອກະສານທີ່ຈຳເລີຍນຳມາຢັ້ງຢືນນັ້ນແມ່ນບໍ່ສາມາດເຊື່ອຖືໄດ້ທາງກົດໝາຍ ຊຶ່ງເອກະສານດັ່ງກ່າວນັ້ນເປັນເອກະສານສະບັບສຳເນົາ ແລະ ບໍ່ມີສະບັບຕົ້ນມາຢັ້ງຢືນ, ອີກຢ່າງໜຶ່ງເອກະສານຂອງຈຳເລີຍຍັງມີຮອຍລຶບ, ຮອຍຂີດຂ້າ ແລະ ອື່ນໆ.

### 4.4. ພາກຕັດສິນ

ພາກຕັດສິນເປັນພາກທີ່ສຳຄັນທີ່ສຸດໃນຄຳຕັດສິນຂອງສານ ເນື່ອງຈາກວ່າ ເປັນພາກທີ່ຄະນະສານໄດ້ລົງຄຳເຫັນຊີ້ຂາດຂັ້ນເດັດຂາດກ່ຽວກັບຄະດີ ຊຶ່ງຈະຕ້ອງໄດ້ປະຕິບັດໃນເມື່ອຄຳຕັດສິນນັ້ນຫາກໃຊ້ໄດ້ຢ່າງເດັດຂາດແລ້ວ.

ພາກຕັດສິນເປັນພາກສຸດທ້າຍຂອງຄຳຕັດສິນ ແລະເປັນພາກຊີ້ຂາດຂອງການດຳເນີນຄະດີຂອງສານຜ່ານມາພ້ອມທັງເປັນຄຳຕອບໃຫ້ແກ່ຄູ່ຄວາມທີ່ຄອງຄອຍເບິ່ງຜົນຂອງການຕັດສິນຂອງສານ ແລະທັງເປັນຄຳຕອບໃຫ້ແກ່ການຮ້ອງຟ້ອງ, ການແກ້ຟ້ອງ ແລະ ການຟ້ອງແຍ່ງຂອງຄູ່ຄວາມ. ຊຶ່ງເນື້ອໃນທີ່ຈະໄດ້ລົງໃນພາກຕັດສິນ ຫຼື ເອີ້ນວ່າພາກດ້ວຍເຫດນີ້ ທີ່ກຳນົດໄວ້ໃນທຸກຄຳຕັດສິນຂອງສານນັ້ນ ແມ່ນຈະກຳນົດການພິຈາລະນາຄະດີຂອງຄະນະສານໃນມື້ປະຊຸມສານ ແລະ ມື້ທີ່ປະກາດຄຳຕັດສິນນັ້ນມີຄູ່ຄວາມຝ່າຍໃດແດ່ທີ່ເຂົ້າຮ່ວມ ແລະ ມີຜູ້ໃດແດ່ທີ່ກ່ຽວຂ້ອງກັບຄະດີ ແຕ່ບໍ່ໄດ້ເຂົ້າຮ່ວມການພິຈາລະນາໃນທີ່ປະຊຸມສານ ໂດຍຈະກຳນົດການຕັດສິນວ່າໄດ້ຕັດສິນຊ້ອງໜ້າຝ່າຍໃດ ຫຼື ຕັດສິນລັບຫຼັງຝ່າຍໃດ. ພ້ອມກັນນັ້ນກໍຈະບົ່ງບອກຄຳຮ້ອງຟ້ອງຂອງໂຈດ ຫຼື ຄຳຟ້ອງແຍ່ງຂອງຈຳເລີຍມີເຫດຜົນ ຫຼື ບໍ່ມີເຫດຜົນ, ບົ່ງບອກຜົນຂອງການລົງຄຳຕັດສິນໃນແຕ່ລະປະເດັນ ໂດຍໃຫ້ສອດຄ່ອງກັບພາກວິນິດໄສທີ່ໄດ້ໃຫ້ເຫດຜົນໃນການລົງຄຳຕັດສິນມາຂ້າງເທິງ. "ແຕ່ຖ້າຫາກການວິນິດໄສແນວໜຶ່ງ ພັດມາລົງຄຳຕັດສິນອີກແນວໜຶ່ງ ກໍຈະພາໃຫ້ຄຳຕັດສິນນັ້ນຂັດກັນເອງເຊັ່ນ ໃນພາກວິນິດໄສໄດ້ວິນິດໄສວ່າ ໂຈດມີຫຼັກຖານໜັກແໜ້ນວ່າທີ່ດິນດັ່ງກ່າວແມ່ນເປັນກຳມະສິດຂອງໂຈດ ແຕ່ໃນເວລາລົງຄຳຕັດສິນພັດໄດ້ລົງຄຳເຫັນຊີ້ຂາດວ່າຄຳຮ້ອງຟ້ອງຂອງໂຈດບໍ່ມີເຫດຜົນ ແລະ ໃຫ້ຍົກເລີກຄຳຮ້ອງຟ້ອງຂອງໂຈດຖິ້ມທັງໝົດ ນີ້ກໍສະແດງໃຫ້ເຫັນວ່າ ການລົງຄຳຕັດສິນບໍ່ສອດຄ່ອງ ແລະ ບໍ່ກົມກຽວກັນລະຫວ່າງພາກວິນິດໄສ ແລະ ພາກຕັດສິນ, ພ້ອມກັນນັ້ນການລົງຄຳເຫັນຊີ້ຂາດຂອງຄະນະສານໃນພາກຕັດສິນແມ່ນຈະສັ້ນ, ແຈ່ມແຈ້ງ, ຊັດເຈນ ແລະ ແນ່ນອນ ຊຶ່ງບໍ່ຈຳເປັນຈະໃຫ້ເຫດຜົນຄືກັນກັບພາກວິນິດໄສຕື່ມອີກ"[99].

ນອກຈາກນັ້ນ ໃນພາກຕັດສິນ ຍັງກຳນົດກ່ຽວກັບຄວາມຮັບຜິດຊອບໃນການທົດແທນ ຫຼື ບໍ່ທົດແທນກ່ຽວກັບເງິນວາງສານ, ຝ່າຍໃດຈະເປັນຜູ້ຮັບຜິດຊອບຕໍ່ຄ່າທຳນຽມສານ (ອາກອນຂອງລັດ) ແລະ ຄ່າໃຊ້ຈ່າຍໃນເວລາຈັດຕັ້ງປະຕິບັດຄຳຕັດສິນຂອງສານໃນຕໍ່ໜ້າຕາມການໃຊ້ຈ່າຍຕົວຈິງ ຊຶ່ງແມ່ນຝ່າຍທີ່ເສຍຄະດີຈະເປັນຜູ້ຮັບຜິດຊອບທັງໝົດ ພ້ອມນັ້ນກໍກຳນົດສິດໃນການຮ້ອງຂໍອຸທອນຄຳຕັດສິນຂອງຄູ່ຄວາມ ແລະ ສິດໃນການສະເໜີຄັດຄ້ານຄຳຕັດສິນຂອງຫົວໜ້າອົງການໄອຍະການປະຊາຊົນ.

---

[99] ປຶ້ມຄູ່ມືການຂຽນຄຳຕັດສິນຄະດີແພ່ງ, ສານປະຊາຊົນສູງສຸດ ປີ 2006, ໜ້າ 67

## 5. ປະເພດຂອງຄຳຕັດສິນ

ຄຳຕັດສິນຄະດີແພ່ງຂອງສານຈະແບ່ງອອກເປັນສອງລັກສະນະຄື: ການບໍ່ຮັບຮູ້ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ ແລະ ການຮັບຮູ້ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ.

### 5.1. ການບໍ່ຮັບຮູ້ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ

ການພິຈາລະນາລົງຄຳຕັດສິນຂອງສານນັ້ນ ຜ່ານການຄົ້ນຄວ້າບັນດາຂໍ້ມູນຫຼັກຖານ ແລະເອກະສານຕ່າງໆທີ່ມີຢູ່ໃນສຳນວນຄະດີ ພ້ອມທັງພິຈາລະນາຜົນຂອງການໄຕ່ສວນຄະດີໃນທີ່ປະຊຸມສານທັງໝົດແລ້ວ ຖ້າຄະນະສານຫາກເຫັນວ່າຄຳຮ້ອງຟ້ອງຂອງໂຈດ ຫຼື ຄຳຟ້ອງແຍ່ງຂອງຈຳເລີຍບໍ່ມີເຫດຜົນພຽງພໍ ຄະນະສານກໍຈະລົງຄຳເຫັນຊີ້ຂາດໂດຍໃຫ້ຍົກເລີກຄຳຮ້ອງຟ້ອງຂອງໂຈດ ຫຼື ຄຳຟ້ອງແຍ່ງຂອງຈຳເລີຍຖິ້ມທັງໝົດ ພ້ອມທັງໃຫ້ໂຈດ ຫຼື ຈຳເລີຍ ຮັບຜິດຊອບຕໍ່ກັບຄ່າທຳນຽມສານຕ່າງໆ ຕາມແຕ່ລະກໍລະນີ ເຊັ່ນ ຖ້າຫາກສານໄດ້ຍົກເລີກຄຳຮ້ອງຟ້ອງຂອງໂຈດ ກໍໃຫ້ໂຈດຮັບຜິດຊອບຕໍ່ຄ່າທຳນຽມສານທັງໝົດ. ແຕ່ໃນກໍລະນີສານໄດ້ພິຈາລະນາຕາມຄຳຮ້ອງຟ້ອງຂອງໂຈດ ແລະ ຍົກເລີກຄຳຟ້ອງແຍ່ງຂອງຈຳເລີຍນັ້ນ ກໍໃຫ້ຈຳເລີຍທົດແທນເງິນວາງສານທີ່ໂຈດນຳມາວາງສານກ່ອນ ແລະ ເງິນທີ່ໄດ້ໃຊ້ຈ່າຍເຂົ້າໃນການດຳເນີນຄະດີຄືນໃຫ້ແກ່ໂຈດ ພ້ອມທັງຮັບຜິດຊອບຕໍ່ຄ່າທຳນຽມສານ ແລະ ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃນຕໍ່ໜ້າທັງໝົດ.

### 5.2. ການຮັບຮູ້ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ

ການພິຈາລະນາລົງຄຳຕັດສິນຂອງສານນັ້ນ ຜ່ານການຄົ້ນຄວ້າບັນດາຂໍ້ມູນຫຼັກຖານ ແລະ ເອກະສານຕ່າງໆທີ່ມີຢູ່ໃນສຳນວນຄະດີ ແລະ ພິຈາລະນາຜົນຂອງການໄຕ່ສວນຄະດີໃນທີ່ປະຊຸມສານແລ້ວ ຖ້າຄະນະສານຫາກເຫັນວ່າຄຳຮ້ອງຟ້ອງຂອງໂຈດ ຫຼື ຄຳຟ້ອງແຍ່ງຂອງຈຳເລີຍມີເຫດຜົນພຽງພໍ ຄະນະສານກໍຈະລົງຄຳຕັດສິນໃຫ້ໂຈດ ຫຼື ຈຳເລີຍຮັບຜິດຊອບຕາມແຕ່ລະກໍລະນີ ແລະ ຂໍ້ຂັດແຍ່ງທີ່ໂຈດ ແລະ ຈຳເລີຍ ລວມທັງບຸກຄົນທີສາມໄດ້ມີຂໍ້ຂັດແຍ່ງກັນນັ້ນ ເຊັ່ນ ໃຫ້ຈຳເລີຍໃຊ້ແທນຄ່າເສັຍຫາຍແກ່ໂຈດ ຫຼື ໃຫ້ໂຈດໃຊ້ແທນຄ່າເສັຍຫາຍແກ່ຈຳເລີຍ ໃນກໍລະນີມີການຟ້ອງແຍ່ງ, ໃຫ້ຈຳເລີຍສົ່ງຊັບສິ່ງຂອງຄືນໃຫ້ແກ່ໂຈດໃນກໍລະນີການຢືມຊັບສິ່ງຂອງໄປໃຊ້ ຫຼື ໃຫ້ໂຈດສົ່ງຊັບສິ່ງຂອງຄືນໃຫ້ແກ່ຈຳເລີຍໃນກໍລະນີມີການຟ້ອງແຍ່ງ, ໃຫ້ຈຳເລີຍສົ່ງເງິນຕົ້ນທຶນ ພ້ອມທັງດອກເບ້ຍໃຫ້ແກ່ໂຈດໃນກໍລະນີທີ່ມີການກູ້ຢືມ ຫຼື ໃຫ້ໂຈດສົ່ງເງິນຕົ້ນທຶນ ແລະດອກເບ້ຍໃຫ້ແກ່ຈຳເລີຍໃນກໍລະນີມີການຟ້ອງແຍ່ງ ຫຼື ລູກໜີ້ເປັນຜູ້ຮ້ອງຟ້ອງຂໍໃຊ້ແທນໜີ້ສິນ, ໃຫ້ຈຳເລີຍຍົກຍ້າຍອອກຈາກທີ່ດິນ ແລະເຮືອນຂອງໂຈດ ໃນກໍລະທີ່ເປັນສັນຍາເຊົ່າ ຫຼື ການຕົກລົງອື່ນ ຫຼື ໃຫ້ໂຈດຍົກຍ້າຍອອກຈາກທີ່ດິນ ແລະເຮືອນຂອງຈຳເລີຍ ໃນກໍລະນີມີການຟ້ອງແຍ່ງ, ໃຫ້ໂຈດ ແລະ ຈຳເລີຍ ຂາດຈາກສາຍຜົວເມັຍ, ໃຫ້ຈຳເລີຍຈ່າຍຄ່າລ້ຽງດູລູກ, ຄ່າປົວແປງຈິດໃຈ, ໃຫ້ຄູ່ຄວາມຝ່າຍໃດຝ່າຍໜຶ່ງປະຕິບັດພາງສ່ວນໃດສ່ວນໜຶ່ງກ່ອນ, ໃຫ້ຈຳເລີຍສົ່ງໃບຕາດິນຄືນໃຫ້ແກ່ໂຈດ ຫຼື ໃຫ້ໂຈດທົດແທນເງິນຄືນແກ່ບຸກຄົນທີສາມກ່ອນ ຈຶ່ງໃຫ້ຈຳເລີຍສົ່ງໃບຕາດິນຄືນແກ່ໂຈດ ແລະອື່ນໆ.

ໃນກໍລະນີ ທີ່ຈຳເລີຍໄດ້ຮັບຮູ້ໜີ້ສິນຕາມຄຳຮ້ອງຟ້ອງຂອງໂຈດທັງໝົດ ແລະ ຍິນດີໃຊ້ແທນໜີ້ສິນຈຳນວນດັ່ງກ່າວ ແລະໂຈດກໍໄດ້ຂໍໃຫ້ສານພິຈາລະນາລົງຄຳຕັດສິນໃຫ້ຈຳເລີຍປະຕິບັດພາງໃນການໃຊ້ແທນໜີ້ສິນໃຫ້ແກ່ຜູ່ກ່ຽວກ່ອນສ່ວນໃດສ່ວນໜຶ່ງ ເພື່ອເປັນການບັນເທົາທຸກ ຫຼື ຄວາມຈຳເປັນຮີບດ່ວນຂອງໂຈດ ກ່ອນທີ່ຄຳຕັດສິນໃຊ້ໄດ້ຢ່າງເດັດຂາດ ຄະນະສານກໍຈະກຳນົດກ່ຽວກັບການປະຕິບັດພາງນັ້ນລົງໃນຄຳຕັດສິນດັ່ງກ່າວ ແລ້ວກໍສົ່ງຄຳຕັດສິນ 01 ສະບັບ ໄປຍັງຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອຈັດຕັ້ງປະຕິບັດຄຳຕັດສິນຂອງສານໄດ້ປະຕິບັດພາງ ຕາມທີ່ສານໄດ້ລົງຄຳຕັດສິນໄວ້ນັ້ນໄປກ່ອນ ເຖິງແມ່ນວ່າຄູ່ຄວາມຝ່າຍໃດໜຶ່ງໄດ້ຮ້ອງຂໍອຸ ທອນ ຫຼື ທົວໜ້າອົງການໄອຍະການປະຊາຊົນໄດ້ສະເໜີຄັດຄ້ານຄຳຕັດສິນ ເພື່ອໃຫ້ສານປະຊາຊົນຂັ້ນອຸທອນພິຈາລະນາຄະດີດັ່ງ

ກ່າວຄືນໃໝ່ກໍຕາມ[100]. ກ່ຽວກັບຈຳນວນ ຫຼື ມູນຄ່າ ທີ່ສານໄດ້ລົງຄຳຕັດສິນໃຫ້ປະຕິບັດພາງນັ້ນ ຈະບໍ່ອະນຸຍາດໃຫ້ແກ່ຄູ່ຄວາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນສະເໜີຄັດຄ້ານໄດ້.

ຄະນະສານຂັ້ນຕົ້ນທີ່ໄດ້ອອກຄຳຕັດສິນແລ້ວນັ້ນ ຕ້ອງພິມຄຳຕັດສິນໃຫ້ສຳເລັດພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນລົງຄຳຕັດສິນເປັນຕົ້ນໄປ[101]. ໃນກໍລະນີ ທີ່ຄະນະສານຫາກບໍ່ສາມາດພິມຄຳຕັດສິນໃຫ້ສຳເລັດພາຍໃນກຳນົດເວລາ ຊາວວັນ ໄດ້, ຄະນະສານຈະເຮັດປະເດັນຄຳຕັດສິນຕາມທີ່ໄດ້ບັນທຶກໄວ້ໃນປຶ້ມປະຊຸມສານ ແລ້ວສົ່ງໃຫ້ໂຈດ ແລະ ຈຳເລີຍກ່ອນ ຖ້າມີການຮ້ອງຂໍຈາກພວກກ່ຽວ ຊຶ່ງປະທານຄະນະສານຕັດສິນຄະດີດັ່ງກ່າວຈະເປັນຜູ້ລົງລາຍເຊັນໃສ່ປະເດັນການຕັດສິນນັ້ນ[102].

## 6. ການດຳເນີນການ ພາຍຫຼັງປະກາດຄຳຕັດສິນ

### 6.1. ການຮຽບຮຽງ ແລະ ພິມຄຳຕັດສິນ

ພາຍຫຼັງທີ່ຄະນະສານໄດ້ປະກາດຄຳຕັດສິນເປັນທີ່ຮຽບຮ້ອຍແລ້ວ ຖ້າຄຳຕັດສິນທີ່ຄະນະສານໄດ້ຮ່າງຢູ່ໃນເວລາທີ່ພິຈາລະນາຄະດີໃນຫ້ອງປະຊຸມລັບນັ້ນ ຫາກຍັງບໍ່ທັນສົມບູນ ໂດຍສະເພາະກໍແມ່ນການຂີດຂຽນ, ຮຽບຮຽງຄຳສັບ, ກວດກາຄືນກ່ຽວກັບຫຼັກຖານທີ່ຄະນະສານໄດ້ນຳມາເປັນເຫດຜົນໃນການພິຈາລະນາຕັດສິນ, ການປັບປຸງທາງດ້ານໄວຍະກອນ ຊຶ່ງການປັບປຸງນັ້ນແມ່ນຈະດັດແປງ ຫຼື ປັບປຸງທາງດ້ານເຕັກນິກຂອງການຂີດຂຽນເທົ່ານັ້ນ ແລະຈະບໍ່ໄດ້ແກ້ໄຂເນື້ອໃນໃຈຄວາມຂອງການຕັດສິນແຕ່ຢ່າງໃດ. ຕາມຫຼັກການແລ້ວ ປະທານຄະນະສານຜູ້ທີ່ຂຶ້ນເປັນປະທານຄະນາສານນັ້ນເປັນຜູ້ຮຽບຮຽງ ແລະປັບປຸງຄືນທັງໝົດ. ຫຼັງຈາກຮຽບຮຽງ ແລະ ປັບປຸງຄຳຕັດສິນຄືນໃໝ່ສຳເລັດແລ້ວ ກໍສົ່ງຄຳຕັດສິນໃຫ້ຈ່າສານ ເພື່ອຈັດພິມໃຫ້ສຳເລັດ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ຕົວຢ່າງ:** ໃນທີ່ປະຊຸມສານປະທານຄະນະສານໄດ້ປະກາດຄຳຕັດສິນວ່າຄຳຮ້ອງຟ້ອງຂອງໂຈດບໍ່ມີເຫດຜົນ ແລະໄດ້ລົງຄຳຕັດສິນ ໃຫ້ຍົກເລີກຄຳຮ້ອງຟ້ອງຂອງໂຈດຖິ້ມທັງໝົດ ໃນເວລາທີ່ປັບປຸງຄຳຕັດສິນນັ້ນແມ່ນຈະບໍ່ໄດ້ປ່ຽນແປງວ່າຄຳຮ້ອງຟ້ອງຂອງໂຈດມີເຫດຜົນ ແລະ ລົງຄຳຕັດສິນ ໃຫ້ໂຈດເປັນຝ່າຍຊະນະຄະດີແຕ່ຢ່າງໃດ.

### 6.2. ການແຈ້ງຄຳຕັດສິນໃຫ້ຄູ່ຄວາມຮັບຊາບ

ພາຍຫຼັງທີ່ໄດ້ພິມຄຳຕັດສິນສຳເລັດ ແລະ ປະທານຄະນະສານ ພ້ອມດ້ວຍຈ່າສານໄດ້ລົງລາຍເຊັນ ແລະ ຈ້ຳກາຄະນະສານ ແລະ ກາຊີ້ແຈ້ງຂອງຈ່າສານເປັນທີ່ຮຽບຮ້ອຍແລ້ວ ຈ່າສານຈະເຮັດຄຳຕັດສິນເປັນສອງສະບັບ, ສະບັບໜຶ່ງເກັບໄວ້ໃນສຳເນົາຂອງຄະນະສານ, ອີກສະບັບໜຶ່ງເກັບໄວ້ໃນສຳນວນຄະດີ. ໃນກໍລະນີທີ່ມີການຕັດສິນເປັນການຊ້ອງໜ້າຂອງຄູ່ຄວາມ ຈ່າສານຈະອອກໝາຍຮຽກຄູ່ຄວາມທັງສອງຝ່າຍເຂົ້າມາຮັບເອົາຄຳຕັດສິນ ແລະຖ້າຄູ່ຄວາມທັງສອງຝ່າຍ ຫຼື ພາກສ່ວນອື່ນຕ້ອງການເອົາຄຳຕັດສິນນັ້ນ ຈ່າສານຈະສຳເນົາໃຫ້ພວກກ່ຽວ ພ້ອມທັງລົງລາຍເຊັນໃສ່ດ້ານຫຼັງ ເພື່ອຢັ້ງຢືນຄຳຕັດສິນດັ່ງກ່າວ.

ໃນກໍລະນີທີ່ຄະນະສານຫາກໄດຕັດສິນລັບຫຼັງຄູ່ຄວາມຝ່າຍໃດຝ່າຍໜຶ່ງນັ້ນ ຈ່າສານກໍຈະເປັນຜູ້ຮຽກຄູ່ຄວາມຝ່າຍທີ່ບໍ່ໄດ້ເຂົ້າມາຮ່ວມການພິຈາລະນາຄະດີໃນທີ່ປະຊຸມສານ ແລະມື້ປະກາດຄຳຕັດສິນນັ້ນ ເພື່ອເຂົ້າມາຮັບຊາບຄຳຕັດສິນ; ພາຍຫຼັງທີ່ຜູ້ກ່ຽວເຂົ້າມາແລ້ວ ຈ່າສານກໍເຮັດບົດບັນທຶກຮັບຊາບຄຳຕັດສິນໃຫ້ຝ່າຍທີ່ບໍ່ໄດ້ເຂົ້າຮ່ວມ ພ້ອມທັງແຈ້ງສິດໃນການຂໍຄັດຄ້ານການຕັດສິນຂອງສານ ເພື່ອສະເໜີໃຫ້ຄະນະສານພິຈາລະນາຕັດສິນຄະດີນັ້ນຄືນໃໝ່ໃຫ້ຊ້ອງໜ້າຜູ້ກ່ຽວ ແລະ ແຈ້ງສິດໃນການຂໍອຸທອນໃຫ້ແກ່ຜູ້ກ່ຽວຊາບ.

ໃນກໍລະນີທີ່ຈ່າສານໄດ້ສົ່ງໝາຍຮຽກໃຫ້ຄູ່ຄວາມເຂົ້າມາຮັບຊາບຄຳຕັດສິນເຖິງສາມຄັ້ງແລ້ວແຕ່ຄູ່ຄວາມທີ່ຖືກຄະນະສານຕັດສິນລັບຫຼັງນັ້ນ ຫາກບໍ່ເຂົ້າມາສານໂດຍບໍ່ມີເຫດຜົນພຽງພໍ ຊຶ່ງມີການຢັ້ງຢືນຈາກອຳນາດການປົກຄອງ

---

[100] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 251

[101] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 250 ວັກສຸດທ້າຍ

[102] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 253

ບ້ານ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງແລ້ວຈ່າສານກໍຈະສົ່ງສຳນວນຄະດີດັ່ງກ່າວໄປຍັງຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອຈັດຕັ້ງປະຕິບັດ ຫຼື ສົ່ງສຳນວນຄະດີໄປຍັງສານປະຊາຊົນຂັ້ນອຸທອນພິຈາລະນາ ຖ້າມີການຮ້ອງຂໍອຸທອນ ຫຼື ມີການສະເໜີຄັດຄ້ານຄຳຕັດສິນຂອງຫ້ອງການໄອຍະການປະຊາຊົນ.

### 6.3. ກໍລະນີຄຳຕັດສິນທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດ

ຄູ່ຄວາມມີສິດໃນການຮ້ອງຂໍອຸທອນ ແລະ ຫ້ອງການໄອຍະການປະຊາຊົນກໍມີສິດສະເໜີຄັດຄ້ານຄຳຕັດສິນຂອງສານຂັ້ນຕົ້ນໄດ້ພາຍໃນກຳນົດເວລາ ຊາວ ວັນ ນັບແຕ່ວັນລົງຄຳຕັດສິນເປັນຕົ້ນໄປ (ສຳລັບຜູ້ຖືກສານຕັດສິນຊ້ອງໜ້າ ຫຼື ລັບຫຼັງແຕ່ຖືວ່າຊ້ອງໜ້າ) ແລະ ນັບແຕ່ວັນຮັບຊາບຄຳຕັດສິນເປັນຕົ້ນໄປ (ສຳລັບຜູ້ຖືກສານຕັດສິນລັບຫຼັງ) ໂດຍຈະກຳນົດໄວ້ໃນຄຳຕັດສິນຂອງສານ. ຖ້າມີການຮ້ອງຂໍອຸທອນຂອງຄູ່ຄວາມ ຫຼື ມີການສະເໜີຄັດຄ້ານຂອງຫ້ອງການໄອຍະການປະຊາຊົນແລ້ວ ແມ່ນຄຳຕັດສິນສະບັບດັ່ງກ່າວຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດຕາມກົດໝາຍ.

ສຳລັບວິທີການຮ້ອງຂໍອຸທອນຂອງຄູ່ຄວາມກໍສາມາດເຮັດດ້ວຍການຈອງ ຫຼື ຍື່ນຄຳຮ້ອງຂໍອຸທອນຕໍ່ສານໄດ້[103]. ແຕ່ການຍື່ນຄຳຮ້ອງຂໍອຸທອນນັ້ນ ຄູ່ຄວາມຕ້ອງຍື່ນຕໍ່ສານປະຊາຊົນທີ່ໄດ້ຕັດສິນຄະດີດັ່ງກ່າວເປັນຂັ້ນຕົ້ນ ແລະ ຖ້າມີການຈອງ ຫຼື ຍື່ນຄຳຮ້ອງຂໍອຸທອນແລ້ວ ຈ່າສານຂອງສານປະຊາຊົນຂັ້ນຕົ້ນທີ່ໄດ້ຮັບການຈອງ ຫຼື ຄຳຮ້ອງຂໍອຸທອນຈະເປັນຜູ້ເກັບຄ່າຂໍອຸທອນ ແລະຄ່າໃຊ້ຈ່າຍໃນການດຳເນີນຄະດີຢູ່ສານປະຊາຊົນຂັ້ນອຸທອນພ້ອມ ແລ້ວສົ່ງເງິນພ້ອມທັງສຳນວນຄະດີດັ່ງກ່າວໄປຍັງສານປະຊາຊົນຂັ້ນອຸທອນ ພາຍໃນກຳນົດເວລາ ຊາວສາມ ວັນ ນັບແຕ່ວັນລົງຄຳຕັດສິນເປັນຕົ້ນໄປ[104]. ໝາຍຄວາມວ່າ ພາຍຫຼັງທີ່ໝົດກຳນົດເວລາຮ້ອງຂໍອຸທອນ ຊາວວັນ ແລ້ວ ພາຍໃນກຳນົດເວລາ ສາມ ວັນ ຈ່າສານຂອງສານທີ່ໄດ້ພິຈາລະນາຕັດສິນຄະດີເປັນຂັ້ນຕົ້ນນັ້ນຈະເປັນຜູ້ຈັດສົ່ງຄຳຕັດສິນ ແລະ ສຳນວນຄະດີໄປຍັງສານປະຊາຊົນຂັ້ນອຸທອນ ເພື່ອພິຈາລະນາຕາມລະບຽບກົດໝາຍ.

ໃນກໍລະນີທີ່ສານໄດ້ຕັດສິນລັບຫຼັງ ຄູ່ຄວາມຝ່າຍທີ່ບໍ່ໄດ້ເຂົ້າຮ່ວມໃນການພິຈາລະນາໃນທີ່ປະຊຸມສານນັ້ນຍັງມີສິດຄັດຄ້ານການຕັດສິນຂອງສານ ແລະ ມີສິດສະເໜີໃຫ້ຄະນະສານທີ່ໄດ້ຕັດສິນຄະດີນັ້ນໃຫ້ເປີດປະຊຸມສານພິຈາລະນາຕັດສິນຄະດີດັ່ງກ່າວຊ້ອງໜ້າຜູ້ກ່ຽວ ພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນທີ່ຜູ້ກ່ຽວໄດ້ຮັບຊາບຄຳຕັດສິນນັ້ນເປັນຕົ້ນໄປ ແລະ ຜູ້ທີ່ຖືກສານຕັດສິນລັບຫຼັງກໍຍັງມີສິດຂໍຄັດຄ້ານ ຫຼື ຂໍອຸທອນໄດ້ ແຕ່ບໍ່ອະນຸຍາດໃຫ້ຂໍທັງສອງຢ່າງ ໝາຍຄວາມວ່າ ຖ້າຫາກໄດ້ຂໍຄັດຄ້ານແລ້ວ ຈະບໍ່ອະນຸຍາດໃຫ້ຂໍອຸທອນ ແລະ ຖ້າຫາກຂໍອຸທອນແລ້ວກໍຈະບໍ່ໃຫ້ສິດໃນການຂໍຄັດຄ້ານອີກ. ຊຶ່ງວິທີການສະເໜີຄັດຄ້ານເພື່ອໃຫ້ຄະນະສານເກົ່າພິຈາລະນາຕັດສິນຄະດີຄືນໃໝ່ໃຫ້ຊ້ອງໜ້າຜູ້ກ່ຽວນັ້ນ ຜູ້ທີ່ຮ້ອງຂໍຕ້ອງຍື່ນຄຳຮ້ອງຂໍຄັດຄ້ານຕໍ່ປະທານສານບ່ອນທີ່ໄດ້ຕັດສິນຄະດີຂອງຜູ້ກ່ຽວ ເພື່ອໃຫ້ຄະນະສານເກົ່າເປັນຜູ້ພິຈາລະນາຄືນໃໝ່ໃຫ້ຊ້ອງໜ້າຜູ້ກ່ຽວ. ສຳລັບຄຳຕັດສິນທີ່ຄະນະສານໄດ້ຕັດສິນໄປກ່ອນນັ້ນແມ່ນຈະຖືກລຶບລ້າງ ແລະ ໃຊ້ບໍ່ໄດ້ ພາຍຫຼັງທີ່ຄະນະສານໄດ້ລົງຄຳຕັດສິນສະບັບໃໝ່ເປັນຕົ້ນໄປ[105].

### 6.4. ກໍລະນີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ

ຄຳຕັດສິນຂອງສານປະຊາຊົນຂັ້ນຕົ້ນຫາກບໍ່ໄດ້ຖືກຂໍອຸທອນ ໂດຍທີ່ໂຈດ, ຈຳເລີຍ ລວມທັງບຸກຄົນທີສາມ ບໍ່ໄດ້ຈອງ ແລະ ບໍ່ໄດ້ຍື່ນຄຳຮ້ອງຂໍອຸທອນ ຫຼື ບໍ່ຖືກສະເໜີຄັດຄ້ານໂດຍຫ້ອງການໄອຍະການປະຊາຊົນພາຍໃນກຳນົດເວລາ ຊາວ ວັນ ນັບແຕ່ວັນລົງຄຳຕັດສິນ ຫຼື ນັບແຕ່ວັນຮັບຊາບຄຳຕັດສິນເປັນຕົ້ນໄປແລ້ວ ແມ່ນຄຳຕັດສິນດັ່ງກ່າວເປັນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ. ຈ່າສານກໍຈະສົ່ງຄຳຕັດສິນພ້ອມທັງສຳນວນຄະດີໄປຍັງໜ່ວຍງານ ຫຼື

---

[103] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 263 ວັກ 01

[104] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 257 ວັກ 04

[105] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 256

ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານບ່ອນທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດ [106] ໝາຍຄວາມວ່າ ພາຍຫຼັງທີ່ໝົດກຳນົດຂໍອຸທອນ ຊາວວັນ ແລ້ວ ຖ້າຄູ່ຄວາມຫາກບໍ່ໄດ້ຂໍອຸທອນ ຫຼື ຫົວໜ້າອົງການໄອຍະການປະຊາຊົນບໍ່ໄດ້ສະເໜີຄັດຄ້ານຄຳຕັດສິນແລ້ວ ພາຍໃນກຳນົດເວລາ ສາມວັນ ຈ່າສານກໍຈະສົ່ງສຳນວນຄະດີ ແລະຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນໄປຍັງໜ່ວຍງານ ຫຼື ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງເປັນຜູ້ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

[106] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 258.

## ການປຽບທຽບລັກສະນະການດຳເນີນຄະດີແພ່ງຂອງ ຍີ່ປຸ່ນ ແລະ ສປປ ລາວ

ໃນການດຳເນີນຄະດີແພ່ງຂອງຍຍີ່ປຸ່ນ ແລະ ຂອງ ສປປ ລາວ ແມ່ນມີຫຼາຍຈຸດທີ່ຄ້າຍຄືກັນ ແລະແຕກຕ່າງກັນ. ຊຶ່ງໃນນີ້ ຄະນະຄົ້ນຄວ້າຂຽນປຶ້ມຄູ່ມືກົດໝາຍການດຳເນີນຄະດີແພ່ງ ພ້ອມດ້ວຊ່ຽວຊານ ຈາກປະເທດຍີ່ປຸ່ນຂໍຍົກເອົາພຽງແຕ່ 2 ຄູນລັກສະນະຂອງລະບົບຍີ່ປຸ່ນມາອະທິບາຍ ເພື່ອຊ່ວຍໃຫ້ທ່ານມີຄວາມເຂົ້າໃຈ ແລະ ເປັນຄວາມຮູ້ພື້ນຖານ ໃຫ້ກັບສຶກສາການດຳເນີນຄະດີແພ່ງຂອງຍີ່ປຸ່ນ ຫຼື ຂອງປະເທດອື່ນໆ.

**(1) ສາຍພົວພັນລະຫວ່າງ "ມາດຕະການຂອງສານ", "ຂັ້ນຕອນການດຳເນີນຄະດີ" ແລະ "ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ"**

ໃນລະບົບການດຳເນີນຄະດີແພ່ງຂອງ ສປປ ລາວ ມາດຕະການຂອງສານແມ່ນຂັ້ນຕອນໜຶ່ງຂອງການດຳເນີນຄະດີ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານແມ່ນຈະເລີ່ມປະຕິບັດນັບແຕ່ຄຳຕັດສິນໃຊ້ໄດ້ຢ່າງເດັດຂາດ. ແຕ່ໃນທາງກົງກັນຂ້າມ ໃນລະບົບຂອງຍີ່ປຸ່ນແມ່ນຈະເປັນຂັ້ນຕອນທີແຍກອອກຕ່າງຫາກຄື:

ໃນລະບົບຂອງຍີ່ປຸ່ນ ປົກະຕິແລ້ວມາດຕະການຂອງສານແມ່ນຈະນຳໃຊ້ກ່ອນການຍື່ນຄຳຮ້ອງຟ້ອງ ຊຶ່ງມັນເປັນເໜືອນທາງເລືອກໃຫ້ກັບຜູ່ທີ່ກຳລັງຈະຮ້ອງຟ້ອງຂຶ້ນສານ ສະນັ້ນບາງຄະດີກໍນຳໃຊ້ ແລະ ບາງຄະດີກໍບໍ່ນຳໃຊ້. ໃນແຕ່ລະສານຂອງຍີ່ ປຸ່ນແມ່ນຈະມີຄະນະສານ ຄະນະໜຶ່ງທີ່ເຮັດວຽກສະເພາະການພິຈາລະນາເລື່ອງມາດຕະການຂອງສານ ໝາຍຄວາມວ່າຖ້າມີຄູ່ ຄວາມຝ່າຍໃດໜຶ່ງຫາກຮ້ອງຂໍໃຫ້ສານອອກມາດຕະການແລ້ວກໍຈະມີຜູ່ພິພາກສານຂອງຄະນະສານດັ່ງກ່າວຮັບຜິດຊອບພິຈາ ລະນາວ່າສົມຄວນອອກ ຫຼື ບໍ່. ໃນການອອກມາດຕະການແຕ່ລະຄັ້ງແມ່ນຈຳເປັນຕ້ອງມີການຮ້ອງຂໍຈາກຄູ່ຄວາມ ນັ້ນກໍໝາຍ ຄວາມວ່າສານບໍ່ສາມາດພິຈາລະນາເພື່ອອອກມາດຕະການດ້ວຍຕົວເອງໄດ້.

ຫຼັງຈາກຍື່ນຄຳຮ້ອງຟ້ອງມາຫາສານແລ້ວ ຄະນະນັ້ນຈະພິຈາລະນາໂດຍຄະນະສານທີ່ກ່ຽວຂ້ອງ ຊຶ່ງບໍ່ແມ່ນຄະນະສານທີ່ ຮັບຜິດຊອບເລື່ອງມາດຕະການຂອງສານ.

ພາຍຫຼັງທີ່ຄຳຕັດສິນຫາກໃຊ້ໄດ້ຢ່າງເດັດຂາດແລ້ວ ຄູ່ຄວາມຈະຕ້ອງໄດ້ນຳເອົາຄຳຕັດສິນນັ້ນໄດ້ຍືນຕໍ່ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນດ້ວຍຕົວເອງ ແລ້ວການຈັດຕັ້ງປະຕິບັດກໍຈະເລີ່ມຂຶ້ນ, ໃນຂັ້ນຕອນນີ້ແມ່ນສານຈະບໍ່ມີໜ້າທີ່ຊ່ວຍຄູ່ຄວາມ ຫຼື ບໍ່ໄດ້ເຮັດຫຍັງໝົດ. ໃນແຕ່ລະສານຂອງຍີ່ປຸ່ນແມ່ນຈະມີຄະນະສານໜຶ່ງທີ່ຮັບຜິດຊອບເລື່ອງການ ຈັດຕັ້ງປະຕິບັດຄຳຕັດສິນໂດຍສະເພາະ. ຄຳຕັດສິນແມ່ນຈະມີຜົນສັກສິດຢູ່ 10 ປີ ສະນັ້ນມັນຂຶ້ນກັບຄູ່ຄວາມເອງວ່າຢາກຮ້ອງຂໍໃຫ້ປະຕິບັດຄຳຕັດ ສິນ ຫຼື ບໍ່ ແລະ ຢາກຮ້ອງຂໍໃນເວລາໃດ.

ໃນເດືອນ ທັນວາ 2012 ຄະນະຄົ້ນຄ້ວາຂຽນປຶ້ມຄູ່ມືກົດໝາຍການດຳເນີນຄະດີແພ່ງໄດ້ໄປຢ້ຽມຢາມຄະນະສານທີ່ຮັບຜິດຊອບເລື່ອງມາດຕະການຂອງສານ ແລະ ຄະນະສານທີ່ຮັບຜິດຊອບເລື່ອງການຈັດຕັ້ງປະຕິບັດຄຳຕັດສິນ ທີ່ສານແຂວງ ໂອຊາກ້າ Osaka District Court (ເທົ່າກັບສານແຂວງໃນລະບົບຂອງ ສປປ ລາວ) ແລະ ມີຂໍ້ມູນດັ່ງລຸ່ມນີ້:



<ກົດໝາຍທີ່ກຳນົດກ່ຽວກັບບັນຫາດັ່ງກ່າວ>

| | ຍີ່ປຸ່ນ | ສປປ ລາວ |
|---|---|---|
| ມາດຕະການຂອງສານ<br>Court measure | ກົດໝາຍວ່າດ້ວຍມາດຕະການຂອງສານ<br>Civil provisional remedies act | ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ<br>Law on civil procedure |
| ຂັ້ນຕອນການດຳເນີນຄະດີ<br>Procedure for judgment | ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ<br>Code of civil procedure | ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ<br>Law on civil procedure |
| ການຈັດຕັ້ງປະຕິບັດຄຳຕັດສິນ<br>Execution | ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນທາງແພ່ງ<br>Civil execution act | ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນ<br>Law on judgment enforcement |

(2) **“ຄົ້ນຄ້ວາຄະດີ” ແມ່ນເຮັດແນວໃດ**

ອີກລັກສະນະໜຶ່ງທີ່ສຳຄັນຂອງລະບົບຍີ່ປຸ່ນແມ່ນວິທີ “ການຄົ້ນຄ້ວາຄະດີ”. ໃນລະບົບຂອງ ສປປ ລາວ ແມ່ນຈະເຮັດ“ການຄົ້ນຄ້ວາຄະດີ” ກ່ອນແລ້ວຈຶ່ງຈະເປີດປະຊຸມສານ. ແຕ່ໃນລະບົບຍີ່ປຸ່ນແມ່ນບໍ່ມີການດຳເນີນການຄົ້ນຄ້ວາຄະດີກ່ອນເປີດປະຊຸມສານ.

ໂດຍປົກະຕິແລ້ວ ໃນລະບົບການດຳເນີນຄະດີແພ່ງ ຂອງຍີ່ປຸ່ນ ແມ່ນຈະມີການການເປີດປະຊຸມສານຫຼາຍໆຄັ້ງ ແລະ ໃນແຕ່ລະຄັ້ງແມ່ນຈະມີລະຍະຫ່າງກັນປະມານ 1 ເດືອນ ຄືເມື່ອໂຈດໄດ້ຍື່ນຄຳຮ້ອງຟ້ອງແລ້ວ ສານກໍຈະມອບໃຫ້ຄະນະສານທີ່ກ່ຽວຂ້ອງ ຫຼັງຈາກນັ້ນຄະນະສານທີ່ກ່ຽວຂ້ອງນັ້ນກໍຈະແຕ່ງຕັ້ງຄະນະສານຕັດສິນຂຶ້ນມາຮັບຜິດຊອບ ແລະ ຄະນະສານທີ່ຮັບ ຜິດຊອບກໍຈະນັດມື້ສຳລັບການເປີດປະຊຸມສານຄັ້ງທຳອິດ ໃນລະຍະນີ້ຄະນະສານຕັດສິນນັ້ນເກືອບວ່າບໍ່ຮູ້ຫຍັງເລີຍກ່ຽວກັບຄະດີນັ້ນ ໝາຍຄວາມວ່າພວກເພິ່ນຮູ້ແຕ່ເນື້ອໃນຂອງຄຳຮ້ອງຟ້ອງ ແລະ ເອກະສານຕ່າງໆທີ່ຕິດຄັດມາເທົ່ານັ້ນ. ໃນລະຍະດຳ ເນີນການເປີດປະຊຸມສານຄູ່ຄ ວາມຝ່າຍ ໜຶ່ງຈະ ຮຽກຮ້ອງໃຫ້ອີກຝ່າຍຊີ້ແຈງປະເດັ່ນຂໍ້ຂັດແຍ່ງ ຫຼື ໃຫ້ສະເໜີໃຫ້ຍື່ນຫຼັກຖານ ເພີ່ມເຕີມ ແລະ ບາງເທື່ອກໍແມ່ນ ຄະນະສານຕັດສິນເປັນຜູ່ສະເໜີໃຫ້ຄູ່ຄວາມຊີ້ແຈງ ຫຼື ຍື່ນຫຼັກຖານເພີ່ມເຕີມ. ພາຍຫຼັງທີ່ໄດ້ ເປີດປະຊຸມ ສານ ຫຼາຍຄັ້ງ (ຫຼາຍເດືອນຜ່ານໄປ) ຄະດີ ຫຼື ຂໍ້ຂັດແຍ່ງແມ່ນມີຄວາມແຈ້ງຂາວຂຶ້ນ. ຕໍ່ມາຄະນະສານຕັດສິນ ແລະ ຄູ່ຄວາມຈະຮ່ວມກັນກຳນົດຫຼັກຖານທາງດ້ານບຸກຄົນ ເຊັ່ນ: ພະຍານ, ຊ່ຽວຊານ, ຄູ່ຄວາມເອງ ແລະ ອື່ນໆ, ພ້ອມກັບກຳນົດ ມື້ເປີດປະຊຸມສານຄັ້ງສຸດທ້າຍ ເພື່ອໂຈະຈິງໃສ່ການສອບຖາມບັນດາຫຼັກຖານທາງດ້ານບຸກຄົນ ຫຼັງຈາກນັ້ນ ຕາມປົກະຕິແລ້ວ ຄະນະສານຕັດສິນຈະກຳນົດວັນເວລາສຳລັບການປະກາດຄຳຕັດສິນ. ໃນເມື່ອສຳ ເລັດການເປີດປະຊຸມສານແລ້ວ ຄະນະສານຕັດສິນຈະຮ່າງຄຳຕັດສິນ ແລະ ປະກາດໃນວັນເວລາທີ່ໄດ້ກຳນົດໄວ້.

ສຳລັບການເປີດປະຊຸມສານຄັ້ງທຳອິດ, ການເປີດປະຊຸມສານເພື່ອສອບຖາມຫຼັກຖານທາງດ້ານບຸກຄົນ ແລະ ສຳລັບການ ປະກາດຄຳຕັດສິນ ແມ່ນຕ້ອງໄດ້ເຮັດຢ່າງເປີດເຜີຍໃນຫ້ອງປະຊຸມສານ. ແຕ່ສຳລັບການເປີດປະຊຸມສານ ຄັ້ງອື່ນໆແມ່ນສາມາດ ເຮັດໃນຫ້ອງປະຊຸມນ້ອຍຂອງຄະນະສານທີ່ກ່ຽວຂ້ອງ ໝາຍຄວາມວ່າຈະມີພຽງແຕ່ຄະນະ ສານຕັດສິນ ແລະ ຄູ່ຄວາມເທົ່ານັ້ນ ທີ່ເຂົ້າຮ່ວມ.

ສະຫຼຸບວ່າ “ການຄົ້ນຄ້ວາຄະດີ” ໃນລະບົບຂອງລາວ ແມ່ນຄ້າຍຄືກັບການເປີດປະຊຸມສານໃນລະ ບົບຂອງຍີ່ປຸ່ນ.

# ພາກທີ III
# ການດໍາເນີນຄະດີແພ່ງຢູ່ສານຂັ້ນຕົ້ນແບບພິເສດ
# ບົດທີ 1
# ຄວາມຮູ້ທົ່ວໄປກ່ຽວກັບການພິຈາລະນາການຮ້ອງຂໍທາງແພ່ງ

## 1. ຄວາມໝາຍການຮ້ອງຂໍທາງແພ່ງ

ການຮ້ອງຂໍທາງແພ່ງ ແມ່ນການສະເໜີຂອງຜູ້ຮ້ອງຂໍ ເພື່ອໃຫ້ສານພິຈາລະນາຢັ້ງຢືນ ຫຼື ຮັບຮູ້ກ່ຽວກັບບັນຫາໃດໜຶ່ງທີ່ບໍ່ເປັນຂໍ້ຂັດແຍ່ງ [1] ແຕ່ຄູ່ຄວາມມີຄວາມຈໍາເປັນຕ້ອງໄດ້ຮ້ອງຂໍຕໍ່ສານ ເພື່ອໃຫ້ສານພິຈາລະນາຕັດສິນ ຊຶ່ງສານຈະດໍາເນີນຄະດີດັ່ງກ່າວນີ້ ໂດຍບໍ່ມີຈໍາເລີຍ ຫຼື ຝ່າຍກົງກັນຂ້າມເຂົ້າຮ່ວມຄືກັນກັບຄະດີທົ່ວໄປ[2] ແລະ ໃນການລົງຄໍາຕັດສິນກ່ຽວກັບການຮ້ອງຂໍທາງແພ່ງກໍຈະບໍ່ມີລັກສະນະເປັນການແກ້ໄຂບັນຫາ ແຕ່ເປັນລັກສະນະຢັ້ງຢືນ ຫຼື ຮັບຮູ້ເທົ່ານັ້ນ.

## 2. ຄວາມສໍາຄັນຂອງການຮ້ອງຂໍທາງແພ່ງ

ການຮ້ອງຂໍທາງແພ່ງ ແມ່ນມີຄວາມສໍາຄັນ ເນື່ອງຈາກວ່າ ເປັນການຮັບປະກັນໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນເອງ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ, ໃນເມື່ອສານໄດ້ລົງຄໍາຕັດສິນຢັ້ງຢືນ ຫຼື ຮັບຮູ້ກ່ຽວກັບບັນຫາໃດໜຶ່ງທີ່ຜູ້ຮ້ອງຂໍໄດ້ຮ້ອງຂໍແລ້ວນັ້ນ ກໍຈະເຮັດໃຫ້ສິດ ແລະ ຜົນປະໂຫຍດຂອງບຸກຄົນທີ່ກ່ຽວຂ້ອງໃນຄະດີໄດ້ຮັບການຟື້ນຟູຄືນໃໝ່ເຊັ່ນ ການຮ້ອງຂໍໃຫ້ສານຢັ້ງຢືນກ່ຽວກັບໃບຕາດິນເສັຍຫາຍ, ເມື່ອໄດ້ຮັບການຢັ້ງຢືນ ຫຼື ຮັບຮູ້ຈາກສານແລ້ວ ກໍສາມາດນໍາໄປສະເໜີຕໍ່ອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນໄດ້ອອກໃບສໍາເນົາຕາດິນໃຫ້ໃໝ່ຢ່າງຖືກຕ້ອງຕາມຂັ້ນຕອນ ແລະ ລະບຽບກົດໝາຍ.

## 3. ປະເພດການຮ້ອງຂໍທາງແພ່ງ

ການຮ້ອງຂໍທາງແພ່ງ ແບ່ງອອກເປັນປະເພດຕົ້ນຕໍ ດັ່ງນີ້:

- ການຮ້ອງຂໍ ໃຫ້ຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ;
- ການຮ້ອງຂໍ ໃຫ້ປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສັຍຊີວິດ;
- ການຮ້ອງຂໍ ໃຫ້ຢັ້ງຢືນໃບຕາດິນ ຫຼື ເອກະສານອື່ນເສັຍຫາຍ;
- ການຮ້ອງຂໍ ໃຫ້ສານຕັດສິນ ໃນກໍລະນີລູກໜີ້ເອົາຕົວຫຼົບໜີ.

ລາຍລະອຽດກ່ຽວກັບການດໍາເນີນການແກ້ໄຂການຮ້ອງຂໍທາງແພ່ງທັງສີ່ປະເພດເຫຼົ່ານີ້ ແມ່ນໄດ້ອະທິບາຍໄວ້ໃນບົດທີ 3, 4, 5 ແລະ 6 ຂອງພາກນີ້.

## 4. ຫຼັກການ (ລະບຽບ) ທົ່ວໄປຂອງການຮ້ອງຂໍທາງແພ່ງ

ການດໍາເນີນຄະດີແພ່ງ ສານຈະປະຕິບັດຕາມຫຼັກການທົ່ວໄປຂອງການດໍາເນີນຄະດີແພ່ງທີ່ວ່າ ສານປະຊາຊົນເຮັດໜ້າທີ່ໃນການພິຈາລະນາຕັດສິນຄະດີ ແລະ ການເຄື່ອນໄຫວຕ່າງໆ ຊຶ່ງຄູ່ຄວາມເປັນຜູ້ຮ້ອງຟ້ອງ ຫຼື ຮ້ອງຂໍມາເທົ່ານັ້ນ ຈຶ່ງສາມາດພິຈາລະນາໃຫ້ໄດ້, ຖ້າບໍ່ມີການຮ້ອງຟ້ອງ ຫຼື ການຮ້ອງຂໍຂອງຄູ່ຄວາມນັ້ນ ສານຈະບໍ່ພິຈາລະນາໃຫ້, ເວັ້ນແຕ່ສິດ ແລະ ຜົນປະໂຫຍດ ຂອງລັດ ແລະ ສັງຄົມ;

---

[1] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 162

[2] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 322

ຫຼັກການຮ້ອງຂໍທາງແພ່ງ ແມ່ນມີລັກສະນະ ແລະ ຈຸດພິເສດສະເພາະທີ່ແຕກຕ່າງຈາກຫຼັກການຮ້ອງຟ້ອງ ແລະ ການດຳເນີນຄະດີທົ່ວໄປ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຄູ່ຄວາມ ແລະ ເປັນບ່ອນອີງໃນການເຄື່ອນໄຫວວຽກງານຂອງຜູ້ພິພາກສາຕ້ອງປະຕິບັດຕາມ. ນອກຈາກຈະປະຕິບັດຕາມຫຼັກການລວມແລ້ວ ຍັງຕ້ອງໄດ້ປະຕິບັດຫຼັກການສະເພາະທີ່ເປັນພື້ນຖານໃນການດຳເນີນຄະດີການຮ້ອງຂໍທາງແພ່ງຕື່ມອີກ ເຊັ່ນ ຂອບເຂດການພິຈາລະນາການຮ້ອງຂໍ, ອົງປະກອບຂອງຄຳຮ້ອງຂໍ, ຜູ້ເຂົ້າຮ່ວມໃນການດຳເນີນຄະດີກ່ຽວກັບການຮ້ອງຂໍ, ການພິຈາລະນາການຮ້ອງຂໍໃນທີ່ປະຊຸມສານ, ການຕົກລົງກ່ຽວກັບການຮ້ອງຂໍ ແລະ ການຂໍອຸທອນ ຫຼື ສະເໜີຄັດຄ້ານຄຳຕັດສິນກ່ຽວກັບການຮ້ອງຂໍ.

#### 4.1. ຂອບເຂດການພິຈາລະນາການຮ້ອງຂໍທາງແພ່ງ

ສານປະຊາຊົນເຂດ ເປັນຜູ້ມີສິດອຳນາດໃນການພິຈາລະນາຄະດີການຮ້ອງຂໍທາງແພ່ງກ່ຽວກັບບັນຫາທາງແພ່ງ ແລະ ຄອບຄົວ ໂດຍບໍ່ຂຶ້ນກັບມູນຄ່າຂອງຄະດີ, ສ່ວນການຮ້ອງຂໍທາງແພ່ງກ່ຽວກັບບັນຫາທາງການຄ້າ ແລະ ບັນຫາເດັກນັ້ນ ແມ່ນສິດອຳນາດຂອງສານປະຊາຊົນແຂວງ, ນະຄອນ ແລະ ສານເດັກເປັນຜູ້ມີສິດພິຈາລະນາ[3].

ສານຈະນຳເອົາຄະດີການຮ້ອງຂໍທາງແພ່ງ ມາພິຈາລະນາໄດ້ໃນກໍລະນີມີການຮ້ອງຂໍໃຫ້ຢັ້ງຢືນ ຫຼື ຮັບຮູ້ ຊຶ່ງມີບາງບັນຫາຕົ້ນຕໍຄື ການຮ້ອງຂໍໃຫ້ຮັບຮູ້ວ່າເປັນບຸກຄົນໃດໜຶ່ງເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ, ການຮ້ອງຂໍໃຫ້ປະກາດວ່າເປັນຜູ້ຫາຍສາບສູນ ຫຼື ເສຍຊີວິດ, ການຮ້ອງຂໍໃຫ້ຢັ້ງຢືນກ່ຽວກັບໃບຕາດິນເສັຍຫາຍ ແລະ ການຮ້ອງຂໍໃຫ້ສານຕັດສິນໃນກໍລະນີຈຳເລີຍເອົາຕົວລົບໜີ, ນອກຈາກນັ້ນ ຍັງສາມາດຮ້ອງຂໍຕໍ່ບັນຫາອື່ນໆທີ່ມີລັກສະນະການຮ້ອງຂໍໃຫ້ສານພິຈາລະນາຢັ້ງຢືນ ຫຼື ຮັບຮູ້.

#### 4.2. ຄຳຮ້ອງຂໍທາງແພ່ງ

ຄຳຮ້ອງຂໍທາງແພ່ງ ທີ່ຈະສະເໜີໃຫ້ສານນຳມາພິຈາລະນານັ້ນ ຈະມີລັກສະນະແຕກຕ່າງຈາກຄຳຮ້ອງຟ້ອງທົ່ວໄປຕາມທີ່ໄດ້ກຳນົດໄວ້ໃນມາດຕາ 166 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ 2012 ຊຶ່ງຄຳຮ້ອງຂໍທາງແພ່ງຈະປະກອບດ້ວຍ: ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ ຂອງຜູ້ຮ້ອງຂໍ, ສາຍພົວພັນຂອງຜູ້ຮ້ອງຂໍກ່ຽວກັບເຫດການຂອງຄະດີທີ່ຮ້ອງຂໍ, ເຫດການຂອງຄະດີໂດຍຫຍໍ້, ບັນຫາທີ່ຮ້ອງຂໍໃຫ້ສານພິຈາລະນາ ພ້ອມທັງລາຍເຊັນ ແລະ ແປະໂປ້ມືຂອງຜູ້ຮ້ອງຂໍ ແລະ ຄຳຮ້ອງຂໍທີ່ສະເໜີຕໍ່ສານ ຜູ້ຮ້ອງຂໍຕ້ອງເຮັດເປັນລາຍລັກອັກສອນ ພ້ອມທັງປະກອບເອກະສານ, ຫຼັກຖານທີ່ກ່ຽວຂ້ອງຄັດຕິດກັບຄຳຮ້ອງຂໍ ໂດຍຜ່ານການຢັ້ງຢືນຈາກອຳນາດການປົກຄອງບ້ານ[4] ຈຶ່ງນຳໄປຍື່ນຕໍ່ສານທີ່ມີສິດອຳນາດຕາມຂອບເຂດສິດອຳນາດຂອງສານໃນການພິຈາລະນາການຮ້ອງຂໍທາງແພ່ງຕາມທີ່ໄດ້ອະທິບາຍໄວ້ໃນຂໍ້ 4.1 ຂອງບົດນີ້.

#### 4.3. ຜູ້ເຂົ້າຮ່ວມໃນການດຳເນີນຄະດີການຮ້ອງຂໍທາງແພ່ງ

ຜູ້ທີ່ຈະເຂົ້າຮ່ວມໃນການດຳເນີນຄະດີກ່ຽວກັບການຮ້ອງຂໍທາງແພ່ງ ປະກອບດ້ວຍ ຜູ້ຮ້ອງຂໍ, ຜູ້ຕາງໜ້າອົງການປົກຄອງ ຫຼື ອົງການຈັດຕັ້ງ, ພະຍານ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ ຊຶ່ງຜູ້ຮ້ອງຂໍເຂົ້າຮ່ວມເພື່ອອະທິບາຍ ແລະ ຊີ້ແຈງກ່ຽວກັບການຮ້ອງຂໍຕໍ່ສານ ແລະ ສານອາດຈະເຊີນຜູ້ທີ່ກ່ຽວຂ້ອງເຂົ້າມາຮ່ວມໃນການດຳເນີນຄະດີ ເພື່ອໃຫ້ຂໍ້ມູນ ແລະ ຊີ້ແຈງ ທີ່ສາມາດຢັ້ງຢືນເຫດການຂອງຄະດີໃຫ້ແຈ້ງຂາວ, ເຮັດໃຫ້ຜູ້ຮອງຂໍ ຫຼື ຜູ້ອ່ານໄດ້ເຂົ້າໃຈເຖິງເຫດຜົນຢ່າງຈະແຈ້ງກ່ຽວກັບປະເດັນການຮ້ອງຂໍ. ໃນກໍລະນີທີ່ການຮ້ອງຂໍຫາກພົວພັນເຖິງສິດ ແລະ ຜົນປະໂຫຍດຂອງລັດ, ເດັກ ແລະ ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດນັ້ນ ສານກໍຈະເຊີນພະນັກງານໄອຍະການປະຊາຊົນເຂົ້າຮ່ວມ[5] ເພື່ອເປັນຜູ້ຕາງໜ້າ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງພວກກ່ຽວ.

---

[3] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 323

[4] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 324

[5] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 325

ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ແມ່ນມີຄວາມສຳຄັນໃນການກຳນົດວ່າສານຈະຕັດສິນຖືກຕ້ອງຕາມຄວາມຈິງພຽງໃດ ຊຶ່ງຜູ້ເຂົ້າຮ່ວມເຫລົ່ານັ້ນ ລ້ວນແຕ່ເປັນຜູ້ປະກອບສ່ວນເຮັດໃຫ້ຂໍ້ເທັດຈິງທີ່ເກີດຂຶ້ນຢູ່ໃນການດຳເນີນຄະດີໃຫ້ມີຄວາມແຈ້ງຂາວ ເຊັ່ນ ນາຍບ້ານກໍຕ້ອງໄດ້ຈິງໃຈໃນການປະຕິບັດໜ້າທີ່ຂອງຕົນ ເປັນຕົ້ນການຢັ້ງຢືນເຫດການໃດໜຶ່ງອາດຈະເກີດຂຶ້ນກ່ອນການມີຄະດີ ຫຼື ພາຍຫຼັງມີຄະດີແລ້ວ, ພະຍານກໍຕ້ອງຈິງໃຈໃນການໃຫ້ຄວາມຮ່ວມມືຕໍ່ສານກ່ຽວກັບການລາຍງານເຫດການໃດໜຶ່ງທີ່ຕົນຮູ້ເຫັນບົນພື້ນຖານຄວາມເປັນກາງ ແລະ ບັນຫາອື່ນໆ ຊຶ່ງຜູ້ເຂົ້າຮ່ວມແຕ່ລະຄົນຕ້ອງໄດ້ປະກອບສ່ວນເຂົ້າໃນການຊອກຫາຄວາມຈິງເພື່ອໃຫ້ສານໄດ້ພິຈາລະນາຕັດສິນຖືກຕ້ອງຕາມຄວາມເປັນຈິງ ແລະ ສ້າງຄວາມຍຸຕິທຳແກ່ສັງຄົມຢ່າງແທ້ຈິງ.

### 4.4. ການພິຈາລະນາການຮ້ອງຂໍທາງແພ່ງໃນທີ່ປະຊຸມສານ

ໂດຍທົ່ວໄປແລ້ວລະບຽບການພິຈາລະນາຄະດີກ່ຽວກັບການຮ້ອງຂໍທາງແພ່ງໃນທີ່ປະຊຸມສານນັ້ນ ແມ່ນຈະດຳເນີນຕາມລະບຽບການເປີດປະຊຸມສານຄືກັນກັບຂັ້ນຕອນການປະຊຸມສານໃນຄະດີທົ່ວໄປຢູ່ສານຂັ້ນຕົ້ນ, ແຕ່ກໍມີບາງບັນຫາທີ່ແຕກຕ່າງຄື: ພາຍຫຼັງທີ່ປະທານຄະນະສານໄດ້ປະກາດເປີດປະຊຸມສານສຳເລັດ ພ້ອມທັງແຈ້ງເຫດການຂອງຄະດີໃຫ້ຜູ້ທີ່ເຂົ້າຮ່ວມໃນທີ່ປະຊຸມສານຮັບຊາບແລ້ວ ຄະນະສານກໍສະເໜີໃຫ້ຜູ້ຮ້ອງຂໍມີຄຳເຫັນ ແລະ ເລີ່ມການໄຕ່ສວນພະຍານ ລວມທັງບຸກຄົນອື່ນທີ່ກ່ຽວຂ້ອງ ແລ້ວຄະນະສານກໍຈະນຳເອົາຂໍ້ມູນຫຼັກຖານມາພິຈາລະນາ ແລະ ສະເໜີໃຫ້ພະນັກງານໄອຍະການປະຊາຊົນໄດ້ມີຄຳເຫັນ[6]. ຈາກນັ້ນປະທານຄະນະສານກໍປະກາດປິດປະຊຸມສານຊົ່ວຄາວ ເພື່ອພິຈາລະນາຄະດີໃນຫ້ອງປະຊຸມລັບ ໂດຍບໍ່ມີການດຳເນີນການໄກ່ເກ່ຍ ແລະ ການໂຕ້ຖຽງໃນທີ່ປະຊຸມສານອີກ.

ການພິຈາລະນາການຮ້ອງຂໍທາງແພ່ງໃນທີ່ປະຊຸມສານ ຕ້ອງເຮັດໂດຍ, ທາງປາກເປົ່າ, ຢ່າງເປີດເຜີຍ ຫຼື ປິດລັບໃນບາງກໍລະນີ, ຢ່າງຕໍ່ເນື່ອງ ແລະ ໂດຍບໍ່ມີການປ່ຽນຄະນະສານ, ໝາຍຄວາມວ່າ ການໄຕ່ສວນຄະດີກ່ຽວກັບການຮ້ອງຂໍທາງແພ່ງໃນທີ່ປະຊຸມສານທຸກຄັ້ງຕ້ອງເຮັດຢ່າງເປີດເຜີຍ[7] ຍົກເວັ້ນກໍລະນີທີ່ມີຄວາມຈຳເປັນໃນການຮັກສາຄວາມລັບຂອງລັດ, ບາງສາຍພົວພັນຄອບຄົວທີ່ແຕະຕ້ອງເຖິງຊີວິດສ່ວນຕົວຂອງຜົວ ຫຼື ເມັຍເຊັ່ນ ຜົວຂໍຢ່າຮ້າງເມັຍໂດຍອ້າງເຫດຜົນຕໍ່ສານໃນທາງທີ່ເຮັດໃຫ້ເພດຍິງ ຫຼື ເມັຍຂອງຜູ່ກ່ຽວມີຄວາມອັບອາຍຢ່າງຮ້າຍແຮງ ການໄຕ່ສວນຄະດີໃນກໍລະນີນີ້ ຄະນະສານຕ້ອງເຮັດຢ່າງປິດລັບ ແຕ່ເຖິງວ່າຄະນະສານຈະໄຕ່ສວນປິດລັບ ຫຼື ບໍ່ປິດລັບກໍຕາມ, ໃນເວລາອ່ານ ຫຼື ປະກາດຄຳຕັດສິນຂອງສານຕ້ອງເຮັດຢ່າງເປີດເຜີຍ.

## 5. ການຕົກລົງກ່ຽວກັບການຮ້ອງຂໍທາງແພ່ງ

ການຕົກລົງກ່ຽວກັບການຮ້ອງຂໍທາງແພ່ງ ສານຈະອອກເປັນຄຳຕັດສິນຂອງສານ ຊຶ່ງຈະບົ່ງບອກໃຫ້ເຫັນເຫດການຂອງຄະດີ ພ້ອມທັງ ໃຫ້ເຫດຜົນຕໍ່ແຕ່ລະປະເດັນທີ່ຜູ້ຮ້ອງຂໍໄດ້ສະເໜີມາຢ່າງລະອຽດໃນຄຳຕັດສິນດັ່ງກ່າວ. ພາຍຫຼັງທີ່ສານໄດ້ລົງຄຳຕັດສິນແລ້ວ ກໍຈະສົ່ງໃຫ້ອົງການໄອຍະການປະຊາຊົນຂັ້ນຂອງຕົນເພື່ອກວດກາ ແລະ ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອຈັດຕັ້ງປະຕິບັດຄຳຕັດສິນດັ່ງກ່າວຢ່າງເຂັ້ມງວດ.

ໃນກໍລະນີທີ່ໄດ້ມີການຮ້ອງຂໍອຸທອນຂອງຜູ້ຮ້ອງຂໍ ຫຼື ຜູ້ເຂົ້າຮ່ວມອື່ນໆ ຫຼື ໄດ້ມີການສະເໜີຄັດຄ້ານຄຳຕັດສິນຂອງຫົວໜ້າອົງການໄອຍະການປະຊາຊົນ ສານທີ່ໄດ້ພິຈາລະນາຕັດສິນຄະດີເປັນຂັ້ນຕົ້ນນັ້ນກໍຈະສົ່ງຄຳຕັດສິນກ່ຽວກັບການຮ້ອງຂໍທາງແພ່ງດັ່ງກ່າວໄປຍັງສານປະຊາຊົນຂັ້ນອຸທອນ ເພື່ອພິຈາລະນາຕາມລະບຽບກົດໝາຍ[8].

---

[6] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 326

[7] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 206

[8] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປບັປຸງ ປີ 2012, ມາດຕາ 327

**5.1. ການຂໍອຸທອນ ຫຼື ສະເໜີຄັດຄ້ານຄໍາຕັດສິນ**

ພາຍຫຼັງທີ່ສານໄດ້ພິຈາລະນາ ແລະ ລົງຄໍາຕັດສິນກ່ຽວກັບການຮ້ອງຂໍທາງແພ່ງໂດຍຢັ້ງຢືນ, ຮັບຮູ້ ຫຼື ບໍ່ຢັ້ງ ຢືນ, ບໍ່ຮັບຮູ້ ຕໍ່ການຮ້ອງຂໍຂອງຜູ້ຮ້ອງຂໍໄປແລ້ວ, ຖ້າຜູ້ຮ້ອງຂໍຫາກຍັງບໍ່ພໍໃຈຕໍ່ການຕັດສິນຂອງສານຂັ້ນຕົ້ນ ກໍມີສິດຮ້ອງຂໍອຸທອນ ຫຼື ຫົວໜ້າອົງການໄອຍະການປະຊາຊົນກໍມີສິດສະເໜີຄັດຄ້ານໄດ້ພາຍໃນກໍານົດເວລາ **ຊາວ ວັນ** ນັບແຕ່ວັນລົງຄໍາຕັດສິນ (ກໍລະນີຕັດສິນຊ້ອງໜ້າ) ຫຼື ວັນຮັບຊາບຄໍາຕັດສິນ (ກໍລະນີຕັດສິນລັບຫຼັງ) ນັ້ນເປັນຕົ້ນໄປ[9]. ຍົກເວັ້ນການຮ້ອງຂໍໃຫ້ຮັບຮູ້ວ່າບຸກຄົນໃດໜຶ່ງເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແລະ ການຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ, ຖ້າຫາກສານໄດ້ພິຈາລະນາລົງຄໍາຕັດສິນຮັບຮູ້ ຫຼື ປະກາດ ຕາມຈຸດປະສົງຂອງການຮ້ອງຂໍແລ້ວ ສານຈະບໍ່ອະນຸຍາດໃຫ້ສິດໃນການຮ້ອງຂໍອຸທອນ ຫຼື ສະເໜີຄັດຄ້ານໄດ້ອີກ.

ໃນກໍລະນີທີ່ຜູ້ຖືກສານຮັບຮູ້ວ່າບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ປະກາດການຫາຍສາບສູນ ຫຼື ເສຍຊີວິດ ຫາກໄດ້ກັບຄືນສູ່ສະພາບປົກກະຕິ ຫຼື ກັບມາຫາຄອບຄົວແລ້ວ ກໍມີສິດສະເໜີໃຫ້ສານລຶບລ້າງຄໍາຕັດສິນດັ່ງກ່າວນັ້ນໄດ້ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດຂອງພວກກ່ຽວຄືນ.

ໃນກໍລະນີທີ່ສານຫາກໄດ້ພິຈາລະນາ ແລະ ລົງຄໍາຕັດສິນບໍ່ໄປຕາມການຮ້ອງຂໍຂອງຜູ້ຮ້ອງຂໍ, ບໍ່ຢັ້ງຢືນ ຫຼື ບໍ່ຮັບຮູ້ນັ້ນ ຜູ້ຮ້ອງຂໍກໍມີສິດໃນການຮ້ອງຂໍອຸທອນ ຫຼື ຫົວໜ້າອົງການໄອຍະການປະຊາຊົນກໍມີສິດໃນການສະເໜີຄັດຄ້ານຄໍາຕັດສິນກ່ຽວກັບການຮ້ອງຂໍທາງແພ່ງ ໄດ້ທຸກຄະດີໂດຍບໍ່ມີການຍົກເວັ້ນ.

ຜູ້ທີ່ມີຈຸດປະສົງຢາກຂໍອຸທອນ ຫຼື ຫົວໜ້າອົງການໄອຍະການປະຊາຊົນຢາກສະເໜີຄັດຄ້ານຄໍາຕັດສິນ ຕ້ອງຍື່ນຄໍາຮ້ອງຂໍອຸທອນຕໍ່ສານທີ່ຕັດສິນຄະດີດັ່ງກ່າວຂັ້ນຕົ້ນຢ່າງເປັນລາຍລັກອັກສອນ ເພື່ອຊີ້ແຈງເຫດຜົນຂອງການບໍ່ພໍໃຈດັ່ງກ່າວ ພ້ອມດ້ວຍຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ ເພື່ອໃຫ້ສານປະຊາຊົນຂັ້ນອຸທອນພິຈາລະນາຕາມລະບຽບກົດໝາຍ.

## 6. ຄວາມແຕກຕ່າງ ລະຫວ່າງການຮ້ອງຂໍທາງແພ່ງ ແລະ ການຮ້ອງຟ້ອງ

ຫຼັກການພື້ນຖານຂອງການດໍາເນີນຄະດີແພ່ງໄດ້ກໍານົດຂັ້ນຕອນ, ວິທີການ, ຮູບການ ແລະ ລະບຽບການ ຕ່າງໆໄວ້ ເພື່ອໃຫ້ຜູ້ເຂົ້າຮ່ວມ ແລະ ຜູ້ຮັບຜິດຊອບໃນການດໍາເນີນຄະດີແພ່ງ ຕ້ອງໄດ້ປະຕິບັດຕາມຢ່າງເຂັ້ມງວດ, ຊຶ່ງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງສະບັບປັບປຸງປີ 2012 ກໍໄດ້ກໍານົດ ການດໍາເນີນຄະດີທາງແພ່ງອອກເປັນສອງລັກສະນະຄື: ການດໍາເນີນຄະດີແບບທົ່ວໄປ (ການຮ້ອງຟ້ອງ) ແລະ ການດໍາເນີນຄະດີແບບພິເສດ (ການຮ້ອງຂໍ) ແລະ ທັງສອງລັກສະນະກໍມີຄວາມແຕກຕ່າງກັນດັ່ງນີ້:

ການຮ້ອງຟ້ອງ ແມ່ນການຮ້ອງຂອງໂຈດ ເພື່ອໃຫ້ສານແກ້ໄຂບັນຫາທີ່ເປັນຂໍ້ຂັດແຍ່ງໃດໜຶ່ງທີ່ມີກັບຈໍາເລີຍ ຊຶ່ງຕ້ອງບອກເປົ້າໝາຍຂອງຂໍ້ຂັດແຍ່ງ, ການຮຽກຮ້ອງຂອງຄູ່ຄວາມ ພ້ອມທັງເຫດການທີ່ຄູ່ຄວາມໄດ້ອ້າງມາເພື່ອເປັນພື້ນຖານໃຫ້ແກ່ຄໍາຮ້ອງຟ້ອງ ຫຼື ຟ້ອງແຍ່ງຂອງຕົນ.

ການຮ້ອງຂໍທາງແພ່ງ ແມ່ນການສະເໜີໃຫ້ສານພິຈາລະນາຮັບຮູ້, ຢັ້ງຢືນ ຫຼື ປະກາດກ່ຽວກັບບັນຫາໃດໜຶ່ງ ທີ່ບໍ່ເປັນຂໍ້ຂັດແຍ່ງ ໂດຍສະເພາະການຮ້ອງຂໍໃຫ້ສານຢັ້ງຢືນ ແລະ ຮັບຮູ້ ເຖິງຄວາມຖືກຕ້ອງຂອງເອກະສານໃດໜຶ່ງ ແລະ ບັນຫາໃດໜຶ່ງ ເຊັ່ນ ການຮ້ອງຂໍໃຫ້ສານຢັ້ງຢືນໃບຕາດິນເສຍຫາຍ, ການຫາຍສາບສູນ ຫຼື ການເສຍຊີວິດຂອງບຸກຄົນໃດໜຶ່ງ ແລະ ອື່ນໆ.

---

[9] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 329

# ບົດທີ 2

# ການພິຈາລະນາການຮ້ອງຂໍທາງແພ່ງ

## 1. ເງື່ອນໄຂການຮັບເອົາຄຳຮ້ອງຂໍທາງແພ່ງມາພິຈາລະນາ

ເງື່ອນໄຂການຮັບເອົາຄຳຮ້ອງຂໍທາງແພ່ງມາພິຈາລະນາໝາຍເຖິງພື້ນຖານທີ່ພາໃຫ້ ຜູ້ຮ້ອງຂໍສາມາດຍື່ນຄຳຮ້ອງຂໍຕໍ່ສານເພື່ອ ໃຫ້ສານພິຈາລະນາຕັດສິນຢັ້ງຢືນ ຫຼື ຮັບຮູ້ບັນຫາໃດໜຶ່ງ ຊຶ່ງບໍ່ແມ່ນຂໍ້ຂັດແຍ່ງ ກັບບຸກຄົນ ຫຼື ອົງການຈັດຕັ້ງອື່ນໂດຍປະກອບມີເງື່ອນໄຂຄືດັ່ງລຸ່ມນີ້:

1) ການຮ້ອງຂໍນັ້ນບໍ່ແມ່ນຂໍ້ຂັດແຍ່ງ;

2) ການພິຈາລະນາຄະດີແບບຝ່າຍດຽວໂດຍບໍ່ມີຈຳເລີຍເຂົ້າຮ່ວມ.

ໂດຍປົກກະຕິແລ້ວການຮ້ອງຟ້ອງໃຫ້ສານດຳເນີນຄະດີກ່ຽວກັບບັນຫາໃດໜຶ່ງນັ້ນແມ່ນບັນຫາ ລະຫວ່າງສອງຝ່າຍຫຼື ຫຼາຍຝ່າຍທີ່ມີການຂັດແຍ່ງກັນ ຊຶ່ງບໍ່ສາມາດແກ້ໄຂກັນໄດ້ໂດຍສັນຕິວິທີ ແລ້ວ ຈຶ່ງມີການຍື່ນຄຳຮ້ອງຟ້ອງຂຶ້ນສານ ແລະ ຝ່າຍຖືກຮ້ອງຟ້ອງ ກໍໄດ້ ຍື່ນຄຳແກ້ຟ້ອງ ຫຼື ຟ້ອງແຍ່ງເພື່ອ ໂຕ້ແຍ່ງກັນ ຊຶ່ງສາມາດເວົ້າໄດ້ວ່າ ທັງສອງຝ່າຍ ເກີດມີຂໍ້ຂັດແຍ່ງກັນ ແລ້ວຈຶ່ງຮ້ອງຟ້ອງຂຶ້ນສານ, ແຕ່ສຳລັບ ການຮ້ອງຂໍທາງແພ່ງ ພັດບໍ່ຄືກັນກັບການຮ້ອງຟ້ອງທາງແພ່ງແບບທົ່ວໄປ ເພາະເປົ້າໝາຍທີ່ ຜູ້ຍື່ນຄຳຮ້ອງຂໍຕໍ່ສານເພື່ອໃຫ້ສານພິຈາລະນານັ້ນ ບໍ່ແມ່ນຂໍ້ຂັດແຍ່ງ ຫຼື ບໍ່ມີການໂຕ້ແຍ່ງຈາກອີກຝ່າຍໜຶ່ງ ເຊັ່ນ ການຮ້ອງຂໍໃຫ້ສານປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ, ເປັນຜູ້ຫາຍສາບສູນ ຫຼື ເສຍຊີວິດ ຫຼື ບັນຫາອື່ນ;

ນອກນັ້ນ, ການພິຈາລະນາການຮ້ອງຂໍຂອງສານ ກໍມີແຕ່ ຜູ້ຍື່ນຄຳຮ້ອງຂໍນັ້ນເຂົ້າຮ່ວມການດຳເນີນຄະດີ ຈະບໍ່ມີອີກຝ່າຍໜຶ່ງມາເຂົ້າຮ່ວມເພື່ອໂຕ້ແຍ່ງ, ສານຈະດຳເນີນຄະດີນຳຝ່າຍດຽວໂດຍບໍ່ມີຈຳເລີຍ ແລະ ເມື່ອສານພິຈາລະນາຕັດສິນ ກໍລົງຄຳຕັດສິນໃນຮູບແບບ ການຢັ້ງຢືນ ຫຼື ຮັບຮູ້ ແລ້ວແຕ່ກໍລະນີ.

ບັນດາເງື່ອນໄຂທີ່ກ່າວມານັ້ນແມ່ນເງື່ອນໄຂລວມໃນການພິຈາລະນາການຮ້ອງຂໍທາງແພ່ງ, ນອກຈາກນີ້ຍັງມີເງື່ອນໄຂສະເພາະຂຶ້ນກັບແຕ່ລະປະເພດຂອງການຮ້ອງຂໍ ທີ່ໄດ້ກຳນົດໄວ້ໃນມາດຕາ 331, 337, 343 ແລະ 351 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ 2012 ຊຶ່ງມີບົດຕໍ່ໄປ ຂອງພາກນີ້ໄດ້ອະທິບາຍລະອຽດ.

## 2. ການພິຈາລະນາຄຳຮ້ອງຂໍທາງແພ່ງ

ການພິຈາລະນາການຮ້ອງຂໍທາງແພ່ງໝາຍເຖິງຂະບວນການພິຈາລະນາຕັດສິນຂອງສານ ກ່ຽວກັບບັນຫາໃດໜຶ່ງທີ່ບໍ່ເປັນຂໍ້ຂັດແຍ່ງ ຊຶ່ງຄູ່ຄວາມໄດ້ຮ້ອງຂໍຕໍ່ສານເພື່ອໃຫ້ສານພິຈາລະນາຕັດສິນ ແລະ ສານກໍຈະດຳເນີນຄະດີໂດຍບໍ່ມີຈຳເລີຍຫຼືຝ່າຍກົງກັນຂ້າມເຂົ້າຮ່ວມຮ່ວມຄືກັນກັບການດຳເນີນຄະດີແບບທົ່ວໄປ[10]ແລະ ໃນການລົງຄຳຕັດສິນກ່ຽວກັບການຮ້ອງຂໍທາງແພ່ງກໍຈະບໍ່ມີລັກສະນະເປັນການແກ້ໄຂບັນຫາແຕ່ເປັນລັກສະນະ ແບບຢັ້ງຢືນຫຼືຮັບຮູ້ເທົ່ານັ້ນ.

### 2.1. ການຮັບຄຳຮ້ອງຂໍມາພິຈາລະນາ

ສານຈະຮັບເອົາຄຳຮ້ອງຂໍທີ່ຄູ່ຄວາມໄດ້ ຍື່ນເຂົ້າຂຶ້ນສານ ມາພິຈາລະນານັ້ນ ກໍຕ້ອງຜ່ານ ຂັ້ນຕອນການກວດກາຄຳຮ້ອງຂໍໂດຍ ຈ່າສານທີ່ກ່ຽວຂ້ອງເສັຍກ່ອນ ຊຶ່ງຈ່າສານຈະກວດກາເບິ່ງສອງດ້ານຄື: ເນື້ອໃນຄຳຮ້ອງຂໍນັ້ນປະຕິບັດຖືກຕ້ອງຕາມທີ່ບົ່ງໄວ້ໃນມາດຕາ 324 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ 2012ແລ້ວບໍ, ຖ້າບໍ່ຖືຕ້ອງ ຈ່າສານກໍຈະເປັນ ຜູ້ແນະນຳໃຫ້ນຳໄປປັບປຸງແກ້ໃຫ້ຖືກຕ້ອງ, ຄຳຮ້ອງຂໍນັ້ນຖືກຍື່ນຕໍ່ສານທີ່ມີສິດອຳນາດແລ້ວບໍເປັນຕົ້ນ ແມ່ນອຳນາດທາງດ້ານໜ້າທີ່ກໍແມ່ນໜ້າທີ່ຂອງສານປະຊາຊົນເຂດ ແລະ ອຳນາດທາງດ້ານພື້ນທີ່ກໍແມ່ນສານບ່ອນ ຜູ້ຮ້ອງຂໍອາໄສຢູ່ນັ້ນ ເປັນສານທີ່ມີສິດອຳນາດພິຈາລະນາຕັດສິນ, ຖ້າບໍ່ຖືກຕ້ອງຈ່າສານ ກໍຈະເປັນ

[10]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 322.

ຜູ້ແນະນຳ ໃຫ້ ຜູ້ຮ້ອງຂໍນັ້ນ ໄປຍື່ນຄຳຮ້ອງຂໍ ບ່ອນສານທີ່ມີສິດອຳນາດກ່ຽວຂ້ອງ, ເມື່ອຈ່າສານ ໄດ້ກວດກາຄຳຮ້ອງຂໍ ຖືກຕ້ອງຕາມທີ່ກ່າວມາຂ້າງເທິງນັ້ນແລ້ວ ຈ່າສານ ກໍຈະເຂົ້າເລກທີຂອງສານ ແລະ ຂຶ້ນຟ້ອງຄະດີ ນຳສະເໜີ ຕໍ່ປະທານສານເພື່ອດຳເນີນຕາມຂັ້ນຕອນ ຂອງກົດໝາຍ.

**2.2. ການປະກອບສຳນວນຄະດີ**

ການປະກອບສຳນວນຄະດີແມ່ນໜ້າທີ່ ຂອງຈ່າສານທີ່ກ່ຽວຂ້ອງເປັນ ຜູ້ຮັບຜິດຊອບປະກອບສຳນວນຄະດີໃຫ້ຖືກຕ້ອງແລະ ປະຕິບັດຕາມຄຳເຫັນແນະນຳ ຂອງປະທານສານທີ່ກ່ຽວຂ້ອງ ເປັນຕົ້ນແມ່ນການບັນຈຸເອກະສານທັງໝົດເຂົ້າໃນເສື້ອປົກສຳນວນຄະດີ ພ້ອມທັງຈົດກ່າຍລາຍການເອກະສານໃສ່ເສື້ອປົກນອກ ແລະ ເສື້ອປົກໃນ ໃຫ້ຄົບຖ້ວນແລ້ວມອບສຳນວນຄະດີໃຫ້ຫົວໜ້າຄະນະສານເປັນຜູ້ແຈກຢາຍໃຫ້ຜູ້ພິພາກສາເປັນຜູ້ຄົ້ນຄວ້າດຳເນີນຕາມກົດໝາຍ.

**2.3. ການຄົ້ນຄວ້າຄະດີ**

ຜູ້ພິພາກສາຮັບຜິດຊອບຄະດີຕ້ອງກວດກາຂໍ້ມູນຫຼັກຖານ, ເອກະສານທີ່ກ່ຽວຂ້ອງທີ່ຜູ້ຮ້ອງຂໍໄດ້ຍື່ນຕໍ່ສານທັງໝົດ, ຖ້າເຫັນວ່າຍັງມີບັນຫາໃດບໍ່ຈະແຈ້ງກໍຮຽກເອົາ ຜູ້ຍື່ນຄຳຮ້ອງຂໍເຂົ້າມາໃຫ້ການເພີ່ມ ຫຼື ຊີ້ແຈງບັນຫາທີ່ຍັງບໍ່ທັນແຈ້ງຂາວ ຫຼື ເຊີນເອົາໄອຍະການເຂົ້າຮ່ວມ ຖ້າການຮ້ອງຂໍນັ້ນ ຫາກພົວພັນກັບ ຜົນປະໂຫຍດຂອງລັດ, ເດັກ ຫຼື ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ, ແຕ່ຖ້າມີຄວາມຈຳເປັນ ແລະ ເພື່ອຮັບປະກັນໃນການລົງຄຳຕັດສິນຂອງສານໃຫ້ຖືກກັບຄວາມເປັນຈິງຂອງຄະດີແລະກົດໝາຍ ສານກໍສາມາດລົງເກັບຂໍ້ມູນຢູ່ສະຖານທີ່ ທີ່ເປັນເປົ້າໝາຍຂອງການຮ້ອງຂໍກໍໄດ້, ພາຍຫຼັງເກັບກຳຂໍ້ມູນຫຼັກຖານຄົບຖ້ວນແລ້ວ ຈຶ່ງນຳສະເໜີຕໍ່ຄະນະສານ ເພື່ອອອກຄຳຕົກລົງເອົາຄະດີອອກພິຈາລະນາໃນທີ່ປະຊຸມສານ.

**2.4. ການປະຊຸມສານ**

ການປະຊຸມສານເພື່ອພິຈາລະນາການຮ້ອງຂໍ ກໍປະຕິບັດຕາມລະບຽບດຽວກັນກັບ ການພິຈາລະນາຄະດີ ກ່ຽວກັບການຮ້ອງຟ້ອງທາງແພ່ງແບບທົ່ວໄປ ຊຶ່ງຄະນະສານຈະທຳການກວດກາຂໍ້ມູນຫຼັກຖານທັງໝົດທີ່ ຜູ້ຮ້ອງຂໍສະເໜີຂຶ້ນມາເພື່ອເປັນພື້ນຖານໃນການລົງຄຳຕັດສິນ, ຈຸດແຕກຕ່າງກັນແມ່ນ ມີແຕ່ຝ່າຍດຽວເຂົ້າຮ່ວມ ຈະບໍ່ມີຝ່າຍກົງກັນຂ້າມເຂົ້າມາໂຕ້ແຍ່ງ ຫຼື ໂຕ້ຖຽງກັນ ໝາຍຄວາມວ່າສານຈະດຳເນີນຄະດີ ນຳຝ່າຍດຽວ, ສະນັ້ນ ຂັ້ນຕອນການເປີດປະຊຸມສານເພື່ອພິຈາລະນາຄະດີກໍຈະມີໜ້ອຍກວ່າ ການພິຈາລະນາການຮ້ອງຟ້ອງທາງແພ່ງແບບທົ່ວໄປ.

**2.4.1. ການໄຕ່ສວນຄະດີ**

ຄືດັ່ງທີ່ໄດ້ອະທິບາຍມາຂ້າງເທິງ ຜູ້ເຂົ້າຮ່ວມປະຊຸມສານມີແຕ່ ຜູ້ຮ້ອງຂໍ ຫຼື ພະຍານ (ຖ້າມີ), ສະນັ້ນ ບາດກ້າວການໄຕ່ສວນຄະດີ ແມ່ນເລີ່ມຕົ້ນດ້ວຍການ ຊັກຖາມ ຜູ້ຮ້ອງຂໍ ຫຼື ໃຫ້ ຜູ້ຮ້ອງຂໍ ເລົ່າເຫດການຂອງຄະດີພ້ອມທັງຈຸດປະສົງການຮ້ອງຂໍ ຊຶ່ງຕ້ອງການໃຫ້ສານພິຈາລະນາຕັດສິນຫຍັງ ມີຂໍ້ມູນຫຼັກຖານປະກອບມາແນວໃດ ກໍມີສິດນຳມາ ສະເໜີຕໍ່ຄະນະສານ, ຈາກນັ້ນ ຈຶ່ງໄຕ່ສວນພະຍານ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ຄະນະແພດເພື່ອຢັ້ງຢືນການບຸກຄົນໃດໜຶ່ງເປັນ ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ຍາດພີ່ນ້ອງ ຂອງຈຳເລີຍ ທີ່ໄດ້ເອົາຕົວຫຼົບໜີ, ເມື່ອໄຕ່ສວນຄົບຖ້ວນແລ້ວ ກ່ອນຄະນະຈະນຳເອົາຄະດີເຂົ້າພິຈາລະນາໃນຫ້ອງປະຊຸມ ກໍຕ້ອງສະເໜີໃຫ້ພະນັກງານໄອຍະການປະຊາຊົນທີ່ເຂົ້າຮ່ວມນັ້ນ ມີຄຳເຫັນກ່ຽວກັບພິຈາລະນາຄະນັ້ນເສຍກ່ອນ ເພື່ອນຳເປັນຂໍ້ມູນໃຫ້ແກ່ ການພິຈາລະນາຄະດີໃນຫ້ອງປະຊຸມລັບ[11].

---

[11] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 326.

**2.4.2. ການລົງຄຳຕັດສິນ**

ພາຍຫຼັງທີ່ໄດ້ກວດກາ ຊັ່ງຊາຕີລາຄາບັນດາຂໍ້ມູນຫຼັກຖານທັງໝົດທີ່ມີຢູ່ໃນສຳນວນຄະດີ ແລະ ລວມທັງຜົນຂອງການໄຕ່ສວນຄະດີແລ້ວ ຄະນະສານຕັດສິນກໍຈະລົງຄຳຕັດສິນດວ້ຍສອງປະເພດຄື: ຮັບຮູ້ ຫຼື ຢັ້ງຢືນ, ບໍ່ຮັບຮູ້ຫຼືບໍ່ຢັ້ງຢືນ ເຊັ່ນ ການລົງຄຳຕັດສິນຮັບຮູ້ວ່າບຸກຄົນໃດໜຶ່ງເປັນ ຜູ່ບໍ່ມີຄວາມສາມາດທາດ້ານການປະພຶດ ຫຼື ຢັ້ງຢືນ ໃບຕາດິນຖືກເສັຍຫາຍ ແລະ ບັນຫາອື່ນ...

ໃນຄຳຕັດສິນຂອງສານຈະບົ່ງບອກໃຫ້ເຫັນເຫດການຂອງຄະດີພ້ອມທັງໃຫ້ເຫດຜົນຕໍ່ແຕ່ລະປະເດັນທີ່ຜູ້ຮ້ອງຂໍໄດ້ສະເໜີມານັ້ນຢ່າງລະອຽດ; ພາຍຫຼັງທີ່ສານໄດ້ລົງຄຳຕັດສິນແລ້ວກໍຈະສົ່ງໃຫ້ອົງການໄອຍະການປະຊາຊົນຂັ້ນຂອງຕົນເພື່ອກວດກາ ແລະ ເມື່ອໃຊ້ໄດ້ຢ່າງເດັດຂາດແລ້ວກໍສົ່ງໄປຍັງຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານບ່ອນຕັດສານຕັດເປັນຂັ້ນຕົ້ນນັ້ນ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ[12].

## 3. ການຂໍອຸທອນ ຫຼື ຄັດຄ້ານ

ການຮ້ອງຂໍອຸທອນ ຫຼື ຄັດຄ້ານຄຳຕັດສິນ ກ່ຽວກັບການຮ້ອງຂໍທາງແພ່ງນັ້ນ ກໍປະຕິບັດດັ່ງດຽວກັນກັບ ການດຳເນີນຄະດີແພ່ງຂັ້ນຕົ້ນແບບທົ່ວໄປ ຊຶ່ງຄູ່ຄວາມສາມາດຮ້ອງຂໍອຸທອນໄດ້ພາຍໃນກຳນົດຊາວວັນນັບແຕ່ວັນລົງຄຳຕັດສິນເປັນຕົ້ນໄປ ຫຼືນັບແຕ່ວັນຮັບຊາບ ຄຳຕັດສິນເປັນຕົ້ນໄປ ສຳລັບ ຜູ່ຖືກຕັດສິນລັບຫຼັງ, ສ່ວນວິທີປະຕິບັດສິດໃນການຂໍອຸທອນຂອງຄູ່ຄວາມລະອຽດແມ່ນໄດ້ ອະທິບາຍໄວ້ໃນບົດສະເພາະ ແຕ່ລະປະເພດການຮ້ອງຂໍ ໃນພາກນີ້. ຍົກເວັ້ນຄຳຕັດສິນທີ່ປະກາດຮັບຮູ້ວ່າເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດ; ເປັນຜູ່ຫາຍສາບສູນ ຫຼືເສັຍຊີວິດນັ້ນ ຜູ່ຮ້ອງຂໍຈະບໍ່ມີສິດໃນການຮ້ອງຂໍອຸທອນ ຫຼື ຄັດຄ້ານ ເນື່ອງຈາກວ່າ ເມື່ອບຸກຄົນດັ່ງກ່າວ ຫາກກັບຄືນສູ່ສະພາບປົກກະຕິຕາມການຢັ້ງຢືນຂອງຄະນະແພດ ຫຼື ຍັງມີຊີວິດ ແລ້ວຜູ່ຮ້ອງຂໍຫຼືຜູ່ກ່ຽວເອງມີສິດສະເໜີຕໍ່ສານຂັ້ນຕົ້ນທີ່ກ່ຽວຂ້ອງພິຈາລະນາຕັດສິນລົບລ້າງຄຳຕັດສິນດັ່ງກ່າວຕາມກົດໝາຍ.

## 4. ຜົນສະທ້ອນຂອງການພິຈາລະນາການຮ້ອງຂໍທາງແພ່ງ

ພາຍຫຼັງທີ່ສານໄດ້ພິຈາລະນາຕັດສິນການຮ້ອງຂໍທາງແພ່ງແລ້ວ ແນ່ນອນກໍມີຜົນສະທ້ອນຕາມມາແຕກຕ່າງກັນໄປໂດຍຂຶ້ນກັບແຕ່ລະປະເພດຂອງການຮ້ອງຂໍ.

ກໍລະນີ ການຮ້ອງຂໍໃຫ້ຮັບຮູ້ວ່າບຸກຄົນໃດໜຶ່ງເປັນຜູ່ບໍ່ມີຄວາມສາມາດທາງດານການປະພຶດນັ້ນ ອາດຈະມີຜົນສະທ້ອນຕໍ່ພໍ່ແມ່, ລູກ, ຜົວຫຼືເມັຍ, ຜູ່ປົກຄອງ, ຄູ່ສັນຍາ ຫຼືຕໍ່ການຈັດຕັ້ງ ແລະອື່ນໆ.

ກໍລະນີການປະກາດວ່າບຸກຄົນໃດໜຶ່ງເປັນຜູ່ຫາຍສາບສູນຫຼື ເສັຍຊີວິດມັນກໍກ່ຽວພັນກັບພໍ່ແມ່, ຜົວຫຼືເມັຍ, ລູກ, ຍາດຕິພີ່ນ້ອງກ່ຽວພັນກັບວຽກງານຂອງຜູ່ກ່ຽວທີ່ຕິດພັນກັບການຈັດຕັ້ງແລະການດຳເນີນວຽກງານຕ່າງໆຂອງຜູ່ກ່ຽວໃນສັງຄົມລວມທັງມູນມໍຣະດົກຂອງຜູ່ກ່ຽວ ທີ່ຈະຖືກແບ່ງປັນໃຫ້ຜູ່ສືບທອດຕາມກົດໝາຍ.

ກໍລະນີຕັດສິນຢັ້ງຢືນໃບຕາດິນຖືກເສັຍນັ້ນກໍຈະມີຜົນສະທອ້ນ ທີ່ກ່ຽວກັບສິດຄອບຄອງໃບຕາດິນສະບັບເດີມຂອງ ຜູ່ກ່ຽວຂ້ອງຖືກເສັຍຫາຍແລ້ວ ອົງການຄຸ້ມຄອງທີ່ດິນແຫ່ງຊາດຈະສຳເນົາໃບຕາດິນໃຫ້ ຜູ່ກ່ຽວໃໝ່ ຈຶ່ງສາມາດນຳໄປເປັນເອກະສານ ສິດໃນກຳມະສິດໃນທີ່ດິນໄດ້.

ກໍລະນີການຮ້ອງຂໍໃຫ້ສານຕັດສິນລູກໜີ້ເອົາຕົວຫຼົບໜີຜົນສະທ້ອນເຖິງການໃຊ້ແທນໜີ້ສິນຄືນແກ່ເຈົ້າໜີ້ໃຫ້ທັນເວລາ ເພາະຊັບສິນ ຂອງລູກໜີ້ ນັ້ນຈະຖືກນຳມາປະກາດຂາຍຕາມຄຳຕັດສິນເພື່ອ ນຳເງິນມາໃຊ້ແທນໜີ້ສິນຄືນ ແກ່ເຈົ້າໜີ້.

ສັງລວມຜົນສະທ້ອນກ່ຽວກັບການພິຈາລະນາການຮ້ອງຂໍທາງແພ່ງ ແມ່ນໄດ້ອະທິບາຍຢ່າງລະອຽດຢູ່ໃນບົດ ສະເພາະຂອງແຕ່ລະປະເພດ ການຮ້ອງຂໍທາງແພ່ງໃນພາກນີ້ ຖ້າມີການຮ້ອງປະເພດອື່ນອີກ ກໍຈະມີຜົນສະທ້ອນສະເພາະຕາມແຕ່ລະເລື່ອງ ບໍ່ໃຫ້ເຂົ້າໃຈວ່າ ຜົນສະທ້ອນຂອງແຕ່ລະປະເພດການຮ້ອງຂໍນັ້ນຈະຄືກັນໝົດທຸກຢ່າງ.

---

[12] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 327

# ບົດທີ 3
# ການຮັບຮູ້ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ

## 1. ຄວາມໝາຍການຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ

ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດແມ່ນຜູ້ທີ່ບໍ່ສາມາດບັງຄັບບັນຊາການກະທຳດ້ວຍຕົນເອງ ຫຼື ກະທຳດ້ວຍຕົນເອງແຕ່ສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຍ້ອນເກີດຈາກຫຼາຍສາເຫດທີ່ແຕກຕ່າງກັນຄື: (1) ເດັກທີ່ບໍ່ເຖິງກະສຽນອາຍຸຄືຕໍ່າກວ່າ 18 ປີ (ຕາມກົດໝາຍ); (2) ປ່ວຍເປັນພະຍາດ; (3)ຕິດສິ່ງເສບຕິດ ຫຼື ວັດຖຸອອກລິດຕໍ່ຈິດປະສາດ; (4) ສາເຫດອື່ນໆທີ່ເປັນຜົນສະທ້ອນເຮັດໃຫ້ຜູ້ກ່ຽວບໍ່ສາມາດກະທຳດ້ວຍຕົນເອງ ຫຼື ກະທຳດ້ວຍຕົນເອງແຕ່ເປັນການສ້າງເສຍຫາຍໃຫ້ຜູ້ອື່ນ; ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດນີ້ ຈະຖືກຈຳກັດໃນການເຂົ້າຮ່ວມສາຍພົວພັນທາງແພ່ງ ຍົກເວັ້ນການພົວພັນສັງຄົມທີ່ກົດໝາຍບໍ່ໄດ້ຫ້າມ.

ການຮັບຮູ້ວ່າບຸກຄົນໃດໜຶ່ງເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແມ່ນການຮັບຮູ້ ແລະ ຢັ້ງຢືນທາງດ້ານກົດໝາຍວ່າບຸກຄົນໃດໜຶ່ງບໍ່ມີຄວາມສາມາດທາງດ້ານການປະພຶດໂດຍຜ່ານການດຳເນີນຕາມຂັ້ນຕອນຂອງການດຳເນີນຄະດີໃນກໍລະນີມີການຮ້ອງຂໍຈາກຜູ້ທີ່ຮ້ອງຂໍ ແລະ ສານເປັນຜູ້ພິຈາລະນາຕັດ ສິນວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ, ໝາຍຄວາມວ່າ ບຸກຄົນໃດໜຶ່ງຈະຖືກຮັບຮູ້ວ່າ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດແມ່ນບຸກຄົນທີ່ຖືກສານຕັດສິນວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ.

**ຕົວຢ່າງ:**

- ເປັນໃບ້, ບ້າ, ເສັຍຈິດແຕ່ກຳເນີດ;
- ບໍ່ເຖິງກະສຽນອາຍຸ 18 ປີ;
- ຜູ້ເສຍຄວາມຊົງຈຳຍ້ອນພະຍາດຫຼືເກີດອຸປະຕິເຫດ**(*)**

ມີຄຳຮ້ອງຂໍຫາສານ →

ສານຕັດສິນ ຮັບຮູ້ວ່າບໍ່ມີຄວາມສາມາດ

**(*)**ທ້າວ ກ ໄດ້ເຮັດສັນຍາເຊົ່າເຮືອນກັບ ທ້າວ ຂ, ຢູ່ມາວັນໜຶ່ງທ້າວ ຂ ໄດ້ເກີດອຸປະຕິເຫດ ແລະ ໄດ້ສູນເສຍຄວາມຊົງຈຳ, ເພື່ອເຮັດໃຫ້ການປະຕິບັດສັນຍາ ລະຫວ່າງ ທ້າວ ກ ແລະ ທ້າວ ຂ ສືບຕໍ່ດຳ ເນີນໄປຈົນກວ່າຈະໝົດສັນຍາ, ທ້າວ ກ ຈຶ່ງໄດ້ຮ້ອງຂໍຕໍ່ສານ ເພື່ອໃຫ້ສານພິຈາລະນາຕັດສິນຮັບຮູ້ວ່າທ້າວ ຂ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແລະ ແຕ່ງຕັ້ງຜູ້ປົກຄອງທ້າວ ຂ.

ໃນຄວາມເປັນຈິງ ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແມ່ນຕົກຢູ່ໃນບັນດາກໍລະນີຄື: ບໍ່ມີຄວາມສາມາດທາງດ້ານການປະພຶດແຕ່ກຳເນີດ, ບໍ່ເຖິງກະສຽນອາຍຸ 18 ປີ, ຜູ້ເສຍຄວາມສາມາດທາງດ້ານການປະພຶດ, ຜູ້ທີ່ຖືກສານຕັດສິນວ່າເປັນຜູ້ບໍ່ມຄວາມສາມາດທາງດ້ານການປະພຶດຍ້ອນການກະທຳຂອງຜູ້ກ່ຽວເປັນສາເຫດເຮັດໃຫ້ເກີດຄວາມເສຍຫາຍໃຫ້ຜູ້ອື່ນ ແຕ່ເຖິງຢ່າງໃດກໍຕາມ ບຸກຄົນເຫຼົ່ານີ້ ຈະຖືກຮັບຮູ້ວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ກໍຕໍ່ເມື່ອໄດ້ຜ່ານການພິຈາລະນາຕັດສິນຈາກສານ, ບຸກຄົນເຫຼົ່ານີ້ ກົດໝາຍບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ທີ່ກ່ຽວຂ້ອງກັບການປະຕິບັດສິດ ແລະ ພັນທະຂອງຕົນ ຍົກເວັ້ນການພົວພັນທີ່ຕິດພັນກັບການດຳລົງຊີວິດປະຈຳວັນຂອງຕົນທີ່ກົດໝາຍບໍ່ໄດ້ຫ້າມ.

## 2. ຄວາມສຳຄັນໃນການຮັບຮູ້ວ່າບຸກຄົນໃດໜຶ່ງເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ

ການຮັບຮູ້ວ່າ ບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແມ່ນມີຄວາມຈຳເປັນ ແລະ ສຳຄັນຍິ່ງ ຕໍ່ກັບບັນດາເຈົ້າກຳທີ່ມີສິດຜົນປະໂຫຍດກ່ຽວຂ້ອງ ໃນສາຍພົວພັນທາງແພ່ງ, ເປັນຕົ້ນແມ່ນ: ການສືບທອດມູນມໍຣະດົກ, ການເກີດສິດອັນໃດອັນໜຶ່ງ ແລະ ອື່ນໆ.

ເພື່ອຮັບປະກັນໃຫ້ແກ່ການປະຕິບັດສາຍພົວພັນທາງແພ່ງໃຫ້ມີລັກສະນະຮັບປະກັນ, ຈຳກັດຄວາມຜິດພາດທີ່ອາດຈະເກີດຂຶ້ນຈາກການພົວພັນທາງແພ່ງ ໂດຍສະເພາະການຊື້ຂາຍ, ເຮັດສັນຍາ ແລະ ການພົວພັນອື່ນໆທີ່ກ່ຽວຂ້ອງກັບສິດ ແລະ ພັນທະທີ່ຕ້ອງປະຕິບັດ, ຜູ້ທີ່ເຂົ້າຮ່ວມໃນການພົວພັນດັ່ງກ່າວນັ້ນຈະຕ້ອງມີຄວາມສາມາດທາງດ້ານການປະພຶດຢ່າງຄົບຖ້ວນຕາມກົດໝາຍໄດ້ກຳນົດໄວ້, ສະນັ້ນ ຈຶ່ງເວົ້າໄດ້ວ່າ ການຮັບຮູ້ວ່າບຸກຄົນໃດໜຶ່ງເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແມ່ນມີຄວາມສຳຄັນຫຼາຍຕໍ່ກັບຜູ້ທີ່ມີສິດຜົນປະໂຫຍດກ່ຽວຂ້ອງ, ຜ່ານການຮັບຮູ້ດັ່ງກ່າວນັ້ນ ເຮົາຈະມີວິທີສະກັດກັ້ນຄວາມ ຜິດພາດທີ່ອາດຈະເກີດຂຶ້ນ ເຊັ່ນ ແຕ່ງຕັ້ງຜູ້ປົກຄອງໃຫ້ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດເພື່ອປະຕິບັດສິດ ແລະ ພັນທະແທນ.

- **ຄວາມສຳຄັນຕໍ່ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ**

ການຮັບຮູ້ວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ມີຄວາມສຳຄັນຫຼາຍຕໍ່ກັບຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດຍ້ອນວ່າ: ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ, ຮັບປະກັນການປະຕິບັດສິດ ແລະ ພັນທະຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດໄວ້ໄດ້ຢ່າງຄົບຖ້ວນ, ປັດສະຈາກການລ່ວງລະເມີດຂອງບຸກຄົນອື່ນ ຕໍ່ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ.

ສະນັ້ນ, ຈຶ່ງພໍສະຫຼຸບໄດ້ວ່າ ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດຈະໄດ້ຮັບຜົນປະໂຫຍດໂດຍກົງຈາກການທີ່ສານຕັດສິນຮັບຮູ້ວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດຄື: ໄດ້ຮັບການປົກປ້ອງສິດຂອງຜູ້ກ່ຽວບໍ່ໃຫ້ຕົກໄປ ເຊັ່ນ ສິດໄດ້ຮັບການສືບທອດ, ສິດໃນການຕໍ່ສູ້ຄະດີໃນສານ, ສິດໄດ້ຮັບການລ້ຽງດູເບິ່ງແຍງຈາກຜູ້ປົກຄອງ ແລະ ສິດອື່ນໆຕາມກົດໝາຍ.

**ຕົວຢ່າງ:** ທ້າວ ກ ເຮັດສັນຍາ ກັບທ້າວ ຂ, ຢູ່ມາວັນໜຶ່ງ ທ້າວ ກ ປ່ວຍເປັນພະຍາດຢ່າງຮ້າຍແຮງບໍ່ສາມາດບັນຊາການກະທຳຂອງຕົນເອງໄດ້ ຈະຖືວ່າຜູ້ກ່ຽວເສຍຄວາມສາມາດທາງດ້ານການປະພຶດ, ນັ້ນກໍໝາຍຄວາມວ່າ ຜູ້ກ່ຽວບໍ່ມີຄວາມສາມາດທາງດ້ານການປະພຶດ ຊຶ່ງຈຳເປັນຕ້ອງມີຜູ້ປົກຄອງໃນການປະຕິ ບັດສິດ ແລະ ພັນທະແທນຕົນເອງ, ຖ້າຫາກສານຕັດສິນຮັບຮູ້ວ່າ ທ້າວ ກ ເປັນຜູ້ບໍ່ມີຄວາມສາມາດທາງ ດ້ານການປະພຶດ ແນ່ນອນ ທ້າວ ກ ຈະມີຜູ້ປົກຄອງປະຕິບັດສິດ ແລະ ພັນທະແທນຕົນເອງໃນການປະຕິ ບັດສັນຍາກັບ ທ້າວ ຂ.

- **ຄວາມສຳຄັນຕໍ່ບຸກຄົນ ແລະ ການຈັດຕັ້ງອື່ນ.**

ບຸກຄົນ ແລະ ການຈັດຕັ້ງອື່ນ ທີ່ເຂົ້າຮ່ວມໃນການພົວພັນທາງແພ່ງ ກັບຜູ້ທີ່ຖືກສານຕັດສິນຮັບຮູ້ວ່າເປັນຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດຈະໄດ້ຮັບຜົນປະໂຫຍດໂດຍກົງຄື:ພາໃຫ້ເກີດສິດໃນການປະຕິບັດສິດ ແລະ ພັນທະອັນໃດອັນໜຶ່ງ ທີ່ກົດໝາຍບໍ່ໄດ້ຫ້າມໂດຍຜ່ານຜູ້ປົກຄອງ ຂອງຜູ້ບໍ່ມີຄວາມສາ ມາດທາງດ້ານການປະພຶດ.

ຕົວຢ່າງ: ທ້າວ ກ ແລະ ທ້າວ ຂ ໄດ້ເຮັດສັນຍາສ້າງຕັ້ງວິສາຫະກິດຮ້ານອາຫານຮ່ວມກັນ, ຢູ່ມາວັນໜຶ່ງທ້າວ ກ ໄດ້ສູນເສຍຄວາມຊົງຈຳ ຍ້ອນພະຍາດຂອງຜູ້ກ່ຽວ, ເມື່ອເປັນແນວນັ້ນ ເພື່ອເຮັດໃຫ້ທຸລະກິດ ດັ່ງກ່າວສາມາດດຳເນີນຕໍ່ໄປໄດ້ ທ້າວ ຂ ຈຶ່ງຍື່ນຄຳຮ້ອງຂໍໃຫ້ສານພິຈາລະນາຕັດສິນໃຫ້ຮັບຮູ້ວ່າທ້າວ ກ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ, ສານກໍໄດ້ຕັດສິນວ່າ ທ້າວ ກ ເປັນຜູ້ບໍ່ມີຄວາມສາມາດທາງ ດ້ານການປະພຶດ ພ້ອມທັງແຕ່ງຕັ້ງໃຫ້ທ້າວ ຄ ເປັນຜູ້ປົກຄອງທ້າວ ກ, ສະນັ້ນ ທ້າວ ຂ ຈຶ່ງສາມາດສືບຕໍ່ປະຕິບັດສິດ ແລະ ພັນທະຂອງຕົນໂດຍຜ່ານ ທ້າວ ຄ ໄດ້ຢ່າງປົກກະຕິ.

## 3. ເງື່ອນໄຂທີ່ພາໃຫ້ສານຮັບເອົາຄຳຮ້ອງຂໍຮັບຮູ້ວ່າບຸກຄົນໃດໜຶ່ງເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດມາພິຈາລະນາ

ການຮັບເອົາຄຳຮ້ອງຂໍຮັບຮູ້ວ່າບຸກຄົນໃດໜຶ່ງເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດມາພິຈາ ລະນາຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:

(1) ຕ້ອງແມ່ນຄຳຮ້ອງຂໍຂອງຜູ່ມີສິດຜົນປະໂຫຍດກ່ຽວຂ້ອງເຊັ່ນ: ພໍ່ແມ່, ຜູ່ປົກຄອງ, ຜູ່ຕາງໜ້າໂຮງຮຽນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;

(2) ຄຳຮ້ອງຂໍຕ້ອງເປັນລາຍລັກອັກສອນ, ມີເນື້ອໃນຄົບຖ້ວນຕາມຮ່າງແບບພິມຂອງສານ;

(3) ຕ້ອງປະກອບເອກະສານຫຼັກຖານທີ່ຢັ້ງຢືນວ່າບຸກຄົນດັ່ງກ່າວເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດ ເຊັ່ນ ໃບຢັ້ງຢືນຂອງແພດ ຫຼື ຊ່ຽວຊານດ້ານການແພດ;

(4) ຜູ່ຮ້ອງຂໍຕ້ອງໄດ້ຍື່ນຄຳຮ້ອງຂໍຕໍ່ສານຂັ້ນຕົ້ນທີ່ມີສິດອຳນາດ.

ຕາມຄຳຮ້ອງຂໍຂອງຜູ່ມີສິດຜົນປະໂຫຍດກ່ຽວຂ້ອງ, ສານຈະພິຈາລະນາຕັດສິນວ່າເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດ ໂດຍອີງໃສ່ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ.

ຄັດຕິດຄຳຮ້ອງຂໍ ຕ້ອງມີຂໍ້ມູນຫຼັກຖານ ເພື່ອຢັ້ງຢືນວ່າບຸກຄົນດັ່ງກ່າວບໍ່ມີຄວາມສາມາດທາງດ້ານການປະພຶດ ເຊັ່ນ: ອາຍຸບໍ່ເຖິງກະສຽນ, ເປັນພະຍາດທາງຈິດ ແລະ ອື່ນໆ ທີ່ເປັນສາເຫດໃຫ້ບຸກຄົນດັ່ງ ກ່າວບໍ່ສາມາດຮັບຮູ້ ຫຼື ບັນຊາການກະທຳໄດ້ດ້ວຍຕົນເອງ, ນີ້ແມ່ນຂອດທີ່ຫຍຸ້ງຍາກສັບສົນທີ່ສຸດໃນຂັ້ນຕອນການພິຈາລະນາຂອງສານ ເພື່ອຕັດສິນຮັບຮູ້ວ່າເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດ ເຊັ່ນ ຜູ່ທີ່ຖືກຮ້ອງຂໍວ່າເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດ ບໍ່ຍອມໄປກວດທີ່ໂຮງໝໍ ເພື່ອກວດກາສຸຂະພາບ ຊຶ່ງບໍ່ມີວິທີໃດ ເພື່ອໃຫ້ຜູ່ມີສິດຜົນປະໂຫຍດກ່ຽວຂ້ອງສາມາດບັງຄັບບຸກຄົນດັ່ງກ່າວໄປກວດກາໄດ້ ນັ້ນກໍໝາຍຄວາມວ່າ ຜູ່ທີ່ມາຮ້ອງຂໍອາດມີຂໍ້ມູນຫຼັກຖານທາງດ້ານວັດຖຸບໍ່ພຽງພໍ ໃນກໍລະນີນີ້ ສານກໍຍັງຮັບເອົາຄຳຮ້ອງຂໍມາພິຈາລະນາເຊັ່ນດຽວກັນ.

| ຜູ່ຮ້ອງຂໍ | ມີຫຼັກຖານ ຫຼື ບໍ່ ? | ສານຈະຮັບພິຈາລະນາ ຫຼື ບໍ່ |
|---|---|---|
| ຜູ່ກ່ຽວ ຫຼື ຜູ່ຕາງໜ້າ (ຝ່າຍຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດ) | ບໍ່ມີ | ບໍ່ຮັບ |
| | ມີ | ຮັບ |
| ບຸກຄົນ ຫຼື ການຈັດຕັ້ງອື່ນ ( ຝ່າຍກົງກັນຂ້າມກັບຜູ່ບໍ່ມີຄວາມສາມາດ ທາງດ້ານການປະພຶດ ) | ບໍ່ມີ | ຮັບ |
| | ມີ | ຮັບ |

## 4. ການພິຈາລະນາວ່າບຸກຄົນໃດໜຶ່ງເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດ

### 4.1. ຄຳຮ້ອງຂໍ

ອີງຕາມຫຼັກການຂອງການດຳເນີນຄະດີແພ່ງສານຈະຮັບເອົາຄະດີ ມາພິຈາລະນາ ຕ້ອງມີຄຳຮ້ອງຂໍ ທີ່ຍື່ນຕໍ່ສານ, ສະນັ້ນ:

1) ບຸກຄົນທີ່ມີສິດ, ຜົນປະໂຫຍດກ່ຽວຂ້ອງ, ການຈັດຕັ້ງທີ່ກ່ຽວຂ້ອງມີສິດຮ້ອງຂໍໃຫ້ສານພິຈາລະນາຕັດສິນວ່າບຸກຄົນໃດໜຶ່ງເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ຖືກຈຳກັດຄວາມສາມາດທາງດ້ານການປະພຶດຕາມຂໍ້ກຳນົດຂອງປະມວນກົດໝາຍແພ່ງ;

2) ຄຳຮ້ອງຂໍໃຫ້ສານພິຈາລະນາຕັດສິນວ່າບຸກຄົນໃດໜຶ່ງເປັນຜູ່ບໍ່ມີຄວາມສາມາດທາງດ້ານການປະພຶດຕ້ອງມີເນື້ອໃນຄົບຖ້ວນຕາມທີ່ກຳນົດໄວ້ໃນມາດຕາ 324 ຂອງກົດໝາຍວ່າດ້ວຍການດເນີນຄະດີແພ່ງສະບັບປັບປຸງ ປີ 2012 ແລະ ສອດຄ່ອງຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 3 ຂອງບົດນີ້ ;

3) ຄັດຕິດກັບຄຳຮ້ອງຂໍຕ້ອງມີບົດສະຫຼຸບຜົນກວດຂອງອົງການວິຊາສະເພາະ ແລະບັນດາຫຼັກຖານ ເພື່ອຢັ້ງຢືນວ່າບຸກຄົນດັ່ງກ່າວເປັນພະຍາດທາງຈິດ ຫຼື ຕິດພະຍາດອື່ນໆ ຊຶ່ງເປັນສາເຫດເຮັດໃຫ້ບໍ່ສາມາດຮັບຮູ້ ແລະ ບັງຄັບບັນຊາການກະທຳຂອງຕົນເອງໄດ້.

### 4.2. ການກວດກາ ຄຳຮ້ອງຂໍ

ການກວດກາຄຳຮ້ອງຂໍໃຫ້ຮັບຮູ້ວ່າ ບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແມ່ນໜ້າທີ່ຂອງຈ່າສານເປັນ ຜູ້ຮັບຜິດຊອບກວດກາ ຊຶ່ງຕ້ອງໄດ້ເອົາໃຈໃສ່ກວດກາບາງເນື້ອໃນດັ່ງນີ້:

- ຄຳຮ້ອງຂໍມີເນື້ອໃນຖືກຕ້ອງ, ຄົບຖ້ວນຕາມທີ່ກຳນົດໄວ້ໃນ ມາດຕາ 324 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ 2012 ບໍ;
- ຄຳຮ້ອງຂໍນັ້ນຖືກຍື່ນມາຍັງສານທີ່ມີສິດອຳນາດແລ້ວບໍ;
- ເອກະສານຄັດຕິດຄົບຖ້ວນແລ້ວບໍ ເປັນຕົ້ນແມ່ນເອກະສານຢັ້ງຢືນ ຈາກຄະນະແພດທີ່ກ່ຽວຂ້ອງ.

ໃນກໍລະນີທີ່ບໍ່ຖືກຕ້ອງສານຈະແນະນຳໃຫ້ຜູ້ຮ້ອງຂໍໄປແກ້ໄຂຂໍ້ບົກຜ່ອງນັ້ນເສຍກ່ອນ ຫຼື ແນະນຳໃຫ້ໄປຍື່ນຕໍ່ສານທີ່ມີສິດອຳນາດ ຖ້າກໍລະນີບໍ່ຖືກສິດອຳນາດຂອງສານ; ເມື່ອເຫັນວ່າ ຄຳຮ້ອງຂໍຖືກຕ້ອງແລ້ວ ຈ່າສານຕ້ອງເຂົ້າເລກທີ່ຂຶ້ນຟ້ອງເປັນຄະດີ ເພື່ອນຳສະເໜີ ຕໍ່ປະທານ ຫຼື ຮອງປະທານມີຄຳເຫັນມອບໃຫ້ຄະນະສານເປັນຜູ້ແຈກຢາຍໃຫ້ ຜູ້ພິພາກສາ ຄົ້ນຄວ້ານຳອອກມາພິຈາລະນາພາຍໃນກຳນົດ 15 ວັນ.

### 4.3. ການຄົ້ນຄວ້າຄະດີ

ເມື່ອຜູ້ພິພາກສາ ຫຼື ຜູ້ຊ່ວຍຜູ້ພິພາກສາໄດ້ຮັບສຳນວນຄະດີແລ້ວຕ້ອງຂຶ້ນແຜນການຄົ້ນຄວ້າຄະດີໃຫ້ຮອບ ດ້ານຄົບຖ້ວນ ໂດຍກວດກາບັນດາຂໍ້ມູນຫຼັກຖານທີ່ຜູ້ຮ້ອງຂໍໄດ້ຍື່ນມາຫາສານນັ້ນທັງໝົດ ຖ້າມີຄວາມຈຳເປັນສານຕ້ອງທຳການພິສູດ ຫຼື ແຕ່ງຕັ້ງຄະນະແພດທຳການກວດ ສຸກຂະພາບຂອງບຸກຄົນທີ່ເປັນເປົ້າໝາຍໃຫ້ຊັດເຈນ, ຖ້າຫາກຄຳຮ້ອງຂໍໃດບໍ່ມີຂໍ້ມູນຫຼັກຖານກໍແນະນຳໃຫ້ຜູ້ຍື່ນຄຳຮ້ອງຂໍ ນຳເອົາຂໍ້ມູນຫຼັກຖານທີ່ກ່ຽວຂ້ອງມາຍື່ນຕໍ່ສານຕື່ມອີກ. ຖ້າກວດກາຫຼັກຖານທັງໝົດ ຫາກເຫັນວ່າຄົບຖ້ວນ ພໍຈະນຳເອົາຄະດີເຂົ້າພິຈາລະນາໃນທີ່ປະຊຸມສານແລ້ວ, ຄະນະສານ ກໍອອກຄຳຕົກລົງ ໂດຍແຕ່ງຕັ້ງຄະນະສານຮັບຜິດຊອບ ນຳເອົາຄະດີເຂົ້າພິຈາລະນາໃນທີ່ປະຊຸມສານ.

### 4.4. ການພິຈາລະນາຄະດີໃນທີ່ປະຊຸມສານ

ການພິຈາລະນາຄະດີໃນທີ່ປະຊຸມສານແມ່ນດຳເນີນຢ່າງເປີດເຜີຍ ແລະ ປະຕິບັດຕາມລະບຽບປະຊຸມສານຄືກັນກັບການພິຈາລະນາຄະດີ ກ່ຽວກັບການຮ້ອງຟ້ອງທາງແພ່ງທີ່ກຳນົດໄວ້ໃນມາດຕາ 326 ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012, ຄະນະສານຕ້ອງ ນຳເອົາຂໍ້ມູນຫຼັກຖານມາພິຈາລະນາໃນທີ່ປະຊຸມສານໂດຍກວດກາຫຼັກຖານທີ່ມີໃນສຳນວນຄະດີທັງໝົດ ສິ່ງສຳຄັນແມ່ນເອກະສານຢັ້ງຢືນ ການກວດສຸກຂະພາບຂອງບຸກຄົນທີ່ເປັນເປົ້າໝາຍການຮ້ອງຂໍ ແລະ ສະເໜີໃຫ້ພະນັກງານໄອຍະການປະຊາຊົນ ມີຄຳເຫັນແລ້ວປິດປະຊຸມສານຊົ່ວຄາວ ເພື່ອກວດກາຊັ່ງຊາຕີລາຄາຫຼັກຖານໃນຫ້ອງປະຊຸມລັບ.

### 4.5. ການລົງ ຄຳຕັດສິນ

ໃນການລົງຄຳຕັດສິນຂອງສານຈະຮັບຮູ້ຄຳຮ້ອງຂໍຈາກພໍ່ແມ່, ຜູ້ປົກຄອງ, ຜູ້ຕາງໜ້າໂຮງຮຽນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ[13], ແມ່ນຂຶ້ນກັບການກວດກາຊັ່ງຊາຕີລາຄາຫຼັກຖານຂອງສານລວມທັງຜົນຂອງການໄຕ່ສວນໃນທີ່ປະຊຸມສານ, ຖ້າຫຼັກຖານບໍ່ຄົບຖ້ວນບໍ່ຮັດກຸມສານກໍຈະລົງຄຳຕັດສິນ ບໍ່ຮັບຮູ້ວ່າບຸກຄົນໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ; ຖ້າການຮ້ອງຂໍນັ້ນຫາກມີຂໍ້ມູນຫຼັກຖານຄົບຖ້ວນ ພ້ອມທັງການຢັ້ງຢືນຂອງຜົນການກວດສຸກຂະພາບຂອງຄະນະແພດທີ່ກ່ຽວຂ້ອງແລ້ວ ສານກໍຈະລົງຄຳຕັດສິນຮັບຮູ້ວ່າບຸກຄົນທີ່ເປັນເປົ້າໝາຍ ການຮ້ອງຂໍນັ້ນ ເປັນ

---

[13] ກົດໝາຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 331

ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ, ເມື່ອສານຮັບຮູ້ແລ້ວໃນຄໍາຕັດສິນສານ ກໍຕ້ອງກໍານົດຜູ້ຕາງໜ້າຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແລະ ຂອບເຂດການເປັນຜູ້ຕາງໜ້າ.

## 5. ຜົນສະທ້ອນຂອງຄໍາຕັດສິນຮັບຮູ້ວ່າບຸກຄົນໃດໜຶ່ງເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ

ໃນກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງໄດ້ກໍານົດວ່າ: "ເມື່ອມີຄໍາຕັດສິນຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດແລ້ວ, ການກະທໍາຂອງຜູ້ກ່ຽວຈະບໍ່ມີຜົນທາງດ້ານກົດໝາຍແຕ່ຢ່າງໃດ ເປັນຕົ້ນການເຮັດສັນຍາ, ຊັບສິນບັດຂອງຜູ້ບໍ່ມີຄວາມາສາມາດທາງດ້ານການປະພຶດຈະຢູ່ພາຍໃຕ້ການຄຸ້ມຄອງຂອງຜູ້ປົກຄອງຂອງຜູ້ກ່ຽວ, ຜູ້ປົກຄອງດັ່ງກ່າວ ມີສິດນໍາໃຊ້ຊັບສິນບັດນັ້ນ ເຂົ້າໃນເປົ້າໝາຍການເບິ່ງແຍງ, ລ້ຽງດູຜູ້ກ່ຽວ ຫຼື ຊັບສິນບັດນັ້ນບໍ່ໃຫ້ຕົກເຮ່ຍເສັຍຫາຍ"[14].

ເມື່ອສານໄດ້ລົງຄໍາຕັດສິນຮັບຮູ້ວ່າບຸກຄົນໃດໜຶ່ງບໍ່ມີຄວາມສາມາດທາງດ້ານການປະພຶດແລ້ວຜູ້ກ່ຽວກໍຈະເປັນບຸກຄົນທີ່ບໍ່ສມາດບັນຊາການກະທໍາຂອງຕົນເອງຄືກັບຄົນປົກກະຕິໄດ້ ທຸກການເຄື່ອນໄຫວທາງດ້ານກົດໝາຍ ແມ່ນຕ້ອງໃຫ້ມີ ຜູ້ຕາງໜ້າເຂົ້າຮ່ວມນໍາ ຈຶ່ງມີຜົນໃຊ້ໄດ້ທາງກົດໝາຍ.

ດັ່ງນັ້ນ, ຈຶ່ງພໍສະຫຼຸບໄດ້ວ່າ:ຜົນຂອງຄໍາຕັດສິນຂອງສານໃນກໍລະນີຄໍາຕັດສິນຮັບຮູ້ວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດແລ້ວ ຈະມີຜົນສະທ້ອນດັ່ງນີ້:

(1) ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຈະມີຜູ້ປົກຄອງ ເຖິງວ່າ ບໍ່ມີການຮ້ອງຂໍກໍຕາມເພາະສານໄດ້ກໍານົດໃນຄໍາຕັດສິນ;

(2) ການກະທໍາຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຈະບໍ່ມີຜົນທາງດ້ານກົດໝາຍແຕ່ຢ່າງໃດເປັນຕົ້ນການເຮັດສັນຍາ;

(3) ຊັບສິນບັດ ຂອງຜູ້ກ່ຽວຈະຢູ່ພາຍໃຕ້ການຄຸ້ມຄອງຂອງຜູ້ປົກຄອງຂອງຜູ້ກ່ຽວ;

(4) ຜູ້ປົກຄອງ ຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຈະມີສິດໃນການ ນໍາໃຊ້ຊັບສິນບັດ ຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ເຂົ້າໃນເປົ້າຫມາຍການເບິ່ງແຍງລ້ຽງດູ ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ປົກປັກຮັກສາ ຊັບສິນບັດນັ້ນບໍ່ໃຫ້ຕົກເຮ່ຍເສັຍຫາຍ.

## 6. ການດໍາເນີນຕໍ່ຜູ້ທີ່ຖືກສານຕັດສິນວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດໄດ້ກັບຄືນສູ່ສະພາບປົກກະຕິ.

ການລົງຄໍາຕັດສິນຮັບຮູ້ວ່າບຸກຄົນໃດໜຶ່ງເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແມ່ນການຮັບຮູ້ສະຖານະພາບຂອງບຸກຄົນນັ້ນໃຫ້ຖືກຕ້ອງຕາມກົດໝາຍ ເພື່ອເຮັດໃຫ້ເຂົາເຈົ້າ ສາມາດເຂົ້າຮ່ວມ ສາຍພົວພັນທາງດ້ານກົດໝາຍຢ່າງຖືກຕ້ອງ ທັງເປັນການຮັບປະກັນໃນການປົກປ້ອງສິດ ແລະ ຜົນປະ ໂຫຍດຂອງ ຜູ້ກ່ຽວ, ສະນັ້ນ ເມື່ອສານໄດ້ລົງຄໍາຕັດສິນຮັບຮູ້ວ່າ ບໍ່ມີຄວາມສາມາດທາງດ້ານການປະພຶດແລ້ວຜົນຂອງຄໍາຕັດສິນຂອງສານ ຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດຈະມີຜົນສັກສິດຈົນກວ່າ ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ກັບຄືນສູ່ສະພາບປົກກະຕິ ຕາມການຢັ້ງຢືນຈາກແພດແລ້ວ ຜູ້ກ່ຽວເອງ ຫຼື ຜູ້ມີຜົນປະໂຫຍດກ່ຽວຂ້ອງ ກໍສາມາດຍື່ນຄໍາຮ້ອງຂໍຕໍ່ສານຂັ້ນຕົ້ນທີ່ກ່ຽວຂ້ອງ ເພື່ອໃຫ້ສານພິຈາລະນາຕັດສິນ ລົບລ້າງຄໍາຕັດສິນທີ່ຮັບຮູ້ວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດນັ້ນຖິ້ມ ແລ້ວສິດທັງໝົດຂອງຜູ້ກ່ຽວກໍຈະຖືກຟື້ນຟູຄືນ ໝາຍຄວາມວ່າ ຜູ້ກ່ຽວ ມີຄວາມສາມາດບັນຊາການກະທໍາຂອງຕົນ ດ້ວຍຕົນເອງ ບໍ່ຈໍາເປັນ ຕ້ອງໃຫ້ມີການເຂົ້າຮ່ວມ ຂອງຜູ້ຕາງໜ້າ.

ການພິຈາລະນາຄໍາຮ້ອງຂໍລົບລ້າງຄໍາຕັດສິນນັ້ນຕ້ອງໃຫ້ສໍາເລັດພາຍໃນກໍານົດເວລາ 15 ວັນ, ເນື້ອໃນຄໍາຮ້ອງຂໍໃຫ້ປະຕິບັດຕາມມາດຕາ 324 ຂອງກົດໝາຍວ່າດ້ວຍການດາເນີນຄະດີແພ່ງ ສະບັບປັບປຸງປີ 2012, ສານອາດຈະ

[14]ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງ ປີ 2012, ມາດຕາ 335

ຮັບຮູ້ ຫຼື ບໍ່ຮັບຮູ້ຕໍ່ກັບການຂໍລຶບລ້າງແມ່ນຂຶ້ນຢູ່ກັບຂໍ້ມູນຫຼັກຖານທີ່ຜູ້ຮ້ອງຂໍສະເໜີມາບວກກັບການຢັ້ງຢືນ ຂອງຄະນະແພດທີ່ກ່ຽວຂ້ອງ.

# ບົດທີ 4
# ການປະກາດເປັນຜູ້ຫາຍສາບສູນ ຫຼື ເສຍຊີວິດ

## 1. ຄວາມໝາຍ ການປະກາດເປັນຜູ້ຫາຍສາບສູນ ຫຼື ເສຍຊີວິດ

ຜູ້ຫາຍສາບສູນ ໝາຍເຖິງການຫາຍໄປຂອງບຸກຄົນໃດໜຶ່ງຈາກຄອບຄົວໂດຍຂາດການຕິດຕໍ່ ຫຼື ກໍລະນີເກີດອຸປະຕິເຫດຫາກບໍ່ຮູ້ຂ່າວຄາວ ຊຶ່ງຜູ້ກ່ຽວອາດຈະຍັງມີຊີວິດຢູ່ຫຼືອາດຈະເສຍຊີວິດແລ້ວແຕ່ບໍ່ເຫັນຊາກສົບແລະບໍ່ມີຜູ້ຮູ້ເຫັນບຸກຄົນດັ່ງກ່າວ.

ຜູ້ເສຍຊີວິດ ໝາຍເຖິງການຫາຍໄປຂອງບຸກຄົນໃດໜຶ່ງໃນສົງຄາມ, ໃນເວລາມີໄພພິບັດ ຊຶ່ງພາຍຫຼັງສິ້ນສຸດສົງຄາມ ຫຼື ໄພພິບັດໄດ້ພະຍາຍາມຊອກຫາ, ຊອກຄົ້ນແຕ່ບໍ່ພົບເຫັນຊາກສົບ ຫຼື ຮ່ອງຮອຍຊຶ່ງຜູ້ກ່ຽວອາດຈະຍັງມີຊີວິດຢູ່ ຫຼື ອາດຈະເສຍຊີວິດແລ້ວ.

ໃນການປະກາດເປັນຜູ້ຫາຍສາບສູນນັ້ນກົດໝາຍໄດ້ກຳນົດໄວ້ວ່າ "ບຸກຄົນດັ່ງກ່າວຫາຍໄປຈາກຄອບຄົວໂດຍຂາດການຕິດຕໍ່ເປັນເວລາສອງປີ ຫຼືກໍລະນີເກີດອຸປະຕິເຫດຫາກບໍ່ຮູ້ຂ່າວຄາວເປັນເວລາຫົກເດືອນພ້ອມກັດຕິດເອກະສານທີ່ຢັ້ງຢືນວ່າໄດ້ຊອກຫາດ້ວຍການແຈ້ງຄວາມ, ປະກາດ ຫຼື ດ້ວຍວິທີການອື່ນແລ້ວ"[15].

ໃນການປະກາດເປັນຜູ້ເສຍຊີວິດນັ້ນກົດໝາຍໄດ້ກຳນົດໄວ້ວ່າ "ບຸກຄົນດັ່ງກ່າວໄດ້ຫາຍໄປໃນສົງຄາມ, ໃນເວລາມີໄພພິບັດ; ພາຍຫຼັງສິ້ນສຸດສົງຄາມຫຼືໄພພິບັດໄດ້ພະຍາຍາມຊອກຫາ, ຊອກຄົ້ນແຕ່ບໍ່ພົບເຫັນຊາກສົບ ຫຼື ຮ່ອງຮອຍ ຊຶ່ງໄດ້ພະຍາຍາມຊອກຫາພາຍໃນເວລາສອງປີແຕ່ບໍ່ພົບໂດຍມີການຢັ້ງຢືນຈາກພະຍານ, ຜູ້ຊ່ຽວຊານຫຼືພະນັກງານວິຊາການທາງການແພດ"[16].

ສະນັ້ນ, ການປະກາດເປັນຜູ້ຫາຍສາບສູນ ຫຼື ເສຍຊີວິດຈຶ່ງໝາຍເຖິງການລົງຄຳຕັດສິນຂອງສານປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາຍສູນຫຼືເສຍຊີວິດຕາມຂໍ້ມູນຫຼັກຖານແລະກຳນົດເວລາທີ່ກຳນົດໄວ້ໃນກົດໝາຍ.

## 2. ຄວາມສຳຄັນ

ການປະກາດຂອງສານວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນຫຼືເສຍຊີວິດ ແມ່ນມີຄວາມສຳຄັນຫລາຍຕໍ່ລະບົບການບໍລິຫານລວມ, ພ້ອມນີ້ທັງເປັນການປົກປັກຮັກສາສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍໂດຍສະເພາະຕໍ່ບຸກຄົນ ຫຼື ການຈັດຕັ້ງທີ່ຜູ້ກ່ຽວມີພັນທະ ແລະ ຕ້ອງປະຕິບັດໃຫ້ສຳເລັດ; ຕໍ່ຄອບຄົວຫຼືຍາດຕິພີ່ນ້ອງຂອງຜູ້ກ່ຽວ ແລະ ຕໍ່ຜູ້ຖືກສານຕັດສິນວ່າເປັນຜູ້ທີ່ຫາຍສາບສູນ ຫຼື ເສຍຊີວິດເອງ:

- ຄວາມສຳຄັນຕໍ່ການບໍລິຫານລວມ, ການປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ເສຍຊີວິດແມ່ນມີຜົນໃນການເກັບກຳສະຖິຕິພົນລະເມືອງທີ່ໄດ້ຈົດເຂົ້າໃນປຶ້ມສຳມະໂນເພື່ອເກັບກຳຈຳນວນພົນຂອງແຕ່ລະຄອບຄົວ ຊຶ່ງບັນຫາດັ່ງກ່າວເປັນການປະກອບສ່ວນເຂົ້າໃນວຽກງານ ເຊັ່ນ ການອອກບັດປະຈຳຕົວ, ໃບຢັ້ງຢືນທີ່ຢູ່, ການຄຸ້ມຄອງພົນລະເມືອງ ແລະອື່ນໆ ຊຶ່ງໃນບັນຊີຜູ້ມີໜ້າໃນຄອບຄົວ ຂອງຜູ້ກ່ຽວຈະຖືກໝາຍໄວ້ວ່າເປັນຜູ້ຫາຍສາບສູນ ຫຼື ເສຍຊີວິດ.
- ຕໍ່ຄອບຄົວ ຫຼື ຍາດພີ່ນ້ອງຜູ້ກ່ຽວ: ໃນການລົງຄຳຕັດສິນປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ເສຍຊີວິດ ມີຄວາມສຳຄັນກັບຕໍ່ຄອບຄົບ ຜູ້ກ່ຽວນັ້ນ ກ່ອນອື່ນແມ່ນມີຜົນກ່ຽວກັບສາຍພົວພັນ ຜົວເມຍຂອງຜູ້ກ່ຽວ ຊຶ່ງຈະເປັນເງື່ອນໄຂພາໃຫ້ ຜົວ ຫຼື ເມຍ ມີສິດຮ້ອງຂໍຢ່າຮ້າງເພື່ອຂາດຈາກສາຍພົວພັນຜົວເມຍຕາມທີ່ກຳນົດໄວ້ໃນກົດໝາຍຄອບຄົວ[17]; ໃນກໍລະນີຜູ້ກ່ຽວມີຊັບສິນບັດປະໄວ້ ຜູ້ສືບທອດ ຫຼືພີ່ນ້ອງ

[15]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 337

[16]ອ້າງແລ້ວ, ມາດຕາ 337

[17]ກົດໝາຍຄອບຄົວ, ສະບັບປັບປຸງປີ 2008, ມາດຕາ 20

ກໍມີສິດຮ້ອງຂໍເຂົ້າໃນການຄຸ້ມຄອງຊັບສົມບັດ ຫຼື ຂໍໃຫ້ເປີດການສືບທອດມູນມໍຣະດົກ[18] ຫຼື ນຳໃຊ້ເຂົ້າໃນການປົກປັກຮັກສາຊັບສົມບັດ ແລະ ເປັນຄ່າລ້ຽງດູລູກຜູ້ກ່ຽວ. ນອກນັ້ນ ເມື່ອຜູ້ກ່ຽວຫາກຍັງມີພັນທະຕໍ່ບຸກຄົນ ຫຼື ການຈັດຈັ້ງອື່ນຄືມີໜີ້ສິນນັ້ນ, ບຸກຄົນ ຫຼືການຈັດຕັ້ງດັ່ງກ່າວ ກໍມີສິດຮ້ອງຂໍຕໍ່ສານເພື່ອທວງເອົາການໃຊ້ແທນໜີ້ສິນຫຼືຮ້ອງຂໍໃຫ້ປະກາດຂາຍຊັບສົມບັດຂອງຜູ້ກຽວເພື່ອໃຊ້ແທນໜີ້ ນຳຜູ້ສືບທອດຫຼືຍາດພີ່ນ້ອງຜູ້ກ່ຽວ ຕາມລະບຽບກົດໝາຍ.

– ສຳລັບຕໍ່ຜູ້ທີ່ສານໄດ້ພິຈາລະນາຕັດສິນປະກາດວ່າເປັນຜູ້ຫາຍສາບສູນ ຫຼື ເສັຍຊີວິດແມ່ນເຮັດໃຫ້ ຄວາມສາມາດທາງດ້ານກົດໝາຍຂອງຜູ້ກ່ຽວ ສິ້ນສຸດລົງ, ສະນັ້ນ ໃນກໍລະນີ ນີ້ໃນຄວາມເປັນ ເຖິງວ່າ ຜູ້ກ່ຽວ ຍັງມີຊີວິດ ຢູ່ກໍຕາມ ຜູ້ກ່ຽວກໍບໍ່ສາມາດ ກະທຳສິ່ງໃດສິ່ງໜຶ່ງ ຄືກັນກັບ ບຸກຄົວທົ່ວໄປໄດ້ ທຸກການເຄື່ອນໄຫວ ຂອງ ຜູ້ກ່ຽວ ແມ່ນ ບໍ່ມີຜົນທາງດ້ານກົດໝາຍ ເຊັ່ນ ຜູ້ກ່ຽວຫາກໄດ້ແຕ່ງດອງໃໝ່ ຫຼື ເຮັດສັນຍາຕ່າງໆ ກໍ ຈະເປັນໂມຄະທັງໝົດ ເພາະຜູ້ກ່ຽວ ໄດ້ຂາດຄວາມສາມາດທາງດ້ານກົດໝາຍ ຕາມຄຳຕັດສິນຂອງສານແລ້ວ.

## 3. ເງື່ອນໄຂ

ພົນລະເມືອງລາວມີສິດຮ້ອງທຸກ, ຮ້ອງຟ້ອງແລະສະເໜີຄວາມເຫັນຕໍ່ອົງການທີ່ກ່ຽວຂ້ອງກ່ຽວກັບບັນຫາທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດລວມຫຼືສິດແລະຜົນປະໂຫຍດສະເພາະຂອງຕົນ; ຄຳຮ້ອງທຸກ, ຄຳຮ້ອງຟ້ອງ ແລະ ຄວາມເຫັນຂອງພົນລະເມືອງຕ້ອງໄດ້ຮັບການພິຈາລະນາແລະແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາ[19]. ສະນັ້ນ ການຮ້ອງຂໍໃຫ້ສານປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສັຍຊີວິດກໍແມ່ນສິດໜຶ່ງຂອງບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງຊຶ່ງສາມາດປະຕິບັດໄດ້.

ໃນກໍລະນີຫາກມີການຮ້ອງຂໍຂອງບຸກຄົນຫຼືການຈັດຕັ້ງໃດໜຶ່ງທີ່ກ່ຽວຂ້ອງຕໍ່ສານເພື່ອໃຫ້ພິຈາລະນາປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ຜູ້ເສັຍຊີວິດນັ້ນສານຈະຮັບຄຳຮ້ອງດັ່ງກ່າວມາພິຈາລະນາ ກໍຕໍ່ເມື່ອມີເງື່ອນໄຂດັ່ງນີ້:

### 3.1. ຄຳຮ້ອງຂໍ

ຄຳຮ້ອງຂໍຕ້ອງເປັນລາຍລັກອັກສອນ ແລະ ມີເນື້ອໃນຄົບຖ້ວນຕາມຮ່າງແບບພິມຂອງສານກຳນົດ ແລະປະກອບເອກະສານທີ່ຢັ້ງຢືນວ່າບຸກຄົນດັ່ງກ່າວເປັນຜູ້ຫາຍສາບສູນຫຼືເສັຍຊີວິດແລະຕ້ອງຍື່ນດ້ວຍບຸກຄົນທີ່ມີສິດ ເຊັ່ນ ຜົວ ຫຼື ເມັຍ, ພໍ່, ແມ່, ຍາດພີ່ນ້ອງ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ.

### 3.2. ສຳລັບຄຳຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນນັ້ນ

ສຳລັບຄຳຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນນັ້ນຍັງຕ້ອງບົ່ງບອກວ່າບຸກຄົນດັ່ງກ່າວ ຫາຍໄປຈາກຄອບຄົວ ໂດຍຂາດການຕິດຕໍ່ເປັນເວລາສອງປີ ຫຼືກໍລະນີເກີດອຸປະຕິເຫດຫາກບໍ່ຮູ້ຂ່າວຄາວ ເປັນເວລາຫົກເດືອນ, ພ້ອມຄັດຕິດເອກະສານທີ່ຢັ້ງຢືນວ່າໄດ້ຊອກຫາດ້ວຍການແຈ້ງຄວາມ, ປະກາດ ຫຼື ດ້ວຍວິທີການອື່ນແລ້ວ.

### 3.3. ສຳລັບຄຳຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ເສັຍຊີວິດນັ້ນ

ສຳລັບຄຳຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ເສັຍຊີວິດນັ້ນ ຕ້ອງບົ່ງບອກຫຼັກຖານທີ່ຢັ້ງຢືນວ່າບຸກຄົນດັ່ງກ່າວໄດ້ຫາຍໄປໃນສົງຄາມ, ໃນເວລາມີໄພພິບັດ; ພາຍຫຼັງສິ້ນສຸດສົງຄາມ ຫຼື ໄພພິບັດໄດ້ພະຍາຍາມຊອກຫາ, ຊອກຄົ້ນແຕ່ບໍ່ພົບເຫັນຊາກສົບ ຫຼື ຮ່ອງຮອຍ ຊຶ່ງໄດ້ພະຍາຍາມຊອກຫາພາຍໃນເວລາສອງປີ, ແຕ່ບໍ່ພົບໂດຍມີການຢັ້ງຢືນຈາກພະຍານ, ຜູ້ຊ່ຽວຊານ ຫຼື ພະນັກງານວິຊາການທາງການແພດ;

---

[18] ກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ, ສະບັບປັບປຸງປີ 2008, ມາດຕາ 5

[19] ລັດຖະທຳມະນູນ ແຫ່ງ ສປປລາວ, ສະບັບປັບປຸງປີ 1991, ມາດຕາ 41

ເງື່ອນໄຂໃນການຮ້ອງໃຫ້ສານ ປະກາດວ່າ ບຸກຄົນໃດໜຶ່ງເປັນ ຜູ້ຫາຍສາບສູນ ຫຼື ເປັນຜູ້ເສຍຊີວິດນັ້ນ ແມ່ນມີຄວາມສຳຄັນ ແກ່ຜູ້ຮ້ອງຂໍຕໍ່ສານຄວນເອົາໃຈໃສ່ ເພາະເງື່ອນໄຂ ການຮ້ອງຂໍ ແຕ່ລະປະເພດແມ່ນ ມີຄວາມແຕກຕ່າງກັນ ຖ້າເຫັນວ່າສະພາບຕົວຈິງຂອງບຸກຄົນທີ່ເປັນເປົ້າໝາຍ ຂອງການຮ້ອງຂໍ ນັ້ນຖືກກັບເງື່ອນໄຂ ການຫາຍສາບສູນ ກໍໃຫ້ຮ້ອງຂໍໃຫ້ສານປະກາດວ່າເປັນຜູ້ຫາຍສາບສູນ ຫຼື ຖືກກັບເງື່ອນໄຂການເສຍຊີວິດ ກໍຕ້ອງຮ້ອງຂໍໃຫ້ສານປະກາດວ່າເປັນຜູ້ເສຍຊີວິດ ບໍ່ຄວນຮ້ອງຂໍປົນເປກັນເພາະຈະເປັນການສ້າງຄວາມ ສັບສົນໃຫ້ແກ່ສານໃນການພິຈາລະນາຄະດີ ໃຫ້ຖືກຕາມເປົ້າໝາຍຂອງການຮ້ອງຂໍ.

## 4. ການພິຈາລະນາຄະດີ ຮ້ອງຂໍໃຫ້ປະກາດເປັນຜູ້ຫາຍສາບສູນ ຫຼື ເສຍຊີວິດ

ການພິຈາລະນາຄຳຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ເສຍຊີວິດແມ່ນການຄົ້ນຄວ້າພິຈາລະນາຕັດສີນຄະດີ ຂອງສານກ່ຽວກັບ ການຮ້ອງຂໍບັນຫາດັ່ງກ່າວ ຊຶ່ງການພິຈາລະນາຄະດີນັ້ນ ໂດຍທົ່ວໄປກໍຄືກັນກັບການ ພິຈາລະນາຄະດີ ໃນການຮ້ອງຟ້ອງທາງແພ່ງ, ແຕ່ມີຈຸດແຕກຕ່າງກັນກໍຄືມີແຕ່ຝ່າຍຜູ້ຮ້ອງຂໍ (ໂຈດ) ເຂົ້າຮ່ວມໃນການດຳເນີນຄະດີ ຈະບໍ່ມີຈຳເລີຍ ຫຼື ຝ່າຍອື່ນມາໂຕ້ແຍ່ງ, ສະນັ້ນ ໃນການພິຈາລະນາຄະດີຂອງສານທີ່ກ່ຽວກັບບັນຫານີ້ສານກໍຕ້ອງໄດ້ເອົາໃຈໃສ່ບາງຂັ້ນຕອນດັ່ງນີ້:

### 4.1. ກວດກາຄຳຮ້ອງຂໍ

ການກວດກາຄຳຮ້ອງຂໍແມ່ນໜ້າທີ່ຂອງຈ່າສານທີ່ກ່ຽວຂ້ອງ ຕ້ອງໄດ້ກວດກາຄຳຮ້ອງຂໍໃນເວລາທີ່ຜູ້ຮ້ອງຂໍໄດ້ຍື່ນຄຳຮ້ອງຂໍຕໍ່ສານ ຊຶ່ງຄວນກວດກາເບິ່ງຄຳຮ້ອງຂໍດັ່ງນີ້:

- ຄຳຮ້ອງຂໍຖືກຍື່ນຕໍ່ສານທີ່ມີສິດອຳນາດແລ້ວບໍຊຶ່ງການຮ້ອງຂໍໃຫ້ສານປະກາດວ່າບຸກຄົນໃດໜຶ່ງເປັນ ຜູ້ຫາຍສາບສູນ ຫຼື ເສຍຊີວິດນີ້ ແມ່ນ ຢູ່ຂອບເຂດສິດອຳນາດຂອງສານປະຊາຊົນເຂດ ຮັບຜິດຊອບພິຈາລະນາຕັດສິນ[20] .
- ຮ້ອງຂໍຖືກຍື່ນໂດຍບຸກຄົນທີ່ມີສິດ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງບໍ;
- ຄຳຮ້ອງຂໍໄດ້ຂຽນຖືກຕ້ອງຕາມແບບພິມຂອງສານຫຼື ສອດຄ່ອງກັບເນື້ອໃນທີ່ໄດ້ບົ່ງໄວ້ ໃນມາດຕາ 324 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງ ປີ 2012 ບໍ;
- ຄຳຮ້ອງຂໍມີຂໍ້ມູນຫຼັກຖານທີ່ພົວພັນກັບການຮ້ອງຂໍຄັດຕິດມາພ້ອມຫຼືບໍ.

ໃນກໍລະນີຖ້າຄຳຮ້ອງຂໍດັ່ງກ່າວຫາກບໍ່ຖືກຕ້ອງສານ (ຈ່າສານ) ກໍຈະແນະນຳໃຫ້ຜູ້ຮ້ອງຂໍປັບປຸງແກ້ໄຂບັນຫາທີ່ຍັງບໍ່ທັນຖືກຕ້ອງ ຫຼື ຂໍ້ບົກພ່ອງຂອງຄຳຮ້ອງຂໍດັ່ງກ່າວເສຍກ່ອນແລ້ວມາຍື່ນຕໍ່ສານເພື່ອນຳໄປພິຈາລະນາ.

ໃນກໍລະນີຫາກເຫັນວ່າ ຄຳຮ້ອງຂໍດັ່ງກ່າວມີຄວາມຖືກຕ້ອງແລ້ວສານ (ຈ່າສານ) ຕ້ອງຮັບຄຳຮ້ອງຂໍເຂົ້າເລກທີຂຶ້ນຟ້ອງເປັນສຳນວນຄະດີແລ້ວນຳເອົາອອກມາພິຈາລະນາ ພາຍໃນກຳນົດເວລາ ສິບຫ້າວັນ ແລະ ດຳເນີນຕາມຂັ້ນຕອນການພິຈາລະນາຄຳຮ້ອງຂໍ.

### 4.2. ການຄົ້ນຄວ້າຄະດີ

ເມື່ອສານໄດ້ຮັບຄຳຮ້ອງຂໍມາພິຈາລະນາແລ້ວຫົວໜ້າຄະນະສານເປັນຜູ້ແຈກຢາຍສຳນວນຄະດີໃຫ້ຜູ້ພິພາກສາຜູ້ໃດຜູ້ໜຶ່ງດຳເນີນການຄົ້ນຄວ້າ, ໃນການຄົ້ນຄວ້ານັ້ນ ຜູ້ພິພາກສາຮັບຜິດຊອບຄະດີ ຕ້ອງກວດກາຂໍ້ມູນຫຼັກຖານ, ເອກະສານທີ່ກ່ຽວຂ້ອງທີ່ຜູ້ຮ້ອງຂໍໄດ້ຍື່ນຕໍ່ສານທັງໝົດເປັນຕົ້ນ ແມ່ນການຫາຍໄປຂອງບຸກຄົນທີ່ກ່ຽວຂ້ອງໂດຍຜູ້ກ່ຽວບໍ່ໄດ້ພົວພັນຕິດຕໍ່ຫາຄອບຄົວ ແລ້ວຄອບຄົວ ຫຼື ຍາດພີ່ນ້ອງ ກໍໄດ້ແຈ້ງຄວາມເພື່ອຊອກຫາຜູ້ກ່ຽວຊຶ່ງມີໜັງສືຢັ້ງຢືນເຫດການແຈ້ງຄວາມຕໍ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງຄັກແນ່.

[20] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 323

**4.3. ການເກັບກຳຂໍ້ມູນຫຼັກຖານ**

ເມື່ອຜູ້ພິພາກສາຮັບຜິດຊອບຄະດີຫາກເຫັນວ່າຄຳຮ້ອງຂໍດັ່ງກ່າວມີຂໍ້ມູນຫຼັກຖານຄົບຖ້ວນແລ້ວກໍນຳສະເໜີຜົນການຄົ້ນຄວ້ານັ້ນຕໍ່ຄະນະສານ ເພື່ອໃຫ້ອອກຄຳຕົກລົງປະກາດຫາບຸກຄົນດັ່ງກ່າວ ໂດຍຜ່ານທາງສື່ມວນຊົນ, ຕິດປະກາດຢູ່ຫ້ອງການສານປະຊາຊົນທີ່ກ່ຽວຂ້ອງ, ຫ້ອງການປົກຄອງບ້ານແລະບ່ອນຢູ່ສຸດທ້າຍຂອງຜູ້ກ່ຽວໃນກຳນົດເວລາສາມເດືອນ;

ພາຍໃນ ກຳນົດເວລາສາມເດືອນຖ້າຜູ້ກ່ຽວ ຫາກກັບຄືນມາ ຫຼື ບໍ່ກັບຄືນມາ ແຕ່ ຜູ້ຮ້ອງຂໍໄດ້ ຍື່ນຄຳຮ້ອງເພື່ອຖອນຄຳຮ້ອງຂໍໃຫ້ຢຸດເຊົາການດຳເນີນຄະດີແລ້ວ ຄະນະສານ ຕ້ອງອອກຄຳສັ່ງຊັດມ້ຽນຄະດີ ຕາມທີ່ກຳນົດໄວ້ໃນມາດຕາ 203 ຂອງກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012 ໝາຍຄວາມວ່າ ການດຳເນີນຄະດີຖືກສິ້ນສຸດລົງ ແລະ ສານກໍຈະບໍ່ນຳເອົາຄະດີມາພິຈາລະນາຄືນໃໝ່ອີກ.

**4.4. ການພິຈາລະນາຄະດີໃນທີ່ປະຊຸມສານ**

ເມື່ອໝົດກຳນົດເວລາຂອງການປະກາດ, ຜູ້ກ່ຽວບໍ່ກັບຄືນມາ ຫຼື ບໍ່ໄດ້ພົວພັນຕິດຕໍ່ຫາຄອບຄົວ ຫຼື ບໍ່ມີແຫຼ່ງຂ່າວວ່າຜູ້ກ່ຽວຍັງມີຊີວິດຢູ່ໃສແລ້ວຄະນະສານຕ້ອງອອກຄຳຕົກລົງເພື່ອນຳເອົາຄະດີອອກມາພິຈາລະນາຕັດສິນໃນທີ່ປະຊຸມສານ[21]ຊຶ່ງໃນການພິຈາລະນາຄະດີນັ້ນໃຫ້ປະຕິບັດຕາມລະບຽບການດັ່ງນີ້:

– ລະບຽບການເປີດປະຊຸມສານໃຫ້ປະຕິບັດດັ່ງດຽວກັນກັບຂັ້ນຕອນຂອງການປະຊຸມສານທົ່ວໄປຢູ່ສານຂັ້ນຕົ້ນ,ມີຄວາມແຕກຕ່າງ ຄື ມີແຕ່ຜູ້ຮ້ອງຂໍເຂົ້າຮ່ວມປະຊຸມສານ;
– ຄະນະສານສະເໜີ ໃຫ້ຜູ້ຮ້ອງຂໍມີຄຳເຫັນຕໍ່ການຮ້ອງຂໍ ແລະ ໄຕ່ສວນພະຍານ ລວມທັງບຸກຄົນອື່ນທີ່ກ່ຽວຂ້ອງ;
– ຄະນະສານນຳເອົາຂໍ້ມູນຫຼັກຖານມາພິຈາລະນາໃນທີ່ປະຊຸມສານ ໂດຍກວດກາທຸກຫຼັກຖານທັງໝົດທີ່ຜູ້ຮ້ອງຂໍໄດ້ປະກອບມາໃຫ້ສານຄົບຖ້ວນແລ້ວຈຶ່ງສະເໜີໃຫ້ພະນັກງານໄອຍະການປະຊາຊົນມີຄຳເຫັນກ່ອນການປິດປະຊຸມສານເພື່ອພິຈາລະນາຄະດີໃນຫ້ອງປະຊຸມລັບ[22].

**4.5. ການລົງຄຳຕັດສິນ**

ເມື່ອຄະນະສານໄດ້ກວດກາຊັ່ງຊາຕີລາຄາຫຼັກຖານ ພ້ອມທັງຜົນຂອງການໄຕ່ສວນຄະດີໃນທີ່ປະຊູມສານແລ້ວຄະນະສານອາດຈະລົງຄຳຕັດສິນຕາມແຕ່ລະ ກໍລະນີດັ່ງນີ້:

– ໃຫ້ຍົກເລີກການຮ້ອງຂໍຖີ້ມທັງໝົດ ໝາຍຄວາມວ່າ ໂຈດບໍ່ມີສິດຮ້ອງຂໍ ໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ເສັຍຊີວິດ.
– ຮັບເອົາຄຳຮ້ອງຂໍມາພິຈາລະນາ ແລ້ວລົງຄຳຕັດສິນໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ເສັຍຊີວິດ;

ໃນກໍລະນີຖ້າສານຫາກລົງຄຳຕັດສິນປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ເສັຍຊີວິດນັ້ນສານກໍຕ້ອງລົງຄຳຕັດສິນແຕ່ງຕັ້ງຜູ້ຄຸ້ມຄອງຊັບສົມບັດຂອງຜູ້ກ່ຽວຫຼືຜູ້ທີ່ສານໄດ້ປະກາດວ່າເປັນບຸກຄົນທີ່ຫາຍສາບສູນ ຫຼື ເສັຍຊີວິດໂດຍລະບຸຢູ່ໃນຄຳຕັດສິນດຽວກັນ.

## 5. ຜົນສະທ້ອນຂອງການປະກາດວ່າເປັນຜູ້ຫາຍສາບສູນ ຫຼື ເສັຍຊີວິດ

ພາຍຫຼັງທີ່ສານໄດ້ລົງຄຳຕັດສິນປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ເສັຍຊີວິດແລ້ວກໍຈະມີຜົນສະທ້ອນທາງດ້ານກົດໝາຍຕໍ່ບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງດັ່ງນີ້:

[21]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 205

[22]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 326

- ເມື່ອສານໄດ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ເສັຍຊີວິດນັ້ນໄດ້ສິ່ງຜົນສະທ້ອນທາງດ້ານກົດໝາຍຕໍ່ຜູ້ກ່ຽວ ຊຶ່ງບໍ່ມີຄວາມສາມາດທາງດ້ານກົດໝາຍ ກໍຄືບໍ່ມີຖານະເຈົ້າກຳໃນສາຍພົວພັນທາງແພ່ງ; ໝາຍຄວາມວ່າ ເມື່ອມີຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດແລ້ວ ຄວາມສາມາດທາງດ້ານກົດໝາຍຂອງຜູ້ກ່ຽວ ແມ່ນບໍ່ມີ ທຸກການເຄື່ອນໄຫວທີ່ພົວພັນກັບກົດໝາຍ ແມ່ນໃຫ້ຖືວ່າເປັນໂມຄະ ເຊັ່ນ ຖ້າມີການຈົດທະບຽນແຕ່ງດອງ ຫຼື ການເຮັດສັນຍາ ກໍຈະບໍ່ມີຜົນບັງຄັບໃຊ້ໄດ້ທາງດ້ານກົດໝາຍ.
- ຜົນສະທ້ອນຕໍ່ຄອບຄົວຫຼືຍາດພີ່ນ້ອງຂອງ ຜູ້ຮ້ອງຂໍ ແມ່ນ ສາຍພົວພັນຄອບຄົວຈະຖືກຕັດຂາດຈາກກັນ, ຖ້າມີຊັບສິນ ກໍຈະຖືກແບ່ງປັນໃຫ້ຜູ້ມີສິດສືບທອດ ຕາມກົດໝາຍ.
- ນອກນັ້ນ ໃນເມື່ອສານໄດ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນແລ້ວສານກໍຈະແຕ່ງຕັ້ງຜູ້ຄຸ້ມຄອງຊັບສິນຂອງຜູ້ກ່ຽວໄວ້ເພື່ອເປົ້າໝາຍການໃຊ້ຈ່າຍໃນການປົກປັກຮັກສາຊັບສິນບັດ ຫຼື ເປັນຄ່າລ້ຽງດູລູກ (ຖ້າມີ) ຫຼື ເພື່ອໃຊ້ແທນໜີ້ສິນຂອງຜູ້ກ່ຽວໂດຍບຸກຄົນ ຫຼື ການຈັດຕັ້ງທີ່ເປັນເຈົ້າໜີ້ຂອງຜູ້ກ່ຽວມີສິດຮ້ອງຂໍຕໍ່ສານເພື່ອທວງເອົາການໃຊ້ແທນໜີ້ສິນ ແລະ ໃຫ້ປະກາດຂາຍຊັບສິນບັດຂອງຜູ້ກຽວ.

ຕາມຫຼັກການແລ້ວ ເຖິງແມ່ນວ່າຄອບຄົວ ຫຼື ຍາດພີ່ນ້ອງບຸກຄົນໃດໜຶ່ງ ຮັບຮູ້ວ່າພໍ່ ຫຼືແມ່ ຫຼື ສະມາຊິກຄອບຄົວ ຂອງຕົນໄດ້ຫາຍສາບສູນ ຫຼື ເສັຍຊີວິດແລ້ວ ຈະນຳເອົາຊັບສິນບັດຂອງຜູ້ກ່ຽວມາແບ່ງປັນກັນແບບໂດຍກົງນັ້ນແມ່ນບໍ່ສາມາດເຮັດໄດ້ ເປັນການຂັດກັບລະບຽບກົດໝາຍ ເພາະຍັງບໍ່ທັນຖືວ່າເປັນມູນມໍຣະດົກ, ສະນັ້ນ ເພື່ອຢາກເຮັດໃຫ້ຊັບສິນນັ້ນເປັນມູນມໍຣະດົກຈຳເປັນຕ້ອງໃຫ້ມີຄຳຕັດສິນຂອງສານປະກາດວ່າ ຜູ້ເປັນເຈົ້າຂອງຊັບສິນບັດນັ້ນເປັນຜູ້ຫາຍສາບສູນ ຫຼື ເສັຍຊີວິດເສັຍກ່ອນ.

## 6. ການດຳເນີນ ພາຍຫຼັງຜູ້ຖືກສານຕັດສິນປະກາດເປັນຜູ້ຫາຍສາບສູນ ຫຼື ເສັຍຊີວິດແລ້ວ, ແຕ່ຜູ້ກ່ຽວຍັງມີຊີວິດ

ໂດຍປົກກະຕິແລ້ວເສັຍຊີວິດຂອງຄົນມີສອງປະເພດຄື: ການເສັຍຊີວິດແບບທຳມະຊາດແມ່ນການສິ້ນລົມຫາຍໃຈຂອງຄົນທີ່ພົບເຫັນຊາກສົບດັກແນ່ ແລະການເສັຍຊີວິດຕາມກົດໝາຍກໍຄືການເສັຍຊີວິດຕາມຄຳຕັດສິນຂອງສານຊຶ່ງໃນກໍລະນີນີ້ຈະບໍ່ເຫັນຊາກສົບ, ຫາຍໄປໂດຍບໍ່ສົ່ງຂ່າວ ຫຼື ພົວພັນຕິດຕໍ່ຫາຄອບຄົວ,ແຕ່ຜູ້ກ່ຽວຍັງມີສາຍພົວພັນທາງດ້ານກົດໝາຍແກ່ຄອບຄົວ, ສະນັ້ນ ບຸກຄົນ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງຈຶ່ງຮ້ອງຂໍຕໍ່ສານເພື່ອປະກາດວ່າເປັນບຸກຄົນຫາຍສາບສູນ ຫຼື ເສັຍຊີວິດຕາມແຕ່ກໍລະນີທີ່ບົ່ງໄວ້ໃນກົດໝາຍ ນີ້ແມ່ນການເສັຍຊີວິດຕາມກົດໝາຍເທົ່ານັ້ນ, ໃນຄວາມເປັນຈິງຜູ້ກ່ຽວ ຈະເສັຍຊີວິດຫຼື ບໍ່ນັ້ນ ຍັງບໍ່ທັນມີຫຼັກຖານຢັ້ງຢືນໄດ້.

ສະນັ້ນ ໃນກໍລະນີສານຫາກໄດ້ລົງຄຳຕັດສິນ ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ເສັຍຊີວິດໄປແລ້ວແຕ່ບຸກຄົນດັ່ງກ່າວກັບຄືນມາ ຫຼື ມີຂໍ້ມູນຫຼັກຖານທີ່ເຊື່ອຖືໄດ້ວ່າບຸກຄົນດັ່ງກ່າວຍັງມີຊີວິດຢູ່ນັ້ນຜູ້ຮ້ອງຂໍ ຫຼື ຜູ້ກ່ຽວເອງມີສິດຮ້ອງຂໍຕໍ່ສານຂັ້ນຕົ້ນທີ່ກ່ຽວຂ້ອງ ເພື່ອພິຈາລະນາຕັດສິນລົບລ້າງຄຳຕັດສິນທີ່ໄດ້ປະກາດວ່າບຸກຄົນດັ່ງກ່າວເປັນຜູ້ຫາຍສາບສູນ ຫຼື ເສັຍຊີວິດນັ້ນ.

ໃນຄຳຮ້ອງຂໍລົບລ້າງຄຳຕັດສິນທີ່ຍື່ນຕໍ່ສານນັ້ນຕ້ອງຄັດຕິດເອກະສານ ແລະ ຫຼັກຖານທີ່ຢັ້ງຢືນວ່າຜູ້ກ່ຽວຍັງມີຊີວິດຢູ່, ພ້ອມນີ້ ກໍຕ້ອງລະບຸເຫດຜົນທີ່ບໍ່ໄດ້ຕິດຕໍ່ຫາຄອບຄົວ.

ໃນການພິຈາລະນາລົບລ້າງຄຳຕັດສິນດັ່ງກ່າວຕ້ອງໃຫ້ສຳເລັດພາຍໃນກຳນົດເວລາສິບຫ້າວັນ ແລະ ເມື່ອສານໄດ້ລົບລ້າງຄຳຕັດສິນດັ່ງກ່າວແລ້ວສິດທັງໝົດຂອງຜູ້ກ່ຽວກໍຈະຖືກຟື້ນຟູຄືນ ແລະ ສຳລັບຊັບສິນບັດຂອງຜູ້ກ່ຽວທີ່ຍັງເຫຼືອຢູ່ກໍຕ້ອງສົ່ງຄືນໃຫ້ຜູ້ກ່ຽວ[23].

---

[23]ກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ, ສະບັບປັບປຸງປີ 2008, ມາດຕາ 5

# ບົດທີ 5
# ການພິຈາລະນາຢັ້ງຢືນໃບຕາດິນເສັຍຫາຍ

## 1. ຄວາມໝາຍຂອງການພິຈາລະນາຢັ້ງຢືນໃບຕາດິນເສັຍຫາຍ

ການພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍ ໝາຍເຖິງການຢັ້ງຢືນກຳມະສິດໃນທີ່ດິນຂອງເຈົ້າຂອງສິດນຳໃຊ້ທີ່ດິນຕາມໃບຕາດິນທີ່ອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນອອກໃຫ້ແຕ່ໃບຕາດິນດັ່ງກ່າວໄດ້ເສັຍຫາຍ ຫຼື ຖືກທຳລາຍດ້ວຍຮູບການຕ່າງໆທີ່ບໍ່ໄດ້ປະຮ່ອງຮອຍຂອງໃບຕາດິນໄວ້, ດັ່ງນັ້ນ ເມື່ອເຈົ້າຂອງສິດນຳໃຊ້ທີ່ດິນຕ້ອງການມອບ, ໂອນ, ຄ້ຳປະກັນ ຫຼື ຊື້ຂາດກ່ຽວກັບທີ່ດິນຕອນດັ່ງກ່າວຕ້ອງໄດ້ມີເອກະສານຢັ້ງຢືນກ່ຽວກັບກຳມະສິດໃນທີ່ດິນຕອນດັ່ງກ່າວ ແຕ່ເອກະສານຢັ້ງຢືນກຳມະສິດຄືໃບຕາດິນພັດໄດ້ຖືກເສັຍຫາຍ ຫຼື ຖືກທຳລາຍແລ້ວ ຈຶ່ງຈຳເປັນຕ້ອງມີການຕັດສິນຂອງສານຢັ້ງຢືນການເສັຍຫາຍຂອງໃບຕາດິນເພື່ອເປັນບ່ອນອີງໃຫ້ແກ່ອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນໄອອກສຳເນົາໃບຕາດິນໃຫ້ແກ່ເຈົ້າຂອງສິດນຳໃຊ້ທີ່ດິນໄດ້ນຳໃຊ້.

## 2. ຄວາມສຳຄັນຂອງການພິຈາລະນາຢັ້ງຢືນໃບຕາດິນເສັຍຫາຍ

ການພິຈາລະນາຢັ້ງຢືນໃບຕາດິນເສັຍຫາຍ ມີຄວາມສຳຄັນທີ່ສຸດຕໍ່ອົງການຄຸ້ມຄອງທີ່ດິນທີ່ໃຊ້ເປັນຂໍ້ມູນຫຼັກຖານໃນການອອກສຳເນົາໃບຕາດິນ ເນື່ອງຈາກວ່າຂໍ້ມູນຫຼັກຖານກ່ຽວກັບທີ່ດິນແລະ ໃບຕາດິນແມ່ນບໍ່ມີເຫຼືອຢູ່ ຫຼື ບໍ່ມີຮ່ອງຮອຍໃດໆຊຶ່ງອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນບໍ່ສາມາດອອກໃບສຳເນົາທີ່ດິນໃຫ້ແກ່ເຈົ້າຂອງສິດນຳໃຊ້ທີ່ດິນໄດ້ດັ່ງນັ້ນ ຈຶ່ງຈຳເປັນຕ້ອງໃຫ້ມີການພິຈາລະນາຕັດສິນຂອງສານຢັ້ງຢືນໃບຕາດິນເສັຍຫາຍ ເພື່ອເປັນນິຕິກຳໃນການອອກສຳເນົາໃບຕາດິນ...

## 3. ເງື່ອນໄຂການຮ້ອງຂໍຕໍ່ສານໃຫ້ຢັ້ງຢືນໃບຕາດິນເສັຍຫາຍ

ໃບຕາດິນ ແມ່ນເອກະສານທີ່ເປັນຫຼັກຖານຕົ້ນຕໍອັນໜຶ່ງອັນດຽວກ່ຽວກັບສິດນຳໃຊ້ທີ່ດິນຢ່າງຖາວອນ ຊຶ່ງໄດ້ຄັດສຳເນົາຢ່າງຖືກຕ້ອງຈາກປຶ້ມທະບຽນທີ່ດິນເພື່ອມອບໃຫ້ແກ່ຜູ້ເປັນເຈົ້າຂອງທີ່ດິນພຽງໃບດຽວເພື່ອຖືໄວ້ເປັນຫຼັກຖານຢ່າງຍາວນານຈົນກວ່າຈະມີການປ່ຽນແປງໃໝ່ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ.

ໃບຕາດິນມີພຽງສະບັບດຽວທີ່ອອກໃຫ້ເຈົ້າກຳມະສິດທີ່ດິນຮັກສາໄວ້ ຈຶ່ງຖືວ່າເປັນເອກະສານທີ່ສຳຄັນຢ່າງໜຶ່ງດັ່ງນັ້ນ ເມື່ອໃບຕາດິນຫາກຕົກເຮ່ຍເສັຍຫາຍ ຫຼື ຖືກທຳລາຍຕ້ອງໄດ້ອອກໃບສຳເນົາຕາດິນເພື່ອຢັ້ງຢືນຄືນໃຫ້ເຈົ້າກຳມະສິດທີ່ດິນໄດ້ເອົາໄປນຳໃຊ້ຊຶ່ງການຕົກເຮ່ຍເສັຍຫາຍ ຫຼື ຖືກທຳລາຍທີ່ຈະອອກໃບສຳເນົາຕາດິນຢັ້ງຢືນຄືນໃຫ້ນັ້ນມີ 2 ລະດັບຄື:

1) ການຕົກເຮ່ຍເສັຍຫາຍ ຫຼື ຖືກທຳລາຍຂອງໃບຕາດິນນັ້ນຫາກໄດ້ປະຮ່ອງຮອຍທີ່ເປັນຫຼັກຖານໃດໜຶ່ງທີ່ຢັ້ງຢືນກ່ຽວກັບໃບຕາດິນທີ່ກ່ຽວຂ້ອງແລ້ວ ເປັນຕົ້ນມີສຳເນົາ, ມີສ່ວນໃດສ່ວນໜຶ່ງຂອງໃບຕາດິນເຫຼືອຢູ່, ມີເອກະສານກ່ຽວຂ້ອງກັບໃບຕາດິນນັ້ນ ແລະອື່ນໆ ທີ່ພໍສາມາດຢັ້ງຢືນໃບຕາດິນດັ່ງກ່າວໃນກໍລະນີນີ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະຈຳແຂວງ, ນະຄອນຈະອອກໃບສຳເນົາຕາດິນໃຫ້ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮ້ອງຂໍໄດ້ໂດຍກົງເລີຍເພື່ອນຳໄປເປັນບ່ອນອີງແລະຢັ້ງຢືນກຳມະສິດໃນທີ່ດິນດັ່ງກ່າວ.
2) ການຕົກເຮ່ຍເສັຍຫາຍ ຫຼື ຖືກທຳລາຍຂອງໃບຕາດິນນັ້ນຫາກບໍ່ໄດ້ປະຮ່ອງຮອຍ ຫຼື ບໍ່ມີຂໍ້ມູນໃດໜຶ່ງກ່ຽວກັບໃບຕາດິນດັ່ງກ່າວແລ້ວຕ້ອງແມ່ນສານປະຊາຊົນຂັ້ນເຂດ ເປັນຜູ້ພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍກ່ອນພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມປະຈຳແຂວງ, ນະຄອນຈຶ່ງສາມາດອອກໃບສຳເນົາຕາດິນໄດ້.

**ສັງລວມແລ້ວການພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍຕ້ອງມີເງື່ອນໄຂຄື:**

- ໃບຕາດິນນັ້ນຫາໄດ້ຖືກເສັຍຫາຍ ໂດຍບໍ່ພົບເຫັນຮ່ອງຮອຍຫຼືບໍ່ຮູ້ວ່າໃບຕາດິນນັ້ນຢູ່ນຳໃຜ ແລະ ບໍ່ມີເອກະສານສຳເນົາໃບຕາດິນ, ບໍ່ມີຂໍ້ມູນກ່ຽວກັບໃບຕາດິນ.
- ໃບຕາດິນນັ້ນຫາກໄດ້ຖືກທຳລາຍດ້ວຍຮູບການຕ່າງໆເປັນຕົ້ນໃບຕາດິນຖືກໄຟໄໝ້, ຖືກນ້ຳຖ້ວມ,..ຊຶ່ງເຮັດໃຫ້ໃບຕາດິນນັ້ນຖືກທຳລາຍໂດຍບໍ່ປະຮ່ອງຮອຍໄວ້.

ຖ້າໃບຕາດິນນັ້ນຫາກໄດ້ເສຍຫາຍ ຫຼື ຖືກທຳລາຍຫາກໄດ້ປະຮ່ອງຮອຍໃດໜຶ່ງໄວ້ນັ້ນບໍ່ເປັນເງື່ອນໄຂໃຫ້ສານພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍໄດ້.

## 4. ຂັ້ນຕອນການຢື່ນຄຳຮ້ອງຕໍ່ສານໃຫ້ຢັ້ງຢືນໃບຕາດິນເສັຍຫາຍ

### 4.1. ການສະເໜີຕໍ່ອົງການຄຸ້ມຄອງທີ່ດິນ

ການຮ້ອງຄຳຮ້ອງໃຫ້ສານພິຈາລະນາຢັ້ງຢືນໃບຕາດິນເສັຍຫາຍບໍ່ສາມາດຮ້ອງຂໍໂດຍກົງຕໍ່ສານໄດ້ ແຕ່ຕ້ອງຍື່ນຜ່ານອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນປະຈຳເມືອງ (ຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ) ທີ່ກ່ຽວຂ້ອງເປັນຜູ້ຄົ້ນຄວ້າພິຈາລະນາເສັຍກ່ອນຖ້າເຫັນວ່າມີເງື່ອນໄຂໃຫ້ສານຢັ້ງຢືນໃບຕາດິນເສັຍຫາຍແລ້ວ ອົງການທີ່ເຮັດວຽກກ່ຽວກັບການຄຸ້ມທີ່ດິນກ່ຽວຂ້ອງຈະສະຫຼຸບມີຄຳເຫັນແລ້ວສະເໜີຕໍ່ສານເພື່ອໃຫ້ສານພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍ, ຖ້າຫາກອົງການທີ່ເຮັດວຽກໃນການຄຸ້ມຄອງທີ່ດິນກ່ຽວຂ້ອງຫາກເຫັນວ່າບໍ່ມີເງື່ອນໄຂຫຼືມີຮ່ອງຮອຍຂອງໃບຕາດິນຄືງເຫຼືອໄວ້ຢູ່ຈະນຳສະເໜີຕໍ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມປະຈຳແຂວງ, ນະຄອນເປັນຜູ້ພິຈາລະນາອອກໃບສຳເນົາຕາດິນ.

ຄຳຮ້ອງຂໍ ຕ້ອງມີເນື້ອໃນຕົ້ນຕໍດັ່ງລຸ່ມນີ້:

1) ຊື່, ນາມສະກຸນ ແລະ ທີ່ຢູ່ຂອງຜູ້ຮ້ອງຂໍໂດຍບອກລະອຽດ, ຈະແຈ້ງ ໃຫ້ຖືກຕ້ອງຕາມບັດປະຈຳຕົວ ຫຼື ສຳມະໂນຄົວ.
2) ຕ້ອງບົ່ງບອກປະຫວັດຄວາມເປັນມາຂອງທີ່ດິນ ໂດຍໃຫ້ກຳນົດກ່ຽວກັບການໄດ້ມາເປັນກຳມະສິດໃນທີ່ດິນດັ່ງກ່າວວ່າໄດ້ມາດ້ວຍການຈັບຈອງ, ຊື້ຂາຍ, ມອບໂອນ ຫຼື ສືບມູນ ຫຼື ດ້ວຍຮູບການອື່ນໆ.
3) ຕ້ອງໃຫ້ເຫດຜົນວ່າ ໃບຕາດິນນັ້ນເສັຍຫາຍດົນປານໃດແລ້ວ, ເປັນຫຍັງຈຶ່ງເສັຍຫາຍ, ຖືກທຳລາຍດ້ວຍຮູບການ, ວິທີການໃດ ແລະອື່ນໆ;
4) ຕ້ອງປະກອບເອກະສານທີ່ກ່ຽວຂ້ອງ ກັບໃບຕາດິນດັ່ງກ່າວເທົ່າທີ່ມີ ເພື່ອເປັນຂໍ້ມູນໃຫ້ພະນັກງານທີ່ດິນຄົ້ນຄວ້າ, ກວດກາ;
5) ລົງລາຍເຊັນຂອງຜູ້ຮ້ອງຂໍ ແລະ ຢັ້ງຢືນຜ່ານອົງການປົກຄອງບ້ານ.

### 4.2. ການກວດກາຂອງອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນ

ອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນມີໜ້າທີ່ ແລະຄວາມຮັບຜິດຊອບໃນການຄົ້ນຄວ້າ, ກວດກາຄຳຮ້ອງເລື່ອງໃບຕາດິນເສັຍຫາຍໂດຍກວດກາຂໍ້ມູນ, ປະຫວັດຄວາມເປັນມາຂອງດິນຕາມເອກະສານສຳເນົາຂໍ້ມູນທີ່ດິນ ເພື່ອຢັ້ງຢືນຄວາມເປັນຈິງຂອງທີ່ດິນດັ່ງກ່າວ, ສອບສວນຜູ້ຮ້ອງຂໍ, ພະຍານທີ່ມີດິນຕິດຈອດກັນ ແລ້ວສົມທົບກັບອຳນາດການປົກຄອງບ້ານເພື່ອເກັບກຳຂໍ້ມູນກ່ຽວກັບທີ່ດິນ ແລະ ເຫດຜົນຂອງການເສັຍຫາຍຂອງໃບຕາດິນເພື່ອໃຫ້ຮູ້ປະຫວັດຄວາມເປັນມາຂອງທີ່ດິນ, ຜູ້ມີກຳມະສິດໃນທີ່ດິນແລະ ເຫດຜົນຂອງການເສັຍຫາຍຂອງໃບຕາດິນແລ້ວລົງຄຳເຫັນຕາມກໍລະນີດັ່ງນີ້:

1) ເມື່ອເຫັນວ່າທີ່ດິນດັ່ງກ່າວເປັນກຳມະສິດຂອງຜູ້ຮ້ອງຂໍແຕ່ໃບຕາດິນຫາກເສັຍຫາຍ ຫຼື ຖືກທຳລາຍ ໂດຍມີຮ່ອງຮອຍຂອງໃບຕາດິນ ເຊັ່ນ ມີໃບສຳເນົາໄວ້, ມີຫົວຂ້ວນຂອງໃບຕາດິນ, ມີຂໍ້ມູນການອອກໃບຕາດິນຢູ່ໃນສຳນວນອອກໃບຕາດິນ ຫຼື ຂໍ້ມູນອື່ນໆທີ່ກ່ຽວກັບໃບຕາດິນອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນ (ຫ້ອງ

ການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ) ຕ້ອງເຮັດບົດສະຫຼຸບລາຍງານຫາພະແນກຊັບພະ ຍາກອນທຳມະຊາດ ແລະ ສິ່ງແວດລ້ອມປະຈຳແຂວງ, ນະຄອນເພື່ອອອກໃບສຳເນົາຕາດິນໃຫ້ຜູ້ຮ້ອງຂໍໂດຍບໍ່ຈຳເປັນຕ້ອງໃຫ້ສານຕັດສິນເລື່ອງໃບຕາດິນເສັຍຫາຍ.

2) ເມື່ອອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນຫາກຄົ້ນຄວ້າ, ເກັບກຳຂໍ້ມູນແລ້ວເຫັນວ່າບໍ່ມີຂໍ້ມູນ ຫຼື ເອກະສານໃດໆພໍຢັ້ງຢືນກ່ຽວກັບໃບຕາດິນນັ້ນອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນຕ້ອງໄດ້ເຮັດບົດສະຫຼຸບລາຍງານເພື່ອນຳສະເໜີຕໍ່ສານ ໂດຍກຳນົດກ່ຽວກັບປະຫວັດຄວາມເປັນມາຂອງໃບຕາດິນ, ສາເຫດຂອງການເສັຍຫາຍຂອງໃບຕາດິນແລະຂໍ້ສະເໜີຕໍ່ສານ.

### 4.3. ການສະເໜີຕໍ່ສານເພື່ອໃຫ້ພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍ

ບຸກຄົນ, ການຈັດຕັ້ງ ຫຼື ວິສາຫະກິດບໍ່ສາມາດຍື່ນຄຳຮ້ອງຂໍໃຫ້ສານພິຈາລະນາຢັ້ງຢືນໃບຕາດິນເສັຍຫາຍ ໂດຍກົງຕໍ່ສານໄດ້ແຕ່ຫາກຕ້ອງຍື່ນຄຳຮ້ອງຂໍຕໍ່ອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນເພື່ອຄົ້ນຄວ້າພິຈາລະນາເສັຍກ່ອນຖ້າມີເງື່ອນໄຂຄົບຖ້ວນແລ້ວອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນທີ່ກ່ຽວຂ້ອງ ຕ້ອງເຮັດບົດສະຫຼຸບລາຍງານກ່ຽວກັບການຄົ້ນຄວ້າ ພ້ອມດ້ວຍຄຳເຫັນຂອງອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນ ແລະ ປະກອບຂໍ້ມູນຫຼັກຖານລວມທັງຄຳຮ້ອງຂໍຂອງເຈົ້າຂອງທີ່ດິນນັ້ນປະກອບເປັນສຳນວນ ແລ້ວສະເໜີຕໍ່ສານປະຊາຊົນທີ່ມີສິດອຳນາດເພື່ອພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍຕາມລະບຽບການ.

## 5. ການພິຈາລະນາຂອງສານກ່ຽວກັບການຢັ້ງຢືນໃບຕາດິນເສັຍຫາຍ

### 5.1. ການກວດກາຄຳສະເໜີ ຫຼື ຄຳຮ້ອງຂໍ

ການກວດກາຄຳຮ້ອງຂໍສະເໜີຢັ້ງຢືນໃບຕາດິນເສັຍຫາຍ ແມ່ນສິດ ແລະ ໜ້າທີ່ຂອງຈ່າສານພາຍຫຼັງໄດ້ຮັບຄຳຮ້ອງຂໍ ຫຼື ຄຳສະເໜີຈາກອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນເພື່ອຮັບປະກັນຄວາມຖືກຕ້ອງຂອງເອກະສານຕາມລະບຽບການ[24]ໂດຍຈະເລັ່ງໃສ່ການກວດກາເອກະສານຕົ້ນຕໍດັ່ງນີ້:

- ມີຄຳສະເໜີຂອງອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນຖືກຕ້ອງຕາມລະບຽບການ ຫຼືບໍ່?
- ມີບົດສະຫຼຸບພ້ອມດ້ວຍຄຳເຫັນຂອງອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນ ຫຼືບໍ່?
- ມີຄຳຮ້ອງຂໍຂອງເຈົ້າຂອງທີ່ດິນຄັດຕິດມາໃນຄຳສະເໜີ ຫຼືບໍ່?
- ມີຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ ຫຼືບໍ່?

ເມື່ອເຫັນວ່າຖືກຕ້ອງ, ຄົບຖ້ວນແລ້ວຈ່າສານຈະນຳສະເໜີຂໍຄຳເຫັນຈາກຫົວໜ້າຄະນະສານ ເພື່ອຂຶ້ນຟ້ອງຄະດີດັ່ງກ່າວຕາມລະບຽບການ ແລ້ວມອບສຳນວນຄະດີໃຫ້ຫົວໜ້າຄະນະສານເພື່ອແຈກຢາຍໃຫ້ຜູ້ພິພາກສາຄົ້ນຄວ້າຕາມຂັ້ນຕອນຂອງກົດໝາຍ.

### 5.2. ຂັ້ນຕອນການຄົ້ນຄວ້າພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍ

ເພື່ອຮັບປະກັນໃຫ້ການພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຮັບປະກັນໃຫ້ປະຕິບັດຕາມຂັ້ນຕອນຂອງກົດໝາຍການຄົ້ນຄວ້າຄະດີເລື່ອງໃບຕາດິນເສັຍຫາຍຕ້ອງປະຕິບັດຕາມວິທີການ ແລະ ຂັ້ນຕອນດັ່ງນີ້:

#### 5.2.1. ການຮັບປະກັນຂອງເຈົ້າຂອງສິດນຳໃຊ້ທີ່ດິນ

ເນື່ອງຈາກວ່າການຮ້ອງຂໍໃຫ້ສານພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍ ເປັນການດຳເນີນຄະດີຝ່າຍດຽວທີ່ມີພຽງເຈົ້າຂອງສິດນຳໃຊ້ທີ່ດິນເທົ່ານັ້ນທີ່ຮ້ອງຂໍຕໍ່ສານໂດຍບໍ່ມີຄູ່ກໍລະນີມາໂຕ້ແຍ່ງ ດັ່ງນັ້ນ ເພື່ອຮັບປະກັນ

[24] ການກວດກາຄຳຮ້ອງຂໍ ຫລື ຄຳສະເໜີຢັ້ງຢືນໃບຕາດິນເສັຍຫາຍ ຈະຕ່າງໆຈາກການກວດຄຳຮ້ອງຂໍທົ່ວໄປ ແລະ ຈະຕ່າງໆຈາກການກວດກາຄຳຮ້ອງຟ້ອງ.

ຄວາມຖືກຕ້ອງຜູ້ພິພາກສາຈຶ່ງຕ້ອງໃຫ້ຜູ້ຮ້ອງຂໍ ຫຼືເຈົ້າຂອງສິດນຳໃຊ້ທີ່ດິນໃຫ້ເຮັດໜັງສືຢັ້ງຢືນກ່ຽວກັບການເປັນເຈົ້າຂອງສິດນຳໃຊ້ທີ່ດິນຕອນດັ່ງກ່າວ ລວມທັງເຮັດໃບຮັບປະກັນວ່າຜູ້ກ່ຽວໄດ້ອອກໃບຕາດິນແລ້ວ ແລະ ໃບຕາດິນດັ່ງກ່າວໄດ້ເສັຍຫາຍ ຫຼື ຖືກທຳລາຍແທ້. ນອກຈາກນັ້ນຜູ້ພິພາກສາຍັງຕ້ອງເອົາຄຳໃຫ້ການຂອງຜູ້ຮ້ອງຂໍ ເພື່ອໃຫ້ຮູ້ລາຍລະອຽດກ່ຽວກັບທີ່ດິນ ແລະ ເຫດຜົນຂອງການເສັຍຫາຍຂອງໃບຕາດິນ.

### 5.2.2. ການກວດກາການເສັຍຫາຍຂອງໃບຕາດິນ

ເພື່ອຮັບປະກັນວ່າໃບຕາດິນໄດ້ຖືກເສັຍຫາຍຢ່າງແທ້ຈິງທັງຊອກຮູ້ສາເຫດທີ່ພາໃຫ້ໃບຕາດິນເສັຍຫາຍ ຫຼື ຖືກທຳລາຍ ເນື່ອງຈາກວ່າການສະເໜີໃຫ້ສານພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍ ຖືເປັນການຄົ້ນຄວ້າຄະດີທີ່ບໍ່ມີຂໍ້ໂຕ້ແຍ່ງຊຶ່ງມີພຽງຄຳສະເໜີ ຫຼື ຄຳຮ້ອງຂໍ ແລະ ຂໍ້ມູນຫຼັກຖານຂອງຝ່າຍດຽວດັ່ງນັ້ນການຄົ້ນຄວ້າຄະດີດັ່ງກ່າວ ຂອງຜູ້ພິພາກສາຈະລົງເລິກກວດກາຄື:

- ຄົ້ນຄວ້າກວດກາຄຳຮ້ອງຂໍຂອງເຈົ້າຂອງສິດນຳໃຊ້ທີ່ດິນພ້ອມດ້ວຍຂໍ້ມູນຫຼັກຖານທີ່ໄດ້ປະກອບມາໃນຄຳຮ້ອງຂໍເພື່ອກຳນົດປະຫວັດຄວາມເປັນມາຂອງທີ່ດິນ, ການໄດ້ສິດນຳໃຊ້ທີ່ດິນ ແລະ ເຫດຜົນຂອງການເສັຍຫາຍຂອງໃບຕາດິນຕອນດັ່ງກ່າວ;
- ຄົ້ນຄວ້າບົດສະຫຼຸບການເກັບກຳຂໍ້ມູນຂອງອົງການຄຸ້ມຄອງທີ່ດິນເພື່ອສຶກສາປຽບທຽບກັບຄຳຮ້ອງຂໍ ແລະ ຂໍ້ມູນຫຼັກຖານທີ່ເຈົ້າຂອງທີ່ດິນປະກອບມາ;
- ຫຼັງຈາກໄດ້ຄົ້ນຄວ້າ, ກວດກາ ປຽບທຽບຂໍ້ມູນຫຼັກຖານທີ່ຜູ້ຮ້ອງຂໍສະເໜີມາກັບຂໍ້ມູນຫຼັກຖານຂອງພະນັກງານທີ່ເຮັດວຽກກ່ຽວກັບການຄຸ້ມຄອງທີ່ດິນແລ້ວຜູ້ພິພາກສາຕ້ອງໄດ້ປະສານສົມທົບກັບອົງການປົກຄອງບ້ານ, ພາກສ່ວນທີ່ກ່ຽວຂ້ອງ ແລະ ຜູ້ຮ້ອງຂໍເພື່ອລົງເກັບກຳຂໍ້ມູນ ແລະ ກວດກາທີ່ດິນແລະການເສັຍຫາຍຂອງໃບຕາດິນດັ່ງກ່າວ ໃຫ້ຮູ້ວ່າໃບຕາດິນໄດ້ເສັຍຫາຍຫຼືຖືກທຳລາຍແທ້ບໍ່ແມ່ນນຳເອົາໃບຕາດິນໄປຄ້ຳປະກັນ ແລະອື່ນໆ.

### 5.2.3. ການແຈ້ງການກ່ຽວໃບຕາດິນເສັຍຫາຍ

ເມື່ອເຫັນວ່າເກັບກຳຂໍ້ມູນຢ່າງລະອຽດ, ຈະແຈ້ງ ແລະຄົບຖ້ວນແລ້ວຜູ້ພິພາກສາຈະສະເໜີຕໍ່ຄະນະສານແພ່ງເພື່ອອອກແຈ້ງການກ່ຽວກັບການເສັຍຫາຍຂອງໃບຕາດິນຕອນດັ່ງກ່າວ ໄປປະກາດທາງສາທາລະນະ ແລ້ວມອບໃຫ້ຈ່າສານລົງສົມທົບກັບອົງການປົກຄອງບ້ານເພື່ອນຳເອົາແຈ້ງການດັ່ງກ່າວ ໄປຕິດປະກາດໄວ້ຢູ່ຫ້ອງການບ້ານ 01 ສະບັບ, ໄປຕິດໄວ້ຢູ່ບ່ອນດິນຕັ້ງຢູ່ 01 ສະບັບ ແລະ ຫ້ອງການສານປະຊາຊົນທີ່ກ່ຽວຂ້ອງກຳນົດເວລາ 01 ເດືອນ.

ການແຈ້ງການ ຫຼື ປະກາດກ່ຽວກັບການເສັຍຫາຍຂອງໃບຕາດິນນັ້ນກໍເພື່ອຮັບປະກັນວ່າໃບຕາດິນໃນດິນຕອນດັ່ງກ່າວໄດ້ເສັຍຫາຍ ຫຼື ຖືກທຳລາຍແທ້, ບໍ່ແມ່ນໃບຕາດິນຕອນດັ່ງກ່າວໄດ້ເອົາມາຄ້ຳປະກັນການກູ້ຢືມເງິນ ຫຼື ຄ້ຳປະກັນອັນໃດໜຶ່ງຢູ່ທີ່ດິນຕອນດັ່ງກ່າວໄດ້ຂາຍ, ມອບໂອນໃຫ້ບຸກຄົນອື່ນແລ້ວຊຶ່ງເປັນການແຈ້ງໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ສັງຄົມໄດ້ຮັບຮູ້, ກວດກາ ແລະທັກທ້ວງ ຫຼື ສະເໜີຄັດຄ້ານຕໍ່ສານ ບໍ່ໃຫ້ສານພິຈາລະນາຕັດສິນກ່ຽວກັບການຢັ້ງຢືນໃບຕາດິນເສັຍຫາຍດັ່ງກ່າວຖ້າຫາກການຮ້ອງຂໍຫາກບໍ່ຖືກຕ້ອງຕາມຄວາມເປັນຈິງ.

## 5.3. ການພິຈາລະນາຕັດສິນກ່ຽວກັບໃບຕາດິນເສັຍຫາຍ

ການພິຈາລະນາຕັດສິນຢັ້ງຢືນໃບຕາດິນເສັຍຫາຍແມ່ນປະຕິບັດຕາມຫຼັກການແລະລະບຽບການພິຈາລະນາຕັດສິນຄະດີທົ່ວໄປຄືຕ້ອງໄດ້ປະກອບຄະນະສານຕັດສິນຕາມລະບຽບການເພື່ອເປີດປະຊຸມສານໄຕ່ສວນຄະດີດັ່ງກ່າວ.

ຄະນະສານຕ້ອງໄດ້ກວດກາຂໍ້ມູນຫຼັກຖານເມື່ອເຫັນວ່າຄົບຖ້ວນ, ພຽງພໍທີ່ສາມາດພິຈາລະນາຕັດສິນໄດ້ແລ້ວຕ້ອງກຳນົດວັນປະຊຸມສານ, ກຳນົດຜູ້ເຂົ້າຮ່ວມໃນການປະຊຸມສານແລະແນະນຳໃຫ້ຈ່າສານອອກໝາຍຮຽກຜູ້ທີ່ກ່ຽວຂ້ອງເປັນຕົ້ນເຈົ້າຂອງສິດນຳໃຊ້ທີ່ດິນທີ່ຮ້ອງຂໍ, ພະຍານທີ່ກ່ຽວຂອງລວມທັງເຊີນພະນັກງານທີ່ເຮັດວຽກກ່ຽວກັບທີ່ດິນ, ນາຍບ້ານບ່ອນດິນຕັ້ງຢູ່ເຂົ້າຮ່ວມປະຊຸມສານຕາມວັນເວລາທີ່ຄະນະສານເປັນຜູ້ກຳນົດ.

ຄະນະສານຈະທຳການເປີດປະຊຸມສານ, ໄຕ່ສວນໂຈດຫຼືຜູ້ຮ້ອງຂໍ, ພະຍານແລະຟັງຄຳເຫັນຈາກອົງການທີ່ຮັບຜິດຊອບກ່ຽວກັບທີ່ດິນ, ນາຍບ້ານແລະ ໃຫ້ໂຈດມີຄຳເຫັນຢັ້ງຢືນຮັບປະກັນເທື່ອສຸດທ້າຍກ່ອນປິດປະຊຸມສານເພື່ອພິຈາລະນາຕັດສິນໃນຫ້ອງປະຊຸມລັບ ໂດຍບໍ່ຕ້ອງຜ່ານຂັ້ນຕອນໂຕ້ຖຽງແຕ່ຢ່າງໃດ. ການພິຈາລະນາລົງຄຳຕັດສິນຂອງຄະນະສານຕັດສິນແມ່ນບົນພື້ນຖານຂໍ້ມູນຫຼັກຖານແລະຂໍ້ເທັດຈິງ ເພື່ອໃຫ້ຄະນະສານຕັດສິນລົງຄຳຕັດສິນຕາມແຕ່ລະກໍລະນີຄື:

**5.3.1.** ຍົກເລີກຄຳຮ້ອງຂໍໂຈດຖິ້ມ

ຍົກເລີກຄຳຮ້ອງຂໍໂຈດຖິ້ມ ໝາຍຄວາມວ່າ ບໍ່ມີການເສຍຫາຍຂອງໃບຕາດິນຄະນະສານຕັດສິນ ຈຶ່ງບໍ່ພິຈາລະນາຢັ້ງຢືນໃບຕາດິນເສຍຫາຍ.

**5.3.2.** ຢັ້ງຢືນໃບຕາດິນເສຍຫາຍຕາມການຮ້ອງຂໍຂອງໂຈດ.

ຄຳຕັດສິນຢັ້ງຢືນໃບຕາດິນເສຍຫາຍຕ້ອງບົ່ງບອກປະຫວັດຄວາມເປັນມາຂອງດິນ ແລະ ສາເຫດຂອງການເສຍຫາຍຂອງໃບຕາດິນຢ່າງລະອຽດ ບົນພື້ນຖານການໃຫ້ເຫດຜົນຕາມຂໍ້ມູນຫຼັກຖານຢັ້ງຢືນຂໍ້ເທັດຈິງ ແລະ ລະບຽບກົດໝາຍ, ຊຶ່ງໂຄງຮ່າງຄຳຕັດສິນຢັ້ງຢືນໃບຕາດິນເສຍຫາຍ ມີຈຸດພິເສດສະເພາະຕ່າງກັບຮ່າງຄຳຕັດສິນກໍລະນີທົ່ວໄປຊຶ່ງແມ່ນສານປະຊາຊົນສູງສຸດເປັນຜູ້ກຳນົດ.

### 5.4. ຜົນບັງຄັບຂອງຄຳຕັດສິນຢັ້ງຢືນໃບຕາດິນເສຍຫາຍ

ຄຳຕັດສິນຢັ້ງຢືນໃບຕາດິນເສຍຫາຍມີຜົນບັງຄັບປະຕິບັດນັບແຕ່ວັນລົງຄຳຕັດສິນເປັນຕົ້ນໄປໝາຍຄວາມວ່າຖ້າຄະນະສານຕັດສິນຫາກໄດ້ລົງຄຳຕັດສິນຢັ້ງຢືນໃບຕາດິນເສຍຫາຍແລ້ວ ໃນຄຳຕັດສິນນັ້ນຈະບໍ່ກຳນົດສິດຂໍອຸທອນແຕ່ຈະກຳນົດໄວ້ວ່າຄຳຕັດສິນສະບັບນີ້ມີຜົນບັງຄັບປະຕິບັດນັບແຕ່ວັນລົງຄຳຕັດສິນເປັນຕົ້ນໄປ.

ໃນກໍລະນີທີ່ຄະນະສານຕັດສິນຫາກໄດ້ລົງຄຳຕັດສິນບໍ່ຢັ້ງວ່າໃບຕາດິນເສຍຫາຍ ໃນຄຳຕັດສິນນັ້ນຕ້ອງກຳນົດສິດຂໍອຸທອນໃຫ້ແກ່ໂຈດ ໃນການຂໍອຸທອນຄຳຕັດສິນດັ່ງກ່າວ ເພື່ອໃຫ້ສານຂັ້ນອຸທອນໄດ້ກວດກາຄືນຖ້າຫາກໂຈດເຫັນວ່າມີຂໍ້ມູນຫຼັກຖານທີ່ສານບໍ່ໄດ້ພິຈາລະນາ ຫຼື ພິຈາລະນາບໍ່ລະອຽດ, ຄົບຖ້ວນຈຶ່ງເຮັດໃຫ້ການຕັດສິນບໍ່ຖືກຕ້ອງ ແລະ ເປັນທຳ.

## 6. ການອອກສຳເນົາໃບຕາດິນໃໝ່

ໂຈດ ຫຼື ເຈົ້າຂອງສິດນຳໃຊ້ທີ່ດິນຕ້ອງນຳເອົາຄຳຕັດສິນຢັ້ງຢືນໃບຕາດິນເສຍຫາຍນັ້ນ ເພື່ອປະກອບເອກະສານຍື່ນຕໍ່ອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນຕາມລະບຽບການເພື່ອອອກສຳເນົາໃບຕາດິນໃໝ່ (ບໍ່ແມ່ນອອກໃບຕາດິນໃໝ່).

ອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນຕ້ອງພິຈາລະນາອອກສຳເນົາໃບຕາດິນໃໝ່ຕາມຄຳຕັດສິນຂອງສານບົນພື້ນຖານການຮ້ອງຂໍຕາມລະບຽບການຄື ອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນຕ້ອງໄດ້ອອກປະກາດແຈ້ງການໃຫ້ບຸກຄົນ, ການຈັດຕັ້ງ ຫຼື ມວນຊົນຮັບຊາບກ່ຽວກັບການຈະອອກສຳເນົາໃບຕາດິນດັ່ງກ່າວຕາມຄຳຕັດສິນໂດຍການເອົາແຈ້ງການນັ້ນໄປຕິດປະກາດ ຢູ່ອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນ, ສຳນັກງານປົກຄອງເມືອງ, ເທດສະບານ, ສຳນັກງານປົກຄອງບ້ານບ່ອນທີ່ດິນຕັ້ງຢູ່, ອອກແຈ້ງການຜ່ານສື່ມວນຊົນຂອງລັດ, ລົງໜ້າໜັງສືພິມແລະປະກາດທາງວິທະຍຸກະຈາຍສຽງ ຫຼື ອອກໂທລະພາບ ໂດຍອີງໃສ່ເງື່ອນໄຂຕົວຈິງ ກຳນົດເວລາສາມສິບວັນນັບແຕ່ວັນທີ່ລົງລາຍເຊັນໃສ່ໃບປະກາດແຈ້ງການເປັນຕົ້ນໄປເພື່ອໃຫ້ມວນຊົນຊາບ. ຖ້າວ່າພາຍໃນກຳນົດເວລາດັ່ງກ່າວຫາກບໍ່ມີການຕໍ່ວ່າຕໍ່ຂານຫຼືການຕໍ່ວ່າຕໍ່ຂານນັ້ນຫາກຖືກແກ້ໄຂໄປແລ້ວຈຶ່ງອອກສຳເນົາໃບຕາດິນ ໃຫ້ແກ່ເຈົ້າຂອງສິດນຳໃຊ້ທີ່ດິນ.

ໃນໄລຍະຂອງການຕິດປະກາດ ຫຼື ໃນຂັ້ນຕອນຂອງການອອກສຳເນົາໃບຕາດິນ ຂອງອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນນັ້ນຖ້າຫາກມີບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຫາກເຫັນວ່າ ໃບຕາດິນບໍ່ໄດ້ເສຍຫາຍ ແຕ່ຫາກເອົາໄປຄ້ຳປະ

ກັນ, ທີ່ດິນຕອນດັ່ງກ່າວບໍ່ທັນໄດ້ອອກໃບຕາດິນ, ທີ່ດິນຕອນດັ່ງກ່າວບໍ່ແມ່ນກຳມະສິດຂອງຜູ້ຮ້ອງຂໍ ຫຼື ເຫດຜົນອື່ນໆໂດຍຜູ້ຄັດຄ້ານຫາກໄດ້ຍື່ນຄຳຮ້ອງຂໍຄັດຄ້ານຕໍ່ສານ ຫຼື ອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນ .ສານຕ້ອງນຳເອົາຄຳຮ້ອງຂໍຄັດຄ້ານນັ້ນມາພິຈາລະນາ ແລະ ອອກຄຳສັ່ງອາຍັດການອອກສຳເນົາໃບຕາດິນແລ້ວ ນຳເອົາຄຳຮ້ອງຂໍຄັດຄ້ານນັ້ນມາພິຈາລະນາກວດກາຄືນ ໝາຍຄວາມວ່າອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນຕ້ອງໄດ້ໂຈະການອອກສຳເນົາໃບຕາດິນຈົນກວ່າສານຈະຄົ້ນຄວ້າພິຈາລະນາຄຳຮ້ອງຂໍຄັດຄ້ານນັ້ນສຳເລັດ.

ຄະນະສານແພ່ງຄະນະເກົ່າຂອງສານປະຊາຊົນເຂດຕ້ອງນຳເອົາຄຳຮ້ອງຂໍຄັດຄ້ານນັ້ນມາຄົ້ນຄວ້າຮ່ວມກັບຂໍ້ມູນຫຼັກຖານຂອງໂຈດທີ່ໄດ້ປະກອບມາໃນສຳນວນຄະດີແລ້ວດຳເນີນຄະດີຕາມຂັ້ນຕອນຂອງການດຳເນີນຄະດີໃນສະຖານປົກກະຕິຕາມລະບຽບການທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

## 7. ຜົນສະທ້ອນ

- ຕໍ່ໂຈດ: ໄດ້ສິດໃນກຳມະສິດທີ່ດິນດັ່ງມີໃບຕາດິນຖາວອນທີ່ສາມາດມີກຳມະສິດຄົບຖ້ວນສາມາດນຳໃຊ້ໃບຕາດິນດັ່ງກ່າວຕາມລະບຽບການ
- ຕໍ່ສັງຄົມ: ຕ້ອງຮັບຮູ້ກຳມະສິດຂອງໂຈດ,.. ເມື່ອມີການແຈ້ງເສັຍຫາຍຜິດ ໂດຍມີບຸກຄົນມາທັກທ້ວງສາມາດດຳເນີນຄະດີຕໍ່ໂຈດໃນສະຖານ ແຈ້ງຄວາມເທັດ ເມື່ອມີຄຳຕັດສິນແລ້ວຄຳຕັດສິນໃບຕາດິນເສັຍຫາຍຈະຖືກລົບລ້າງ.

# ບົດທີ 6
# ການດຳເນີນຄະດີໃນກໍລະນີຈຳເລີຍເອົາຕົວຫຼົບໜີ

## 1. ຄວາມໝາຍຂອງການດຳເນີນຄະດີກໍລະນີຈຳເລີຍເອົາຕົວຫຼົບໜີ.

ການດຳເນີນຄະດີໃນກໍລະນີຈຳເລີຍເອົາຕົວຫຼົບໜີ ໝາຍເຖິງການດຳເນີຄະດີແພ່ງເພື່ອພິຈາລະນາການຮ້ອງຂໍຂອງໂຈດໂດຍບໍ່ມີຈຳເລີຍເຂົ້າມາຮ່ວມໃນການດຳເນີນຄະດີຍ້ອນຜູ່ກ່ຽວໄດ້ເອົາຕົວຫຼົບໜີບໍ່ຮູ້ເຫດຜົນ ຫຼື ບໍ່ຮູ້ບ່ອນຢູ່ຂອງຜູ່ກ່ຽວ ຊຶ່ງສານຕ້ອງໄດ້ພິຈາລະນາຕັດສິນຕາມກົດໝາຍໂດຍລັບຫຼັງຈຳເລີຍ, ແຕ່ຖືວ່າຊ້ອງໜ້າ;

ອີງຕາມຫຼັກການຂອງການດຳເນີນຄະດີແພ່ງແລ້ວຜູ່ເຂົ້າຮ່ວມຕົ້ນຕໍໃນການດຳເນີນຄະດີ ແມ່ນຕ້ອງມີຄູ່ຄວາມຄື: ໂຈດ ແລະ ຈຳເລີຍເປັນຕົວຫຼັກໃນການຕໍ່ສູ້ຄະດີຢູ່ສານເພື່ອຊອກຂໍ້ມູນ ຫຼື ຫຼັກຖານມາຢັ້ງຢືນຄຳຮ້ອງຟ້ອງຫຼືແກ້ຟ້ອງຂອງຕົນແລະສະເໜີໃຫ້ສານພິຈາລະນາຕັດສິນຕາມກົດໝາຍ, ແຕ່ບາງເທື່ອຜູ່ເປັນຈຳເລີຍເມື່ອຮັບຮູ້ວ່າຕົນເອງມີພັນທະແກ່ໂຈດແລ້ວພະຍາຍາມຊອກຫາທຸກວິທີທາງເພື່ອເອົາຕົວຫຼົບຫຼີກຈາກການການປະເຊີນໜ້າກັບໂຈດ ຫຼື ພະຍາຍາມແກ່ຍາວເວລາໃນການປະຕິບັດພັນທະແກ່ໂຈດອັນເຮັດໃຫ້ຝ່າຍໂຈດໄດ້ຮັບຄວາມອັບປະໂຫຍດຍ້ອນສິດ ແລະຜົນປະໂຫຍດຂອງຜູ່ກ່ຽວຖືກລະເມີດໂດຍຈຳເລີຍ ຊຶ່ງບໍ່ໄດ້ຮັບການຟື້ນຟູຄືນ, ສະນັ້ນ ເມື່ອໂຈດໄດ້ຍື່ນຄຳຮ້ອງຂໍໃຫ້ສານພິຈາລະນາບັນຫາໃດໜຶ່ງສານກໍຕ້ອງໄດ້ພິຈາລະນາແກ້ໄຂບັນຫາຕາມຂອບເຂດກົດໝາຍໄດ້ກຳນົດໄວ້ ຊຶ່ງໃນຂະບວນການດຳເນີນຄະດີແບບນີ້ ແມ່ນເຮັດຂຶ້ນໂດຍຊ້ອງໜ້າຝ່າຍໂຈດແລະບໍ່ມີການເຂົ້າຮ່ວມຂອງຝ່າຍຈຳເລີຍ ຫຼື ເວົ້າອີກຢ່າງໜຶ່ງກໍແມ່ນການພິຈາລະນາຕັດສິນຄະດີທີ່ລູກໜີ້ (ຈຳເລີຍ) ເອົາຕົວຫຼົບໜີໂດຍບໍ່ຮູ້ເຫດຜົນ.

ຈາກເຫດຜົນທີ່ກ່າວມາເທິງນັ້ນຈຶ່ງສາມາດສະຫຼຸບຄວາມໝາຍຂອງການດຳເນີນຄະດີໃນກໍລະນີຈຳເລີຍເອົາຕົວຫຼົບໜີໝາຍເຖິງການດຳເນີນຄະດີທີ່ບໍ່ມີການເຂົ້າຮ່ວມຂອງລູກໜີ້ (ຈຳເລີຍ) ນັບຕັ້ງແຕ່ບາດກ້າວການຍື່ນຄຳຮ້ອງຟ້ອງຈົນເຖິງການພິຈາລະນາຕັດສິນຍ້ອນຈຳເລີຍໄດ້ໜີຈາກບ່ອນຢູ່ເດີມໂດຍບໍ່ຮູ້ສາເຫດແລະສານກໍພະຍາມຕິດຕໍ່ຫາແລ້ວ, ແຕ່ກໍບໍ່ໄດ້ຂ່າວບ່ອນຢູ່ຂອງຜູ່ກ່ຽວ.

## 2. ຄວາມສຳຄັນ.

ການດຳເນີນຄະດີໃນກໍລະນີຈຳເລີຍເອົາຕົວຫຼົບໜີ ມີຄວາມສຳຄັນຫຼາຍໃນການດຳເນີນຄະດີຂອງສານທັງນີ້ກໍເພື່ອເປັນການຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ (ໂຈດ) ທີ່ຖືກລະເມີດໂດຍລູກໜີ້ (ຈຳເລີຍ) ໃຫ້ໄດ້ຮັບການຟື້ນຟູສິດຄືນ ຫຼືໄດ້ຮັບການໃຊ້ແທນໜີ້ສິນຄືນຢ່າງທັນກຳນົດເວລາພ້ອມທັງຮັບປະກັນບໍ່ໃຫ້ຄະດີອັ່ງອໍຄ້າງຄາຢູ່ສານນານເກີນກຳນົດເວລາທີ່ບົ່ງໄວ້ໃນກົດໝາຍ, ສະນັ້ນ ມີຄວາມຈຳເປັນຕ້ອງໄດ້ພິຈາລະນາຕັດສິນຄະດີໂດຍປາສະຈາກການເຂົ້າຮ່ວມຂອງຈຳເລີຍ. ເຖິງຢ່າງໃດກໍຕາມການບໍ່ເຂົ້າຮ່ວມຂອງຈຳເລີຍຈະບໍ່ເປັນອຸບປະສັກໃນການພິຈາລະນາຕັດສິນຄະດີ, ເມື່ອສານໄດ້ລົງຄຳຕັດສິນແລ້ວກໍຖືວ່າເປັນການຕັດສິນໂດຍຊ້ອງໜ້າຜູ່ກ່ຽວ[25]. ທັງສາມາດນຳໄປຈັດຕັ້ງປະຕິບັດໄດ້ຖ້າຫາກບໍ່ມີການຮ້ອງຂໍອຸທອນຕາມກົດໝາຍ, ດັ່ງນັ້ນ ຈຶ່ງເວົ້າໄດ້ວ່າການດຳເນີນຄະດີປະເພດນີ້ມີຄວາມສຳຄັນແກ່ຄູ່ຄວາມ (ໂຈດ) ແລະ ຜູ່ຮັບຜິດຊອບດຳເນີນຄະດີ (ສານ) ຕາມທີ່ກ່າວມານັ້ນ.

## 3. ເງື່ອນໄຂການຮັບເອົາຄຳຮ້ອງຂໍມາພິຈາລະນາໃນກໍລະນີຈຳເລີຍເອົາຕົວຫຼົບໜີ.

ການເອົາຕົວລົບໜີຂອງລູກໜີ້ (ຈຳເລີຍ) ໃນເວລາພວມດຳເນີນຄະດີ ຫຼື ກ່ອນການຍື່ນຄຳຮ້ອງຂໍຂອງເຈົ້າໜີ້ (ໂຈດ) ນັ້ນກໍອາດມີເຫດຜົນຂອງຜູ່ກ່ຽວ ຊຶ່ງບາງເທື່ອກໍສາມາດຮັບຮູ້ໄດ້ກ່ຽວກັບຂໍ້ມູນການໂຍກຍ້າຍບ່ອນຢູ່ຂອງຜູ່ກ່ຽວ ຫຼື ບາງເທື່ອກໍບໍ່ມີຂໍ້ມູນຢ່າງຊັດເຈນການໂຍກຍ້າຍບ່ອນຢູ່, ເຖິງຢ່າງໃດກໍຕາມສານກໍຕ້ອງຊອກຫາທຸກວິທີທາງເພື່ອຊອກທາງອອກໃນການພິຈາລະນາຕັດສິນຄະດີໃຫ້ດຳເນີນໄປຕາມການກຳນົດຂອງກົດໝາຍກໍຄື: ເມື່ອສານຫາກ

[25]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 350

ມີຂໍ້ມູນກ່ຽວກັບທີ່ຢູ່ຂອງຈຳເລີຍຢ່າງຈະແຈ້ງແລ້ວກໍດຳເນີນຄະດີແບບປົກກະຕິ ຊຶ່ງຕ້ອງມີການເຂົ້າຮ່ວມຂອງຈຳເລີຍໃນທຸກຂັ້ນຕອນຂອງການດຳເນີນຄະດີ ເຊັ່ນ ສານອາດຈະມອບໝອບໝາຍໃຫ້ສານບ່ອນຈຳເລີຍອາໄສຢູ່ນັ້ນເກັບກຳຂໍ້ມູນ, ເອົາຄຳໃຫ້ການແທນຫຼືຂໍອຳນາດສານບ່ອນຈຳເລີຍອາໄສຢູ່ມີສິດມີສິດພິຈາລະນາຕັດສີນຕາມກົດໝາຍ [26] . ສະນັ້ນ ເງື່ອນໄຂການຮັບເອົາຄຳຮ້ອງຂໍຂອງໂຈດ ມາພິຈາລະນາໃນກໍລະນີຈຳເລີຍເອົາຕົວຫຼົບໜີຈຶ່ງມີດັ່ງນີ້:

**3.1. ຕ້ອງແມ່ນຄະດີທີ່ຈຳເລີຍໄດ້ເອົາຕົວຫຼົບໜີໂດຍບໍ່ຮູ້ສາເຫດ.**

ການເອົາຕົວຫຼົບໜີຂອງລູກໜີ້ (ຈຳເລີຍ) ນັ້ນອາດຈະມີຂຶ້ນກ່ອນ ຫຼື ລຸນຫຼັງການຍື່ນຄຳຮ້ອງຂໍຂອງໂຈດແລ້ວແຕ່ກໍລະນີ, ແຕ່ສິ່ງສຳຄັນແມ່ນຫຼົບໜີໂດຍບໍ່ຮູ້ສາເຫດ, ບໍ່ຮູ້ບ່ອນຢູ່ແນ່ນອນຫຼືສານກໍໄດ້ພະຍາຍາມພົວພັນຕິດຕໍ່ຫາຜູ້ກ່ຽວເພື່ອເຂົ້າຮ່ວມການດຳເນີນຄະດີແລ້ວ, ແຕ່ບໍ່ສາມາດຕິດຕໍ່ຫາໄດ້ຊຶ່ງອາດເກີດຂຶ້ນຍ້ອນຈຳເລີຍມີເຈດຕະນາຢາກຫຼົບຫຼີກການດຳເນີນຄະດີ ຫຼື ຢາກແກ່ຍາວເວລາໃນການໃຊ້ແທນໜີ້ສິນແກ່ໂຈດ ຈຶ່ງໄດ້ເອົາຕົວຫຼົບໜີໂດຍບໍ່ແຈ້ງໃຫ້ຍາດຕິພີ່ນ້ອງໃກ້ຊິດຮັບຮູ້ນຳ;

**3.2. ມີຄຳຮ້ອງຂອງໂຈດທີ່ຍື່ນຕໍ່ສານເພື່ອໃຫ້ສານພິຈາລະນາຄະດີໂດຍບໍ່ມີຈຳເລີຍເຂົ້າຮ່ວມ.**

ການດຳເນີນຄະດີປະເພດການຮ້ອງຂໍທາງແພ່ງ ກໍຄືການດຳເນີນຄະດີໃນການຮ້ອງຟ້ອງທາງແພ່ງຕ້ອງໄດ້ມີການຍື່ນຄຳຮ້ອງຟ້ອງຈາກໂຈດຂຶ້ນຫາສານຈຶ່ງສາມາດດຳເນີນຄະດີໄດ້ເນື່ອງຈາກວ່າອີງຕາມຫຼັກການດຳເນີນຄະດີແພ່ງສານຈະດຳເນີນຄະດີໄດ້ກໍຕໍ່ເມື່ອມີການຮ້ອງຟ້ອງ ຫຼື ຮ້ອງຂໍຈາກຄູ່ຄວາມ, ຖ້າບໍ່ມີການຮ້ອງຂໍສານກໍບໍ່ສາມາດພິຈາລະນາໃຫ້ໄດ້ ຫຼື ຮ້ອງຂໍແນວໃດສານກໍຈະພິຈາລະນາ ບົນພື້ນຖານການຮ້ອງຂໍເທົ່ານັ້ນ, ສານບໍ່ມີສິດພິຈາລະນານອກເໜືອຈາກການຮ້ອງຂໍຂອງຄູ່ຄວາມ, ເວັ້ນເສັຍແຕ່ພົວພັນເຖິງຜົນປະໂຫຍດຂອງລັດ, ສັງຄົມຫຼືເດັກ[27]. ນອກນັ້ນຄຳຮ້ອງຂໍຂອງໂຈດກໍຕ້ອງປະກອບມີເນື້ອໃນຕົ້ນຕໍຕາມທີ່ບົ່ງໄວ້ໃນມາດຕາ 324 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ 2012.

## 4. ປະເພດຄະດີຮ້ອງຂໍໃຫ້ສານຕັດສີນໃນກໍລະນີລູກໜີ້ເອົາຕົວຫຼົບໜີ.

ຄະດີສາມາດຮ້ອງຂໍໃຫ້ສານພິຈາລະນາຕັດສີນກໍລະນີລູກໜີ້ເອົາຕົວຫຼົບໜີມີຄື:

- ຄະດີກ່ຽວກັບສັນຍາສັນຍາກູ້ຢືມທີ່ໂຈດຮ້ອງຟ້ອງທວງເອົາເງິນຄືນ, ແຕ່ລູກໜີ້ໄດ້ເອົາຕົວຫຼົບໜີຈາກການດຳເນີນຄະດີໂດຍບໍ່ມີເຫດຜົນ ຫຼື ບໍ່ສາມາດຕິດຕໍ່ໄດ້;
- ຄະດີກ່ຽວກັບສາຍຜົວເມັຍ ຊຶ່ງຜົວ ຫຼື ເມັຍເອົາຕົວຫຼົບໜີໂດຍບໍ່ມີເຫດຜົນ ຫຼື ບໍ່ສາມາດຕິດຕໍ່ໄດ້;
- ຄະດີອື່ນທີ່ຈຳເລີຍເອົາຕົບຫຼົບໜີໂດຍບໍ່ມີເຫດຜົນ ຫຼື ບໍ່ສາມາດຕິດຕໍ່ໄດ້.

ປະເພດຄະດີທີ່ຮ້ອງຂໍໃຫ້ສານພິຈາລະນາຕັດສີນໃນກໍລະນີລູກໜີ້ເອົາຕົວຫຼົບໜີນັ້ນ ກໍມີຫຼາຍຄະດີທີ່ມີລັກສະນະແຕກຕ່າງກັນຊຶ່ງສານສາມາດພິຈາລະນາຕັດສີນໂດຍບໍ່ມີຈຳເລີຍເຂົ້າຮ່ວມໃນການດຳເນີນຄະດີກໍໄດ້ສິ່ງສຳຄັນແມ່ນຄະດີທີ່ຈຳເລີຍໄດ້ເອົາຕົວຫຼົບໜີໂດຍບໍ່ມີເຫດຜົນ ແລະ ບໍ່ສາມາດພົວພັນຕິດຕໍ່ຫາຜູ້ກ່ຽວໄດ້, ສ່ວນບັນດາປະເພດຄະດີທີ່ກ່າວມາເທິງນັ້ນ ເປັນພຽງຍົກໃຫ້ເຫັນບາງປະເພດຄະດີທີ່ພົ້ນເດັ່ນ ຊຶ່ງມັກເກີດຂຶ້ນຫຼາຍໃນສັງຄົມ, ສະນັ້ນ ບໍ່ຄວນເຂົ້າໃຈສະເໜີໄປວ່າມີແຕ່ປະເພດຄະດີທີ່ຍົກຂຶ້ນມາຂ້າງເທິງເທົ່ານັ້ນສານຈຶ່ງສາມາດພິຈາລະນາຕັດສີນ ໃນກໍລະນີລູກໜີ້ (ຈຳເລີຍ) ເອົາຕົວຫຼົບໜີໃນຄວາມເປັນຈິງຍັງມີຫຼາຍປະເພດຄະດີ ຊຶ່ງຜູ້ຮັບຜິດໃນການດຳເນີນຄະດີຕ້ອງໄດ້ກວດກາຢ່າງລະອຽດທີ່ຖ້ວນເສັຍກ່ອນ ຈຶ່ງມີຄຳເຫັນຕອບບັນຫາທີ່ໂຈດໄດ້ຍື່ນຄຳຮ້ອງຂໍໃຫ້ສານພິຈາລະນາຕາມລະບຽບກົດໝາຍ.

---

[26] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 25, 115 ແລະ 116

[27] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 20

## 5. ຂັ້ນຕອນການພິຈາລະນາເນີນຄະດີ.

ການພິຈາລະນາຄະດີໃນກໍລະນີຈໍາເລີຍໄດ້ເອົາຕົວຫຼົບໜີ ແມ່ນບັນດາຂັ້ນຕອນການພິຈາລະນາຄະດີຂອງສານ ຊຶ່ງນັບແຕ່ໂຈດໄດ້ຍື່ນຄໍາຮ້ອງຂໍຕໍ່ສານຈົນຮອດຂັ້ນຕອນສານໄດ້ພິຈາລະນາຕັດສິນ ແລະ ກໍບໍ່ແຕກຕ່າງກັນກັບການດໍາເນີນຄະດີກ່ຽວກັບການຮ້ອງຟ້ອງທາງແພ່ງໂດຍທົ່ວໄປແມ່ນປະຕິບັດຕາມຫຼັກການດຽວກັນ, ແຕ່ຂັ້ນຕອນການດໍາເນີນຄະດີປະເພດການເອົາຕົວຫຼົບໜີຂອງຈໍາເລີຍນັ້ນ ກໍຈະມີລັກສະນະສະເພາະບາງຢ່າງອາດຈະແຕກຕ່າງກັນກັບການດໍາເນີນຄະດີກ່ຽວກັບການຮ້ອງຟ້ອງທາງແພ່ງຊຶ່ງມີບາງຂັ້ນຕອນຄືດັ່ງລຸ່ມນີ້:

### 5.1. ການກວດກາຄໍາຮ້ອງຂໍ.

ເມື່ອໂຈດໄດ້ຍື່ນຄໍາຮ້ອງຂໍໃຫ້ສານພິຈາລະນາຕັດສິນຄະດີທີ່ຈໍາເລີຍໄດ້ເອົາຕົວຫຼົບໜີຂຶ້ນມາຍັງສານແລ້ວຈ່າສານກໍຕ້ອງກວດກາຄໍາຮ້ອງຂໍໂດຍປະຕິບັດຕາມລະບຽບການທົ່ວໄປຂອງການດໍາເນີນຄະດີໃນການກາຄໍາຮ້ອງຂໍຊຶ່ງກ່ອນອື່ນຈ່າສານຕ້ອງກວດເບິ່ງຄໍາຮ້ອງຂໍນັ້ນມີເນື້ອປະຕິບັດຖືກຕ້ອງ ແລະ ສອດຄ່ອງຕາມມາດຕາ 324 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງສະບັບປັບປຸງປີ 2012, ການຍື່ນຄໍາຮ້ອງຂໍນັ້ນຖືກສິດອໍານາດຂອງສານທີ່ກ່ຽວຂ້ອງແລ້ວບໍ, ຖ້າເຫັນວ່າຄໍາຮ້ອງຂໍນັ້ນຫາກປະຕິບັດຖືກກັບລະບຽບກົດໝາຍແລ້ວຈ່າສານກໍຈະຂຶ້ນເລກທີຂາເຂົ້າເພື່ອລາຍງານຕໍ່ປະທານຫຼືຮອງປະທານສານທີ່ກ່ຽວຂ້ອງກວດກາ ແລະ ມີຄໍາເຫັນໃຫ້ຄະນະສານດໍາເນີນຕາມຂັ້ນຕອນຂອງກົດໝາຍ, ແຕ່ຖ້າຫາກບໍ່ຖືກຕ້ອງຈ່າສານກໍຈະແນະນໍາໃຫ້ຜູ້ຍື່ນຄໍາຮ້ອງຂໍນັ້ນໄປປັບປຸງແກ້ໄຂ ຫຼື ນໍາໄປຍື່ນຕໍ່ສານທີ່ມີສິດອໍານາດ.

ການກວດກາຄໍາຮ້ອງຂໍຂອງໂຈດນັ້ນ ມັນເປັນຂັ້ນຕອນໜຶ່ງທີ່ສໍາຄັນ ເພື່ອຮັບປະກັນແກ່ການດໍາເນີນຄະດີຂອງສານໃຫ້ຖືກດໍາເນີນເປັນຢ່າງລະບົບ ແລະ ທັງຮັບປະກັນບໍ່ໃຫ້ມີຮັບຄໍາຮ້ອງຂໍຢ່າງຊະຊາຍ, ທຸກການຮ້ອງຂໍຕ້ອງໃຫ້ມີຄວາມເປັນຈິງເປັນພື້ນຖານແກ່ສານພິຈາລະນາຕາມກົດໝາຍ, ນອກນັ້ນເມື່ອຄໍາຮ້ອງຂໍຖືກກວດກາຢ່າງລະອຽດກໍຈະເປັນເງື່ອນໄຂສະດວກແກ່ຜູ້ພິພາກສາໃນການຄົ້ນຄວ້າຄະດີໃຫ້ດໍາເນີນໄປເປັນລະບົບຊຶ່ງຈະບໍ່ມີຄວາມຫຍຸ້ງຍາກໃນການຈະຕ້ອງໄດ້ກວດກາຄວາມຖືກຕ້ອງຂອງຄໍາຮ້ອງຂໍ ຊຶ່ງເປັນການປະຢັດເວລາການດໍາເນີນຄະດີ, ສະນັ້ນສານຕ້ອງໄດ້ກວດກາຄໍາຮ້ອງຂໍໃນຂັ້ນຕອນເບື້ອງຕົ້ນໃຫ້ລະອຽດຖືກຕາມລະບຽບກົດໝາຍເສັຍກ່ອນ ຈຶ່ງນໍາສົ່ງຄໍາຮ້ອງນັ້ນໄປຍັງຄະນະສານເພື່ອດໍາເນີນຕາມຂັ້ນຕອນຂອງກົດໝາຍ.

### 5.2. ການອອກໝາຍຮຽກ

ພາຍຫຼັງຜູ້ພິພາກສາ ຫຼື ຜູ້ຊ່ວຍຜູ້ພິພາກສາໄດ້ຮັບດໍາເນີນຄະດີແລ້ວ ຕ້ອງຂຶ້ນແຜນການຄົ້ນຄວ້າຄະດີໃຫ້ຮອບດ້ານ, ຄົບຖ້ວນຊຶ່ງກ່ອນອື່ນກໍຕ້ອງພະຍາຍາມຮຽກຕົວຈໍາເລີຍເຂົ້າມາສານເສັຍກ່ອນ, ເມື່ອໄດ້ພະຍາຍາມອອກໝາຍຮຽກໃຫ້ຈໍາເລີຍເຂົ້າມາສານ ຫຼື ຊອກຫາບ່ອນຢູ່ຜູ້ກ່ຽວບໍ່ໄດ້ຂໍ້ມູນແລ້ວ, ຈຶ່ງຮຽກ ຫຼື ເຊີນເອົາພໍ່ແມ່, ຍາດພີ່ນ້ອງໃກ້ຊິດ, ອົງການຈັດຕັ້ງຂອງຈໍາເລີຍ ຫຼື ນາຍບ້ານມາໃຫ້ການຕໍ່ສານ ເພື່ອເກັບກໍາເອົາຂໍ້ມູນຈາກພາກທີ່ກ່ຽວຂ້ອງໃນການຊອກຫາຈໍາເລີຍພ້ອມດຽວກັນນີ້ກໍຕ້ອງຕິດປະກາດຢູ່ຫ້ອງການບ້ານບ່ອນຢູ່ສຸດທ້າຍຂອງຈໍາເລີຍ ແລະສານປະຊາຊົນທີ່ດໍາເນີນຄະດີຫຼືແຈ້ງທາງສື່ມວນຊົນໃຫ້ຈໍາເລີຍເຂົ້າມາສານພາຍໃນກໍານົດເວລາສາມເດືອນ; ຖ້າຈໍາເລີຍຫາກບໍ່ເຂົ້າມາສານຕາມກໍານົດເວລາດັ່ງກ່າວ, ຈາກນັ້ນຈຶ່ງດໍາເນີນຕາມຂັ້ນຕອນພິຈາລະນາຄະດີຕາມກົດໝາຍ[28].

ຈະເຫັນໄດ້ໃນຂັ້ນຕອນການອອກໝາຍຮຽກແມ່ນສານກໍໄດ້ໃຫ້ໂອກາດແກ່ຈໍາເລີຍໃນກໍານົດເວລາອັນສົມຄວນເພື່ອຢາກໃຫ້ຈໍາເລີຍເຂົ້າຮ່ວມການດໍາເນີນຄະດີ, ມີໂອກາດໄດ້ນໍາໃຊ້ສິດຂອງຕົນຢ່າງເຕັມສ່ວນເພື່ອຕອບແກ້ໂຈດ, ແຕ່ຫາກຈໍາເລີຍບໍ່ຢາກນໍາໃຊ້ສິດຂອງຕົນເອງແລ້ວ ສານຈຶ່ງດໍາເນີນຕາມຂັ້ນຕອນຂອງກົດໝາຍ.

[28]ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 353 ແລະ 354

**5.3. ພິຈາລະນາຕັດສິນຄະດີ**

ຜູ້ພິພາກສາ ຫຼືຜູ້ຊ່ວຍຜູ້ພິພາກສາຮັບຜິດຊອບຄົ້ນຄວ້າຄະດີ ຕ້ອງກວດກາຂໍ້ມູນຫຼັກຖານທີ່ໂຈດໄດ້ຄັດຕິດມາພ້ອມກັບຄໍາຮ້ອງຂໍ, ຖ້າຂໍ້ມູນຫຼັກຖານທີ່ໂຈດ( ຜູ້ຮ້ອງຂໍ) ປະກອບມານັ້ນບໍ່ທັນແຈ້ງຂາວພໍຈະນໍາອອກພິຈາລະນາຕັດສິນໄດ້ກໍຮຽກເອົາຜູ້ຮ້ອງຂໍມາໃຫ້ການຊີ້ແຈ້ງການຮ້ອງຂໍ ແລະ ຫຼັກຖານທີ່ຜູ້ກ່ຽວໄດ້ປະກອບມາໃຫ້ສານພ້ອມທັງໃຫ້ຜູ້ກ່ຽວຢັ້ງຢືນ, ຮັບປະກັນການຮ້ອງຂໍຂອງຜູ້ກ່ຽວວ່າມີຄວາມຈິງ, ຖ້າບໍ່ດັ່ງນັ້ນຕ້ອງຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເກີດຂຶ້ນພຽງຝ່າຍດຽວ, ເຖິງຢ່າງໃດກໍຕາມເພື່ອປະກັນເຮັດໃຫ້ການດໍາເນີນຄະດີຢ່າງຮອບດ້ານ, ຄົບຖ້ວນແລະພາວະວິໄສຜູ້ຮັບຜິດຊອບດໍາເນີນຄະດີຕ້ອງຮຽກເອົາພໍ່ແມ່ ຫຼື ຍາດພີ່ນ້ອງໃກ້ຊິດຂອງຈໍາເລີຍມາສອບຖາມກ່ຽວກັບການເອົາຕົວຫຼົບໜີຂອງຈໍາເລີຍພ້ອມກັບຊັບສິນບັດຂອງຜູ້ກ່ຽວແລະເພື່ອຄວາມຊັດເຈນທາງດ້ານຂໍ້ມູນຫຼັກຖານຜູ້ຮັບຜິດຊອບດໍາເນີນຄະດີຄວນລົງໄປເກັບກໍາກວດກາຊັບສິນບັດຂອງຜູ້ກ່ຽວໂດຍເຮັດບັນຊີຢ່າງລະອຽດຈະແຈ້ງ[29], ທັງນີ້ກໍເພື່ອຮັບປະກັນໃນເວລາລົງຄໍາຕັດສິນແລ້ວສາມາດນໍາມາປະຕິບັດໄດ້ງ່າຍແລະທ່ວງທັນກັບເວລາ.

ພາຍຫຼັງຜູ້ຮັບຜິດຊອບຄະດີໄດ້ເກັບກໍາຂໍ້ມູນຫຼັກຖານຄົບຖ້ວນພຽງພໍແລ້ວນໍາສະເໜີຕໍ່ຫົວໜ້າຄະນະສານເພື່ອອອກຄໍາຕົກລົງນໍາເອົາຄະດີອອກພິຈາລະນາໃນທີ່ປະຊຸມສານໂດຍປະຕິບັດຕາມລະບຽບການປະຊຸມສານຄືກັນກັບການຮ້ອງຟ້ອງທາງແພ່ງຊຶ່ງຄະນະສານຕ້ອງໄດ້ທໍາການດໍາເນີນການໄຕ່ສວນຄະດີເພື່ອກວດກາບັນດາຂໍ້ມູນຫຼັກຖານທີ່ໂຈດປະກອບໃຫ້ສານພ້ອມທັງສານເກັບກໍາໄດ້ໃຫ້ຄົບຖ້ວນແລ້ວຈຶ່ງທໍາການຊັ່ງຊາຕີລາຄາຫຼັກຖານທັງໝົດແລະລົງຄໍາຕັດສິນຄະດີຕາມຂໍ້ມູນຫຼັກຖານຕົວຈິງ, ຖ້າຫຼັກຖານຂອງໂຈດມີເຫດຜົນໜັກແໜ້ນກໍລົງຄໍາຕັດສິນຕາມການຮ້ອງຂໍຂອງໂຈດ, ຖ້າຫຼັກຖານຂອງໂຈດບໍ່ໜັກແໜ້ນ ຫຼື ບໍ່ມີເຫດຜົນພຽງພໍກໍລົງຄໍາຕັດສິນຍົກເລີກຄໍາຮ້ອງຟ້ອງຂອງໂຈດ. ໃນທີ່ນີ້ບໍ່ໝາຍຄວາມວ່າໂຈດໄດ້ຮ້ອງຂໍມາແລ້ວສານຈະຕ້ອງລົງຄໍາຕັດສິນຕາມຝ່າຍໂຈດສະເໜີໄປ, ສິ່ງສໍາຄັນແມ່ນການຮ້ອງຂໍຕ້ອງໃຫ້ເຕັມໄປດ້ວຍຂໍ້ມູນຫຼັກຖານໜັກແໜ້ນມາຢັ້ງຢືນຕໍ່ສານ ສານຈຶ່ງສາມາດພິຈາລະນາຕັດສິນໃຫ້ໄດ້ຕາມການຮ້ອງຂໍຂອງໂຈດໄດ້.

## 6. ການດໍາເນີນພາຍຫຼັງປະກາດຄໍາຕັດສິນ.

**6.1. ການແຈ້ງຄໍາຕັດສິນ**

ການລົງຄໍາຕັດສິນຄະດີກ່ຽວກັບກໍລະນີຈໍາເລີຍເອົາຕົວຫຼົບໜີອາດຈະແຕກຕ່າງຈາກການລົງຄໍາຕັດສິນໃນກໍລະນີຮ້ອງຟ້ອງທາງແພ່ງເພາະບໍ່ມີຈໍາເລີຍເຂົ້າຮ່ວມປະຊຸມສານ, ບາງເທື່ອອາດມີແຕ່ໂຈດຝ່າຍດຽວເຂົ້າຮ່ວມ ຫຼື ພ້ອມດ້ວຍພໍ່ແມ່, ຍາດພີ່ນ້ອງໃກ້ຊິດ ຫຼື ການຈັດຕັ້ງຂອງຈໍາເລີຍເຂົ້າຮ່ວມນໍາ, ສະນັ້ນຖ້າພວກກ່ຽວໄດ້ເຂົ້າຮ່ວມປະຊຸມສານພ້ອມກັນກໍຖືວ່າພວກກ່ຽວຮັບຊາບຄໍາຕັດສິນນັບແຕ່ວັນທີ່ສານໄດ້ລົງຄໍາຕັດສິນເປັນຕົ້ນໄປ, ແຕ່ຖ້າມີແຕ່ຝ່າຍໂຈດເຂົ້າຮ່ວມປະຊຸມສານຝ່າຍດຽວຈ່າສານກໍຕ້ອງແຈ້ງຄໍາຕັດສິນນັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງນັ້ນຊາບ, ແລ້ວຈຶ່ງນໍາເອົາຄໍາຕັດສິນນັ້ນໄປຕິດປະກາດຢູ່ບ່ອນຊັບສິນບັດຂອງຈໍາເລີຍຕັ້ງຢູ່, ຫ້ອງການບ້ານ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ຫຼື ບ່ອນຢູ່ສຸດທ້າຍຂອງຈໍາເລີຍເປັນເວລາສາມສິບວັນ[30], ທັງນີ້ກໍເພື່ອເປັນການໃຫ້ໂອກາດແກ່ຄູ່ຄວາມໃນການຂໍອຸທອນ ຫຼື ສະເໜີຄັດຄ້ານຄໍາຕັດສິນໂດຍສະເພາະແມ່ນຝ່າຍຈໍາເລີຍຜູ້ຖືກຕັດສິນຫຼັງຕ້ອງນໍາໃຊ້ສິດຂອງຕົນຕາມຂອບເຂດທີ່ກົດໝາຍກໍານົດ, ຖ້າບໍ່ດັ່ງນັ້ນຜູ້ກ່ຽວກໍຈະບໍ່ມີໂອກາດນໍາໃຊ້ສິດຂອງຕົນເພາະເມື່ອຄໍາຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວທຸກສິ່ງທຸກຢ່າງທີ່ສານໄດ້ບົ່ງໄວ້ໃນຄໍາຕັດສິນນັ້ນຕ້ອງຖືກນໍາມາຈັດຕັ້ງປະຕິບັດ.

**6.2. ການຂໍອຸທອນ ຫຼື ຄັດຄ້ານຄໍາຕັດສິນ.**

ການຂໍອຸທອນຫຼືສະເໜີຄັດຄ້ານຄໍາຕັດສິນໃນກໍລະນີຈໍາເລີຍເອົາຕົວຫຼົບໜີ ກໍບໍ່ແຕກຕ່າງກັບກໍລະນີຮ້ອງຟ້ອງທາງແພ່ງພໍເທົ່າໃດ, ຜູ້ມີສິດຮ້ອງຂໍອຸທອນ ຫຼື ຂໍຄັດຄ້ານກໍມີໂຈດ ແລະ ຈໍາເລີຍ, ແຕ່ກໍານົດເວລາໃນການຂໍອຸທອນຫຼືຂໍ

[29]ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 355

[30]ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 357

ຄັດຄ້ານລະຫວ່າງໂຈດແລະຈຳເລີຍມີຈຸດແຕກຕ່າງກັນເລັກນ້ອຍຍ້ອນວ່າໂຈດມີສິດຮ້ອງຂໍອຸທອນ ຫຼືສະເໜີຄັດຄ້ານຄຳຕັດສິນ ພາຍໃນກຳນົດເວລາຊາວວັນນັບແຕ່ວັນລົງຄຳຕັດສິນ ຫຼື ຊາວວັນນັບແຕ່ວັນຮັບຊາບຄຳຕັດສິນໃນກໍລະນີຕັດສິນລັບຫຼັງ. ສຳລັບຈຳເລີຍມີສິດຮ້ອງຂໍອຸທອນຫຼືສະເໜີຄັດຄ້ານພາຍໃນກຳນົດສາມສິບວັນໃນກຳນົດເວລາຕິດປະກາດແລ້ວຍັງໄດ້ໃຫ້ສິດແກ່ຜູ່ກ່ຽວຕື່ມອີກຊາວວັນ ຫຼັງໝົດກຳນົດເວລາຕິດປະກາດໝາຍຄວາມວ່າຈຳເລີຍຈະໄດ້ສິດໃນການຂໍອຸທອນ ຫຼື ຂໍຄັດຄ້ານລວມກຳນົດເວລາຫ້າສິບວັນ; ຖ້າຫາກບໍ່ມີການຮ້ອງຂໍອຸທອນ ຫຼື ສະເໜີຄັດຄ້ານພາຍໃນກຳນົດເວລາດັ່ງກ່າວແລ້ວກໍຈະຖືວ່າຄຳຕັດສິນໃຊ້ໄດ້ຢ່າງເດັດຂາດ ແລະ ກໍຈະສົ່ງໄປຫ້ອງການຈັດຕັ້ງປະຕິບັດໃນກຳນົດເວລາສາມວັນ ນັບແຕ່ວັນໝົດກຳນົດເວລາດັ່ງກ່າວເປັນຕົ້ນໄປ.

ລວມຄວາມແລ້ວໃນກໍລະນີສານຫາກໄດ້ລົງຄຳຕັດສິນລັບຫຼັງໂຈດ ກໍຄືຈຳເລີຍຖືວ່າພວກກ່ຽວມີສອງສິດໃຫ້ເລືອກຄື: ໜຶ່ງແມ່ນມີສິດຮ້ອງຂໍອຸທອນຫຼືອີກສິດໜຶ່ງແມ່ນມີສິດສະເໜີຄັດຄ້ານຄຳຕັດສິນຕາມກຳນົດເວລາທີ່ບົ່ງໄວ້ໃນກົດໝາຍ, ເຖິງຢ່າງໃດກໍຕາມຄູ່ຄວາມມີສິດເລືອກເອົາໄດ້ໜຶ່ງໃນສອງສິດເທົ່ານັ້ນສານຈະບໍ່ອະນຸຍາດໃຫ້ນຳໃຊ້ທັງສອງສິດພ້ອມກັນຫຼືນຳໃຊ້ສິດໜຶ່ງແລ້ວປ່ຽນເອົາສິດໜຶ່ງ ເຊັ່ນ ນຳໃຊ້ສິດໃນການຮ້ອງຂໍອຸທອນແລ້ວປ່ຽນເປັນສິດໃນການຂໍຄັດຄ້ານຄຳຕັດສິນ[31]ຫຼື ນຳໃຊ້ທັງສິດຂໍອຸທອນ ແລະ ສິດຮ້ອງຂໍຄັດຄ້ານຄຳຕັດສິນ.

**6.3. ການພິຈາລະນາຄືນໃໝ່ຂອງສານ.**

ຄືທີ່ກ່າວມາຂ້າງເທິງເມື່ອຈຳເລີຍໄດ້ເຂົ້າມາຮັບຊາບຄຳຕັດສິນພາຍໃນກຳນົດເວລາ ແລະ ຜູ່ກ່ຽວໄດ້ຂໍສະເໜີຄັດຄ້ານຄຳຕັດສິນເພື່ອໃຫ້ສານຕັດສິນຄືນໃໝ່ໂດຍຊ້ອງໜ້າຜູ່ກ່ຽວ ສານທີ່ໄດ້ລົງຄຳຕັດສິນແລ້ວນັ້ນຕ້ອງພິຈາລະນາຄືນໃໝ່ໂດຍປະຕິບັດຕາມບາດກ້າວຂອງການດຳເນີນຄະດີປົກກະຕິຄື ຜູ່ຮັບຜິດຊອບດຳເນີນຄະດີຕ້ອງແຈ້ງຄຳຮ້ອງຟ້ອງໃຫ້ຈຳເລີຍຊາບ ພ້ອມທັງແນະນຳໃຫ້ຜູ່ກ່ຽວຂຽນຄຳແກ້ຟ້ອງມາຍື່ນຕໍ່ສານແລ້ວກໍທຳການສອບສວນປະກອບຫຼັກຖານໃຫ້ຮອບດ້ານແລະຄົບຖ້ວນແລ້ວ ຈຶ່ງພິຈາລະຕັດສິນຕາມກົດໝາຍບົນພື້ນຖານຂໍ້ມູນຫຼັກຖານທັງໝົດໃນສຳນວນຄະດີ. ແຕ່ຖ້າຈຳເລີຍຮ້ອງຂໍອຸທອນຄຳຕັດສິນໄປຍັງສານຂັ້ນເທິງກໍສະແດງວ່າຈຳເລີຍບໍ່ຕ້ອງການໃຫ້ສານຂັ້ນຕົ້ນພິຈາລະນາຕັດສິນຄືນໃໝ່ໂດຍຊ້ອງໜ້າຜູ່ກ່ຽວ, ສະນັ້ນຈຳເລີຍກໍມີສິດທາງດ້ານກົດໝາຍໃນການຕໍ່ສູ້ຄະດີກັບໂຈດໂດຍສາມາດຂຽນຄຳຮ້ອງຂໍອຸທອນແກ້ຄຳຕັດສິນຂອງສານຂັ້ນຕົ້ນ ພ້ອມທັງປະກອບຫຼັກຖານເພື່ອຫັກລ້າງຫຼັກຖານຂອງໂຈດສະເໜີຕໍ່ສານຂັ້ນອຸທອນພິຈາລະນາຕາມກົດໝາຍ; ສ່ວນຜູ່ຮັບຜິດຊອບດຳເນີນຄະດີຫຼືສານກໍຕ້ອງດຳເນີນຄະດີຄືກັນກັບການດຳເນີນຄະດີຢູ່ສານຂັ້ນຕົ້ນ ໝາຍຄວາມວ່າ ເປີດໂອກາດໃຫ້ຄູ່ຄວາມທັງສອງຝ່າຍມີການໂຕ້ແຍ່ງຫຼັກຖານ ເຊິ່ງກັນ ແລະກັນ ຫຼື ປະຕິບັດຕາມທຸກຂັ້ນຕອນຂອງການດຳເນີນຄະດີຄືຢູ່ຂັ້ນຕົ້ນ.

## 7. ຜົນສະທ້ອນການຮ້ອງຂໍ ໃນກໍລະນີຈຳເລີຍເອົາຕົວຫຼົບໜີ.

ການດຳເນີນຄະດີກ່ຽວກັບການຮ້ອງຂໍ ໃນກໍລະນີຈຳເລີຍເອົາຕົວຫຼົບໜີເປັນການດຳເນີນຄະດີສະຖານແບບພິເສດໜຶ່ງ ຊຶ່ງມີຜົນສະທ້ອນທາງດ້ານກົດໝາຍຫຼາຍຢ່າງລວມທັງເບື້ອງຄູ່ຄວາມ ແລະ ເບື້ອງຜູ່ຮັບຜິດຊອບດຳເນີນຄະດີເຊັ່ນກັນຄື: ເບື້ອງຄູ່ຄວາມໂດຍສະເພາະໂຈດກໍສາມາດຮ້ອງຂໍໃຫ້ສານພິຈາລະນາຕັດສິນເພື່ອຟື້ນຟູສິດຂອງຕົນທີ່ຖືກລະເມີດໄດ້ຢ່າງທັນການບໍ່ຈຳເປັນຕ້ອງລໍຖ້າຈຳເລີຍເຂົ້າມາຮ່ວມດຳເນີນຄະດີແລ້ວ ຈຶ່ງດຳເນີນຄະດີຈະເປັນການແກ່ຍາວເວລາໂຈດບໍ່ສາມາດໄດ້ຮັບການຟື້ນຟູສິດຄືນຈົນກວ່າຈຳເລີຍມາປາກົດຕົວໃນສານ. ສຳລັບຜົນສະທ້ອນແກ່ຜູ່ຮັບຜິດຊອບດຳເນີນຄະດີ (ສານ) ນັ້ນກໍສາມາດແກ້ໄຂຄະດີອອກຈາກສານຢ່າງໄວວາ, ເຮັດໃຫ້ຈຳນວນຄະດີບໍ່ອັ່ງອໍຄ້າງຄາຢູ່ສານເພາະສານສາມາດນຳໃຊ້ວິທີການດຳເນີນຄະດີກໍລະນີທີ່ຈຳເລີຍເອົາຕົວຫຼົບໜີ, ສ່ວນຜົນສະທ້ອນຕໍ່ກັບຈຳເລີຍນັ້ນ ກໍແມ່ນສິ່ງທີ່ຜູ່ກ່ຽວໄດ້ລະເມີດສິດຂອງຜູ່ອື່ນຈະຖືກຟື້ນຟູຄືນ ເຊັ່ນ ຊັບສົມບັດຂອງຜູ່ກ່ຽວກໍຈະຖືກນຳມາປະກາດຂາຍເພື່ອໃຊ້ແທນໜີ້ສິນແກ່ເຈົ້າໜີ້ ຫຼື ສາຍພົວພັນຜົວເມັຍກໍຈະຖືກຕັດຂາດຈາກກັນຕາມຄຳຕັດສິນຂອງສານໂດຍຈຳເລີຍບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີກໍໄດ້.

---

[31]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 358

ເວົ້າລວມແລ້ວ ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ2012 ແມ່ນໄດ້ເປີດໂອກາດໃຫ້ສານດຳເນີນຄະດີແບບພິເສດ ຊຶ່ງບໍ່ຈຳເປັນຕ້ອງໃຫ້ຈຳເລີຍເຂົ້າຮ່ວມກໍໄດ້ທັງເປັນການອັດຊ່ອງຫວ່າງບໍ່ໃຫ້ຈຳເລີຍເອົາຕົວລີບໜີຈາການດຳເນີນຄະດີໂດຍບໍ່ມີເຫດຜົນ ເນື່ອງຈາກວ່າເຖິງຜູ່ກ່ຽວຈະເອົາຕົວຫຼົບໜີສານກໍຍັງສາມາດສືບຕໍ່ດຳເນີນຄະດີເປັນປົກກະຕິ ແລະ ຄຳຕັດສິນກໍມີຜົນບັງຄັບປະຕິບັດຄືກັນກັບການຕັດສິນຊ້ອງໜ້າຈຳເລີຍ.

# ພາກທີ IV
# ການຮື້ຟື້ນຄະດີ
## ບົດທີ 1
## ຄວາມຮູ້ທົ່ວໄປກ່ຽວກັບການຂໍຮື້ຟື້ນຄະດີ

### 1. ຄວາມໝາຍຂອງການຮື້ຟື້ນຄະດີ.

ການຮື້ຟື້ນຄະດີ ແມ່ນການເຄື່ອນໄຫວຂອງອົງການໄອຍະການປະຊາຊົນສູງສຸດ ເພື່ອກວດກາຄືນບັນດາຄຳຕົກລົງຂອງສານ ເຊັ່ນ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາທີ່ເກີດຈາກການຊັ່ງຊາຕີລາຄາຫຼັກຖານບໍ່ຖືກຕ້ອງຕາມຄວາມເປັນຈິງ ແລະບໍ່ສອດຄ່ອງຕາມກົດໝາຍບົນພື້ນຖານການຍື່ນຄຳຮ້ອງຂໍຮື້ຟື້ນຄະດີຂອງຄູ່ຄວາມ ຫຼືຂອງບຸກຄົນທີສາມ ຫຼື ຂອງບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີກ່ຽວກັບຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງແຕະຕ້ອງເຖິງສິດ ແລະຜົນປະໂຫຍດອັນຊອບທຳຂອງຜູ່ກ່ຽວ ຫຼື ການສະເໜີຮື້ຟື້ນຄະດີເພື່ອຄວາມຖືກຕ້ອງທາງດ້ານກົດໝາຍຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

### 2. ຄວາມສຳຄັນ ແລະ ຄວາມຈຳເປັນຂອງການຮື້ຟື້ນຄະດີ.

#### 2.1. ຄວາມສຳຄັນຂອງການຮື້ຟື້ນຄະດີ.

ການຮື້ຟື້ນຄະດີ ແມ່ນມີຄວາມສຳຄັນຕໍ່ຄູ່ຄວາມ, ບຸກຄົນທີສາມ ຫຼື ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີ ກ່ຽວກັບຄຳຕັດສິນໃຊ້ໄດ້ເດັດຂາດແລ້ວ ຊຶ່ງແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ່ກ່ຽວ ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດທີ່ຖືກລະເມີດນັ້ນຄືນ ຫຼື ເພື່ອຄວາມຖືກຕ້ອງທາງດ້ານກົດໝາຍ ໃນກໍລະນີທີ່ມີການລະເມີດຕໍ່ຫຼັກການດຳເນີນຄະດີທັງນີ້ ກໍເພື່ອຮັບປະກັນເຮັດໃຫ້ການດຳເນີນຄະດີ ແລະ ການຕັດສິນຄະດີມີຄວາມຖືກຕ້ອງສອດຄ່ອງຕາມກົດໝາຍ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະຍຸຕິທຳ.

#### 2.2. ຄວາມຈຳເປັນຂອງການຮື້ຟື້ນຄະດີ.

ການຮື້ຟື້ນຄະດີ ແມ່ນມີຄວາມຈຳເປັນຢູ່ໃນລະບົບຂອງ ສປປລາວ ເພາະກົດໝາຍໄດ້ຮັບປະກັນສິດທຸກດ້ານຂອງພົນລະເມືອງລາວຢ່າງຄົບຖ້ວນທັງເປັນການຮັບປະກັນໃຫ້ການດຳເນີນຄະດີຂອງສານໃຫ້ຄົບຖ້ວນ, ຮອບດ້ານ, ພາວະວິໄສ, ຖືກຕ້ອງຕາມກົດໝາຍ ແລະປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ ແລະບຸກຄົນທີ່ມີສ່ວນກ່ຽວຂ້ອງໃນຄະດີ.

ນອກນີ້ການຮື້ຟື້ນຄະດີ ກໍແມ່ນເພື່ອຄວາມຖືກຕ້ອງທາງດ້ານກົດໝາຍ ໃນກໍລະນີທີ່ສານໄດ້ອອກຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼືຄຳພິພາກສາຜິດພາດເນື່ອງມາຈາກພະຍານໃນຄະດີໄດ້ໃຫ້ການເທັດ ຫຼື ຊ່ຽວຊານໄດ້ໃຫ້ຄຳເຫັນເທັດ, ການແປພາສາເທັດ, ການນຳໃຊ້ຫຼັກຖານປອມ ຫຼື ມີຂໍ້ມູນຫຼັກຖານໃໝ່ທີ່ກ່ຽວຂ້ອງກັບຄະດີ ຊຶ່ງຍັງບໍ່ໄດ້ສະເໜີຂຶ້ນໃນຄະດີດັ່ງກ່າວ ແລະຜູ່ຂໍຮື້ຟື້ນກໍບໍ່ສາມາດຮູ້ໄດ້ກ່ຽວກັບຂໍ້ມູນ ຫຼື ຫຼັກຖານໃໝ່ ຫຼືມີສາເຫດອື່ນທີ່ພົວພັນທາງດ້ານຂໍ້ມູນຫຼັກຖານ ແລະຕາມກົດໝາຍ ເຊັ່ນ ຜູ່ພິພາກສາ ຫຼື ໄອຍະການປະຊາຊົນເຂົ້າຂ້າງ-ອອກຂາ ຊຶ່ງພາໃຫ້ການຕັດສິນຄະດີຜິດພາດ.

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຈຶ່ງໃຊ້ວິທີການສະເໜີຮື້ຟື້ນຄະດີຄືນໃໝ່ ເພື່ອປົວແປງຂໍ້ຜິດພາດທາງດ້ານຂໍ້ມູນຫຼັກຖານ ແລະ ທາງດ້ານກົດໝາຍໃຫ້ເປັນໄປຕາມສະພາບດຳເນີນຄະດີປົກກະຕິໃນການແກ້ໄຂຄະດີດັ່ງກ່າວກົດໝາຍກໍໄດ້ບັງຄັບໃຫ້ມີການພິຈາລະຄະດີດັ່ງກ່າວນັ້ນຄືນໃໝ່ໂດຍເລີ່ມຕົ້ນແຕ່ສານຂັ້ນຕົ້ນຂຶ້ນມາຕາມລຳດັບ.

## 3. ເງື່ອນໄຂໃນການຂໍຣື້ຟື້ນຄະດີ.

ເງື່ອນໄຂໃນການຂໍຣື້ຟື້ນຄະດີຂອງຄູ່ຄວາມ, ບຸກຄົນທີສາມ ຫຼື ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີກ່ຽວກັບຄຳຕັດສິນໃຊ້ໄດ້ເດັດຂາດແລ້ວ ຊຶ່ງແຕະຕ້ອງເຖິງສິດ ແລະຜົນປະໂຫຍດອັນຊອບທຳຂອງຜູ່ກ່ຽວ ຫຼືຫົວໜ້າອົງການໄອຍະການປະຊາຊົນສູງສຸດ ປະກອບດ້ວຍສອງເງື່ອນໄຂຄື: ເງື່ອນໄຂດ້ານກຳນົດເວລາ ແລະ ເງື່ອນໄຂດ້ານຂໍ້ມູນຫຼັກຖານ.

### 3.1. ເງື່ອນໄຂດ້ານກຳນົດເວລາ.

#### 3.1.1. ເງື່ອນໄຂທົ່ວໄປ.

ຄູ່ຄວາມ ຫຼືບຸກຄົນທີສາມສາມາດສະເໜີຂໍຣື້ຟື້ນຄະດີ ຫຼື ຫົວໜ້າອົງການໄອຍະການປະຊາຊົນສູງສຸດມີສິດສະເໜີຣື້ຟື້ນຄະດີໄດ້ພາຍໃນກຳນົດເວລາໜຶ່ງປີນັບແຕ່ມື້ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານໃຊ້ໄດ້ເດັດຂາດເປັນຕົ້ນໄປ.

ສຳລັບບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີສາມາດຂໍຣື້ຟື້ນຄະດີໄດ້ ພາຍໃນກຳນົດເວລາໜຶ່ງປີ ເຊັ່ນດຽວກັນ ນັບແຕ່ມື້ຮັບຊາບຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາເປັນຕົ້ນໄປ.

#### 3.1.2. ເງື່ອນໄຂພິເສດ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ມີສິດສະເໜີຣື້ຟື້ນຄະດີ ເພື່ອຄວາມຖືກຕ້ອງທາງດ້ານກົດໝາຍໂດຍບໍ່ມີກຳນົດເວລາ ໝາຍຄວາມວ່າຈະສະເໜີເວລາໃດກໍໄດ້ນັບແຕ່ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານໃຊ້ໄດ້ເດັດຂາດເປັນຕົ້ນໄປ, ເນື່ອງຈາກຄຳຄົກລົງຂອງສານໄດ້ແຕະຕ້ອງເຖິງຜົນປະໂຫຍດຂອງລັດ ຫຼື ຂອງສັງຄົມ; ເຖິງວ່າຄູ່ຄວາມ, ບຸກຄົນທີສາມ ຫຼື ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີກ່ຽວກັບຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ່ກ່ຽວຈະບໍ່ຂໍຣື້ຟື້ນກໍຕາມ ແຕ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕ້ອງໄດ້ສະເໜີຣື້ຟື້ນຕາມໜ້າທີ່ ເພື່ອຄວາມຖືກຕ້ອງທາງດ້ານກົດໝາຍ.

### 3.2. ເງື່ອນໄຂດ້ານຂໍ້ມູນຫຼັກຖານ.

ເງື່ອນໄຂດ້ານຂໍ້ມູນຫຼັກຖານໃນການຣື້ຟື້ນຄະດີປະກອບດ້ວຍ 5 ສາເຫດດັ່ງນີ້:

1. ພະຍານໃນຄະດີໄດ້ໃຫ້ການເທັດ ຫຼື ຜູ່ຊ່ຽວຊານໄດ້ໃຫ້ຄຳເຫັນເທັດ, ການແປພາສາເທັດ ຫຼື ການໃຊ້ຫຼັກຖານປອມ ຊຶ່ງພາໃຫ້ການຕັດສິນຄະດີມີຄວາມຜິດພາດ;
2. ຜູ່ພິພາກສາ ຫຼື ພະນັກງານໄອຍະການປະຊາຊົນ ເຂົ້າຂ້າງ-ອອກຂາ ຊຶ່ງພາໃຫ້ການຕັດສິນຄະດີບໍ່ຖືກຕ້ອງ;
3. ມີຂໍ້ມູນ ຫຼື ຫຼັກຖານໃໝ່ທີ່ກ່ຽວຂ້ອງກັບຄະດີ ຊຶ່ງຍັງບໍ່ໄດ້ສະເໜີຂຶ້ນໃນຄະດີດັ່ງກ່າວ ແລະ ຜູ່ຂໍຣື້ຟື້ນກໍບໍ່ສາມາດຮູ້ໄດ້ກ່ຽວກັບຂໍ້ມູນ ຫຼື ຫຼັກຖານໃໝ່ໃນເວລາຕັດສິນນັ້ນ;
4. ມີເຫດການອື່ນທີ່ຊີ້ບອກເຖິງຂໍ້ມູນຫຼັກຖານໃໝ່ ຊຶ່ງສານບໍ່ສາມາດຮູ້ໃນເວລາລົງຄຳຕັດສິນ ຫຼື ຄຳພິພາກສານັ້ນ;
5. ມີການສະເໜີຂໍຣື້ຟື້ນຄະດີ ຂອງບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີກ່ຽວກັບຄຳຕັດສິນ ຫຼື ຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດແລ້ວຊຶ່ງແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ່ກ່ຽວ.

## 4. ບັນຫາທີ່ບໍ່ຣື້ຟື້ນ.

ໃນກໍລະນີທີ່ໄປຄູ່ຄວາມ, ບຸກຄົນທີ່ສາມ ຫຼື ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີກ່ຽວກັບຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ, ຊຶ່ງແຕະຕ້ອງເຖິງສິດ ແລະຜົນປະໂຫຍດອັນຊອບທຳຂອງຜູ່ກ່ຽວຈະບໍ່ສາມາດສະເໜີຂໍຣື້ຟື້ນຄະດີໄດ້ ຫຼືຫົວໜ້າອົງການໄອຍະການປະຊາຊົນສູງສຸດຈະບໍ່ສາມາດສະເໜີຣື້ຟື້ນຄະດີໄດ້ ຖ້າຫາກວ່າໝົດກຳນົດເວລາໃນການຂໍຣື້ຟື້ນຄະດີ ຫຼື ບໍ່ສາມາດນຳເອົາບັນຫາເກົ່າມາສະເໜີຂໍຣື້ຟື້ນໄດ້ອີກ ຊຶ່ງບັນຫາເກົ່ານັ້ນແມ່ນຂໍ້ມູນຫຼັກ

ຖານເກົ່າ ຫຼືສາເຫດເກົ່າທີ່ຄູ່ຄວາມ, ບຸກຄົນທີສາມ ຫຼື ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີກ່ຽວກັບຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ, ຊຶ່ງແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງຜູ່ກ່ຽວທີ່ເຄີຍໄດ້ສະເໜີຮື້ຟື້ນຕໍ່ອົງການໄອຍະການປະຊາຊົນສູງສຸດ ແລະ ຫົວໜ້າອົງການໄອຍະການປະຊາຊົນສູງສຸດໄດ້ຕົກລົງບໍ່ຄັດຄ້ານ ຫຼື ສານປະຊາຊົນສູງສຸດໄດ້ພິພາກສາຍົກເລີກຄຳສະເໜີຮື້ຟື້ນ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດແລ້ວ.

## 5. ຜູ່ມີສິດສະເໜີຂໍຮື້ຟື້ນຄະດີ.

ຜູ່ທີ່ມີສິດສະເໜີຂໍຮື້ຟື້ນຄະດີມີຄູ່ຄວາມ, ບຸກຄົນທີສາມ ແລະບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີກ່ຽວກັບຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງຜູ່ກ່ຽວ.

### 5.1. ຄູ່ຄວາມ.

ຄູ່ຄວາມ ແມ່ນໂຈດ ແລະຈຳເລີຍ ທີ່ເຂົ້າຮ່ວມໃນການດຳເນີນຄະດີທີ່ເຫັນວ່າການພິຈາລະນາຕັດສິນ ຫຼື ການພິພາກສາຂອງສານບໍ່ຖືກຕ້ອງຕາມເຫດການຕົວຈິງ ແລະ ກົດໝາຍເນື່ອງຈາກວ່າພະຍານໃນຄະດີ ໄດ້ໃຫ້ການເທັດ, ຊ່ຽວຊານໄດ້ໃຫ້ຄຳເຫັນເທັດ, ການແປພາສາເທັດ, ການນຳໃຊ້ຫຼັກຖານປອມ ຫຼື ມີຂໍ້ມູນຫຼັກຖານທີ່ໜັກແໜ້ນວ່າ ຜູ່ພິພາກສາ ຫຼື ພະນັກງານໄອຍະການປະຊາຊົນ ເຂົ້າຂ້າງອອກຂາ ຫຼື ມີຂໍ້ມູນ, ຫຼັກຖານໃໝ່ທີ່ກ່ຽວຂ້ອງກັບຄະດີ ຊຶ່ງຍັງບໍ່ໄດ້ສະເໜີຂຶ້ນໃນຄະດີດັ່ງກ່າວ ແລະ ຜູ່ຂໍຮື້ຟື້ນກໍບໍ່ສາມາດຮູ້ໄດ້ກ່ຽວກັບຂໍ້ມູນ ຫຼື ຫຼັກຖານໃໝ່ຊຶ່ງເປັນການສ້າງຄວາມເສຍຫາຍ ແລະ ຄວາມອັບປະໂຫຍດໃຫ້ອັນໃຫຍ່ຫຼວງແກ່ຕົນ ດັ່ງນັ້ນ ເພື່ອເປັນການພື້ນຟູຄືນສິດ ແລະ ຜົນປະໂຫຍດທີ່ເສຍໄປ ຕາມຄຳຕົກລົງຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຈຶ່ງໄດ້ຂຽນຄຳຮ້ອງຂໍຮື້ຟື້ນຄະດີໄປຍັງອົງການໄອຍະການປະຊາຊົນສູງສຸດ ເພື່ອໃຫ້ຕິດຕາມກວດກາ ແລະຄົ້ນຄວ້າຄືນກ່ຽວກັບຄຳຕົກລົງດັ່ງກ່າວຂອງສານ.

### 5.2. ບຸກຄົນທີ່ສາມ

ບຸກຄົນທີ່ສາມ ແມ່ນບຸກຄົນ ຫຼືການຈັດຕັ້ງ ຫຼື ວິສະຫະກິດທີ່ເຂົ້າຮ່ວມໃນຄະດີ ເພື່ອປົກປ້ອງສິດ ແລະຜົນປະໂຫຍດຕົນທີ່ຕິດພັນກັບຄະດີທີ່ກຳລັງພິຈາລະນາຢູ່ສານ ເມື່ອເຫັນວ່າການພິຈາລະນາຕັດສິນ ຫຼື ການພິພາກສາຂອງສານບໍ່ຖືກຕ້ອງຕາມເຫດການຕົວຈິງ ແລະກົດໝາຍຕາມທີ່ກ່າວມາຂ້າງເທິງນັ້ນ.

### 5.3. ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີ.

ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີ ແມ່ນບຸກຄົນທີ່ກ່ຽວຂ້ອງກັບການຕົກລົງຂອງສານ ເຊັ່ນ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ່ກ່ຽວ ທີ່ເນື່ອງມາຈາກການພິຈາລະນາຕັດສິນ ຫຼື ການພິພາກສາຂອງສານບໍ່ຖືກຕ້ອງຕາມເຫດການຕົວຈິງ ແລະ ກົດໝາຍ ເຊັ່ນ ພະຍານໃນຄະດີໄດ້ໃຫ້ການເທັດ, ຊ່ຽວຊານໄດ້ໃຫ້ຄຳເຫັນເທັດ, ການແປພາສາເທັດ, ການນຳໃຊ້ຫຼັກຖານປອມ ຫຼື ມີຂໍ້ມູນຫຼັກຖານທີ່ໜັກແໜ້ນວ່າຜູ່ພິພາກສາ ຫຼື ພະນັກງານໄອຍະການປະຊາຊົນເຂົ້າຂ້າງ-ອອກຂາ ຫຼື ມີຂໍ້ມູນ, ຫຼັກຖານໃໝ່ທີ່ກ່ຽວຂ້ອງກັບຄະດີ ຊຶ່ງຍັງບໍ່ໄດ້ສະເໜີຂຶ້ນໃນຄະດີດັ່ງກ່າວ ແລະ ຜູ່ຂໍຮື້ຟື້ນກໍບໍ່ສາມາດຮູ້ໄດ້ກ່ຽວກັບຂໍ້ມູນ ຫຼື ຫຼັກຖານໃໝ່ຊຶ່ງເປັນການສ້າງຄວາມເສຍຫາຍ ແລະຄວາມອັບປະໂຫຍດໃຫ້ອັນໃຫຍ່ຫຼວງແກ່ຕົນ, ດັ່ງນັ້ນ ເພື່ອເປັນການພື້ນຟູຄືນສິດ ແລະ ຜົນປະໂຫຍດທີ່ເສຍໄປຕາມຄຳຕົກລົງຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຈຶ່ງໄດ້ຂຽນຄຳຮ້ອງຂໍຮື້ຟື້ນຄະດີໄປຍັງອົງການໄອຍະການປະຊາຊົນສູງສຸດ ເພື່ອໃຫ້ຕິດຕາມກວດກາ ແລະ ຄົ້ນຄວ້າຄືນກ່ຽວກັບຄຳສັ່ງ, ຄຳຊີ້ຂາດ,ຄຳຕັດສິນ ຫຼືຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວດັ່ງກ່າວ.

# ບົດທີ 2
# ການພິຈາລະນາການຂໍຮື້ຟື້ນ ຂອງອົງການທີ່ມີສິດອໍານາດ

## 1. ການພິຈາລະນາຂອງອົງການໄອຍະການປະຊາຊົນສູງສຸດ

ອົງການໄອຍະການປະຊາຊົນສູງສຸດ ມີສິດ ແລະ ໜ້າທີ່ໃນການຕິດຕາມກວດກາ ການດໍາເນີນຄະດີແພ່ງ, ການຄ້າ, ຄອບຄົວ ແລະເດັກ ຂອງອົງການສານປະຊາຊົນທຸກຂັ້ນໃນການພິຈາລະນາຕັດສິນຄະດີ, ທີ່ໄດ້ອອກຄໍາຕົກລົງ ເຊັ່ນ ຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ແຕ່ຄູ່ຄວາມ, ບຸກຄົນທີສາມ ຫຼື ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດໍາເນີນຄະດີ ທີ່ຍັງບໍ່ພໍໃຈໃນການພິຈາລະນາຕັດສິນຄະດີຂອງສານຜ່ານມາ ທີ່ເຫັນວ່າຍັງບໍ່ທັນຖືກຕ້ອງກັບກົດໝາຍ ແລະ ໃຫ້ຄວາມຍຸຕິທໍາ, ອົງການໄອຍະການປະຊາຊົນສູງສຸດມີໜ້າທີ່ຕິດຕາມກວດກາບັນດາ ຂໍ້ມູນຫຼັກຖານທີ່ຄູ່ຄວາມ, ບຸກຄົນທີສາມ ຫຼື ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດໍາເນີນຄະດີໄດ້ສະເໜີມານັ້ນ ຫຼື ຕາມການສະເໜີຮື້ຟື້ນໂດຍໜ້າທີ່ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອຄວາມຖືກຕ້ອງທາງດ້ານກົດໝາຍ ທັງນີ້ກໍເພື່ອປົກປ້ອງສິດຜົນປະໂຫຍດຂອງລັດ, ສັງຄົມ, ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ ແນ່ໃສ່ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍເພີ່ມທະວີບົດບາດທໍາສ້າງລັດແຫ່ງກົດໝາຍເທື່ອລະກ້າວ[32].

### 1.1. ຂັ້ນຕອນຮັບຄໍາຮ້ອງຂໍຮື້ຟື້ນ

ພາຍຫຼັງຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດຄູ່ຄວາມ, ບຸກຄົນທີສາມ ຫຼື ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດໍາເນີນຄະດີ ຫາກມີຂໍ້ມູນຫຼັກຖານຢັ້ງຢືນວ່າການດໍາເນີນຄະດີ ແລະ ການພິຈາລະນາຕັດສິນຄະດີຂອງສານຜ່ານມານັ້ນ ບໍ່ຖືກຕ້ອງຕາມກົດໝາຍ ແລະ ເຫດການຕົວຈິງຂອງຄະດີ ຊຶ່ງມີຈຸດປະສົງຢາກຂໍຮື້ຟື້ນຄະດີຕ້ອງປະຕິບັດດັ່ງນີ້:

ຄູ່ຄວາມ, ບຸກຄົນທີສາມ ຫຼື ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດໍາເນີນຄະດີ ຕ້ອງໄດ້ຊື້ແບບຟອມ ຢູ່ອົງການໄອຍະການປະຊາຊົນສູງສູດ ແລ້ວຈຶ່ງດໍາເນີນການຂຽນຄໍາຮ້ອງຂໍຮື້ຟື້ນຄະດີຕາມແບບຟອມພ້ອມທັງປະກອບເອກະສານ ແລະ ບັນດາຂໍ້ມູນຫຼັກຖານຕ່າງໆ ເຊັ່ນ ໃບ ຢັ້ງຢືນທີ່ຢູ່, ໃບຢັ້ງຢືນມອບສິດ (ຖ້າມີຜູ່ຕ່າງໜ້າ), ຄໍາຕັດສິນຂອງສານຂັ້ນຕົ້ນ, ຄໍາພິພາກສາຂອງສານອຸທອນ ຄໍາພິພາກສາຂອງສານຂັ້ນລົບລ້າງ, ເອກະສານອື່ນໆ ທີ່ກ່ຽວກັບຄະດີເລື່ອງນີ້ ແລະ ຫຼັກຖານໃໝ່ທີ່ຢາກສະເໜີ ຍື່ນຕໍ່ຂາເຂົ້າຂອງອົງການໄອຍະການປະຊາຊົນສູງສຸດ, ກ່ອນຈະຮັບເອົາຄໍາຮ້ອງດັ່ງກ່າວ ພະນັກງານໄອຍະການຕ້ອງໄດ້ກວດ ກາການປະກອບເອກະສານນັ້ນ ວ່າໄດ້ປະຕິບັດຕາມແບບຟອມແລ້ວ ຫຼື ບໍ່,ຖ້າບໍ່ຄົບຖ້ວນກໍແນະນໍາໄປປະກອບໃໝ່ ກົງກັນຂ້າມຖ້າຄົບຖ້ວນແລ້ວກໍຮັບເອົາ[33].

### 1.2. ຂັ້ນຕອນຄົ້ນຄວ້າຄໍາຮ້ອງຂໍຮື້ຟື້ນ

ຫຼັງຈາກຮັບເອົາຄໍາຮ້ອງຂໍຮື້ຟື້ນຄະດີແລ້ວ ຫົວໜ້າກົມທີ່ກ່ຽວຂ້ອງເປັນຜູ່ແຈກຢາຍໃຫ້ພະນັກງານໄອຍະການເປັນຜູ່ຮັບຜິດຊອບໃນການຄົ້ນຄ້ວາຕ້ອງໄດ້ເອົາໃຈໃສ່ ກວດກາເບິ່ງເງື່ອນໄຂ ແລະ ສາເຫດໃດໜຶ່ງທີ່ພາໃຫ້ມີການຮື້ຟື້ນຄະດີ ພ້ອມທັງ ບັນດາຂໍ້ມູນຫຼັກຖານທັງໝົດ ບໍ່ວ່າຈະເປັນຫຼັກຖານ ທາງດ້ານວັດຖຸ, ເອກະສານ ຫຼື ທາງດ້ານບຸກຄົນ ແລະ ບັນດາຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາຂອງສານແຕ່ລະຂັ້ນທີ່ປະກອບມານັ້ນເພື່ອລາຍງານຕໍ່ກອງປະຊຸມວິຊາການ.

---

[32]ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 313 ແລະ 317
ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ສະບັບປັບປຸງປີ 2009, ມາດຕາ 10

[33]ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 318

### 1.2.1. ກອງປະຊຸມວິຊາການ

ພະນັກງານໄອຍະການປະຊາຊົນທີ່ຮັບຜິດຊອບຄົ້ນຄວ້າຄະດີຕ້ອງລາຍງານເນື້ອໃນການຮ້ອງຂໍຮື້ຟື້ນຄະດີ ພ້ອມທັງຂໍ້ມູນຫຼັກຖານທີ່ຄູ່ຄວາມສະເໜີມານັ້ນວ່າມີເງື່ອນໄຂ ແລະສາເຫດໃດໜຶ່ງທີ່ພາໃຫ້ມີການຮື້ຟື້ນຄະດີ ຫຼື ບໍ່, ພ້ອມທັງສະເໜີໃຫ້ເຫັນກ່ຽວກັບການພິຈາລະນາຂອງສານແຕ່ລະຂັ້ນ ຜ່ານມານັ້ນແມ່ນອີງໃສ່ຂໍ້ມູນຫຼັກຖານອັນໃດທີ່ເປັນພື້ນຖານໃນການຕັດສິນ, ຈາກນັ້ນກອງປະຊຸມຈະໄດ້ສັງລວມແຕ່ລະເຫດການພ້ອມຂໍ້ມູນຫຼັກຖານຕ່າງໆ ແລ້ວຕົກລົງແຕ່ລະບັນຫາດັ່ງນີ້:

- ຮຽກຄູ່ຄວາມ, ບຸກຄົນທີ່ສາມ ຫຼື ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີທີ່ກ່ຽວຂ້ອງໃນຄະດີມາຊີ້ແຈ້ງເຫດຜົນກ່ຽວກັບການຂໍຮື້ຟື້ນຄະດີພ້ອມທັງສະເໜີ ຂໍ້ມູນຫຼັກຖານໃໝ່ທີ່ເຫັນວ່າ, ຈະເປັນຜົນປະໂຫຍດໃນການດຳເນີນຄະດີຕໍ່ໄປ;
- ລົງເກັບກຳຂໍ້ມູນຫຼັກຖານນຳພາກສ່ວນທີ່ກ່ຽວຂ້ອງກັບຄະດີນັ້ນຄືນໃໝ່;
- ທວງສຳນວນຄະດີຕົ້ນສະບັບຈາກຫ້ອງການ ຫຼື ໜ່ວຍງານປະຕິບັດຄຳຕັດສິນ ເພື່ອກວດກາຄືນ;
- ສະເໜີໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕໍ່ກະຊວງຍຸຕິທຳ.

ສຳນວນຄະດີທີ່ທວງມານັ້ນວິຊາການຜູ້ຮັບຜິດຊອບຄົ້ນຄວ້າ ຈະໄດ້ສືບຕໍ່ກວດກາຂໍ້ມູນຫຼັກຖານຕ່າງໆ, ທີ່ປະກອບມາໃນສຳນວນຄະດີນັ້ນຄືນໃໝ່ທັງໝົດ ເພື່ອລາຍງານຕໍ່ກອງປະຊຸມຄະນະກຳມະການຂອງອົງການໄອຍະການປະຊາຊົນສູງສຸດ[34].

### 1.2.2. ການສະເໜີໂຈະປະຕິບັດຄຳຕັດສິນຂອງສານ

ກອງປະຊຸມຂອງວິຊາການຂອງອົງການໄອຍະການປະຊາຊົນສູງສຸດ ເຫັນວ່າມີຂໍ້ມູນຫຼັກຖານໃໝ່ທີ່ສຳຄັນຕໍ່ການພິຈາລະນາຄະດີຊຶ່ງສານຍັງບໍ່ທັນນຳເອົາມາພິຈາລະນາຕັດສິນ ຫຼື ວ່າການພິຈາລະນາຕັດສິນຂອງສານຜ່ານມາຍັງບໍ່ທັນຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ຫຼື ດ້ວຍເຫດຜົນອື່ນໆ ເຊັ່ນ ມີການເຂົ້າຂ້າງອອກຂາເພື່ອນຜົນປະໂຫຍດກັບຝ່າຍໃດຝ່າຍໜຶ່ງ ຫຼື ດ້ວຍຮູບການອື່ນໆ ຈຶ່ງເຮັດໃຫ້ການພິຈາລະນາຕັດສິນຄະດີມີຄວາມຜິດພາດບໍ່ຖືກຕ້ອງກັບຄວາມເປັນຈິງ ແລະ ກົດໝາຍ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຈຶ່ງອອກຄຳສະເໜີໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລ້ວສົ່ງໃຫ້ກົມຈັດຕັ້ງປະຕິບັດຄຳຕັດສິນກະຊວງຍຸຕິທຳຊາບ, ຈາກນັ້ນກົມຈັດຕັ້ງປະຕິບັດຄຳຕັດສິນຂອງສານຈະໄດ້ອອກຄຳສັ່ງໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານໄວ້ກ່ອນ ແລະ ຄຳສັ່ງດັ່ງກ່າວຕ້ອງໄດ້ແຈ້ງໃຫ້ຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂັ້ນລຸ່ມຂອງຕົນ, ອົງການໄອຍະການປະຊາຊົນສູງສຸດ ແລະ ຄູ່ຄວາມຊາບ ພາຍໃນ ສາມສິບວັນ.

ພາຍຫຼັງ ມີຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານແລ້ວ, ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຈະຕ້ອງໄດ້ຢຸດຕິການຈັດຕັ້ງປະຕິບັດໄວ້ຈົນກວ່າຈະມີຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ສະບັບໃໝ່ທີ່ໃຊ້ໄດ້ຢ່າງເດັດຂາດ ແລ້ວຈຶ່ງສືບຕໍ່ຈັດຕັ້ງປະຕິບັດຕາມລະບຽບກົດໝາຍຕໍ່ໄປ[35].

### 1.3. ການຕົກລົງຂອງຄະນະກຳມະການໄອຍະການປະຊາຊົນ

ກອງປະຊຸມຄະນະກຳມະການຂອງອົງການໄອຍະການປະຊາຊົນສູງສຸດ ປະກອບດ້ວຍ ຫົວໜ້າ ຫຼື ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າກົມ, ພະນັກງານໄອຍະການປະຊາຊົນຜູ້ຮັບຜິດຊອບຄົ້ນຄ້ວາຄະດີເຂົ້າຮ່ວມກອງປະຊຸມເພື່ອມີຄຳເຫັນແລ້ວຕົກລົງດັ່ງນີ້:

---

[34] ລະບຽບການຄຸ້ມຄອງຄະດີ,ການຄົ້ນຄ້ວາຄະດີ ແລະ ການເຄື່ອນໄຫວວຽກງານຂອງ ອອປສ, ສະບັບເລກທີ 146/ອອປສ,ລົງວັນທີ 14/08/2012

[35] ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ສະບັບປັບປຸງປີ 2009, ມາດຕາ 51

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 31

**1.3.1. ຕົກລົງບໍ່ຮື້ຟື້ນຄະດີ**

ການຕົກລົງບໍ່ຮື້ຟື້ນຄະດີ ແມ່ນຍ້ອນບໍ່ປະຕິບັດເງື່ອນໄຂກຳນົດເວລາ ຫຼື ບໍ່ມີສາເຫດໃດໜຶ່ງທີ່ພາໃຫ້ຮື້ຟື້ນຄະດີຄືນໃໝ່ ຄື:

- ຄູ່ຄວາມ, ບຸກຄົນທີສາມ ຫຼື ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີທີ່ຂໍຮື້ຟື້ນຄະດີນັ້ນບໍ່ໄດ້ປະຕິບັດຕາມກຳນົດເວລາ ໜຶ່ງປີຊຶ່ງນັບແຕ່ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ, ຖ້າກໍລະນີທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີ ກໍແມ່ນໃຫ້ນັບແຕ່ວັນຮັບຊາບເປັນຕົ້ນໄປ.
- ບໍ່ມີສາເຫດໃດໜຶ່ງທີ່ພາໃຫ້ຮື້ຟື້ນຄະດີມາດຕາ 315ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ2012, ຍ້ອນເຫດຜົນຂ້າງເທິງນີ້ ຈຶ່ງບໍ່ສາມາດກວດກາພິຈາລະນາຕາມການຮ້ອງຂໍນັ້ນໄດ້[36].

**1.3.2. ສະເໜີຮື້ຟື້ນຄະດີຄືນໃໝ່**

ການສະເໜີຮື້ຟື້ນຄະດີຄືນໃໝ່ຂອງຫົວ ໜ້າອົງການໄອຍະການປະຊາຊົນສູງສຸດ ແມ່ນອີງໃສ່ເງື່ອນໄຂ ແລະ ສາເຫດໃດໜຶ່ງດັ່ງນີ້:

**ກ. ປະຕິບັດຕາມ ກຳນົດເວລາຂໍຮື້ຟື້ນຄະດີ**

ຄູ່ຄວາມ, ບຸກຄົນສາມ ຫຼື ບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີ ທີ່ກ່ຽວຂ້ອງໃນຄະດີ ໄດ້ປະຕິບັດເງື່ອນໄຂໃນການຂໍຮື້ຟື້ນຄະດີຕາມກຳນົດເວລາໜຶ່ງ ປີ ຊຶ່ງນັບແຕ່ຄຳສັ່ງ, ຄຳຊີ້ຂາດ,ຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ.

**ຂ. ມີ ໜຶ່ງ ໃນບັນດາສາເຫດຄື:**

1. ພະຍານໃນຄະດີໃຫ້ການເທດ ຫຼື ຜູ່ຊ່ຽວຊານໃຫ້ຄຳເຫັນເທດ,ການແປພາສາເທດ ຫຼື ການໃຊ້ຫຼັກຖານປອມ ຊຶ່ງພາໃຫ້ການຕັດສິນຄະດີ ມີຄວາມຜິດພາດ;
2. ຜູ່ພິພາກສາ ຫຼື ພະນັກງານໄອຍະການປະຊາຊົນ ໄດ້ເຂົ້າຂ້າງອອກຂາ ຊຶ່ງພາໃຫ້ການຕັດສິນຄະດີມີຄວາມຜິດພາດ;
3. ມີຂໍ້ມູນ ຫຼື ຫຼັກຖານໃໝ່ກ່ຽວຂ້ອງກັບຄະດີ ຊຶ່ງຍັງບໍ່ທັນໄດ້ສະເໜີຂຶ້ນໃນຄະດີດັ່ງກ່າວ ແລະ ຜູ່ຮ້ອງຂໍຮື້ຟື້ນນັ້ນກໍບໍ່ສາມາດຮູ້ໄດ້ກັບຂໍ້ມູນ ຫຼື ຫຼັກຖານໃໝ່;
4. ມີເຫດການອື່ນທີ່ຊີ້ບອກເຖິງຂໍ້ມູນຫຼັກຖານໃໝ່ ຊຶ່ງສານບໍ່ໄດ້ຮູ້ໃນເວລາລົງຄຳຕັດສິນ ຫຼື ຄຳພິພາກສານັ້ນ;
5. ມີການສະເໜີຮື້ຟື້ນຂອງບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີກ່ຽວກັບຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ່ກ່ຽວ37.

ຄຳສະເໜີຮື້ຟື້ນຄະດີຂ ອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຕ້ອງໄດ້ແຈ້ງໃຫ້ຄູ່ຄວາມ, ບຸກຄົນທີສາມ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງໃນຄະດີຊາບ, ແລ້ວຈຶ່ງນຳສົ່ງ ພ້ອມສຳນວນຄະດີ ແລະ ບັນດາຂໍ້ມູນຫຼັກຖານຕ່າງໆທີ່ປະກອບມາໃນສຳນວນຄະດີນັ້ນສົ່ງໄປຍັງສານປະຊາຊົນສູງສຸດເພື່ອພິຈາລະນາຄຳສະເໜີຮື້ຟື້ນຂອງອົງການໄອຍະການປະຊາຊົນສູງສຸດ ຕາມລະບຽບກົດໝາຍ[38].

---

[36] ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບປັບປຸງປີ 2008, ມາດຕາ 49

[37] ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ສະບັບປັບປຸງປີ 2009, ມາດຕາ 23,27 ແລະ 29

[38] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 315 ແລະ 316

## 2. ການພິຈາລະນາຂອງສານປະຊາຊົນສູງສຸດ

ພາຍຫຼັງສານປະຊາຊົນສູງສຸດ ໄດ້ຮັບສຳນວນຄະດີພ້ອມທັງຄຳສະເໜີຮື້ຟື້ນ, ຈາກອົງການໄອຍະການປະຊາຊົນສູງສຸດແລ້ວ ຫົວໜ້າຄະນະສານແພ່ງຈະເປັນຜູ້ແຈກຢາຍໃຫ້ຜູ້ພິພາກສາໃດໜຶ່ງຮັບຜິດຊອບໃນການຄົ້ນຄ້ວາຄະດີດັ່ງກ່າວ, ສຳລັບຜູ້ພິພາກສາທີ່ຖືກມອບໝາຍຕ້ອງໄດ້ຄົ້ນຄ້ວາພິຈາລະນາ ຄຳສະເໜີຮື້ຟື້ນຄະດີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ທາງດ້ານເງື່ອນໄຂກຳນົດເວລາ ແລະ ສາເຫດໃດໜຶ່ງທີ່ພາໃຫ້ມີການຮື້ຟື້ນຄະດີ, ຈາກນັ້ນກໍໄດ້ເອົາໃຈໃສ່ພິຈາລະນາບັນດາຂໍ້ມູນຫຼັກຖານຕ່າງໆ ທັງນີ້ເພື່ອນຳເອົາຄະດີອອກພິຈາລະນາພິພາກສາໃຫ້ສຳເລັດພາຍໃນກຳນົດເວລາ ສອງເດືອນ[39].

### 2.1. ຂັ້ນຕອນການຄົ້ນຄ້ວາຄຳສະເໜີຮື້ຟື້ນຄະດີ

ຜູ້ພິພາກສາທີ່ຮັບຜິດຊອບຄະດີ ຈະໄດ້ຄົ້ນຄວ້າບັນດາຂໍ້ມູນຫຼັກຖານຕ່າງໆ ທີ່ປະກອບມາໃນສຳນວນຄະດີຢ່າງລະອຽດທັງໝົດ ສິ່ງສຳຄັນແມ່ນຈະໄດ້ພິຈາລະນາຄຳສະເໜີຮື້ຟື້ນຄະດີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດເພື່ອສະເໜີຕໍ່ກອງປະຊຸມສະພາຜູ້ພິພາກສາ ວ່າການສະເໜີຮື້ຟື້ນຄະດີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແມ່ນມີເງື່ອນໄຂ ແລະ ສາເຫດທີ່ພາໃຫ້ມີການຮື້ຟື້ນຄະດີຄືນໃໝ່ ຫຼື ບໍ່, ຜ່ານການຄົ້ນຄ້ວາພິຈາລະນາຈຶ່ງສະຫຼຸບວ່າ: ຄຳສະເໜີຮື້ຟື້ນຄະດີຂອງຫົວໜ້າ ອົງການໄອຍະການປະຊາຊົນສູງສຸດມີເຫດຜົນພຽງພໍເນື່ອງຈາກວ່າ ຂໍ້ມູນຫຼັກຖານທີ່ເປັນບ່ອນອີງນັ້ນແມ່ນມີຈິງ ແລະ ຖືກຕ້ອງຕາມກົດໝາຍ, ຊຶ່ງຫຼັກຖານດັ່ງກ່າວຜ່ານມາສານປະຊາຊົນແຕ່ລະຂັ້ນຍັງບໍ່ທັນໄດ້ນຳເອົາມາພິຈາລະນາຕັດສີນເທື່ອ ແລະ ຄູ່ຄວາມຜູ້ຮ້ອງຂໍຮື້ຟື້ນນັ້ນກໍບໍ່ສາມາດຮູ້ໄດ້ກ່ຽວກັບຂໍ້ມູນ ຫຼື ຫຼັກຖານໃໝ່ໃນເວລາຕັດສີນ ແຕ່ຫຼັກຖານໃໝ່ນັ້ນບໍ່ໝາຍເຖິງການສ້າງຂຶ້ນມາໃໝ່.

**ຕົວຢ່າງ:** *ທ້າວ ກ ແລະ ທ້າວ ຂ ຂັດແຍ່ງກຳມະສິດທີ່ດິນ, ແຕ່ທີ່ດິນແມ່ນເປັນກຳມະສິດ ຂອງ ທ້າວ ກ ໂດຍມີເອກະສານຢັ້ງຢືນຄື: ໃບຕາດິນຖາວອນ, ແຕ່ເວລານັ້ນບໍ່ຮູ້ວ່າໄດ້ເອົາປະໄວ້ໃສ, ຜ່ານການພິຈາລະນາຕັດສີນຂອງສານແຕ່ລະຂັ້ນ ທີ່ດິນຕອນດັ່ງກ່າວໃຫ້ເປັນກຳມະສິດຂອງທ້າວ ຂ , ພາຍຫຼັງມາ ທ້າວ ກ ໄດ້ພົບເຫັນ ໃບຕາດິນຖາວອນ, ຈຶ່ງໄດ້ນຳເອົາໄປເປັນຫຼັກຖານໃໝ່ ເພື່ອຂໍຮື້ຟື້ນຄະດີຕໍ່ອົງການໄອຍະການປະຊາຊົນສູງສຸດ ແລະ ການພົບເຫັນຫຼັກຖານໃໝ່ແມ່ນສາມາດຂໍຮື້ຟື້ນໄດ້ເພາະບໍ່ໄດ້ກາຍກຳນົດເວລາໜຶ່ງປີເທື່ອ.*

ຜູ້ພິພາກສານອກຈາກ ຄົ້ນຄ້ວາຄຳສະເໜີຮື້ຟື້ນຄະດີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດແລ້ວ ຍັງໄດ້ພິຈາລະນາບັນດາຂໍ້ມູນຫຼັກຖານຕ່າງໆ ທີ່ປະກອບມາໃນສຳນວນຄະດີຄືນໃໝ່ຢ່າງລະອຽດ, ຖ້າຈຳເປັນອາດຈະຮຽກຄູ່ຄວາມ ຫຼື ບຸກຄົນທີ່ກ່ຽວຂ້ອງໃນຄະດີມາຊີ້ແຈ້ງຕໍ່ບັນຫາຫຼັກຖານຕື່ມ, ຈາກນັ້ນຈຶ່ງສະຫຼຸບລາຍງານຕໍ່ກອງປະຊຸມສະພາຜູ້ພິພາກສາ.

ໃນກອງປະຊຸມສະພາຜູ້ພິພາກສາປະກອບດ້ວຍສະມາຊິກສະພາຜູ້ພິພາກສາເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມເພື່ອກວດກາ ຄົ້ນຄວ້າຂໍ້ມູນຫຼັກຖານຕ່າງໆ ຕາມຄຳສະເໜີຮື້ຟື້ນຄະດີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ທີ່ສະເໜີມາເພື່ອເປັນພື້ນຖານກະກຽມເປີດປະຊຸມສານ[40].

### 2.2. ການເປີດປະຊຸມສານ

ພາຍຫຼັງທີ່ປະທານຄະນະສານ ໄດ້ກ່າວເປີດປະຊຸມສານຕາມລະບຽບການ ແລະ ຄະນະສານ ຜູ້ຮັບຜິດຊອບຄະດີໄດ້ລາຍງານແລ້ວ ປະທານຄະນະສານ ສະເໜີໃຫ້ຜູ້ຮ້ອງຂໍຮື້ຟື້ຄະດີ (ຖ້າເຂົ້າມາຮ່ວມ) ຫຼື ພະນັກງານໄອຍະການປະຊາຊົນ ທີ່ເຂົ້າຮ່ວມປະຊຸມສານໃຫ້ເຫດຜົນກ່ຽວກັບການຂໍຮື້ຟື້ນຄະດີ.

ໃນກໍລະນີ ທີ່ບໍ່ໄດ້ຮຽກຄູ່ຄວາມເຂົ້າມາຮ່ວມໃນທີ່ປະຊຸມສານ ພາຍຫຼັງທີ່ຮັບຟັງການລາຍງານຂອງຜູ້ຮັບຜິດຊອບຄະດີ ແລະ ຄຳຖະແຫຼງຂອງພະນັກງານໄອຍະການປະຊາຊົນແລ້ວ ປະທານຄະນະສານ ກໍປະກາດປິດປະຊຸມ

---

[39]ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 318

[40]ກົດໝາຍວ່າດ້ວຍສານປະຊາຊົນ, ສະບັບປັບປຸງປີ 2009, ມາດຕາ 21 ແລະ 32

ສານຊື່ວຄາວ ເພື່ອພິຈາລະນາພິພາກສາຄະດີ ໃນຫ້ອງປະຊຸມລັບຫຼັງຈາກນັ້ນ ກໍນໍາເອົາຄໍາພິພາກສາອອກປະກາດ ຫຼື ອ່ານໃນທີ່ປະຊຸມສານ[41].

**2.3. ການຕົກລົງຂອງສານປະຊາຊົນສູງສຸດ**

ຄະນະສານຂັ້ນຮື້ຟື້ນຄະດີ ຂອງສານປະຊາຊົນສູງສຸດ ໄດ້ຄົ້ນຄວ້າພິຈາລະນາແລ້ວ ລົງຄໍາພິພາກສາ ຕາມກໍລະນີ ດັ່ງນີ້:

**2.3.1. ຄໍາຕົກລົງບໍ່ຮື້ຟື້ນຄະດີ**

ສານປະຊາຊົນສູງສຸດໄດ້ອອກຄໍາພິພາກສາຍົກເລີກຄໍາສະເໜີຮື້ຟື້ນຄະດີ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດແລ້ວສົ່ງສໍານວນຄະດີພ້ອມທັງຄໍາພິພາກສາບໍ່ຮື້ຟື້ຄະດີດັ່ງກ່າວໃຫ້ຫ້ອງການ ຫຼື ໜ່ວຍງານປະຕິບັດຄໍາຕັດສິນຂອງສານສືບຕໍ່ຈັດຕັ້ງປະຕິບັດຕາມລະບຽບກົດໝາຍ.

**2.3.2. ຄໍາຕົກລົງຮື້ຟື້ນຄະດີຄືນໃໝ່**

ຄະນະສານ ໄດ້ລົງຄໍາພິພາກສາ ລົບລ້າງຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດ ແລ້ວສົ່ງສໍານວນຄະດີດັ່ງກ່າວຄືນໃຫ້ສານປະຊາຊົນຂັ້ນຕົ້ນຄະນະໃໝ່ພິຈາລະນາຕາມລະບຽບກົດໝາຍ.

ພາຍຫຼັງສານປະຊາຊົນສູງສຸດໄດ້ລົງຄໍາພິພາກສາໃຫ້ຮື້ຟື້ນຄະດີແລ້ວຕ້ອງສົ່ງສໍານວນຄະດີດັ່ງກ່າວໃຫ້ສານຂັ້ນຕົ້ນຄະນະໃໝ່ ຕ້ອງພິຈາລະນາຄືນ ຕາມຂັ້ນຕອນຂອງກົດໝາຍ.

ສານຂັ້ນຕົ້ນຕ້ອງເລີ່ມດໍາເນີນຄະດີດັ່ງກ່າວຄືນໃໝ່ທັງໝົດຕາມລະບຽບການພິຈາລະນາຄະດີຢູ່ສານຂັ້ນຕົ້ນໂດຍໃຫ້ນໍາໃຊ້ຂໍ້ມູນຫຼັກຖານເກົ່າ, ຂໍ້ມູນຫຼັກຖານໃໝ່ທີ່ມີໃນສໍານວນຄະດີ ແລະ ຄໍາຕັດສິນຂອງສານປະຊາຊົນຂັ້ນຕົ້ນຕ້ອງບົ່ງບອກຮູບຄະດີທີ່ສານແຕ່ລະຂັ້ນດໍາເນີນຜ່ານມາ.

## 3. ຜົນສະທ້ອນຂອງການຮື້ຟື້ນຄະດີ.

**ຜົນສະທ້ອນຂອງການຮື້ຟື້ນຄະດີມີດັ່ງນີ້:**

1) ຢຸດເຊົາການປະຕິບັດຄໍາຕັດສິນຂອງສານເພາະວ່າຄໍາຕັດສິນແມ່ນຖືກລົບລ້າງຕາມຄໍາພິພາກສາຮື້ຟື້ນຄະດີ ເນື່ອງຈາກວ່າການດໍາເນີນຄະດີຜ່ານມາບໍ່ຖືກຕ້ອງຕາມກົດໝາຍ ເຊັ່ນ ພະຍານ, ຜູ້ຊ່ຽວຊານ, ຜູ້ແປພາສາໃຫ້ການເທັດຫຼືການໃຊ້ຫຼັກຖານປອມ, ສໍາລັບຜູ້ພິພາກສາ ຫຼື ພະນັກງານໄອຍະການປະຊາຊົນ ໄດ້ເຂົ້າຂ້າງອອກຂາຫາຜົນປະໂຫຍດກັບຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຈຶ່ງຖືວ່າການດໍາເນີນຄະດີຜ່ານມາບໍ່ຖືກຕ້ອງ ແລະ ຄໍາຕັດສິນກໍຈະບໍ່ຖືກຕ້ອງ ຈຶ່ງຕ້ອງຢຸດເຊົາການປະຕິບັດຄໍາຕັດສິນດັ່ງກ່າວໄວ້;

2) ຜົນຂອງການຈັດຕັ້ງປະຕິບັດຄໍາຕັດສິນ ຜ່ານມານັ້ນແມ່ນປະຕິບັດຕາມຄໍາຕັດສິນທີ່ຍັງບໍ່ຖືກຕ້ອງກັບລະບຽບກົດໝາຍຈຶ່ງເປັນສາເຫດເຮັດໃຫ້ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ໄດ້ຮັບຄວາມອັບປະໂຫຍດເຖິງວ່າ ຜ່ານມາຈະໄດ້ຈັດຕັ້ງປະຕິບັດໄປສ່ວນໃດສ່ວນໜຶ່ງ ຫຼື ທັງໝົດແລ້ວກໍຕາມແມ່ນບໍ່ສາມາດໃຊ້ໄດ້, ແມ່ນຈະໄດ້ໂຈະໄວ້ຈົນກວ່າມີຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາ ສະບັບໃໝ່ທີ່ໃຊ້ໄດ້ຢ່າງເດັດຂາດ ແລ້ວຈຶ່ງສືບຕໍ່ຈັດຕັ້ງປະຕິບັດຄືນໃໝ່;

3) ພາຍຫຼັງສານປະຊາຊົນສູງສຸດໄດ້ພິພາກສາຮື້ຟື້ນຄະດີຄືນໃໝ່ແລ້ວຄໍາພິພາກສາດັ່ງກ່າວແມ່ນສົ່ງໃຫ້ສານປະ ຊາຊົນຂັ້ນຕົ້ນທີ່ກ່ຽວຂ້ອງເປັນຜູ້ເລີ່ມຕົ້ນດໍາເນີນຄືນໃໝ່ທັງໝົດ, ສິ່ງທີ່ປະຕິບັດກັນຜ່ານມາແລ້ວແມ່ນຈະຕ້ອງໄດ້ປະຕິບັດກັນຄືນໃໝ່ທັງໝົດ, ເຖິງວ່າຊັບນັ້ນຈະໄດ້ນໍາໃຊ້ໝົດໄປ ຫຼື ໄດ້ຊີ້ຂາດໄປແລ້ວກໍຕາມ ຖ້າເປັນວັດຖຸທີ່ຮັກສາຮູບປະພັນຄົງຢູ່ກໍສາມາດສົ່ງກັນຄືນ ກົງກັນຂ້າມຖ້າບໍ່ສາມາດສົ່ງຄືນກັນໄດ້ກໍໃຫ້ຕີເປັນມູນຄ່າໂດຍຄະນະກໍາມະການ[42].

---

[41] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012 ມາດຕາ 300

[42] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 319, 320 ແລະ 321

## ພາລະບົດບາດຂອງການຮື້ຟື້ນຄະດີ

## ~ການຮື້ຟື້ນຄະດີໃນລະບົບຂອງຍີ່ປຸ່ນແມ່ນເລີ່ມຈາກການພິຈາລະນາສາເຫດຂອງການຮື້ຟື້ນ

ລະບົບການດຳເນີນຄະດີແພ່ງຂອງ ຍີ່ປຸ່ນ ແມ່ນນຳໃຊ້ການພິຈາລະນາຄະດີເປັນ 3 ຂັ້ນ ນັ້ນໝາຍຄວາມ ວ່າ ສານອະນຸຍາດ ໃຫ້ຄູ່ຄວາມຂໍອຸທອນ ແລະຂໍລຶບລ້າ, ສານຈະມີການພິຈາລະນາຄະດີນັ້ນ 3 ຄັ້ງໂດຍອີງຕາມການຮ້ອງ ຂໍຂອງຄູ່ຄວາມ ນອກຈາກນັ້ນ ແລ້ວກໍຍັງມີການຮື້ຟື້ນຄະດີ. ສະນັ້ນຈຶ່ງເວົ້າໄດ້ວ່າລະບົບການດຳເນີນຄະດີແພ່ງຂອງ ຍີ່ປຸ່ນ ແມ່ນຄືກັນກັບລະບົບຂອງ ສປປ ລາວ ຕ່າງແຕ່ວ່າເງື່ອນໄຂໃນການຮື້ຟື້ນ ໂດຍສະເພາະແມ່ນສາເຫດ ຂອງການ ຮື້ຟື້ນຂອງລະບົບ ຍີ່ປຸ່ນ ແມ່ນຂ້ອນຂ້າງແຕກຕ່າງຈາກລະບົບຂອງ ສປປ ລາວ. ຍ້ອນຫຍັງມັນຈຶ່ງແຕກຕ່າງ ແລະ ແຕກຕ່າງ ຄືແນວໃດ? ບັນຫາເຫຼົ່ານັ້ນທາງຄະນະຄົ້ນຄ້ວາຂອງພວກຂ້າພະເຈົ້າແມ່ນໄດ້ນຳໄປສົນທະນາກັບ ອາຈານ ແລະ ນັກກົດ ໝາຍ ຍີ່ປຸ່ນ ໃນລະຍະການໄປຝຶກອົບຮົມທີ່ຍີ່ປຸ່ນໃນເດືອນ ພະຈິກ 2012 ແລະ ບົດຮຽນທີ່ພວກ ຂ້າພະເຈົ້າຖອດຖອນໄດ້ແມ່ນມີດັ່ງນີ້:

**(1) ເງື່ອນໄຂໃນການຮື້ຟື້ນ**

ເງື່ອນໄຂໃນການຮື້ຟື້ນແມ່ນມີ 2 ເງື່ອນໄຂຄື: 1/ ພາຍໃນກຳນົດເວລາທີ່ກົດໝາຍໄດ້ກຳນົດໄວ້ ແລະ 2/ ມີສາເຫດໃດໜຶ່ງໃນຈຳນວນບັນດາສາເຫດທີ່ກົດໝາຍໄດ້ກຳນົດໄວ້.

**(2) ກຳນົດເວລາຂອງການຂໍຮື້ຟື້ນ**

ສຳລັບສາເຫດທີ 3 ແລະ 10 ຂ້າງລຸ່ມນີ້ ແມ່ນບໍ່ມີກຳນົດເວລາໃນການຂໍຮື້ຟື້ນ, ສ່ວນສາເຫດອື່ນໆແມ່ນມີກຳນົດ ເວລາ 5 ປີ. ແຕ່ຖ້າຫາກວ່າ ຄູ່ຄວາມຫາກຮູ້ວ່າຄະດີຂອງຕົນມີສາເຫດໃນການຂໍຮື້ຟື້ນແລ້ວ ກຳນົດເວລາແມ່ນ 30 ວັນນັບແຕ່ມື້ທີ່ຜູ້ກ່ຽວຮູ້ເປັນຕົ້ນໄປ.

**(3) ສາເຫດຂອງການຮື້ຟື້ນ**

ສາເຫດຂອງການຮື້ຟື້ນຂອງລະບົບ ຍີ່ປຸ່ນ ແມ່ນມີດັ່ງລຸ່ມນີ້. ຄະນະຄົ້ນຄວ້າ ຂໍຮຽບຮຽງຄືນບັນດາສາເຫດດັ່ງກ່າວເພື່ອໃຫ້ເຂົ້າໃຈງ່າຍຂຶ້ນ ແລະອາດຈະມີຂໍ້ຂາດຕົກບົກຜ່ອງ ສະນັ້ນຂໍໃຫ້ທ່ານເບິ່ງມາດຕາ 338 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຍີ່ປຸ່ນ ເພື່ອຄວາມລະອຽດ.

1) ມີການລະເມີດກົດໝາຍໂດຍສານ ກ່ຽວກັບອົງປະກອບຂອງຄະນະສານຕັດສິນ; ກົດໝາຍໄດ້ກຳນົດກ່ຽວກັບອົງປະກອບຂອງຄະນະສານຕັດສິນໄວ້ໃນຫຼາຍໆມາດຕາ ເຊັ່ນວ່າ: ຄະນະສານຕັດສິນຕ້ອງປະກອບດ້ວຍຜູ້ພິພາກສາເທົ່ານັ້ນ;
   ຕົວຢ່າງ: ເອົາຈ່າສານມາເປັນຄະນະສານຕັດສິນ ການທີ່ເຮັດຢ່າງນີ້ກໍເປັນການລະເມີດກົດໝາຍຂອງສານ.
2) ການຕັດສິນຄະດີໂດຍຜູ້ພິພາກສາທີ່ບໍ່ເໝາະສົມ ທີ່ຈະເຂົ້າຮ່ວມການພິຈາລະນາຄະດີ;
   ກົດໝາຍຫ້າມບໍ່ໃຫ້ຜູ້ພິພາກສາທີ່ມີສ່ວນພົວພັນກັບຄະດີ ເຂົ້າມາມີສ່ວນຮ່ວມໃນການດຳເນີນຄະດີນັ້ນ;
   ຕົວຢ່າງ: ຜູ້ພິພາກສາເປັນຍາດພີ່ນ້ອງຂອງຄູ່ຄວາມຝ່າຍໃດຝ່າຍໜຶ່ງ.
3) ຜູ້ຕ່າງໜ້າທີ່ບໍ່ມີສິດອຳນາດ;
   ຕົວຢ່າງ: ບຸກຄົນທີ່ມາເປັນຜູ້ຕ່າງໜ້າ ແມ່ນບຸກຄົນ ຜູ້ທີ່ບໍ່ມີສິດອຳນາດ ໝາຍຄວາມວ່າຄູ່ຄວາມບໍ່ໄດ້ຮັບຮູ້ການຕ່າງໜ້າຂອງຜູ້ກ່ຽວ ແລະ ກໍບໍ່ມີສັນຍາມອບໝາຍອີກດ້ວຍ.
4) ຜູ້ພິພາກສາໄດ້ກະທຳຜິດທາງອາຍາ ໃນການດຳເນີນຄະດີ;
   ຕົວຢ່າງ: ຜູ້ພິພາກສາຮັບສິນບົນ;
   *ແຕ່ຕ້ອງລໍຖ້າການດຳເນີນຄະດີທາງອາຍາຕໍ່ຜູ້ກ່ຽວສຳເລັດ ແລະ ຄຳຕັດສິນແມ່ນໃຊ້ໄດ້ຢ່າງເດັດຂາດເສຍກ່ອນ.
5) ມີການນາບຂູ່ຂອງບຸກຄົນໃດໜຶ່ງຕໍ່ຄູ່ຄວາມ;
   ຕົວຢ່າງ: ມີຜູ້ໃດຜູ້ໜຶ່ງບັງຄັບໃຫ້ຄູ່ຄວາມຝ່າຍໃດໜຶ່ງຍອມຮັບ.
   *ແຕ່ຕ້ອງລໍຖ້າການດຳເນີນຄະດີທາງອາຍາສຳເລັດ ແລະ ຄຳຕັດສິນແມ່ນໃຊ້ໄດ້ຢ່າງເດັດຂາດເສຍກ່ອນ.

6) ເອກະສານ ຫຼື ວັດຖຸທີ່ໃຊ້ເປັນຫຼັກຖານນັ້ນ ແມ່ນຂອງປອມ ຫຼື ຖືກປອມແປງມາ;
*ແຕ່ຕ້ອງລໍຖ້າການດຳເນີນຄະດີທາງອາຍາສຳເລັດ ແລະ ຄຳຕັດສິນແມ່ນໃຊ້ໄດ້ຢ່າງເດັດຂາດເສຍກ່ອນ.
7) ການໃຫ້ການເທັດຂອງພະຍານ, ນາຍແປພາສາ, ຄູ່ຄວາມ ຫຼື ຜູ້ຕ່າງໜ້າຕາມກົດໝາຍ;
*ແຕ່ຕ້ອງລໍຖ້າການດຳເນີນຄະດີທາງອາຍາສຳເລັດ ແລະ ຄຳຕັດສິນແມ່ນໃຊ້ໄດ້ຢ່າງເດັດຂາດເສຍກ່ອນ.
8) ຄຳຕັດສິນ (ສະບັບກ່ອນ) ທີ່ໃຊ້ເປັນບ່ອນອີງໃນການພິຈາລະນາແມ່ນມີການປ່ຽນແປງ;
ຕົວຢ່າງ: ຄຳຕັດສິນທີ່ໃຊ້ເປັນບ່ອນອີງ ແມ່ນໄດ້ຕັດສິນວ່າຈຳເລີຍໄດ້ກະທຳຜິດທາງອາຍາ ແຕ່ຕໍ່ມາຄຳຕັດສິນທີ່ໃຊ້ເປັນບ່ອນອີງນັ້ນມີການປ່ຽນແປງວ່າ ຈຳເລີຍແມ່ນບໍ່ມີຄວາມຜິດ ແລະ ຫຼຸດພົ້ນຂໍ້ກ່າວຫາ.
9) ປະເດັນອັນສຳຄັນຂອງຄະດີຖືກຕັດອອກ ຫຼື ບໍ່ໄດ້ນຳມາພິຈາລະນາ;
10) ຄະດີດຽວກັນມີການຕັດສິນສອງເທື່ອ;
[ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງຂອງ ຍີ່ປຸ່ນ ມາດຕາ 142 ໄດ້ກຳນົດວ່າ ສານບໍ່ສາມາດພິຈາລະນາຄະດີ ທີ່ສານອື່ນໄດ້ຮັບໄປພິຈາລະນາແລ້ວ].

**(4) ການສົນທະນາກັບ ອາຈານ ແລະ ບັນດານັກກົດໝາຍທີ່ ຍີ່ປຸ່ນ**

ບັນດາອາຈານ ແລະ ນັກກົດໝາຍ ຍີ່ປຸ່ນ ໄດ້ອະທິບາຍກ່ຽວກັບການຂໍອຸທອນ ແລະ ການຂໍຮື້ຟື້ນໃນລະບົບ ຍີ່ປຸ່ນ ດັ່ງລຸ່ມນີ້:

ປົກກະຕິແລ້ວສາເຫດໃນການຮື້ຟື້ນໃນລະບົບ ຍີ່ປຸ່ນ ແມ່ນມີຂໍ້ຈຳກັດຫຼາຍ. ຕົວຢ່າງ: ການພົບຫຼັກຖານໃໝ່ນັ້ນບໍ່ແມ່ນສາເຫດທີ່ພາໃຫ້ມີການຮື້ຟື້ນ. ຍ້ອນຫຍັງ? ກໍເພາະວ່າ ໃນລະບົບຂອງ ຍີ່ປຸ່ນ ແມ່ນໃຫ້ຄູ່ຄວາມເປັນຜູ້ຄົ້ນຫາຄວາມຈິງ ແລະ ຊອກຫາຫຼັກຖານດ້ວຍຕົວເອງ ໝາຍວ່າຖ້າຢາກຊະນະຄະດີຄູ່ຄວາມກໍຈຳເປັນຕ້ອງໄດ້ຊອກຫາຫຼັກຖານມາຢືນຕໍ່ສານ ສານຈະບໍ່ເກັບກຳຫຼັກຖານດ້ວຍຕົນເອງ. ອັນນີ້ແມ່ນມາຈາກແນວຄວາມຄິດທີ່ວ່າ "ຄວາມຮັບຜິດຊອບຂອງຜູ້ກ່ຽວເອງ" ແລະ ໃນປະເທດ ຍີ່ປຸ່ນ ສະພາບແວດລ້ອມແມ່ນອຳນວຍຄວາມສະດວກໃຫ້ແກ່ຄູ່ຄວາມໃນຊອກຫາຂໍ້ມູນຫຼັກຖານ ສະນັ້ນວຽກນີ້ຈິ່ງເປັນພາລະຂອງຄູ່ຄວາມທີ່ຕ້ອງເຮັດ.

ໃນລະບົບການດຳເນີນຄະດີແພ່ງຂອງ ຍີ່ປຸ່ນ ຄູ່ຄວາມຕ້ອງໄດ້ຊອກ ແລະ ເກັບກຳຫຼັກຖານດ້ວຍຕົວເອງໃນການດຳເນີນຄະດີໃນແຕ່ລະຂັ້ນ. ເວົ້າອີກຢ່າງໜຶ່ງກໍແມ່ນວ່າ ມັນເປັນເຫດຜົນວ່າເປັນຫຍັງຈິ່ງຕ້ອງມີ "ການດຳເນີນຄະດີຂັ້ນອຸທອນ". ນັ້ນກໍເພື່ອໃຫ້ໂອກາດ ແກ່ຄູ່ຄວາມອີກເທື່ອໜຶ່ງໃນການຊອກຫາຄວາມຈິງ ແລະ ຫຼັກຖານ ແລ້ວມັນກໍຈະເຮັດໃຫ້ຄຳຕັດສິນນັ້ນຖືກຕ້ອງກວ່າເກົ່າ. ຍ້ອນເຫດຜົນຄືແນວນັ້ນ ໃນລະບົບຍີ່ປຸ່ນ ຈິ່ງບໍ່ໃຫ້ໂອກາດແກ່ຄູ່ຄວາມຍື່ນຫຼັກຖານໄດ້ອີກ ຖ້າວ່າຄຳຕັດສິນຫາກໃຊ້ໄດ້ຢ່າງເດັດຂາດແລ້ວ.

ບົດບາດຂອງການຮື້ຟື້ນມີຄືແນວໃດ? ການຮື້ຟື້ນແມ່ນເພື່ອຊ່ວຍເຫຼືອຫຼັກການ "ຄວາມຮັບຜິດຊອບຂອງຜູ້ກ່ຽວເອງ" ຄືໃນບາງສະຖານນະການແມ່ນເປັນການຍາກທີ່ຈະໃຫ້ຄູ່ຄວາມເຮັດໄດ້ດ້ວຍຕົວເອງ. ຕົວຢ່າງ: ສາເຫດຂໍ້ທີ 1 ນັ້ນມັນແມ່ນຂໍ້ບົກຜ່ອງ ຫຼື ການລະເມີດຂອງສານ. ສະນັ້ນໃນລະບົບ ຍີ່ປຸ່ນ ຈິ່ງຖືວ່າສະຖານະການແບບນີ້ແມ່ນເໜືອການຄວບຄຸມຂອງຄູ່ຄວາມ ແລະ ມັນກໍບໍ່ສາມາດທີ່ຈະໃຫ້ຄູ່ຄວາມຮັບຜິດຊອບໄດ້. ຍ້ອນເຫດຜົນດັ່ງກ່າວ ການກຳນົດສາເຫດໃນການຂໍຮື້ຟື້ນແມ່ນຈະເນັ້ນໃສ່ບັນດາສາເຫດທີ່ເໜືອການຄວບຄຸມຂອງຄູ່ຄວາມເປັນຫຼັກ.



ປື້ມຄູ່ມືການດຳເນີນຄະດີແພ່ງຂັ້ນຕົ້ນ ແລະ ການຮື້ຟື້ນຄະດີ ຫົວນີ້
ໄດຮັບການຊ່ວຍເຫຼືອ ທາງດ້ານວິຊາການ ແລະ
ການພິມ ຈາກ ອົງການຮ່ວມມືສາກົນປະເທດຍີ່ປຸ່ນ(ໄຈກາ)

**ສຳລັບແຈກຢາຍ ຫ້າມ ຊື້ - ຂາຍ**

ພິມຄັ້ງທີ1
3,000ຫົວ ທີ່ ໂຮງພິມມັນທາຕລາດ ນະຄອນຫຼວງວຽງຈັນ, ເມສາ 2014

**JICA Project for Human Resource Development in the Legal sector**
Tel: 021-254307 Fax: 021-254308

**Japan International Cooperation Agency (JICA) Laos Office**
Sihom Commerce Center, 3rd Floor
Souphanuvong Avenue, Building No. 006, Ban Sihom
P.O.Box 3933, Vientiane, Lao PDR
Tel: 021-241100 Fax: 021-241101